# ພຣະກິດຕິຄຸນຂັ້ນພື້ນຖານ



# ພຣະກິດຕິຄຸນຂັ້ນພື້ນຖານ

ພິມໂດຍ
ສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍ
ເມືອງຊອລເລັກ, ຢູທາ

© ໑໙໙໙ ໂດຍ Intellectual Reserve, Inc.
ສງວນລິຂະສິດທຸກປະການ
ຈັດພິມໃນສະຫະລັດອະເມຣິກາ
ສະບັບເປັນພາສາອັງກິດໄດ້ຮັບອະນຸຍາດ: ໗/໙໑
ການແປໄດ້ຮັບອະນຸຍາດ: ໗/໙໑
ແປຈາກ *Gospel Fundamentals*
Laotian

# ສາລະບານ


ຄຳນຳ ........................................ viii

**ຊີວິດນຳພຣະຜູ້ເປັນເຈົ້າກ່ອນເຮົາມາເກີດ** *ພາກນຶ່ງ*

*ບົດທີ ໑* ມັນມີພຣະຜູ້ເປັນເຈົ້າ ........................................ ໒

*ບົດທີ ໒* ຊີວິດຂອງເຮົາໃນສວັນ* ........................................ ໗

*ບົດທີ ໓* ພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ* ........................................ ໑໓

*ບົດທີ ໔* ພວກເຮົາມີອິສຣະທີ່ຈະເລືອກ ........................................ ໑໙

**ການຫນີຈາກທີ່ປະທັບຂອງພຣະຜູ້ເປັນເຈົ້າ** *ພາກສອງ*

*ບົດທີ ໕* ພຣະເຢຊູຊົງສ້າງໂລກ ........................................ ໒໗

*ບົດທີ ໖* ອາດາມແລະເອວາ ........................................ ໓໒

**ການຕິດຕໍ່ກັບພຣະຜູ້ເປັນເຈົ້າ** *ພາກສາມ*

*ບົດທີ ໗* ພຣະວິນຍານບໍຣິສຸດ ........................................ ໔໐

*ບົດທີ ໘* ການເວົ້ານຳພຣະບິດາເທິງສວັນ ........................................ ໔໖

*ບົດທີ ໙* ສາສດາ ........................................ ໕໒

*ບົດທີ ໑໐* ພຣະຄັມພີ* ........................................ ໕໙

**ພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ, ພຣະເຢຊູຄຣິສ** *ພາກສີ່*

*ບົດທີ ໑໑* ຊີວິດຂອງພຣະເຢຊູຄຣິສ* ........................................ ໖໙

*ບົດທີ ໑໒* ການຊົດໃຊ້ຂອງພຣະເຢຊູຄຣິສ ........................................ ໗໙

**ພຣະກິດຕິຄຸນຂອງພຣະເຢຊູຄຣິສ** *ພາກຫ້າ*

*ບົດທີ ໑໓* ສັດທາໃນພຣະເຢຊູຄຣິສ* ........................................ ໘໙

*ບົດທີ ໑໔* ການກັບໃຈ ........................................ ໙໕

*ບົດທີ ໑໕* ບັບຕິສະມາ ........................................ ໑໐໒

*ບົດທີ ໑໖* ຂອງປະທານແຫ່ງພຣະວິນຍານບໍຣິສຸດ* ........................................ ໑໐໙


*ນາຍຄູອາດຈະຕ້ອງໄດ້ໃຊ້ເວລາຫລາຍກວ່າອາທິດນຶ່ງໃນການສອນບາງບົດຮຽນ.

**ສາສນາຈັກຂອງພຣະຄຣິສ** *ພາກຫົກ*
*ບົດທີ ໑໗* ຜູ້ຕິດຕາມຂອງພຣະເຢຊູຄຣິສ ....................................................໑໒໓
*ບົດທີ ໑໘* ສາສນາຈັກທີ່ພຣະເຢຊູຊົງຈັດຕັ້ງ ........................................໑໓໓
*ບົດທີ ໑໙* ສາສນາຈັກຂອງພຣະເຢຊູຄຣິສໃນສມັຍປັດຈຸບັນ* ....................໑໔໐
*ບົດທີ ໒໐* ອົງການຖານະປະໂຣຫິດ* ..................................................໑໕໑
*ບົດທີ ໒໑* ພິທີການຕ່າງໆ* ............................................................໑໖໑
**ການຕິດຕາມພຣະເຢຊູຄຣິສ** *ພາກເຈັດ*
*ບົດທີ ໒໒* ການເຊື່ອຟັງ ..................................................................໑໗໗
*ບົດທີ ໒໓* ການເສັຽສະລະ ...............................................................໑໘໕
*ບົດທີ ໒໔* ວັນແຫ່ງນະມັສການ ........................................................໑໙໕
*ບົດທີ ໒໕* ກົດພົມມະຈັນ ...............................................................໒໐໑
*ບົດທີ ໒໖* ຄວາມຊື່ສັດ ..................................................................໒໐໘
*ບົດທີ ໒໗* ພຣະວາຈາແຫ່ງປັນຍາ ....................................................໒໑໒
*ບົດທີ ໒໘* ສ່ວນສິບແລະການບໍຣິຈາກ ...............................................໒໑໘
**ການຊ່ວຍຄອບຄົວຂອງພວກເຮົາໃຫ້ໄດ້ຮັບຄວາມລອດ** *ພາກແປດ*
*ບົດທີ ໒໙* ຄອບຄົວເປັນສິ່ງສຳຄັນ ...................................................໒໒໗
*ບົດທີ ໓໐* ໜ້າທີ່ຮັບຜິດຊອບຂອງພວກເຮົາທີ່ຈະຊ່ວຍສະມາຊິກໃນຄອບຄົວ* ໒໓໓
*ບົດທີ ໓໑* ໜ້າທີ່ຮັບຜິດຊອບຂອງພວກເຮົາທີ່ຈະເຜີຍແຜ່ພຣະກິດຕິຄຸນ ........໒໔໓
*ບົດທີ ໓໒* ການຢູ່ນຳກັນເປັນຄອບຄົວຕລອດໄປ* ....................................໒໕໐
**ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິສ** *ພາກເກົ້າ*
*ບົດທີ ໓໓* ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິສ ...........................໒໖໑
*ບົດທີ ໓໔* ມິເລນຽມ (ພັນປີ) ..........................................................໒໖໗
**ຊີວິດຫລັງຈາກຄວາມຕາຍ** *ພາກສິບ*
*ບົດທີ ໓໕* ຊີວິດຫລັງຈາກຄວາມຕາຍ ..................................................໒໗໓
*ບົດທີ ໓໖* ຊີວິດນິຣັນດອນ* ............................................................໒໘໑
**ຫຼັກແຫ່ງຄວາມເຊື່ອ**** ..........................................................໒໘໙

**ຄູສອນສາມາດໃຊ້ຫຼັກແຫ່ງຄວາມເຊື່ອ ເພື່ອທົບທວນຫລືສອນບົດຮຽນໄດ້

## ເພງສວດແລະເພງຂອງເດັກນ້ອຍ

ເພງສວດໄດ້ຖືກຮຽບຮຽງໄວ້ຕາມການແນະນໍາ, ແຕ່ມີຫລາຍເພງທີ່ສາມາດໃຊ້ໄດ້ຫລາຍກວ່າຈຸດປະສົງດຽວ. ຕົວຢ່າງ, ເພງເປີດແລະເພງປິດສາມາດໃຊ້ຮ້ອງປິດຫລືເປີດກໍໄດ້.

*ເພງເປີດ*

ສິດທິຊົນມາ ....................................................................໒໙໔
ມາເຖີດ, ທ່ານລູກຫລານພຣະເຈົ້າ ....................................................໒໙໖
ພຣະຜູ້ໄຖ່ແຫ່ງອິສຣາເອນ ............................................................໒໙໗
ພື້ນຫມັ້ນຄົງຫນັກຫນາ ................................................................໒໙໘
ນັບພຣະພອນຂອງທ່ານ ..............................................................໓໐໐
ຂໍໃຫ້ເຮົາເດີນໄປ ......................................................................໓໐໒
ຂໍເພິ່ງພຣະທຸກຊົ່ວໂມງ ..............................................................໓໐໔
ແສນຫວານງານເລີດ ..................................................................໓໐໕
ການອະທິຖານຄັ້ງທໍາອິດຂອງໂຢເຊັບ ສມິທ ......................................໓໐໖

*ເພງສິນຣະລຶກ*

ເບິ່ງເຖີດພຣະຜູ້ໄຖ່ຍິ່ງໃຫຍ່ມ້ວຍ ...................................................໓໐໘
ໂອ້ພຣະບິດາຜູ້ນິຣັນ ..................................................................໓໑໐
ປັນຍາແລະຄວາມຮັກຍິ່ງໃຫຍ່ ........................................................໓໑໒
ຄັ້ງນຶ່ງເຢຊູເກີດຕໍ່າຕ້ອຍ ..............................................................໓໑໔
ພຣະບິດາ ໂປດຟັງເຮົາວອນ ........................................................໓໑໕
ຂ້າເຝົ້າພິສະຫວົງ ......................................................................໓໑໖
ມີພູເຂົາຂຽວແສນໄກຫ່າງໄປ .......................................................໓໑໘
ເຮົາຮ້ອງສັນເສີນນາມເຢຊູເຈົ້າ .......................................................໓໑໙
ພຣະຜູ້ຊ່ວຍດ້ວຍຄວາມຖ່ອມ ........................................................໓໒໐

*ເພງປິດ*

ພຣະວິນຍານພຣະເຈົ້າ ..........໓໒໒
ສູງຂຶ້ນໄປເທິງພູເຂົາ ..........໓໒໔
ບອກມາ ສັດຈະຄືຫຍັງ? ..........໓໒໖
ຈົ່ງມາຊື່ນຊົມຍິນດີ ..........໓໒໘
ເຮັດແຕ່ຄວາມດີ ..........໓໓໐
ເຮົາຂອບພຣະທັຍສຳລັບສາສດາ ..........໓໓໒
ເຮົາຮູ້ພຣະຜູ້ໄຖ່ຊົງພຣະຊົນ ..........໓໓໔
ຂໍພຣະເຈົ້າຢູ່ນຳຈົນພົບກັນອີກ ..........໓໓໖
ໂອ້ພຣະບິດາ ..........໓໓໘

*ຫົວຂໍ້ເພງພິເສດ*

ຮັກທີ່ບ້ານ (ຄອບຄົວ, ບ້ານ) ..........໓໔໐
ເຮົາຈະໄປທີ່ພຣະອົງບັນຊາ (ອອກສອນສາສນາ) ..........໓໔໒
ອະທິຖານແລ້ວບໍ່? (ອະທິຖານ) ..........໓໔໔
ສັນເສີນບຸຣຸດ (ໂຢເຊັບ ສມິທ) ..........໓໔໖
ໄກແສນໄກຢູ່ທີ່ຣາບຢູດີຢາ (ຄຣິສມັດ) ..........໓໔໘
ຄືນສະງັດ (ຄຣິສມັດ) ..........໓໔໙
ພຣະຄຣິສເຈົ້າຄືນຊີບວັນນີ້ (ອີສເຕີ) ..........໓໕໐
ພຣະອົງຊົງຟື້ນ! (ອີສເຕີ) ..........໓໕໒

*ເພງຂອງເດັກນ້ອຍ*

ເຮົາເປັນລູກຂອງພຣະເຈົ້າ ..........໓໕໔
ເຮົາຮູ້ວ່າພຣະບິດາຊົງພຣະຊົນ ..........໓໕໕
ເຮົາຄິດເມື່ອເຮົາອ່ານເຣື່ອງແສນຫວານນັ້ນ ..........໓໕໖
ຂ້າຂໍຂອບພຣະທັຍອົງບິດາ ..........໓໕໗
ພຣະເຈົ້າມອບພຣະວິຫານແກ່ເຮົາ ..........໓໕໘
ຄວາມເມດຕາເລີ້ມຈາກເຮົາ ..........໓໕໙

ກ້າເຮັດສິ່ງຖືກ ........................................................................ ໓໗໐
ຈາຣຶກທອງຄຳ ........................................................................ ໓໗໑
ສອນເຮົາຍ່າງໃນແສງ ........................................................................ ໓໗໒
ອະທິຖານຄອບຄົວ ........................................................................ ໓໗໓

**ສັບທີ່ຄວນຮູ້** ........................................................................ ໓໗໕

ດົນຕີປະກອບສຳລັບເພງຢູ່ໃນປຶ້ມຫົວນີ້ ໄດ້ຖືກອັດໃສ່ກະແຊັດເທັບໄວ້ແລ້ວ ແລະມີຈຳໜ່າຍທົ່ວໄປຕາມຮ້ານຂາຍປຶ້ມຂອງສາສນາຈັກ. ຊື່ຂອງກະແຊັດນັ້ນແມ່ນ

*Hymns and Children's Songs audiocassettes (52052).*

# ຄຳນຳ

ຄູ່ມືນີ້ຈະຊ່ວຍທ່ານຮຽນແລະສອນຫລັກທັມເບື້ອງຕົ້ນຂອງພຣະກິດຕິຄຸນຂອງພຣະເຢຊູຄຣິສ. ໂດຍການຮູ້ຫລັກທັມເຫລົ່ານີ້ ມັນຈະຊ່ວຍທ່ານໃຫ້ເຂົ້າໃຈເຖິງຈຸດປະສົງຂອງຊີວິດແລະວິທີທີ່ຈະມີຄວາມສຸກຢ່າງແທ້ຈິງ. ຫລັກທັມທີ່ອະທິບາຍໃນຄູ່ມືເຫລັ້ມນີ້ເປັນຄວາມຈິງ. ເມື່ອທ່ານສຶກສາຫລັກທັມເຫລົ່ານີ້ ແລະໄຕ່ຕອງແລະອະທິຖານກ່ຽວກັບມັນ, ທ່ານຈະຮູ້ຈັກດ້ວຍຕົນເອງ ແລະພຣະວິນຍານບໍຣິສຸດຈະສະແດງພະຍານຕໍ່ທ່ານວ່າ ມັນເປັນຄວາມຈິງ.

ທ່ານສາມາດໃຊ້ຄູ່ມືເຫລັ້ມນີ້ໄດ້ຫລາຍວິທີ. ທ່ານອາດໃຊ້ມັນເພື່ອສຶກສາແລະຮຽນເພື່ອສຳລັບທ່ານເອງ. ທ່ານອາດໃຊ້ມັນເພື່ອຕຽມການກ່າວປາໃສຫລືຊ່ວຍທ່ານອະທິບາຍພຣະກິດຕິຄຸນໃຫ້ແກ່ຄົນອື່ນ.

ທ່ານອາດໃຊ້ຄູ່ມືເຫລັ້ມນີ້ສຳລັບການສຶກສາເປັນຄອບຄົວແລະການສັງສັນໃນຄອບຄົວ. ແຕ່ລະບົດຮຽນມີຄຳຖາມທີ່ທ່ານ ໃນຖານະເປັນພໍ່ແມ່ຫລືຄູສອນສາມາດຖາມເດັກເພື່ອເບິ່ງວ່າເຂົາເຂົ້າໃຈຫລາຍຊ່ຳໃດ.

ເມື່ອທ່ານໃຊ້ບົດຮຽນຈາກຄູ່ມືນີ້, ທ່ານອາດຕ້ອງໄດ້ໃຊ້ເວລາຫລາຍກວ່ານຶ່ງອາທິດສຳລັບບົດຮຽນໃດ ບົດຮຽນນຶ່ງ. ເບິ່ງວ່າ ນັກຮຽນຂອງທ່ານເຂົ້າໃຈຫລັກທັມດີກ່ອນທ່ານຈະຍ້າຍໄປບົດຕໍ່ໄປ. ຖ້າທ່ານມີພຣະຄັມພີໃນພາສາຂອງທ່ານ, ຈົ່ງອ່ານຂໍ້ພຣະຄັມພີທີ່ຢູ່ໃນກ້ອງຫົວຂໍ້ອ້າງອີງ ແລະສົນທະນາກັນກ່ຽວກັບຂໍ້ພຣະຄັມພີເຫລົ່ານັ້ນ.

ໃນຖານະເປັນຄູສອນ, ຈົ່ງຈຳໄວ້ວ່າ ທ່ານຈະຕ້ອງໃຊ້ປະມານ ໔໗ ຫາ ໕໐ ອາທິດ ທີ່ຈະສອນບົດຮຽນໃນລະຍະນຶ່ງປີ. ຈົ່ງຕຽມບົດຮຽນຂອງທ່ານໃຫ້ພຽງພໍສຳລັບນຶ່ງປີ. ນີ້ຫມາຍຄວາມວ່າ ທ່ານຈະຕ້ອງໃຊ້ເວລາຫລາຍກວ່ານຶ່ງອາທິດທີ່ຈະສຶກສາບົດຮຽນສິບບົດຫລືຫລາຍກວ່ານັ້ນ. ໂດຍສະເພາະແລ້ວ ທ່ານອາດຈະກະທຳເຊັ່ນນັ້ນນຳບົດຮຽນທີ ໔, ໕, ໑໐, ໑໑, ໑໕, ໑໗, ໑໙, ໔໐, ໔໑, ໕໐, ໕໔,

ແລະ ລັດ. ຈຶ່ງຕັດສິນໃຈເບິ່ງວ່າ ບົດຮຽນບົດໃດເໝາະສົມສຳລັບຊັ້ນຮຽນຂອງທ່ານ.

ເມື່ອເຖິງທ້າຍປີ ທ່ານອາດໃຊ້ນຶ່ງຫລືສອງອາທິດທີ່ຈະສົນທະນາກັນກ່ຽວກັບຫຼັກແຫ່ງຄວາມເຊື່ອ ຊຶ່ງມີຢູ່ໃນຄູ່ມືເຫລັ້ມນີ້. ທ່ານຍັງສາມາດໃຊ້ຫຼັກແຫ່ງຄວາມເຊື່ອເພື່ອທົບທວນບົດຮຽນນຳອີກ.

ພໍ່ແມ່ແລະຄູສອນ ຈົ່ງອະທິຖານເພື່ອການນຳພາໃນຂະນະທີ່ທ່ານຕຽມແລະສອນບົດສອນເຫລົ່ານີ້. ໃຫ້ພຣະວິນຍານບໍຣິສຸດນຳພາທ່ານໃນຄວາມເຂົ້າໃຈຂອງທ່ານແລະໃນການສອນຂອງທ່ານ. ສະມາຊິກທຸກໆຄົນທີ່ສາມາດອ່ານໄດ້ ຄວນອ່ານບົດຮຽນແລະຕຽມຕົວ ເພື່ອຈະໄດ້ແບ່ງປັນນຳສະມາຊິກຄົນອື່ນໆໃນເວລາສົນທະນາກັນໃນຊັ້ນຮຽນ.

ຮູບພາບໃນຄູ່ມືເຫລັ້ມນີ້ຈະຊ່ວຍນຳຄວາມເຂົ້າໃຈມາສູ່ຫລັກທັມບາງຂໍ້ແລະຄຳສອນທີ່ກຳລັງຖືກສອນ.

ທ່ານສາມາດຮ້ອງເພງສວດທີ່ມີຢູ່ໃນຄູ່ມືນີ້ໃນບ້ານຂອງທ່ານ, ໃນກອງປະຊຸມທີ່ໂບດ ຫລືບ່ອນໃດກໍຕາມ ທີ່ເໝາະສົມ. ພຣະຜູ້ເປັນເຈົ້າຊົງໄດ້ຕັສວ່າ ການຮ້ອງເພງສວດເປັນວິທີນຶ່ງຂອງການອະທິຖານແລະ ພຣະອົງຈະຊົງຕອບຄຳອະທິຖານນັ້ນດ້ວຍພຣະພອນ.

ເມື່ອທ່ານເຫັນຄຳສັບທີ່ມີເຄື່ອງໝາຍ * ທ່ານສາມາດພົບຄວາມໝາຍຂອງມັນໃນທາງຫລັງຂອງຄູ່ມືນີ້. ຄຳສັບອື່ນໆຍັງຖືກບັນທຶກໄວ້ເບື້ອງຫລັງເພື່ອຈະຊ່ວຍທ່ານເຂົ້າໃຈຄວາມໝາຍຂອງມັນ.

ຂໍໃຫ້ພຣະຜູ້ເປັນເຈົ້າຈົ່ງໃຫ້ພອນແກ່ທ່ານໃນຂະນະທີ່ທ່ານສຶກສາດ້ວຍຄວາມອ້ອນວອນເຖິງຄວາມຈິງຂອງຄູ່ມືເຫລັ້ມນີ້.

# ຊີວິດນຳພຣະຜູ້ເປັນເຈົ້າ ກ່ອນເຮົາມາເກີດ

*ພາກນຶ່ງ*



# ມັນມີພຣະຜູ້ເປັນເຈົ້າ

*ບົດທີ ໑*

*ບາງຄັ້ງຜູ້ຄົນອາດຈະຖາມຕົນເອງວ່າ: ມັນມີພຣະຜູ້ເປັນເຈົ້າບໍ່? ຖ້າມີພຣະຜູ້ເປັນເຈົ້າ ແລ້ວພຣະອົງເປັນແນວໃດ? ເຮົາຈະສາມາດຮູ້ຈັກພຣະອົງໄດ້ ແນວໃດ?*

**ມັນມີຫລາຍສິ່ງທີ່ສະແດງໃຫ້ເຮົາຮູ້ວ່າ ມັນມີພຣະຜູ້ເປັນເຈົ້າ**

ເມື່ອພວກເຮົາເບິ່ງຫລາຍໆສິ່ງທີ່ມະຫັສຈັນຢູ່ເທິງໂລກນີ້, ພວກເຮົາຮູ້ວ່າ ຜູ້ໃດຜູ້ນຶ່ງທີ່ສລາດໄດ້ວາງແຜນດີແລະສ້າງມັນ. ໃນເວລາກາງຄືນ ເມື່ອພວກເຮົາເຫັນດວງດາວຈຳນວນຫລວງຫລາຍ ແລະ ໂລກຫລາຍໆຫນ່ວຍທີ່ເຄື່ອນທີ່ເຫມາະສົມ ຕາມບ່ອນຂອງມັນຢູ່ເລື້ອຍໆ, ພວກເຮົາຮູ້ວ່າ ຜູ້ໃດຜູ້ນຶ່ງທີ່ມີອຳນາດອັນຍິ່ງໃຫຍ່ໄດ ສ້າງແລະຄວບຄຸມມັນ. ພຣະຜູ້ເປັນເຈົ້າຊົງເປັນຜູ້ຊົງສ້າງ ສິ່ງເຫລົ່ານີ້ທັງຫມົດ.

ມີຜູ້ຊາຍທີ່ດີບາງຄົນທີ່ເຄີຍໄດ້ເຫັນແລະໄດ້ເວົ້າກັບພຣະຜູ້ເປັນເຈົ້າ. ພວກທ່ານໄດ້ບອກພວກເຮົາວ່າ ພຣະຜູ້ເປັນເຈົ້າມີລັກສະນະແນວໃດ ແລະພຣະຜູ້ເປັນເຈົ້າຊົງຕ້ອງການໃຫ້ພວກເຮົາເຮັດຫຍັງ. ພວກທ່ານໄດ້ບອກພວກເຮົາວ່າ ພຣະອົງຊົງເປັນພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພວກທ່ານໄດ້ຂຽນບັນທຶກທີ່ສັກສິດໄວ້ເພື່ອວ່າພວກເຮົາຈະສາມາດຮຽນຈາກພຣະອົງ.

ພວກເຮົາແຕ່ລະຄົນສາມາດຮູ້ວ່າ ມັນມີພຣະຜູ້ເປັນເຈົ້າແລະວ່າ ພຣະອົງຊົງເປັນພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພຣະອົງຈະຊົງຊ່ວຍພວກເຮົາໃຫ້ຮູ້ຈັກວ່າ ພຣະອົງຊົງເປັນຈິງ ແລະພວກເຮົາສາມາດຮຽນຮູ້ກ່ຽວກັບພຣະອົງໄດ້ຫລາຍຂຶ້ນ.

*ການສົນທະນາ*

- ມີສິ່ງໃດແດ່ທີ່ສະແດງໃຫ້ເຫັນວ່າ ມັນມີພຣະຜູ້ເປັນເຈົ້າ?

## ພຣະບິດາຜູ້ສະຖິດໃນສວັນຂອງເຮົາຊົງເປັນຜູ້ທີ່ບໍ່ມີບາບ

ຜູ້ນຳທີ່ດີທີ່ໄດ້ເຫັນພຣະບິດາຜູ້ສະຖິດໃນສວັນ ໄດ້ເວົ້າວ່າ ພຣະອົງຊົງເປັນຈິງ. ພຣະອົງຊົງພຣະຊົນຢູ່ ພຣະອົງຊົງມີລັກສະນະເຫມືອນມະນຸດ.

ພຣະບິດາຜູ້ສະຖິດໃນສວັນບໍ່ຊົງເປັນຮູບປັ້ນຫລືເປັນສັດ. ພຣະອົງຊົງມີຮ່າງກາຍທີ່ມີເນື້ອຫນັງແລະກະດູກ. ພຣະກາຍຂອງພຣະອົງຊົງມີລັກສະນະເຫມືອນຮ່າງກາຍ ຂອງມະນຸດ, ແຕ່ມັນແຕກຕ່າງ. ພຣະກາຍຂອງພຣະອົງຈະບໍ່ມີວັນຕາຍ. ພຣະກາຍຂອງພຣະອົງບໍ່ມີຄວາມຮູ້ສຶກເຈັບປວດແລະເຈັບປ່ວຍໄດ້.

ພຣະອົງຊົງມີຄວາມຮູ້ສຶກ. ພຣະອົງຊົງມີຄວາມຮູ້ສຶກມີຄວາມສຸກຫລືໂສກເສົ້າ. ພຣະ ອົງຊົງຮັກຜູ້ຄົນທັງຫມົດ ແລະຊົງຕ້ອງການໃຫ້ພວກເຂົາມີຄວາມສຸກ. ພຣະອົງຊົງເມດຕາແລະຍຸດຕິທັມ. ພຣະອົງຊົງກະທຳແຕ່ສິ່ງດີ ແລະພຣະອົງຊົງຕັສແຕ່ຄວາມຈິງເທົ່ານັ້ນ. ພຣະອົງຊົງຮູ້ທຸກສິ່ງທັງຫມົດ ແລະຊົງສາມາດກະທຳທຸກສິ່ງໄດ້ ຢູ່ອ້ອມພຣະອົງມີແສງສວ່າງ. ຄວາມສວ່າງແລະຄວາມງາມຂອງພຣະອົງຊົງຍິ່ງໃຫຍ່ກວ່າອັນໃດທັງສິ້ນ ທີ່ພວກເຮົາເຄີຍເຫັນມາ.

ພຣະບິດາຜູ້ສະຖິດໃນສວັນຂອງເຮົາຊົງເປັນອົງດຽວທີ່ພວກເຮົາຄວນນະມັສການ. ພຣະອົງຊົງປະທັບຢູ່ບ່ອນທີ່ ເອີ້ນວ່າ ສວັນ. ມັນເປັນບ່ອນທີ່ມີຄວາມງາມຫລາຍກວ່າໂລກ.

*ການສົນທະນາ*

- ພຣະຜູ້ເປັນເຈົ້າຊົງເປັນຜູ້ແບບໃດ?
- ພຣະຜູ້ເປັນເຈົ້າຊົງແຕກຕ່າງຈາກພວກເຮົາໃນທາງໃດ?

## ພຣະບິດາຜູ້ສະຖິດໃນສວັນຊົງສະແດງຄວາມຮັກຂອງພຣະອົງຕໍ່ພວກເຮົາໃນຫລາຍວິທີທາງ

ພຣະບິດາຜູ້ສະຖິດໃນສວັນຊົງໃຊ້ອຳນາດຂອງພຣະອົງເພື່ອຊ່ວຍພວກເຮົາ. ພຣະອົງຊົງບັນຊາພຣະບຸດຂອງພຣະອົງ ພຣະເຢຊູ ໃຫ້ສ້າງທ້ອງຟ້າແລະໂລກ.

ພຣະອົງຊົງໃຫ້ພຣະເຢຊູສ້າງຕາເວັນ, ດວງເດືອນ ແລະດວງດາວ. ພຣະອົງຊົງບັນຊາໃຫ້ພຣະອົງເອົາຕົ້ນໄມ້ພືດພັນແລະສັດຕ່າງໆມາໄວ້ເທິງໂລກ. ພຣະບິດາຜູ້ສະຖິດໃນສວັນຊົງກະທຳທຸກສິ່ງເຫລົ່ານີ້ເພື່ອພວກເຮົາ ເພາະພຣະອົງຊົງຮັກພວກເຮົາ. ພຣະອົງຊົງຕ້ອງການຢາກຊ່ວຍໃຫ້ພວກເຮົາເປັນຄົນດີແລະມີຄວາມສຸກ.

ພຣະບິດາຜູ້ສະຖິດໃນສວັນຊົງໃຊ້ຄວາມຮູ້ຂອງພຣະອົງເພື່ອຊ່ວຍເຫລືອພວກເຮົາ. ພຣະອົງຊົງຮູ້ທຸກສິ່ງທີ່ໄດ້ເກີດຂຶ້ນໃນອາດີດ. ພຣະອົງຊົງຮູ້ທຸກສິ່ງທີ່ກຳລັງເກີດຂຶ້ນໃນປັດຈຸບັນ ແລະພຣະອົງຊົງຮູ້ເຖິງສິ່ງທີ່ຈະເກີດຂຶ້ນໃນອະນາຄົດ. ພຣະອົງຊົງຮູ້ເຖິງຄວາມຄິດຂອງພວກເຮົາທຸກຄົນ. ເພາະພຣະອົງຈຶ່ງຊົງຮູ້ທຸກສິ່ງທັງຫມົດ, ພຣະອົງຊົງຮູ້ວ່າ ການທີ່ຈະມີຄວາມສຸກທີ່ແທ້ຈິງ ພວກເຮົາຈຳຕ້ອງເປັນຄົນດີ. ພຣະອົງຊົງຕ້ອງການທີ່ຈະຊ່ວຍພວກເຮົາໃຫ້ເປັນຄົນດີ ເພາະພຣະອົງຊົງຮັກພວກເຮົາ.

### *ການສົນທະນາ*

- ພຣະບິດາຜູ້ສະຖິດໃນສວັນຊົງສະແດງຄວາມຮັກຂອງພຣະອົງຕໍ່ພວກເຮົາໄດ້ແນວໃດ?

## ພຣະບິດາຜູ້ສະຖິດໃນສວັນຊົງຕ້ອງການໃຫ້ພວກເຮົາຮູ້ຈັກພຣະອົງ

ເພາະພຣະບິດາຜູ້ສະຖິດໃນສວັນຊົງຮັກພວກເຮົາ, ພຣະອົງຈຶ່ງໄດ້ປະທານຊີວິດ ແລະໂລກທີ່ສວຍງາມ ທີ່ພວກເຮົາຢູ່ ໃຫ້ແກ່ພວກເຮົາ. ພຣະອົງຊົງຕ້ອງການໃຫ້ພວກເຮົາຮູ້ສິ່ງທີ່ພວກເຮົາຄວນເຮັດ. ພຣະອົງຊົງສັນຍາວ່າ ພວກເຮົາຈະສາມາດຮູ້ຈັກພຣະອົງໄດ້.

ການກະທຳສິ່ງເຫລົ່ານີ້ຈະສາມາດຊ່ວຍພວກເຮົາໃຫ້ຮຽນຮູ້ກ່ຽວກັບພຣະບິດາຜູ້ສະຖິດໃນສວັນໄດ້ຫລາຍຂຶ້ນອີກ:

໑. ພວກເຮົາສາມາດເບິ່ງແຜ່ນດິນໂລກທີ່ພຣະອົງຊົງໄດ້ສ້າງແລະສະແດງຄວາມກະຕັນຍູຕໍ່ມັນ.
໒. ພວກເຮົາສາມາດເຊື່ອວ່າພຣະບິດາຜູ້ສະຖິດໃນສວັນຊົງເປັນຈິງ ແລະວ່າ ພຣະອົງຊົງຮັກພວກເຮົາ.
໓. ພວກເຮົາສາມາດອ່ານສິ່ງທີ່ຜູ້ນຳທີ່ດີໄດ້ຂຽນໄວ້ກ່ຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

໔. ພວກເຮົາສາມາດຮຽນແລະເຮັດສິ່ງທີ່ພຣະອົງຊົງຕ້ອງການໃຫ້ພວກເຮົາຮຽນ ແລະເຮັດ.
໕. ພວກເຮົາສາມາດເວົ້ານຳພຣະບິດາຜູ້ສະຖິດໃນສວັນ ແລະທູນຂໍໃຫ້ພຣະອົງ ຊ່ວຍພວກເຮົາໃຫ້ຮູ້ຈັກພຣະອົງ.

ການຮູ້ຈັກກ່ຽວກັບພຣະບິດາຜູ້ສະຖິດໃນສວັນສາມາດຊ່ວຍພວກເຮົາໃນຊີວິດຂອງພວກເຮົາ. ການຮູ້ຈັກພຣະອົງ ສາມາດຊ່ວຍພວກເຮົາໃຫ້ຮູ້ສຶກມີຄວາມສຸກແລະມີຄວາມປອດພັຍ. ພຣະອົງຊົງເປັນຜູ້ດີແລະຈະບໍ່ຊົງເຮັດສິ່ງທີ່ບໍ່ດີສຳລັບພວກເຮົາ. ພວກເຮົາສາມາດຮຽນສິ່ງທີ່ ພຣະອົງຊົງຕ້ອງການໃຫ້ພວກເຮົາເຮັດ. ພວກເຮົາສາມາດຮຽນຮູ້ເຖິງວິທີທູນຂໍຄວາມຊ່ວຍເຫລືອຈາກພຣະອົງ. ພວກເຮົາສາມາດກາຍມາເປັນຄົນດີຂຶ້ນ ແລະເປັນຄົນມີຄວາມສຸກຫລາຍຂຶ້ນ.

## *ການສົນທະນາ*

- ພວກເຮົາສາມາດເຮັດຫຍັງໄດ້ແດ່ເພື່ອຈະຮູ້ ແລະຈະເຂົ້າໃຈພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ?
- ການຮູ້ຈັກພຣະບິດາຜູ້ສະຖິດໃນສວັນຈະຊ່ວຍພວກເຮົາໄດ້ແນວໃດ?

## *ຂໍ້ອ້າງອີງ*

*ມີຫລາຍແນວທີ່ສະແດງໃຫ້ພວກເຮົາຮູ້ວ່າ ມັນມີພຣະຜູ້ເປັນເຈົ້າ*

- ກິຈການ ໗:໕໕–໕໖ (ຊາຍບໍຣິສຸດເຫັນພຣະຜູ້ເປັນເຈົ້າ.)

*ພຣະບິດາຜູ້ສະຖິດໃນສວັນຊົງເປັນຜູ້ທີ່ບໍ່ມີບາບ*

- ປະຖົມມະການ ໑:໒໖–໒໗ (ພຣະຜູ້ເປັນເຈົ້າຊົງສ້າງມະນຸດຕາມລັກສະນະຂອງພຣະອົງ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສະແດງຄວາມຮັກຂອງພຣະອົງຕໍ່ພວກເຮົາໃນຫລາຍວິທີທາງ*

- ປະຖົມມະການ ໑:໑–໒໕ (ພຣະຜູ້ເປັນເຈົ້າຊົງສ້າງທ້ອງຟ້າແລະແຜ່ນດິນໂລກ ແລະທຸກສິ່ງທີ່ຢູ່ໃນນັ້ນ.)
- ລູກາ ໑໒:໖–໗ (ພຣະຜູ້ເປັນເຈົ້າຊົງເປັນຫ່ວງນຳທຸກສິ່ງທັງຫມົດທີ່ພຣະອົງຊົງໄດ້ສ້າງ.)

*ພຣະບິດາຜູ້ສະຖິດໃນສວັນຊົງຕ້ອງການໃຫ້ພວກເຮົາຮູ້ຈັກພຣະອົງ*

- ພຣະບັນຍັດສອງ ໔:໒໙ (ຜູ້ໃດທີ່ຕ້ອງການຢາກຮູ້ພຣະຜູ້ເປັນເຈົ້າຈະຮູ້ຈັກພຣະອົງ.)
- ໂຢຮັນ ໑໗:໓ (ພວກເຮົາສາມາດຮູ້ຈັກພຣະຜູ້ເປັນເຈົ້າ.)
- ໑ ໂຢຮັນ ໔:໓ (ຖ້າພວກເຮົາເຊື່ອຟັງພຣະຜູ້ເປັນເຈົ້າ ພວກເຮົາຈະສາມາດຮູ້ຈັກພຣະອົງ.)
- ໂມໄຊຍາ ໔:໙ (ພວກເຮົາຄວນເຊື່ອໃນພຣະຜູ້ເປັນເຈົ້າ.)

# ຊີວິດຂອງເຮົາໃນສະຫວັນ

*ບົດທີ ໔*

---

*ພວກເຮົາອາສັຍຢູ່ໃສກ່ອນທີ່ພວກເຮົາເກີດມາຢູ່ໃນໂລກນີ້? ພວກເຮົາເຮັດຫຍັງຢູ່ທີ່ນັ້ນ?*

### ເຮົາແຕ່ລະຄົນເປັນລູກຂອງພຣະບິດາຜູ້ສະຖິດໃນສະຫວັນ

ກ່ອນພວກເຮົາເກີດມາຢູ່ໃນໂລກນີ້, ພວກເຮົາອາສັຍຢູ່ເທິງສະຫວັນ. ບ້ານຂອງພວກເຮົາໃນສະຫວັນເປັນບ້ານທີ່ ມະຫັສຈັນແລະສວຍງາມກວ່າທຸກສິ່ງທີ່ພວກເຮົາຮູ້ຢູ່ເທິງໂລກນີ້. ພວກເຮົາມີຄອບຄົວຢູ່ທີ່ນັ້ນ. ພວກເຮົາຮັກເຊິ່ງກັນແລະກັນ ແລະພວກເຮົາມີຄວາມສຸກ. ພຣະບິດາຜູ້ສະຖິດໃນສະຫວັນຊົງເປັນພຣະບິດາແຫ່ງ ວິນຍານຂອງພວກເຮົາ ແລະເພາະເຫດນີ້ ພວກເຮົາຈຶ່ງເອີ້ນພຣະອົງສເມີວ່າ ພຣະບິດາຜູ້ສະຖິດໃນສະຫວັນ ເພາະພຣະອົງຊົງເປັນພຣະບິດາຂອງພວກເຮົາ ພຣະອົງຊົງຮັກພວກເຮົາ ແລະເປັນຫ່ວງພວກເຮົາສເມີ.

ທຸກໆຄົນຜູ້ອາສັຍຢູ່ເທິງໂລກນີ້ເປັນອ້າຍເອື້ອຍນ້ອງຂອງພວກເຮົາໃນສະຫວັນ. ລູກກົກໃນຄອບຄົວສະຫວັນຂອງ ພວກເຮົາແມ່ນ ພຣະເຢຊູຄຣິສ. ພຣະອົງຊົງເປັນອ້າຍກົກຂອງພວກເຮົາ.

ເວລາພວກເຮົາອາສັຍຢູ່ໃນສະຫວັນ, ພວກເຮົາບໍ່ມີຮ່າງກາຍທີ່ມີເນື້ອຫນັງແລະກະດູກແບບດຽວທີ່ພວກເຮົາມີ ໃນປັດຈຸບັນນີ້. ພວກເຮົາເປັນວິນຍານ. ວິນຍານມີລັກສະນະແບບດຽວກັນກັບຄົນ. ໃນຖານະເປັນວິນຍານ, ພວກເຮົາສາມາດໂອ້ລົມນຳກັນ ເຄື່ອນໄຫວໄປມາ, ເລືອກ, ແລະຮູ້ຄວາມແຕກຕ່າງລະຫວ່າງຄວາມດີ ແລະຄວາມຊົ່ວ.

ພວກເຮົາບໍ່ໄດ້ເປັນແບບດຽວກັນໃນສວັນ. ພວກເຮົາມີຄວາມແຕກຕ່າງກັນແບບດຽວກັບໃນຂະນະນີ້. ພວກເຮົາມີຄວາມປາຖນາແລະຄວາມສາມາດແຕກຕ່າງກັນ. ພວກເຮົາຮຽນທີ່ຈະໃຊ້ຄວາມສາມາດຂອງພວກເຮົາໃນວິທີແຕກຕ່າງກັນ.

### *ການສົນທະນາ*

- ບ້ານສວັນຂອງພວກເຮົາມີລັກສະນະແນວໃດ?
- ພຣະບິດາຂອງພວກເຮົາແມ່ນໃຜ?
- ຜູ້ໃດເປັນອ້າຍກົກຂອງພວກເຮົາ?

## ພຣະບິດາຜູ້ສະຖິດໃນສວັນຊົງຮູ້ວ່າ ພວກເຮົາສາມາດກາຍເປັນເຫມືອນດັ່ງພຣະອົງໄດ້

ຂະນະທີ່ພຣະບິດາຜູ້ສະຖິດໃນສວັນຊົງເປັນພຣະບິດາຂອງວິນຍານຂອງພວກເຮົາ, ພຣະອົງຊົງຮູ້ພວກເຮົາດີ. ພຣະອົງຊົງຮັກພວກເຮົາ. ພຣະອົງຊົງຮູ້ວ່າ ພວກເຮົາໄດ້ຮັບຄວາມສາມາດ ຈາກພຣະອົງທີ່ຈະຮຽນສິ່ງທີ່ ພຣະອົງຊົງຮູ້ ແລະຈະກາຍມາເປັນເຫມືອນດັ່ງພຣະອົງ. ພຣະອົງຊົງຕ້ອງການໃຫ້ພວກເຮົາເປັນຄົນດີສເມີເຫມືອນດັ່ງພຣະອົງ. ພຣະອົງຊົງຕ້ອງການທີ່ຈະຊ່ວຍພວກເຮົາປັບປຸງຄວາມສາມາດຂອງພວກເຮົາໃຫ້ເປັນເຫມືອນດັ່ງພຣະອົງ.

### ການສົນທະນາ

- ພວກເຮົາຈະສາມາດຮຽນສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຊົງຮູ້ແລະຈະກາຍມາເປັນເຫມືອນດັ່ງພຣະອົງໄດ້ບໍ່?
- ທ່ານຮູ້ສຶກແນວໃດເມື່ອທ່ານຮູ້ວ່າ ທ່ານມີພຣະບິດາຜູ້ສະຖິດໃນສວັນ?

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສ້າງແຜນໄວ້ເພື່ອຊ່ວຍເຫລືອພວກເຮົາ

ໃນສວັນ ພວກເຮົາໄດ້ຮຽນຫລາຍໆສິ່ງແລະໄດ້ປັບປຸງຕົວຂອງພວກເຮົາ ເທົ່າທີ່ພວກເຮົາຈະເຮັດໄດ້, ແຕ່ມັນຍັງມີບາງສິ່ງທີ່ພວກເຮົາບໍ່ສາມາດຮຽນແລະເຮັດບໍ່ໄດ້ຢູ່ທີ່ນັ້ນ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ສ້າງແຜນໄວ້ເພື່ອຊ່ວຍເຫລືອພວກເຮົາຮຽນເພີ້ມອີກ.



*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຈັດບ້ານໃນສວັນທີ່ເຕັມໄປດ້ວຍຣັສມີ
ພາບແລະຄວາມງົດງາມ ເໜືອບ່ອນໃດໆທັງໝົດໃນໂລກໄວ້ໃຫ້ພວກເຮົາ.*

ພຣະອົງຊົງເອີ້ນໃຫ້ພວກເຮົາມາປະຊຸມກັນໃນສວັນ. ພວກເຮົາທຸກຄົນໄດ້ຢູ່ໃນກອງປະຊຸມນັ້ນ. ພຣະອົງຊົງອະທິບາຍເຖິງແຜນຂອງພຣະອົງທີ່ຈະຊ່ວຍພວກເຮົາຮຽນແລະບອກພວກເຮົາວ່າ ຖ້າພວກເຮົາຕິດຕາມແຜນຂອງພຣະອົງ, ພວກເຮົາຈະກາຍມາເປັນເຫມືອນດັ່ງພຣະອົງຫລາຍຂຶ້ນ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕັສວ່າ ພຣະອົງຈະຊົງສ້າງໂລກຫນ່ວຍນຶ່ງຂຶ້ນ ຊຶ່ງຈະເປັນບ່ອນທີ່ພວກເຮົາຈະອາສັຍຢູ່ຊົ່ວລະຍະນຶ່ງ. ໃນແຜ່ນດິນນັ້ນ, ພວກເຮົາຈະບໍ່ຈື່ຈຳຊີວິດຂອງພວກເຮົານຳພຣະເຈົ້າໃນສວັນ. ພວກເຮົາຈະສາມາດເລືອກຄວາມດີແລະຄວາມຊົ່ວ. ນີ້ຈະເປັນການທົດລອງເພື່ອເບິ່ງວ່າພວກເຮົາຈະເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຫລືບໍ່ ເມື່ອພວກເຮົາບໍ່ຢູ່ນຳພຣະບິດາ.

ຕາມແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົານັ້ນ, ພວກເຮົາຈະໄດ້ຮັບຮ່າງກາຍທີ່ມີເນື້ອຫນັງແລະກະດູກ. ພວກເຮົາຈຳຕ້ອງມີຮ່າງກາຍແບບນີ້ ເພື່ອຈະໄດ້ຮຽນສິ່ງທີ່ພຣະອົງຊົງຮູ້ ແລະກະທຳໃນສິ່ງທີ່ພຣະອົງ ຊົງກະທຳ. ຕໍ່ມາ, ພວກເຮົາຈະຮັບຄວາມຕາຍແລະວິນຍານຂອງພວກເຮົາຈະອອກຈາກຮ່າງກາຍເນື້ອຫນັງ ແລະກະດູກຂອງພວກເຮົາໄປ. ແຕ່ວິນຍານຂອງພວກເຮົາຈະກັບເຂົ້າຄືນສູ່ຮ່າງກາຍຂອງພວກເຮົາອີກ ແລະຈະບໍ່ຕາຍອີກຈັກເທື່ອ. ສຳລັບຜູ້ທີ່ເຮັດຕາມສິ່ງທີ່ພຣະບິດາຜູ້ສະຖິດໃນສວັນ ຊົງບັນຊາໃຫ້ເຮັດ, ເຂົາເຈົ້າຈະກັບໄປຢູ່ກັບພຣະອົງຊົ່ວນິຣັນດອນ.

ພວກເຮົາໄດ້ຮຽນວ່າ ທຸກໆຄົນຈະປະສົບບັນຫາໃນໂລກນີ້ ເປັນຕົ້ນເຊັ່ນຄວາມເຈັບປວດ, ການເຈັບປ່ວຍ, ຄວາມໂສກເສົ້າ ແລະຄວາມຕາຍ, ແຕ່ພວກເຮົາເຂົ້າໃຈວ່າ ພວກເຮົາຈະຮຽນຈາກສິ່ງເຫລົ່ານີ້. ບັນຫາເຫລົ່ານີ້ຈະຊ່ວຍສອນພວກເຮົາໃຫ້ຮັກແລະຊ່ວຍເຫລືອເຊິ່ງກັນແລະກັນ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງເລືອກເວລາແລະບ່ອນສຳລັບພວກເຮົາເພື່ອຈະໄດ້ມາ ເກີດໃນໂລກນີ້. ພຣະອົງຊົງຮູ້ວ່າ ບ່ອນໃດດີທີ່ຈະສົ່ງພວກເຮົາແຕ່ລະຄົນມາຮຽນສິ່ງທີ່ພວກເຮົາ ຈຳເປັນຕ້ອງຮຽນຮູ້. ພວກເຮົາທຸກຄົນຈະມີໂອກາດຮຽນຮູ້ຫລາຍໆສິ່ງທີ່ແຕກຕ່າງກັນ. ພຣະບິດາຜູ້ສະຖິດໃນສວັນຊົງຕ້ອງການໃຫ້

ພວກເຮົາກະທຳຄວາມດີແລະມີຄວາມສາມາດທີ່ຈະກັບໄປຫາພຣະອົງ, ແຕ່ວ່າ ພຣະອົງຈະບໍ່ຊົງບັງຄັບໃຫ້ພວກເຮົາເຮັດທຸກສິ່ງ.

ພວກເຮົາບາງຄົນຈະເລືອກທີ່ຈະເຊື່ອຟັງພຣະອົງ. ຖ້າພວກເຮົາເຊື່ອຟັງພຣະອົງ, ພວກເຮົາຈະກາຍມາເປັນ ເຫມືອນດັ່ງພຣະອົງຫລາຍຂຶ້ນ ແລະຈະກັບຄືນໄປຢູ່ກັບພຣະອົງ. ພວກເຮົາບາງຄົນຈະເລືອກທີ່ຈະ ບໍ່ເຊື່ອຟັງພຣະອົງ. ຖ້າພວກເຮົາບໍ່ເຊື່ອຟັງພຣະອົງ, ພວກເຮົາຈະບໍ່ເປັນເຫມືອນດັ່ງພຣະອົງ ແລະຈະບໍ່ສາມາດກັບຄືນໄປຢູ່ກັບພຣະອົງ.

ເມື່ອພວກເຮົາໄດ້ຍິນແຜນຂອງພຣະບິດາຜູ້ສະຖິດໃນສວັນເພື່ອພວກເຮົາ. ພວກເຮົາມີຄວາມຊື່ນຊົມຍິນດີ. ພວກເຮົາມີຄວາມຕ້ອງການຢາກຈະຮຽນແລະພັດທະນາຕົນເອງ. ທຸກໆຄົນທີ່ຢູ່ໃນໂລກ ໄດ້ຕົກລົງທີ່ຈະດຳລົງຊີວິດຕາມແຜນຂອງພຣະອົງ.

### *ການສົນທະນາ*

- ແຜນຂອງພຣະບິດາຜູ້ສະຖິດໃນສວັນສຳລັບພວກເຮົາແມ່ນຫຍັງ?
- ເປັນຫຍັງພວກເຮົາຈຳເປັນຕ້ອງຈາກບ້ານໃນສວັນຂອງພວກເຮົາມາ?
- ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ພວກເຮົາເຮັດຫຍັງແດ່ໃນໂລກ?

## *ຂໍ້ອ້າງອີງ*

*ພວກເຮົາແຕ່ລະຄົນເປັນລູກຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ*

- ລູກາ ໒໔:໓໙ (ວິນຍານບໍ່ມີເນື້ອຫນັງແລະກະດູກ.)
- ເຮັບເຣີ ໑໒:໙ (ພຣະຜູ້ເປັນເຈົ້າຊົງເປັນພຣະບິດາທາງວິນຍານຂອງພວກເຮົາ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮູ້ວ່າ ພວກເຮົາສາມາດກາຍມາເປັນເຫມືອນດັ່ງພຣະອົງ*

- ມັດທາຍ ໕:໔໘ (ພຣະເຢຊູຊົງບອກພວກເຮົາໃຫ້ເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນ.)
- ໓ ນີໄຟ ໑໒:໔໘ (ພຣະເຢຊູຊົງບອກໃຫ້ພວກເຮົາໃຫ້ກາຍເປັນຄົນດີພ້ອມເຫມືອນດັ່ງພຣະອົງແລະ ພຣະຜູ້ເປັນເຈົ້າ, ພຣະບິດາຂອງພວກເຮົາຊົງເປັນ.)

- ໓ ນີໄຟ ໔ຖ:໔ຖ (ພວກເຮົາຄວນຕິດຕາມຕົວຢ່າງຂອງພຣະເຢຊູຄຣິສ ແລະກາຍມາເປັນເຫມືອນດັ່ງ ພຣະເອົງ.)

*ພຣະບິດາຜູ້ສະຖິດໃນສວັນຊົງສ້າງແຜນໄວ້ເພື່ອຊ່ວຍເຫລືອພວກເຮົາ*

- ໂຢຮັນ ໑໔:໔–໓ (ພຣະບິດາຜູ້ສະຖິດໃນສວັນຊົງຕັສວ່າ ພວກເຮົາສາມາດກັບໄປຫາພຣະອົງ.)
- ກິຈການ ໑໗:໔໖ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສົ່ງພວກເຮົາມາໃນໂລກ ໃນເວລາແລະບ່ອນ ຕາມແຜນຂອງພຣະອົງ.)
- ໑ ນີໄຟ ໑໗:໓໖ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ສ້າງໂລກສຳລັບລູກໆຂອງພຣະອົງ ເພື່ອເຂົາຈະໄດ້ອາສັຍຢູ່.)
- ໔ ນີໄຟ ໙:໑໓; ແອລມາ ໔໒ (ພຣະຜູ້ເປັນເຈົ້າຊົງມີແຜນເພື່ອພວກເຮົາ.)

# ພຣະຜູ້ຊ່ວຍໃຫ້ລອດ ຂອງພວກເຮົາ

*ບົດທີ ၃*

---

*ແມ່ນໃຜຊຶ່ງເປັນຄົນດຽວທີ່ສາມາດນຳພວກເຮົາກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ? ເປັນຫຍັງພວກເຮົາຄວນຕິດຕາມພຣະອົງ?*

**ພວກເຮົາຕ້ອງມີຜູ້ນຳ**

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮູ້ວ່າ ໃນຂະນະທີ່ພວກເຮົາຢູ່ເທິງໂລກ, ພວກເຮົາຈະບໍ່ຈື່ຈຳຊີວິດ ທີ່ພວກເຮົາມີນຳພຣະອົງ. ພວກເຮົາຈະບໍ່ຮູ້ຈັກສິ່ງທີ່ພວກເຮົາຈຳເປັນຕ້ອງເຮັດ ເພື່ອຈະໄດ້ກັບຄືນໄປຫາພຣະອົງ. ພຣະອົງຍັງຊົງຮູ້ວ່າ ພວກເຮົາຈະເຮັດບາບ. ເພາະບາບຂອງພວກເຮົາ, ພວກເຮົາຈະໄດ້ຮັບໂທດໂດຍການແຍກຈາກພຣະອົງຕລອດໄປ. ແລະເມື່ອພວກເຮົາຕາຍ, ພວກເຮົາຈະບໍ່ມີຮ່າງກາຍທີ່ມີເນື້ອໜັງແລະກະດູກອີກຕໍ່ໄປ.

ພວກເຮົາຈຶ່ງຕ້ອງມີຜູ້ໃດຜູ້ນຶ່ງທີ່ຈະຊ່ວຍພວກເຮົາແກ້ໄຂບັນຫາເຫລົ່ານີ້. ຜູ້ນີ້ຈະສອນພວກເຮົາເຖິງສິ່ງທີ່ ພວກເຮົາຄວນເຮັດເພື່ອຈະໄດ້ກັບໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກ. ເພິ່ນຈະຊ່ວຍ ພວກເຮົາເອົາຊະນະຄວາມຜິດທີ່ພວກເຮົາຈະເຮັດ ເພິ່ນຈະຕຽມເສັ້ນທາງເພື່ອພວກເຮົາທີ່ຈະໄດ້ຮັບຮ່າງກາຍ ທີ່ມີເນື້ອໜັງແລະກະດູກອີກຫລັງຈາກພວກເຮົາຕາຍ. ເພິ່ນຜູ້ນີ້ຈະຖືກເອີ້ນວ່າ ພຣະຜູ້ຊ່ວຍໃຫ້ລອດ ພຣະຜູ້ໄຖ່ເທົ່ານັ້ນທີ່ຈະສາມາດເຮັດໃຫ້ພວກເຮົາລອດຈາກໂທດທີ່ພວກເຮົາໄດ້ຮັບຈາກການກະທຳບາບ. ມີແຕ່ພຣະອົງເທົ່ານັ້ນ ທີ່ຈະສາມາດຊ່ວຍພວກເຮົາຮຽນທີ່ຈະເຊື່ອຟັງພຣະບິດາຜູ້ສະຖິດໃນສວັນ. ມີແຕ່ພຣະອົງເທົ່ານັ້ນທີ່ເຮັດໃຫ້ເປັນໄປໄດ້ວ່າ ພວກເຮົາຈະໄດ້ຮັບຮ່າງກາຍທີ່ມີເນື້ອໜັງ ແລະກະດູກອີກຫລັງຈາກຄວາມຕາຍ.

---

*ການສົນທະນາ*

- ບັນຫາຫຍັງແດ່ທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮູ້ວ່າ ພວກເຮົາຈະປະສົບຢູ່ເທິງໂລກນີ້?
- ເປັນຫຍັງພວກເຮົາຈຶ່ງຕ້ອງການພຣະຜູ້ຊ່ວຍໃຫ້ລອດຊ່ວຍເຫລືອພວກເຮົາ?

## ພຣະບິດາຜູ້ສະຖິດໃນສວັນຊົງເລືອກພຣະເຢຊູໃຫ້ເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກພວກເຮົາແລະພຣະອົງຊົງຮູ້ວ່າພວກເຮົາຕ້ອງການຄວາມຊ່ວຍເຫລືອ. ພຣະອົງຊົງຮູ້ວ່າ ພວກເຮົາຈະມີຄວາມໂສກເສົ້າຖ້າພວກເຮົາບໍ່ສາມາດມີຮ່າງກາຍທີ່ມີເນື້ອໜັງແລະກະດູກ ແລະບໍ່ສາມາດກັບຄືນໄປຢູ່ນຳພຣະອົງຕລອດໄປ. ພວກເຮົາຈຳເປັນຕ້ອງມີຜູ້ໃດຜູ້ນຶ່ງ ຊ່ວຍເຫລືອພວກເຮົາ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການຜູ້ໃດຜູ້ນຶ່ງໃຫ້ເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ. ອ້າຍຂອງພວກເຮົາສອງຄົນສເນີເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ.

ອ້າຍກົກຂອງພວກເຮົາ ພຣະເຢຊູຊົງຂໍໃຫ້ພຣະບິດາຜູ້ສະຖິດໃນສວັນໃຫ້ເລືອກເອົາພຣະອົງ. ພຣະອົງກ່າວວ່າ ພຣະອົງຈະຕິດຕາມແຜນຂອງພຣະບິດາຜູ້ສະຖິດໃນສວັນ. ພຣະອົງຈະຊົງລົງມາສູ່ໂລກ ແລະຈະສອນພວກເຮົາກ່ຽວກັບສິ່ງທີ່ພວກເຮົາຕ້ອງການຮຽນເພື່ອຈະໄດ້ກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພຣະອົງຈະຊົງເສັຽຊີວິດເພື່ອບາບທີ່ພວກເຮົາເຮັດ. ພຣະອົງຈະຊົງເຮັດໃຫ້ເປັນໄປໄດ້ທີ່ພວກເຮົາຈະມີຊີວິດອີກຫລັງຈາກພວກເຮົາຕາຍໄປ. ພຣະອົງຈະໃຫ້ໂອກາດພວກເຮົາເລືອກເພື່ອຕົນເອງວ່າ ຈະເຊື່ອຟັງຫລືບໍ່ເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ພຣະເຢຊູຊົງຮູ້ວ່າ ມັນສຳຄັນສຳລັບພວກເຮົາທີ່ຈະເລືອກສິ່ງທີ່ພວກເຮົາຄວນເຮັດ. ຖ້າຜູ້ໃດຜູ້ນຶ່ງຫາກ ບັງຄັບໃຫ້ພວກເຮົາເຊື່ອຟັງ, ພວກເຮົາຈະບໍ່ສາມາດຮຽນ ແລະບໍ່ສາມາດກາຍມາເປັນເຫມືອນດັ່ງ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພຣະເຢຊູຊົງຕ້ອງການໃຫ້ພຣະບິດາຜູ້ສະຖິດໃນສວັນຮັບພຣະກຽດແລະຣັສມີພາບທັງຫມົດ.

ອ້າຍຂອງພວກເຮົາອີກຄົນນຶ່ງຊຶ່ງຖືກເອີ້ນວ່າ ຊາຕານ ສເນີໃຫ້ພຣະບິດາເລືອກເອົາ ລາວໃຫ້ເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ. ລາວເວົ້າວ່າ ລາວຈະມາສູ່ໂລກ ແລະບັງຄັບໃຫ້ພວກເຮົາເຮັດສິ່ງທີ່ ພວກເຮົາຄວນເຮັດ. ລາວເວົ້າວ່າ ຈະບໍ່ມີໃຜໃນ ພວກເຮົາຈະຕົກໄປ. ລາວຈະບໍ່ໃຫ້ໂອກາດພວກເຮົາ ທີ່ຈະເລືອກເພື່ອຕົນເອງ. ລາວ ຈະບໍ່ສະລະຊີວິດເພື່ອບາບຂອງພວກເຮົາ. ແລ້ວລາວຢາກໄດ້ຮັສມີພາບແລະກຽດ ທັງຫມົດ. ຊາຕານຢາກເປັນພຣະຜູ້ເປັນເຈົ້າຂອງພວກເຮົາ.

ເພາະວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກພວກເຮົາ, ພຣະອົງຈຶ່ງໄດ້ ເລືອກພຣະເຢຊູ ໃຫ້ເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ. ຍ້ອນເຫດນີ້ ພຣະເຢຊູ ຈຶ່ງຖືກເອີ້ນສເມີວ່າ ພຣະເຢຊູຄຣິສ. ຄຳວາ ຄຣິສ ຫມາຍຄວາມວ່າ ຖືກເລືອກໂດຍ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ໃຫ້ເປັນພຣະຜູ້ຊ່ວຍໃຫ້ລອດ. ພຣະບິດາ ຂອງພວກເຮົາຊົງເລືອກພຣະເຢຊູແທນທີ່ຈະເລືອກຊາຕານ ເພາະພຣະບິດາຜູ້ສະຖິດ ໃນສວັນຂອງພວກເຮົາບໍ່ຢາກໃຫ້ພວກເຮົາເສັຽສິດທິໃນການເລືອກເພື່ອຕົນເອງ. ພຣະອົງຊົງຮູ້ວ່າ ພວກເຮົາຕ້ອງເລືອກເຮັດສິ່ງທີ່ດີ ເພາະພວກເຮົາຢາກເຮັດແບບນັ້ນ ບໍ່ແມ່ນຍ້ອນການບັງຄັບຂອງຜູ້ໃດຜູ້ນຶ່ງໃຫ້ພວກເຮົາເຮັດ.

### *ການສົນທະນາ*

- ພຣະເຢຊູຊົງຕ້ອງການຢາກເຮັດຫຍັງແດ່ເພື່ອພວກເຮົາ?
- ຊາຕານຢາກເຮັດແນວໃດ?
- ເປັນຫຍັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈຶ່ງເລືອກເອົາພຣະເຢຊູໃຫ້ ເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ?

## ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດ ແລະຊົງເປັນຜູ້ນຳຂອງພວກເຮົາ

ເມື່ອພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງເລືອກພຣະເຢຊູ, ຊາຕານກໍເກີດມີ ຄວາມໃຈຮ້າຍຂຶ້ນ. ລາວໄດ້ຊັກຊວນນຶ່ງສ່ວນສາມຂອງວິນຍານໃນສວັນໃຫ້ຕິດຕາມ ລາວໄປ. ພ້ອມດຽວກັນ ພວກເຂົາພາກັນຕໍ່ຕ້ານພຣະເຢຊູແລະຄົນທີ່ຕິດຕາມ ພຣະອົງ. ພວກເຂົາຕ້ອງການທີ່ຈະບັງຄັບ ໃຫ້ພຣະບິດາຜູ້ສະຖິດໃນສວັນຮັບເອົາ ແຜນຂອງຊາຕານ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຊົງບັນຊາໃຫ້ ຊາຕານແລະຜູ້ຕິດຕາມຂອງລາວຫນີອອກຈາກສວັນ.

ຊາຕານແລະຜູ້ຕິດຕາມຂອງລາວຈະບໍ່ມີໂອກາດຮັບຮ່າງກາຍທີ່ມີເນື້ອໜັງແລະກະດູກຈັກເທື່ອ. ພວກເຂົາຈະບໍ່ສາມາດກັບຄືນແລະໄປອາສັຍຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກ. ມີແຕ່ຜູ້ທີ່ຮັບພຣະເຢຊູຄຣິສເປັນພຣະຜູ້ຊ່ວຍໃຫ້ລອດເທົ່ານັ້ນ ຈະສາມາດມີຮ່າງກາຍ ທີ່ມີເນື້ອໜັງແລະກະດູກ.

ພວກເຮົາຮູ້, ເພາະພວກເຮົາມີຮ່າງກາຍທີ່ມີເນື້ອໜັງແລະກະດູກ, ວ່າພວກເຮົາໄດ້ຮັບເອົາພຣະເຢຊູໃຫ້ເປັນ ພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ. ພວກເຮົາໄດ້ເລືອກສິ່ງທີ່ຖືກຕ້ອງໃນສວັນ. ພວກເຮົາຄວນດຳເນີນການເລືອກທີ່ຖືກຕ້ອງຂອງພວກເຮົາໃນໂລກນີ້ໄປເລື້ອຍໆ. ພວກເຮົາຄວນຕິດຕາມພຣະເຢຊູ. ພຽງແຕ່ພຣະອົງເທົ່ານັ້ນທີ່ສາມາດສອນພວກເຮົາ ເຖິງວິທີທີ່ຈະກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້. ພຣະອົງຊົງສາມາດຊ່ວຍພວກເຮົາເອົາຊະນະສິ່ງບໍ່ດີທີ່ພວກເຮົາເຮັດ ແລະຊ່ວຍພວກເຮົາຮຽນເຮັດສິ່ງທີ່ດີ ຈົນກວ່າພວກເຮົາຈະກາຍມາເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໃຫ້ຫລາຍຂຶ້ນ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ພວກເຮົາຕິດຕາມແລະເຊື່ອຟັງພຣະເຢຊູ. ພຣະອົງຊົງຮູ້ວ່າ ພຣະເຢຊູຈະສອນພວກເຮົາເຖິງວິທີເຮັດສິ່ງທີ່ຖືກຕ້ອງສເມີ. ສະນັ້ນເມື່ອພວກເຮົາເຊື່ອຟັງພຣະເຢຊູ, ພວກເຮົາກໍເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເຫມືອນກັນ. ພຣະບັນຍັດ ຫລືຄຳສອນຈາກພຣະເຢຊູກໍເປັນພຣະບັນຍັດຫລືຄຳສອນຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເຫມືອນກັນ.

### *ການສົນທະນາ*

- ພວກເຮົາຈະຮູ້ໄດ້ແນວໃດວ່າ ພວກເຮົາເລືອກພຣະເຢຊູໃຫ້ເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ?
- ແມ່ນໃຜທີ່ເປັນຜູ້ດຽວເທົ່ານັ້ນທີ່ສາມາດສອນພວກເຮົາເຖິງວິທີກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ?
- ເປັນຫຍັງພວກເຮົາຈຶ່ງຄວນຕິດຕາມພຣະເຢຊູ?



ພາຍໃຕ້ການນຳພາຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ,
ພຣະເຢຊູຊົງໄດ້ສ້າງໂລກ.

## *ຂໍ້ອ້າງອີງ*

*ພວກເຮົາຈໍາຕ້ອງມີຜູ້ນໍາ*

- ໂຢຮັນ 14:6 (ພຣະເຢຊູຊົງເປັນຜູ້ທີ່ພວກເຮົາຈໍາຕ້ອງຕິດຕາມ ເພື່ອຈະສາມາດກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.)
- 1 ເປໂຕ 2:21 (ພວກເຮົາຈໍາຕ້ອງເຮັດຕາມຕົວຢ່າງຂອງພຣະເຢຊູຄຣິສ.)
- 2 ນີໄຟ 31:13, 16 (ຖ້າພວກເຮົາເຮັດຕາມຕົວຢ່າງຂອງພຣະຜູ້ຊ່ວຍໃຫ້ລອດ, ພວກເຮົາຈະໄດ້ຮັບຄວາມລອດ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງເລືອກພຣະເຢຊູໃຫ້ເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ*

- 1 ໂຢຮັນ 4:14
(ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງເລືອກພຣະເຢຊູໃຫ້ເປັນພຣະຜູ້ຊ່ວຍໃຫ້ລອດຂອງໂລກ.)
- 2 ນີໄຟ 9:5–26 (ພຣະເຢຊູສິ້ນພຣະຊົນເພື່ອພວກເຮົາ.)
- 3 ນີໄຟ 27:13–14
(ພຣະເຢຊູຄຣິສຊົງມາສູ່ໂລກເພື່ອເປັນພຣະຜູ້ຊ່ວຍຂອງພວກເຮົາ.)

*ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດແລະຊົງເປັນຜູ້ນໍາຂອງພວກເຮົາ*

- ມັດທາຍ 1:21 (ພຣະເຢຊູຊົງມາເພື່ອຊ່ວຍໃຫ້ພວກເຮົາລອດຈາກບາບ.)
- 3 ນີໄຟ 11:10-11 (ພຣະເຢຊູຄຣິສຊົງທໍລະມານເພື່ອບາບຂອງມະນຸດທັງປວງ.)
- 3 ນີໄຟ 18:16 (ພຣະເຢຊູຊົງສະແດງຕົວຢ່າງໃຫ້ພວກເຮົາເພື່ອຕິດຕາມ.)
- 3 ນີໄຟ 27:21 (ພຣະເຢຊູຊົງສະແດງໃຫ້ຮູ້ວ່າ ພວກເຮົາຄວນເຮັດແນວໃດ.)

# ພວກເຮົາມີອິສຣະ ທີ່ຈະເລືອກ

*ບົດທີ ໔*

*ພວກເຮົາທຸກຄົນເຮັດການເລືອກໃນທຸກໆວັນ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໃຫ້ສິດທິແກ່ພວກເຮົາ ທີ່ຈະເລືອກເພື່ອຕົນເອງ. ເປັນຫຍັງພວກເຮົາຈຶ່ງຄວນພະຍາຍາມເລືອກສິ່ງທີ່ດີ?*

**ພຣະບິດາຜູ້ສະຖິດໃນສວັນຊົງມອບສິດທິໃຫ້ແກ່ພວກເຮົາເພື່ອຈະເລືອກ**

ໃນສວັນພວກເຮົາມີອິສຣະທີ່ຈະເລືອກ. ພວກເຮົາມີອິສຣະທີ່ຈະຕິດຕາມພຣະເຢຊູ ຫລືຈະຕິດຕາມຊາຕານ. ລູກໆຂອງພຣະບິດາຜູ້ສະຖິດໃນສວັນຈຳນວນຫລວງຫລາຍເລືອກທີ່ຈະຕິດຕາມພຣະເຢຊູ. ບາງສ່ວນກໍເລືອກທີ່ຈະຕິດຕາມຊາຕານ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບສິດທິໃຫ້ແກ່ທຸກໆຄົນໃຫ້ເລືອກເພື່ອຕົນເອງ.

ພຣະບິດາຜູ້ສະຖິດໃນສວັນຍັງຊົງໃຫ້ສິດທິແກ່ພວກເຮົາທີ່ຈະເລືອກເພື່ອຕົນເອງໃນໂລກນີ້. ເມື່ອພວກເຮົາມາຢູ່ໃນໂລກ, ພຣະອົງເຮັດໃຫ້ພວກເຮົາບໍ່ໃຫ້ຈື່ຈຳຊີວິດຂອງພວກເຮົານຳພຣະອົງ. ພວກເຮົາຈຳເປັນຕ້ອງຮຽນທີ່ຈະເລືອກເພື່ອຕົນເອງເມື່ອພວກເຮົາບໍ່ຢູ່ກັບພຣະອົງ.

### *ການສົນທະນາ*

- ທ່ານຮູ້ສຶກແນວໃດເມື່ອທ່ານຖືກບັງຄັບໃຫ້ເຮັດບາງສິ່ງບາງຢ່າງ?
- ທ່ານຮູ້ສຶກແນວໃດເມື່ອຜູ້ໃດຜູ້ນຶ່ງໃຫ້ໂອກາດທ່ານເລືອກທີ່ຈະເຮັດສິ່ງທີ່ທ່ານຕ້ອງການຢາກເຮັດ?

## ແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະມີຜົນໄດ້ກໍເມື່ອພວກເຮົາມີອິສຣະທີ່ຈະເລືອກເທົ່ານັ້ນ

ສ່ວນນຶ່ງຂອງແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແມ່ນສິ່ງພວກເຮົາລົງມາສູ່ໂລກ ຊຶ່ງເປັນບ່ອນທີ່ພວກເຮົາຈະເລືອກສິ່ງທີ່ດີແລະສິ່ງທີ່ຊົ່ວ. ພຣະອົງຊົງຕ້ອງການໃຫ້ພວກເຮົາເລືອກສິ່ງທີ່ດີ. ຊາຕານພະຍາຍາມທີ່ຈະຊັກຊວນໃຫ້ພວກເຮົາເລືອກສິ່ງທີ່ຊົ່ວ. ພວກເຮົາມີອິສຣະທີ່ຈະເລືອກລະຫວ່າງຄວາມດີແລະຄວາມຊົ່ວ.

ເມື່ອພວກເຮົາເລືອກສິ່ງທີ່ດີ ພວກເຮົາກໍສາມາດເຮັດສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຊົງຕ້ອງການ ໃຫ້ພວກເຮົາເຮັດໄດ້ຫລາຍຂຶ້ນ. ເມື່ອພວກເຮົາເຮັດສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຊົງຕ້ອງການ ໃຫ້ພວກເຮົາເຮັດ, ພວກເຮົາກໍກາຍມາເປັນເຫມືອນດັ່ງພຣະອົງຫລາຍຂຶ້ນ. ພວກເຮົາຈະຄົ້ນພົບດ້ວຍຕົວເອງ ທີ່ຈະເລືອກເຮັດສິ່ງທີ່ດີເລີດ. ພວກເຮົາຈະເຂົ້າໃຈຫລາຍຂຶ້ນເຖິງສິ່ງທີ່ເຮັດໃຫ້ພວກເຮົາມີຄວາມສຸກ ແລະສິ່ງທີ່ເຮັດໃຫ້ພວກເຮົາໂສກເສົ້າ.

ຖ້າພວກເຮົາບໍ່ສາມາດເລືອກເພື່ອຕົນເອງ, ພວກເຮົາກໍບໍ່ສາມາດກາຍມາເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພວກເຮົາບໍ່ສາມາດຮຽນທີ່ຈະເລືອກສິ່ງທີ່ດີທີ່ສຸດເພື່ອຕົນເອງ. ພວກເຮົາບໍ່ສາມາດສະແດງຕໍ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາວ່າ ພວກເຮົາຮັກພຣະອົງແລະຢາກຕິດຕາມພຣະອົງແທ້ໆ.

### *ການສົນທະນາ*

- ເປັນຫຍັງພວກເຮົາຈຶ່ງຕ້ອງມີສິດທິທີ່ຈະເລືອກ?

## ການເລືອກທີ່ຈະຕິດຕາມພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເຮັດໃຫ້ພວກເຮົາມີຄວາມສຸກ

ການເລືອກທີ່ຖືກຕ້ອງນຳຜົນດີມາສູ່ພວກເຮົາ; ການເລືອກທີ່ບໍ່ຖືກຕ້ອງນຳຜົນຊົ່ວມາສູ່ພວກເຮົາ. ຖ້າພວກເຮົາເລືອກທີ່ຈະເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ພວກເຮົາຈະມີຄວາມສຸກແລະເປັນຄົນດີຫລາຍຂຶ້ນ. ຖ້າພວກເຮົາເລືອກບໍ່ເຊື່ອຟັງພຣະອົງ, ພວກເຮົາຈະກາຍມາເປັນຄົນໂສກເສົ້າ ແລະຈະບໍ່ເປັນຄົນດີ.

ເມື່ອພວກເຮົາເລືອກເອົາການເລືອກທີ່ຖືກຕ້ອງ, ພວກເຮົາຈະເຫັນວ່າພວກເຮົາມີຄວາມສຸກເພາະການກະທຳນັ້ນ. ພວກເຮົາຮຽນວ່າ ພວກເຮົາຄວນເຮັດຄວາມດີເພີ້ມຂຶ້ນ. ເມື່ອພວກເຮົາເຫັນວ່າ ການເລືອກທີ່ຖືກຕ້ອງເຮັດໃຫ້ພວກເຮົາມີຄວາມສຸກ, ພວກເຮົາກໍຢາກເລືອກການກະທຳທີ່ດີຫລາຍຂຶ້ນອີກ. ພວກເຮົາປາຖະນາທີ່ຈະເຮັດຄວາມດີເພີ້ມຂຶ້ນເລື້ອຍໆ. ພວກເຮົາສາມາດເລືອກເຮັດຄວາມດີງ່າຍຂຶ້ນ ເພາະພວກເຮົາຮູ້ເຖິງຜົນໄດ້ຮັບຈະເປັນຄວາມດີຕໍ່ພວກເຮົາ. ພວກເຮົາຮຽນເຖິງສິ່ງພວກເຮົາຈຳເປັນຕ້ອງຮູ້ ແລະເຮັດ ເພື່ອຈະກາຍມາເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຫລາຍຂຶ້ນ.

ເມື່ອພວກເຮົາເລືອກສິ່ງທີ່ບໍ່ຖືກຕ້ອງ, ພວກເຮົາຈະມີຄວາມຮູ້ສຶກໂສກເສົ້າແລະຮູ້ສຶກອັບອາຍ. ຖ້າພວກເຮົາພະຍາຍາມເຮັດແຕ່ສິ່ງບໍ່ດີ, ຊາຕານເລີ້ມມີອຳນາດເຫນືອພວກເຮົາ ແລະມັນກໍຍາກແລະຍາກຂຶ້ນ ສຳລັບພວກເຮົາທີ່ຈະເລືອກຄວາມດີ. ພວກເຮົາກໍເຊົາຕິດຕາມແຜນຂອງພຣະບິດາຜູ້ສະຖິດໃນສວັນ.

### *ການສົນທະນາ*

- ຄິດເຖິງການເລືອກບາງຢ່າງທີ່ທ່ານໄດ້ເຮັດ. ຜົນໄດ້ຮັບຂອງການເລືອກແຕ່ລະຄັ້ງນັ້ນເປັນແນວໃດ?
- ທ່ານສາມາດເລືອກທີ່ຈະມີຄວາມສຸກ ແລະຈະສາມາດກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນ ໄດ້ແນວໃດ?
- ການເລືອກທີ່ຖືກຕ້ອງສາມາດຊ່ວຍທ່ານເລືອກສິ່ງທີ່ດີຫລາຍຂຶ້ນໄດ້ແນວໃດ?
- ການເລືອກສິ່ງທີ່ບໍ່ດີເຮັດໃຫ້ທ່ານຢຸດການເລືອກທີ່ດີໃນອະນາຄົດໄດ້ແນວໃດ?

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງຊ່ວຍພວກເຮົາເລືອກສິ່ງທີ່ດີ

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ພວກເຮົາເລືອກສິ່ງທີ່ດີເພື່ອພວກເຮົາ ຈະສາມາດຮຽນສິ່ງທີ່ພຣະອົງຊົງຮູ້, ກະທຳໃນສິ່ງທີ່ພຣະອົງຊົງກະທຳ, ແລະມີສິ່ງທີ່ພຣະອົງຊົງມີ. ພຣະອົງຊົງຮູ້ວ່າ ພວກເຮົາຈະມີຄວາມສຸກແລະຈະສາມາດກັບຄືນໄປຢູ່ນຳພຣະອົງອີກ ຖ້າພວກເຮົາເລືອກເຮັດສິ່ງທີ່ຖືກຕ້ອງ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການທີ່ຈະຊ່ວຍພວກເຮົາເລືອກສິ່ງທີ່ດີ. ດ້ວຍຄວາມຊ່ວຍເຫລືອຂອງພຣະອົງ, ພວກເຮົາຈຶ່ງສາມາດເລືອກທີ່ຈະເຮັດທຸກ

ສິ່ງທີ່ພຣະອົງຊົງບອກໃຫ້ພວກເຮົາເຮັດ. ເມື່ອພວກເຮົາທູນຂໍຄວາມຊ່ວຍເຫລືອຈາກພຣະອົງ, ພຣະອົງຈະຊົງຊ່ວຍເຫລືອພວກເຮົາຕໍ່ຕ້ານການຫລອກລວງຂອງຊາຕານ. ພຣະອົງຈະຊົງໃຫ້ກຳລັງແກ່ພວກເຮົາໃຫ້ເລືອກສິ່ງທີ່ຖືກຕ້ອງ. ພຣະອົງຈະຊົງຊ່ວຍພວກເຮົາໃຫ້ຕິດຕາມ ແຜນຂອງພຣະອົງແລະກາຍມາເປັນເຫມືອນດັ່ງພຣະອົງຫລາຍຂຶ້ນ.

### *ການສົນທະນາ*

- ເປັນຫຍັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈຶ່ງຊົງຕ້ອງການໃຫ້ພວກເຮົາເລືອກສິ່ງທີ່ດີ?
- ພຣະອົງຈະຊົງບັງຄັບໃຫ້ພວກເຮົາເຮັດສິ່ງທີ່ຖືກຕ້ອງບໍ່? ເປັນຫຍັງ?

## *ຂໍ້ອ້າງອີງ*

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບອິສຣະໃຫ້ແກ່ພວກເຮົາທີ່ຈະເລືອກ*

- ໂຢຮັນ ໑໔:໑໕ (ຖ້າພວກເຮົາຮັກພຣະເຢຊູ ພວກເຮົາຈະເຊື່ອຟັງພຣະບັນຍັດຂອງພຣະອົງ.)
- ໒ ນີໄຟ ໒:໒໗–໒໘ (ພວກເຮົາມີອິສຣະທີ່ຈະເລືອກເພື່ອຕິດຕາມພຣະເຢຊູຄຣິສ.)
- ຮີລາມັນ ໑໔:໓໐–໓໑ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງເຮັດໃຫ້ພວກເຮົາມີອິສຣະ ທີ່ຈະເລືອກຄວາມດີແລະຄວາມຊົ່ວ.)

*ແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະມີຜົນໄດ້ກໍເມື່ອພວກເຮົາມີອິສຣະທີ່ຈະເລືອກເທົ່ານັ້ນ*

- ໒ ນີໄຟ ໒:໑໑ (ສຳລັບທຸກສິ່ງທີ່ດີ ມັນກໍມີສິ່ງບໍ່ດີຕໍ່ຕ້ານມັນ.)
- ແອລມາ ໔໑:໓–໕ (ຖ້າພວກເຮົາເຮັດສິ່ງດີ, ພວກເຮົາຈະກັບຄືນໄປຢູ່ກັບພຣະບິດາຜູ້ສະຖິດໃນສວັນອີກ. ຖ້າພວກເຮົາເຮັດສິ່ງບໍ່ດີ, ພວກເຮົາກໍຈະມີຄວາມໂສກເສົ້າຕລອດໄປ.)
- ໓ ນີໄຟ ໒໗:໑໔–໑໕ (ພວກເຮົາຈະຖືກພິພາກສາຕາມການກະທຳທີ່ພວກເຮົາເລືອກເຮັດ.)

*ການເລືອກທີ່ຈະເຊື່ອຟັງພຣະບິດາຜູ້ສະຖິດໃນສວັນເຮັດໃຫ້ພວກເຮົາມີຄວາມສຸກ*

- ໔ ນີໄຟ ໙:໑໗ (ສຳລັບຄົນທີ່ເຊື່ອໃນພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ເຂົາຈະມີຄວາມສຸກທີ່ຍິ່ງໃຫຍ່.)
- ໂມໄຊຍາ ໔:໔໑ (ສຳລັບຄົນທີ່ເຊື່ອໃນພຣະບັນຍັດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ເຂົາຈະມີຄວາມສຸກ ເພາະເຂົາຈະໄດ້ຮັບພອນ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງຊ່ວຍພວກເຮົາເລືອກສິ່ງທີ່ດີ*

- ສຸພາສິດ ໕:໑໔ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະໃຫ້ພອນແກ່ຄົນທີ່ກະທຳຄວາມດີ.)
- ສຸພາສິດ ໔໕:໙ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊ່ວຍເຫລືອຄົນທີ່ເລືອກເຮັດຄວາມດີ.)
- ໂຣມ ໑໔:໙ (ພວກເຮົາຄວນເຮັດສິ່ງທີ່ດີ.)
- ໑ ໂກຣິນໂທ ໑໐:໑໓ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະບໍ່ອະນຸຍາດໃຫ້ມີການຫລອກລວງ ເກີນກວ່າທີ່ພວກເຮົາຈະຕໍ່ຕ້ານໄດ້.)
- ໂມໂຣໄນ ໗:໔໗ (ຄົນຜູ້ທີ່ເຊື່ອໃນພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາມີຄວາມປາຖນາທີ່ຈະເຮັດຄວາມດີ.)

# ການຫນີຈາກທີ່ປະທັບ
# ຂອງພຣະຜູ້ເປັນເຈົ້າ

*ພາກສອງ*





ພຣະເຢຊູຊົງສ້າງໂລກທີ່ສວຍງາມເພື່ອພວກເຮົາ.

# ພຣະເຢຊູຊົງສ້າງໂລກ

*ບົດທີ ໕*

---

*ແມ່ນໃຜສ້າງໂລກ? ເປັນຫຍັງພຣະອົງຈຶ່ງຊົງສ້າງມັນ?*

### ພວກເຮົາຕ້ອງການມີໂລກ

ສ່ວນນຶ່ງຂອງແຜນທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ອະທິບາຍແກ່ພວກເຮົາໃນສວັນແມ່ນ ພວກເຮົາຈຳຕ້ອງຫນີຈາກສວັນຊົ່ວລະຍະນຶ່ງ. ພວກເຮົາຕ້ອງມີບ່ອນທີ່ຈະໄປຈາກທີ່ປະທັບຂອງພຣະອົງ ເພື່ອຈະຮັບເອົາຮ່າງກາຍທີ່ມີເນື້ອຫນັງແລະກະດູກ ແລະຈະຖືກທົດລອງເພື່ອຈະສະແດງວ່າ ພວກເຮົາໄດ້ເລືອກສິ່ງທີ່ດີຫລືບໍ່. ພຣະອົງຊົງຕ້ອງການໃຫ້ມີຜູ້ໃດຜູ້ນຶ່ງສ້າງໂລກເພື່ອພວກເຮົາ. ພຣະອົງຊົງໄດ້ເລືອກເອົາ ພຣະເຢຊູໃຫ້ສ້າງໂລກນີ້.

### *ການສົນທະນາ*

- ເປັນຫຍັງພຣະຜູ້ເປັນເຈົ້າຈຶ່ງໄດ້ວາງແຜນສ້າງໂລກເພື່ອພວກເຮົາ?

### ພຣະເຢຊູຊົງສ້າງໂລກ

ພຣະເຢຊູຊົງໄດ້ສ້າງໂລກ. ພຣະອົງຊົງສ້າງກາງເວັນແລະກາງຄືນ. ພຣະອົງຊົງສ້າງດວງຕາເວັນ, ດວງເດືອນແລະດວງດາວ. ພຣະອົງຊົງແຍກແມ່ນ້ຳຈາກແຜ່ນດິນແຫ້ງແລະຊົງສ້າງທະເລ, ຫນອງນ້ຳ ແລະແມ່ນ້ຳ. ພຣະອົງຊົງປູກຫຍ້າ, ຕົ້ນໄມ້, ດອກໄມ້ ແລະພືດຕ່າງໆທຸກຊະນິດເທິງແຜ່ນດິນໂລກ. ແລ້ວພຣະອົງຊົງວາງຝູງສັດ, ຝູງປາ, ຝູງນົກ ແລະຝູງແມງໄມ້ ໄວ້ເທິງແຜ່ນດິນໂລກ. ເມື່ອພຣະເຢຊູຊົງກະທຳສິ່ງທັງຫມົດນີ້ແລ້ວ, ໂລກກໍພ້ອມແລ້ວທີ່ຈະໃຫ້ຄົນມາອາສັຍຢູ່.

ແລ້ວພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈຶ່ງໄດ້ສ້າງຊາຍຄົນນຶ່ງແລະຍິງຄົນນຶ່ງຂຶ້ນ. ຜູ້ຊາຍນັ້ນມີຊື່ວ່າ ອາດາມ ແລະຜູ້ຍິງຊື່ວ່າ ເອວາ. ພວກເຂົາທັງສອງມີຮ່າງກາຍທີ່ມີເນື້ອໜັງແລະກະດູກ ເໝືອນດັ່ງພຣະກາຍຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ວຽກງານທັງໝົດແຫ່ງການສ້າງໂລກແລະການວາງທຸກສິ່ງທີ່ມີຊີວິດໃນໂລກນັ້ນເອີ້ນວ່າການສ້າງ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມີຄວາມພໍພຣະທັຍນຳແຜ່ນດິນໂລກແລະທຸກສິ່ງທີ່ພຣະເຢຊູຊົງຈັດວາງໄວ້ໃນນັ້ນ.

### *ການສົນທະນາ*

- ອາດາມແລະເອວາແຕກຕ່າງຈາກສິ່ງອື່ນໆ ທີ່ພຣະຜູ້ເປັນເຈົ້າຊົງໄດ້ສ້າງແນວໃດ?

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສ້າງໂລກເພາະພຣະອົງຊົງຮັກພວກເຮົາ

ບັດນີ້ ພວກເຮົາອາສັຍຢູ່ເທິງໂລກທີ່ສວຍງາມ ທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ບັນຊາໃຫ້ ພຣະເຢຊູສ້າງ. ດວງຕາເວັນມອບຄວາມອົບອຸ່ນແລະແສງສວ່າງໃຫ້. ຝົນເຮັດໃຫ້ພືດພັນເຕີບໂຕຂຶ້ນ ແລະໃຫ້ນ້ຳແກ່ພວກເຮົາດື່ມ. ພືດພັນແລະສັດທຸກໆຊະນິດເປັນອາຫານແລະເປັນເຄື່ອງນຸ່ງຂອງພວກເຮົາ.

ພຣະເຢຊູຊົງສ້າງສິ່ງທັງໝົດນີ້ເພື່ອພວກເຮົາ ພາຍໃຕ້ການນຳພາຂອງພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາ. ເມື່ອພວກເຮົາເຫັນສິ່ງທັງໝົດທີ່ພຣະບິດາຜູ້ສະຖິດໃນສວັນຊົງສ້າງເພື່ອພວກເຮົາ, ພວກເຮົາຮູ້ໄດ້ວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກແລະເປັນຫ່ວງເປັນໄຍພວກເຮົາ.

### *ການສົນທະນາ*

- ຄິດເຖິງສິ່ງໃດສິ່ງນຶ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສ້າງເພື່ອພວກເຮົາ.
- ພວກເຮົາຈະຮູ້ໄດ້ແນວໃດວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກແລະເປັນຫ່ວງເປັນໄຍພວກເຮົາ?

## ພວກເຮົາສາມາດສະແດງຄວາມກະຕັນຍູຕໍ່ແຜ່ນດິນໂລກ

ພວກເຮົາຄວນຈໍາສເມີວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້ສ້າງທຸກສິ່ງທັງຫມົດທີ່ມີຢູ່ໃນໂລກ ເພື່ອພວກເຮົາ. ພຣະອົງຊົງບໍ່ມີຄວາມສຸກເມື່ອພວກເຮົາລືມສິ່ງທັງຫມົດເຫລົ່ານີ້. ພວກເຮົາສາມາດສະແດງຕໍ່ພຣະອົງວ່າ ພວກເຮົາມີຄວາມກະຕັນຍູໂດຍການໃຊ້ສິ່ງທີ່ມີຢູ່ໃນໂລກດ້ວຍຄວາມສລາດ. ພວກເຮົາບໍ່ຄວນໃຊ້ສິ່ງທີ່ຢູ່ໃນໂລກໂດຍບໍ່ມີປໂຍດ. ພວກເຮົາຄວນຖນອມໂລກແລະຮັກສາມັນໃຫ້ສະອາດ. ພວກເຮົາຄວນຂອບພຣະທັຍພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາສໍາລັບໂລກທີ່ສວຍງາມນີ້ ເມື່ອພວກເຮົາອະທິຖານຫາພຣະອົງ. ພວກເຮົາຍັງຄວນສະແດງແກ່ພຣະອົງວ່າ ພວກເຮົາມີຄວາມກະຕັນຍູຕໍ່ໂລກໂດຍການກະທໍາສິ່ງທີ່ພຣະອົງຊົງຕ້ອງການໃຫ້ພວກເຮົາກະທໍາ.

### *ການສົນທະນາ*

- ພວກເຮົາສາມາດສະແດງຄວາມກະຕັນຍູຕໍ່ໂລກແກ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້ແນວໃດ?

### *ຂໍ້ອ້າງອີງ*

*ພວກເຮົາຕ້ອງການມີໂລກ*

- ເອຊາຢາ ໔໕:໑໘ (ພຣະຜູ້ເປັນເຈົ້າຊົງສ້າງໂລກເພື່ອມວນມະນຸດຈະໄດ້ອາສັຍຢູ່ເທິງນັ້ນ.)
- ໔ ນີໄຟ ໔:໑໕ (ພຣະຜູ້ເປັນເຈົ້າຊົງສ້າງໂລກ ຊຶ່ງເປັນສ່ວນນຶ່ງຂອງແຜນຂອງພຣະອົງສໍາລັບພວກເຮົາ.)

*ພຣະເຢຊູຊົງສ້າງໂລກ*

- ເອຊາຢາ ໔໕:໑໘ (ພຣະຜູ້ເປັນເຈົ້າຊົງສ້າງໂລກ).

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສ້າງໂລກເພາະພຣະອົງຊົງຮັກພວກເຮົາ*

- ປະຖົມມະການ ໑ (ພຣະຜູ້ເປັນເຈົ້າຊົງສ້າງທຸກສິ່ງທັງຫມົດທີ່ຢູ່ເທິງໂລກສໍາລັບພວກເຮົາ.)

- ໂຣມ ໘:໓໘–໓໙ (ບໍ່ມີຫຍັງທີ່ຈະສາມາດແຍກພວກເຮົາອອກຈາກຄວາມຮັກຂອງພຣະຜູ້ເປັນເຈົ້າ ໄດ້.)

*ພວກເຮົາສາມາດສະແດງຄວາມກະຕັນຍູຕໍ່ແຜ່ນດິນໂລກ*

- ເອເຟໂຊ ໕:໒໐ (ພວກເຮົາຄວນຂອບພຣະທັຍພຣະຜູ້ເປັນເຈົ້າສຳລັບທຸກສິ່ງທັງໝົດ.)
- ໂມໄຊຍາ ໒:໒໐–໒໕ (ພວກເຮົາຄວນຂອບພຣະທັຍພຣະຜູ້ເປັນເຈົ້າ, ພຣະຜູ້ສ້າງພວກເຮົາ.)



ອາດາມແລະເອວາຄຸເຂົ່າຢູ່ທີ່ແທ່ນບູຊາ.

# ອາດາມແລະເອວາ

*ບົດທີ ໗*

---

*ພວກເພິ່ນເຮັດແນວໃດເພື່ອຊ່ວຍເຫລືອພວກເຮົາ?*

**ອາດາມແລະເອວາເປັນສອງຄົນທຳອິດທີ່ມາຢູ່ໃນໂລກນີ້**

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໃຫ້ຊື່ແກ່ສອງຄົນທຳອິດໃນໂລກນີ້ວ່າ ອາດາມແລະເອວາ. ພວກເພິ່ນເປັນສອງຄົນໃນລູກທີ່ດີທີ່ສຸດຂອງພຣະບິດາ. ພວກເພິ່ນເຮັດໃຫ້ເປັນໄປໄດ້ສຳລັບພວກເຮົາ ທີ່ຈະມາສູ່ໂລກນີ້.

ໃນສວັນອາດາມຖືກເອີ້ນວ່າ ໄມໂກ. ທ່ານເປັນຜູ້ນຳຜູ້ນຶ່ງຂອງພວກເຮົາ. ທ່ານໄດ້ອອກໜ້າໃນສົງຄາມ ຕໍ່ຕ້ານຊາຕານ. ໄມໂກເປັນຊາຍທີ່ດີ. ທ່ານໄດ້ເຮັດໃນສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຊົງຕ້ອງການໃຫ້ທ່ານເຮັດ. ສະນັ້ນທ່ານຈຶ່ງຖືກເລືອກໃຫ້ເປັນຄົນທຳອິດທີ່ມາຢູ່ໂລກນີ້.

ເອວາກໍເປັນທິດາທີ່ດີຄົນນຶ່ງຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຊົງສົ່ງເອວາມາຢູ່ໃນໂລກກັບອາດາມ ເພື່ອຈະເປັນຄູ່ຄອງແກ່ອາດາມແລະຊ່ວຍເຫລືອທ່ານ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮູ້ວ່າ ມັນເປັນສິ່ງບໍ່ດີສຳລັບອາດາມທີ່ຈະຢູ່ໂດດດ່ຽວ. ລຳພັງແຕ່ຕົວອາດາມເອງບໍ່ສາມາດຊ່ວຍພວກເຮົາໃຫ້ມາສູ່ໂລກນີ້ໄດ້. ເອວາເປັນສ່ວນສຳຄັນສ່ວນນຶ່ງໃນແຜນຂອງພຣະບິດາ ແບບດຽວກັບອາດາມ.

### *ການສົນທະນາ*

- ເປັນຫຍັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈຶ່ງເລືອກເອົາອາດາມແລະເອວາ ໃຫ້ເປັນສອງຄົນທຳອິດມາຢູ່ ໃນໂລກ?
- ເປັນຫຍັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈຶ່ງສົ່ງເອວາໃຫ້ມາຢູ່ກັບອາດາມ?

## ສວນເອເດນເປັນບ້ານທຳອິດຂອງອາດາມແລະເອວາ

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ສ້າງບ່ອນທີ່ສວຍງາມໄວ້ໃຫ້ແກ່ອາດາມແລະເອວາ ເພື່ອຈະໄດ້ອາໄສຢູ່. ມັນຖືກເອີ້ນວ່າ ສວນເອເດນ. ເມື່ອອາດາມແລະເອວາຢູ່ໃນສວນເອເດນ, ພວກເພິ່ນມີຮ່າງກາຍທີ່ມີເນື້ອໜັງແລະກະດູກທີ່ບໍ່ສາມາດຕາຍໄດ້. ພວກເພິ່ນບໍ່ມີລູກ. ພວກເພິ່ນບໍ່ຈຳເປັນຕ້ອງປູກຝັງ ແລະເກັບກ່ຽວ ຫລືຕ້ອງເຮັດວຽກເພື່ອຫາສິ່ງທີ່ຕົນຕ້ອງການ. ພວກເພິ່ນບໍ່ຈື່ຈຳຊີວິດຂອງຕົນໃນສວັນ. ພວກເພິ່ນບໍ່ຮູ້ວ່າ ສິ່ງໃດດີແລະສິ່ງໃດຊົ່ວ.

ໃນສວນເອເດນ, ອາດາມແລະເອວາສາມາດຍ່າງແລະເວົ້າກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພຣະອົງຊົງບອກພວກເພິ່ນສິ່ງທີ່ພວກເພິ່ນຄວນກະທຳ. ພຣະອົງຊົງບອກພວກເພິ່ນໃຫ້ດູແລ ແລະຕົກແຕ່ງສວນໃຫ້ສວຍງາມ. ພຣະອົງຊົງບັນຊາໃຫ້ອາດາມແລະເອວາໃຫ້ມີລູກ. ພຣະອົງຍັງຊົງບັນຊາໃຫ້ກິນໝາກໄມ້ຈາກທຸກຕົ້ນໄດ້ໃນສວນຢ່າງຕາມໃຈຊອບ, ແຕ່ພຣະບິດາຊົງຫ້າມ ບໍ່ໃຫ້ກິນໝາກໄມ້ຈາກຕົ້ນໄມ້ແຫ່ງຄວາມຮູ້ດີແລະຮູ້ຊົ່ວ. ພຣະອົງຊົງເຕືອນອາດາມແລະເອວາວ່າ ຖ້າພວກເພິ່ນຫາກຝ່າຝືນກິນໝາກໄມ້ຈາກຕົ້ນນັ້ນ ພວກເພິ່ນທັງສອງຈະຕາຍ.

### *ການສົນທະນາ*

- ຊີວິດຂອງອາດາມແລະເອວາໃນສວນເອເດນແຕກຕ່າງຈາກຊີວິດໃນປັດຈຸບັນແນວໃດ?
- ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກໃຫ້ອາດາມແລະເອວາເຮັດສິ່ງໃດ?

## ອາດາມແລະເອວາຖືກແຍກອອກຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ

ຊາຕານຄິດວ່າ ມັນສາມາດທຳລາຍແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້. ມັນມາໃນສວນເອເດນ ແລະພະຍາຍາມຊັກຊວນໃຫ້ເອວາກິນໝາກໄມ້ຈາກຕົ້ນໄມ້ແຫ່ງຄວາມຮູ້ດີ ແລະຮູ້ຊົ່ວ. ມັນບອກເອວາວ່າ ຖ້ານາງຮັບກິນໝາກໄມ້ ນາງຈະບໍ່ຕາຍ. ມັນເວົ້າວ່າ ນາງຈະຮູ້ຄວາມແຕກຕ່າງລະຫວ່າງຄວາມດີແລະຄວາມຊົ່ວແບບດຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ເອວາເຊື່ອຊາຕານແລະນາງໄດ້ກິນໝາກໄມ້. ເມື່ອເອວາບອກອາດາມວ່າ ນາງໄດ້ກິນໝາກໄມ້ຈາກຕົ້ນນັ້ນ, ອາດາມຮູ້ວ່າ ເອວາຈຳຕ້ອງໄດ້ໜີຈາກສວນເອເດນ. ອາດາມເລີຍກິນໝາກໄມ້ນຳ ເພື່ອພວກເພິ່ນທັງສອງຈະສາມາດຢູ່ຮ່ວມກັນ.

ຊີວິດຂອງອາດາມແລະເອວາໄດ້ປ່ຽນແປງ ຫລັງຈາກເຂົາເຈົ້າໄດ້ກິນໝາກໄມ້ທີ່ພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາຊົງບັນຊາບໍ່ໃຫ້ກິນ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສົ່ງພວກເພິ່ນອອກຈາກ ສວນເອເດນ. ພວກເພິ່ນບໍ່ສາມາດຍ່າງແລະເວົ້າກັບພຣະອົງໄດ້ອີກຕໍ່ໄປ. ຈາກເວລານັ້ນຕໍ່ມາ ມະນຸດກໍຖືກແຍກອອກຈາກທີ່ປະທັບຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ການບໍ່ສາມາດຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເອີ້ນວ່າ *ການຕາຍທາງວິນຍານ. ອາດາມແລະເອວາຈຳເປັນຕ້ອງອາສັຍຢູ່ແຜ່ນດິນຂ້າງນອກສວນເອເດນທີ່ສວຍງາມນັ້ນ. ພວກເພິ່ນຕ້ອງຈຳເປັນຕ້ອງຫາລ້ຽງຊີບ ໂດຍການອອກແຮງງານເອງ.

ຮ່າງກາຍຂອງພວກເພິ່ນກໍໄດ້ປ່ຽນແປງ. ບັດນີ້ ພວກເພິ່ນສາມາດມີລູກໄດ້. ພວກເພິ່ນສາມາດມີຄວາມເຈັບປ່ວຍແລະຮູ້ສຶກເຖິງຄວາມເຈັບປວດ, ຄວາມ ໂສກເສົ້າ ແລະໃນວັນໃດວັນນຶ່ງ ພວກເພິ່ນກໍຈະຮັບຄວາມຕາຍ. ການປ່ຽນແປງທີ່ມາເຖິງອາດາມແລະເອວານັ້ນເອີ້ນວ່າ ການຕົກຂອງອາດາມ.

ການປ່ຽນແປງເຫລົ່ານີ້ມີຜົນສະທ້ອນແກ່ລູກຫລານຜູ້ສືບຕະກຸນທຸກໆຄົນຂອງອາດາມແລະເອວາທັງໝົດ. ເຫມືອນພວກເພິ່ນ, ພວກເຮົາມີອຳນາດທີ່ຈະມີລູກ, ມີຄວາມເຈັບປ່ວຍ, ມີຄວາມເຈັບປວດ, ມີຄວາມ ໂສກເສົ້າ ແລະຄວາມຕາຍໄດ້ມາເຖິງພວກເຮົາຄືກັນ.

### *ການສົນທະນາ*

- ຊາຕານໄດ້ເຮັດແນວໃດໃນຄວາມພະຍາຍາມຂອງມັນທີ່ຈະທຳລາຍແຜນຂອງພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາ?
- ຊີວິດຂອງອາດາມແລະເອວາໄດ້ປ່ຽນແປງແນວໃດ ຫລັງຈາກພວກເພິ່ນກິນໝາກໄມ້ຈາກຕົ້ນໄມ້ ແຫ່ງຄວາມຮູ້ດີແລະຮູ້ຊົ່ວ?
- ການຕາຍທາງວິນຍານແມ່ນຫຍັງ?
- ການຕົກຂອງອາດາມແມ່ນຫຍັງ?

## ການຕົກຂອງອາດາມເປັນສ່ວນຈຳເປັນຂອງແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງວາງແຜນເພື່ອລູກໆຂອງພຣະອົງໃຫ້ມາສູ່ໂລກ ເພື່ອຈະໄດ້ຮັບຮ່າງກາຍທີ່ມີເນື້ອໜັງແລະກະດູກ. ຫລັງຈາກພຣະອົງຊົງສົ່ງອາດາມແລະເອວາອອກຈາກ ສວນເອເດນແລ້ວ, ພວກເພິ່ນກໍເລີ່ມມີລູກ. ຕໍ່ມາລູກໆຂອງພວກເພິ່ນກໍໄດ້ແຕ່ງງານແລະມີລູກຕໍ່ໆໄປ. ໃນວິທີນີ້ ລູກວິນຍານຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຜູ້ທີ່ອາໄສຢູ່ນຳພຣະອົງກໍລົງມາສູ່ໂລກດັ່ງທີ່ ພຣະອົງຊົງໄດ້ວາງແຜນໄວ້. ເພາະການກະທຳຂອງອາດາມແລະເອວາ, ພວກເຮົາແຕ່ລະຄົນຈຶ່ງສາມາດ ມາສູ່ໂລກແລະໄດ້ຮັບຮ່າງກາຍທີ່ມີເນື້ອໜັງແລະກະດູກ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຍັງວາງແຜນເພື່ອລູກໆຂອງພຣະອົງທີ່ຈະໄດ້ເຮັດວຽກເພື່ອຈະຮັບ ເອົາສິ່ງທີ່ພວກເຂົາຕ້ອງການແລະຈຳເປັນຕ້ອງມີ. ນັບແຕ່ເວລາອາດາມແລະເອວາໄດ້ອອກຈາກສວນເອເດນໄປ, ລູກໆຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໃນໂລກ ຈຳເປັນຕ້ອງເຮັດວຽກເພື່ອຈະໄດ້ຮັບສິ່ງທີ່ ຕ້ອງການແລະຈຳເປັນຕ້ອງມີ.

ຫລັງຈາກອາດາມແລະເອວາກິນໝາກໄມ້ທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຫ້າມບໍ່ໃຫ້ກິນ, ພວກເພິ່ນໄດ້ຮຽນຮູ້ເຖິງຄວາມແຕກຕ່າງລະຫວ່າງຄວາມດີແລະຄວາມຊົ່ວ. ບັດນີ້, ພວກເຮົາແຕ່ລະຄົນໃນໂລກ ສາມາດຮຽນຮູ້ເຖິງຄວາມແຕກຕ່າງລະຫວ່າງຄວາມດີແລະຄວາມຊົ່ວ ແລະມີສິດທິທີ່ຈະເລືອກ ດ້ວຍຕົວເອງ ທີ່ຈະກະທຳຄວາມດີຫລືຄວາມຊົ່ວ.

ເມື່ອພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສົ່ງອາດາມແລະເອວາອອກຈາກສວນເອເດນ, ພວກເພິ່ນພະຍາຍາມຮຽນສິ່ງທີ່ພຣະອົງຊົງຕ້ອງການໃຫ້ຮຽນ. ພວກເພິ່ນໄດ້ເຊື່ອຟັງແລະສິດສອນ ລູກໆຂອງພວກເພິ່ນໃຫ້ເຊື່ອຟັງພຣະອົງ. ພວກເຮົາແຕ່ລະຄົນກໍຄວນຮຽນສິ່ງທີ່ພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາຊົງຕ້ອງການໃຫ້ພວກເຮົາເຮັດ ແລະພວກເຮົາຄວນເຊື່ອຟັງພຣະອົງແລະສອນລູກໆ ຂອງພວກເຮົາໃຫ້ເຊື່ອຟັງພຣະອົງຄືກັນ.

## *ການສົນທະນາ*

- ຊາຕານໄດ້ທຳລາຍແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາບໍ່?
- ເປັນຫຍັງພວກເຮົາຈຶ່ງຄວນສະແດງຄວາມກະຕັນຍູຕໍ່ສິ່ງທີ່ອາດາມແລະເອວາໄດ້ກະທຳ?

## *ຂໍ້ອ້າງອີງ*

*ອາດາມແລະເອວາເປັນສອງຄົນທຳອິດທີ່ມາຢູ່ໃນໂລກນີ້*

- ປະຖົມມະການ ໑:໒໗–໒໘ (ພຣະຜູ້ເປັນເຈົ້າຊົງສ້າງຊາຍແລະຍິງ.)
- ພຣະນິມິດ ໑໒:໗–໙ (ອາດາມ ຊຶ່ງມີຊື່ວ່າ ໄມໂກ ໃນເວລານັ້ນໄດ້ນຳພາວິນຍານທີ່ຊອບທັມ ຕໍ່ຕ້ານຊາຕານ.)
- ໑ ນີໄຟ ໕:໑໑; ໒ ນີໄຟ ໒:໑໙–໒໐ (ອາດາມແລະເອວາເປັນພໍ່ແມ່ຄູ່ທຳອິດ.)

*ສວນເອເດນເປັນບ້ານທຳອິດຂອງອາດາມແລະເອວາ*

- ປະຖົມມະການ ໒:໑໕ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ສົ່ງອາດາມແລະເອວາ ໃຫ້ດູແລສວນເອເດນ.)
- ປະຖົມມະການ ໒:໑໗–໑໘ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສັ່ງອາດາມແລະເອວາ ບໍ່ໃຫ້ກິນໝາກໄມ້ຈາກຕົ້ນໄມ້ແຫ່ງຄວາມຮູ້ດີແລະຮູ້ຊົ່ວ.)

*ອາດາມແລະເອວາຖືກແຍກອອກຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ*

- ປະຖົມມະການ ໓:໑–໕ (ຊາຕານລໍ້ລວງເອວາ.)
- ປະຖົມມະການ ໓:໒໓–໒໔ (ພຣະຜູ້ເປັນເຈົ້າຊົງສົ່ງອາດາມແລະເອວາອອກຈາກສວນເອເດນ.)
- ໂຣມັນ ໑໔:໑໗ (ອາດາມແລະເອວາບໍ່ສາມາດຢູ່ກັບພຣະຜູ້ເປັນເຈົ້າອີກຕໍ່ໄປ.)

*ການຕົກຂອງອາດາມເປັນສ່ວນຈຳເປັນຂອງແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ*

- ໒ ນີໄຟ ໒:໒໒–໒໕ (ພວກເຮົາບໍ່ສາມາດມາສູ່ໂລກນີ້ໄດ້ຖ້າມັນບໍ່ມີການຕົກຂອງອາດາມ.)
- ແອລມາ ໑໒:໒໒–໓໒ (ການຕົກຂອງອາດາມເປັນສ່ວນນຶ່ງຂອງແຜນຂອງພຣະຜູ້ເປັນເຈົ້າ.)

# ການຕິດຕໍ່ກັບພຣະຜູ້ເປັນເຈົ້າ

*ພາກສາມ*



# ພຣະວິນຍານບໍຣິສຸດ

*ບົດທີ ໗*

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊຶ່ງໄດ້ເລືອກຜູ້ໃດຜູ້ນຶ່ງໃຫ້ສອນພວກເຮົາເຖິງສິ່ງທີ່ພຣະອົງຊົງຕ້ອງການ ໃຫ້ພວກເຮົາຮູ້. ຜູ້ທີ່ຖືກເລືອກນັ້ນແມ່ນໃຜ ແລະພວກເຮົາຈະສາມາດຮຽນ ທີ່ຈະເຂົ້າໃຈຄຳສອນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້ແນວໃດ?*

### ພຣະວິນຍານບໍຣິສຸດຊົງເຮັດວຽກງານຮ່ວມນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູ ເພື່ອຈະຊ່ວຍເຫລືອພວກເຮົາ

ພຣະວິນຍານບໍຣິສຸດຊົງເຮັດວຽກງານນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູ. ພຣະອົງໄດ້ສະແດງປະຈັກພະຍານຕໍ່ພວກເຮົາວ່າ ພຣະບິດາຜູ້ສະຖິດໃນສວັນແລະພຣະເຢຊູຊົງພຣະຊົນຢູ່ ແລະພຣະອົງທັງສອງຊົງຮັກພວກເຮົາ. ພຣະວິນຍານບໍຣິສຸດຊົງຊ່ວຍພຣະພຣະບິດາຜູ້ສະຖິດໃນສວັນ ແລະພຣະເຢຊູສອນພວກເຮົາເຖິງສິ່ງທີ່ພວກເຮົາຈຳເປັນຕ້ອງຮູ້ ແລະຕ້ອງເຮັດ ແລະເພື່ອຊ່ວຍເຫລືອພວກເຮົາໃຫ້ເຊື່ອຟັງພຣະບັນຍັດຂອງພວກພຣະອົງ. ພຣະວິນຍານບໍຣິສຸດບໍ່ມີຮ່າງກາຍທີ່ມີເນື້ອຫນັງ ແລະກະດູກເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູຊົງມີ. ພຣະອົງຊົງເປັນວິນຍານ ແລະພຣະອົງຊົງມີລັກສະນະເຫມືອນດັ່ງມະນຸດ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ພຣະເຢຊູຄຣິສ ແລະພຣະວິນຍານບໍຣິສຸດ ຊົງເປັນສາມພຣະອົງທີ່ ແຕກຕ່າງກັນ. ພວກພຣະອົງກະທຳວຽກງານຮ່ວມກັນເພື່ອຊ່ວຍເຫລືອພວກເຮົາຮຽນເຖິງສິ່ງທີ່ພວກເຮົາຄວນຮູ້ແລະຄວນເຮັດ.

ເມື່ອພວກເຮົາຮັບຄຳສອນຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຫລືຈາກພຣະເຢຊູ, ສ່ວນຫລາຍ ມັນແມ່ນພຣະວິນຍານບໍຣິສຸດທີ່ນຳເອົາຄຳສອນນັ້ນມາສູ່ພວກເຮົາ. ພຣະວິນຍານບໍຣິສຸດຍັງຊ່ວຍເຫລືອພວກເຮົາໃຫ້ເຊື່ອຟັງພຣະບັນຍັດຂອງພວກພຣະອົງນຳອີກ.

### *ການສົນທະນາ*

- ພຣະວິນຍານບໍຣິສຸດເຮັດວຽກງານນຳໃຜ?
- ພຣະວິນຍານບໍຣິສຸດແຕກຕ່າງຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະພຣະເຢຊູແນວໃດ?

## ວຽກງານຂອງພຣະວິນຍານບໍຣິສຸດ

ພຣະວິນຍານບໍຣິສຸດຊົງສອນພວກເຮົາກ່ຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູ. ພຣະອົງຊົງບອກພວກເຮົາວ່າ ພຣະບິດາຜູ້ສະຖິດໃນສວັນ ແລະພຣະເຢຊູຊົງພຣະຊົນຢູ່ ແລະພວກພຣະອົງຊົງຮັກພວກເຮົາ. ພຣະວິນຍານບໍຣິສຸດຊົງບອກພວກເຮົາອີກວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງເປັນບິດາຂອງວິນຍານຂອງພວກເຮົາ. ພຣະອົງຍັງຊົງບອກພວກເຮົາວ່າ ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ.

ພຣະວິນຍານບໍຣິສຸດຊົງຊ່ວຍເຫລືອພວກເຮົາໃຫ້ເຂົ້າໃຈກ່ຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະພຣະເຢຊູແລະສິ່ງທີ່ພວກເຮົາຈຳຕ້ອງເຮັດ ເພື່ອຈະໄດ້ກັບຄືນໄປຢູ່ໃນສວັນ. ພຣະອົງຍັງຊົງຊ່ວຍເຫລືອ ພວກເຮົາໃຫ້ຮຽນຮູ້ແລະເຂົ້າໃຈເຖິງຄວາມຈິງທັງຫມົດ.

ພຣະວິນຍານບໍຣິສຸດຍັງຊົງໃຫ້ພະລັງແກ່ພວກເຮົາທີ່ຈະເຊື່ອຟັງພຣະບັນຍັດຂອງພຣະບິດາຂອງພວກເຮົາ ແລະພຣະເຢຊູ. ພຣະອົງຊົງສາມາດຊ່ວຍເຫລືອພວກເຮົາໃຫ້ເລືອກເຮັດສິ່ງທີ່ຖືກຕ້ອງ ເມື່ອພວກເຮົາ ຈຳເປັນຕ້ອງໄດ້ເລືອກລະຫວ່າງການກະທຳສອງຢ່າງ. ພຣະອົງຊົງສາມາດໃຫ້ຄວາມສງົບ ແກ່ພວກເຮົາໃນເວລາສັບສົນ.

### *ການສົນທະນາ*

- ວຽກງານຂອງພຣະວິນຍານບໍຣິສຸດມີຫຍັງແດ່?

- ພຣະວິນຍານບໍຣິສຸດຊົງສາມາດຊ່ວຍເຫລືອພວກເຮົາໃຫ້ຮູ້ຫຍັງແດ່?
- ພຣະວິນຍານບໍຣິສຸດຊົງສາມາດຊ່ວຍເຫລືອພວກເຮົາເຮັດຫຍັງແດ່?

## ພຣະວິນຍານບໍຣິສຸດຊົງສອນພວກເຮົາໃນວິທີທີ່ມີພະລັງ

ພຣະວິນຍານບໍຣິສຸດຊົງເປັນພະຍານຕໍ່ສິ່ງທີ່ຖືກແລະສິ່ງທີ່ຜິດ. ພະຍານນີ້ມີພະລັງທີ່ສຸດຈົນພວກເຮົາບໍ່ສາມາດຈະລືມໄດ້. ພຣະວິນຍານບໍຣິສຸດຈະບໍ່ເວົ້ານຳພວກເຮົາແບບດຽວກັບພວກເຮົາໄດ້ຍິນດ້ວຍຫູ ຂອງພວກເຮົາ. ແຕ່ພຣະອົງຈະເຮັດໃຫ້ພວກເຮົາຄິດຫລືຮູ້ສຶກວ່າ ສິ່ງທີ່ພວກເຮົາອ່ານຫລືໄດ້ຍິນນັ້ນ ເປັນຈິງຫລືບໍ່. ຄວາມຮູ້ສຶກເຫລົ່ານີ້ມີພະລັງຫລາຍທີ່ສຸດ.

ຫລາຍໆຄົນສາມາດມີຄວາມຮູ້ສຶກເຖິງອຳນາດຂອງພຣະວິນຍານບໍຣິສຸດໃນເວລາດຽວກັນ. ເພື່ອຈະເຂົ້າໃຈສິ່ງນີ້ດີຂຶ້ນ, ຈົ່ງຄິດເຖິງຕາເວັນ. ມັນມີແຕ່ຕາເວັນດວງດຽວ ແຕ່ແສງສວ່າງແລະຄວາມ ຮ້ອນຂອງມັນໃຫ້ຄວາມອົບອຸ່ນແກ່ຫລາຍຄົນໃນຫລາຍໆແຫ່ງໃນເວລາດຽວກັນ. ພຣະວິນຍານບໍຣິສຸດ ກໍເປັນແບບດຽວກັນ. ຜູ້ຄົນຢູ່ຫລາຍໆແຫ່ງສາມາດຮູ້ສຶກເຖິງອຳນາດຂອງພຣະອົງໃນເວລາດຽວກັນ ເຖິງແມ່ນວ່າ ພຣະວິນຍານນັ້ນຈະຢູ່ບ່ອນດຽວເທົ່ານັ້ນແຕ່ລະຄັ້ງ.

### *ການສົນທະນາ*

- ພຣະວິນຍານບໍຣິສຸດຊົງສອນພວກເຮົາເຖິງສິ່ງທີ່ພວກເຮົາຈຳເປັນຕ້ອງຮູ້ແນວໃດ?
- ພຣະວິນຍານບໍຣິສຸດສາມາດຊ່ວຍເຫລືອຫລາຍໆຄົນໃນເວລາດຽວກັນໄດ້ແນວໃດ?

## ພຣະວິນຍານບໍຣິສຸດຈະຊ່ວຍເຫລືອພວກເຮົາແຕ່ລະຄົນ

ຫລັງຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສົ່ງອາດາມແລະເອວາອອກຈາກສວນເອເດນແລ້ວ, ພວກເພິ່ນໄດ້ອະທິຖານແລະທູນຖາມພຣະອົງວ່າ ພວກເພິ່ນຄວນເຮັດແນວໃດ. ພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາຊົງສົ່ງພຣະວິນຍານບໍຣິສຸດມາເພື່ອສອນພວກເພິ່ນກ່ຽວກັບພຣະບິດາແລະພຣະເຢຊູ ແລະກ່ຽວກັບສິ່ງທີ່ອາດາມແລະເອວາຄວນເຮັດ. ພຣະວິນຍານບໍຣິສຸດຊົງບອກພວກເພິ່ນວ່າ ຄຳສອນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເປັນຄວາມຈິງ. ພຣະອົງຊົງໄດ້ໃຫ້

ພະລັງແກ່ພວກເພິ່ນ ໃຫ້ເຮັດສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ພວກເພິ່ນເຮັດ. ພຣະອົງຍັງຊົງຊ່ວຍເຫລືອພວກເພິ່ນໃຫ້ເປັນຄົນຖ່ອມຕົວ ແລະມີຄວາມກະຕັນຍູຕໍ່ ສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ກະທຳເພື່ອພວກເພິ່ນ.

ໂດຍຜ່ານການນຳພາຂອງພຣະວິນຍານບໍລິສຸດ, ອາດາມແລະເອວາໄດ້ຮຽນຮູ້ວ່າພວກເພິ່ນຈະສາມາດ ກັບໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກໃນວັນໃດວັນນຶ່ງ ຖ້າຫາກພວກເພິ່ນຕິດຕາມ ແລະເຊື່ອຟັງພຣະບັນຍັດຂອງພຣະເຢຊູເມ. ການນຳພາຂອງພຣະວິນຍານບໍລິສຸດເຮັດໃຫ້ ພວກເພິ່ນມີຄວາມສຸກຫລາຍຂຶ້ນ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກພວກເຮົາແຕ່ລະຄົນ. ພຣະອົງຊົງສົ່ງພຣະວິນຍານບໍລິສຸດ ມາເພື່ອນຳພາແລະສອນພວກເຮົາເຖິງຄວາມຈິງ, ແຕ່ພຣະວິນຍານບໍລິສຸດຈະຊ່ວຍເຫລືອພວກເຮົາ ຖ້າຫາກພວກເຮົາພະຍາຍາມຢ່າງພາກພຽນທີ່ຈະຕິດຕາມພຣະບັນຍັດແລະການສິດສອນ ທີ່ພຣະອົງຊົງນຳມາຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູ. ຖ້າຫາກພວກເຮົາບໍ່ພະຍາຍາມຢ່າງພາກພຽນທີ່ຈະເຊື່ອຟັງພຣະບັນຍັດຂອງພວກພຣະອົງ ຫລືຖ້າຫາກພວກເຮົາບໍ່ຕ້ອງການໃຫ້ພຣະວິນຍານບໍລິສຸດສິດສອນພວກເຮົາ, ພຣະອົງກໍຈະບໍ່ບອກພວກເຮົາເຖິງສິ່ງໃດເລີຍ. ພວກເຮົາຈະມີຊີວິດທີ່ດີກວ່າ ຖ້າຫາກພວກເຮົາຕິດຕາມການສອນຂອງພຣະວິນຍານບໍລິສຸດ.

## *ການສົນທະນາ*

- ພຣະວິນຍານບໍລິສຸດຊົງຊ່ວຍເຫລືອອາດາມແລະເອວາແນວໃດ?
- ພວກເຮົາຈຳຕ້ອງເຮັດແນວໃດເພື່ອຈະໄດ້ຮັບຄວາມຊ່ວຍເຫລືອຈາກພຣະວິນຍານບໍລິສຸດ?

## *ຂໍ້ອ້າງອີງ*

*ພຣະວິນຍານບໍລິສຸດຊົງເຮັດວຽກງານຮ່ວມກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູ ເພື່ອຈະຊ່ວຍເຫລືອພວກເຮົາ*

- ໂຢຮັນ ໑໔:໒໖; ໒ ນີໄຟ ໓໓:໑ (ພຣະວິນຍານບໍຣິສຸດຈະຊົງຊ່ວຍເຫລືອພວກເຮົາຈື່ຈຳສິ່ງທີ່ພວກເຮົາ ໄດ້ຮຽນມາ.)
- ໂຢຮັນ ໑໕:໒໖ (ພຣະວິນຍານບໍຣິສຸດຊົງສະແດງແກ່ພວກເຮົາເຖິງຄວາມຈິງກ່ຽວກັບພຣະເຢຊູ.)
- ໑ ໂຢຮັນ ໕:໗ (ພຣະວິນຍານບໍຣິສຸດຊົງເຮັດວຽກງານຮ່ວມກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະພຣະເຢຊູຄຣິສ.)
- ໓ ນີໄຟ ໒໘:໑໑ (ພຣະວິນຍານບໍຣິສຸດຊົງໃຫ້ຄວາມຮູ້ກ່ຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະພຣະເຢຊູ.)

*ວຽກງານຂອງພຣະວິນຍານບໍຣິສຸດ*

- ໑ ໂກຣິນໂທ ໑໒:໓; ເຮັບເຣີ ໑໐:໑໕ (ພຣະວິນຍານບໍຣິສຸດຊົງສອນພວກເຮົາໃຫ້ຮູ້ວ່າ ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດ.)
- ໒ ນີໄຟ ໓໒:໕ (ພຣະວິນຍານບໍຣິສຸດຈະຊົງຊ່ວຍເຫລືອພວກເຮົາໃຫ້ຮູ້ຈັກສິ່ງທີ່ພວກເຮົາຄວນເຮັດ.)

*ພຣະວິນຍານບໍຣິສຸດຊົງສອນພວກເຮົາໃນວິທີທີ່ມີພະລັງອຳນາດ*

- ໂມໂຣໄນ ໑໐:໕–໗ (ພຣະວິນຍານບໍຣິສຸດຊົງບອກພວກເຮົາເຖິງສິ່ງທີ່ເປັນຄວາມຈິງແລະສິ່ງທີ່ບໍ່ເປັນຄວາມຈິງ.)

*ພຣະວິນຍານບໍຣິສຸດຈະຊ່ວຍເຫລືອພວກເຮົາແຕ່ລະຄົນ*

- ໂຢຮັນ ໑໖:໑໓ (ພຣະວິນຍານບໍຣິສຸດຈະຊົງນຳພາພວກເຮົາໄປສູ່ຄວາມຈິງທັງຫມົດ.)
- ໂຣມ ໘:໑໖–໑໗ (ພຣະວິນຍານບໍຣິສຸດຈະຊົງຊ່ວຍເຫລືອພວກເຮົາໃຫ້ຮູ້ວ່າພວກເຮົາເປັນລູກໆຂອງ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.)



*ພວກເຮົາຄວນອະທິຖານເປັນສ່ວນຕົວ
ແລະຮ່ວມກັບຄອບຄົວທຸກໆເຊົ້າແລະທຸກໆແລງ.*

# ການເວົ້າກັບພຣະບິດາເທິງສວັນ

*ບົດທີ ໗*

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກພວກເຮົາຫລາຍທີ່ສຸດ. ພຣະອົງຊົງໄດ້ສ້າງເສັ້ນທາງ ສຳລັບພວກເຮົາ ທີ່ຈະເວົ້າກັບພຣະອົງເມື່ອໃດກໍຕາມທີ່ພວກເຮົາຕ້ອງການ. ພວກເຮົາຈະສາມາດເວົ້າກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້ແນວໃດ?*

**ພວກເຮົາສາມາດເວົ້າກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້**

ການເວົ້າກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເອີ້ນວ່າ ການອະທິຖານ. ເຖິງແມ່ນວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງປະທັບຢູ່ເທິງສວັນ, ພວກເຮົາຍັງສາມາດເວົ້າກັບພຣະອົງ ແລະພຣະອົງຊົງໄດ້ຍິນພວກເຮົາ. ພຣະອົງຊົງຕ້ອງການຢາກຈະຊ່ວຍເຫລືອພວກເຮົາ. ພຣະອົງຊົງຂໍໃຫ້ ພວກເຮົາເວົ້າກັບພຣະອົງ ເມື່ອພວກເຮົາເວົ້າກັບພຣະອົງ, ພຣະອົງຈະຊົງຊ່ວຍພວກເຮົາໃຫ້ເຮັດສິ່ງດີ ທີ່ພວກເຮົາຄວນເຮັດ.

ພວກເຮົາສາມາດບອກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເຖິງສິ່ງທີ່ພວກເຮົາກຳລັງຄິດ. ພວກເຮົາສາມາດ ບອກພຣະອົງວ່າ ພວກເຮົາຮັກພຣະອົງ. ພວກເຮົາສາມາດບອກພຣະອົງວ່າ ພວກເຮົາຊົງມີຄວາມກະຕັນຍູ ຕໍ່ສິ່ງທີ່ພຣະອົງຊົງປະທານແກ່ພວກເຮົາ. ພວກເຮົາສາມາດຂໍຮ້ອງໃຫ້ພຣະອົງຊ່ວຍເຫລືອພວກເຮົາ.

ພວກເຮົາສາມາດເວົ້າກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເມື່ອໃດກໍຕາມທີ່ພວກເຮົາຕ້ອງການ ເວົ້າກັບພຣະອົງ. ພວກເຮົາຄວນເວົ້າກັບພຣະອົງເມື່ອພວກເຮົາຢູ່

ຄົນດຽວ. ເມື່ອພວກເຮົາຢູ່ຄົນດຽວ, ພວກເຮົາ ສາມາດເວົ້າພາຈຳພຣະອົງເຖິງຄວາມຮູ້ສຶກສ່ວນຕົວ ແລະບັນຫາຂອງພວກເຮົາ. ພວກເຮົາຄວນເວົ້ານຳ ພຣະອົງຢ່າງນ້ອຍທຸກໆເຊົ້າແລະທຸກໆແລງ.

ພວກເຮົາຍັງຄວນເວົ້ານຳພຣະອົງພ້ອມກັບຄອບຄົວຂອງພວກເຮົາ. ພວກເຮົາສາມາດເຮັດສິ່ງນີ້ທຸກເຊົ້າ ແລະທຸກແລງ. ພວກເຮົາຍັງສາມາດເວົ້ານຳພຣະອົງກ່ອນພວກເຮົາຮັບປະທານອາຫານແຕ່ລະຄັ້ງ ພວກເຮົາຂອບພຣະທັຍພຣະອົງສຳລັບອາຫານຂອງພວກເຮົາ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຍາມໃດກໍມີຄວາມປະສົງຢາກໃຫ້ເຮົາເວົ້ານຳພຣະອົງສເມີ. ພຣະອົງຊົງຮັກພວກເຮົາ ແລະຊົງຕ້ອງການທີ່ຈະຊ່ວຍເຫລືອພວກເຮົາສເມີ. ແມ່ນແຕ່ເວລາພວກເຮົາເຮັດ ສິ່ງທີ່ຜິດ ພຣະອົງກໍຍັງຊົງຮັກພວກເຮົາ. ພຣະອົງຍັງຈະຊົງຟັງແລະຊ່ວຍເຫລືອພວກເຮົາ.

### *ການສົນທະນາ*

- ເປັນຫຍັງພວກເຮົາຈຶ່ງຄວນເວົ້ານຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ?
- ເມື່ອໃດພວກເຮົາຄວນເວົ້ານຳພຣະອົງ?

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກວິທີທີ່ຈະເວົ້ານຳພຣະອົງ

ເມື່ອພວກເຮົາອະທິຖານ, ພວກເຮົາຄວນບອກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເຖິງສິ່ງທີ່ພວກເຮົາຮູ້ສຶກແທ້ ແລະຕ້ອງການ. ພວກເຮົາບໍ່ຄວນເວົ້າຊ້ຳຄຳເກົ່າ ທຸກໆຄັ້ງທີ່ພວກເຮົາເວົ້ານຳພຣະອົງ. ພວກເຮົາບໍ່ຈຳເປັນຕ້ອງເທດ ຫລືຮ້ອງອອກສຽງແຮງ.

ພຣະອົງຊົງບອກພວກເຮົາເຖິງວິທີທີ່ຈະເວົ້ານຳພຣະອົງ. ພວກເຮົາຄວນເວົ້ານຳພຣະອົງໂດຍຕົງ, ວ່າ: "ພຣະບິດາຜູ້ສະຖິດໃນສວັນ" ຫລືຄຳເວົ້າຄ້າຍໆແບບນີ້. ພວກເຮົາຄວນເວົ້ານຳພຣະອົງດ້ວຍຄວາມຮັກແລະ ດ້ວຍຄວາມນັບຖື.

ຕໍ່ໄປ, ພວກເຮົາຄວນຂອບພຣະທັຍພຣະອົງສຳລັບສິ່ງທີ່ພຣະອົງຊົງໄດ້ກະທຳເພື່ອພວກເຮົາ.

ສິ່ງຕໍ່ໄປນີ້ເປັນສິ່ງທີ່ພວກເຮົາຄວນຂອບພຣະທັຍພຣະອົງ:

໑. ພວກເຮົາຄວນຂອບພຣະທັຍພຣະອົງສຳລັບໂລກທີ່ສວຍງາມ ແລະສຳລັບອາຫານ ເຄື່ອງນຸ່ງຫົ່ມ ແລະຊັບສົມບັດຕ່າງໆ.
໒. ພວກເຮົາຄວນຂອບພຣະທັຍພຣະອົງສຳລັບຄຳສອນຂອງພຣະອົງ ແລະຄວາມສາມາດຂອງພວກເຮົາທີ່ຈະຮຽນກ່ຽວກັບພຣະອົງຫລາຍຂຶ້ນ.
໓. ພວກເຮົາຄວນຂອບພຣະທັຍພຣະອົງສຳລັບຄອບຄົວ, ຫມູ່ເພື່ອນ, ສຸຂພາບທີ່ດີ ແລະວຽກງານອາຊີບຂອງພວກເຮົາ.

ພວກເຮົາທູນຂໍນຳພຣະອົງສຳລັບສິ່ງທີ່ພວກເຮົາຕ້ອງການ. ພວກເຮົາສາມາດທູນຂໍນຳພຣະອົງສຳລັບບາງສິ່ງດັ່ງຕໍ່ໄປນີ້.

໑. ພວກເຮົາສາມາດຂໍຄວາມຊ່ວຍເຫລືອຈາກພຣະອົງໃຫ້ຊ່ວຍພວກເຮົາຮູ້ສິ່ງທີ່ເປັນຄວາມຈິງ ແລະສິ່ງໃດທີ່ບໍ່ເປັນຄວາມຈິງ.
໒. ພວກເຮົາສາມາດທູນຂໍໃຫ້ພຣະອົງປ້ອງກັນພວກເຮົາ ແລະຄອບຄົວຂອງພວກເຮົາ ແລະເພື່ອນບ້ານຂອງພວກເຮົາ.
໓. ພວກເຮົາສາມາດທູນຂໍໃຫ້ພຣະອົງຊ່ວຍເຫລືອພວກເຮົາໃຫ້ເຮັດສິ່ງທີ່ດີທີ່ພຣະອົງຊົງຕ້ອງການໃຫ້ພວກເຮົາເຮັດ.
໔. ພວກເຮົາສາມາດທູນຂໍໃຫ້ພຣະອົງຊ່ວຍເຫລືອພວກເຮົາເພື່ອຈະໄດ້ເລືອກກະທຳສິ່ງທີ່ດີ.
໕. ພວກເຮົາສາມາດທູນຂໍໃຫ້ພຣະອົງຊ່ວຍເຫລືອພວກເຮົາໃຫ້ກັບໃຈຈາກບາບຂອງພວກເຮົາ.
໖. ພວກເຮົາສາມາດທູນຂໍໃຫ້ພຣະອົງຊ່ວຍເຫລືອພວກເຮົາເພື່ອຈະໄດ້ຊອກຫາອາຫານໃຫ້ພຽງພໍແຕ່ລະວັນ.
໗. ພວກເຮົາສາມາດທູນຂໍໃຫ້ພຣະອົງຊ່ວຍເຫລືອພວກເຮົາໃຫ້ແກ້ໄຂບັນຫາຂອງພວກເຮົາ.
໘. ພວກເຮົາສາມາດທູນຂໍໃຫ້ພຣະອົງຊ່ວຍເຫລືອແກ້ໄຂບັນຫາຄອບຄົວແລະບັນຫາທີ່ຫມູ່ເພື່ອນຂອງພວກເຮົາມີ.

ພວກເຮົາຄວນປິດການອະທິຖານຂອງພວກເຮົາໂດຍການກ່າວວ່າ, "ໃນພຣະນາມຂອງພຣະເຢຊູຄຣິສ, ອາແມນ." ນີ້ຈະຊ່ວຍພວກເຮົາຈຳສເມີວ່າ ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ. ພຣະເຢຊູຊົງທຳງານພາຍໃຕ້ການນຳພາຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ເພື່ອຊ່ວຍເຫລືອພວກເຮົາກັບທຸກສິ່ງທັງຫມົດທີ່ພວກເຮົາຕ້ອງການ. ພວກເຮົາຄວນເວົ້າເຖິງພຣະນາມຂອງ ພຣະເຢຊູດ້ວຍຄວາມນັບຖື.

### *ການສົນທະນາ*

- ເມື່ອພວກເຮົາເວົ້ານຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ພວກເຮົາເລີ້ມແນວໃດ?
- ສິ່ງໃດແດ່ທີ່ພວກເຮົາສາມາດຂອບພຣະທັຍພຣະອົງ?
- ສິ່ງໃດແດ່ທີ່ພວກເຮົາສາມາດທູນຂໍຈາກພຣະອົງ?
- ພວກເຮົາເວົ້າແນວໃດເມື່ອພວກເຮົາຈົບການເວົ້າຂອງພວກເຮົາກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ?

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຕອບພວກເຮົາສເມີ

ພວກເຮົາສາມາດແນ່ໃຈໄດ້ວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຟັງພວກເຮົາ. ພຣະອົງຊົງຮູ້ເຖິງສິ່ງທີ່ສຳຄັນທີ່ພວກເຮົາຄວນມີ. ພຣະອົງຊົງຕຽມພ້ອມທີ່ຈະຊ່ວຍເຫລືອພວກເຮົາ.

ສ່ວນຫລາຍພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະສົ່ງຄຳຕອບຜ່ານພຣະວິນຍານບໍຣິສຸດ. ພຣະວິນຍານບໍຣິສຸດຍັງຊົງຊ່ວຍເຫລືອພວກເຮົາໃຫ້ເຂົ້າໃຈສິ່ງທີ່ພວກເຮົາຕ້ອງຮູ້ແລະເຮັດນຳອີກ. ບາງຄັ້ງພຣະວິນຍານບໍຣິສຸດຈະດົນໃຈໃຫ້ຄົນອື່ນມາຊ່ວຍພວກເຮົາ.

ພວກເຮົາຄວນເຕັມໃຈທີ່ຈະຮັບຄຳຕອບທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບໃຫ້ພວກເຮົາ. ພຣະອົງອາດຈະບໍ່ຊົງໃຫ້ຄຳຕອບຕາມທີ່ພວກເຮົາທູນຂໍ. ພຣະອົງອາດຈະບໍ່ຊົງຕອບພວກເຮົາຕາມຄວາມ ຄາດຫມາຍຂອງພວກເຮົາ. ແຕ່ພຣະອົງຊົງຮູ້ວ່າສິ່ງໃດດີສຳລັບພວກເຮົາ.

## ການສົນທະນາ

- ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕອບພວກເຮົາແນວໃດ?
- ເປັນຫຍັງບາງຄັ້ງພຣະອົງຈຶ່ງບໍ່ຊົງໃຫ້ຄຳຕອບຕາມທີ່ພວກເຮົາໄດ້ທູນຂໍ?

## ພວກເຮົາກາຍມາເປັນຄົນດີຂຶ້ນເມື່ອພວກເຮົາອະທິຖານ

ພວກເຮົາອາດບໍ່ຮູ້ເຖິງສິ່ງທີ່ພວກເຮົາຄວນເຮັດ. ພວກເຮົາອາດຢ້ານ. ພວກເຮົາອາດບໍ່ຮູ້ວິທີທີ່ຈະແກ້ໄຂບັນຫາ ຂອງພວກເຮົາ. ພວກເຮົາອາດບໍ່ຮູ້ເຖິງສິ່ງໃດທີ່ເປັນຄວາມຈິງ ແລະສິ່ງໃດບໍ່ເປັນຄວາມຈິງ. ພວກເຮົາອາດຮູ້ວ່າ ຈະເຮັດສິ່ງທີ່ຖືກຕ້ອງແຕ່ບໍ່ມີຄວາມເຂັ້ມແຂງພໍທີ່ຈະເຮັດມັນ.

ເມື່ອພວກເຮົາເວົ້ານຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເລື້ອຍໆ, ພຣະອົງຈະຊົງຊ່ວຍພວກເຮົາໃຫ້ແກ້ໄຂບັນຫາ. ພຣະອົງຊົງຊ່ວຍພວກເຮົາຮູ້ແລະເຮັດສິ່ງທີ່ຖືກຕ້ອງ. ເມື່ອພວກເຮົາຮູ້ແລະເຮັດສິ່ງທີ່ຖືກຕ້ອງ, ພວກເຮົາຈະເປັນຄົນດີຂຶ້ນ. ພວກເຮົາກາຍມາເປັນເຫມືອນດັ່ງ ພຣະບິດາຜູ້ສະຖິດໃນສວັນຫລາຍຂຶ້ນ.

## ການສົນທະນາ

- ພວກເຮົາເປັນຄົນດີຂຶ້ນໄດ້ແນວໃດຈາກການເວົ້ານຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ?

## ຂໍ້ອ້າງອີງ

*ພວກເຮົາສາມາດເວົ້ານຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້*

- ສຸພາສິດ ໕໕:໑໗–໑໗; ໒ ນີໄຟ ໓໒:໘ (ພວກເຮົາຄວນເວົ້ານຳພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາສເມີ.)
- ລູກາ ໑໘:໑ (ພວກເຮົາຄວນອະທິຖານສເມີ.)
- Alma 37:37 (ພວກເຮົາຄວນເວົ້ານຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາກ່ຽວກັບ ທຸກໆສິ່ງທີ່ພວກເຮົາເຮັດ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກວິທີທີ່ຈະເວົ້າກັບພຣະອົງ*

- ມັດທາຍ ໖:໖–໑໓ (ພວກເຮົາຖືກສອນເຖິງວິທີທີ່ພວກເຮົາຄວນອະທິຖານ.)

- ຢາໂກໂບ ໑:໕ (ພວກເຮົາຖືກບອກວ່າ ພວກເຮົາສາມາດເວົ້ານຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ກ່ຽວກັບຫລາຍໆສິ່ງ.)
- ແອລມາ ໓໔:໑໗–໒໗ (ນີ້ເປັນບາງສິ່ງທີ່ພວກເຮົາສາມາດອະທິຖານຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້.)
- ໓ ນີໄຟ ໑໙:໖, ໒໔ (ພຣະເຢຊູຊົງສອນພວກເຮົາເຖິງວິທີທີ່ຈະເວົ້ານຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຕອບພວກເຮົາສເມີ*

- ສຸພາສິດ ໑໕:໒໙ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕອບຄຳອະທິຖານຂອງພວກເຮົາ.)
- ມັດທາຍ ໗:໗ (ທູນຂໍແລ້ວເຈົ້າຈະໄດ້ຮັບ.)
- ໂມໂຣໄນ ໗:໒໖; ໓ ນີໄຟ ໑໘:໒໐ (ບໍ່ວ່າສິ່ງໃດທີ່ພວກເຮົາທູນຂໍ ຖ້າເປັນສິ່ງດີສຳລັບພວກເຮົາ, ພວກເຮົາຈະໄດ້ຮັບ.)

*ພວກເຮົາກາຍມາເປັນຄົນດີຂຶ້ນເມື່ອພວກເຮົາອະທິຖານ*

- ລູກາ ໒໒:໔໐ (ອະທິຖານເພື່ອພະລັງ ເພື່ອເຈົ້າຈະບໍ່ຖືກລໍ້ລວງ.)
- ຢາໂກໂບ ໕:໑໕–໑໖ (ການອະທິຖານຂອງຄົນທີ່ຊອບທັມເຮັດໃຫ້ສິ່ງດີຫລາຍສິ່ງເກີດຂຶ້ນ.)

# ສາສດາ

*ບົດທີ ຢ*

*ໃຜເປັນຜູ້ເວົ້າແທນພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຢູ່ໃນໂລກໃນປັດຈຸບັນນີ້ ແລະສາມາດບອກພວກເຮົາ ເຖິງສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ພວກເຮົາຮູ້ແລະເຮັດ?*

**ສາສດາຄືມະນຸດຄົນໃດຄົນນຶ່ງທີ່ເວົ້າແທນພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ**

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງເລືອກເອົາຊາຍຄົນນຶ່ງໃຫ້ເວົ້າແທນພຣະອົງຢູ່ໃນໂລກ. ຊາຍຄົນນີ້ເອີ້ນວ່າ ສາສດາ. ສາສດາຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະເຮັດສິ່ງທີ່ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ທ່ານເຮັດ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສອນສາສດາເຖິງສິ່ງທີ່ພວກເຮົາຈຳເປັນຕ້ອງຮູ້ແລະຕ້ອງເຮັດ ແລ້ວສາສດາບອກ ພວກເຮົາເຖິງສິ່ງເຫລົ່ານັ້ນ. ເມື່ອສາສດາເວົ້າແທນພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ທ່ານເວົ້າສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງ ພວກເຮົາເອງເວົ້າ ຄືກັບວ່າພຣະບິດາຜູ້ສະຖິດໃນສວັນເວົ້າກັບພວກເຮົາໂດຍຕົງ.

ສິ່ງຕໍ່ໄປນີ້ເປັນບາງສິ່ງທີ່ສາສດາຈະບອກພວກເຮົາ:

- ທ່ານສອນພວກເຮົາວ່າ ພຣະເຢຊູຊົງເປັນພຣະບຸດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ວ່າພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ ແລະວ່າຄຳສອນຂອງພຣະເຢຊູເປັນຄວາມຈິງ.


ໂຢເຊັບ ສມິທ


ບຣິກັມ ຢັງ


ຈອນ ເທເລີ


ວິວຟອດ ວູດດຣັບ


ໂລເຣັນໂຊ ສະໂນ


ໂຢເຊັບ ແອັຟ ສມິທ


ຮີເບີ ເຈ ແກຣນ


ຈອສ ອາເບີດ ສມິທ


ດາວິດ ໂອ ມິກເຄ


ໂຢເຊັບ ຟຽວດິງ ສມິທ


ແຮໂຣນ ບີ ລີ


ສະເປັນເຊີ ດັບເບີນຢູ ຄິມເບີນ


ເອັຊຣາ ແທັບ ເບັນຊັນ


ຮົາເວີດ ດັບເບີນຢູ ຮັນເທີ


ກໍເດີ້ນ ບີ ຮິງລີ

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ສົ່ງ*
*ສາສດາມາໃນສມັຍປັດຈຸບັນຂອງພວກເຮົາ*

- ທ່ານສອນພວກເຮົາເຖິງຄໍາຂອງພຣະບິດາຂອງພວກເຮົາວ່າ ພວກເຮົາຄວນເຮັດສິ່ງໃດ.
- ທ່ານບອກພວກເຮົາໃຫ້ເຊົາເຮັດຄວາມຊົ່ວ.
- ທ່ານບອກພວກເຮົາກ່ຽວກັບສິ່ງທີ່ຈະເກີດຂຶ້ນໃນອະນາຄົດ.

ພຽງແຕ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເທົ່ານັ້ນທີ່ສາມາດເລືອກເອົາສາສດາ. ຜູ້ຄົນບໍ່ສາມາດເລືອກເອົາສາສດາດ້ວຍຕົວເອງ. ມະນຸດບໍ່ສາມາດເລືອກຕົນເອງໃຫ້ເປັນສາສດາໄດ້. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໃຫ້ອໍານາດແກ່ສາສດາທີ່ຈະທໍາງານແລະເວົ້າແທນພຣະອົງ. ມະນຸດບໍ່ສາມາດເປັນຕົວແທນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້ ຖ້າຄົນນັ້ນບໍ່ມີອໍານາດນີ້.

### *ການສົນທະນາ*

- ສາສດາເປັນຜູ້ເວົ້າແທນໃຜ?
- ມີສິ່ງໃດແດ່ທີ່ສາສດາສອນພວກເຮົາ?

### ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສົ່ງສາສດາມາຊ່ວຍເຫລືອພວກເຮົາສເມີ

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມີຄວາມເປັນຫ່ວງເປັນໄຍນໍາລູກໆຂອງພຣະອົງຢູ່ໃນໂລກ. ນັບຕັ້ງແຕ່ວັນເວລາຂອງອາດາມເປັນຕົ້ນມາ ພຣະອົງຊົງໄດ້ສົ່ງສາສດາມາຊ່ວຍລູກໆຂອງພຣະອົງ. ພຣະອົງຊົງສົ່ງສາສດາໃຫ້ມາເຕືອນຜູ້ຄົນເຖິງຄວາມອັນຕະລາຍ. ພຣະອົງຊົງສົ່ງສາສດາ ໃຫ້ມານໍາພາຜູ້ຄົນອອກຈາກບັນຫາ. ພຣະອົງຊົງສົ່ງສາສດາເຫລົ່ານີ້ໃຫ້ມາຊ່ວຍຜູ້ຄົນ ຕຽມຕໍ່ເຫດການຍິ່ງໃຫຍ່ທີ່ຈະເກີດຂຶ້ນ. ຕໍ່ໄປນີ້ເປັນສາສດາບາງຄົນທີ່ພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາຊົງໄດ້ສົ່ງມາ:

໑. ໂນອາ: ທ່ານໄດ້ເຕືອນຜູ້ຄົນວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະເຮັດໃຫ້ນໍ້າມາຖ້ວມ ເພື່ອທໍາລາຍພວກເຂົາຖ້າຫາກພວກເຂົາບໍ່ຢຸດການກະທໍາທີ່ຊົ່ວນັ້ນ.

໒. ອັບຣາຮາມ: ທ່ານໄດ້ເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະໄດ້ສອນລູກໆຂອງທ່ານໃຫ້ເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ສັນຍາວ່າ ຈະມອບຫລາຍໆສິ່ງ
ໃຫ້ແກ່ອັບຣາຮາມແລະລູກຫລານຂອງທ່ານ.

๑. ໂມເຊ: ທ່ານໄດ້ນຳພາຜູ້ຄົນແຫ່ງອິສຣາເອນອອກຈາກປະເທດເອຢິບ ເຂົ້າໄປສູ່
ແຜ່ນດິນບ່ອນນຶ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ຕຽມໄວ້
ເພື່ອພວກເຂົາ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ສົ່ງສາສດາມາໃນສມັຍຂອງພວກເຮົາຄືກັນ. ສາສດາຄົນນຶ່ງຜູ້ໄດ້ມີຊີວິດຢູ່ບໍ່ນານມານີ້ມີຊື່ວ່າ ໂຢເຊັບ ສມິທ. ທ່ານໄດ້ອາສັຍຢູ່ສະຫະຣັດອະເມຣິກາ. ໃນປີ ໑໘໒໐ ໂຢເຊັບ ສມິທ ມີອາຍຸໄດ້ ໑໔ ປີ. ໃນເວລານັ້ນ, ມີຫລາຍໆຄົນກຳລັງເຂົ້າຮ່ວມສາສນາຈັກ ທີ່ແຕກຕ່າງກັນ, ແລະຊອກຫາສາສນາຈັກທີ່ແທ້ຈິງ. ໂຢເຊັບມີຄວາມຕ້ອງການຢາກເປັນຄົນດີ ແລະຢາກຊອກຫາສາສນາຈັກທີ່ແທ້ຈິງຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ວັນນຶ່ງໂຢເຊັບກຳລັງອ່ານປຶ້ມສັກສິດເຫລັ້ມນຶ່ງເອີ້ນວ່າ ພຣະຄັມພີໄບເບິ້ນ. ທ່ານໄດ້ອ່ານວ່າ ຖ້າທ່ານຕ້ອງການຢາກຮູ້ສິ່ງໃດສິ່ງນຶ່ງ, ທ່ານກໍຄວນທູນຖາມພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ແລ້ວພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະໃຫ້ຄຳຕອບທ່ານ. ໂຢເຊັບມີຄວາມເຊື່ອວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະບອກເຖິງສິ່ງທີ່ທ່ານຈະຕ້ອງເຮັດແທ້ໆ. ທ່ານກໍເລີຍຕັດສິນໃຈທູນອະທິຖານພິເສດຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ເຊົ້າວັນນຶ່ງ, ໂຢເຊັບໄດ້ເຂົ້າໄປໃນປ່າແຫ່ງນຶ່ງເພື່ອອະທິຖານ. ໃນຂະນະທີ່ທ່ານກຳລັງອະທິຖານຢູ່ນັ້ນ, ມີແສງສວ່າງທີ່ແຈ້ງກວ່າດວງຕາເວັນລົງມາຈາກທ້ອງຟ້າ ໃນແສງສວ່າງນັ້ນ ທ່ານເຫັນພຣະບິດາ ຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູຄຣິສ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊີ້ໃສ່ພຣະເຢຊູ ແລະຊົງຕັສວ່າ,
"ນີ້ແມ່ນບຸດທີ່ຮັກຂອງເຮົາ ຈົ່ງຟັງທ່ານ!"

ໂຢເຊັບເຊື່ອຟັງທຸກສິ່ງທີ່ພຣະເຢຊູຊົງບອກແກ່ທ່ານ ແລະທ່ານໄດ້ເຊື່ອຟັງຄຳສອນທີ່ພຣະເຢຊູຊົງໃຫ້ແກ່ທ່ານ.

ເມື່ອໂຢເຊັບໄດ້ເຕີບໂຕຂຶ້ນມາ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງເລືອກເອົາທ່ານໃຫ້ເປັນ ສາສດາຂອງພຣະອົງ. ທ່ານໄດ້ເປັນສາສດາຜູ້ຍິ່ງໃຫຍ່. ທ່ານໄດ້

ສອນຜູ້ຄົນເຖິງສິ່ງທີ່ພຣະບິດາ ຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ພວກເຂົາເຮັດ.

ໂຢເຊັບ ສມິທ ໄດ້ເສັຽຊີວິດໃນປີ ໑໘໔໔ ຫລັງຈາກທ່ານເສັຽຊີວິດແລ້ວ, ພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາໄດ້ເລືອກເອົາຊາຍຄົນນຶ່ງອີກໃຫ້ເປັນສາສດາ. ປັດຈຸບັນນີ້, ເມື່ອໃດສາສດາເສັຽຊີວິດໄປ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະເລືອກເອົາອີກຄົນນຶ່ງໃຫ້ເປັນຜູ້ເວົ້າແທນພຣະອົງຢູ່ໃນໂລກ.

*ການສົນທະນາ*

- ໃຜແດ່ເປັນສາສດາບາງຄົນທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ເລືອກ?
- ໂຢເຊັບ ສມິທ ໄດ້ເຮັດຫຍັງແດ່?

## ມັນມີສາສດາຢູ່ໃນໂລກໃນສມັຍປັດຈຸບັນ

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກລູກໆຂອງພຣະອົງທີ່ຢູ່ໃນໂລກໃນປັດຈຸບັນນີ້. ພຣະອົງຊົງຮູ້ວ່າ ພວກເຮົາມີບັນຫາຫລາຍ. ພຣະອົງຊົງໄດ້ສົ່ງສາສດາມາໃຫ້ຊ່ວຍພວກເຮົາ. ພຣະອົງຊົງຕັສກັບສາສດາ ໃນປັດຈຸບັນແບບດຽວທີ່ພຣະອົງຊົງໄດ້ຕັສກັບສາສດາໃນສມັຍກ່ອນ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໃຫ້ຄຳແນະນຳແກ່ສາສດາເພື່ອຜູ້ຄົນທົ່ວແຜ່ນດິນໂລກ. ສາສດາເປັນຄົນດຽວເທົ່ານັ້ນທີ່ສາມາດຮັບຄຳແນະນຳຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ເພື່ອມະນຸດທົ່ວແຜ່ນດິນໂລກ.

ສາສດາທີ່ມີຊີວິດຢູ່ໃນປັດຈຸບັນນີ້ເປັນຊາຍທີ່ຍິ່ງໃຫຍ່. ທ່ານຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະຕ້ອງການທີ່ຈະເຊື່ອຟັງພຣະອົງ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກສາສດາເຖິງສິ່ງ ທີ່ພຣະອົງຊົງຕ້ອງການໃຫ້ພວກເຮົາຮູ້ແລະເຮັດ.

*ການສົນທະນາ*

- ເປັນຫຍັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈິ່ງສົ່ງສາສດາມາໃນສມັຍປັດຈຸບັນ?

- ສາສດາຮັບເອົາຄຳແນະນຳເພື່ອຜູ້ໃດ?
- ເປັນຫຍັງພວກເຮົາຈຶ່ງຄວນເຊື່ອທັງຫມົດທີ່ສາສດາບອກພວກເຮົາ?

**ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຊ່ວຍເຫລືອພວກເຮົາ ເມື່ອພວກເຮົາເຊື່ອຟັງຄຳແນະນຳ ທີ່ພຣະອົງຊົງມອບໃຫ້ແກ່ສາສດາ.**

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ບັນຊາພວກເຮົາໃຫ້ເຊື່ອຟັງສາສດາຂອງພຣະອົງ ເມື່ອສາສດາເວົ້າແທນພຣະອົງ. ເມື່ອພວກເຮົາເຊື່ອຟັງຄຳແນະນຳຂອງພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາຊົງມອບໃຫ້ແກ່ສາສດາ, ພວກເຮົາຈະໄດ້ຮຽນຮູ້ວິທີທີ່ຈະກາຍມາເປັນເຫມືອນດັ່ງ ພຣະບິດາຜູ້ສະຖິດໃນສວັນຫລາຍຂຶ້ນ. ພວກເຮົາຈະໄດ້ຮຽນຮູ້ສິ່ງທີ່ພວກເຮົາຄວນເຮັດ. ພວກເຮົາຈະສາມາດຮຽນຮູ້ວິທີທີ່ຈະແກ້ໄຂບັນຫາ ເມື່ອພວກເຮົາປະສົບກັບມັນ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງຊ່ວຍພວກເຮົາ ແລະພວກເຮົາຈະມີ ຄວາມສະຫງົບໃນຈິດໃຈຂອງພວກເຮົາ.

### *ການສົນທະນາ*

- ເປັນຫຍັງພວກເຮົາຈຶ່ງຄວນຟັງຕໍ່ສິ່ງທີ່ສາສດາບອກໃຫ້ພວກເຮົາເຮັດ?
- ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຊ່ວຍພວກເຮົາແນວໃດ ເມື່ອພວກເຮົາກະທຳຕາມສິ່ງທີ່ພຣະອົງຊົງບອກສາສດາໃຫ້ບອກແກ່ພວກເຮົາ?

## *ຂໍ້ອ້າງອີງ*

*ສາສດາຄືມະນຸດຄົນໃດຄົນນຶ່ງທີ່ເວົ້າແທນພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ*

- ຈົດບັນຊີ ໑໘:໒໑; ລູກາ ໑:໗໐ (ພຣະບິດາຜູ້ສະຖິດໃນສວັນຊົງຕັສຜ່ານສາສດາ.)
- ເຢເຣມີຢາ ໑:໕, ໗ (ພຣະບິດາຜູ້ສະຖິດໃນສວັນຊົງບອກສາສດາເຖິງສິ່ງທີ່ຈະເວົ້າ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສົ່ງສາສດາມາຊ່ວຍເຫລືອພວກເຮົາສເມີ*

- ອາໂມດ ၃:໗ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕັສຜ່ານສາສດາຂອງພຣະອົງສເມີ.)
- ເຮັບເຣີ ໑:໑ (ໃນສມັຍກ່ອນ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕິດຕໍ່ນຳມະນຸດຜ່ານສາສດາ.)

*ມັນມີສາສດາຢູ່ໃນໂລກໃນສມັຍປັດຈຸບັນ*

- ໔ ນີໄຟ ၃:໗–໒໔ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສັນຍາທີ່ຈະເລືອກສາສດາໃນສມັຍຍຸກສຸດທ້າຍ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຊ່ວຍເຫລືອພວກເຮົາເມື່ອພວກເຮົາເຊື່ອຟັງຄຳແນະນຳທີ່ພຣະອົງຊົງມອບໃຫ້ແກ່ສາສດາ*

- ພຣະບັນຍັດສອງ ໑໘:໑໘–໑໙ (ຄົນທີ່ບໍ່ຟັງສາສດາຈະຖືກພິພາກສາໂດຍສິ່ງທີ່ສາສດາໄດ້ສອນ.)
- ၃ ນີໄຟ ໔໘:၃໔ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະບໍ່ອະນຸຍາດໃຫ້ຜູ້ທີ່ປະຕິເສດຄຳສອນຂອງສາສດາຂອງພຣະອົງໄດ້ຢູ່ກັບພຣະອົງອີກ.)

# ພຣະຄຳພີ

*ບົດທີ ໑໐*

---

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ມອບພຣະຄຳພີສີ່ເຫລັ້ມສັກສິດເພື່ອຊ່ວຍເຫລືອພວກເຮົາ. ທ່ານຮູ້ຈັກຊື່ຂອງພຣະຄຳພີສີ່ເຫລັ້ມນີ້ບໍ່?*

**ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສະແດງຄວາມຮັກຕໍ່ພວກເຮົາໂດຍມອບການຂຽນທີ່ສັກສິດໃຫ້ແກ່ພວກເຮົາ**

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ບັນຊາໃຫ້ສາສດາຂຽນສິ່ງທີ່ພຣະອົງຊົງຕ້ອງການໃຫ້ພວກເຮົາຮູ້. ການຂຽນເຫລົ່ານີ້ເອີ້ນວ່າ ພຣະຄຳພີ. ການຂຽນເຫລົ່ານີ້ເປັນສິ່ງສັກສິດ ເພາະສິ່ງທີ່ຖືກຂຽນໃນນັ້ນມາຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ມັນສຳຄັນກວ່າແລະຍິ່ງໃຫຍ່ກວ່າສິ່ງໃດທັງຫມົດທີ່ມະນຸດສາມາດຂຽນປາສຈາກການຊ່ວຍເຫລືອຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບການຂຽນເຫລົ່ານີ້ໃຫ້ແກ່ພວກເຮົາເພື່ອຊ່ວຍເຫລືອພວກເຮົາ. ໂດຍການອ່ານການຂຽນເຫລົ່ານີ້ ພວກເຮົາສາມາດຮຽນເຖິງແຜນອັນຍິ່ງໃຫຍ່ຂອງພຣະບິດາຜູ້ສະຖິດໃນສວັນທີ່ມີເພື່ອພວກເຮົາ. ພວກເຮົາສາມາດຮຽນກ່ຽວກັບຊີວິດຂອງພວກເຮົານຳພຣະອົງ ກ່ອນພວກເຮົາລົງມາເກີດ. ພວກເຮົາສາມາດຮຽນກ່ຽວກັບພຣະເຢຊູຄຣິສ. ພວກເຮົາສາມາດຮຽນສິ່ງທີ່ພວກເຮົາຄວນເຮັດເພື່ອຈະມີຄວາມສຸກແລະຈະກາຍມາເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຫລາຍຂຶ້ນ.

ການຂຽນເຫລົ່ານີ້ຊ່ວຍພວກເຮົາຮຽນວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຊົງຮັກ ແລະຊົງຕ້ອງການໃຫ້ພວກເຮົາເຮັດສິ່ງທີ່ຖືກຕ້ອງ. ມັນບອກພວກເຮົາກ່ຽວກັບ ຄົນອື່ນໆຜູ້ທີ່ໄດ້ຮູ້ຈັກ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ມັນບອກພວກເຮົາ ວ່າ ພຣະອົງຊົງຮັກຜູ້ຄົນທັງຫມົດ. ພວກເຮົາຮຽນຮູ້ໃນ ພຣະຄັມພີເຫລົ່ານີ້ວ່າ ເມື່ອ ຜູ້ຄົນເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ພວກເຂົາຈະມີຄວາມສຸກ ແລະພຣະອົງຊົງຊ່ວຍເຫລືອພວກເຂົາ. ເມື່ອພວກເຂົາບໍ່ເຊື່ອຟັງພຣະອົງ, ພວກເຂົາ ຈະບໍ່ມີຄວາມສຸກ ແລະບໍ່ໄດ້ຮັບຄວາມຊ່ວຍເຫລືອຈາກພຣະອົງ.

### *ການສົນທະນາ*

- ພຣະຄັມພີແມ່ນຫຍັງ?
- ພວກເຮົາສາມາດຮຽນຫຍັງແດ່ຈາກພຣະຄັມພີ?

## ພວກເຮົາມີພຣະຄັມພີສີ່ເຫລັ້ມ

ພຣະຄັມພີສີ່ເຫລັ້ມຄືພຣະຄັມພີໄບເບິ້ນ, ພຣະຄັມພີມໍມອນ, Doctrine and Covenants ແລະ Pearl of Great Price ທັງສີ່ເຫລັ້ມນີ້ບັນຈຸພຣະຄຳຂອງ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູຄຣິສ. ມັນສອນຄວາມຈິງ ທັງຫມົດຂອງການສອນທີ່ແທ້ຈິງຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະພຣະເຢຊູຄຣິສ.

### *ພຣະຄັມພີໄບເບິ້ນ*

ພຣະຄັມພີໄບເບິ້ນບັນຈຸພຣະຄຳຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາທີ່ ໄດ້ມອບໃຫ້ຜູ້ຄົນຈາກວັນເວລາຂອງ ອາດາມມາເຖິງວັນເວລາທີ່ *ອັຄສາວົກຂອງ ພຣະເຢຊູມີຊີວິດຢູ່. ພຣະຄຳເຫລົ່ານີ້ມີໄວ້ເພື່ອໃຫ້ ພວກເຮົາຮຳຮຽນແລະຕິດຕາມ ໃນສມັຍນີ້. ພຣະຄັມພີໄບເບິ້ນຖືກແຍກອອກເປັນສອງສ່ວນ. ມັນມີພຣະຄັມພີເດີມ ແລະພຣະຄັມພີໃຫມ່.

ພຣະຄັມພີເດີມເລີ້ມດ້ວຍເຣື່ອງຂອງການສ້າງໂລກຂອງພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາແລະໃນ ການສົ່ງຊາຍແລະຍິງຄົນທຳອິດລົງມາສູ່ໂລກ. ພຣະຄັມພີ ເດີມບັນທຶກເຣື່ອງຂອງສາສດາຫລາຍໆຄົນ, ເຊັ່ນ ໂນອາ, ອັບຣາຮາມ, ອິສຣາເອນ,

ໂມເຊ, ເອຊາຢາ ແລະເອລີຢາ. ເລື່ອງເຫລົ່ານີ້ບອກເຖິງວິທີທີ່ພຣະບິດາ ຜູ້ສະຖິດໃນສວັນຂອງພວກເຮົາຊ່ວຍເຫລືອຜູ້ຄົນ ເມື່ອຜູ້ຄົນກະທຳສິ່ງທີ່ດີ. ມັນຍັງອະທິບາຍເຖິງເຫດການເມື່ອຜູ້ຄົນ ບໍ່ຟັງສາສດາ ແລະບໍ່ເຊື່ອຟັງຄຳສອນຂອງພຣະບິດາເທິງສັວນພວກເຂົາບໍ່ໄດ້ຮັບການຊ່ວຍເຫລືອ ຈາກພຣະອົງ.

ພຣະຄັມພີໃຫມ່ເປັນພາກທີສອງຂອງພຣະຄັມພີໄບເບິ້ນ. ມັນບອກເຖິງເຣື່ອງການກຳເນີດແລະຊີວິດ ຂອງພຣະເຢຊູໃນແຜ່ນດິນໂລກ. ມັນບັນຈຸຄຳສອນອັນສວຍງາມບາງຢ່າງຂອງພຣະເຢຊູແລະ ຫລາຍເຣື່ອງກ່ຽວກັບຄວາມຮັກຂອງພຣະອົງຕໍ່ຜູ້ຄົນແລະກ່ຽວກັບການຊ່ວຍເຫລືອຂອງພຣະອົງກັບຜູ້ຄົນ. ມັນຍັງອະທິບາຍເຖິງວິທີທີ່ພຣະອົງຊົງເອີ້ນເອົາອັຄສາວົກຂອງພຣະອົງຈາກຜູ້ຕິດຕາມພຣະອົງ ແລະວິທີທີ່ພຣະອົງຊົງສອນອັຄສາວົກເຫລົ່ານີ້ ແລະຊົງມອບອຳນາດໃຫ້ແກ່ອັຄສາວົກຂອງພຣະອົງໃຫ້ກະທຳວຽກງານຂອງພຣະອົງ. ຜູ້ຕິດຕາມຂອງພຣະອົງຮູ້ວ່າພຣະອົງຊົງເປັນພຣະເຈົ້າ. ຕໍ່ມາຜູ້ຂຽນເອີ້ນພຣະອົງວ່າ ອົງພຣະເຈົ້າພຣະເຢຊູຄຣິສ.

ພຣະຄັມພີໃຫມ່ເລົ່າເຖິງວິທີທີ່ພຣະເຢຊູຊົງໄດ້ທໍຣະມານ ແລະຊົງສິ້ນພຣະຊົນເພື່ອມະນຸດທັງປວງ. ພຣະຄັມພີໃຫມ່ສລຸບລົງດ້ວຍບົດບັນທຶກເຖິງວິທີທີ່ອັຄສາວົກສອນຜູ້ຄົນກ່ຽວກັບພຣະເຢຊູ, ສອນກ່ຽວກັບ ສິ່ງທີ່ຈະເກີດຂຶ້ນກ່ອນການສະເດັດມາອີກຂອງພຣະເຢຊູ ແລະສອນກ່ຽວກັບເວລາສຸດທ້າຍຂອງແຜ່ນດິນໂລກ.

ຜູ້ຄົນຂອງໂລກບໍ່ໄດ້ຮັບເອົາອັຄສາວົກ ແຕ່ຫົວເຢາະເຢີ້ຍພວກທ່ານ, ຂົ່ມເຫັງພວກທ່ານ ແລະຂ້າພວກທ່ານ. ເມື່ອອັຄສາວົກແລະສາສດາທຸກໆຄົນໄດ້ເສັຽຊີວິດໄປ, ມັນບໍ່ມີໃຜເຫລືອຢູ່ໃນໂລກທີ່ຈະຂຽນພຣະຄຳຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກ.

ພຣະຄັມພີໄບເບິ້ນ ບັນທຶກພຣະຄຳຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາດັ່ງເທົ່າທີ່ມັນໄດ້ແປຖືກຕ້ອງມາ.

*ພຣະຄັມພີມໍມອນ*

ພຣະຄັມພີມໍມອນບັນຈຸຄຳສອນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຕໍ່ຜູ້ຄົນທີ່ໄດ້ອາສັຍຢູ່ທະວີບ ອະເມຣິກາ. ສ່ວນນຶ່ງຂອງບັນທຶກນີ້ຖືກຂຽນໄວ້ ໔໐໐໐ ປີກ່ອນການກຳເນີດຂອງພຣະເຢຊູຄຣິສ. ອີກສ່ວນນຶ່ງຖືກເລີ່ມຂຽນປະມານ ໒໐໐ ປີ

ກ່ອນພຣະເຢຊູຄຣິດ ແລະສິ້ນສຸດລົງ ໔໐໐ ປີ ຫລັງຈາກການກຳເນີດຂອງພຣະອົງ. ພຣະຄຳພີນີ້ບັນຈຸການສອນທີ່ສຳຄັນຂອງພຣະບິດາ ຜູ້ສະຖິດໃນສະຫວັນຂອງພວກເຮົາ. ພຣະຄຳພີມໍມອນຖືກຂຽນ ເພື່ອຊ່ວຍເຫລືອຜູ້ຄົນໃນເວລານັ້ນ ແລະໃນເວລານີ້ ໃຫ້ຮູ້ວ່າ ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດຂອງຄົນທັງຫມົດໃນແຜ່ນດິນໂລກ.

ຫລາຍສ່ວນໃນພຣະຄຳພີມໍມອນເລົ່າເຖິງເລື່ອງຂອງຜູ້ຄົນກຸ່ມນຶ່ງ ທີ່ເດີນທາງຈາກເຢຣູຊາເລັມ ໄປຫາທະວີບອະເມຣິກາ. ພວກເຂົາອອກເດີນທາງ ໖໐໐ ປີ ກ່ອນການກຳເນີດຂອງພຣະເຢຊູຄຣິດ. ພວກເຂົາຖືກນຳພາໂດຍສາສດາຄົນນຶ່ງຊື່ວ່າ ລີໄຮ ແລະລູກຊາຍຂອງທ່ານຊື່ວ່າ ນີໄຟ. ອ້າຍຂອງນີໄຟສອງຄົນເປັນຄົນຊົ່ວຮ້າຍ ແລະບໍ່ເຊື່ອຟັງບິດາຂອງຕົນ. ພວກເຂົາມີຊື່ວ່າ ເລມັນ ແລະ ເລມູເອນ.

ເມື່ອລີໄຮສິ້ນຊີວິດໄປ, ສະມາຊິກຂອງຄອບຄົວຂອງທ່ານແຍກອອກເປັນສອງກຸ່ມ. ຄົນທີ່ຕິດຕາມນີໄຟຖືກເອີ້ນວ່າ ຊາວນີໄຟ. ຄົນທີ່ຕິດຕາມເລມັນຖືກເອີ້ນວ່າ ຊາວເລມັນ. ຄົນສອງກຸ່ມນີ້ເຕີບໂຕຂຶ້ນເປັນປະຊາຊາດທີ່ຍິ່ງໃຫຍ່. ຊາວນີໄຟແລະຊາວລີໄຮສູ້ຮົບກັນໃນຫລາຍສົງຄາມ. ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງໃຫ້ພອນແລະປ້ອງກັນຄົນທີ່ເຊື່ອຟັງພຣະບັນຍັດຂອງພຣະອົງ.

ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງເລືອກສາສດາຫລາຍໆທ່ານໃຫ້ສອນແລະນຳພາຜູ້ຄົນ ໃນອະເມຣິກາ. ເລື່ອງຣາວກ່ຽວກັບຊີວິດແລະການສອນຂອງພວກເຂົາມີໄວ້ໃນພຣະຄຳພີມໍມອນ. ສາສດາບາງທ່ານທີ່ສຳຄັນ ໃນພຣະຄຳພີນີ້ ແມ່ນນີໄຟ, ຢາໂຄບ, ເບັນຈາມິນ, ແອລມາ, ມໍມອນ ແລະໂມໂຣໄນ. ສາສດາທັງຫມົດນີ້ຂຽນເຖິງປະວັດຂອງຜູ້ຄົນຂອງພຣະບິດາຜູ້ສະຖິດໃນສະຫວັນ ຂອງພວກເຮົາໃນອະເມຣິກາ. ມໍມອນເອົາຈາຣຶກເຫລົ່ານີ້ ທີ່ຖືກຂຽນໂດຍສາສດາ ມາປະກອບເຂົ້າກັນເປັນປຶ້ມເຫລັ້ມນຶ່ງ.

ສາສດາສອນຜູ້ຄົນວ່າ ພຣະເຢຊູຈະຊົງສະເດັດມາຢ້ຽມຢາມແຜ່ນດິນຂອງພວກເຂົາ ຫລັງຈາກພຣະອົງຊົງ ສິ້ນສຸດວຽກງານຂອງພຣະອົງໃນເຢຣູຊາເລັມ. ພຣະເຢຊູຊົງໄດ້ມາປາກົດຕໍ່ຜູ້ຄົນທີ່ດີໃນອະເມຣິກາ. ພຣະອົງຊົງສອນພວກເຂົາເຖິງ *ພຣະກິດຕິຄຸນຂອງພຣະອົງແລະສິ່ງທີ່ພວກເຂົາຈຳຕ້ອງເຮັດເພື່ອຈະກັບໄປຫາພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຫລັງຈາກພວກເຂົາສິ້ນຊີວິດ.

ຜູ້ຄົນເຊື່ອພຣະເຢຊູແລະເຊື່ອຟັງພຣະອົງເປັນເວລາຫລາຍປີ. ພວກເຂົາເປັນຄົນດີ ແລະອາສັຍຢູ່ນຳກັນໃນຄວາມສງົບ. ແລ້ວພວກເຂົາເລີ່ມລືມພຣະເຢຊູ. ພວກເຂົາ ຢຸດຟັງຄຳສອນຂອງສາສດາແລະກະທຳສິ່ງທີ່ຊົ່ວຮ້າຍຫລາຍຢ່າງ.

ມໍມອນ, ສາສດາຄົນສຸດທ້າຍຄົນນຶ່ງໃນພຣະຄັມພີ, ໄດ້ມອບປວັດສາດຂອງ ຊາວນີໄຟທີ່ເປັນຜູ້ຄົນຂອງທ່ານ ໃຫ້ແກ່ໂມໂຣໄນລູກຊາຍຂອງທ່ານ. ຫລັງຈາກ ຜູ້ຄົນຂອງທ່ານທັງຫມົດຖືກຂ້າໃນການສູ້ຮົບຄັ້ງຍິ່ງໃຫຍ່ກັບຊາວເລມັນແລ້ວ, ໂມໂຣໄນໄດ້ຝັງບັນທຶກຂອງຜູ້ຄົນທີ່ສາສດາໄດ້ຂຽນໄວ້ໃນພູ.

ບັນທຶກນັ້ນຖືກຝັງຢູ່ເທິງຫນ່ວຍພູເປັນເວລາຫລາຍຮ້ອຍປີ. ໃນທີ່ສຸດໃນປີ ໑໘໒໐, ພຣະບິດາຜູ້ສະຖິດໃນສວັນຂອງ ພວກເຮົາຊົງເລືອກໂຢເຊັບ ສມິທ ໃຫ້ເປັນສາສດາ ຂອງພຣະອົງແລະຊົງສົ່ງໂມໂຣໄນ, ຊຶ່ງໄດ້ຟື້ນຄືນຊີວິດແລ້ວ ໃຫ້ສະແດງແກ່ໂຢເຊັບ ວ່າບັນທຶກຖືກຝັງໄວ້ຢູ່ບ່ອນໃດ. ໂຢເຊັບໄດ້ແປບັນທຶກນັ້ນເປັນພາສາອັງກິດ. ມັນເປັນທີ່ຮູ້ຈັກກັນໃນປັດຈຸບັນນີ້ວ່າ ພຣະຄັມພີມໍມອນ.

ພຣະຄັມພີມໍມອນຖືກຂຽນໄວ້ເພື່ອສະແດງວ່າ ພຣະບິດາຜູ້ສະຖິດໃນສວັນຂອງ ພວກເຮົາຊົງຮູ້ແລະຊົງຮັກ ຜູ້ຄົນທົ່ວໄປໃນໂລກ. ພຣະຄັມພີມໍມອນສອນວ່າ ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດຂອງຜູ້ຄົນ ທັງປວງໃນໂລກແລະຊົງເປັນ ພຣະບຸດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

*Doctrine and Covenants*

Doctrine and Covenants ບັນຈຸພຣະຄຳຂອງພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາແກ່ຜູ້ຄົນໃນສມັຍປັດຈຸບັນ. ມັນບັນຈຸຄຳແນະນຳຕໍ່ການຈັດຕັ້ງ ສາສນາຈັກຂອງພຣະເຢຊູຄຣິສ. ມັນອະທິບາຍເຖິງຫນ້າທີ່ຂອງສະມາຊິກ ແລະຜູ້ນຳ. ມັນຍັງບັນຈຸການສອນທີ່ຫາຍໄປເປັນເປັນເວລານານ ຕໍ່ຜູ້ຄົນໃນ ແຜ່ນດິນໂລກ. ມັນອະທິບາຍເຖິງຄຳສອນບາງຢ່າງໃນພຣະຄັມພີໄບເບິ້ນ.

Doctrine and Covenants ມີຄຳສອນສຳລັບພວກເຮົາຜູ້ມີຊີວິດໃນ ສມັຍປັດຈຸບັນ. ມັນເຕືອນພວກເຮົາເຖິງສິ່ງທີ່ຈະມາເຖິງຖ້າພວກເຮົາບໍ່ເຊື່ອຟັງ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ມັນຍັງບອກພວກເຮົາກ່ຽວກັບ ສິ່ງອັນສວຍງາມ ທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ຕຽມໄວ້ ເພື່ອພວກເຮົາຖ້າພວກເຮົາເຊື່ອຟັງພຣະອົງ.

### *Pearl of Great Price*

Pearl of Great Price ບັນຈຸໜັງສືຂອງໂມເຊ, ໜັງສືຂອງອັບຣາຮາມ ແລະປະວັດຂອງໂຢເຊັບ ສມິທ.

ໜັງສືຂອງໂມເຊບັນຈຸພາບທີ່ມາໃຫ້ເຫັນທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບໃຫ້ແກ່ໂມເຊ. ມັນອະທິບາຍເຖິງການສ້າງໂລກ. ມັນບັນຈຸການສອນທີ່ໄດ້ຫາຍໄປຈາກພຣະຄັມພີໄບເບິ້ນ.

ໜັງສືຂອງອັບຣາຮາມບອກກ່ຽວກັບການສ້າງໂລກແລະກ່ຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະອຳນາດຂອງພຣະອົງ.

ປະວັດຂອງໂຢເຊັບ ສມິທ ບອກເຖິງວິທີທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຮຽກຮ້ອງທ່ານ ໃຫ້ເປັນສາສດາ. ມັນຍັງຮ່ວມເຖິງການແປພຣະຄັມພີໄບເບິ້ນຂອງທ່ານແລະຄຳປະກາດທີ່ອະທິບາຍ ເຖິງຄວາມເຊື່ອບາງຂໍ້ຂອງສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍ. ການປະກາດນີ້ເອີ້ນວ່າ ຫລັກແຫ່ງຄວາມເຊື່ອ.

ສາສດາຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຜູ້ທີ່ມີຊີວິດໃນປັດຈຸບັນກໍໄດ້ຂຽນສິ່ງທີ່ພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາຊົງໄດ້ເປີດເຜີຍ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງເຮັດ ໃຫ້ຮູ້ແຈ້ງເຖິງສິ່ງທີ່ຍິ່ງໃຫຍ່ ແລະສຳຄັນຫລາຍຢ່າງແກ່ສາສດາໃນສມັຍກ່ອນ. ພຣະອົງຍັງຊົງເຮັດຫລາຍສິ່ງທີ່ສຳຄັນແລະຍິ່ງໃຫຍ່ເປັນທີ່ຮູ້ແຈ້ງແກ່ສາສດາໃນປັດຈຸບັນ.

### *ການສົນທະນາ*

- ພຣະຄັມພີສີ່ເຫລັ້ມທີ່ພວກເຮົາມີໃນປັດຈຸບັນມີຫຍັງແດ່?
- ເປັນຫຍັງພຣະຄັມພີແຕ່ລະເຫລັ້ມຈຶ່ງມີຄວາມສຳຄັນຕໍ່ພວກເຮົາ?

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງຊ່ວຍເຫລືອພວກເຮົາ ເມື່ອພວກເຮົາສຶກສາພຣະຄັມພີ

ໃນພຣະຄັມພີ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສອນພວກເຮົາເຖິງແຜນຂອງພຣະອົງ ເພື່ອພວກເຮົາຈະສາມາດກັບຄືນໄປຫາພຣະອົງ. ໂດຍການ

ສຶກສາພຣະຄັມພີ ພວກເຮົາສາມາດຮຽນ ສິ່ງທີ່ພຣະອົງຊົງຕ້ອງການໃຫ້ພວກເຮົາຮູ້ ແລະເຮັດ. ຖ້າຫາກພວກເຮົາບໍ່ສຶກສາພຣະຄັມພີ, ພວກເຮົາຈະບໍ່ຮູ້ວ່າ ມັນມີຫຍັງແດ່ ໃນນັ້ນ. ພວກເຮົາຈະບໍ່ຮູ້ເຖິງສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງ ຕ້ອງການໃຫ້ພວກເຮົາເຮັດ.

ພວກເຮົາຈຳເປັນຕ້ອງສຶກສາພຣະຄັມພີທຸກໆວັນ. ພວກເຮົາຍັງຄວນອ່ານພຣະຄັມພີ ໃຫ້ຄອບຄົວ ຂອງພວກເຮົາຟັງ. ພວກເຮົາຄວນຊ່ວຍເຫລືອຄອບຄົວຂອງພວກເຮົາໃຫ້ ເຂົ້າໃຈພຣະຄັມພີ. ພວກເຮົາຄວນສອນລູກໆຂອງພວກເຮົາວ່າ ພຣະຄັມພີເຫລົ່ານີ້ ເປັນພຣະຄັມພີສັກສິດທີ່ມາຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພວກເຮົາຄວນຊ່ວຍພວກເຂົາໃຫ້ຮູ້ເຖິງສິ່ງທີ່ມີຢູ່ໃນພຣະຄັມພີເຫລົ່ານີ້ ແລະໃຫ້ມີ ຄວາມກະຕັນຍູຕໍ່ສິ່ງເຫລົ່ານັ້ນ.

### *ການສົນທະນາ*

- ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງຊ່ວຍພວກເຮົາແນວໃດເມື່ອ ພວກເຮົາອ່ານພຣະຄັມພີ?

## *ຂໍ້ອ້າງອີງ*

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສະແດງຄວາມຮັກຕໍ່ພວກເຮົາໂດຍ ມອບການຂຽນທີ່ສັກສິດໃຫ້ ແກ່ພວກເຮົາ.*

- ໒ ຕີໂມທຽວ ໓:໑໖–໑໗ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບ ພຣະຄັມພີເພື່ອຊ່ວຍເຫລືອພວກເຮົາ.)
- ໒ ນີໄຟ ໒໙:໓–໑໓ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບ ພຣະຄັມພີໃຫ້ແກ່ທຸກຄົນທີ່ເຊື່ອຟັງພຣະອົງ.)
- ໒ ນີໄຟ ໓໓:໑໐ (ພຣະຄັມພີມອບພຣະຄຳຂອງພຣະເຢຊູຄຣິສໃຫ້ແກ່ພວກເຮົາ.)

*ພວກເຮົາມີພຣະຄັມພີສີ່ເຫລັ້ມ*

- ໒ ນີໄຟ ໓:໑໒; ໒ ນີໄຟ ໒໙ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບັນຊາ ໃຫ້ສາສດາຫລາຍໆທ່ານ ໃຫ້ຂຽນພຣະຄັມພີ.)
- Doctrine and Covenants 20:9 (ພຣະຄັມພີມໍມອນບັນຈຸພຣະກິດ ຕິຄຸນສອນໂດຍພຣະເຢຊູ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງຊ່ວຍເຫລືອພວກເຮົາ ເມື່ອພວກເຮົາສຶກສາພຣະຄັມພີ*

- ໂຢຣັມ ໕:໓໘ (ສຶກສາພຣະຄັມພີ. ມັນຈະຊ່ວຍພວກເຮົາໃຫ້ສາມາດກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.)
- ນໍມອນ ໆ (ພຣະຄັມພີສອນພວກເຮົາເຖິງສິ່ງທີ່ພວກເຮົາຈຳເປັນຕ້ອງຮູ້.)
- ໂມໂຣໄນ ໑໐:໓–໕ (ພຣະວິນຍານບໍຣິສຸດຈະຊົງຊ່ວຍພວກເຮົາໃຫ້ຮູ້ວ່າພຣະຄັມພີເປັນຄວາມຈິງ.)

# ພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ, ພຣະເຢຊູຄຣິສ

*ພາກສີ່*





*ພຣະຜູ້ຊ່ວຍໃຫ້ລອດ, ພຣະເຢຊູຄຣິສ, ຊົງໄດ້ກຳເນີດໃນຄອກສັດ.*

# ຊີວິດຂອງພຣະເຢຊູຄຣິສ

*ບົດທີ ໑໑*

*ພຣະເຢຊູຄຣິສຊົງເປັນຜູ້ດຽວເທົ່ານັ້ນທີ່ສາມາດນຳພວກເຮົາຄືນສູ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້. ທ່ານຮູ້ສິ່ງໃດແດ່ກ່ຽວກັບພຣະອົງ?*

**ຫລາຍໆຄົນລໍຖ້າດ້ວຍຄວາມປາຖນາອັນຍິ່ງໃຫຍ່ຕໍ່ການສະເດັດມາຂອງພຣະເຢຊູຄຣິສ**

ພຣະເຢຊູຊົງໄດ້ສມັກເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ. ພຣະອົງຊົງຕັສວ່າພຣະອົງຈະສະເດັດມາ ຍັງໂລກເພື່ອສະແດງວິທີແກ່ພວກເຮົາທີ່ຈະກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກ. ຫລາຍໆຄົນທີ່ເກີດກ່ອນການສະເດັດມາຂອງພຣະເຢຊູເຊື່ອວ່າ ພຣະອົງຈະຊົງສະເດັດມາເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຂົາ. ພວກເຂົາພາກັນລໍຖ້າວັນສະເດັດມາຂອງພຣະອົງ. ພວກເຂົາຮູ້ວ່າພຣະອົງຈະຊົງສາມາດຊ່ວຍພວກເຂົາໃຫ້ລອດຈາກການລົງໂທດນິຣັນດອນເພາະບາບຂອງພວກເຂົານັ້ນ.

ສາສດາທຸກໆຄົນທີ່ມີຊີວິດຢູ່ກ່ອນການກຳເນີດຂອງພຣະເຢຊູບອກຜູ້ຄົນວ່າ ພຣະອົງຈະຊົງສະເດັດມາ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສົ່ງທູດສວັນໃຫ້ມາບອກອາດາມວ່າ ພຣະເຢຊູຈະຊົງສະເດັດມາຍັງໂລກ.

ຫລາຍໆປີກ່ອນການກຳເນີດຂອງພຣະເຢຊູ, ສາສດາຄົນນຶ່ງຊື່ວ່າ ເອຊາຢາ ໄດ້ເຫັນໃນພາບທີ່ມາໃຫ້ເຫັນ ຂອງທ່ານວ່າ ພຣະເຢຊູຈະຊົງທໍຣະມານເພື່ອໃຊ້ແທນບາບຂອງພວກເຮົາ. ເອຊາຢາບອກວ່າ ຜູ້ຄົນຈະກຽດຊັງແລະປະຕິເສດພຣະເຢຊູ ແລະພຣະເຢຊູຈະຊົງຮູ້ສຶກເສົ້າເສັຽໃຈ.



*ໃນວັຍເດັກ, ພຣະເຢຊູຊົງສອນຄົນທີ່ມີຄວາມຮູ້ໃນພຣະວິຫານ.*

ນີໄຟ, ສາສດາທີ່ພວກເຮົາສາມາດອ່ານເຖິງໃນພຣະຄັມພີມໍມອນ, ໄດ້ເຫັນສິ່ງທີ່ພຣະເຢຊູຈະຊົງກະທຳ. ນີໄຟເຫັນສິ່ງເຫລົ່ານີ້ຫລາຍໆປີກ່ອນການກຳເນີດຂອງພຣະເຢຊູ. ທ່ານເຫັນກຸມມານນ້ອຍເຢຊູໃນອ້ອມແຂນ ຂອງມານດາຂອງພຣະອົງ. ທູດສວັນອົງນຶ່ງບອກນີໄຟວ່າ ກຸມມານນ້ອຍຄົນນັ້ນເປັນພຣະບຸດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ພວກເຮົາອ່ານກ່ຽວກັບສາສດາຄົນນຶ່ງຊື່ ເບັນຈາມິນ ໃນພຣະຄັມພີມໍມອນ. ທ່ານບອກຜູ້ຄົນວ່າ ພຣະເຢຊູ ຈະສະເດັດມາຍັງໂລກໃນເວລາບໍ່ນານ. ເບັນຈາມິນບອກພວກເຂົາວ່າ ພຣະເຢຊູຈະຊົງປິ່ນປົວຄົນເຈັບປ່ວຍ, ເຮັດໃຫ້ຄົນເປ້ຽຍ່າງໄດ້, ເຮັດໃຫ້ຄົນຕາບອດເຫັນໄດ້ ແລະເຮັດໃຫ້ຄົນຫູຫນວກໄດ້ຍິນ. ພຣະອົງຍັງຈະຊົງ ຂັບໄລ່ວິນຍານຮ້າຍອອກໄປ ແລະນຳຄົນທີ່ຕາຍແລ້ວໃຫ້ຄືນມີຊີວິດອີກ. ເບັນຈາມິນບອກວ່າພຣະເຢຊູຈະຊົງສອນຜູ້ຄົນໃຫ້ຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະຮັກເຊິ່ງກັນແລະກັນ.

ສາສດາທຸກຄົນທີ່ມີຊີວິດຢູ່ຫລັງຈາກການກຳເນີດຂອງພຣະເຢຊູໄດ້ບອກກັບພວກເຮົາວ່າ ພຣະອົງຊົງໄດ້ສະເດັດມາ. ຖ້າປາສຈາກພຣະເຢຊູຄຣິສ, ແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ກໍຈະໄດ້ຮັບຄວາມປະລາໄຊ.

### *ການສົນທະນາ*

- ເປັນຫຍັງພຣະເຢຊູຈຶ່ງຊົງໄດ້ສມັກລົງມາສູ່ໂລກ?
- ສາສດາຜູ້ໃດແດ່ທີ່ໄດ້ໃຫ້ປະຈັກພະຍານວ່າ ພຣະອົງຈະຊົງສະເດັດມາ?

## ການກຳເນີດຂອງພຣະເຢຊູນຳຄວາມຊື່ນຊົມຍິນດີມາສູ່ແຜ່ນດິນໂລກ

ພຣະເຢຊູຊົງໄດ້ກຳເນີດໃນເມືອງນ້ອຍເມືອງນຶ່ງເອີ້ນວ່າ ເບັດເລເຮັມ. ທູດສວັນພາກັນຮ້ອງເພງສັນລະເສີນ ເມື່ອພຣະອົງຊົງໄດ້ກຳເນີດເພາະພວກເຂົາມີຄວາມສຸກຫລາຍ. ມີດວງດາວໃຫມ່ດວງນຶ່ງປາກົດຂຶ້ນ ຢູ່ໃນທ້ອງຟ້າ. ຄົນລ້ຽງແກະແລະພວກໂຫຣາຈານໄດ້ມາເບິ່ງ ແລະນະມັສການພຣະອົງ. ຄົນຈຳນວນຫລວງຫລາຍທົ່ວແຜ່ນດິນໂລກຍັງພາກັນສເລີມສລອງການກຳເນີດ ຂອງພຣະອົງຢູ່ໃນປັດຈຸບັນນີ້.

ພຣະເຢຊູຊົງແຕກຕ່າງຈາກທາລົກຄົນອື່ນໆທີ່ໄດ້ມາກຳເນີດ. ພຣະບິດາຂອງພຣະເຢຊູຊົງເປັນພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາບໍ່ຊົງເປັນພຣະບິດາຂອງພຣະວິນຍານຂອງພຣະເຢຊູເທົ່ານັ້ນ ແຕ່ຍັງຊົງເປັນພຣະບິດາຂອງພຣະກາຍທີ່ມີເນື້ອໜັງແລະກະດູກຂອງພຣະອົງນຳອີກ. ພຣະເຢຊູຊົງໄດ້ຮັບອຳນາດຈາກພຣະບິດາຂອງພຣະອົງທີ່ຄົນອື່ນໆບໍ່ໄດ້ຮັບ. ຜູ້ຄົນບໍ່ສາມາດເອົາຊີວິດຂອງພຣະອົງໄປໄດ້ນອກຈາກພຣະອົງຈະຊົງເຕັມພຣະທັຍມອບໃຫ້ເທົ່ານັ້ນ. ຫລັງຈາກການສິ້ນພຣະຊົນຂອງພຣະອົງ, ພຣະອົງຊົງມີອຳນາດທີ່ຈະເຮັດໃຫ້ພຣະກາຍຂອງພຣະອົງກັບຄືນມາມີພຣະຊົນຢູ່ອີກຕໍ່ໄປ.

ມານດາຂອງພຣະເຢຊູແມ່ນ ມາຣີອາ. ນາງເປັນຍິງໜຸ່ມທີ່ບໍຣິສຸດ ຜູ້ມີຊີວິດຢູ່ໃນຄາວເກືອບສອງພັນປີກ່ອນ ຜ່ານມາແລ້ວໃນແຜ່ນດິນເອີ້ນວ່າ ອິສຣາເອນ. ໃນຂະນະທີ່ນາງເປັນຍິງໜຸ່ມບໍຣິສຸດ ຍັງບໍ່ທັນໄດ້ແຕ່ງງານເທື່ອ, ທູດສວັນຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາມາປາກົດຕໍ່ນາງ. ທູດສວັນອົງນັ້ນບອກນາງວ່າ ນາງຈະເປັນມານດາຂອງພຣະເຢຊູຄຣິສ. ທູດສວັນບອກອີກວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງເປັນບິດາຂອງພຣະເຢຊູ. ບໍ່ມີມະນຸດໃນໂລກຜູ້ໃດ ຈະເປັນບິດາຂອງພຣະອົງໄດ້.

ທູດສວັນໄດ້ສະເດັດມາຫາຊາຍຜູ້ທີ່ມາຣີອາຈະແຕ່ງງານນຳອີກ. ຊາຍຄົນນັ້ນຊື່ວ່າ ໂຢເຊບ. ທູດສວັນບອກໂຢເຊບວ່າ ທາລົກທີ່ຈະກຳເນີດມານັ້ນຈະເປັນພຣະບຸດຂອງພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາ ແລະບໍ່ແມ່ນບຸດຂອງມະນຸດຄົນໃດໃນໂລກ. ທູດສວັນບອກໃຫ້ໂຢເຊບແຕ່ງງານກັບມາຣີອາ. ສະນັ້ນໂຢເຊບແລະມາຣີອາຈຶ່ງໄດ້ແຕ່ງງານກັນ. ຫລັງຈາກພຣະເຢຊູຊົງໄດ້ກຳເນີດແລ້ວ, ໂຢເຊບໄດ້ດູແລພຣະເຢຊູເຫມືອນກັບວ່າ ພຣະເຢຊູເປັນລູກຊາຍຂອງຕົນແທ້ໆ.

ເພາະມານດາຂອງພຣະເຢຊູເປັນມະນຸດ, ພຣະເຢຊູຈຶ່ງຊົງສາມາດຮູ້ສຶກຫິວເຂົ້າເຈັບປວດ ຫິວນ້ຳ ສາມາດຕາຍໄດ້.

### *ການສົນທະນາ*

- ພວກເຮົາຈະຮູ້ໄດ້ແນວໃດວ່າ ການກຳເນີດຂອງພຣະເຢຊູເປັນເຫດການອັນສຳຄັນ?

- ພຣະເຢຊູຊົງໄດ້ຮັບອຳນາດຫຍັງແດ່ຈາກພຣະບິດາຂອງພຣະອົງ?
- ມີສິ່ງໃດແດ່ທີ່ພຣະເຢຊູຊົງສາມາດຮູ້ສຶກເພາະພຣະອົງມີມານດາທີ່ເປັນມະນຸດ?

## ພຣະເຢຊູຊົງສະເດັດມາເພື່ອສອນພຣະກິດຕິຄຸນຂອງພຣະອົງໃຫ້ແກ່ພວກເຮົາ

*ພຣະເຢຊູຊົງບໍ່ມີບາບໃດທັງຫມົດ*

ພຣະເຢຊູຊົງບໍ່ມີບາບໃດທັງຫມົດ. ພຣະອົງຊົງໄດ້ກະທຳທຸກສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ພຣະອົງເຮັດ. ພຣະເຢຊູຊົງໄດ້ເຕີບໂຕແບບດຽວກັບເດັກຄົນອື່ນໆ. ໃນຂະນະທີ່ພຣະອົງກຳລັງເຕີບໂຕຂຶ້ນ, ພຣະອົງໄດ້ຮັບປັນຍາແລະມີອຳນາດຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ເມື່ອພຣະອົງຊົງມີອາຍຸໄດ້ ໑໒ ປີ, ພຣະອົງຊົງຮູ້ວ່າ ພຣະອົງຖືກສົ່ງລົງມາໃຫ້ເຮັດສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຕ້ອງການໃຫ້ພຣະອົງເຮັດ. ພຣະອົງຊົງຮູ້ວ່າ ພຣະອົງຊົງມີວຽກງານພິເສດທີ່ຈະກະທຳຢູ່ໃນໂລກນີ້.

ມື້ນຶ່ງພຣະອົງໄດ້ເດີນທາງໄປເມືອງເຢຣູຊາເລັມນຳມາຣີອາແລະໂຢເຊບ. ຂະນະທີ່ມາຣີອາແລະໂຢເຊບ ກຳລັງເດີນທາງກັບບ້ານ, ພວກທ່ານເຫັນວ່າ ພຣະເຢຊູບໍ່ໄດ້ຢູ່ນຳພວກທ່ານ. ພວກທ່ານໄດ້ກັບໄປເຢຣູຊາເລັມເພື່ອຊອກຫາພຣະອົງ. ຫລັງຈາກສາມມື້, ພວກທ່ານໄດ້ພົບພຣະອົງໃນພຣະວິຫານ, ກຳລັງສົນທະນານຳບັນດາອາຈານນັກປາດຢູ່ ແລະກຳລັງຕອບຄຳຖາມຂອງພວກເຂົາເຈົ້າຢູ່. ທຸກໆຄົນທີ່ໄດ້ຍິນພຣະອົງກໍມີຄວາມປລາດໃຈ ເພາະພຣະອົງຊົງຮູ້ຫລາຍແນວ ແລະສາມາດຕອບຄຳຖາມຂອງພວກເຂົາເຈົ້າໄດ້. ໂຢເຊັບແລະມາຣີອາດີໃຈທີ່ໄດ້ພົບພຣະເຢຊູ ແລະພວກທ່ານເສັຽໃຈທີ່ພຣະເຢຊູບໍ່ໄດ້ຢູ່ນຳພວກທ່ານ. ພຣະເຢຊູຊົງຕອບພວກທ່ານວ່າພຣະອົງຈຳເປັນຕ້ອງເຮັດວຽກງານຂອງພຣະບິດາຜູ້ສະຖິດໃນສວັນຂອງພຣະອົງ.

*ພຣະເຢຊູຊົງໄດ້ຮັບບັບຕິສະມາ*

ເມື່ອພຣະເຢຊູຊົງມີອາຍຸໄດ້ ໓໐ ປີ, ພຣະອົງຊົງສະເດັດໄປຫາໂຢຮັນບັບຕິສະໂຕເພື່ອຮັບບັບຕິສະມາ. ໂຢຮັນຄິດວ່າ ທ່ານບໍ່ຄວນໃຫ້ບັບຕິສະມາແກ່ພຣະເຢຊູ, ເພາະພຣະເຢຊູບໍ່ໄດ້ກະທຳບາບມາກ່ອນເລີຍ. ແຕ່ພຣະເຢຊູຊົງບອກໃຫ້ໂຢຮັນໃຫ້ບັບຕິສະມາແກ່ພຣະອົງ. ພຣະເຢຊູຊົງຕ້ອງການທີ່ຈະເຊື່ອຟັງພຣະບັນຍັດທຸກໆຂໍ້

ຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ໂຢຮັນໄດ້ໃຫ້ບັບຕິສະມາພຣະເຢຊູ ໂດຍຈຸ່ມພຣະເຢຊູລົງໄປໃນນ້ຳໝົດທັງຕົວແລະດຶງພຣະເຢຊູຂຶ້ນມາ. ເມື່ອພຣະເຢຊູໄດ້ຮັບບັບຕິສະມາແລ້ວ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງກ່າວຈາກສວັນແລະຊົງຕັສວ່າ ພຣະເຢຊູຊົງເປັນພຣະບຸດຂອງພຣະອົງ ແລະວ່າພຣະອົງ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ມີຄວາມຊື່ນຊົມຫລາຍນຳພຣະເຢຊູ. ພຣະວິນຍານບໍຣິສຸດກໍໄດ້ສະເດັດລົງມາຫາພຣະເຢຊູເມື່ອພຣະເຢຊູຊົງໄດ້ຮັບບັບຕິສະມາແລ້ວ.

*ຊາຕານລໍ້ລວງພຣະເຢຊູ*

ຫລັງຈາກພຣະເຢຊູຊົງໄດ້ຮັບບັບຕິສະມາແລ້ວ, ພຣະອົງຊົງສະເດັດໄປທີ່ທະເລຊາຍເພື່ອຈະໄດ້ຢູ່ຜູ້ດຽວ ແລະເພື່ອຈະອົດອາຫານແລະອະທິຖານ. ຫລັງຈາກພຣະເຢຊູຊົງໄດ້ອົດອາຫານເປັນເວລາ ໔໐ ວັນ, ຊາຕານໄດ້ລົງມາແລະລໍ້ລວງພຣະອົງ. ຊາຕານຮູ້ວ່າ ຖ້າມັນສາມາດລໍ້ລວງພຣະອົງໃຫ້ກະທຳບາບແມ່ນແຕ່ອັນດຽວ, ພຣະເຢຊູຈະບໍ່ຊົງສາມາດກະທຳສິ່ງອື່ນໆ ຊຶ່ງເປັນສິ່ງທີ່ພຣະອົງ ຖືກສົ່ງລົງມາໃຫ້ກະທຳ. ແລ້ວແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາກໍຈະບໍ່ມີຜົນ.

ພຣະເຢຊູຊົງໄດ້ຕ້ານທານນຳການລໍ້ລວງທັງໝົດຂອງຊາຕານ. ໃນທີ່ສຸດ, ພຣະອົງຊົງບັນຊາໃຫ້ຊາຕານໜີໄປ. ຫລັງຈາກຊາຕານໄດ້ຈາກໄປ, ທູດສວັນໄດ້ລົງມາແລະຢຽມຢາມພຣະເຢຊູ.

*ພຣະເຢຊູຊົງສອນພວກເຮົາໃຫ້ຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະໃຫ້ຮັກເຊິ່ງກັນແລະກັນ*

ຫລັງຈາກພຣະອົງຊົງໄດ້ເອົາຊະນະຊາຕານແລ້ວ, ພຣະເຢຊູຊົງເລີ້ມສອນຜູ້ຄົນ. ເຫດຜົນນຶ່ງທີ່ພຣະອົງ ລົງມາສູ່ແຜ່ນດິນໂລກ ແມ່ນເພື່ອຈະສອນພວກເຮົາໃຫ້ຮູ້ເຖິງວິທີທີ່ພວກເຮົາຄວນດຳລົງຊີວິດ.

ພຣະເຢຊູຊົງສອນວ່າ ພວກເຮົາຄວນຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາດ້ວຍສຸດໃຈ, ດ້ວຍສຸດຈິດ ແລະດ້ວຍສຸດກຳລັງທັງໝົດຂອງພວກເຮົາ. ພຣະອົງຊົງສອນວ່າ ພວກເຮົາຍັງຄວນຮັກຄົນອື່ນໆໃຫ້ຫລາຍ ເທົ່າກັບພວກເຮົາຮັກຕົນເອງ. ພວກເຮົາຄວນໃຫ້ອະພັຍແລະຮັບໃຊ້ຄົນອື່ນ. ພຣະເຢຊູຊົງໄດ້ສະແດງແກ່ພວກເຮົາ

ເຖິງວິທີທີ່ພວກເຮົາສາມາດກະທຳສິ່ງເຫລົ່ານີ້. ພຣະເຢຊູຊົງສະແດງຄວາມຮັກຂອງພຣະອົງ ຕໍ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໂດຍການກະທຳທຸກສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບັນຊາໃຫ້ພຣະອົງເຮັດ.

## *ພຣະເຢຊູຊົງຮັກຄົນທັງໝົດ*

ພຣະເຢຊູຊົງມີຄວາມຮັກຕໍ່ທຸກຄົນ. ພຣະອົງຊົງປິ່ນປົວຄົນເຈັບປ່ວຍ. ພຣະອົງຊົງເຮັດໃຫ້ຄົນຕາບອດເຫັນໄດ້ ແລະຄົນເປັ້ຽຍ່າງໄດ້. ພຣະອົງຊົງຮັບເອົາເດັກນ້ອຍແຕ່ລະຄົນອູ້ມໄວ້ໃນອ້ອມແຂນແລະໃຫ້ພອນພວກເຂົາ.

ພຣະເຢຊູຊົງສະແດງຄວາມຮັກຕໍ່ຄົນທີ່ມີບາບ. ພຣະອົງຊົງສອນພວກເຂົາໃຫ້ສະແດງຄວາມເສັຽໃຈຕໍ່ບາບຂອງພວກເຂົາແລະບໍ່ກະທຳບາບອີກຕໍ່ໄປ. ພຣະເຢຊູຍັງຊົງຮັກຄົນທີ່ໄດ້ປະຫານພຣະອົງ. ພຣະອົງຊົງອະທິຖານຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເພື່ອພວກເຂົາ. ພຣະເຢຊູຊົງສອນວ່າ ພວກເຮົາຄວນຮັກເຊິ່ງກັນແລະກັນ ແບບດຽວກັບທີ່ພຣະອົງຊົງຮັກພວກເຮົາ.

## *ການສົນທະນາ*

- ມີສິ່ງໃດແດ່ທີ່ພວກເຮົາສາມາດເຮັດໄດ້ເພື່ອສະແດງຕໍ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາວ່າ ພວກເຮົາຮັກພຣະອົງ?
- ມີສິ່ງໃດແດ່ທີ່ພວກເຮົາສາມາດເຮັດໄດ້ແກ່ຄົນອື່ນເພື່ອສະແດງວ່າ ພວກເຮົາຮັກພວກເຂົາ?

## *ພຣະເຢຊູຊົງຈັດຕັ້ງສາສນາຈັກຂຶ້ນ*

ພຣະເຢຊູຊົງຕ້ອງການໃຫ້ທຸກຄົນຮູ້ວິທີທີ່ຈະກັບຄືນໄປສູ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ເສັ້ນທາງຂອງພຣະອົງນັ້ນເອີ້ນວ່າ ພຣະກິດຕິຄຸນ. ພຣະເຢຊູຊົງໄດ້ຈັດຕັ້ງສາສນາຈັກຂອງພຣະອົງຂຶ້ນ ເພື່ອວ່າ ຄົນທັງປວງຈະສາມາດຮຳຮຽນພຣະກິດຕິຄຸນ.

ພຣະເຢຊູຊົງເລືອກເອົາຊາຍສິບສອງຄົນ, ເອີ້ນວ່າ ອັຄສາວົກ, ເພື່ອນຳພາສາສນາຈັກ. ອັຄສາວົກຈະສອນພຣະກິດຕິຄຸນໃຫ້ແກ່ຜູ້ຄົນຫລັງຈາກພຣະອົງໄດ້ກັບຄືນສູ່

ສວັນ. ພຣະເຢຊູຊົງໄດ້ມອບອຳນາດໃຫ້ແກ່ອັຄສາວົກສິບສອງເພື່ອຈະເປັນຕົວແທນຂອງພຣະອົງ. ພວກທ່ານສາມາດສອນພຣະກິດຕິຄຸນໃຫ້ແກ່ຄົນທັງປວງແລະໃຫ້ບັບຕິສະມາແກ່ພວກເຂົາ. ພວກທ່ານສາມາດເລືອກເອົາຄົນອື່ນໃຫ້ຊ່ວຍສອນພຣະກິດຕິຄຸນ ແລະເຮັດທຸກສິ່ງທັງຫມົດທີ່ພຣະອົງຊົງຕ້ອງການ.

### *ການສົນທະນາ*

- ເປັນຫຍັງພຣະເຢຊູຈຶ່ງເລືອກເອົາອັຄສາວົກສິບສອງຄົນ?

### ເມື່ອພວກເຮົາຮຽນກ່ຽວກັບພຣະເຢຊູ, ພວກເຮົາເຂົ້າໃຈວ່າ ພຣະອົງຊົງຍິ່ງໃຫຍ່ຂນາດໃດ

ພຣະເຢຊູຊົງຊ່ວຍເຫລືອພວກເຮົາແຕ່ລະຄົນ ໂດຍບອກພວກເຮົາເຖິງວິທີດຳລົງຊີວິດ. ເມື່ອພວກເຮົາຮຽນທີ່ຈະ ເປັນເຫມືອນດັ່ງພຣະອົງ, ພວກເຮົາກໍຮຽນທີ່ຈະເຮັດສິ່ງທີ່ເຮັດໃຫ້ພວກເຮົາມີຄວາມສຸກ. ພວກເຮົາຍັງສາມາດ ຮຽນເຖິງສິ່ງທີ່ຈະຊ່ວຍພວກເຮົາໃຫ້ສາມາດກັບຄືນໄປສວັນເພື່ອຈະດຳລົງຊີວິດນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກ.

ເມື່ອພວກເຮົາຮູ້ວ່າ ພຣະເຢຊູຊົງຮັກພວກເຮົາ, ພວກເຮົາຮູ້ສຶກມີຄວາມສງົບ. ພວກເຮົາມີຄວາມຮູ້ສຶກປອດພັຍ ແລະບໍ່ຢານກົວ. ພວກເຮົາຮູ້ວ່າ ພວກເຮົາສາມາດອາສັຍພຣະອົງໃຫ້ເປັນຜູ້ນຳຂອງພວກເຮົາ. ພວກເຮົາຮູ້ວ່າ ພຣະອົງຊົງເຂົ້າໃຈບັນຫາຂອງພວກເຮົາ. ການສອນຂອງພຣະອົງຊ່ວຍພວກເຮົາທີ່ຈະເອົາຊະນະບັນຫາຂອງພວກເຮົາ. ເມື່ອພວກເຮົາເຂົ້າໃຈທັງຫມົດ ທີ່ພຣະເຢຊູຊົງໄດ້ກະທຳເພື່ອພວກເຮົາ, ຄວາມຮັກທີ່ພວກເຮົາມີຕໍ່ພຣະອົງກໍຈະເພີ້ມຂຶ້ນ. ຄວາມຮັກຂອງພວກເຮົາທີ່ມີຕໍ່ພຣະອົງຈະເຮັດໃຫ້ພວກເຮົາມີຄວາມຕ້ອງການທີ່ຈະເຊື່ອຟັງພຣະອົງ. ພວກເຮົາຕື່ນເຕັ້ນຕໍ່ໂອກາດທີ່ຈະໄດ້ກັບໄປຢູ່ນຳພຣະອົງອີກ.

### *ການສົນທະນາ*

- ການຮຽນກ່ຽວກັບພຣະເຢຊູຈະຊ່ວຍພວກເຮົາແນວໃດ?
- ທ່ານຮູ້ສຶກແນວໃດເມື່ອທ່ານຮຽນຮູ້ກ່ຽວກັບພຣະເຢຊູ?

## *ຂໍ້ອ້າງອີງ*

*ຫລາຍໆຄົນລໍຖ້າດ້ວຍຄວາມປາຖນາອັນຍິ່ງໃຫຍ່ຕໍ່ການສະເດັດມາຂອງ ພຣະເຢຊູຄຣິດ*

- ເອຊາຢາ ໕໓:໓–໗ (ເອຊາຢາບອກກ່ຽວກັບພຣະເຢຊູ.)
- ໂມໄຊຢາ ໓:໕–໗ (ເບັນຈາມິນບອກເຖິງສິ່ງທີ່ພຣະເຢຊູຈະຊົງກະທຳ.)

*ການກຳເນີດຂອງພຣະເຢຊູນຳຄວາມຊື່ນຊົມຍິນດີມາສູ່ແຜ່ນດິນໂລກ*

- ລູກາ ໒; ໓ ນີໄຟ ໑ (ການກຳເນີດຂອງພຣະເຢຊູ.)

*ພຣະເຢຊູຊົງສະເດັດມາເພື່ອສອນພຣະກິດຕິຄຸນຂອງພຣະອົງ*

- ມັດທາຍ ໓:໑໕–໑໗ (ພຣະເຢຊູຊົງຮັບບັບຕິສະມາ.)
- ມັດທາຍ ໔:໑–໑໑ (ຊາຕານລໍ້ລວງພຣະເຢຊູ.)
- ມັດທາຍ ໒໕:໓໕–໔໖; ໂຢຮັນ ໑໕:໑໒ (ພຣະເຢຊູຊົງຕ້ອງການພວກເຮົາໃຫ້ຊ່ວຍເຫລືອເຊິ່ງກັນແລະກັນ.)
- ມັດທາຍ ໑:໓໔; ມັດທາຍ ໑໔:໑໔ (ພຣະເຢຊູຊົງປິ່ນປົວຄົນເຈັບປ່ວຍ.)
- ລູກາ ໒:໔໐ (ພຣະເຢຊູຊົງເຕີບໂຕເປັນຜູ້ມີຄວາມສລາດ, ແມ່ນແຕ່ເວລາພຣະອົງຢູ່ໃນວັຍເດັກ.)
- ລູກາ ໒:໔໖–໔໗ (ພຣະເຢຊູຊົງສອນຄົນທີ່ມີຄວາມຮູ້ສູງໃນພຣະວິຫານ.)
- ໂຢຮັນ ໘:໒໘–໒໙ (ພຣະເຢຊູຊົງກະທຳສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ ພຣະອົງກະທຳ.)

*ເມື່ອພວກເຮົາຮຽນກ່ຽວກັບພຣະເຢຊູ, ພວກເຮົາເຂົ້າໃຈວ່າ ພຣະອົງຊົງຍິ່ງໃຫຍ່ຂນາດໃດ*

- ມັດທາຍ, ມາຣະໂກ, ລູກາ, ໂຢຮັນ (ຊີວິດແລະການສອນຂອງພຣະເຢຊູ.)



*ໃນສວນເກັດເຊມາເນ, ພຣະເຢຊູຊົງຮັບເອົາບາບຂອງມະນຸດທັງປວງ.*

# ການຊົດໃຊ້ຂອງພຣະເຢຊູຄຣິສ

*ບົດທີ ໑໘*

---

*ພຣະເຢຊູຊົງທໍຣະມານຢ່າງໃຫຍ່ຫລວງເພາະບາບຂອງພວກເຮົາ. ເປັນຫຍັງພຣະອົງຈຶ່ງຊົງເລືອກສິ້ນພຣະຊົນເພື່ອພວກເຮົາ?*

**ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສົ່ງພຣະເຢຊູຄຣິສມາສູ່ໂລກ ເພື່ອຈະໄດ້ເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ**

ເພື່ອຈະກາຍເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຫລາຍຂຶ້ນ, ພວກເຮົາຈຳເປັນຕ້ອງມີຮ່າງກາຍ ທີ່ມີເນື້ອຫນັງ ແລະກະດູກ. ແຕ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮູ້ວ່າ ພວກເຮົາທຸກຄົນ ຈະປະສົບຄວາມຕາຍ ແລະຈະສູນເສັຽຮ່າງກາຍຂອງພວກເຮົາ ເພາະອາດາມແລະເອວາບໍ່ເຊື່ອຟັງ ພຣະບິດາຜູ້ສະຖິດໃນສວັນ ໂດຍການກິນຫມາກໄມ້ ຊຶ່ງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຊົງຫ້າມບໍ່ໃຫ້ກິນ. ອາດາມແລະເອວາໄດ້ປະສົບກັບຄວາມຕາຍ. ຜົນໄດ້ຮັບກໍຄືທຸກໆຄົນທີ່ເກີດ ຫລັງຈາກອາດາມແລະເອວາ ກໍຈະປະສົບກັບຄວາມຕາຍຄືກັນ. ພຣະບິດາຜູ້ສະຖິດໃນສວັນຂອງ ພວກເຮົາຍັງຊົງຮູ້ວ່າ ພວກເຮົາທຸກຄົນຈະກະທຳບາບໃນຂະນະທີ່ພວກເຮົາຢູ່ໃນໂລກນີ້ ແລະຍ້ອນບາບຂອງພວກເຮົາ ພວກເຮົາຈະບໍ່ສາມາດກັບຄືນໄປຢູ່ນຳພຣະອົງອີກ. ພວກເຮົາຈຳຕ້ອງໄດ້ຮັບການຊ່ວຍເຫລືອທີ່ຈະໃຊ້ຄ່າບາບຂອງພວກເຮົາແລະໃຫ້ໂອກາດພວກເຮົາໄດ້ເຊື່ອຟັງພຣະອົງ ເພື່ອວ່າພວກເຮົາຈະສາມາດກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພວກເຮົາຍັງ ຕ້ອງການຄວາມຊ່ວຍເຫລືອທີ່ຈະຮັບເອົາຮ່າງກາຍທີ່ມີເນື້ອຫນັງແລະກະດູກ ຫລັງຈາກຄວາມຕາຍ ພຣະເຢຊູຊົງຕັສວ່າ ພຣະອົງຈະຊົງຊ່ວຍພວກເຮົາ. ພຣະອົງຈະຊົງເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ.

---



ພຣະເຢຊູຊົງສິ້ນພຣະຊົນເທິງໄມ້ກາງແຂນ ເພື່ອບາບຂອງມະນຸດທັງຫມົດ.

ພວກເຮົາຈຳເປັນຕ້ອງມີຜູ້ໃດຜູ້ນຶ່ງທີ່ບໍ່ມີບາບ ເພື່ອຈະຊົດໃຊ້ຄ່າບາບຂອງພວກເຮົາ. ພຣະເຢຊູຊົງເປັນ ຜູ້ດຽວເທົ່ານັ້ນທີ່ສາມາດກະທຳສິ່ງນີ້ໄດ້. ເພາະພຣະອົງບໍ່ຊົງມີບາບໃດໆເລີຍ. ພຣະອົງຊົງມີອຳນາດເໜືອຄວາມຕາຍ, ສະນັ້ນ ພຣະອົງຈຶ່ງຊົງສາມາດຊ່ວຍພວກເຮົາໃຫ້ມີຮ່າງກາຍອີກ ຫລັງຈາກພວກເຮົາຕາຍ. ພຣະອົງຊົງຮັກພວກເຮົາຫລາຍທີ່ສຸດ. ພຣະອົງຊົງເຕັມໃຈທີ່ຈະທໍຣະມານ ເພື່ອບາບຂອງພວກເຮົາ ເພື່ອວ່າພວກເຮົາຈະສາມາດບໍຣິສຸດຈາກບາບນັ້ນ. ພຣະອົງຊົງເຕັມໃຈທີ່ຈະສິ້ນພຣະຊົນເພື່ອພວກເຮົາ ເພື່ອວ່າພວກເຮົາຈະສາມາດກັບຄືນສູ່ຊີວິດຫລັງຈາກຄວາມຕາຍ. ການເສັຽສະລະຂອງພຣະເຢຊູເພື່ອພວກເຮົາເອີ້ນວ່າ ການຊົດໃຊ້.

### *ການສົນທະນາ*

- ເປັນຫຍັງມັນຈຶ່ງຈຳເປັນສຳລັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ທີ່ຈະສົ່ງພຣະເຢຊູມາສູ່ໂລກນີ້?

## ການທໍຣະມານຂອງພຣະເຢຊູຊົງສະແດງເຖິງ ພຣະອົງແລະພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຊົງຮັກພວກເຮົາຫລາຍຂນາດໃດ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກພວກເຮົາຫລາຍທີ່ສຸດ ຈົນພຣະອົງຊົງໄດ້ສົ່ງພຣະບຸດຂອງພຣະອົງ, ພຣະເຢຊູ, ລົງມາສູ່ໂລກ ແລະຊົງປ່ອຍໃຫ້ພຣະອົງທໍຣະມານ ແລະສິ້ນພຣະຊົນເພື່ອພວກເຮົາ. ພຣະເຢຊູຊົງຮັກພວກເຮົາຫລາຍທີ່ສຸດ ຈົນພຣະອົງຊົງໄດ້ທໍຣະມານກັບຄວາມເຈັບປວດຢ່າງໜັກ ແລະຊົງສິ້ນພຣະຊົນເພື່ອພວກເຮົາ. ພຣະເຢຊູຊົງຮູ້ວ່າ ການທໍຣະມານຈະເປັນສິ່ງສາຫັດ. ມັນເກືອບເກີນກວ່າທີ່ພຣະອົງຈະທົນໄດ້ ແຕ່ພຣະອົງຊົງຕ້ອງການໃຫ້ພວກເຮົາມີໂອກາດທີ່ຈະກາຍເປັນເໝືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ພຣະເຢຊູຊົງໄປບ່ອນນຶ່ງເອີ້ນວ່າ ສວນເກັດເຊມາເນ. ໃນທີ່ນັ້ນ, ພຣະອົງຊົງຄຸເຂົ່າລົງ ແລະອະທິຖານ ຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ເພື່ອທູນຂໍຄວາມຊ່ວຍເຫລືອ. ພຣະອົງຊົງອ້ອນວອນນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ວ່າຖ້າເປັນໄປໄດ້, ຂໍໃຫ້ພຣະອົງຢ່າໄດ້ທໍຣະມານ, ແຕ່ພຣະອົງຊົງໄດ້ຕັສວ່າ ພຣະອົງຈະຊົງກະທຳຕາມພຣະປະສົງຂອງພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາ. ພຣະເຢຊູບໍ່ໄດ້ຖືກບັງຄັບໃຫ້ທໍຣະມານ. ພຣະອົງຊົງເລືອກທີ່ຈະທໍຣະມານ

ເພາະມັນເປັນສ່ວນນຶ່ງຂອງແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ເພື່ອວ່າພວກເຮົາຈະຖືກຊໍາຣະລ້າງຈາກບາບຂອງພວກເຮົາ.

ໃນສວນເກັດເຊມາເນ, ພຣະເຢຊູຊົງໄດ້ທໍຣະມານສໍາລັບບາບຂອງມະນຸດທັງປວງ, ແບບດຽວກັບວ່າ ມັນເປັນຂອງພຣະອົງເອງ. ການທໍຣະມານຂອງພຣະອົງເພື່ອບາບທັງຫມົດນີ້ ເປັນສິ່ງຍິ່ງໃຫຍ່ກວ່າ ພວກເຮົາຈະສາມາດເຂົ້າໃຈໄດ້. ຄວາມເຈັບປວດສາຫັດທີ່ສຸດຈົນຕົວຂອງພຣະອົງສັ່ນ. ໂລຫິດຂອງພຣະອົງໄດ້ໄຫລອອກທົ່ວພຣະກາຍຂອງພຣະອົງ.

ຫລັງຈາກນັ້ນ, ຄົນຊົ່ວໄດ້ມາແລະນໍາເອົາຕົວຂອງພຣະອົງໄປຫາຜູ້ປົກຄອງຂອງເຢຣູຊາເລັມ. ໃນທີ່ນີ້ ພວກເຂົາໄດ້ຖົ່ມນໍ້າລາຍ ແລະໄດ້ຂ້ຽນຕີພຣະອົງ. ພວກເຂົາເອົາຫນາມມາເຮັດມົງກຸດ ແລ້ວສຸບໃສ່ຫົວ ຂອງພຣະອົງ. ພວກເຂົາຫົວເຢາະເຢີ້ຍພຣະອົງ.

ຜູ້ປົກຄອງໄດ້ສັ່ງທະຫານໃຫ້ຄຶງພຣະເຢຊູ. ພວກເຂົາບັງຄັບພຣະອົງໃຫ້ແບກໄມ້ກາງແຂນອັນຫນັກ ໄປຫາບ່ອນທີ່ພຣະອົງຈະຖືກປະຫານ; ພວກເຂົາໄດ້ຄຶງພຣະອົງໄວ້ເທິງໄມ້ກາງແຂນ ໂດຍຕອກຕະປູໃສ່ຝາພຣະຫັດ ແລະພຣະບາດຂອງພຣະອົງ. ເທິງໄມ້ກາງແຂນ, ພຣະອົງຊົງໄດ້ທໍຣະມານ ເພື່ອຊົດໃຊ້ການບໍ່ເຊື່ອຟັງຂອງອາດາມ ແລະເພື່ອບາບຂອງພວກເຮົາທຸກຄົນ.

ພວກເຂົາປ່ອຍພຣະອົງໄວ້ເທິງໄມ້ກາງແຂນເປັນເວລາຫລາຍຊົ່ວໂມງ. ເຖິງແມ່ນວ່າພຣະອົງຊົງກໍາລັງ ທໍຣະມານ, ແລະບາງຄົນກໍຍັງຫົວເຢາະເຢີ້ຍພຣະອົງຢູ່, ແຕ່ພຣະອົງກໍຊົງຢູ່ໃນຄວາມງຽບ ແລະຄວາມອົດທົນ. ໃນທີ່ສຸດ ພຣະອົງຊົງບອກກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາວ່າ ພຣະອົງກໍາລັງຈະສົ່ງພຣະວິນຍານຄືນສູ່ພຣະອົງ ແລະພຣະອົງກໍໄດ້ສິ້ນພຣະຊົນໄປ.

ພຣະເຢຊູຊົງມີອໍານາດທີ່ຈະເຮັດໃຫ້ຕົວພຣະອົງລອດຈາກຄວາມຕາຍໄດ້. ພຣະອົງຊົງສາມາດມີຊີວິດຢູ່ຕໍ່ໄປ ແຕ່ພຣະອົງຊົງເລືອກທີ່ຈະສິ້ນພຣະຊົນ ເພື່ອວ່າພວກເຮົາຈະສາມາດກັບຄືນໄປຢູ່ນໍາພຣະບິດາຜູ້ສະຖິດ ໃນສວັນຂອງພວກເຮົາອີກ.

ເມື່ອພຣະເຢຊູຊົງສິ້ນພຣະຊົນ, ພຣະວິນຍານຂອງພຣະອົງໄດ້ອອກຈາກພຣະກາຍຂອງພຣະອົງໄປ. ໃນມື້ທີສາມຫລັງຈາກພຣະອົງຊົງໄດ້ສິ້ນພຣະຊົນ, ພຣະວິນຍານຂອງພຣະອົງຊົງກັບຄືນເຂົ້າສູ່ພຣະກາຍ ຂອງພຣະອົງແລະພຣະອົງຊົງມີຊີວິດອີກຕໍ່ໄປ. ການກັບມາຂອງພຣະວິນຍານສູ່ພຣະກາຍຂອງພຣະອົງນັ້ນເອີ້ນວ່າ ການຟື້ນຄືນພຣະຊົນ.

ພຣະເຢຊູຊົງມາປາກົດຕໍ່ອັຄສາວົກຂອງພຣະອົງ ແລະຕໍ່ຄົນອື່ນໆຫລັງຈາກພຣະອົງຊົງຟື້ນຄືນພຣະຊົນແລ້ວ. ພຣະອົງຊົງສະແດງຮອຍຕະປູໃນຝາພຣະຫັດແລະພຣະບາດຂອງພຣະອົງແກ່ອັຄສາວົກຂອງພຣະອົງ. ພວກເຂົາລູບບາຍຮອຍຕະປູນັ້ນ ແລະຮູ້ວ່າພຣະອົງຊົງແມ່ນຜູ້ນໍາຂອງພວກເຂົາ ແລະໄດ້ກັບຄືນມີຊີວິດອີກ. ພຣະອົງຊົງໄດ້ສົນທະນາແລະສເວີຍອາຫານນໍາພວກເຂົາ.

*ການສົນທະນາ*

- ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສະແດງຄວາມຮັກຂອງພຣະອົງຕໍ່ພວກເຮົາແນວໃດ?
- ພຣະເຢຊູຊົງສະແດງຄວາມຮັກຂອງພຣະອົງຕໍ່ພວກເຮົາແນວໃດ?

## ພຣະເຢຊູຊົງເຮັດໃຫ້ເປັນໄປໄດ້ສໍາລັບພວກເຮົາທີ່ຈະພົ້ນຈາກບາບ

ມີແຕ່ພຣະເຢຊູເທົ່ານັ້ນທີ່ສາມາດຊົດໃຊ້ເພື່ອບາບຂອງພວກເຮົາ. ພວກເຮົາຄວນຖືການທໍຣະມານຂອງພຣະອົງ ເປັນຜົນປໂຍດແກ່ພວກເຮົາ ໂດຍເຊື່ອວ່າ ພຣະອົງຊົງພຣະຊົນຢູ່ ແລະໂດຍການຮັກສາພຣະບັນຍັດ ຂອງພຣະອົງ. ພວກເຮົາຈໍາຕ້ອງມີຄວາມເສົ້າເສັຽໃຈຕໍ່ບາບຂອງພວກເຮົາ. ພວກເຮົາບໍ່ຕ້ອງ ກະທໍາບາບນັ້ນອີກຕໍ່ໄປ. ພວກເຮົາຕ້ອງຕິດຕາມຄໍາສອນຂອງພຣະເຢຊູຄຣິສ. ແລ້ວພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈຶ່ງຈະອະພັຍບາບໃຫ້ພວກເຮົາ.

*ການສົນທະນາ*

- ເປັນຫຍັງທ່ານຈຶ່ງຕ້ອງການຄວາມຊ່ວຍເຫລືອຂອງພຣະຄຣິສ ເພື່ອຈະເອົາຊະນະບາບຂອງທ່ານ?
- ທ່ານຈໍາເປັນຕ້ອງເຮັດແນວໃດ ເພື່ອວ່າ ການຊົດໃຊ້ຂອງພຣະເຢຊູຈຶ່ງຈະສາມາດຊົດໃຊ້ບາບຂອງທ່ານໄດ້?

## ພຣະເຢຊູຊົງເຮັດໃຫ້ເປັນໄປໄດ້ສຳລັບພວກເຮົາທຸກຄົນທີ່ຈະໄດ້ຮັບຮ່າງກາຍຂອງພວກເຮົາຄືນ

ພຣະເຢຊູຊົງເຕັມໃຈສິ້ນພຣະຊົນແລະເປັນຜູ້ທຳອິດທີ່ໄດ້ຟື້ນຄືນພຣະຊົນ. ພຣະອົງຊົງເປັນຜູ້ດຽວທີ່ມີ ອຳນາດຟື້ນຄືນພຣະຊົນເອງ. ພຣະອົງຊົງເຮັດໃຫ້ເປັນໄປໄດ້ສຳລັບພວກເຮົາທີ່ຈະຟື້ນຄືນຊີວິດ.

ເຖິງແມ່ນວ່າ ພວກເຮົາຈະປະສົບຄວາມຕາຍ, ພວກເຮົາຈະມີຊີວິດອີກ. ເມື່ອພວກເຮົາຕາຍໄປ, ວິນຍານຂອງພວກເຮົາຈະອອກຈາກຮ່າງກາຍຂອງພວກເຮົາ. ແຕ່ຍ້ອນພຣະເຢຊູຊົງເອົາຊະນະຄວາມຕາຍ, ວິນຍານແລະຮ່າງກາຍຂອງພວກເຮົາຈະກັບຄືນຫາກັນອີກຊົ່ວນິຣັນດອນ. ພວກເຮົາຈະບໍ່ຕາຍອີກຕໍ່ໄປ. ນີ້ເປັນຂອງປະທານທີ່ພຣະເຢຊູຊົງມອບໃຫ້ທຸກໆຄົນຢູ່ໃນໂລກນີ້.

### *ການສົນທະນາ*

- ພຣະເຢຊູຊົງເຮັດໃຫ້ເປັນໄປໄດ້ສຳລັບພວກເຮົາຈະໄດ້ຮັບຮ່າງກາຍອີກແນວໃດ?
- ແມ່ນໃຜຈະຟື້ນຄືນຊີວິດອີກ?

### *ຂໍ້ອ້າງອີງ*

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຊົງສົ່ງພຣະເຢຊູຄຣິສມາສູ່ໂລກ ເພື່ອຈະເປັນພຣະຜູ້ຊ່ວຍໃຫ້ລອດ ຂອງພວກເຮົາ*

- ມັດທາຍ ໑໗:໒໑ (ພຣະເຢຊູຊົງບອກອັຄສາວົກຂອງພຣະອົງວ່າ ພຣະອົງຈະສິ້ນພຣະຊົນ ແລະຈະຟື້ນຄືນພຣະຊົນ.)
- ແອລມາ ૩໔:໘–໑໗ (ມີແຕ່ພຣະເຢຊູອົງດຽວເທົ່ານັ້ນທີ່ຈະຊົດໃຊ້ຄ່າບາບຂອງພວກເຮົາໄດ້.)

*ການທໍຣະມານຂອງພຣະເຢຊູສະແດງຕໍ່ພວກເຮົາວ່າ ພຣະອົງແລະພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາຊົງຮັກພວກເຮົາຫລາຍປານໃດ*

- ລູກາ ໒໒:૩໘–໔໗ (ເຫດການຂອງພຣະເຢຊູໃນສວນເກັດເຊມາເນ.)
- ໂຢຮັນ ૩:໑໗ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກພວກເຮົາຫລາຍທີ່ສຸດ ຈົນພຣະອົງຊົງໄດ້ສົ່ງ ພຣະບຸດຂອງພຣະອົງໃຫ້ມາຊ່ວຍພວກເຮົາ.)

*ພຣະເຢຊູຊົງເຮັດໃຫ້ເປັນໄປໄດ້ສຳລັບພວກເຮົາທີ່ຈະພົ້ນຈາກບາບ*

- ໂຣມ ໕:໑໘–໑໗ (ພວກເຮົາໄດ້ຮັບຂອງປະທານແຫ່ງການຟື້ນຄືນຊີວິດໂດຍຜ່ານການກະທຳຂອງພຣະເຢຊູ.)
- ໑ ໂກຣິນໂທ ໑໕:໒໑–໒໒ (ຄວາມຕາຍມາເຖິງເພາະອາດາມ, ການຟື້ນຄືນຊີວິດມາເຖິງ ເພາະພຣະເຢຊູ.)
- ໑ ເປໂຕ ໑:໑໙–໒໐ (ພວກເຮົາລອດໂດຍການຫລັ່ງໂລຫິດຂອງພຣະເຢຊູ.)
- ໑ ໂຢຮັນ ໑:໗ (ພຣະເຢຊູຊົງເຮັດໃຫ້ເປັນໄປໄດ້ສຳລັບພວກເຮົາທີ່ຈະພົ້ນຈາກບາບທັງຫມົດ.)
- ໒ ນີໄຟ ໙:໒໑–໒໒ (ການທໍຣະມານຂອງພຣະເຢຊູຈະເຮັດໃຫ້ພວກເຮົາລອດຖ້າພວກເຮົາເຊື່ອຟັງພຣະບັນຍັດຂອງພຣະອົງ.)
- ຮີລາມັນ ໑໔:໑໕–໑໙ (ພຣະເຢຊູຈະສິ້ນພຣະຊົນສຳລັບພວກເຮົາ ເພື່ອພວກເຮົາຈະມີຊີວິດອີກ.)
- ມໍມອນ ໙:໑໒–໑໔ (ການຟື້ນຄືນຊີວິດເຮັດໃຫ້ພວກເຮົາເອົາຊະນະຄວາມຕາຍ.)

*ພຣະເຢຊູຊົງເຮັດໃຫ້ເປັນໄປໄດ້ສຳລັບພວກເຮົາທຸກຄົນທີ່ຈະຮັບຮ່າງກາຍຂອງພວກເຮົາອີກ*

- ໂຢຮັນ ໕:໒໙–໒໙ (ພວກເຮົາທຸກຄົນຈະຟື້ນຄືນຊີວິດ.)
- ແອລມາ ໑໑:໔໐–໔໕ (ຮ່າງກາຍຈະກັບຄືນສູ່ສະພາບສົມບູນແບບເດີມ.)

# ພຣະກິດຕິຄຸນຂອງ
# ພຣະເຢຊູຄຣິສ

*ພາກຫ້າ*





*ກ່ອນທີ່ຈະກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້,*
*ພວກເຮົາຈຳຕ້ອງມີສັດທາໃນພຣະເຢຊູຄຣິສເສັຽກ່ອນ.*

# ສັດທາໃນພຣະເຢຊູຄຣິສ

*ບົດທີ ໑໘*

---

*ພວກເຮົາເຊື່ອໃນພຣະເຢຊູຄຣິສໄດ້ແນວໃດ ເຖິງແມ່ນວ່າ ພວກເຮົາບໍ່ເຄີຍເຫັນພຣະອົງມາກ່ອນ ຈົນເຖິງປັດຈຸບັນ?*

## ພວກເຮົາສາມາດເຊື່ອໃນພຣະເຢຊູຄຣິສແລະໝັ້ນໃຈໃນພຣະອົງໄດ້

ການມີສັດທາ ໝາຍຄວາມວ່າ ພວກເຮົາເຊື່ອໃນຜູ້ໃດຜູ້ນຶ່ງ ຫລືສິ່ງໃດສິ່ງນຶ່ງ ທີ່ພວກເຮົາບໍ່ເຄີຍເຫັນ ແລະພວກເຮົາກະທຳຕາມຄວາມເຊື່ອນັ້ນ. ຕົວຢ່າງເຊັ່ນ, ຊາວສວນມີສັດທາວ່າ ຕົ້ນໄມ້ຈະເຕີບໂຕໃຫຍ່ຂຶ້ນ ຖ້າລາວປູກເມັດພືດແລະດູແລມັນ. ສະນັ້ນ ຊາວສວນຜູ້ນັ້ນປູກເມັດພືດ ແລະຫົດນ້ຳມັນ ແລະດູແລມັນ. ເມື່ອລາວກະທຳເຊັ່ນນັ້ນ, ເມັດພືດຈະໃຫຍ່ເປັນຕົ້ນໄມ້ ແລະເປັນອາຫານແກ່ຊາວສວນຄົນນັ້ນ.

ການມີສັດທາໃນພຣະເຢຊູໝາຍຄວາມວ່າ ພວກເຮົາເຊື່ອວ່າ ພຣະເຢຊູຊົງພຣະຊົນຢູ່ ແລະພວກເຮົາເຊື່ອຟັງພຣະອົງ, ເຖິງແມ່ນວ່າພວກເຮົາບໍ່ສາມາດເຫັນພຣະອົງກໍຕາມ. ສິ່ງຕໍ່ໄປນີ້ ເປັນບາງສິ່ງທີ່ພວກເຮົາເຊື່ອກ່ຽວກັບພຣະເຢຊູ ເມື່ອພວກເຮົາມີສັດທາໃນພຣະອົງ.

໑. ພວກເຮົາເຊື່ອວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງເລືອກພຣະເຢຊູໃຫ້ຊ່ວຍເຫລືອພວກເຮົາ ທີ່ຈະຕິດຕາມແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.
໒. ພວກເຮົາເຊື່ອວ່າ ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ.
໓. ພວກເຮົາເຊື່ອວ່າ ພຣະອົງຊົງໄດ້ກຳເນີດໃນໂລກນີ້ໃນຖານະທີ່ເປັນພຣະບຸດຂອງພຣະບິດາເທິງສວັນຂອງພວກເຮົາ.

໔. ພວກເຮົາເຊື່ອວ່າ ພຣະອົງຊົງສະເດັດມາສູ່ໂລກນີ້ ເພື່ອສອນພວກເຮົາເຖິງວິທີທີ່ຈະກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.
໕. ພວກເຮົາເຊື່ອວ່າ ພຣະອົງຊົງຮັກພວກເຮົາ.
໖. ພວກເຮົາເຊື່ອວ່າ ພຣະອົງຊົງທໍຣະມານເພື່ອບາບຂອງພວກເຮົາ ເພື່ອວ່າ ພວກເຮົາຈະສາມາດກັບໃຈ ແລະຈະບໍ່ຖືກລົງໂທດເພາະບາບນັ້ນ.
໗. ພວກເຮົາເຊື່ອວ່າ ພຣະອົງຊົງສິ້ນພຣະຊົນ ແລະຊົງໄດ້ຟື້ນຄືນພຣະຊົນ.
໘. ພວກເຮົາເຊື່ອວ່າ ການສອນຂອງພຣະອົງເປັນຄວາມຈິງ.
໙. ພວກເຮົາເຊື່ອວ່າ ຖ້າພວກເຮົາເຊື່ອພຣະເຢຊູ ພວກເຮົາຈະສາມາດກັບຄືນໄປຢູ່ກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກ.

ການມີສັດທາໃນພຣະເຢຊູຄຣິສເປັນສິ່ງສຳຄັນຕໍ່ການກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ເມື່ອພວກເຮົາມີສັດທາໃນພຣະອົງ, ພວກເຮົາໝັ້ນໃຈໃນພຣະອົງ ແລະຕ້ອງການທີ່ຈະຮຽນກ່ຽວກັບພຣະອົງ. ພຣະເຢຊູຊົງເປັນຜູ້ດຽວເທົ່ານັ້ນທີ່ສາມາດ ນຳພວກເຮົາກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພຽງແຕ່ຄົນທີ່ເຊື່ອແລະເຊື່ອຟັງໃນພຣະເຢຊູເທົ່ານັ້ນຈະສາມາດກັບຄືນໄປຢູ່ກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

### *ການສົນທະນາ*

- ສັດທາແມ່ນຫຍັງ?
- ສັດທາໃນພຣະເຢຊູໝາຍຄວາມວ່າແນວໃດ?
- ມີສິ່ງໃດແດ່ທີ່ພວກເຮົາເຊື່ອໃນພຣະເຢຊູ?
- ເປັນຫຍັງພວກເຮົາຈຳເປັນຕ້ອງມີສັດທາໃນພຣະເຢຊູຄຣິສ?

## ພຣະເຢຊູຊົງໃຫ້ວິທີແກ່ພວກເຮົາເພື່ອຈະພັດທະນາສັດທາໃນພຣະອົງ

ພຣະເຢຊູຊົງສອນພວກເຮົາເຖິງວິທີທີ່ພວກເຮົາຈະສາມາດຮຽນຮູ້ກ່ຽວກັບພຣະອົງແລະມີສັດທາໃນພຣະອົງ. ພຣະອົງຊົງບັນຊາພວກເຮົາໃຫ້ອ່ານພຣະຄັມພີແລະຮຽນເຖິງການຂຽນທີ່ສາສດາໄດ້ຂຽນໄວ້ກ່ຽວກັບພຣະອົງ. ພຣະອົງຊົງຂໍໃຫ້ພວກເຮົາຟັງສາສດາທີ່ມີຊີວິດຢູ່ໃນປັດຈຸບັນ. ເມື່ອພວກເຮົາກະທຳສິ່ງເຫລົ່ານີ້ ພວກເຮົາຮຽນຮູ້ກ່ຽວກັບພຣະເຢຊູຫລາຍຂຶ້ນ.

ເມື່ອພວກເຮົາຮຽນກ່ຽວກັບພຣະເຢຊູ, ພວກເຮົາຄວນອະທິຖານ. ພວກເຮົາຄວນທູນຂໍໃຫ້ພຣະບິດາຜູ້ສະຖິດໃນສະວັນຂອງພວກເຮົາໃຫ້ຊ່ວຍເຫລືອພວກເຮົາເພື່ອຈະໄດ້ເຂົ້າໃຈເຖິງສິ່ງທີ່ພວກເຮົາອ່ານ ແລະໄດ້ຍິນກ່ຽວກັບພຣະເຢຊູ. ພຣະບິດາຜູ້ສະຖິດໃນສະວັນຂອງພວກເຮົາຈະຊົງສົ່ງພຣະວິນຍານບໍຣິສຸດ ໃຫ້ມາຊ່ວຍພວກເຮົາໃຫ້ເຂົ້າໃຈສິ່ງທີ່ພວກເຮົາກໍາລັງຮຽນ. ພຣະວິນຍານບໍຣິສຸດຈະບອກພວກເຮົາວ່າພຣະເຢຊູຊົງເປັນພຣະບຸດຂອງພຣະບິດາຜູ້ສະຖິດໃນສະວັນຂອງພວກເຮົາ, ວ່າພຣະອົງຊົງເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ ແລະວ່າຄໍາສອນຂອງພຣະອົງເປັນຄວາມຈິງ.

ສາສດາຄົນນຶ່ງຊື່ ແອລມາກ່າວວ່າ ຖ້າພວກເຮົາຕ້ອງການທີ່ຈະຮູ້ວ່າ ສິ່ງໃດສິ່ງນຶ່ງເປັນຄວາມຈິງ, ພວກເຮົາຄວນທົດສອບມັນ. ທ່ານທຽບສິ່ງນີ້ ໃສ່ກັບການປູກເມັດພືດ. ຖ້າພວກເຮົາປູກເມັດພືດທີ່ດີ ແລະດູແລມັນ, ມັນຈະເຕີບໂຕຂຶ້ນ ແລະພວກເຮົາຈະຮູ້ວ່າ ມັນເປັນເມັດພືດດີ. ຖ້າເມັດພືດນັ້ນບໍ່ເຕີບໂຕ, ພວກເຮົາກໍຈະຮູ້ວ່າ ມັນເປັນເມັດພືດບໍ່ດີ. ຖ້າພວກເຮົາຕ້ອງການຢາກຮູ້ວ່າ ການສອນຂອງພຣະເຢຊູເປັນຄວາມຈິງຫລືບໍ່, ພວກເຮົາຄວນສຶກສາແລະເຊື່ອຟັງມັນ.

ສັດທາໃນພຣະເຢຊູມີຄວາມຫມາຍຫລາຍກວ່າການເວົ້າວ່າ ພວກເຮົາເຊື່ອໃນພຣະອົງ. ມັນຫມາຍເຖິງຄວາມຫມັ້ນໃຈໃນພຣະອົງຢ່າງເຂັ້ມແຂງຈົນພວກເຮົາຢາກເຊື່ອຟັງພຣະອົງ ບໍ່ວ່າພຣະອົງຈະຊົງບັນຊາໃຫ້ພວກເຮົາເຮັດສິ່ງໃດກໍຕາມ. ມີແຕ່ຄົນທີ່ເຊື່ອຟັງພຣະເຢຊູຢ່າງແທ້ຈິງເທົ່ານັ້ນ ຈະສາມາດມີສັດທາໃນພຣະອົງ. ເມື່ອພວກເຮົາເຊື່ອຟັງພຣະອົງ, ສັດທາຂອງພວກເຮົາໃນພຣະອົງຈະເຂັ້ມແຂງຂຶ້ນ. ພວກເຮົາຮຽນຮູ້ວ່າ ການສອນຂອງພຣະອົງມາຈາກພຣະບິດາຜູ້ສະຖິດໃນສະວັນຂອງພວກເຮົາ ແລະບໍ່ແມ່ນມາຈາກມະນຸດ.

ຖ້າຫາກພວກເຮົາບໍ່ເຊື່ອຟັງພຣະເຢຊູ, ສັດທາຂອງພວກເຮົາຈະອ່ອນແອລົງ. ເມື່ອພວກເຮົາເຮັດສິ່ງທີ່ພຣະອົງຊົງບັນຊາໃຫ້ພວກເຮົາເຮັດ, ສັດທາຂອງພວກເຮົາຈະເຂັ້ມແຂງຂຶ້ນ. ສັດທາຂອງພວກເຮົາຈະເຕີບໂຕຂຶ້ນເລື້ອຍໆ ຈົນກວ່າພວກເຮົາຈະມີຄວາມຮູ້ຢ່າງແນ່ນອນວ່າ ພຣະອົງຊົງພຣະຊົນຢູ່, ຄືກັບວ່າ ພວກເຮົາສາມາດເຫັນພຣະອົງດ້ວຍຕາຂອງພວກເຮົາເອງ.

## *ການສົນທະນາ*

- ພວກເຮົາສາມາດມີສັດທາໃນພຣະເຢຊູໄດ້ແນວໃດ ເຖິງແມ່ນວ່າພວກເຮົາບໍ່ສາມາດເຫັນພຣະອົງ?
- ເປັນຫຍັງພວກເຮົາຈຳຕ້ອງເຊື່ອຟັງພຣະເຢຊູເພື່ອຈະມີສັດທາໃນພຣະອົງ?

## ພວກເຮົາສາມາດຮັບຄວາມຮູ້ທີ່ຍິ່ງໃຫຍ່ ແລະມີອຳນາດເມື່ອພວກເຮົາມີສັດທາໃນພຣະເຢຊູ

ສາສດາທີ່ພວກເຮົາອ່ານເຖິງໃນພຣະຄຳພີມີສັດທາອັນຍິ່ງໃຫຍ່ໃນພຣະເຢຊູ. ສັດທານີ້ ໃຫ້ອຳນາດແກ່ພວກເພິ່ນເພື່ອຊ່ວຍເຫລືອຜູ້ຄົນຂອງພວກເພິ່ນ. ເພາະພວກເພິ່ນມີສັດທາໃນພຣະເຢຊູ, ພວກເພິ່ນຈຶ່ງມີອຳນາດທີ່ຈະເຮັດສິ່ງທີ່ພວກເພິ່ນບໍ່ສາມາດເຮັດໂດຍຕົນເອງໄດ້.

ກ່ອນພຣະເຢຊູຊົງໄດ້ມາກຳເນີດໃນໂລກ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບັນຊາພຣະອົງໃຫ້ບອກສາສດາທີ່ມີຊື່ວ່າ ໂນອາໃຫ້ສ້າງເຮືອ ເພາະພຣະບິດາຜູ້ສະຖິດໃນສວັນຂອງ ພວກເຮົາຈະສົ່ງນ້ຳມາຖ້ວມໂລກ ຖ້າຄົນຊົ່ວຮ້າຍໃນເວລາຂອງໂນອາບໍ່ກັບໃຈ. ຜູ້ຄົນບໍ່ໄດ້ກັບໃຈ. ໂນອາເຊື່ອໃນພຣະເຢຊູແລະໄດ້ສ້າງເຮືອ. ເມື່ອນ້ຳມາຖ້ວມ, ຜູ້ຄົນທັງຫມົດທີ່ບໍ່ໄດ້ກັບໃຈຖືກຂ້າ, ແຕ່ໂນອາແລະຄອບຄົວຂອງທ່ານໄດ້ຮັບຄວາມປອດພັຍຢູ່ໃນເຮືອ ເພາະພວກເຂົາໄດ້ເຊື່ອໃນພຣະເຢຊູ ແລະໄດ້ເຮັດຕາມສິ່ງທີ່ພຣະອົງຊົງໄດ້ບັນຊາ.

ໂມເຊເປັນສາສດາຜູ້ທີ່ໄດ້ນຳຜູ້ຄົນຂອງທ່ານອອກຈາກການເປັນຂ້າທາດ. ພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາຊົງສົ່ງພຣະເຢຊູມາຊ່ວຍເຫລືອໂມເຊ ເພາະໂມເຊເຊື່ອໃນພຣະເຢຊູ ແລະເຮັດຕາມສິ່ງທີ່ພຣະເຢຊູຊົງ ບັນຊາໃຫ້ທ່ານເຮັດ.

ເມື່ອພຣະເຢຊູຊົງມີຊີວິດຢູ່ໃນໂລກ, ຍິງຄົນນຶ່ງມີສັດທາອັນຍິ່ງໃຫຍ່ໃນພຣະອົງ. ນາງມີຄວາມເຈັບປ່ວຍ ເປັນເວລານານ, ແລະນາງເຊື່ອວ່າ ຖ້ານາງພຽງແຕ່ມີໂອກາດແຕະເຄື່ອງນຸ່ງຂອງພຣະອົງ, ນາງຈະຫາຍຈາກການເຈັບປ່ວຍນັ້ນ. ໃນຂະນະທີ່ພຣະເຢຊູຊົງຍ່າງໄປໃນກຸ່ມຂອງຜູ້ຄົນ, ນາງກໍຫມົ້ນໄປຫາພຣະເຢຊູແລະຈັບເຄື່ອງນຸ່ງຂອງພຣະອົງ. ນາງກໍໄດ້ຮັບການປິ່ນປົວໃນເວລາດຽວກັນນັ້ນ. ພຣະເຢຊູຊົງບອກນາງວ່າ ເພາະສັດທາຂອງນາງ, ນາງຈຶ່ງໄດ້ຮັບການປິ່ນປົວ.

ສາສດາໂຢເຊັບມີສັດທາໃນພຣະເຢຊູຄຣິສ. ທ່ານອ່ານໃນພຣະຄຳພີໄບເບິ້ນວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຕອບຄຳຖາມຂອງພວກເຮົາ ຖ້າພວກເຮົາເຊື່ອໃນພຣະອົງ. ໂຢເຊັບອະທິຖານຫາພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູຊົງມາ ປາກົດຕໍ່ໂຢເຊັບ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກໂຢເຊັບ ໃຫ້ຟັງພຣະເຢຊູ ແລະເຊື່ອຟັງຄຳບັນຊາຂອງພຣະອົງ. ໂຢເຊັບເຊື່ອຟັງພຣະເຢຊູ. ສະນັ້ນ ທ່ານຈຶ່ງໄດ້ຮັບພຣະຄຳພີມໍມອນແລະຊ່ວຍຟື້ນຟູສາສນາຈັກຂອງ ພຣະເຢຊູຄຣິສຄືນມາໃຫມ່.

ພຣະເຢຊູຈະຊົງຊ່ວຍເຫລືອພວກເຮົາຖ້າພວກເຮົາມີສັດທາໃນພຣະອົງ. ພຣະອົງຈະ ຊົງຊ່ວຍພວກເຮົາແກ້ໄຂບັນຫາຂອງພວກເຮົາ. ພຣະອົງຈະຊົງຊ່ວຍພວກເຮົາເວລາ ພວກເຮົາມີຄວາມທໍ້ຖອຍ. ພຣະອົງຈະຊົງຊ່ວຍພວກເຮົາໃຫ້ເອົາຊະນະບາບ. ພວກເຮົາຈະສາມາດຊ່ວຍເຫລືອຄອບຄົວຂອງພວກເຮົາແລະຄົນອື່ນໆ.

ເມື່ອພວກເຮົາມີສັດທາໃນພຣະເຢຊູ, ພວກເຮົາເລີ້ມທີ່ຈະຕິດຕາມແຜນຂອງ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພວກເຮົາເລີ້ມທີ່ຈະດຳລົງຊີວິດ ແລະເຮັດສິ່ງທີ່ຈະນຳພວກເຮົາໄປສູ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ຖ້າພວກເຮົາດຳເນີນຕໍ່ໄປ, ມື້ໃດມື້ນຶ່ງພວກເຮົາຈະສາມາດກັບຄືນໄປຢູ່ນຳ ພຣະອົງຕລອດໄປ.

### *ການສົນທະນາ*

- ຄວາມຮູ້ແລະອຳນາດແບບໃດທີ່ພວກເຮົາສາມາດມີເມື່ອພວກເຮົາມີສັດທາໃນ ພຣະເຢຊູ?

### *ຂໍ້ອ້າງອີງ*

*ພວກເຮົາສາມາດເຊື່ອໃນພຣະເຢຊູຄຣິສແລະຫມັ້ນໃຈໃນພຣະອົງ*

- ໂຢຮັນ ໑໔:໖ (ພຽງແຕ່ພຣະເຢຊູເທົ່ານັ້ນ ທີ່ສາມາດສະແດງເສັ້ນທາງແກ່ ພວກເຮົາທີ່ຈະກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.)
- ກິຈການ ໔:໑໒; ໒ ນີໄຟ ໒:໘; ໘:໒໙; ໂມໄຊຢາ ໙:໑໒ (ພຽງແຕ່ຄົນທີ່ມີສັດທາໃນ ພຣະເຢຊູເທົ່ານັ້ນ ຈະສາມາດລອດຈາກບາບຂອງພວກເຂົາ.)

- ເຮັບເຣີ ໑໑:໑; ແອລມາ ໓໒:໒໑ (ການມີສັດທາ ແມ່ນທີ່ຈະເຊື່ອໃນສິ່ງທີ່ພວກເຮົາບໍ່ສາມາດເຫັນ.)
- ເຮັບເຣີ ໑໑:໖ (ປາສຈາກສັດທາ, ພວກເຮົາບໍ່ສາມາດຮັບໃຊ້ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.)
- ໂມໄຊຢາ ໕:໑໐–໑໑ (ພວກເຮົາຄວນມີສັດທາໃນພຣະເຢຊູ.)

*ພຣະເຢຊູຊົງໃຫ້ວິທີແກ່ພວກເຮົາທີ່ຈະພັດທະນາສັດທາໃນພຣະອົງ*

- ໂຢຮັນ ໕:໓໙ (ພຣະຄັມພີໃຫ້ປະຈັກພະຍານເຖິງພຣະເຢຊູ, ສະນັ້ນ ພວກເຮົາຄວນສຶກສາມັນ.)
- ໂຢຮັນ ໗:໑໖–໑໗ (ຖ້າພວກເຮົາເຮັດຕາມສິ່ງທີ່ພຣະເຢຊູຊົງໄດ້ບອກໃຫ້ພວກເຮົາເຮັດ, ພວກເຮົາຈະຮູ້ວ່າ ການສອນຂອງພຣະອົງເປັນຄວາມຈິງ.)
- ໑ ໂກຣິນໂທ ໑໒:໓ (ພຣະວິນຍານບໍຣິສຸດຊ່ວຍເຫລືອພວກເຮົາໃຫ້ມີສັດທາໃນພຣະເຢຊູ.)
- ຢາໂກໂບ ໒:໑໗ (ພວກເຮົາສະແດງການເຊື່ອຂອງພວກເຮົາໃນພຣະເຢຊູໂດຍກະທຳຕາມສິ່ງທີ່ ພຣະອົງຊົງບອກໃຫ້ພວກເຮົາເຮັດ).
- ແອລມາ ໓໒:໒໗–໓໙ (ຖ້າພວກເຮົາພະຍາຍາມເຊື່ອຟັງພຣະເຢຊູ, ພວກເຮົາຈະຮູ້ວ່າ ການສອນຂອງພຣະອົງແມ່ນດີ.)

*ພວກເຮົາສາມາດຮັບຄວາມຮູ້ທີ່ຍິ່ງໃຫຍ່ແລະມີອຳນາດ ເມື່ອພວກເຮົາມີສັດທາໃນພຣະເຢຊູ*

- ລູກາ ໘:໔໓–໔໘ (ພຣະເຢຊູຊົງປິ່ນປົວຍິງຄົນນຶ່ງເພາະນາງມີສັດທາໃນພຣະອົງ.)
- ເຮັບເຣີ ໑໑ (ພຣະເຢຊູຊົງໄດ້ຊ່ວຍເຫລືອຄົນຈຳນວນຫລວງຫລາຍ ເພາະສັດທາຂອງພວກເຂົາ.)

# ການກັບໃຈ

*ບົດທີ ໑໔*

---

*ການເຮັດສິ່ງບໍ່ດີເຮັດໃຫ້ພວກເຮົາຮູ້ສຶກບໍ່ດີໃຈ. ພວກເຮົາຈະກັບຄືນມາສູ່ຄວາມສຸກອີກໄດ້ແນວໃດຫລັງຈາກພວກເຮົາໄດ້ເຮັດສິ່ງໃດສິ່ງນຶ່ງຜິດໄປ?*

**ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕຽມເສັ້ນທາງໃຫ້ພວກເຮົາທີ່ຈະເອົາຊະນະບາບ**

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮູ້ວ່າ ພວກເຮົາທຸກຄົນຈະກະທຳຜິດໃນໂລກ. ສິ່ງທີ່ຜິດທີ່ພວກເຮົາເຮັດເອີ້ນວ່າບາບ. ພວກເຮົາກະທຳບາບເມື່ອພວກເຮົາເຮັດສິ່ງທີ່ພຣະຜູ້ເປັນເຈົ້າຊົງຫ້າມບໍ່ໃຫ້ພວກເຮົາເຮັດ. ພວກເຮົາກໍກະທຳບາບຄືກັນເມື່ອພວກເຮົາບໍ່ເຮັດສິ່ງທີ່ພຣະຜູ້ເປັນເຈົ້າຊົງບັນຊາໃຫ້ພວກເຮົາເຮັດ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາບໍ່ໄດ້ກະທຳບາບ, ແລະພຣະອົງບໍ່ຊົງອະນຸຍາດຄົນທີ່ກະທຳບາບ ຢູ່ກັບພຣະອົງ. ກ່ອນຈະຢູ່ກັບພຣະອົງໄດ້, ພວກເຮົາຕ້ອງກັບໃຈຈາກບາບຂອງພວກເຮົາເສັຽກ່ອນ. ການກັບໃຈແມ່ນການມີຄວາມຮູ້ສຶກເສັຽໃຈຕໍ່ບາບຂອງພວກເຮົາ ແລະເຊົາທຳບາບນັ້ນ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກພວກເຮົາ. ພຣະອົງບໍ່ຊົງຢາກໃຫ້ບາບຂອງພວກເຮົາກີດກັນ ພວກເຮົາຈາກການກັບໄປຢູ່ນຳພຣະອົງ. ສະນັ້ນພຣະອົງຈຶ່ງຊົງຕຽມແຜນໄວ້ເພື່ອຈະຊ່ວຍເຫລືອພວກເຮົາ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສົ່ງພຣະເຢຊູມາຊ່ວຍເຫລືອພວກເຮົາໃຫ້ກັບໃຈຈາກບາບ. ພຣະເຢຊູຊົງສອນພວກເຮົາເຖິງສິ່ງທີ່ພວກເຮົາຄວນເຮັດເພື່ອ

ຫລີກເວັ້ນບາບ. ພຣະອົງຍັງຊົງໃຫ້ພະລັງ ແກ່ພວກເຮົາທີ່ຈະກຳທຳສິ່ງເຫລົ່ານີ້. ເມື່ອພວກເຮົາເຊື່ອໃນພຣະອົງແລະຕິດຕາມພຣະອົງ, ພຣະອົງຈະປ່ຽນຈິດໃຈຂອງພວກເຮົາ ແລ້ວພວກເຮົາຈະບໍ່ມີຄວາມປາຖນາທີ່ຈະກະທຳບາບອີກ, ແຕ່ຈະເຮັດຄວາມດີເທົ່ານັ້ນ. ຖ້າພວກເຮົາບໍ່ຢາກທໍຣະມານສຳລັບບາບຂອງພວກເຮົາ, ພວກເຮົາຈຳຕ້ອງເຊື່ອໃນພຣະເຢຊູ. ຜູ້ທີ່ເຊື່ອໃນພຣະເຢຊູຢ່າງແທ້ຈິງນັ້ນຈະກັບໃຈຈາກບາບຂອງພວກເຂົາ.

ເມື່ອພວກເຮົາເຊື່ອໃນພຣະເຢຊູແລະກັບໃຈ, ການທໍຣະມານຂອງພຣະເຢຊູໄດ້ໃຊ້ຄ່າບາບຂອງພວກເຮົາ ແລະພວກເຮົາກາຍມາເປັນຄົນທີ່ພົ້ນຈາກບາບ. ພວກເຮົາຈະສາມາດກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກ ເພາະພວກເຮົາຖືກຊຳຣະລ້າງແລ້ວ.

### *ການສົນທະນາ*

- ການກັບໃຈຫມາຍຄວາມວ່າແນວໃດ?
- ເປັນຫຍັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈຶ່ງຊົງຕ້ອງການໃຫ້ພວກເຮົາກັບໃຈຈາກບາບຂອງພວກເຮົາ?
- ເປັນຫຍັງວ່າມີແຕ່ຄົນທີ່ມີສັດທາຢ່າງແທ້ຈິງໃນພຣະເຢຊູຈະກັບໃຈຈາກບາບຂອງພວກເຂົາ?

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ບອກພວກເຮົາເຖິງສິ່ງທີ່ພວກເຮົາຄວນເຮັດເພື່ອຈະກັບໃຈ

ເພື່ອຈະກັບໃຈ, ພວກເຮົາຕ້ອງເຊື່ອໃນພຣະເຢຊູ ແລະເຊື່ອໃນສິ່ງທີ່ພຣະອົງຊົງສອນ. ພວກເຮົາຕ້ອງເຊື່ອວ່າ ພຣະອົງຊົງໄດ້ທໍຣະມານເພື່ອບາບຂອງພວກເຮົາ. ພວກເຮົາຕ້ອງເຊື່ອວ່າ ມີແຕ່ພຣະອົງເທົ່ານັ້ນ ທີ່ສາມາດໃຊ້ຄ່າບາບຂອງພວກເຮົາໄດ້. ພວກເຮົາຕ້ອງເຊື່ອວ່າ ພຣະອົງຊົງຕ້ອງການໃຫ້ພວກເຮົາເອົາຊະນະບາບແລະວ່າພຣະອົງຈະຊົງຊ່ວຍເຫລືອພວກເຮົາກະທຳສິ່ງເຫລົ່ານີ້. ພວກເຮົາຕ້ອງພະຍາຍາມຢ່າງຂຍັນທີ່ຈະເຮັດຕາມສິ່ງທີ່ພຣະອົງຊົງໄດ້ບັນຊາໃຫ້ພວກເຮົາເຮັດ.

ເມື່ອພວກເຮົາກັບໃຈ, ພວກເຮົາປ່ອຍໃຫ້ພຣະເຢຊູປ່ຽນພວກເຮົາໄປຕາມເສັ້ນທາງທີ່ພຣະອົງຊົງຕ້ອງການໃຫ້ພວກເຮົາໄປ. ພວກເຮົາຢຸດເຮັດສິ່ງທີ່ບໍ່ດີ ແລະເລີ່ມເຮັດສິ່ງທີ່ດີ. ຖ້າພວກເຮົາໄດ້ເວົ້າສິ່ງທີ່ບໍ່ຈິງ, ພວກເຮົາກໍຄວນຢຸດ ແລະເວົ້າແຕ່ສິ່ງທີ່ເປັນຄວາມຈິງ. ຖ້າພວກເຮົາລັກເອົາສິ່ງໃດສິ່ງນຶ່ງ, ພວກເຮົາກໍຄວນສົ່ງມັນຄືນໃຫ້ເຈົ້າຂອງມັນ ແລະບໍ່ລັກອັນໃດອີກຕໍ່ໄປ. ຖ້າພວກເຮົາໄດ້ກະທຳສິ່ງທີ່ບໍ່ດີຕໍ່ຄົນໃດຄົນນຶ່ງ ພວກເຮົາກໍຄວນຢຸດກະທຳສິ່ງນັ້ນແລະຄວນກະທຳຄວາມດີຕໍ່ເຂົາເຫລົ່ານັ້ນ.

ເມື່ອພວກເຮົາກັບໃຈ, ພວກເຮົາຈະກະທຳສິ່ງຕໍ່ໄປນີ້:

*ພວກເຮົາສາລະພາບຕໍ່ຕົນເອງວ່າ ພວກເຮົາໄດ້ກະທຳບາບ.* ພວກເຮົາຮູ້ວ່າພວກເຮົາກະທຳບາບເມື່ອ ພວກເຮົາບໍ່ເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ເມື່ອພວກເຮົາກັບໃຈ, ພວກເຮົາຈະບໍ່ຊອກຫາຄວາມແກ້ຕົວຕໍ່ການກະທຳຄວາມຊົ່ວນັ້ນ. ພວກເຮົາສາລະພາບວ່າ ພວກເຮົາໄດ້ກະທຳຜິດແລ້ວ ແລະຕ້ອງການທີ່ຈະປ່ຽນແປງ.

*ພວກເຮົາຮູ້ສຶກເສັຽໃຈຕໍ່ສິ່ງທີ່ພວກເຮົາໄດ້ເຮັດ.* ເມື່ອພວກເຮົາກັບໃຈ, ພວກເຮົາມີຄວາມຮູ້ສຶກເສັຽໃຈຢ່າງແທ້ຈິງຕໍ່ການກະທຳຜິດນັ້ນ. ພວກເຮົາບໍ່ພຽງແຕ່ວ່າພວກເຮົາເສັຽໃຈຕໍ່ການກະທຳນັ້ນ ແຕ່ຮູ້ສຶກເສັຽໃຈຢ່າງແທ້ຈິງທີ່ໄດ້ກະທຳສິ່ງນັ້ນ ແລະຄິດວ່າພວກເຮົາບໍ່ຄວນກະທຳສິ່ງນັ້ນເລີຍ. ພວກເຮົາຍັງຕ້ອງການເຮັດສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບັນຊາໃຫ້ພວກເຮົາເຮັດ.

*ພວກເຮົາຢຸດເຮັດສິ່ງທີ່ຜິດນັ້ນ.* ຖ້າພວກເຮົາພຽງແຕ່ສາລະພາບຕໍ່ຕົນເອງວ່າພວກເຮົາໄດ້ກະທຳບາບ ແລະຖ້າພວກເຮົາພຽງເວົ້າວ່າ ພວກເຮົາຮູ້ສຶກເສັຽໃຈເທົ່ານັ້ນ, ພວກເຮົາບໍ່ໄດ້ກັບໃຈຢ່າງແທ້ຈິງ. ການກັບໃຈຢ່າງແທ້ຈິງ, ແມ່ນຕ້ອງເຊົາເຮັດສິ່ງທີ່ບໍ່ດີ. ບາງຄັ້ງມັນບໍ່ເປັນສິ່ງງ່າຍທີ່ຈະຢຸດການກະທຳນັ້ນ, ແຕ່ພຣະເຢຊູຊົງມາສູ່ໂລກ ເພື່ອໃຫ້ຄວາມຊ່ວຍເຫລືອພວກເຮົາຕາມທີ່ພວກເຮົາຕ້ອງການ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ພວກເຮົາໃຫ້ໂອກາດພຣະເຢຊູເພື່ອຊ່ວຍເຫລືອພວກເຮົາ ເພາະນັ້ນເປັນເສັ້ນທາງທີ່ພວກເຮົາຈະໄດ້ຮັບການຊຳຮະລ້າງແລະຮັບຄວາມບໍຣິສຸດ ເພື່ອຈະກັບໄປຢູ່ນຳພຣະຜູ້ເປັນເຈົ້າອີກ.

*ພວກເຮົາສາລະພາບບາບຂອງພວກເຮົາ.* ໃນສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍ, ການສາລະພາບຫມາຍຄວາມວ່າ ເຮົາໄດ້ບອກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະຜູ້ນໍາໃນສາສນາຈັກ ຮູ້ເຖິງສິ່ງທີ່ພວກເຮົາໄດ້ເຮັດໄປ. ບາບບາງຢ່າງທີ່ພວກເຮົາເຮັດອາດມີຜົນສະທ້ອນ ແກ່ຕົວພວກເຮົາເອງເທົ່ານັ້ນ. ເມື່ອພວກເຮົາອະທິຖານຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ພວກເຮົາຄວນບອກພຣະອົງກ່ຽວກັບບາບເຫລົ່ານີ້ ແລະຂໍໃຫ້ພຣະອົງໃຫ້ອະພັຍພວກເຮົາ ແລະຊ່ວຍພວກເຮົາເອົາຊະນະມັນ. ຖ້າບາບຂອງພວກເຮົາເຮັດໃຫ້ຄົນອື່ນໄດ້ຮັບຄວາມເຈັບປວດ, ພວກເຮົາຄວນສາລະພາບມັນຕໍ່ຄົນນັ້ນ ແລະຕໍ່ພຣະຜູ້ເປັນເຈົ້າ. ພວກເຮົາຄວນສາລະພາບບາບທີ່ຮ້າຍແຮງ ເຊັ່ນ ການລ່ວງປະເພນີຕໍ່ຜູ້ນໍາໃນສາສນາຈັກຂອງພວກເຮົາ, ຜູ້ນັ້ນອາດເປັນ *ອະທິການ ຫລື *ປະທານສາຂາຂອງພວກເຮົາ.

*ພວກເຮົາເຮັດຕາມຄວາມສາມາດທີ່ຈະດັດແປງຄວາມຜິດທີ່ພວກເຮົາໄດ້ເຮັດໄປນັ້ນໃຫ້ດີຂຶ້ນ.* ເມື່ອພວກເຮົາກັບໃຈ, ພວກເຮົາປ່ຽນແປງຄວາມຜິດທີ່ພວກເຮົາເຮັດ. ຕົວຢ່າງເຊັ່ນ, ຖ້າພວກເຮົາລັກຂອງຈາກເພື່ອນບ້ານ, ພວກເຮົາກໍຄວນສົ່ງສິ່ງທີ່ພວກເຮົາລັກຄືນໄປ. ຖ້າພວກເຮົາບໍ່ມີສິ່ງທີ່ພວກເຮົາລັກມາ, ພວກເຮົາກໍຄວນເອົາອັນໃຫມ່ສົ່ງຄືນແທນ ຫລືຈ່າຍຄ່າມັນ.

*ພວກເຮົາໃຫ້ອະພັຍບາບແກ່ຄົນອື່ນ.* ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບັນຊາພວກເຮົາໃຫ້ອະພັຍຄົນອື່ນ. ຖ້າພວກເຮົາຕ້ອງການໃຫ້ພຣະອົງອະພັຍໃຫ້ແກ່ພວກເຮົາ, ພວກເຮົາຕ້ອງໃຫ້ອະພັຍແກ່ຄົນອື່ນເຫມືອນກັນ. ຖ້າພວກເຮົາຊັງຄົນອື່ນ ເພາະຄວາມຜິດທີ່ພວກເຂົາເຮັດ ແລະພວກເຮົາບໍ່ອະພັຍໃຫ້ເຂົາ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາກໍຈະບໍ່ອະພັຍບາບໃຫ້ພວກເຮົາ.

*ພວກເຮົາຕ້ອງພະຍາຍາມຢ່າງເຕັມໃຈທີ່ຈະເຊື່ອຟັງພຣະບັນຍັດທັງຫມົດຂອງພຣະເຢຊູຕລອດຊີວິດຂອງພວກເຮົາ.* ພວກເຮົາຕ້ອງປ່ຽນແປງໄປເລື້ອຍໆຕໍ່ສິ່ງທີ່ພວກເຮົາເຮັດຜິດຈົນກວ່າພວກເຮົາເຮັດສິ່ງທີ່ຖືກຕ້ອງ. ພວກເຮົາເຮັດຕາມຄວາມສາມາດທີ່ຈະດັດແປງສິ່ງພວກເຮົາເຮັດຜິດໃຫ້ດີຂຶ້ນໃນແຕ່ລະວັນ.

ພວກເຮົາຕ້ອງກັບໃຈ ເມື່ອໃດພວກເຮົາເຮັດສິ່ງໃດສິ່ງນຶ່ງຜິດ. ພວກເຮົາອາດຄິດວ່າ ການກັບໃຈເວລານີ້ເປັນການຍາກ. ພວກເຮົາອາດຄິດວ່າ ການກັບໃຈຈະເປັນສິ່ງງ່າຍໃນເວລາຕໍ່ໄປ ແຕ່ມັນບໍ່ເປັນແນວນັ້ນ. ການກັບໃຈຈະເປັນສິ່ງຍາກຂຶ້ນເມື່ອພວກເຮົາລໍຖ້າໄປເລື້ອຍໆ. ຖ້າພວກເຮົາລໍຖ້າທີ່ຈະກັບໃຈຈາກການກະທຳຜິດທີ່ພວກເຮົາເຮັດ, ມັນຈະເຮັດໃຫ້ການເຕີບໂຕທາງວິນຍານຂອງພວກເຮົາຊັກຊ້າລົງ ເພາະວ່າໃນເວລາພວກເຮົາລໍຖ້າ, ພຣະເຢຊູບໍ່ສາມາດຊ່ວຍພວກເຮົາຮຽນເພີ້ມກ່ຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້. ສະນັ້ນພວກເຮົາບໍ່ສາມາດຕຽມຕໍ່ການຈະກັບໄປຢູ່ກັບພຣະອົງໄດ້ ຖ້າພວກເຮົາບໍ່ກັບໃຈຈາກຄວາມຜິດທີ່ພວກເຮົາເຮັດ. ເມື່ອໃດກໍຕາມທີ່ພວກເຮົາຮູ້ວ່າ ພວກເຮົາເຮັດສິ່ງທີ່ຜິດ, ພວກເຮົາຄວນກັບໃຈທັນທີ.

### *ການສົນທະນາ*

- ພວກເຮົາຕ້ອງເຮັດແນວໃດເພື່ອຈະກັບໃຈ?

## ພວກເຮົາແຕ່ລະຄົນສາມາດກັບໃຈ

ພວກເຮົາແຕ່ລະຄົນສາມາດກັບໃຈ. ບາງຄັ້ງການກັບໃຈອາດຈະເປັນສິ່ງຍາກສຳລັບພວກເຮົາ. ພວກເຮົາອາດຮູ້ສຶກວ່າ ພວກເຮົາຈະບໍ່ສາມາດເອົາຊະນະຄວາມອ່ອນແອຂອງພວກເຮົາໄດ້. ຊາຕານຢາກໃຫ້ພວກເຮົາເຊື່ອແນວນັ້ນ ເພື່ອວ່າພວກເຮົາຈະເຮັດສິ່ງທີ່ຜິດໄປເລື້ອຍໆ. ພວກເຮົາຕ້ອງຈຳໄວ້ວ່າ ພວກເຮົາສາມາດກັບໃຈໄດ້. ພວກເຮົາບໍ່ສາມາດເຮັດດ້ວຍຕົນເອງໄດ້. ພວກເຮົາຕ້ອງໄດ້ຮັບຄວາມຊ່ວຍເຫລືອ. ພວກເຮົາ ແຕ່ລະຄົນເປັນລູກຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະພຣະອົງຊົງສົ່ງພຣະເຢຊູລົງມາຊ່ວຍພວກເຮົາ. ດ້ວຍຄວາມຊ່ວຍເຫລືອຂອງພຣະເຢຊູ ພວກເຮົາ ຈະສາມາດເຮັດທຸກສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບັນຊາໃຫ້ພວກເຮົາເຮັດ.

ພຣະເຢຊູຊົງຊ່ວຍພວກເຮົາໃຫ້ກັບໃຈ ຖ້າພວກເຮົາອະທິຖານຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ເພື່ອຂໍຄວາມຊ່ວຍເຫລືອຈາກພຣະເຢຊູ. ພຣະເຢຊູ ແລະພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຊົງຕ້ອງການໃຫ້ພວກເຮົາກະທຳສິ່ງທີ່ດີ. ພວກພຣະອົງບໍ່ຢາກໃຫ້ພວກເຮົາເຮັດສິ່ງທີ່ຜິດ ແຕ່ພວກພຣະອົງກໍຍັງ

ຊົງຮັກພວກເຮົາ, ເຖິງແມ່ນວ່າພວກເຮົາເຮັດສິ່ງທີ່ຜິດ. ພວກພຣະອົງຊົງຕ້ອງການໃຫ້ພວກເຮົາກັບໃຈເພື່ອພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະສາມາດໃຫ້ອະພັຍແກ່ພວກເຮົາ ແລະພວກເຮົາຈະສາມາດມີຄວາມສຸກ.

*ການສົນທະນາ*

- ເປັນຫຍັງພວກເຮົາຄວນກັບໃຈເຖິງແມ່ນວ່າ ການກັບໃຈອາດເປັນສິ່ງທີ່ຍາກ?
- ແມ່ນໃຜຈະຊ່ວຍພວກເຮົາກັບໃຈ?

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະມອບຮາງວັນໃຫ້ແກ່ພວກເຮົາເມື່ອພວກເຮົາກັບໃຈ

ເມື່ອພວກເຮົາວາງສັດທາຂອງພວກເຮົາໃນພຣະເຢຊູແລະກັບໃຈ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຈະອະພັຍໃຫ້ແກ່ພວກເຮົາຢ່າງສົມບູນ. ພວກເຮົາບໍ່ຈຳເປັນທີ່ຈະເປັນຫ່ວງກ່ຽວກັບການລົງໂທດ ເພາະບາບນັ້ນ. ພຣະອົງບໍ່ພຽງແຕ່ອະພັຍໃຫ້ພວກເຮົາເທົ່ານັ້ນ, ແຕ່ພຣະອົງຍັງຊົງຊ່ວຍເຫລືອ ພວກເຮົາໃນທາງທີ່ພວກເຮົາບໍ່ຢາກເຮັດບາບນັ້ນອີກຕໍ່ໄປ ມີແຕ່ຢາກເຮັດແຕ່ຄວາມດີເທົ່ານັ້ນ. ນີ້ເປັນຂອງປະ ທານທີ່ພຣະເຢຊູຊົງປະທານໃຫ້ແກ່ພວກເຮົາ.

ພວກເຮົາຄວນຈຳໄວ້ວ່າ ພວກເຮົາຈະບໍ່ກາຍເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ໃນທັນທີທັນໃດ. ແຕ່ໃນເມື່ອພວກເຮົາມີສັດທາໃນພຣະເຢຊູໄປເລື້ອຍໆແລະກັບໃຈຈາກບາບ ແລະເຊື່ອຟັງພຣະເຢຊູ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະອະພັຍບາບໃຫ້ພວກເຮົາໄປເລື້ອຍໆ. ພຣະເຢຊູຊົງຊ່ວຍພວກເຮົາໄປເລື້ອຍໆ. ພວກເຮົາກໍກາຍມາເປັນເຫມືອນພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄປເລື້ອຍໆ. ໃນທີ່ສຸດ, ພວກເຮົາກໍຈະສາມາດກັບຄືນໄປຢູ່ກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກ.

ເມື່ອພວກເຮົາກັບໃຈ, ພວກເຮົາຈະຮູ້ສຶກມີຄວາມສຸກ. ພວກເຮົາບໍ່ມີຄວາມໂສກເສົ້ານຳຄວາມຜິດທີ່ພວກເຮົາໄດ້ເຮັດໄປແຕ່ມີຄວາມຮູ້ສຶກຊື່ນໃຈ ເພາະພວກເຮົາໄດ້ເອົາຊະນະຄວາມອ່ອນແອດ້ວຍການຊ່ວຍເຫລືອຂອງພຣະເຢຊູ. ໃນເວລານັ້ນ, ພວກເຮົາຮູ້ວ່າພວກເຮົາມີອຳນາດທີ່ຈະຕໍ່ຕ້ານການຫລອກລວງແລະເຮັດສິ່ງທີ່ຖືກຕ້ອງ.

## *ການສົນທະນາ*

- ຂອງປະທານອັນໃດທີ່ພວກເຮົາໄດ້ຮັບເມື່ອພວກເຮົາກັບໃຈ?

## *ຂໍ້ອ້າງອີງ*

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສ້າງເສັ້ນທາງໃຫ້ພວກເຮົາທີ່ຈະເອົາຊະນະບາບ*

- ຢາໂກໂບ ໔:໑໗ (ການເຮັດບາບແມ່ນການກະທຳສິ່ງທີ່ພຣະຜູ້ເປັນເຈົ້າຊົງຫ້າມບໍ່ໃຫ້ພວກເຮົາເຮັດ.)
- ໑ ໂຢຮັນ ໑:໘ (ຖ້າພວກເຮົາເວົ້າວ່າ ພວກເຮົາບໍ່ເຄີຍເຮັດບາບ, ພວກເຮົາກຳລັງເວົ້າຄວາມບໍ່ຈິງ.)
- ໑ ໂຢຮັນ ໕:໑໗ (ການກະທຳສິ່ງທີ່ບໍ່ຊອບທັມແມ່ນການກະທຳບາບ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ບອກເຖິງສິ່ງທີ່ພວກເຮົາຄວນເຮັດເພື່ອຈະກັບໃຈ*

- ມັດທາຍ ໒:໑໔–໑໕; ສ ນີໄຟ ໑ສ:໑໔–໑໕ (ພວກເຮົາຕ້ອງໃຫ້ອະພັຍຄົນອື່ນ.)
- ແອລມາ ສ໒:໑ສ–໑໒ (ມັນດີກວ່າທີ່ພວກເຮົາຈະຖ່ອມຕົວໂດຍຕົນເອງ ແທນທີ່ຈະຖືກບັງຄັບໃຫ້ຖ່ອມຕົວ.)
- ແອລມາ ສ໔:ສ໒–ສ໒ (ບັດນີ້ເປັນເວລາທີ່ຈະກັບໃຈ.)

*ພວກເຮົາແຕ່ລະຄົນສາມາດກັບໃຈ*

- ໑ ນີໄຟ ສ:໗ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາບໍ່ເຄີຍຂໍໃຫ້ພວກເຮົາເຮັດສິ່ງທີ່ເຮັດບໍ່ໄດ້.)
- ແອລມາ ໔໒:໒໙–ສ໐ (ພວກເຮົາບໍ່ຄວນຫາຄວາມແກ້ຕົວຕໍ່ບາບຂອງພວກເຮົາ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະມອບຣາງວັນໃຫ້ແກ່ພວກເຮົາເມື່ອພວກເຮົາກັບໃຈ*

- ໂມໄຊຢາ ໕:໕–໙ (ພຣະເຢຊູຊົງຊ່ວຍເຫລືອຜູ້ກັບໃຈແລະເຊື່ອຟັງພຣະອົງ.)
- ໂມໂຣໄນ ໘:໒໔–໒໒ (ຄົນກັບໃຈສາມາດຮັບບັບຕິສະມາໄດ້).

# ບັບຕິສະມາ

*ບົດທີ ໑໕*

*ການຮັບບັບຕິສະມາເປັນສິ່ງສຳຄັນສິ່ງນຶ່ງທີ່ທ່ານສາມາດເຮັດໃນໂລກນີ້. ເປັນຫຍັງບັບຕິສະມາຈຶ່ງມີຄວາມສຳຄັນ? ວິທີບັບຕິສະມາທີ່ຖືກຕ້ອງເປັນແນວໃດ?*

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບັນຊາພວກເຮົາໃຫ້ຮັບບັບຕິສະມາ

ການຮັບບັບຕິສະມາຫມາຍເຖິງການຈົມລົງໄປໃນນ້ຳຫມົດທັງຕົວບຶດນຶ່ງແລະຖືກດຶງຂຶ້ນມາຈາກນ້ຳໂດຍ ຜູ້ທີ່ມີອຳນາດປະກອບພິທີບັບຕິສະມານັ້ນ. ບັບຕິສະມາເປັນສ່ວນນຶ່ງຂອງແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພຣະອົງຊົງບັນຊາໃຫ້ພວກເຮົາຮັບບັບຕິສະມາເພື່ອສະແດງວ່າພວກເຮົາເຊື່ອໃນພຣະເຢຊູ ຄຣິສ, ວ່າພວກເຮົາຮັກພຣະອົງແລະຕ້ອງການທີ່ຈະເຊື່ອຟັງພຣະອົງ ແລະວ່າພວກເຮົາໄດ້ກັບໃຈຈາກບາບຂອງພວກເຮົາແລ້ວ.

ພຣະເຢຊູຊົງຮູ້ວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ບັນຊາລູກໆຂອງພຣະອົງທັງຫມົດ ໃຫ້ຮັບບັບຕິສະມາ. ເມື່ອພຣະເຢຊູຊົງຢູ່ໃນໂລກ, ພຣະອົງຊົງໄດ້ຮັບບັບຕິສະມາ. ພຣະອົງຊົງກະທຳສິ່ງນີ້ເພາະພຣະອົງຊົງຕ້ອງການທີ່ຈະເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພຣະອົງຊົງຕ້ອງການສະແດງໃຫ້ພວກເຮົາຮູ້ເຊັ່ນດຽວກັນວ່າ ພວກເຮົາຄວນເຊື່ອຟັງ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະຮັບບັບຕິສະມາ.

ພວກເຮົາທຸກໆຄົນຜູ້ທີ່ມີອາຍຸແປດປີຂຶ້ນໄປ, ຜູ້ທີ່ເຂົ້າໃຈສິ່ງໃດຖືກແລະສິ່ງໃດຜິດແລະຜູ້ມີສັດທາໃນພຣະເຢຊູ ແລະໄດ້ກັບໃຈຄວນຮັບບັບຕິສະມາ. ລູກໆທີ່ມີອາຍຸ



*ແອລມາໃຫ້ບັບຕິສະມາໃນນ້ຳມໍມອນ.*

ຕ່ຳກວ່າແປດປີ ບໍ່ຈຳເປັນຕ້ອງຮັບບັບຕິສະມາ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາບໍ່ພິພາກສາການກະທຳຂອງພວກເຂົາ. ພ້ອມນີ້ຄົນຜູ້ທີ່ພິການດ້ານມັນສມອງທີ່ບໍ່ສາມາດເຂົ້າໃຈເຖິງສິ່ງທີ່ຖືກແລະສິ່ງທີ່ຜິດ ບໍ່ຈຳເປັນຕ້ອງຮັບບັບຕິສະມາ. ຄົນອື່ນໆນັ້ນຕ້ອງຮັບບັບຕິສະມາຖ້າພວກເຮົາຢາກຈະກັບໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ພຣະເຢຊູຊົງບອກພວກເຮົາເມື່ອໃດພວກເຮົາຄວນຮັບບັບຕິສະມາ. ພຣະອົງຊົງບອກຜູ້ຕິດຕາມຂອງພຣະອົງ ໃຫ້ບັບຕິສະມາຜູ້ຄົນຫລັງຈາກພວກເຂົາໄດ້ຮຽນຮູ້ກ່ຽວກັບພຣະອົງ, ໄດ້ເຊື່ອໃນພຣະອົງ, ແລະໄດ້ກັບໃຈ. ພຣະອົງຊົງມອບອຳນາດໃຫ້ແກ່ຜູ້ຊາຍໃນສາສນາຈັກຂອງພຣະອົງບາງຄົນ ເພື່ອຈະໃຫ້ບັບຕິສະມາແກ່ຜູ້ຄົນ.

### *ການສົນທະນາ*

- ເປັນຫຍັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ພວກເຮົາຮັບບັບຕິສະມາ?
- ເປັນຫຍັງພຣະເຢຊູຈຶ່ງຊົງຮັບບັບຕິສະມາ?
- ແມ່ນໃຜຈຳເປັນຕ້ອງຮັບບັບຕິສະມາ?

## ການຮັບບັບຕິສະມາເປັນສິ່ງສຳຄັນທີ່ສຸດສິ່ງນຶ່ງທີ່ພວກເຮົາສາມາດເຮັດ

ໂດຍການຮັບບັບຕິສະມາ, ພວກເຮົາໄດ້ສະແດງຕໍ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາວ່າ ພວກເຮົາຕ້ອງການທີ່ຈະຕິດຕາມແຜນຂອງພຣະອົງທີ່ມີສຳລັບພວກເຮົາ. ພວກເຮົາສັນຍາທີ່ຈະຮັບ ພຣະເຢຊູໃຫ້ເປັນຜູ້ນຳຂອງພວກເຮົາແລະເຊື່ອຟັງທຸກສິ່ງທີ່ພຣະອົງຊົງບັນຊາໃຫ້ພວກເຮົາເຮັດ. ພວກເຮົາສັນຍາທີ່ຈະຈື່ຈຳພຣະອົງແລະສິ່ງທີ່ພຣະອົງຊົງໄດ້ກະທຳເພື່ອພວກເຮົາ.

ເມື່ອພວກເຮົາວາງສັດທາຂອງພວກເຮົາໃນພຣະເຢຊູຄຣິສ, ກັບໃຈຈາກບາບຂອງພວກເຮົາ, ແລະຮັບບັບຕິສະມາ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະອະພັຍບາບໃຫ້ແກ່ພວກເຮົາ. ພຣະອົງຊົງສັນຍາພວກເຮົາວ່າ ພວກເຮົາສາມາດທີ່ຈະກັບຄືນໄປຢູ່ນຳພຣະອົງອີກ. ພຣະອົງຊົງຮັບເອົາພວກເຮົາເປັນສະມາຊິກຂອງສາສນາຈັກຂອງພຣະເຢຊູ. ພຣະອົງຊົງສົ່ງພຣະວິນຍານບໍຣິສຸດມາຊ່ວຍເຫລືອ



*ພວກເຮົາຈຳຕ້ອງຮັບຂອງປະທານແຫ່ງພຣະວິນຍານບໍລິສຸດໂດຍການວາງມື.*

ພວກເຮົາໃຫ້ຮຽນກ່ຽວກັບພຣະອົງຫລາຍຂຶ້ນ ແລະຊ່ວຍເຫລືອພວກເຮົາເຮັດສິ່ງທີ່ຖືກຕ້ອງ. ພວກເຮົາຈະໄດ້ຮັບພອນທັງຫມົດນີ້ ຖ້າພວກເຮົາເຮັດສິ່ງທີ່ພວກເຮົາສັນຍາວ່າ ຈະເຮັດໄປສເມີເມື່ອພວກເຮົາຮັບບັບຕິສະມາ.

ພວກເຮົາຈະສາມາດຮັບພອນເຫລົ່ານີ້ກໍຕໍ່ເມື່ອພວກເຮົາຮັບບັບຕິສະມາ. ນີ້ເປັນວິທີດຽວເທົ່ານັ້ນທີ່ຈະຊ່ວຍພວກເຮົາກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ນີ້ເປັນວິທີດຽວເທົ່ານັ້ນສຳລັບພວກເຮົາ ທີ່ຈະກາຍມາເປັນສະມາຊິກໃນສາສນາຈັກຂອງພຣະເຢຊູຄຣິສ. ນີ້ເປັນວິທີດຽວເທົ່ານັ້ນທີ່ພວກເຮົາຈະໄດ້ຮັບຂອງປະທານແຫ່ງພຣະວິນຍານບໍຣິສຸດ, ຊຶ່ງເປັນສິດທິພິເສດທີ່ຈະໄດ້ຮັບຄວາມຊ່ວຍເຫລືອຈາກພຣະວິນຍານບໍຣິສຸດໃນຊີວິດຂອງພວກເຮົາ. ຂອງປະທານນີ້ແມ່ນມີໃຫ້ແກ່ພວກເຮົາຫລັງຈາກພວກເຮົາຮັບບັບຕິສະມາ. ສິ່ງທັງຫມົດນີ້ເປັນສິ່ງຈຳເປັນທີ່ຈະຊ່ວຍພວກເຮົາເປັນລຳດັບໄປເພື່ອພວກເຮົາຈະສາມາດຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກ.

### *ການສົນທະນາ*

- ຄຳສັນຍາອັນໃດແດ່ທີ່ພວກເຮົາສັນຍາຕໍ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ເມື່ອພວກເຮົາຮັບບັບຕິສະມາ?
- ຄຳສັນຍາອັນໃດແດ່ທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສັນຍາແກ່ພວກເຮົາ ເມື່ອພວກເຮົາຮັບບັບຕິສະມາ?
- ເປັນຫຍັງບັບຕິສະມາຈຶ່ງສຳຄັນຫລາຍທີ່ສຸດ?

## ພວກເຮົາຄວນຕຽມຕົນເອງທີ່ຈະຮັບບັບຕິສະມາ

ພວກເຮົາຕ້ອງເຮັດບາງຢ່າງກ່ອນພວກເຮົາຈະຕຽມພ້ອມຕໍ່ການຮັບບັບຕິສະມາ. ພວກເຮົາຕ້ອງຮຽນກ່ຽວກັບພຣະເຢຊູຄຣິສແລະເຊື່ອໃນພຣະອົງ, ກັບໃຈຈາກບາບຂອງພວກເຮົາ, ແລະເຮັດສິ່ງທີ່ພຣະເຢຊູຊົງບັນຊາໃຫ້ພວກເຮົາເຮັດ.

### *ການສົນທະນາ*

- ພວກເຮົາຕ້ອງເຮັດແນວໃດທີ່ຈະຕຽມຕໍ່ການຮັບບັບຕິສະມາໄດ້?

## ບັບຕິສະມາໃຫ້ໂອກາດພວກເຮົາເລີ້ມຊີວິດໃຫມ່

ບັບຕິສະມາໃຫ້ໂອກາດພວກເຮົາເລີ້ມຊີວິດໃຫມ່ແລະບໍຣິສຸດຈາກບາບ. ພຣະເຢຊູ ຄັ້ງນຶ່ງຊົງໄດ້ຕັສວ່າ ມັນເປັນເຫມືອນດັ່ງການເກີດໃຫມ່. ພຣະອົງຊົງຕັສວ່າ, ຍົກເວັ້ນ ຜູ້ຄົນຈະເກີດໃຫມ່ຈາກທາງວິນຍານ ເສັຽກ່ອນ, ເຂົາຈະບໍ່ສາມາດກັບຄືນໄປຫາ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກ.

ຜູ້ຕິດຕາມພຣະເຢຊູຄົນນຶ່ງ ຊື່ວ່າ ໂປໂລ, ເວົ້າວ່າ ພວກເຮົາຄວນເລີ້ມຊີວິດໃຫມ່ ຫລັງຈາກພວກເຮົາຮັບ ບັບຕິສະມາ. ທ່ານກ່າວວ່າ ເມື່ອພວກເຮົາຖືກຈຸ່ມລົງໄປ ໃນນ້ຳເພື່ອການຮັບບັບຕິສະມາ, ມັນເປັນແບບດຽວວ່າ ພວກເຮົາຝັງບາບຂອງ ພວກເຮົາທັງຫມົດ. ເມື່ອພວກເຮົາຂຶ້ນມາຈາກນ້ຳ, ມັນເປັນເຫມືອນວ່າ ພວກເຮົາ ກາຍມາເປັນຄົນບໍຣິສຸດ, ຄົນໃຫມ່, ຕຽມພ້ອມທີ່ຈະເລີ້ມຊີວິດໃຫມ່. ໂດຍການຮັບ ບັບຕິສະມາ ພວກເຮົາໄດ້ເລີ້ມເຮັດສິ່ງຈຳເປັນຕໍ່ການກັບຄືນໄປຫາພຣະບິດາ ຜູ້ສະຖິດໃນສວັນຂອງພວກເຮົາ.

### *ຂໍ້ອ້າງອີງ*

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບັນຊາໃຫ້ພວກເຮົາຮັບບັບຕິສະມາ*

- ໔ ນີໄຟ ໓໑:໔–໗ (ພຣະເຢຊູຊົງສະແດງແກ່ພວກເຮົາວ່າ ພວກເຮົາຈຳເປັນຕ້ອງຮັບ ບັບຕິສະມາ.)
- ໓ ນີໄຟ ໑໑:໔໑–໔໗ (ພຣະເຢຊູຊົງສອນເຖິງວິທີຮັບບັບຕິສະມາ.)
- ໂມໂຣໄນ ໘:໙–໔໔ (ເດັກນ້ອຍບໍ່ຈຳເປັນຕ້ອງຮັບບັບຕິສະມາ.)

*ການຮັບບັບຕິສະມາເປັນສິ່ງສຳຄັນທີ່ສຸດສິ່ງນຶ່ງທີ່ພວກເຮົາສາມາດເຮັດ*

- ໂຣມ ໖:໓–໗ (ພວກເຮົາບໍຣິສຸດຈາກບາບໂດຍການຮັບບັບຕິສະມາ.)
- ໓ ນີໄຟ ໔໗:໑໖ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໃຫ້ພອນແກ່ຄົນ ທີ່ຮັບບັບຕິສະມາ.)



*ເຮົາຕ້ອງຮັບເອົາຂອງປະທານແຫ່ງພຣະວິນຍານບໍຣິສຸດໂດຍການວາງມື.*

# ຂອງປະທານແຫ່ງ
# ພຣະວິນຍານບໍລິສຸດ

ບົດທີ ໑໘

---

*ພຣະວິນຍານບໍລິສຸດຊ່ວຍເຫລືອພວກເຮົາໃຫ້ຮູ້ແລະເຂົ້າໃຈສິ່ງທີ່ເປັນຄວາມຈິງ. ພວກເຮົາຈະໄດ້ຮັບຂອງປະທານແຫ່ງພຣະວິນຍານບໍລິສຸດໄດ້ແນວໃດ?*

## ພຣະວິນຍານບໍລິສຸດສາມາດນໍາພວກເຮົາໄປສູ່ຄວາມຈິງ

ພຣະວິນຍານບໍລິສຸດສາມາດຊ່ວຍພວກເຮົາກ່ອນຈະຮັບບັບຕິສະມາ. ພຣະອົງສາມາດບອກວ່າ ການສອນຂອງພຣະເຢຊູເປັນຄວາມຈິງ. ບາງຄັ້ງພຣະອົງບອກພວກເຮົາເຖິງບ່ອນທີ່ຈະພົບສາສນາຈັກທີ່ແທ້ຈິງຂອງພຣະເຢຊູຄຣິສ. ແຕ່ພຣະວິນຍານບໍລິສຸດຈະບໍ່ຢູ່ນໍາພວກເຮົາຈົນກວ່າ ພວກເຮົາຈະໄດ້ຮັບບັບຕິສະມາ ແລະໄດ້ຮັບຂອງປະທານແຫ່ງພຣະວິນຍານບໍລິສຸດ.

ໃນພຣະຄັມພີໃຫມ່ ພວກເຮົາອ່ານປະວັດຂອງຊາຍຄົນນຶ່ງຊື່ວ່າ ໂຄນີລີອັດ. ທ່ານເປັນຊາຍທີ່ບໍ່ທັນໄດ້ຮັບບັບຕິສະມາເທື່ອ. ພຣະວິນຍານບໍລິສຸດບອກທ່ານວ່າການສອນຂອງພຣະເຢຊູເປັນຄວາມຈິງ. ຕໍ່ມາ ໂຄນີລີອັດໄດ້ຮັບບັບຕິສະມາ ແລະໄດ້ຮັບຂອງປະທານແຫ່ງພຣະວິນຍານບໍລິສຸດ.

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້ມອບເສັ້ນທາງໃຫ້ແກ່ພວກເຮົາທີ່ຈະໄດ້ຮັບຂອງປະທານແຫ່ງ ພຣະວິນຍານບໍລິສຸດ

ເມື່ອພວກເຮົາຮຽນກ່ຽວກັບແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາທີ່ມີສໍາລັບພວກເຮົາ, ພວກເຮົາຢາກກັບໃຈຈາກບາບຂອງພວກເຮົາ ແລະຢາກເຊື່ອຟັງທຸກໆສິ່ງທີ່ພຣະເຢຊູຊົງບອກໃຫ້ ພວກເຮົາເຮັດ.

---

ແຕ່ພວກເຮົາບໍ່ສາມາດກະທຳສິ່ງນີ້ໄດ້ຖ້າປາສຈາກການຊ່ວຍເຫລືອ. ຂອງປະທານແຫ່ງພຣະວິນຍານບໍຣິສຸດເປັນສິດທິທີ່ຈະຮັບຄວາມຊ່ວຍເຫລືອຈາກພຣະວິນຍານບໍຣິສຸດທຸກໆເວລາ. ພວກເຮົາຮັບຂອງປະທານນີ້ຫລັງຈາກພວກເຮົາໄດ້ຮັບບັບຕິສະມາແລ້ວ.

ພວກເຮົາຕ້ອງຕຽມເພື່ອຈະໄດ້ຮັບຂອງປະທານແຫ່ງພຣະວິນຍານບໍຣິສຸດ. ພວກເຮົາຕ້ອງເຊື່ອໃນພຣະເຢຊູແລະພະຍາຍາມຢ່າງເຂັ້ມງວດທີ່ຈະເຮັດຕາມສິ່ງທີ່ພຣະອົງຊົງບັນຊາພວກເຮົາ. ພວກເຮົາຕ້ອງກັບໃຈຈາກບາບຂອງພວກເຮົາແລະຮັບບັບຕິສະມາ.

ຫລັງຈາກພວກເຮົາຮັບບັບຕິສະມາ, ຜູ້ທີ່ມີອຳນາດຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະວາງມືໄວ້ເທິງຫົວຂອງພວກເຮົາ, ມອບຂອງປະທານແຫ່ງພຣະວິນຍານບໍຣິສຸດ, ແລະເຮັດໃຫ້ພວກເຮົາເປັນສະມາຊິກຂອງສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍຢ່າງເປັນທາງການ. ພວກທ່ານຍັງໃຫ້ພອນພວກເຮົານຳອີກ.

### *ການສົນທະນາ*

- ພວກເຮົາຮັບຂອງປະທານແຫ່ງພຣະວິນຍານບໍຣິສຸດໄດ້ແນວໃດ?

ມັນມີຫລາຍວິທີທີ່ພຣະວິນຍານບໍຣິສຸດສາມາດຊ່ວຍເຫລືອພວກເຮົາໄດ້. ພຣະອົງສາມາດນຳເອົາຂ່າວພຣະທັມຈາກພຣະເຢຊູມາໃຫ້ພວກເຮົາ. ພຣະອົງສາມາດສອນພວກເຮົາຫລາຍສິ່ງກ່ຽວກັບພຣະເຢຊູ ແລະພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ພຣະອົງຍັງສາມາດຊ່ວຍພວກເຮົາໃຫ້ຮູ້ເຖິງວິທີທີ່ຈະແກ້ໄຂບັນຫາຂອງພວກເຮົາ. ພຣະອົງສາມາດໃຫ້ຄວາມອົບອຸ່ນພວກເຮົາ. ພຣະອົງສາມາດຊ່ວຍເຫລືອພວກເຮົາເອົາຊະນະບາບຂອງພວກເຮົາແລະຊ່ວຍເຫລືອພວກເຮົາເຮັດສິ່ງທີ່ດີ.

ພຣະວິນຍານບໍຣິສຸດສາມາດຊ່ວຍເຫລືອພວກເຮົາໃຫ້ເຂົ້າໃຈແລະຮັກຄົນອື່ນ. ພຣະອົງສາມາດຊ່ວຍເຫລືອພວກເຮົາໃຫ້ຮູ້ວ່າ ພວກເຮົາຈະຊ່ວຍຄົນອື່ນໄດ້ແນວໃດ. ພຣະອົງສາມາດຊ່ວຍເຫລືອພວກເຮົາໃຫ້ເຂົ້າໃຈຄຳສອນຂອງພຣະເຢຊູ. ພຣະອົງ

ສາມາດຊ່ວຍເຫລືອພວກເຮົາໃຫ້ຮູ້ສິ່ງທີ່ຈະເວົ້າຕໍ່ຄົນອື່ນ ກ່ຽວກັບພຣະບິດາ ຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູ.

*ການສົນທະນາ*

- ວິທີໃດແດ່ທີ່ຂອງປະທານແຫ່ງພຣະວິນຍານບໍຣິສຸດສາມາດມີອິດທິພົນໃນຊີວິດຂອງພວກເຮົາ?

**ພວກເຮົາຕ້ອງກັບໃຈຈາກບາບຂອງພວກເຮົາເພື່ອຈະໄດ້ຮັບຂອງປະທານນີ້**

ໂດຍຜ່ານຂອງປະທານແຫ່ງພຣະວິນຍານບໍຣິສຸດ ພວກເຮົາສາມາດກາຍມາເປັນຄົນດີຂຶ້ນ ແລະກະທຳສິ່ງທີ່ດີ. ພວກເຮົາສາມາດກາຍມາເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້ຫລາຍຂຶ້ນ, ແຕ່ພວກເຮົາຕ້ອງພະຍາຍາມສເມີທີ່ຈະກະທຳດີ ບໍ່ສະນັ້ນ ພຣະວິນຍານບໍຣິສຸດຈະບໍ່ຢູ່ນຳພວກເຮົາ. ພວກເຮົາຕ້ອງພະຍາຍາມມີແນວຄິດດີ. ພວກເຮົາຕ້ອງພະຍາຍາມຕິດຕາມຄຳສອນຂອງພຣະເຢຊູ. ເມື່ອພວກເຮົາເຮັດສິ່ງໃດສິ່ງນຶ່ງຜິດ, ພວກເຮົາຕ້ອງກັບໃຈ. ເມື່ອພວກເຮົາພະຍາຍາມເຮັດສິ່ງເຫລົ່ານີ້ທັງຫມົດ, ພຣະວິນຍານບໍຣິສຸດກໍຈະຊ່ວຍພວກເຮົາ.

ບາງຄັ້ງພຣະວິນຍານບໍຣິສຸດຈະຊ່ວຍເຫລືອພວກເຮົາໂດຍເຮັດໃຫ້ພວກເຮົາມີຄວາມຮູ້ສຶກອົບອຸ່ນແລະສງົບສຸກໃນຈິດໃຈຂອງພວກເຮົາ. ເມື່ອພວກເຮົາເລີ້ມການກະທຳທີ່ບໍ່ຖືກຕ້ອງ, ຄວາມຮູ້ສຶກອົບອຸ່ນນີ້ຈະຈາກພວກເຮົາໄປ. ບາງຄັ້ງພວກເຮົາອາດໄດ້ຍິນສຽງເວົ້ານຳພວກເຮົາໃນຄວາມນຶກຄິດ, ບອກພວກເຮົາເຖິງສິ່ງທີ່ຄວນເຮັດແລະບໍ່ຄວນເຮັດ. ພວກເຮົາຕ້ອງຕຽມພ້ອມທີ່ຈະຟັງແລະເຮັດຕາມສິ່ງທີ່ພຣະວິນຍານບໍຣິສຸດບອກພວກເຮົາສເມີ, ເພາະພຣະວິນຍານບໍຣິສຸດຈະບອກພວກເຮົາເຖິງສິ່ງທີ່ພຣະເຢຊູຕ້ອງການໃຫ້ພວກເຮົາເຮັດສເມີ ແລະໂດຍການຕິດຕາມພຣະເຢຊູເທົ່ານັ້ນພວກເຮົາຈຶ່ງຈະສາມາດກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ຖ້າພວກເຮົາບໍ່ເຊື່ອຟັງພຣະວິນຍານບໍຣິສຸດ ແລະຖ້າພວກເຮົາເລີ້ມການກະທຳສິ່ງທີ່ບໍ່ດີ, ພຣະວິນຍານບໍຣິສຸດກໍຈະຫນີຈາກພວກເຮົາໄປ. ພຣະອົງຈະບໍ່ຢູ່ນຳພວກເຮົາຫລືຊ່ວຍເຫລືອພວກເຮົາຖ້າພວກເຮົາບໍ່ເຮັດສິ່ງທີ່ຖືກຕ້ອງ. ແຕ່ຖ້າຫາກພວກເຮົາເຮັດຕາມການນຳພາຂອງພຣະອົງ, ພຣະວິນຍານບໍຣິສຸດຈະສະຖິດຢູ່ນຳ

ພວກເຮົາໃນທຸກເວລາ ພຣະອົງຈະຊ່ວຍພວກເຮົາໃຫ້ກາຍມາເປັນຄົນດີຂຶ້ນ ແລະຕຽມຕໍ່ຊີວິດທີ່ຈະຢູ່ກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

*ການສົນທະນາ*

- ພວກເຮົາຕ້ອງເຮັດຫຍັງແດ່ ເພື່ອວ່າພຣະວິນຍານບໍຣິສຸດຈະສາມາດຊ່ວຍເຫລືອພວກເຮົາໄດ້?

## ພວກເຮົາໄດ້ຮັບພອນພິເສດອື່ນໆອີກຈາກພຣະວິນຍານບໍຣິສຸດ

ພອນພິເສດບາງຢ່າງ ພວກເຮົາໄດ້ຮັບຈາກພຣະວິນຍານບໍຣິສຸດ ເອີ້ນວ່າຂອງປະທານແຫ່ງພຣະວິນຍານ. ພຣະເຢຊູຊົງມອບຂອງປະທານເຫລົ່ານີ້ໃຫ້ແກ່ສະມາຊິກຂອງສາສນາຈັກທີ່ແທ້ຈິງຂອງພຣະອົງ ເມື່ອໃດກໍຕາມທີ່ສາສນາຈັກທີ່ແທ້ຈິງຂອງພຣະອົງຢູ່ໃນໂລກ. ພຣະອົງຊົງໂປດປະທານຂອງປະທານເຫລົ່ານີ້ຜ່ານອຳນາດຂອງພຣະວິນຍານບໍຣິສຸດ. ພວກເຮົາຈຳເປັນຕ້ອງເຂົ້າໃຈຂອງປະທານເຫລົ່ານີ້ ເພື່ອພວກເຮົາຈະໃຊ້ມັນໄດ້ຢ່າງສລາດ.

*ຂອງປະທານແຫ່ງການເວົ້າພາສາອື່ນ*

ຂອງປະທານນີ້ງແມ່ນຊ່ວຍໃຫ້ຄົນຮຽນພາສາອື່ນ. ເຫດຜົນນຶ່ງທີ່ພຣະເຢຊູຊົງມອບຂອງປະທານນີ້ໃຫ້ ແມ່ນເພື່ອຊ່ວຍເຫລືອໃນການສອນພຣະກິດຕິຄຸນໃນພາສາທີ່ແຕກຕ່າງກັນ.

*ຂອງປະທານແຫ່ງການແປປາກເປົ່າ*

ຂອງປະທານນີ້ງແມ່ນຊ່ວຍຄົນທີ່ກຳລັງຮ່ຳຮຽນພຣະກິດຕິຄຸນ. ຂອງປະທານແຫ່ງການແປພາສາອື່ນໆ ຊ່ວຍເຫລືອພວກເຂົາໃຫ້ເຂົ້າໃຈຄຳສອນ (ຂ່າວ) ຈາກພຣະເຢຊູໃນພາສາທີ່ພວກເຂົາບໍ່ເຂົ້າໃຈ.

*ຂອງປະທານແຫ່ງການຮູ້ວ່າພຣະເຢຊູຊົງເປັນພຣະບຸດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ*

ຂອງປະທານນີ້ງອີກແມ່ນຊ່ວຍຄົນໃຫ້ຮູ້ວ່າ ພຣະເຢຊູຊົງເປັນພຣະບຸດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພຣະຄັມພີສອນວ່າ ຜູ້ຄົນສາມາດຮູ້ວ່າ



*ໂຢເຊັບ ສມິທ ແປພຣະຄັມພີມໍມອນໂດຍອຳນາດຂອງພຣະວິນຍານບໍຣິສຸດ.*

ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດໄດ້ຖ້າຫາກວ່າພຣະວິນຍານບໍຣິສຸດຊ່ວຍໃຫ້ຄົນນັ້ນຮູ້ເທົ່ານັ້ນ. ຂອງປະທານນີ້ເປັນພະຍານຈາກພຣະວິນຍານບໍຣິສຸດວ່າພຣະເຢຊູຊົງເປັນພຣະບຸດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຢ່າງແທ້ຈິງ ແລະວ່າ ພຣະອົງຊົງເປັນພຣະຜູ້ຊ່ວຍໃຫ້ລອດຂອງແຜ່ນດິນໂລກ.

*ຂອງປະທານແຫ່ງການເຊື່ອໃນປະຈັກພະຍານຂອງຄົນອື່ນ*

ຂອງປະທານແຫ່ງການເຊື່ອໃນປະຈັກພະຍານຂອງຄົນອື່ນຊ່ວຍຄົນໃຫ້ຮູ້ວ່າສິ່ງທີ່ຄົນອື່ນເວົ້າກ່ຽວກັບພຣະເຢຊູນັ້ນເປັນຄວາມຈິງຫລືບໍ່. ພຣະວິນຍານບໍຣິສຸດຊ່ວຍເຫລືອພວກເຮົາໃຫ້ຮູ້ເຖິງປະຈັກພະຍານທີ່ແທ້ຈິງແລະເຊື່ອມັນ.

*ຂອງປະທານແຫ່ງສັດທາ*

ຂອງປະທານແຫ່ງສັດທາຊ່ວຍເຫລືອພວກເຮົາເຊື່ອຟັງພຣະບັນຍັດຂອງພຣະເຢຊູ. ຖ້າປາສຈາກສັດທາແລ້ວ ພວກເຮົາຈະບໍ່ສາມາດໄດ້ຮັບຂອງປະທານແຫ່ງພຣະວິນຍານອື່ນໆອີກ. ຖ້າປາສຈາກສັດທາແລ້ວ ພວກເຮົາຈະບໍ່ສາມາດກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ຫລາຍໆຄົນມີສັດທາທີ່ເຂັ້ມແຂງໃນພຣະເຢຊູ ສາສດາຄົນນຶ່ງໃນພຣະຄັມພີມໍມອນມີສັດທາອັນຍິ່ງໃຫຍ່ໃນພຣະເຢຊູຈົນພຣະເຢຊູຊົງໄດ້ມາປາກົດຕໍ່ທ່ານ. ສາສດາໂຢເຊັບ ສມິທ ກໍມີສັດທາອັນຍິ່ງໃຫຍ່ແບບດຽວກັນໃນພຣະເຢຊູຄຣິສ ຈົນພຣະບິດາຜູ້ສະຖິດໃນສວັນແລະພຣະເຢຊູຊົງໄດ້ມາປາກົດຕໍ່ທ່ານຄືກັນ.

*ຂອງປະທານແຫ່ງການແປເປັນລາຍລັກອັກສອນ*

ຂອງປະທານແຫ່ງການແປເປັນລາຍລັກອັກສອນຊ່ວຍເຫລືອຜູ້ຄົນແປການຂຽນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະຂອງພຣະເຢຊູ ແລະແປການຂຽນຂອງຜູ້ຕິດຕາມຂອງພຣະອົງຈາກພາສານຶ່ງໄປເປັນພາສານຶ່ງ. ສາສດາໂຢເຊັບສມິທ ມີຂອງປະທານນີ້ ເມື່ອທ່ານແປພຣະຄັມພີມໍມອນ. ຂອງປະທານນີ້ຊ່ວຍເຫລືອຜູ້ແປໃຫ້ເຂົ້າໃຈຄວາມຫມາຍທີ່ແທ້ຈິງຂອງຄຳສອນແລະແປມັນຢ່າງຖືກຕ້ອງ.



ນ້ອງຊາຍຂອງຢາເຣັດໄດ້ມີສັດທາອັນຍິ່ງໃຫຍ່ຈົນລາວໄດ້ເຫັນພຣະຫັດ
ຂອງພຣະເຢຊູ ກ່ອນພຣະເຢຊູມາກຳເນີດຢູ່ໃນໂລກ.

*ຂອງປະທານແຫ່ງຄວາມຮູ້*

ຂອງປະທານແຫ່ງຄວາມຮູ້ຊ່ວຍເຫລືອຜູ້ຄົນໃຫ້ເຂົ້າໃຈເຖິງວຽກງານຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ຕັສວ່າ ພວກເຮົາຈະບໍ່ສາມາດກັບຄືນໄປຫາພຣະອົງ ຖ້າພວກເຮົາບໍ່ຮູ້ຫລືເຂົ້າໃຈສິ່ງທີ່ພຣະອົງຊົງຕ້ອງການໃຫ້ພວກເຮົາເຮັດ. ພວກເຮົາຕ້ອງເຂົ້າໃຈແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາທີ່ພຣະອົງຊົງມີໄວ້ໃຫ້ພວກເຮົາເພື່ອພວກເຮົາຈະສາມາດກັບຄືນໄປຫາພຣະອົງ.

ພຣະເຢຊູຊົງໄດ້ຕັສວ່າ ຄວາມຮູ້ທີ່ພວກເຮົາໄດ້ຮັບໃນໂລກນີ້ຈະຊ່ວຍພວກເຮົາໃນໂລກວິນຍານ ຫລັງຈາກພວກເຮົາຕາຍໄປ. ພຣະອົງຊົງຕ້ອງການໃຫ້ພວກເຮົາຮູ້ເຖິງການສອນກ່ຽວກັບພຣະອົງ, ກ່ຽວກັບພຣະບັນຍັດ, ກ່ຽວກັບສວັນແລະໂລກ, ກ່ຽວກັບສິ່ງທີ່ຈະເກີດຂຶ້ນ ແລະກ່ຽວກັບສິ່ງທີ່ເກີດຂຶ້ນໃນປະເທດຂອງພວກເຮົາແລະໃນປະເທດອື່ນໆ. ພຣະອົງຊົງຕັສວ່າ ພວກເຮົາຕ້ອງໃຊ້ຄວາມຮູ້ນີ້ຢ່າງສລາດ. ພວກເຮົາຄວນຂໍຄວາມຊ່ວຍເຫລືອຂອງພຣະວິນຍານບໍຣິສຸດໃນການສແວງຫາຄວາມຮູ້ນີ້.

*ຂອງປະທານແຫ່ງປັນຍາ*

ຂອງປະທານນີ້ຊ່ວຍເຫລືອຜູ້ຄົນໃຫ້ໃຊ້ຄວາມຮູ້ທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບໃຫ້ພວກເຂົາໃນເສັ້ນທາງທີ່ຖືກຕ້ອງແລະເຫມາະສົມ. ພວກເຮົາຄວນໃຊ້ຂອງປະທານນີ້ເພື່ອເຮັດໃຫ້ຊີວິດຂອງພວກເຮົາດີຂຶ້ນ ແລະເພື່ອສອນແລະໃຫ້ຄຳແນະນຳອັນສລາດແກ່ຄົນອື່ນ.

*ຂອງປະທານແຫ່ງການສອນ*

ຂອງປະທານແຫ່ງການສອນຊ່ວຍເຫລືອຜູ້ຄົນໃຫ້ສອນພຣະກິດຕິຄຸນແກ່ຄົນອື່ນໃນວິທີທີ່ພວກເຂົາຈະເຂົ້າໃຈ. ພວກເຮົາສາມາດມີຂອງປະທານນີ້ໄດ້ຖ້າພວກເຮົາມີສັດທາໃນພຣະເຢຊູ ແລະໂດຍການສຶກສາແລະການອະທິຖານ.

*ຂອງປະທານແຫ່ງການທຳນາຍ*

ຂອງປະທານແຫ່ງການທຳນາຍຊ່ວຍເຫລືອຜູ້ຄົນໃຫ້ຮູ້ແລະເຂົ້າໃຈເຖິງສິ່ງທີ່ໄດ້ເກີດຂຶ້ນໃນອາດີດ ສິ່ງທີ່ກຳລັງເກີດຂຶ້ນໃນປັດຈຸບັນ ແລະສິ່ງທີ່ຈະເກີດຂຶ້ນໃນອະນາຄົດ.

ສາສດາໄດ້ຮັບຂອງປະທານນີ້, ແຕ່ພວກເຮົາກໍສາມາດມີມັນເພື່ອຈະນຳພາຊີວິດຂອງພວກເຮົາໄດ້ຄືກັນ.

*ຂອງປະທານແຫ່ງການເປີດເຜີຍ*

ພຣະວິນຍານບໍຣິສຸດຊົງເປີດເຜີຍແກ່ຜູ້ຄົນເຖິງສິ່ງທີ່ຈະຊ່ວຍເຫລືອພວກເຂົາ. ພວກເຮົາແຕ່ລະຄົນສາມາດຮັບການເປີດເຜີຍເພື່ອຕົວເອງໄດ້, ແຕ່ສຳລັບການເປີດເຜີຍເພື່ອສາສນາຈັກແມ່ນໄດ້ມອບໃຫ້ແກ່ສາສດາເທົ່ານັ້ນ. ພວກເຮົາບໍ່ສາມາດຮັບການເປີດເຜີຍເພື່ອຜູ້ນຳຂອງສາສນາຈັກ. ທຸກສິ່ງທີ່ພຣະວິນຍານບໍຣິສຸດເປີດເຜີຍແກ່ພວກເຮົາແມ່ນປອງດອງກັບພຣະບັນຍັດອື່ນແລະການສອນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູ.

*ຂອງປະທານແຫ່ງການປິ່ນປົວ*

ຂອງປະທານແຫ່ງການປິ່ນປົວຊ່ວຍເຫລືອຜູ້ຄົນທີ່ເຈັບປ່ວຍໃຫ້ດີຂຶ້ນ, ບາງຄົນມີສັດທາທີ່ຈະໄດ້ຮັບການປິ່ນປົວ, ບາງຄົນມີສັດທາທີ່ຈະປິ່ນປົວຄົນອື່ນ.

*ຂອງປະທານແຫ່ງການກະທຳສິ່ງມະຫັສຈັນ*

ຂອງປະທານແຫ່ງການກະທຳສິ່ງມະຫັສຈັນມີໃຫ້ເພື່ອຊ່ວຍເຫລືອຜູ້ຄົນ. ການມະຫັສຈັນເປັນສິ່ງໃດສິ່ງນຶ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງກະທຳໃຫ້ພວກເຮົາຊຶ່ງເກີນກວ່າອຳນາດທີ່ພວກເຮົາມີທີ່ຈະເຮັດດ້ວຍຕົນເອງໄດ້. ພຣະເຢຊູຊົງຕັສໃນພຣະຄັມພີໃຫມ່ ແລະພຣະຄັມພີມໍມອນວ່າ ມັນຈະມີສິ່ງມະຫັສຈັນເກີດຂຶ້ນໃນບັນດາຜູ້ຄົນທີ່ເຊື່ອໃນພຣະອົງ.

*ຊາຕານສາມາດປອມແປງອຳນາດຂອງ ຂອງປະທານເຫລົ່ານີ້*

ຊາຕານສາມາດເຮັດສິ່ງທີ່ມີລັກສະນະຄ້າຍຄືກັນກັບຂອງປະທານອັນແທ້ຈິງນີ້. ຊາຕານສາມາດເຮັດໃຫ້ຕົນເອງມີລັກສະນະເຫມືອນດັ່ງທູດສວັນ ແລະສາມາດເຮັດສິ່ງທີ່ຊົ່ວຮ້າຍ ປາກົດເປັນສິ່ງດີແລະຖືກຕ້ອງ. ຊາຕານສາມາດເຮັດໃຫ້ສາສດາປອມປາກົດເບິ່ງເປັນສາສດາທີ່ແທ້ຈິງ ແລະຍັງສາມາດເຮັດສິ່ງມະຫັສຈັນຫລາຍຢ່າງເພື່ອຫລອກລວງຄົນ. ຫມໍຜີ, ຄົນນັບຖືຜີ ແລະຫລາຍຄົນໃນກຸ່ມນີ້ ຮັບອຳນາດຈາກຊາຕານແລະບໍ່ແມ່ນຜູ້ຕິດຕາມຂອງພຣະເຢຊູ. ພວກເຮົາຄວນຫນີໄກຈາກຄົນພວກນີ້.

ຊາຕານສາມາດເຮັດສິ່ງໃດສິ່ງນຶ່ງໃຫ້ມີລັກສະນະຈິງຈົນວ່າ ມີແຕ່ວິທີດຽວເທົ່ານັ້ນ ທີ່ພວກເຮົາຈະຮູ້ວ່າ ມັນເປັນສິ່ງບໍ່ຈິງ ແມ່ນຈະຕ້ອງທູນຖາມພຣະບິດາຜູ້ສະຖິດ ໃນສວັນຂອງພວກເຮົາ. ພວກເຮົາຈະມີຄວາມຮູ້ສຶກບໍ່ແນ່ນອນ, ບໍ່ມີຄວາມສງົບ, ເມື່ອຊາຕານຫລືຜູ້ຕິດຕາມຂອງມັນປອມແປງຂອງປະທານແຫ່ງພຣະວິນຍານ. ຂອງປະທານແຫ່ງການຮູ້ວ່າ ຂອງປະທານແຫ່ງພຣະວິນຍານເປັນຈິງແລະ ເປັນຂອງຊາຕານເອີ້ນວ່າ ຂອງປະທານແຫ່ງການດົນໃຈ.

### *ການສົນທະນາ*

- ຂອງປະທານທາງວິນຍານແມ່ນຫຍັງ?
- ພວກເຮົາຈະຮູ້ຄວາມແຕກຕ່າງລະຫວ່າງຂອງປະທານແຫ່ງພຣະວິນຍານ ທີ່ແທ້ຈິງ ແລະຂອງຊາຕານປອມແປງໄດ້ແນວໃດ?

## ພວກເຮົາຄວນທຳງານທີ່ຈະພັດທະນາແລະໃຊ້ຂອງປະທານທີ່ພວກເຮົາມີ

ພວກເຮົາສາມາດຮຽນຮູ້ວ່າ ພວກເຮົາມີຂອງປະທານຫຍັງຖ້າພວກເຮົາສຶກສາ, ອົດອາຫານແລະອະທິຖານ. ພວກເຮົາສາມາດໃຊ້ຂອງປະທານຂອງພວກເຮົາ ຖ້າພວກເຮົາເຊື່ອຟັງພຣະບັນຍັດຂອງພຣະເຢຊູເທົ່ານັ້ນ. ແລ້ວພວກເຮົາຢາກຈະ ໃຊ້ມັນເພື່ອຊ່ວຍເຫລືອຄົນອື່ນ ແລະຊ່ວຍເສີມສ້າງສາສນາຈັກຂອງພຣະເຢຊູຄຣິສ ແຫ່ງສິດທິຊົນຍຸກສຸດທ້າຍ. ຖ້າພວກເຮົາບໍ່ພັດທະນາແລະໃຊ້ຂອງປະທານຂອງ ພວກເຮົາ, ພວກເຮົາກໍຈະເສັຽມັນໄປ.

ພຣະເຢຊູຊົງຕັສວ່າ ພວກເຮົາບໍ່ຄວນອວດໂມ້ນຳຂອງປະທານແຫ່ງພຣະວິນຍານ ທີ່ພວກເຮົາໄດ້ຮັບ. ພວກເຮົາບໍ່ຄວນເວົ້າເຖິງຂອງປະທານເຫລົ່ານນຳຄົນທີ່ບໍ່ຄິດວ່າ ມັນສັກສິດ. ຂອງປະທານເຫລົ່ານີ້ຖືກມອບໃຫ້ພວກເຮົາ ເພື່ອຜົນປໂຍດຂອງ ພວກເຮົາ ແລະເພື່ອຈະໃຫ້ພອນແກ່ຄົນອື່ນ. ພວກເຮົາຕ້ອງຈື່ຈຳໄວ້ວ່າ ຂອງປະທານ ເຫລົ່ານີ້ສັກສິດ. ພຣະເຢຊູຊົງມອບຂອງປະທານເຫລົ່ານີ້ ຜ່ານພຣະວິນຍານ ບໍຣິສຸດ. ພຣະອົງພຽງແຕ່ຂໍຮ້ອງພວກເຮົາໃຫ້ສະແດງຄວາມຂອບພຣະທັຍ ພຣະອົງແລະໃຊ້ຂອງປະທານເຫລົ່ານີ້ ຕາມພຣະປະສົງຂອງພຣະອົງທີ່ຈະໃຫ້ ພວກເຮົາໃຊ້.

### *ການສົນທະນາ*

- ພວກເຮົາຈະຮູ້ວ່າ ພວກເຮົາມີຂອງປະທານອັນໃດແດ່ໄດ້ແນວໃດ?
- ພວກເຮົາຈະຮັກສາຂອງປະທານແຫ່ງພຣະວິນຍານໃຫ້ສັກສິດໄດ້ແນວໃດ?

### ຂອງປະທານແຫ່ງພຣະວິນຍານບໍຣິສຸດ ສາມາດມີຄຸນຄ່າຕໍ່ພວກເຮົາ

ພວກເຮົາຕ້ອງພະຍາຍາມທີ່ຈະເຮັດຄວາມດີສເມີ ແລະເຊື່ອຟັງພຣະເຢຊູ ບໍ່ສະນັ້ນອິດທິພົນຂອງພຣະວິນຍານບໍຣິສຸດຈະບໍ່ສະຖິດຢູ່ນຳພວກເຮົາ. ພວກເຮົາຕ້ອງພະຍາຍາມຄິດທີ່ຈະກະທຳຄວາມດີ. ເມື່ອພວກເຮົາເຮັດສິ່ງໃດສິ່ງນຶ່ງຜິດ, ພວກເຮົາຕ້ອງກັບໃຈ. ພວກເຮົາຕ້ອງພະຍາຍາມທີ່ຈະເຂົ້າໃຈສິ່ງທີ່ພຣະວິນຍານບໍຣິສຸດກຳລັງບອກພວກເຮົາ. ພວກເຮົາຕ້ອງຕິດຕາມຄຳແນະນຳຂອງພຣະອົງ.

ຖ້າພວກເຮົາມີຄວາມປາຖນາຢ່າງຈິງໃຈທີ່ຈະເຊື່ອຟັງພຣະເຢຊູ, ຂອງປະທານແຫ່ງພຣະວິນຍານບໍຣິສຸດຈະໃຫ້ພອນຊີວິດຂອງພວກເຮົາ. ພຣະອົງຈະຊ່ວຍພວກເຮົາໃຫ້ມີຄວາມສຸກໃນຊີວິດແລະຕຽມພວກເຮົາເພື່ອຈະມີຊີວິດນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

### *ການສົນທະນາ*

- ພວກເຮົາຕ້ອງເຮັດແນວໃດເພື່ອຈະໄດ້ຮັບຄວາມຊ່ວຍເຫລືອຈາກພຣະວິນຍານບໍຣິສຸດ?

### *ຂໍ້ອ້າງອີງ*

*ພຣະວິນຍານບໍຣິສຸດສາມາດພາພວກເຮົາໄປສູ່ຄວາມຈິງ*

- ໒ ນີໄຟ ໓໒:໕; ໂມໂຣໄນ ໑໐:໕–໗ (ພຣະວິນຍານບໍຣິສຸດ ບອກພວກເຮົາວ່າສິ່ງໃດສິ່ງນຶ່ງ ເປັນຄວາມຈິງ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້ມອບເສັ້ນທາງໃຫ້ແກ່ພວກເຮົາທີ່ຈະໄດ້ຮັບຂອງປະທານ ແຫ່ງພຣະວິນຍານບໍຣິສຸດ*

- ກິຈການ ໑໐:໔໔–໔໘; ໒ ນີໄຟ ໓໑:໑໗–໑໘ (ຂອງປະທານແຫ່ງພຣະວິນຍານບໍຣິສຸດຖືກມອບໃຫ້ຫລັງຈາກການຮັບບັບຕິສະມາ.)

- ໂມໂຣໄນ ໒:໔໕–໔໙ (ພວກເຮົາສາມາດໄດ້ຮັບພຣະວິນຍານບໍລິສຸດ.)

*ພວກເຮົາຕ້ອງກັບໃຈຈາກບາບຂອງພວກເຮົາເພື່ອຈະໄດ້ຮັບຂອງປະທານນີ້*

- ໂມໄຊຍາ ໔:໓໙ (ເມື່ອພວກເຮົາບໍ່ເຊື່ອຟັງພຣະບັນຍັດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ພວກເຮົາຈະເສັຽຂອງປະທານແຫ່ງພຣະວິນຍານບໍລິສຸດ.)
- ໂມໂຣໄນ ໒:໔໗ (ພຣະວິນຍານບໍລິສຸດຈະຢຸດໃຫ້ຄວາມຊ່ວຍເຫລືອພວກເຮົາຖ້າພວກເຮົາບໍ່ກັບໃຈ.)

*ພວກເຮົາໄດ້ຮັບພອນພິເສດອື່ນໆອີກຈາກພຣະວິນຍານບໍລິສຸດ*

- ໑ ໂກຣິນໂທ ໑໔:໑–໑໑; ໂມໂຣໄນ ໑໐:໗–໑໘; Doctrine and Covenants 46:10–33 (ພຣະວິນຍານບໍລິສຸດຊົງມອບຂອງປະທານແຫ່ງພຣະວິນຍານໃຫ້ແກ່ພວກເຮົາ.)
- ມາຣະໂກ ໑໙:໑໗–໑໗; ມໍມອນ ໘:໗–໔໔ (ຂອງປະທານແຫ່ງພຣະວິນຍານເປັນສ່ວນນຶ່ງຂອງພຣະກິດຕິຄຸນຂອງພຣະເຢຊູຄຣິສ.)

*ພວກເຮົາຄວນທຳງານທີ່ຈະພັດທະນາແລະໃຊ້ຂອງປະທານທີ່ພວກເຮົາມີ*

- ມັດທາຍ ໒໕:໑໔–໓໐ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບຂອງປະທານໃຫ້ພວກເຮົາ ເພື່ອໃຊ້ໃນວຽກງານຂອງພຣະອົງ, ແລະຖ້າພວກເຮົາບໍ່ໃຊ້ມັນ ພວກເຮົາກໍອາດຈະເສັຽມັນໄປ.)

*ຂອງປະທານແຫ່ງພຣະວິນຍານບໍລິສຸດ ສາມາດມີຄຸນຄ່າຕໍ່ພວກເຮົາ*

- ແອລມາ ໓໔:໓໗–໓໗ (ພວກເຮົາຄວນພະຍາຍາມເຮັດສິ່ງທີ່ພຣະວິນຍານບໍລິສຸດຊົງບອກໃຫ້ພວກເຮົາເຮັດ.)

# ສາສນາຈັກຂອງພຣະເຢຊູຄຣິສ

*ພາກຫົກ*





*ອັບຣາຣາມເຮັດພັນທະສັນຍາກັບພຣະເຈົ້າ.*

# ຜູ້ຕິດຕາມຂອງພຣະເຢຊູຄຣິສ

*ບົດທີ ໑໗*

*ຜູ້ຕິດຕາມຂອງພຣະເຢຊູຄຣິສແຕກຕ່າງຈາກຄົນອື່ນໆ. ແມ່ນໃຜເປັນຜູ້ຕິດຕາມຂອງພຣະອົງ? ພວກເຂົາແຕກຕ່າງແນວໃດ?*

**ຜູ້ຕິດຕາມຂອງພຣະເຢຊູຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ**

ຜູ້ຕິດຕາມຂອງພຣະເຢຊູແມ່ນຄົນຜູ້ທີ່ເຊື່ອໃນພຣະອົງ ແລະເຊື່ອຟັງພຣະອົງ. ພວກເຂົາຮຽນເຖິງແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ດັ່ງທີ່ພຣະເຢຊູໄດ້ສອນພວກເຂົາ ແລະພວກເຂົາຕ້ອງການທີ່ຈະເຮັດຕາມຄຳສອນນັ້ນ. ພວກເຂົາຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະເຊື່ອວ່າ ພຣະອົງຊົງຢາກໃຫ້ພວກເຂົາມີຄວາມສຸກໃນຊີວິດຂອງພວກເຂົາເທົ່າທີ່ຈະເປັນໄປໄດ້. ພວກເຂົາເຊື່ອວ່າ ພຣະເຢຊູຊົງເປັນພຣະບຸດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພວກເຂົາເຊື່ອວ່າ ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ. ພວກເຂົາເຊື່ອວ່າ ພຣະເຢຊູຊົງເຮັດໃຫ້ເປັນໄປໄດ້ສຳລັບພວກເຂົາທີ່ຈະກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນ. ພວກເຂົາເຊື່ອວ່າ ໂດຍການຕິດຕາມພຣະເຢຊູ ແລະເຊື່ອຟັງພຣະບັນຍັດຂອງພຣະອົງເທົ່ານັ້ນ ພວກເຂົາຈຶ່ງຈະໄດ້ຮັບການອະພັຍບາບ ແລະສາມາດກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກ.

ຄົນຜູ້ທີ່ຕິດຕາມພຣະເຢຊູມີຄວາມກະຕັນຍູຕໍ່ພຣະຜູ້ເປັນເຈົ້າ ແລະພຣະເຢຊູສຳລັບທຸກສິ່ງທີ່ພວກພຣະອົງຊົງໄດ້ກະທຳເພື່ອພວກເຂົາ. ພວກເຂົາຢາກເຊື່ອຟັງພຣະເຢຊູ. ພວກເຂົາກັບໃຈຈາກບາບຂອງພວກເຂົາ. ພວກເຂົາຮັບບັບຕິສະມາແລະຮັບເອົາ



ໂມເຊມອບຖານະປະໂຣຫິດໃຫ້ແອຣັນໂດຍການວາງມື.

ຂອງປະທານແຫ່ງພຣະວິນຍານບໍຣິສຸດ. ພວກເຂົາເຂົ້າໃຈວ່າ ທຸກໆຄົນສຳຄັນຕໍ່ພຣະຜູ້ເປັນເຈົ້າ. ພວກເຂົາພະຍາຍາມທີ່ຈະຊ່ວຍຄົນອື່ນເທົ່າທີ່ຈະເຮັດໄດ້.

ຜູ້ຕິດຕາມພຣະເຢຊູຢ່າງແທ້ຈິງໄດ້ເຮັດຄຳສັນຍາທີ່ສັກສິດ. ພວກເຂົາສັນຍາຕໍ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ວ່າພວກເຂົາຈະຖືກເອີ້ນຕາມພຣະນາມຂອງພຣະເຢຊູຄຣິສ. ນີ້ຫມາຍຄວາມວ່າ ພວກເຂົາຈະເປັນທີ່ຮູ້ຈັກກັນວ່າ ສະມາຊິກຂອງສາສນາຈັກຂອງພຣະອົງ, ເພື່ອຈະຮັບແລະຕິດຕາມຄຳສອນຂອງພຣະອົງທັງຫມົດ ແລະຈະຈື່ຈຳພຣະອົງສເມີ. ພວກເຂົາຍັງສັນຍາວ່າ ຈະຮັກຄົນອື່ນໆແລະຊ່ວຍເຫລືອຜູ້ຄົນ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໃຫ້ຄຳສັນຍາສັກສິດແກ່ຜູ້ຕິດຕາມຂອງພຣະເຢຊູ. ບາງສິ່ງທີ່ພຣະອົງຊົງສັນຍາແມ່ນ–

໑. ຮັບພວກເຂົາເປັນສະມາຊິກຂອງສາສນາຈັກຂອງພຣະເຢຊູຄຣິສ.
໒. ມອບຂອງປະທານແຫ່ງພຣະວິນຍານບໍຣິສຸດໃຫ້ແກ່ພວກເຂົາ.
໓. ຊ່ວຍເຫລືອພວກເຂົາໃຫ້ໄດ້ຮັບສິ່ງທີ່ພວກເຂົາຕ້ອງການ.
໔. ມອບອຳນາດຂອງພຣະອົງໃຫ້ແກ່ພວກເຂົາ ເພື່ອພວກເຂົາຈະສາມາດເຮັດວຽກງານຂອງພຣະອົງ.
໕. ມອບພອນອັນຍິ່ງໃຫຍ່ໃຫ້ແກ່ພວກເຂົາໃນເວລານີ້ ແລະຊົ່ວນິຣັນດອນ.
໖. ໃຫ້ໂອກາດພວກເຂົາທີ່ຈະກັບຄືນໄປຢູ່ນຳພຣະອົງ ຖ້າພວກເຂົາເຊື່ອຟັງພຣະເຢຊູໄປເລື້ອຍໆ.

### *ການສົນທະນາ*

- ຜູ້ຕິດຕາມພຣະເຢຊູແຕກຕ່າງຈາກຄົນອື່ນແນວໃດ?
- ຜູ້ຕິດຕາມພຣະເຢຊູສັນຍາວ່າ ຈະເຮັດອັນໃດ?
- ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະພຣະເຢຊູຊົງສັນຍາກັບຜູ້ຕິດຕາມຂອງພຣະອົງແນວໃດ?

## ພຣະເຢຊູຊົງມອບອຳນາດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໃຫ້ແກ່ຜູ້ຕິດຕາມຂອງພຣະອົງ

ພຣະເຢຊູຊົງມອບອຳນາດໃຫ້ຜູ້ຕິດຕາມພຣະອົງເພື່ອຊ່ວຍພຣະອົງໃນການດຳເນີນ

ງານຂອງພຣະອົງ. ອຳນາດນີ້ເອີ້ນວ່າ ຖານະປະໂຣຫິດ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບອຳນາດນີ້ໃຫ້ແກ່ພຣະເຢຊູ.

ການມີຖານະປະໂຣຫິດເປັນພອນອັນຍິ່ງໃຫຍ່. ຖານະປະໂຣຫິດເປັນອຳນາດທີ່ສັກສິດ. ມີແຕ່ຜູ້ຕິດຕາມທີ່ແທ້ຈິງຂອງພຣະເຢຊູ ແລະພະຍາຍາມຢ່າງຈິງໃຈທີ່ຈະຮັກສາພຣະບັນຍັດຂອງພຣະອົງ ຈະໄດ້ຮັບອະນຸຍາດໃຫ້ມີຖານະປະໂຣຫິດ.

ເມື່ອຊາຍຄົນໃດຄົນນຶ່ງມີຖານະປະໂຣຫິດ, ຊາຍຄົນນັ້ນສາມາດເຮັດບາງສິ່ງບາງຢ່າງທີ່ພຣະເຢຊູຊົງຕ້ອງການໃຫ້ກະທຳແທນ. ຄົນນັ້ນສາມາດສອນຄົນອື່ນກ່ຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະພຣະເຢຊູ, ໃຫ້ບັບຕິສະມາຜູ້ຄົນ, ແລະມອບຂອງປະທານແຫ່ງພຣະວິນຍານບໍຣິສຸດໃຫ້ເຂົາເຈົ້າ. ຜູ້ຊາຍທີ່ມີຖານະປະໂຣຫິດສາມາດໃຫ້ພອນແກ່ຄອບຄົວ ເມື່ອພວກເຂົາເຈັບປ່ວຍແລະມີບັນຫາອື່ນໆ. ເມື່ອໃດກໍຕາມເມື່ອຜູ້ຄົນເຊື່ອໃນພຣະເຢຊູແລະເຊື່ອຟັງພຣະບັນຍັດ, ພຣະເຢຊູຈະມອບຖານະປະໂຣຫິດ ແລະພອນອື່ນໆໃຫ້ແກ່ພວກເຂົາ.

### *ການສົນທະນາ*

- ຖານະປະໂຣຫິດແມ່ນຫຍັງ?
- ເປັນຫຍັງພຣະເຢຊູຈຶ່ງມອບຖານະປະໂຣຫິດໃຫ້ແກ່ຜູ້ຕິດຕາມຂອງພຣະອົງ?

## ຫລາຍໆຄົນໄດ້ເຊື່ອໃນພຣະເຢຊູແລະໄດ້ຕິດຕາມພຣະບັນຍັດຂອງພຣະອົງກ່ອນພຣະອົງມາສູ່ໂລກນີ້

*ອາດາມແລະເອວາແລະລູກໆຂອງພວກທ່ານບາງຄົນໄດ້ເຊື່ອໃນພຣະເຢຊູແລະໄດ້ຕິດຕາມພຣະບັນຍັດຂອງພຣະອົງກ່ອນພຣະອົງຊົງມາຢູ່ໃນໂລກ.*

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກອາດາມແລະເອວາໃຫ້ເຊື່ອໃນພຣະເຢຊູຄຣິສ ແລະໃຫ້ເຊື່ອຟັງພຣະບັນຍັດຂອງພຣະອົງ. ພວກທ່ານຖືກບອກວ່າພຣະອົງຈະຊົງສະເດັດມາສູ່ໂລກໃນວັນໃດວັນນຶ່ງ. ອາດາມແລະເອວາໄດ້ສັນຍາວ່າພວກທ່ານຈະເຊື່ອຟັງ. ພວກທ່ານກໍໄດ້ຮັກສາຄຳສັນຍານັ້ນ ແລະໄດ້ຮັບບັບຕິສະມາ ແລະໄດ້ຮັບຂອງປະທານແຫ່ງພຣະວິນຍານບໍຣິສຸດ.

ກ່ອນພຣະເຢຊູມາຢູ່ໃນໂລກນີ້, ພຣະອົງຊົງໄດ້ມອບຖານະປະໂຣຫິດໃຫ້ແກ່ອາດາມ. ພຣະອົງຊົງອະນຸຍາດໃຫ້ອາດາມມອບຖານະປະໂຣຫິດໃຫ້ແກ່ລູກຊາຍຂອງທ່ານຜູ້ທີ່ເຊື່ອຟັງພຣະເຢຊູ. ອາດາມວາງມືຂອງທ່ານໃສ່ເທິງຫົວຂອງລູກຊາຍຜູ້ທີ່ດີ ແລະໄດ້ມອບຖານະປະໂຣຫິດໃຫ້ແກ່ພວກເຂົາ. ຕໍ່ມາ, ລູກຊາຍຂອງອາດາມກໍມອບຖານະປະໂຣຫິດໃຫ້ແກ່ລູກຊາຍຂອງເຂົາເຈົ້າໃນແບບວິທີດຽວກັນ.

### *ການສົນທະນາ*

- ອາດາມແລະເອວາເຮັດແນວໃດທີ່ຈະກາຍມາເປັນຜູ້ຕິດຕາມຂອງພຣະເຢຊູ?
- ຜູ້ຕິດຕາມຂອງພຣະເຢຊູຄຣິສໄດ້ຮັບຖານະປະໂຣຫິດໄດ້ແນວໃດ?

### *ອັບຣາຣາມໄດ້ໃຫ້ພອນແກ່ພຣະເຢຊູແລະຕິດຕາມພຣະບັນຍັດຂອງພຣະອົງ*

ອັບຣາຣາມແລະຄອບຄົວຂອງທ່ານເຊື່ອໃນພຣະເຢຊູ. ພວກເພິ່ນເຊື່ອວ່າ ພຣະອົງຈະສະເດັດມາສູ່ໂລກໃນວັນໃດວັນນຶ່ງ. ອັບຣາຣາມໄດ້ສັນຍາກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາວ່າ ທ່ານຈະເຊື່ອຟັງພຣະເຢຊູ ແລະເຮັດວຽກງານຂອງພຣະອົງ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສັນຍາຕໍ່ອັບຣາຣາມວ່າ, ຖ້າຫາກທ່ານຊື່ສັດ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງໃຫ້ພອນແກ່ທ່ານແລະລູກຫລານຂອງທ່ານ. ສິ່ງຕໍ່ໄປນີ້ ເປັນບາງສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ສັນຍາ:

໑. ພຣະອົງຈະຊົງມອບຖານະປະໂຣຫິດໃຫ້ແກ່ອັບຣາຣາມແລະລູກຫລານຂອງທ່ານ.
໒. ພຣະອົງຈະຊົງມອບແຜ່ນດິນໃຫ້ແກ່ອັບຣາຣາມ ແລະລູກຫລານຂອງທ່ານເພື່ອອາສັຍຢູ່.
໓. ພຣະອົງຈະຊົງມອບລູກຫລານຈຳນວນຫລວງຫລາຍໃຫ້ແກ່ອັບຣາຣາມ.
໔. ລູກຫລານຂອງອັບຣາຣາມຫລາຍຄົນຈະເປັນຜູ້ຕິດຕາມຂອງພຣະເຢຊູ.
໕. ລູກຫລານຂອງອັບຣາຣາມຫລາຍຄົນຈະເລືອກເຮັດວຽກງານຂອງພຣະເຢຊູແລະຈະສອນຄົນອື່ນໆ ກ່ຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູ.

ອັບຣາຮາມສອນລູກໆຂອງທ່ານໃຫ້ເຊື່ອໃນພຣະເຢຊູແລະເຊື່ອຟັງພຣະບັນຍັດຂອງພຣະອົງ. ອັບຣາຮາມໄດ້ມອບອຳນາດຖານະປະໂຣຫິດໃຫ້ລູກຊາຍຂອງທ່ານຄົນນຶ່ງຊື່ວ່າ ອີຊາກ. ອີຊາກໄດ້ມອບອຳນາດຖານະປະໂຣຫິດໃຫ້ລູກຊາຍຂອງຕົນຊື່ວ່າ ຢາໂຄບ. ຕໍ່ມາ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງປ່ຽນຊື່ຂອງຢາໂຄບມາເປັນ ອິສຣາເອນ. ອິສຣາເອນມີລູກຊາຍສິບສອງຄົນ. ທ່ານສອນພວກເຂົາໃຫ້ເຊື່ອໃນພຣະເຢຊູ ແລະເຊື່ອຟັງພຣະບັນຍັດຂອງພຣະອົງ. ພວກເຂົາມີຖານະປະໂຣຫິດ. ລູກຫລານຂອງພວກລູກຊາຍຂອງອິສຣາເອນຖືກເອີ້ນວ່າສິບສອງເຜົ່າແຫ່ງອິສຣາເອນ.

### *ການສົນທະນາ*

- ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສັນຍາຫຍັງແດ່ກັບອັບຣາຮາມ?
- ອິສຣາເອນແມ່ນໃຜ?

*ຜູ້ຄົນຂອງອິສຣາເອນເຊື່ອໃນພຣະເຢຊູ ແລະເຊື່ອຟັງພຣະບັນຍັດຂອງພຣະອົງ*

ຍ້ອນວ່າ ມັນບໍ່ມີອາຫານກິນພຽງພໍໃນແຜ່ນດິນຂອງພວກເຂົາ, ອິສຣາເອນແລະລູກຊາຍຂອງທ່ານຈຶ່ງພາກັນຍ້າຍໄປຢູ່ໃນແຜ່ນດິນນຶ່ງເອີ້ນວ່າ ເອຢິບ. ຜູ້ຄົນທີ່ຢູ່ປະເທດເອຢິບໃຫ້ພວກເຂົາເຮັດວຽກຢ່າງຫນັກ. ພວກເຂົາຖືກບັງຄັບໃຫ້ຢູ່ໃນປະເທດເອຢິບຢ່າງຂ້າທາດ. ຄົນເອຢິບບໍ່ອະນຸຍາດໃຫ້ພວກເຂົາກັບຄືນໄປສູ່ແຜ່ນດິນທີ່ພຣະເຢຊູຊົງໄດ້ສັນຍາວ່າຈະມອບໃຫ້ພວກເຂົາ.

ຫລາຍປີຜ່ານໄປ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງເລືອກຊາຍຄົນນຶ່ງຊື່ວ່າ ໂມເຊ ໃຫ້ນຳພາລູກຫລານຂອງອິສຣາເອນອອກຈາກປະເທດເອຢິບ. ໂມເຊໃຊ້ອຳນາດແຫ່ງຖານະປະໂຣຫິດ ເພື່ອຊ່ວຍເຫລືອພວກເຂົາຫນີຈາກຜູ້ຄົນໃນປະເທດເອຢິບ. ໂມເຊໄດ້ນຳພາພວກເຂົາມາສູ່ແຜ່ນດິນທີ່ພຣະເຢຊູຊົງໄດ້ສັນຍາວ່າຈະມອບໃຫ້ພວກເຂົາ. ແຜ່ນດິນນີ້ເອີ້ນວ່າ ການາອານ. ປັດຈຸບັນນີ້ ແຜ່ນດິນນີ້ເອີ້ນວ່າ ອິສຣາເອນ.

### *ການສົນທະນາ*

- ໂມເຊໃຊ້ອຳນາດຫຍັງແດ່ເພື່ອຊ່ວຍເຫລືອຜູ້ຄົນຂອງພຣະເຢຊູໃຫ້ຫນີຈາກປະເທດເອຢິບ?

*ລູກຫລານຂອງອິສຣາເອນຢຸດເຊື່ອຖືພຣະເຢຊູ*

ຫລັງຈາກລູກຫລານຂອງອິສຣາເອນໄດ້ອາສັຍຢູ່ໃນແຜ່ນດິນການາອານເປັນເວລາຫລາຍປີ, ພວກເຂົາເຊົາເຊື່ອຖືໃນພຣະເຢຊູແລະເຊົາຮັກສາພຣະບັນຍັດຂອງພຣະອົງ. ພຣະເຢຊູຊົງສົ່ງສາສດາມາບອກໃຫ້ພວກເຂົາກັບໃຈ ແລະໃຫ້ເຊື່ອຟັງພຣະບັນຍັດຂອງພຣະອົງ. ເອຊາຢາ, ເອລີຢາ ແລະເຢເຣມີຢາ ເປັນສາສດາບາງຄົນທີ່ພຣະເຢຊູຊົງໄດ້ສົ່ງມາ. ມັນກໍຍັງມີສາສດາອື່ນອີກຫລາຍໆຄົນ.

ແຕ່ລູກຫລານຂອງອິສຣາເອນບໍ່ໄດ້ກັບໃຈ. ສະນັ້ນ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈຶ່ງປ່ອຍໃຫ້ຄົນອື່ນມາໃນແຜ່ນດິນ ແລະປົກຄອງພວກເຂົາ ແລະເອົາແຜ່ນດິນຂອງພວກເຂົາ ຈົນເຮັດໃຫ້ຫລາຍໆຄົນແຕກໄປຢູ່ແຜ່ນດິນໃຫມ່. ນີ້ເຮັດໃຫ້ຜູ້ຄົນຖ່ອມໃຈ ແລະເຮັດໃຫ້ພວກເຂົາຈື່ຈຳພຣະເຢຊູ ແລະເຊື່ອຟັງພຣະອົງ. ແຕ່ຫລາຍປີກ່ອນພຣະເຢຊູຈະຊົງລົງມາກຳເນີດໃນເບດເລເຮັມ, ຜູ້ຄົນອິສຣາເອນກາຍເປັນຄົນຊົ່ວອີກ ແລະພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້ປ່ອຍໃຫ້ຊາວໂຣມມາຈັບເອົາຊາວອິສຣາເອນໄປ. ຊາວໂຣມໄດ້ຍຶດເອົາແຜ່ນດິນແລະພຣະວິຫານຂອງພວກເຂົາໄປ.

*ການສົນທະນາ*

- ແມ່ນຫຍັງເກີດຂຶ້ນເມື່ອຜູ້ຄົນລືມຄຳສັນຍາຂອງພວກເຂົາຕໍ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະຢຸດເຊື່ອຟັງພຣະເຢຊູ?

*ພຣະເຢຊູຊົງສະເດັດມາສູ່ໂລກແລະຈັດຕັ້ງຜູ້ຕິດຕາມຂອງພຣະອົງ*

ເມື່ອພຣະເຢຊູມາຢູ່ໃນໂລກນີ້, ພຣະອົງຊົງສອນຜູ້ຄົນວ່າ ພຣະອົງຊົງເປັນພຣະບຸດຂອງພຣະຜູ້ເປັນເຈົ້າ. ພຣະອົງຊົງສອນວ່າ ພວກເຂົາຈະບໍ່ທໍຣະມານຕລອດໄປເປັນນິດເພາະບາບຂອງພວກເຂົາ ຖ້າຫາກພວກເຂົາເຊື່ອຟັງຄຳສອນຂອງພຣະອົງ. ພຣະອົງຊົງບອກພວກເຂົາໃຫ້ເຊື່ອໃນພຣະອົງ ແລະໃຫ້ກັບໃຈ. ພຣະອົງຊົງຕັສວ່າພວກເຂົາຕ້ອງຮັບບັບຕິສະມາ ແລ້ວພຣະອົງຊົງສັນຍາວ່າ ພຣະອົງຈະສົ່ງພຣະວິນຍານບໍຣິສຸດໃຫ້ມາຊ່ວຍເຫລືອພວກເຂົາ. ພຣະອົງຊົງສອນພວກເຂົາເຖິງຄວາມຮັກແລະໃຫ້ເຊື່ອຟັງພຣະຜູ້ເປັນເຈົ້າ. ພຣະອົງຍັງໄດ້ສອນພວກເຂົາໃຫ້ຮັກຄົນອື່ນ ແລະໃຫ້ຊ່ວຍເຊິ່ງກັນແລະກັນອີກ.

ຄົນຜູ້ທີ່ເຊື່ອໃນພຣະເຢຊູແລະເຊື່ອຟັງພຣະອົງກາຍມາເປັນຜູ້ຕິດຕາມຂອງພຣະອົງ. ພຣະອົງຊົງຈັດຕັ້ງຄົນເຂົ້າເປັນກຸ່ມເອີ້ນວ່າ ສາສນາຈັກຂອງພຣະເຢຊູຄຣິສ. ພຣະອົງຊົງມອບຖານະປະໂຣຫິດໃຫ້ພວກຜູ້ຊາຍເພື່ອຈະໄດ້ເປັນຜູ້ນຳແລະຄູສອນໃນສາສນາຈັກຂອງພຣະອົງ.

### *ການສົນທະນາ*

- ພຣະເຢຊູຊ່ວຍຜູ້ຄົນໃຫ້ຕິດຕາມພຣະອົງໄດ້ແນວໃດ?
- ຜູ້ຄົນຈຳເປັນຕ້ອງເຮັດແນວໃດເພື່ອຈະໄດ້ກາຍມາເປັນຜູ້ຕິດຕາມຂອງພຣະເຢຊູ?

### ການເປັນຜູ້ຕິດຕາມຜູ້ນຶ່ງຂອງພຣະເຢຊູ ແມ່ນເປັນສິດທິພິເສດຫລາຍທີ່ສຸດ

ຄົນທີ່ຕິດຕາມພຣະເຢຊູມີຄວາມສຸກ. ພວກເຂົາຮູ້ເຖິງແຜນທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມີໃຫ້ພວກເຂົາ. ພວກເຂົາຮູ້ວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກພວກເຂົາ. ພວກເຂົາຮູ້ວ່າ ພຣະອົງຊົງຕ້ອງການໃຫ້ພວກເຂົາຕິດຕາມພຣະເຢຊູ ເພື່ອວ່າພຣະເຢຊູຈະຊ່ວຍພວກເຂົາກັບຄືນໄປຫາພຣະອົງ. ພວກເຂົາຮູ້ເຖິງສິ່ງທີ່ພວກເຂົາຄວນເຮັດທີ່ຈະມີຄວາມສຸກ. ພວກເຂົາມີຂອງປະທານແຫ່ງພຣະວິນຍານບໍຣິສຸດທີ່ຈະຊ່ວຍເຫລືອແລະໃຫ້ຄວາມອົບອຸ່ນແກ່ພວກເຂົາ. ເມື່ອພວກເຂົາມີບັນຫາ, ພວກເຂົາຮູ້ວ່າ ພຣະເຢຊູຈະຊົງຊ່ວຍເຫລືອພວກເຂົາ, ພວກເຂົາຮູ້ວ່າພຣະຜູ້ເປັນເຈົ້າຈະໃຫ້ພອນພວກເຂົາ ຖ້າພວກເຂົາມີສັດທາທີ່ຈະຕິດຕາມພຣະເຢຊູ.

ຄົນຜູ້ທີ່ຕິດຕາມພຣະເຢຊູມີຄວາມກະຕັນຍູຕໍ່ພອນຫລາຍໆແນວທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຊົງປະທານໃຫ້ແກ່ພວກເຂົາ. ພວກເຂົາຂອບພຣະທັຍພຣະບິດາຜູ້ສະຖິດໃນສວັນສຳລັບພອນເຫລົ່ານີ້ ເມື່ອພວກເຂົາອະທິຖານ.

ຄົນຜູ້ທີ່ບໍ່ຕິດຕາມພຣະເຢຊູສາມາດກາຍມາເປັນຜູ້ຕິດຕາມຂອງພຣະອົງໄດ້. ພວກເຂົາສາມາດຮຽນກ່ຽວກັບພຣະອົງ ໂດຍການອ່ານພຣະຄັມພີແລະໂດຍການຟັງຜູ້ນຳຂອງສາສນາຈັກຂອງພຣະອົງ. ພວກເຂົາສາມາດເຊື່ອໃນພຣະອົງ, ກັບໃຈແລະຮັບບັບຕິສະມາ. ຖ້າພວກເຂົາເຊື່ອໃນພຣະເຢຊູ, ພວກເຂົາຈະສາມາດຮັບສິ່ງດຽວກັນທີ່ພຣະຜູ້ເປັນເຈົ້າຊົງໄດ້ສັນຍາໄວ້ແກ່ຜູ້ຕິດຕາມຂອງພຣະເຢຊູ.

## *ການສົນທະນາ*

- ເປັນຫຍັງມັນຈຶ່ງເປັນສິດທິພິເສດທີ່ຈະເປັນຜູ້ຕິດຕາມຜູ້ນຶ່ງຂອງພຣະເຢຊູ?

## *ຂໍ້ອ້າງອີງ*

*ຜູ້ຕິດຕາມຂອງພຣະເຢຊູຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ*

- ໂຢຮັນ ໗:໑໘ (ພຣະເຢຊູຊົງຕ້ອງການໃຫ້ພວກເຮົາຕິດຕາມພຣະອົງ.)
- ໒ ນີໄຟ ໓໑:໑໒ (ພວກເຮົາຖືກບັນຊາໃຫ້ຕິດຕາມພຣະເຢຊູຄຣິສ ແລະກະທຳຕາມການກະທຳຂອງພຣະອົງ.)
- ໂມໄຊຍາ ໒:໔໑ (ຄົນຜູ້ເຊື່ອຟັງພຣະບັນຍັດຂອງພຣະເຢຊູໄດ້ຮັບພອນໃນຫລາຍໆວິທີ.)
- ໓ ນີໄຟ ໑໘:໓໗ (ພຣະເຢຊູຊົງມອບອຳນາດໃຫ້ສານຸສິດຂອງພຣະອົງທີ່ຈະມອບຂອງປະທານແຫ່ງພຣະວິນຍານບໍຣິສຸດໃຫ້ຄົນອື່ນ.)

*ພຣະເຢຊູຊົງມອບອຳນາດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໃຫ້ແກ່ຜູ້ຕິດຕາມຂອງພຣະອົງ*

- ອົບພະຍົບ ໓ (ໂມເຊໄດ້ຮັບອຳນາດຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.)
- ຈົດບັນຊີ ໒໗:໑໘–໒໓ (ໂມເຊວາງມືເທິງຫົວຂອງໂຢຊວຍແລະມອບອຳນາດຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໃຫ້ແກ່ລາວ.)

*ຫລາຍໆຄົນເຊື່ອໃນພຣະເຢຊູແລະຕິດຕາມພຣະບັນຍັດຂອງພຣະອົງກ່ອນພຣະອົງມາສູ່ໂລກນີ້*

- ປະຖົມມະການ ໑໒:໑–໒; ໑໗:໑–໗ (ພຣະອົງຊົງມອບຄຳສັນຍາແກ່ອັບຣາຮາມ, ຜູ້ຕິດຕາມຂອງພຣະເຢຊູ.)
- ພຣະບັນຍັດສອງ ໒໘:໙–໑໐ (ພຣະຜູ້ເປັນເຈົ້າຊົງໃຫ້ສັນຍາແກ່ລູກຫລານອິສຣາເອນ.)
- ເຢເຣມີຢາ ໒໓:໓–໔ (ພຣະເຢຊູຈະຊົງຮວບໂຮມລູກຫລານຂອງອິສຣາເອນເຂົ້າກັນຫລັງຈາກພວກເຂົາກັບໃຈ.)

- ເອເຊກຽນ ໒໐:໓໓–໓໗ (ລູກຫລານຂອງອິສຣາເອນຈະຖືກຮວບໂຮມເຂົ້າກັນ.)
- ລູກາ ໗:໑໓ (ພຣະເຢຊູຊົງເລືອກອັຄສາວົກສິບສອງຄົນຂອງພຣະອົງ.)
- ໂຢຮັນ ໑໕:໑໗ (ພຣະເຢຊູຊົງມອບອຳນາດແລະພະລັງໃຫ້ແກ່ອັຄສາວົກຂອງພຣະອົງ.)
- ໓ ນີໄຟ ໒໑:໒໗–໒໙ (ຜູ້ຕິດຕາມຂອງພຣະເຢຊູຄຣິສຈະຖືກຮວບໂຮມເຂົ້າກັນຈາກຫລາຍໆປະເທດ.)

*ການເປັນຜູ້ຕິດຕາມຜູ້ນຶ່ງຂອງພຣະເຢຊູ ແມ່ນເປັນສິດທິພິເສດຫລາຍທີ່ສຸດ*

- ໒ ນີໄຟ ໓໑:໑໓ (ພອນພິເສດມີຢູ່ໄວ້ແກ່ຄົນທີ່ຕິດຕາມພຣະເຢຊູ ແລະຜູ້ກະທຳຕາມຄຳສອນຂອງພຣະອົງ.)
- ແອລມາ ໕:໕໗ (ຄົນຜູ້ຕິດຕາມພຣະເຢຊູຈະຖືກນັບເຂົ້າກັບຜູ້ຊອບທັມ.)
- ໂມໂຣໄນ ໗:໔໘ (ຜູ້ຕິດຕາມຂອງພຣະເຢຊູຄຣິສຈະກາຍມາເປັນເຫມືອນດັ່ງພຣະຜູ້ເປັນເຈົ້າ.)

# ສາສນາຈັກທີ່ພຣະເຢຊູຊົງຈັດຕັ້ງ

*ບົດທີ ໑໗*

---

*ພຣະເຢຊູຊົງຈັດຕັ້ງສາສນາຈັກເມື່ອພຣະອົງຊົງຢູ່ໃນໂລກ. ສາສນາຈັກນັ້ນຊື່ຫຍັງ? ໃຜເປັນຜູ້ນຳຂອງສາສນາຈັກ?*

**ພຣະເຢຊູຊົງເປັນຜູ້ນຳຂອງສາສນາຈັກທີ່ພຣະອົງຊົງໄດ້ຈັດຕັ້ງ**

ເມື່ອພຣະເຢຊູຊົງຢູ່ໃນໂລກ, ພຣະອົງຊົງໄດ້ຈັດຕັ້ງສາສນາຈັກຂຶ້ນ. ສາສນາຈັກນີ້ເອີ້ນວ່າ ສາສນາຈັກຂອງພຣະເຢຊູຄຣິສ. ສະມາຊິກຂອງສາສນາຈັກຂອງພຣະເຢຊູຖືກເອີ້ນວ່າ ສິດທິຊົນ. ພຣະເຢຊູເອງຊົງເປັນຜູ້ນຳຂອງສາສນາຈັກ. ພຣະອົງຊົງເລືອກຜູ້ຊາຍສິບສອງຄົນໃຫ້ຊ່ວຍພຣະອົງນຳພາສາສນາຈັກ. ຜູ້ຊາຍເຫລົ່ານີ້ເອີ້ນວ່າ ອັຄສາວົກ. ອັຄສາວົກເຫລົ່ານີ້ເປັນສາສດາຄືກັນ. ພຣະເຢຊູຊົງວາງພຣະຫັດໃສ່ເທິງຫົວຂອງພວກເຂົາ ແລະມອບຖານະປະໂຣຫິດໃຫ້ແກ່ພວກເຂົາແຕ່ລະຄົນ. ພຣະອົງຊົງມອບພາລະໃຫ້ອັຄສາວົກແຕ່ລະຄົນ. ອັຄສາວົກແລະສາສດາເຫລົ່ານີ້ໄດ້ເປັນຜູ້ນຳຂອງສາສນາຈັກຂອງພຣະເຢຊູຄຣິສ.

ໃນສາສນາຈັກຂອງພຣະເຢຊູຄຣິສ, ຜູ້ຊາຍທີ່ໄດ້ຮັບຖານະປະໂຣຫິດຈະວາງມືຂອງເຂົາເຈົ້າໃສ່ເທິງຫົວຂອງຊາຍຄົນອື່ນທີ່ດີ ແລະມອບອຳນາດຖານະປະໂຣຫິດໃຫ້ແກ່ຄົນເຫລົ່ານັ້ນ. ນີ້ເປັນວິທີດຽວກັນ ທີ່ຖານະປະໂຣຫິດຖືກມອບໃຫ້ແກ່ຄົນອື່ນ. ພວກເຮົາບໍ່ສາມາດຊື້ຖານະປະໂຣຫິດໄດ້.

***ການສົນທະນາ***

- ແມ່ນໃຜເປັນຜູ້ນຳຂອງສາສນາຈັກຂອງພຣະເຢຊູຄຣິສ?
- ຜູ້ຊາຍທີ່ຖືກຮຽກຮ້ອງໃຫ້ຊ່ວຍພຣະເຢຊູນັ້ນແມ່ນໃຜ?

---



ພຣະເຢຊູຊົງແຕ່ງຕັ້ງອັຄສາວົກ.

## ສາສນາຈັກຂອງພຣະເຢຊູຄຣິສມີຢູ່ຕໍ່ໄປໃນໂລກຫລັງຈາກພຣະເຢຊູຊົງກັບຄືນໄປສູ່ສວັນແລ້ວ

ຫລັງຈາກພຣະເຢຊູຊົງກັບຄືນໄປສູ່ສວັນແລ້ວ, ສາສນາຈັກຂອງພຣະເຢຊູຍັງມີຢູ່ຕໍ່ໄປໃນໂລກ. ອັຄສາວົກສິບສອງຄົນ ເປັນຜູ້ນຳສາສນາຈັກ. ເມື່ອອັຄສາວົກຜູ້ໃດຜູ້ນຶ່ງເສັຽຊີວິດໄປ, ພຣະເຢຊູຊົງຮຽກຮ້ອງໃຫ້ຊາຍຄົນອື່ນມາຂຶ້ນແທນ. ຜ່ານພຣະວິນຍານບໍຣິສຸດ ພຣະເຢຊູຊົງເຮັດໃຫ້ອັຄສາວົກຮູ້ຈັກວ່າ ໃຜຄວນຂຶ້ນແທນ. ອັຄສາວົກສິບສອງໄດ້ເລືອກຜູ້ຊາຍທີ່ດີຄົນອື່ນໆແລະໄດ້ມອບຖານະປະໂຣຫິດໃຫ້ແກ່ພວກເພິ່ນເພື່ອຈະໄດ້ຊ່ວຍໃນວຽກງານຂອງສາສນາຈັກຂອງພຣະເຢຊູ. ຊາຍເຫລົ່ານີ້ຖືກເອີ້ນວ່າ ສາວົກເຈັດສິບ, ມະຫາປະໂຣຫິດ, ແອລເດີ, ອະທິການ, ປະໂຣຫິດ, ຄູສອນແລະມັກຄະນາຍົກ. ຫນ້າທີ່ຂອງຊາຍເຫລົ່ານີ້ ມີອະທິບາຍໄວ້ໃນບົດທີ ໔໐.

*ພຣະເຢຊູຊົງນຳພາສາສນາຈັກໂດຍຜ່ານການເປີດເຜີຍ*

ຄຳສອນທີ່ພຣະເຢຊູຊົງສົ່ງຜ່ານພຣະວິນຍານບໍຣິສຸດມາໃຫ້ຜູ້ຄົນໃນໂລກນັ້ນເອີ້ນວ່າ ການເປີດເຜີຍ. ພຣະເຢຊູຊົງນຳພາສາສນາຈັກຂອງພຣະອົງໂດຍການເປີດເຜີຍແກ່ສາສດາແລະຜູ້ນຳຄົນອື່ນໆ ເຖິງສິ່ງທີ່ພວກເຂົາຄວນເຮັດ.

ກ່ອນພຣະເຢຊູຈະຊົງກັບຄືນສູ່ສວັນ, ພຣະອົງຊົງບອກອັຄສາວົກວ່າ ພຣະອົງຈະຊົງຢູ່ນຳພວກເຂົາສເມີ. ນີ້ຫມາຍຄວາມວ່າ ພຣະອົງຈະຊົງນຳພາພວກເຂົາຜ່ານພຣະວິນຍານບໍຣິສຸດ.

### *ການສົນທະນາ*

- ພຣະເຢຊູຊົງນຳພາສາສນາຈັກຂອງພຣະອົງແນວໃດຫລັງຈາກພຣະອົງໄດ້ກັບຄືນໄປສວັນແລ້ວ?

*ສາສນາຈັກຂອງພຣະເຢຊູຄຣິສມີຄຳສອນທີ່ແທ້ຈິງຂອງພຣະອົງ*

ຜູ້ນຳຂອງສາສນາຈັກຂອງພຣະເຢຊູຄຣິສໄດ້ຮັບການເປີດເຜີຍຈາກພຣະເຢຊູ ຜ່ານພຣະວິນຍານບໍຣິສຸດ. ຕົວຢ່າງເຊັ່ນ, ພຣະເຢຊູຊົງບອກອັຄສາວົກເປໂຕວ່າພຣະກິດຕິຄຸນຄວນຖືກສອນໃຫ້ຄົນທັງປວງແລະບໍ່ພຽງແຕ່ຜູ້ຄົນໃນອິສຣາເອນເທົ່ານັ້ນ. ພຣະເຢຊູຊົງບອກອັຄສາວົກໂປໂລຫລາຍໆສິ່ງທີ່ທ່ານຄວນສອນຜູ້ຄົນ. ພຣະອົງຍັງໄດ້ບອກຫລາຍສິ່ງກ່ຽວກັບອະນາຄົດຂອງອັຄສາວົກໂຢຮັນນຳອີກ.

ໃນຂະນະທີ່ພຣະອົງຊົງຢູ່ໃນໂລກ, ພຣະເຢຊູຊົງສອນຜູ້ຄົນໃຫ້ເຊື່ອໃນພຣະອົງ, ກັບໃຈແລະຮັບບັບຕິສະມາ. ພຣະອົງຊົງມອບຂອງປະທານແຫ່ງພຣະວິນຍານບໍຣິສຸດແກ່ພວກເຂົາ. ພຣະອົງຊົງສອນພວກເຂົາໃຫ້ຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະເຊື່ອຟັງພຣະອົງ. ພຣະອົງຊົງສອນພວກເຂົາໃຫ້ຮັກຄົນອື່ນແລະຊ່ວຍເຫລືອເຂົາເຈົ້າ.

ຫລັງຈາກພຣະເຢຊູຊົງກັບຄືນສູ່ສວັນແລ້ວ, ອັຄສາວົກໄດ້ສອນແບບດຽວຕາມສິ່ງທີ່ພຣະເຢຊູຊົງໄດ້ສອນ. ທຸກໆຄົນທີ່ປາຖນາຢາກເປັນສະມາຊິກຂອງສາສນາຈັກຂອງພຣະເຢຊູຄຣິສຈະຕ້ອງມີສັດທາໃນພຣະເຢຊູຄຣິສ, ກັບໃຈຈາກບາບຂອງພວກເຂົາ ແລະຮັບບັບຕິສະມາ. ພວກເຂົາໄດ້ຮັບຂອງປະທານແຫ່ງພຣະວິນຍານບໍຣິສຸດ. ພວກເຂົາຮຽນທີ່ຈະຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະເຊື່ອຟັງພຣະອົງ ແລະຮຽນທີ່ຈະຮັກແລະຮັບໃຊ້ເຊິ່ງກັນແລະກັນ.

### *ການສົນທະນາ*

- ຜູ້ຄົນເຮັດແນວໃດຈຶ່ງຈະໄດ້ເຂົ້າຮ່ວມສາສນາຈັກຂອງພຣະເຢຊູຄຣິສ?

*ຄົນທີ່ເປັນສະມາຊິກຂອງສາສນາຈັກຂອງພຣະເຢຊູຄຣິສໄດ້ຮັບຂອງປະທານແຫ່ງພຣະວິນຍານ*

ຄົນທີ່ເປັນສະມາຊິກຂອງສາສນາຈັກຂອງພຣະເຢຊູຄຣິສໄດ້ຮັບຂອງປະທານແຫ່ງພຣະວິນຍານ. ຂອງປະທານບາງຢ່າງນີ້ ຄືການເຮັດໃຫ້ຄົນເຈັບປ່ວຍດີຂຶ້ນ, ຄວາມສາມາດທີ່ຈະຮູ້ເຫດການໃນອະນາຄົດ (ພະຍາກອນ) ແລະອຳນາດທີ່ຈະຫລິງເຫັນພາບທີ່ມາໃຫ້ເຫັນ.

### *ການສົນທະນາ*

- ຂອງປະທານແຫ່ງພຣະວິນຍານບາງຢ່າງມີຫຍັງແດ່?

## ສາສນາຈັກຂອງພຣະເຢຊູບໍ່ມີຢູ່ໃນໂລກອີກຕໍ່ໄປ

ຫລັງຈາກພຣະເຢຊູຊົງກັບຄືນສູ່ສວັນແລ້ວ, ອັຄສາວົກໄດ້ນຳພາສາສນາຈັກ. ຫລາຍໆຄົນໄດ້ເຂົ້າມາເປັນສະມາຊິກຂອງສາສນາຈັກ. ແຕ່ສະມາຊິກບາງຄົນໄດ້ເລີ່ມສອນ ແລະເຊື່ອໃນສິ່ງທີ່ຜິດ, ແທນທີ່ຈະສອນແລະເຊື່ອສິ່ງທີ່ພຣະເຢຊູ

ແລະອັຄສາວົກໄດ້ສອນ. ຕົວຢ່າງເຊັ່ນ ບາງຄົນສອນວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ບໍ່ຊົງມີຮ່າງກາຍທີ່ມີເນື້ອໜັງແລະກະດູກ.

ຄົນຊົ່ວຮ້າຍເລີ່ມຂົ່ມເຫັງຜູ້ນຳແລະສະມາຊິກຄົນອື່ນໆໃນສາສນາຈັກ. ຄົນຊົ່ວຮ້າຍໄດ້ຂ້າອັຄສາວົກ ແລະຜູ້ນຳຄົນອື່ນໆ ຜູ້ທີ່ມີຖານະປະໂຣຫິດ. ພວກເຂົາຍັງຂ້າຫລາຍໆຄົນທີ່ເປັນສະມາຊິກໃນສາສນາຈັກຂອງພຣະເຢຊູຄຣິສນຳອີກ.

ຄົນເລີ່ມສອນຄຳສອນທີ່ບໍ່ຈິງຂຶ້ນເລື້ອຍໆ ຈົນວ່າບໍ່ມີໃຜເຊື່ອໃນຄຳສອນທີ່ແທ້ຈິງຂອງພຣະເຢຊູອີກ. ບໍ່ມີໃຜມີຖານະປະໂຣຫິດອີກ, ສະນັ້ນ ຈຶ່ງບໍ່ມີໃຜສາມາດເຮັດວຽກງານຂອງພຣະເຢຊູໃນໂລກ ຫລືຮັບຄຳສອນຈາກພຣະເຢຊູເພື່ອລູກໆທັງປວງຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້. ໃນລະຍະເວລາທີ່ບໍ່ມີໃຜເຊື່ອຄຳສອນທີ່ແທ້ຈິງຂອງພຣະເຢຊູ ແລະບໍ່ມີໃຜມີຖານະປະໂຣຫິດຂອງພຣະອົງນັ້ນເອີ້ນວ່າ ການປະຖິ້ມຄວາມເຊື່ອ.

ລະຫວ່າງການປະຖິ້ມຄວາມເຊື່ອນີ້, ຜູ້ຄົນໄດ້ຈັດຕັ້ງສາສນາຈັກທີ່ແຕກຕ່າງຈາກສາສນາຈັກທີ່ພຣະເຢຊູຊົງໄດ້ແຕ່ງຕັ້ງໄວ້ຂຶ້ນ. ພວກເຂົາສອນສິ່ງທີ່ພຣະເຢຊູບໍ່ໄດ້ສອນ. ພວກເຂົາບໍ່ມີຖານະປະໂຣຫິດ. ພວກເຂົາປະກອບພິທີການທີ່ແຕກຕ່າງຈາກພິທີການທີ່ຖືກປະກອບໃນສາສນາຈັກຂອງພຣະເຢຊູ. ພວກເຂົາບໍ່ມີການເປີດເຜີຍຈາກພຣະເຢຊູ. ພວກເຂົາບໍ່ໄດ້ສອນພຣະບັນຍັດທັງໝົດຂອງພຣະກິດຕິຄຸນດັ່ງທີ່ພຣະເຢຊູແລະອັຄສາວົກຂອງພຣະອົງໄດ້ສອນ. ສາສດາໄດ້ທຳນາຍໄວ້ກ່ອນແລ້ວວ່າສິ່ງນີ້ຈະເກີດຂຶ້ນ.

### *ການສົນທະນາ*

- ການປະຖິ້ມຄວາມເຊື່ອເກີດຂຶ້ນແນວໃດ?

## ພຣະເຢຊູຊົງສັນຍາວ່າ ພຣະອົງຈະຊົງຟື້ນຟູສາສນາຈັກຂອງພຣະອົງຄືນສູ່ໂລກອີກ

ພຣະເຢຊູຊົງຮູ້ວ່າ ຜູ້ຄົນຈະບໍ່ມີອຳນາດຂອງພຣະອົງແລະຄຳສອນທີ່ແທ້ຈິງຂອງພຣະອົງ, ສະນັ້ນ ພຣະອົງຈຶ່ງຊົງໄດ້ຕຽມວິທີທີ່ສາສນາຈັກຈະຖືກຈັດຕັ້ງອີກໃນແຜ່ນດິນໂລກ.

ອັຄສາວົກໂຢຮັນເຫັນໃນພາບທີ່ມາໃຫ້ເຫັນເຖິງເວລາເມື່ອພຣະກິດຕິຄຸນຈະຖືກນຳຄືນມາສູ່ໂລກ. ທ່ານເຫັນວ່າ ພຣະເຢຊູຈະຊົງສົ່ງທູດສະຫວັນໃຫ້ມາສອນມະນຸດເຖິງຄວາມຈິງກ່ຽວກັບພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາ. ພຣະເຢຊູຈະຊົງເຮັດໃຫ້ເປັນໄປວ່າ ລູກໆທຸກຄົນຂອງພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຈະສາມາດຮັບພຣະກິດຕິຄຸນ, ຮັບຖານະປະໂຣຫິດ, ຮັບພອນແລະສິ່ງອື່ນໆອີກທີ່ຈຳເປັນສຳລັບພວກເຮົາທີ່ຈະກັບຄືນໄປຫາພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາ.

## *ການສົນທະນາ*

- ເປັນຫຍັງພຣະເຢຊູຈຶ່ງຊົງຕຽມເສັ້ນທາງໄວ້ເພື່ອຈະຈັດຕັ້ງສາສນາຈັກຂອງພຣະອົງອີກເທື່ອນຶ່ງໃນໂລກ?

## *ຂໍ້ອ້າງອີງ*

*ພຣະເຢຊູຊົງເປັນຜູ້ນຳຂອງສາສນາຈັກທີ່ພຣະອົງຊົງຈັດຕັ້ງ*

- ລູກາ ໙:໑ (ພຣະເຢຊູຊົງມອບອຳນາດໃຫ້ແກ່ອັຄສາວົກຂອງພຣະອົງ.)
- ๓ ນີໄຟ ໒໗:໗ (ສາສນາຈັກຂອງພຣະເຢຊູຄຣິສຖືກເອີ້ນຕາມພຣະນາມຂອງພຣະອົງ.)

*ສາສນາຈັກຂອງພຣະເຢຊູຄຣິສມີຢູ່ຕໍ່ໄປໃນໂລກຫລັງຈາກພຣະເຢຊູຊົງກັບຄືນໄປສູ່ສະຫວັນແລ້ວ*

- ມັດທາຍ ໑໖:໑໖–໑໗ (ເປໂຕຖືກເລືອກໃຫ້ນຳພາສາສນາຈັກຫລັງຈາກການສິ້ນພຣະຊົນຂອງພຣະເຢຊູ.)
- ມັດທາຍ ໒໘:໒໐ (ພຣະເຢຊູຊົງສັນຍາທີ່ຈະຢູ່ນຳອັຄສາວົກຕລອດໄປ.)
- ມາຣະໂກ ๓:໑໔ (ພຣະເຢຊູຊົງເລືອກຜູ້ຊາຍສິບສອງຄົນໃຫ້ເປັນອັຄສາວົກ.)
- ມາຣະໂກ ໑໖:໑໗–໑໘; ໑ ໂກຣິນໂທ ໑໒:໔–໑໑ (ຜູ້ຕິດຕາມຂອງພຣະເຢຊູຈະໄດ້ຮັບຂອງປະທານແຫ່ງພຣະວິນຍານ.)
- ລູກາ ໑໐:໑ (ພຣະເຢຊູຊົງເລືອກຜູ້ຊາຍເຈັດສິບຄົນໃຫ້ສອນພຣະກິດຕິຄຸນ.)
- ໂຢຮັນ ໑໔:໒໖ (ພຣະເຢຊູຈະຊົງສະຖິດຢູ່ນຳອັຄສາວົກສເມີໂດຍຜ່ານອິດທິພົນຂອງພຣະວິນຍານບໍຣິສຸດ.)

- ກິຈການ ໑:໒໓–໒໖ (ອັຄສາວົກຄົນໃຫມ່ຈະຖືກເລືອກຂຶ້ນແທນອັຄສາວົກຜູ້ທີ່ເສັຽຊີວິດໄປ.)
- ກິຈການ ໗:໑໗–໒໐ (ເປໂຕບອກຜູ້ຊາຍຄົນນຶ່ງວ່າ ຖານະປະໂຣຫິດບໍ່ແມ່ນສິ່ງຊື້ຂາຍ.)
- ກິຈການ ໑໐ (ໂດຍຜ່ານການເປີດເຜີຍ, ເປໂຕຮຽນຮູ້ວ່າ ພຣະກິດຕິຄຸນແມ່ນມີສຳລັບທຸກໆຄົນ.)
- ກິຈການ ໑໔:໒໓ (ແອລເດີຖືກແຕ່ງຕັ້ງໃນກອງປະຊຸມສາມັນ.)
- ເອເຟໂຊ ໒:໑໙–໒໐ (ພຣະເຢຊູຊົງເປັນພື້ນຖານຂອງສາສນາຈັກຂອງພຣະອົງ, ໂດຍມີການຊ່ວຍເຫລືອຈາກອັຄສາວົກແລະສາສດາ.)
- ເອເຟໂຊ ໔:໑໑–໑໓ (ຕຳແຫນ່ງທີ່ຖືກມອບໃຫ້ຜູ້ນຳໂດຍພຣະເຢຊູ.)
- ຢາໂກໂບ ໕:໑໔–໑໕ (ຄົນເຈັບປ່ວຍສາມາດໄດ້ຮັບພອນຈາກຄົນຜູ້ມີອຳນາດແຫ່ງຖານະປະໂຣຫິດ.)

*ສາສນາຈັກຂອງພຣະເຢຊູບໍ່ມີຢູ່ໃນໂລກອີກຕໍ່ໄປ*

- ອາໂມດ ໗:໑໑–໑໒ (ມະນຸດຈະສແວງຫາຄວາມຈິງ, ບໍ່ຮູ້ວ່າຈະພົບມັນຢູ່ໃສ.)
- ມັດທາຍ ໒໔:໙–໑໒ (ອັຄສາວົກຈະຖືກຂ້າ.)
- ໒ ເທຊະໂລນິກ ໒:໓–໔ (ການປະຖິ້ມຄວາມເຊື່ອຖືກທຳນາຍໄວ້.)
- ໒ ເປໂຕ ໒:໑ (ສາສດາທີ່ບໍ່ຈິງສອນຄຳສອນທີ່ບໍ່ເປັນຂອງພຣະເຈົ້າ.)

*ພຣະເຢຊູຊົງສັນຍາວ່າ ພຣະອົງຈະຊົງຟື້ນຟູສາສນາຈັກຂອງພຣະອົງຄືນສູ່ໂລກອີກ*

- ກິຈການ ໓:໒໐–໒໑ (ພຣະເຢຊູຈະຊົງກັບຄືນມາສູ່ແຜ່ນດິນໂລກເພື່ອຟື້ນຟູພຣະກິດຕິຄຸນຂອງພຣະອົງຄືນມາອີກ.)
- ພຣະນິມິດ ໑໔:໖ (ທູດສວັນຈະຊ່ວຍໃນການຟື້ນຟູພຣະກິດຕິຄຸນ.)
- ດານີເອນ ໒:໔໔–໔໕ (ອານາຈັກຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຖືກຕັ້ງຂຶ້ນໃນຍຸກສຸດທ້າຍ.)

# ສາສນາຈັກຂອງພຣະເຢຊູຄຣິສ ໃນສມັຍປັດຈຸບັນ

*ບົດທີ ໑໙*

*ພວກເຮົາສາມາດພົບພຣະກິດຕິຄຸນທີ່ແທ້ຈິງໄດ້ຢູ່ໃສໃນປັດຈຸບັນ?*

**ສາສນາຈັກຂອງພຣະເຢຊູຄຣິສບໍ່ໄດ້ຢູ່ໃນໂລກເປັນເວລາຫລາຍປີ**

ພຣະເຢຊູຊົງໄດ້ຈັດຕັ້ງສາສນາຈັກຂອງພຣະອົງຂຶ້ນ ເວລາພຣະອົງຢູ່ໃນໂລກນີ້. ສາສນາຈັກຂອງພຣະອົງຍັງມີຢູ່ ໃນໂລກຊົ່ວລະຍະນຶ່ງຫລັງຈາກພຣະອົງຊົງສະເດັດກັບຄືນສູ່ສວັນແລ້ວ. ເມື່ອຜູ້ຄົນເຊົາສອນ ແລະເຊົາເຊື່ອໃນຄຳສອນທີ່ແທ້ຈິງຂອງພຣະອົງ, ພຣະເຢຊູຊົງເອົາຖານະປະໂຣຫິດແລະສາສນາຈັກຂອງພຣະອົງໄປຈາກໂລກ.

ເປັນເວລາຫລາຍປີ, ຜູ້ຄົນໄດ້ດຳລົງຊີວິດໂດຍປາສຈາກພຣະກິດຕິຄຸນແລະສາສນາຈັກຂອງພຣະເຢຊູຄຣິສ. ຜູ້ຄົນໄດ້ຈັດຕັ້ງສາສນາຈັກຫລາຍໆແຫ່ງຂຶ້ນ, ຕາມແນວຄິດຂອງຕົນເອງແລະປະສົມກັບຄຳສອນບາງສ່ວນ ຈາກພຣະຄັມພີໄບເບິ້ນ. ແຕ່ສາສນາຈັກເຫລົ່ານີ້ບໍ່ໄດ້ມີຖານະປະໂຣຫິດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພວກເຂົາບໍ່ມີຄຳສອນທັງຫມົດຂອງພຣະເຢຊູ. ພວກເຂົາບໍ່ມີການເປີດເຜີຍຈາກພຣະເຢຊູ ແລະບໍ່ມີຂອງປະທານແຫ່ງພຣະວິນຍານທັງຫມົດຈາກພຣະເຢຊູ.

ຜູ້ຄົນເລີ້ມຢາກຮູ້ຈັກເຖິງຄວາມຈິງກ່ຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພວກເຂົາເລີ້ມສແວງຫາຄວາມຈິງກ່ຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະຄຳສອນຂອງພຣະອົງ. ບາງຄົນໃນພວກເຂົາຮູ້ວ່າ ພຣະກິດຕິຄຸນ



*ພຣະບິດາຜູ້ສະຖິດໃນສູ້ວັນຂອງພວກເຮົາແລະພຣະເຢຊູຊົງສະເດັດມາ ຢ້ຽມຢາມໂຢເຊັບ ສມິທ.*

ທີ່ແທ້ຈິງ ແລະສາສນາຂອງພຣະເຢຊູ ບໍ່ມີຢູ່ໃນໂລກອີກແລ້ວ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮູ້ວ່າ ເວລາໄດ້ມາເຖິງທີ່ຈະຟື້ນຟູພຣະກິດຕິຄຸນທີ່ແທ້ຈິງ ແລະສາສນາຈັກຂອງພຣະເຢຊູຄຣິສຄືນສູ່ໂລກອີກ.

### *ການສົນທະນາ*

- ເປັນຫຍັງພຣະເຢຊູຈຶ່ງຊົງເອົາຖານະປະໂຣຫິດຈາກໂລກໄປ?
- ເປັນຫຍັງສາສນາຈັກທີ່ຄົນອື່ນໆຈັດຂຶ້ນບໍ່ເປັນສາສນາຈັກຂອງພຣະເຢຊູຄຣິສ?

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກສາຄຳສັນຍາຂອງພຣະອົງວ່າຈະນຳສາສນາຈັກ ທີ່ແທ້ງຈິງມາສູ່ໂລກອີກ

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກລູກໆທັງຫມົດຂອງພຣະອົງ. ພຣະອົງຊົງຕ້ອງການໃຫ້ພວກເຂົາຮູ້ເຖິງສິ່ງພວກເຂົາຄວນເຮັດເພື່ອຈະສາມາດກັບຄືນໄປຢູ່ນຳພຣະອົງອີກຫລັງຈາກພວກເຂົາຕາຍໄປແລະຟື້ນຄືນຊີວິດອີກ. ກ່ອນພຣະເຢຊູຄຣິສເອົາສາສນາຈັກທີ່ແທ້ຈິງຂອງພຣະເຢຊູຄຣິສໄປຈາກໂລກ, ພຣະເຢຊູຊົງບອກສາສດາແລະອັຄສາວົກວ່າ ສິ່ງເຫລົ່ານີ້ຈະເກີດຂຶ້ນ. ພຣະອົງຍັງຊົງສັນຍາວ່າ ວັນໃດວັນນຶ່ງພຣະອົງຈະຟື້ນຟູສາສນາຈັກຄືນສູ່ໂລກອີກ. ພຣະອົງຈະຊົງກະທຳສິ່ງນີ້ອີກ ເມື່ອຜູ້ຄົນຕຽມພ້ອມທີ່ຈະຮັບພຣະກິດຕິຄຸນຂອງພຣະອົງ.

### *ພຣະເຢຊູຊົງຟື້ນຟູສາສນາຈັກຂອງພຣະອົງຄືນສູ່ໂລກອີກ*

ພຣະເຢຊູຊົງນຳສາສນາຈັກຂອງພຣະອົງມາສູ່ໂລກອີກ ພ້ອມດ້ວຍອຳນາດແລະພອນຕ່າງໆ ແບບດຽວດັ່ງສາສນາຈັກທີ່ພຣະອົງຊົງໄດ້ຈັດຕັ້ງຂຶ້ນເມື່ອພຣະອົງຢູ່ໃນໂລກ. ທຸກຄົນທີ່ເຕັມໃຈທີ່ຈະເຊື່ອຟັງພຣະບັນຍັດຂອງພຣະອົງສາມາດເປັນສະມາຊິກຂອງສາສນາຈັກຂອງພຣະອົງໄດ້.

### *ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງເລືອກໂຢເຊັບ ສມິທ ໃຫ້ຊ່ວຍຟື້ນຟູສາສນາຈັກ*

ໃນປີ ໑໘໒໐, ພຣະເຢຊູຊົງເລີ້ມທີ່ຈະຟື້ນຟູພຣະກິດຕິຄຸນທີ່ແທ້ຈິງ ແລະສາສນາຈັກຄືນສູ່ໂລກ. ຊາຍຫນຸ່ມຄົນນຶ່ງຊື່ໂຢເຊັບ ສມິທ ຕ້ອງການຢາກຮູ້ວ່າ ສາສນາຈັກໃດເປັນສາສນາຈັກຂອງພຣະເຢຊູຄຣິສ. ລາວອ່ານໃນພຣະຄັມພີໄບເບິນວ່າ ຖ້າຜູ້ໃດ

ຢາກຮູ້ສິ່ງໃດສິ່ງນຶ່ງ, ຜູ້ນັ້ນຄວນທູນຖາມ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ໂຢເຊັບຕັດສິນໃຈທີ່ຈະທູນຖາມພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາວ່າ ລາວຄວນເຂົ້າຮ່ວມສາສນາຈັກໃດ. ລາວໄດ້ເຂົ້າໄປໃນປ່າແຫ່ງນຶ່ງໃກ້ບ້ານຂອງລາວ ແລະທູນຖາມພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເຖິງສາສນາຈັກທີ່ລາວຄວນເຂົ້າຮ່ວມ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະພຣະເຢຊູຊຶ່ງໄດ້ມາປາກົດຕໍ່ໂຢເຊັບ ສມິທ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາບອກໂຢເຊັບໃຫ້ຟັງພຣະເຢຊູແລະໃຫ້ເຊື່ອຟັງພຣະອົງ, ແລ້ວພຣະເຢຊູຊຶ່ງບອກໂຢເຊັບວ່າ ບໍ່ໃຫ້ເຂົ້າຮ່ວມສາສນາຈັກໃດເລີຍ. ພຣະອົງຊົງຕັສວ່າ ສາສນາຈັກທີ່ແທ້ຈິງບໍ່ໄດ້ຢູ່ໃນໂລກໃນຂະນະນັ້ນ.

ບໍ່ມີໃຜໄດ້ຮັບການເປີດເຜີຍແບບນັ້ນຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ນັບຕັ້ງແຕ່ວັນເວລາທີ່ພຣະກິດຕິຄຸນທີ່ແທ້ຈິງ ແລະສາສນາຈັກຂອງພຣະເຢຊູຄຣິສໄດ້ຖືກເອົາໄປຈາກໂລກ. ນັບແຕ່ການເປີດເຜີຍຕໍ່ໂຢເຊັບ ສມິທ ທ່ານໄດ້ຮັບການເປີດເຜີຍຫລາຍໆຢ່າງ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງເລືອກເອົາໂຢເຊັບ ສມິທ ໃຫ້ເປັນຜູ້ແທນພຣະອົງຢູ່ໃນໂລກ. ພຣະເຢຊູຊຶ່ງຟື້ນຟູພຣະກິດຕິຄຸນທີ່ແທ້ຈິງ ແລະສາສນາຈັກຂອງພຣະເຢຊູຄຣິສຂຶ້ນຜ່ານໂຢເຊັບ ສມິທ.

### *ການສົນທະນາ*

- ເປັນຫຍັງໂຢເຊັບ ສມິທ ຈຶ່ງເຫັນພາບທີ່ມາໃຫ້ເຫັນ?

### *ຖານະປະໂຣຫິດຖືກຟື້ນຟູຄືນມາໃຫມ່*

ຖານະປະໂຣຫິດຖືກຟື້ນຟູຄືນມາໃຫມ່ໃນໂລກ ໃນປີ ໑໗໒໙. ໂຢຮັນບັບຕິສະໂຕໄດ້ລົງມາຈາກສວັນ ແລະມອບອຳນາດແຫ່ງຖານະປະໂຣຫິດໃຫ້ແກ່ໂຢເຊັບ ສມິທ ໂດຍການວາງມືໃສ່ເທິງຫົວຂອງໂຢເຊັບ. ອຳນາດຖານະປະໂຣຫິດນີ້ເອີ້ນວ່າ ຖານະປະໂຣຫິດແຫ່ງແອຣັນ. ໂຢຮັນບັບຕິສະໂຕ, ຜູ້ຟື້ນຟູອຳນາດຖານະປະໂຣຫິດນີ້ ເປັນຜູ້ດຽວກັນທີ່ໄດ້ໃຫ້ບັບຕິສະມາແກ່ພຣະເຢຊູ. ເປໂຕ, ຢາໂກໂບ, ແລະໂຢຮັນ, ຊຶ່ງເປັນອັຄສາວົກສາມທ່ານໃນສມັຍຂອງພຣະເຢຊູ, ກໍໄດ້ລົງມາຈາກສວັນ ແລະມອບອຳນາດຖານະປະໂຣຫິດໃຫ້ແກ່ໂຢເຊັບ ສມິທ ຄືກັນ. ອຳນາດຖານະປະໂຣຫິດນີ້ເອີ້ນວ່າ ຖານະປະໂຣຫິດແຫ່ງເມນຄີເຊເດັກ.

ສາສດາຄົນອື່ນໆ, ລວມທັງໂມເຊແລະເອລີຢາ, ໄດ້ມາແລະມອບອຳນາດໃຫ້ໂຢເຊັບ ສມິທ ນຳອີກ ເພື່ອຈະໄດ້ດຳເນີນວຽກງານອັນສັກສິດຂອງພຣະຜູ້ເປັນເຈົ້າ. ແລ້ວອຳນາດຈາກພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາ ເພື່ອສອນພຣະກິດຕິຄຸນ, ເພື່ອເຮັດວຽກງານອັນສັກສິດ, ແລະເພື່ອຈະນຳພາສາສນາຈັກໄດ້ກັບມາສູ່ໂລກອີກ.

*ການສົນທະນາ*

- ໂຢເຊັບ ສມິທ ໄດ້ຮັບຖານະປະໂຣຫິດຄັ້ງທຳອິດໄດ້ແນວໃດ?

*ພຣະເຢຊູຊົງຈັດຕັ້ງສາສນາຈັກຂອງພຣະອົງອີກ*

ໂດຍຜ່ານການເປີດເຜີຍ, ພຣະເຢຊູຊົງນຳພາໂຢເຊັບ ສມິທ ໃຫ້ຈັດຕັ້ງສາສນາຈັກຂຶ້ນອີກ ໃນວັນທີ ໖ ເດືອນເມສາ ໑໘໓໐. ພຣະເຢຊູຊົງເປັນຜູ້ນຳຂອງສາສນາຈັກເມື່ອພຣະອົງຊົງຢູ່ໃນໂລກ. ພຣະອົງຍັງ ຊົງເປັນຜູ້ນຳຂອງສາສນາຈັກໃນປັດຈຸບັນນີ້. ສະມາຊິກກໍຍັງຖືກເອີ້ນວ່າ ສິດທິຊົນ.

ພຣະເຢຊູຊົງຕັ້ງຊື່ສາສນາຈັກຂອງພຣະອົງໃນປັດຈຸບັນວ່າ ສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍ. ຄຳວ່າຍຸກສຸດທ້າຍສະແດງວ່າ ນີ້ເປັນສາສນາຈັກພຣະເຢຊູຄຣິສໃນຍຸກສຸດທ້າຍໃນແຜ່ນດິນໂລກ. ພຣະເຢຊູຊົງຕັສວ່າ ສາສນາຈັກຂອງພຣະອົງເປັນສາສນາຈັກທີ່ແທ້ຈິງ ແຫ່ງດຽວໃນແຜ່ນດິນໂລກ ແລະວ່າພຣະອົງຊົງພໍພຣະທັຍນຳສາສນາຈັກນັ້ນ.

ພຣະເຢຊູຊົງເລືອກສາສດາໃຫ້ນຳພາສາສນາຈັກຢູ່ໃນໂລກ. ພຣະເຢຊູຊົງນຳພາສາສດາຄົນນີ້. ພຣະອົງຊົງມອບອຳນາດໃຫ້ແກ່ສາສດາຄົນນີ້ໃຫ້ນຳພາສາສນາຈັກ. ໂຢເຊັບ ສມິທ ຖືກເລືອກໃຫ້ເປັນສາສດາຄົນທຳອິດຂອງສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍ. ສາສດາຂອງສາສນາຈັກຍັງຖືກເອີ້ນວ່າ ປະທານຂອງສາສນາຈັກ. ປະທານຂອງສາສນາຈັກມີຊາຍຄົນອື່ນທີ່ຊ່ວຍເຫລືອທ່ານ. ຊາຍເຫລົ່ານີ້ເອີ້ນວ່າ ທີ່ປຶກສາ. ເມື່ອສາສດາເສັຽຊີວິດໄປ, ພຣະເຢຊູຈະເລືອກເອົາສາສດາຄົນໃຫມ່ຂຶ້ນແທນ.

ພຣະເຢຊູຍັງຊົງເລືອກອັຄສາວົກສິບສອງໃຫ້ຊ່ວຍນຳພາສາສນາຈັກ. ຊາຍໜຸ່ມ ແລະຊາຍອະວຸໂສຄົນອື່ນກໍໄດ້ຮັບຖານະປະໂຣຫິດຄືກັນ. ພວກເພິ່ນຊ່ວຍອັຄສາວົກ ແລະສາສດາ. ຊາຍເຫລົ່ານີ້ ເອີ້ນວ່າ ສາວົກເຈັດສິບ, ມະຫາປະໂຣຫິດ, ແອລເດີ, ອະທິການ, ປະໂຣຫິດ, ຄູສອນ, ແລະມັກຄະນາຍົກ. ແບບດຽວດັ່ງທີ່ຖືກເອີ້ນໃນ ສາສນາຈັກຂອງພຣະເຢຊູຄຣິສໃນຄາວກ່ອນ.

ພຣະເຢຊູຊົງບອກໂຢເຊັບ ສມິທ ເຖິງວິທີທີ່ສາສນາຈັກຈະຖືກຈັດຕັ້ງ. ເມື່ອສະມາຊິກ ຂອງສາສນາຈັກໃນເຂດໃດເຂດນຶ່ງທີ່ມີໂຄງການ ການສອນຂອງສາສນາຈັກ ຄົບຖ້ວນ, ເຂດນັ້ນຈະຖືກເອີ້ນວ່າ ສະເຕກ ມັນຈະມີປະທານສະເຕກເປັນຜູ້ນຳ ພ້ອມດ້ວຍທີ່ປຶກສາສອງຄົນ.

ມັນຈະຖືກແບ່ງອອກເປັນກຸ່ມໆຢູ່ໃນສະເຕກ. ແຕ່ລະກຸ່ມຖືກເອີ້ນວ່າ *ຫວອດ. ຜູ້ນຳຖານະປະໂຣຫິດຄົນນຶ່ງ ຈະຖືກຮຽກຮ້ອງໃຫ້ເປັນອະທິການເພື່ອນຳພາ ຫວອດນັ້ນ. ທ່ານມີທີ່ປຶກສາສອງຄົນຄືກັນ.

ໃນພາກທີ່ເຂດຍັງບໍ່ໄດ້ຖືກຈັດຕັ້ງເທື່ອ, ມັນຈະມີຫລາຍໆ *ທ້ອງຖິ່ນ ຊຶ່ງປະກອບ ດ້ວຍຫລາຍໆສາຂາ. ສາຂາຈະຖືກນຳພາໂດຍປະທານສາຂາແລະທີ່ປຶກສາ ສອງຄົນ. ບ່ອນທີ່ມີຜູ້ສອນສາສນາຫລາຍຄົນທີ່ກຳລັງສອນພຣະກິດຕິຄຸນຈະຖືກ ເອີ້ນວ່າ *ຄະນະເຜີຍແຜ່.

*ຜູ້ຊາຍທີ່ດຳລົງຖານະປະໂຣຫິດຈະຖືກຈັດຕັ້ງເຂົ້າເປັນໂຄຣັມ*

ຜູ້ຊາຍທີ່ດຳລົງຖານະປະໂຣຫິດຈະຖືກຈັດຕັ້ງເຂົ້າເປັນກຸ່ມ ຊຶ່ງເອີ້ນວ່າ ໂຄຣັມ. ໂຄຣັມເປັນກຸ່ມຜູ້ຊາຍທີ່ດຳລົງຖານະປະໂຣຫິດໃນຕຳແໜ່ງດຽວກັນ. ພວກເຂົາ ພາກັນເຂົ້າຮ່ວມກັນເພື່ອຊ່ວຍເຫລືອເຊິ່ງກັນແລະກັນແລະຊ່ວຍເຫລືອຄົນອື່ນໆ.

### *ການສົນທະນາ*

- ຜູ້ໃດເປັນຜູ້ນຳຂອງສາສນາຈັກຂອງພຣະເຢຊູຄຣິສໃນປັດຈຸບັນນີ້?
- ຊາຍທີ່ຖືກຮຽກຮ້ອງໃຫ້ຊ່ວຍນຳພາສາສນາຈັກເອີ້ນວ່າຫຍັງ?

## ສາສນາຈັກໃນປັດຈຸບັນນີ້ຖືກຈັດຕັ້ງໃນແບບດຽວກັນດັ່ງທີ່ພຣະເຢຊູຊົງໄດ້ຈັດຕັ້ງຂຶ້ນເມື່ອພຣະອົງຊົງຢູ່ໃນໂລກນີ້

*ພຣະເຢຊູຍັງຊົງເປັນຜູ້ນຳຂອງສາສນາຈັກຂອງພຣະອົງໂດຍການເປີດເຜີຍ*

ໂດຍຜ່ານພຣະວິນຍານບໍຣິສຸດ, ພຣະເຢຊູຈະຊົງບອກສາສດາເຖິງວິທີທີ່ສາສດາຄວນນຳພາສາສນາຈັກ. ພຣະອົງຍັງຊົງເປີດເຜີຍຕໍ່ອັຄສາວົກ ແລະຜູ້ນຳອື່ນໆຂອງສາສນາຈັກເຖິງສິ່ງທີ່ພຣະອົງຕ້ອງການໃຫ້ພວກເຂົາເຮັດ. ໂດຍຜ່ານການເປີດເຜີຍ, ພຣະເຢຊູຊົງນຳພາສະມາຊິກຂອງສາສນາຈັກຂອງພຣະອົງໄປເລື້ອຍໆ.

*ທຸກຄົນສາມາດເຂົ້າມາເປັນສະມາຊິກຂອງສາສນາຈັກ*

ໃຜໆກໍສາມາດເຂົ້າມາເປັນສະມາຊິກຂອງສາສນາຈັກຂອງພຣະເຢຊູຄຣິສໃນເວລານີ້ ແບບດຽວກັບຜູ້ຄົນທີ່ໄດ້ເຂົ້າຮ່ວມສາສນາຈັກຂອງພຣະອົງເມື່ອພຣະອົງຊົງຢູ່ໃນໂລກນີ້. ຄົນນັ້ນຕ້ອງມີສັດທາໃນພຣະເຢຊູ ແລະຕ້ອງກັບໃຈ ແລະຮັບບັບຕິສະມາ. ຫລັງຈາກຄົນນັ້ນໄດ້ຮັບບັບຕິສະມາແລ້ວ, ລາວຈະໄດ້ຮັບຂອງປະທານແຫ່ງພຣະວິນຍານບໍຣິສຸດ.

### *ການສົນທະນາ*

- ພວກເຮົາຕ້ອງເຮັດແນວໃດ ເພື່ອຈະສາມາດເຂົ້າຮ່ວມສາສນາຈັກຂອງພຣະເຢຊູຄຣິສໃນປັດຈຸບັນນີ້?

*ສະມາຊິກຂອງສາສນາຈັກໃນປັດຈຸບັນນີ້ໄດ້ຮັບຂອງປະທານແຫ່ງພຣະວິນຍານ*

ພຣະເຢຊູຊົງມອບຂອງປະທານແຫ່ງພຣະວິນຍານໃຫ້ແກ່ສະມາຊິກຂອງສາສນາຈັກຂອງພຣະອົງສເມີ. ອຳນາດຂອງ ຂອງປະທານເຫລົ່ານີ້ມີຢູ່ໃນສາສນາຈັກໃນປັດຈຸບັນນີ້.

### *ການສົນທະນາ*

- ຂອງປະທານແຫ່ງພຣະວິນຍານມີຫຍັງແດ່? (ເບິ່ງບົດທີ ໑໙.)

*ພຣະເຢຊູຊົງຟື້ນຟູຄຳສອນທີ່ແທ້ຈິງຂອງພຣະອົງ*

ພຣະເຢຊູຊົງຟື້ນຟູຄຳສອນທີ່ພຣະອົງແລະອັຄສາວົກຂອງພຣະອົງໄດ້ສອນ.

ຄຳສອນພື້ນຖານກໍຄືສັດທາໃນ ພຣະເຢຊູຄຣິສ, ການກັບໃຈ, ບັບຕິສະມາ ແລະຂອງປະທານແຫ່ງພຣະວິນຍານບໍລິສຸດ. ຄວາມຈິງບາງອັນທີ່ພຣະເຢຊູຊົງໄດ້ມອບໃຫ້ສາສນາຈັກຄື:

໑. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມີຮ່າງກາຍທີ່ມີເນື້ອໜັງ ແລະກະດູກ.
໒. ພວກເຮົາເປັນລູກວິນຍານຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພວກເຮົາໄດ້ຢູ່ກັບພຣະອົງໃນສວັນ ໃນຖານະວິນຍານກ່ອນພວກເຮົາມາເກີດໃນໂລກນີ້.
໓. ພວກເຮົາຈະໄດ້ຮັບໂທດເພາະບາບຂອງພວກເຮົາເອງ ແລະບໍ່ແມ່ນຍ້ອນການກະທຳຂອງອາດາມ. ຫລາຍໆຄົນເຊື່ອວ່າ ຍ້ອນອາດາມແລະເອວາກິນໝາກໄມ້ທີ່ຕ້ອງຫ້າມ, ແລ້ວພວກເຮົາໃນຖານະເປັນເຊື້ອສາຍຂອງພວກເພິ່ນ, ຈະຢູ່ໃນຄວາມບາບນັ້ນ ເວລາພວກເຮົາເກີດມາ. ນີ້ບໍ່ແມ່ນຄວາມຈິງ. ເດັກນ້ອຍບໍ່ມີບາບ ເມື່ອເຂົາເຈົ້າເກີດມາ. ສະນັ້ນ ພວກເຂົາບໍ່ຈຳເປັນຕ້ອງຮັບບັບຕິສະມາຈົນກວ່າພວກເຂົາມີອາຍຸໄດ້ແປດປີ.
໔. ຜູ້ຊາຍຕ້ອງມີຖານະປະໂຣຫິດກ່ອນລາວຈະສາມາດປະກອບ *ພິທີການຂອງສາສນາຈັກຂອງພຣະເຢຊູຄຣິສໄດ້ (ເບິ່ງ ບົດທີ ໔໑).

### *ການສົນທະນາ*

- ຄຳສອນບາງຢ່າງທີ່ພຣະເຢຊູຊົງມອບໃຫ້ຜູ້ຄົນອີກ ມີແນວໃດແດ່?

## ສາສນາຈັກຂອງພຣະເຢຊູຄຣິສຈະບໍ່ຖືກເອົາໄປຈາກໂລກອີກຈັກເທື່ອ

ບັດນີ້ ສາສນາຈັກທີ່ແທ້ຈິງຂອງພຣະເຢຊູຄຣິສ, ອຳນາດຖານະປະໂຣຫິດ, ແລະພຣະກິດຕິຄຸນໄດ້ຖືກຟື້ນຟູຄືນມາໃຫມ່ສູ່ໂລກແລ້ວ ມັນຈະບໍ່ຖືກນຳເອົາໄປຈາກໂລກອີກ. ພຣະບິດາຜູ້ສະຖິດໃນສວັນຊົງຕັສວ່າ ພຣະອົງຈະຊົງຈັດຕັ້ງອານາຈັກຂອງພຣະອົງທີ່ຈະບໍ່ຖືກທຳລາຍຈັກເທື່ອ. ອານາຈັກນີ້ເອີ້ນວ່າ ສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍ. ມັນຈະຕັ້ງຢູ່ຕລອດໄປ.

ຫລາຍໆຄົນໄດ້ເຂົ້າຮ່ວມສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍ. ມັນມີສະມາຊິກຂອງສາສນາຈັກຢູ່ຫລາຍໆປະເທດໃນແຜ່ນດິນໂລກ. ຄົນເປັນ

ຈຳນວນຫລວງຫລາຍພາກັນເຂົ້າຮ່ວມສາສນາຈັກ. ລູກໆຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາທັງຫມົດຈະມີໂອກາດໄດ້ຍິນພຣະກິດຕິຄຸນ ແລະຈະມີໂອກາດທີ່ຈະຮັບເອົາມັນ.

## *ການສົນທະນາ*

- ທ່ານສາມາດເຮັດຫຍັງໄດ້ແດ່ເພື່ອຊ່ວຍເຫລືອຄົນອື່ນໃຫ້ໄດ້ຍິນພຣະກິດຕິຄຸນຂອງພຣະເຢຊູຄຣິສ ເພື່ອວ່າເຂົາເຈົ້າຈະມີໂອກາດໄດ້ເຂົ້າຮ່ວມສາສນາຈັກຂອງພຣະອົງ?

## *ຂໍ້ອ້າງອີງ*

*ເປັນເວລາຫລາຍປີທີ່ສາສນາຈັກຂອງພຣະເຢຊູຄຣິສບໍ່ໄດ້ຢູ່ໃນໂລກ*

- ເອຊາຢາ ໒໔:໕ (ຜູ້ຄົນຈະປ່ຽນແປງຄວາມຈິງຂອງການສອນທີ່ແທ້ຈິງ.)
- ອາໂມດ ໘:໑໑–໑໒ (ສາສດາບອກວ່າ ຜູ້ຄົນຈະບໍ່ຮູ້ຊອກຫາຄຳສອນທີ່ແທ້ຈິງຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.)
- ໔ ນີໄຟ ໑:໒໗–໒໙ (ຜູ້ຄົນຈະສ້າງສາສນາຈັກຂອງເຂົາເອງ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກສາຄຳສັນຍາຂອງພຣະອົງວ່າຈະນຳສາສນາຈັກທີ່ແທ້ຈິງມາສູ່ໂລກອີກ*

- ເອຊາຢາ ໒:໒–໔ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງສ້າງອານາຈັກຂອງພຣະອົງອີກໃນຍຸກສຸດທ້າຍ.)
- ໒ ນີໄຟ ໓:໗–໑໕ (ສາສດາຄົນນຶ່ງຊື່ໂຢເຊັບ ສມິທ ໄດ້ຊ່ວຍໃນການຟື້ນຟູຄວາມຈິງມາສູ່ໂລກ.)

*ສາສນາຈັກໃນປັດຈຸບັນນີ້ຖືກຈັດຕັ້ງໃນແບບດຽວກັນດັ່ງທີ່ພຣະເຢຊູຊົງໄດ້ຈັດຕັ້ງຂຶ້ນເມື່ອພຣະອົງຊົງຢູ່ໃນໂລກນີ້*

- ກິຈການ ໓:໒໐–໒໑ (ສາສດາບອກວ່າ ທຸກສິ່ງຈະຖືກຟື້ນຟູຄືນມາ.)
- ໒ ນີໄຟ ໒໙:໙ (ພຣະເຢຊູຊົງເປັນແບບດຽວ ມື້ວານນີ້, ມື້ນີ້ ແລະຊົ່ວນິຣັນດອນ.)
- ໂມໂຣໄນ ໑໐:໗–໑໙ (ພຣະເຢຊູຊົງມອບຂອງປະທານທາງພຣະວິນຍານໃຫ້ມື້ວານນີ້, ມື້ນີ້ ແລະຊົ່ວນິຣັນດອນ.)

*ສາສນາຈັກຂອງພຣະເຢຊູຄຣິສ ຈະບໍ່ຖືກນຳອອກໄປຈາກໂລກອີກຈັກເທື່ອ*

- ດານີເອນ ໒:໔໔–໔໕; ມັດທາຍ ໑໖:໔໓ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສັນຍາວ່າ ຈະຈັດຕັ້ງອານາຈັກຂຶ້ນ ຊຶ່ງຈະບໍ່ຖືກທຳລາຍອີກ.)




*ສາສນາຈັກຂອງພຣະເຢຊູຄຣິສປຽບເໝືອນຕຶກທີ່ມີພຣະຄຣິສເປັນຫີນເສົາເອກ ແລະອັຄສາວົກແລະສາສດາ ເປັນພື້ນຖານ.*

# ອົງການຖານະປະໂລຫິດ

*ບົດທີ ໔໐*

---

*ຜູ້ຊາຍສາມາດຮັບອຳນາດເພື່ອຈະເຮັດວຽກງານຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້ແນວໃດ?*

**ເມື່ອຜູ້ຊາຍມີຖານະປະໂລຫິດ ຄົນນັ້ນສາມາດເຮັດວຽກງານແທນພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ**

ຖານະປະໂລຫິດເປັນອຳນາດທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບໃຫ້ຜູ້ຊາຍຜູ້ໃຫຍ່ແລະຊາວຫນຸ່ມທີ່ມີຄ່າຄວນໃຫ້ເຮັດວຽກງານຂອງພຣະອົງຢູ່ໃນໂລກນີ້. ພຣະອົງຊົງມອບອຳນາດນີ້ໃຫ້ແກ່ພຣະເຢຊູ. ພຣະເຢຊູກໍຊົງໄດ້ມອບອຳນາດນີ້ໃຫ້ແກ່ຜູ້ຊາຍຢູ່ໃນໂລກ. ຜູ້ຊາຍຜູ້ໃຫຍ່ແລະຊາຍຫນຸ່ມຜູ້ດຳລົງຖານະປະໂລຫິດເປັນຕົວແທນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູ. ພວກເຂົາສາມາດເຮັດສິ່ງທີ່ຜູ້ຊາຍຜູ້ໃຫຍ່ແລະຊາຍຫນຸ່ມຄົນອື່ນໆບໍ່ສາມາດເຮັດ. ພວກເຂົາສາມາດເປັນຜູ້ສອນສາສນາ ແລະສອນພຣະກິດຕິຄຸນທີ່ແທ້ຈິງຂອງພຣະເຢຊູຄຣິສ. ພວກເຂົາສາມາດໃຫ້ພອນແກ່ຄົນເຈັບປ່ວຍ. ພວກເຂົາສາມາດເຮັດວຽກງານທີ່ສັກສິດໃນສາສນາຈັກ.

ພຣະເຢຊູຊົງໄດ້ບອກພວກເຮົາເຖິງວິທີຂອງການມອບຖານະປະໂລຫິດໃຫ້ແກ່ຜູ້ຊາຍຜູ້ໃຫຍ່ແລະຊາຍຫນຸ່ມຄົນອື່ນໆ. ຜູ້ຊາຍທີ່ດຳລົງຖານະປະໂລຫິດຈະວາງມືຂອງຕົນໃສ່ເທິງຫົວຂອງຜູ້ທີ່ຈະໄດ້ຮັບຖານະປະໂລຫິດ. ແລ້ວຜູ້ດຳລົງຖານະປະໂລຫິດຈະມອບຖານະປະໂລຫິດໃຫ້ແກ່ລາວໃນພຣະນາມຂອງພຣະເຢຊູຄຣິສ ແລະໂດຍອຳນາດຂອງຖານະປະໂລຫິດທີ່ລາວດຳລົງຢູ່.

ນີ້ແຕ່ຊາຍຜູ້ໃຫຍ່ຫລືຊາຍໜຸ່ມຜູ້ເຊື່ອຟັງພຣະບັນຍັດຂອງພຣະເຢຊູເທົ່ານັ້ນຈະສາມາດຮັບຖານະ ປະໂຣຫິດໄດ້. ພຣະເຢຊູຈະຊົງອະນຸຍາດໃຫ້ຊາຍທີ່ດຳລົງຖານະປະໂຣຫິດເຮັດວຽກຂອງພຣະອົງ ຖ້າພວກເຂົາເຊື່ອຟັງຕໍ່ພຣະບັນຍັດຂອງພຣະອົງ.

ຈະບໍ່ມີໃຜທີ່ຍິ່ງໃຫຍ່ກວ່າຊາຍຜູ້ໃຫຍ່ແລະຊາຍໜຸ່ມທີ່ໃຊ້ຖານະປະໂຣຫິດຂອງຕົນໃນວິທີທີ່ເໝາະສົມ.

*ການສົນທະນາ*

- ຖານະປະໂຣຫິດແມ່ນຫຍັງ?
- ແມ່ນໃຜສາມາດຮັບຖານະປະໂຣຫິດໄດ້?

## ຖານະປະໂຣຫິດຖືກແບ່ງອອກເປັນສອງຢ່າງ

ຖານະປະໂຣຫິດສອງຢ່າງແມ່ນ ຖານະປະໂຣຫິດແຫ່ງແອຣັນ ແລະຖານະປະໂຣຫິດແຫ່ງເມັນຄີເຊເດັກ. ບາງຄັ້ງຖານະປະໂຣຫິດແຫ່ງແອຣັນຖືກເອີ້ນວ່າ ຖານະປະໂຣຫິດທີ່ຕ່ຳກວ່າ ແລະຖານະປະໂຣຫິດແຫ່ງເມັນຄີເຊເດັກຖືກເອີ້ນວ່າ ຖານະປະໂຣຫິດທີ່ສູງກວ່າ.

*ຖານະປະໂຣຫິດແຫ່ງແອຣັນ*

ຖານະປະໂຣຫິດແຫ່ງແອຣັນຖືກເອີ້ນຕາມຊື່ຂອງ ອາໂຣນ ອ້າຍຂອງສາສດາໂມເຊ ອາໂຣນເປັນຜູ້ນຳຜູ້ນຶ່ງໃນວັນເວລາຂອງໂມເຊ.

ຜູ້ຊາຍຜູ້ໃຫຍ່ຫລືຊາຍໜຸ່ມຜູ້ມີອາຍຸຢ່າງນ້ອຍ ໑໔ ປີ ສາມາດດຳລົງຖານະປະໂຣຫິດແຫ່ງແອຣັນໄດ້. ຜູ້ຊາຍຜູ້ໃຫຍ່ແລະຊາຍໜຸ່ມຜູ້ດຳລົງຖານະປະໂຣຫິດແຫ່ງແອຣັນສາມາດສອນຄົນອື່ນໆ. ບາງຄົນທີ່ດຳລົງຖານະປະໂຣຫິດແຫ່ງແອຣັນສາມາດໃຫ້ບັບຕິສະມາແກ່ຜູ້ຄົນແລະຊ່ວຍເຫລືອພວກເຂົາ ໃຫ້ຈື່ຈຳພຣະເຢຊູແລະຊ່ວຍເຫລືອຕ່າງໆໃນຫລາຍວິທີ.

*ຖານະປະໂຣຫິດແຫ່ງເມັນຄີເຊເດັກ*

ຖານະປະໂຣຫິດແຫ່ງເມັນຄີເຊເດັກຖືກເອີ້ນຕາມຊື່ຂອງຊາຍຄົນນຶ່ງຊື່ວ່າ ເມັນຄີເຊເດັກ. ເມັນຄີເຊເດັກເປັນຊາຍທີ່ຊອບທັມຄົນນຶ່ງທີ່ມີຖານະປະໂຣຫິດ.

ທ່ານມີຊີວິດຢູ່ໃນສະໄໝຂອງອັບຣາຮາມ ທ່ານເປັນມະຫາ ປະໂຣຫິດ. ກ່ອນຖານະປະໂຣຫິດຖືກເອີ້ນຕາມຊື່ຂອງທ່ານ ມັນຖືກເອີ້ນວ່າ ຖານະປະໂຣຫິດບໍຣິສຸດສັກສິດຕາມພຣະຖານະຂອງພຣະບຸດຂອງພຣະຜູ້ເປັນເຈົ້າ. ຊື່ຂອງຖານະປະໂຣຫິດຖືກປ່ຽນມາເປັນເມັນຄີເຊເດັກເພື່ອຫລຸດຜ່ອນການໃຊ້ພຣະນາມຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໃຫ້ຫນ້ອຍລົງ.

ຜູ້ຊາຍທີ່ມີອາຍຸຢ່າງນ້ອຍ ໑໘ ປີ ຈະສາມາດດໍາລົງຖານະປະໂຣຫິດແຫ່ງເມັນຄີເຊເດັກນີ້. ຜູ້ຊາຍທີ່ດໍາລົງຖານະປະໂຣຫິດແຫ່ງເມັນຄີເຊເດັກມີອໍານາດທີ່ຈະໃຫ້ພອນແກ່ສະມາຊິກຂອງສາສນາຈັກ. ພຣະເຢຊູຊົງເປີດເຜີຍແກ່ພວກເຮົາເຖິງສິ່ງທີ່ພວກເຂົາຕ້ອງຮູ້ແລະຕ້ອງເວົ້າໃນການໃຫ້ພອນເຫລົ່ານີ້.

### *ການສົນທະນາ*

- ຖານະປະໂຣຫິດສອງຢ່າງໃນສາສນາຈັກມີຫຍັງແດ່?

### ຕໍາແຫນ່ງແລະອໍານາດຂອງຖານະປະໂຣຫິດແຕ່ລະກຸ່ມ

ຜູ້ຊາຍຜູ້ໃຫຍ່ແລະຊາຍຫນຸ່ມຜູ້ມີຖານະປະໂຣຫິດແຫ່ງແອຣັນແລະໄດ້ຖືກແຕ່ງຕັ້ງຕໍ່ຕໍາແຫນ່ງປະໂຣຫິດ, ໃນຖານະປະໂຣຫິດນີ້ມີອໍານາດທີ່ຈະເຮັດສິ່ງດັ່ງຕໍ່ໄປນີ້:

໑. ສອນພຣະກິດຕິຄຸນ.
໒. ໃຫ້ບັບຕິສະມາ.
໓. ຕຽມ, ໃຫ້ພອນແລະແຈກຢາຍ *ສິນຣະລຶກ.
໔. ຊ່ວຍເຫລືອຜູ້ດໍາລົງຖານະປະໂຣຫິດແຫ່ງເມັນຄີເຊເດັກໃນການຢ້ຽມຢາມ
ແລະໃນການຊ່ວຍເຫລືອສະມາຊິກຂອງສາສນາຈັກ.
໕. ມອບອໍານາດຖານະປະໂຣຫິດແຫ່ງແອຣັນແກ່ຄົນອື່ນ.

ຜູ້ຊາຍຜູ້ມີຖານະປະໂຣຫິດແຫ່ງເມັນຄີເຊເດັກມີອໍານາດທີ່ຈະເຮັດສິ່ງເຫລົ່ານີ້:

໑. ນໍາພາສາສນາຈັກ.
໒. ສອນພຣະກິດຕິຄຸນ.
໓. ມອບຂອງປະທານແຫ່ງພຣະວິນຍານບໍຣິສຸດ.
໔. ມອບພອນພິເສດ.

໕. ໃຫ້ພອນແກ່ເດັກແລະຕັ້ງຊື່ເດັກ.
໖. ໃຫ້ພອນແກ່ຄົນເຈັບປ່ວຍ.
໗. ມອບຖານະປະໂຣຫິດໃຫ້ແກ່ຄົນອື່ນ.
໘. ເຮັດທຸກສິ່ງທັງຫມົດທີ່ຜູ້ຊາຍຜູ້ໃຫຍ່ແລະຊາຍຫນຸ່ມຜູ້ດຳລົງຖານະ
ປະໂຣຫິດແຫ່ງແອຣັນເຮັດໄດ້.

ເມື່ອຜູ້ຊາຍໄດ້ຮັບຖານະປະໂຣຫິດ, ຄົນນັ້ນຈະຖືກແຕ່ງຕັ້ງຕໍ່ຕຳແຫນ່ງໃນຖານະປະໂຣຫິດ. ທັງສອງຖານະປະໂຣຫິດແຫ່ງແອຣັນແລະເມັນຄີເຊເດັກມີຫລາຍຕຳແຫນ່ງ. ແຕ່ລະຕຳແຫນ່ງມີພາລະຫນ້າທີ່ພິເສດ.

*ການສົນທະນາ*

- ຜູ້ທີ່ດຳລົງຖານະປະໂຣຫິດແຫ່ງເມັນຄີເຊເດັກມີອຳນາດເຮັດຫຍັງແດ່?
- ຜູ້ທີ່ດຳລົງຖານະປະໂຣຫິດແຫ່ງແອຣັນມີອຳນາດເຮັດຫຍັງແດ່?

*ຕຳແຫນ່ງຂອງຖານະປະໂຣຫິດແຫ່ງແອຣັນແລະຫນ້າທີ່ຂອງມັນ*

ຕຳແຫນ່ງໃນຖານະປະໂຣຫິດແຫ່ງແອຣັນຄື ມັກຄະນາຍົກ, ຄູສອນ, ປະໂຣຫິດ, ແລະອະທິການ.

ມັກຄະນາຍົກ

ສະມາຊິກຜູ້ຊາຍທີ່ເປັນສະມາຊິກຂອງສາສນາຈັກ ສາມາດຮັບຖານະປະໂຣຫິດແລະຖືກແຕ່ງຕັ້ງເປັນມັກຄະນາຍົກໄດ້ຖ້າລາວມີອາຍຸຢ່າງນ້ອຍ ໑໒ ປີ. ລາວຕ້ອງເຊື່ອຟັງພຣະບັນຍັດຂອງພຣະເຢຊູແລະກົດຂອງສາສນາຈັກ.
ນີ້ເປັນຫນ້າທີ່ຂອງມັກຄະນາຍົກ:

໑. ຢາຍສິນລະລຶກ.
໒. ຊ່ວຍເຫລືອຜູ້ນຳຂອງລາວ.
໓. ຊ່ວຍເຫລືອຄູສອນໃນຖານະປະໂຣຫິດແຫ່ງແອຣັນເພື່ອກະທຳຫນ້າທີ່
ຂອງພວກເຂົາເມື່ອຖືກຂໍຮ້ອງ.

ມັກຄະນາຍົກບໍ່ສາມາດມອບຖານະປະໂຣຫິດໃຫ້ແກ່ຄົນອື່ນ ແຕ່ບໍ່ສາມາດໃຫ້ບັບຕິສະມາ ຫລືໃຫ້ພອນສິນລະລຶກ.

ຄູສອນ

ສະມາຊິກຜູ້ຊາຍຂອງສາສນາຈັກສາມາດຮັບຖານະປະໂຣຫິດແລະຖືກແຕ່ງຕັ້ງເປັນຄູສອນຖ້າລາວມີອາຍຸຢ່າງນ້ອຍ ໑໔ ປີ. ລາວຕ້ອງເຊື່ອຟັງພຣະບັນຍັດຂອງພຣະເຢຊູ ແລະກົດຂອງສາສນາຈັກ.

ນີ້ເປັນໜ້າທີ່ຂອງຄູສອນ:

໑. ດູແລສະມາຊິກຂອງສາສນາຈັກ, ໂດຍຊ່ວຍເຫລືອພວກເຂົາໃຫ້ໄດ້ຮັບສິ່ງທີ່ຕ້ອງການທາງດ້ານຮ່າງກາຍແລະດ້ານວິນຍານ.
໒. ຊ່ວຍເຫລືອສະມາຊິກໃຫ້ເຊື່ອຟັງພຣະບັນຍັດຂອງພຣະເຢຊູ.
໓. ຊ່ວຍເຫລືອຄົນທີ່ດຳລົງຖານະປະໂຣຫິດແຫ່ງເມັນຄີເຊເດັກໂດຍໄປຢ້ຽມຢາມຄອບຄົວນຳເຂົາເຈົ້າ ແລະໂດຍການຊ່ວຍເຫລືອໃນການສິດສອນຄອບຄົວທີ່ໄປຢ້ຽມຢາມໃຫ້ເຊື່ອຟັງພຣະບັນຍັດຂອງພຣະເຢຊູ.
໔. ຕຽມສິນຣະລຶກ.
໕. ເມື່ອຈຳເປັນ, ເຮັດໜ້າທີ່ທັງໝົດຂອງມັກຄະນາຍົກ.

ຜູ້ສອນບໍ່ສາມາດມອບຖານະປະໂຣຫິດໃຫ້ແກ່ຄົນອື່ນ ແລະບໍ່ສາມາດໃຫ້ບັບຕິສະມາແກ່ຜູ້ອື່ນ ຫລືບໍ່ສາມາດໃຫ້ພອນສິນຣະລຶກ.

ປະໂຣຫິດ

ສະມາຊິກຜູ້ຊາຍທີ່ເປັນສະມາຊິກຂອງສາສນາຈັກສາມາດຮັບຖານະປະໂຣຫິດ ແລະຖືກແຕ່ງຕັ້ງເປັນປະໂຣຫິດ ຖ້າລາວມີອາຍຸຢ່າງນ້ອຍ ໑໖ ປີ. ລາວຕ້ອງເຊື່ອຟັງພຣະບັນຍັດຂອງພຣະເຢຊູແລະກົດໝາຍຂອງສາສນາຈັກ.

ນີ້ເປັນໜ້າທີ່ຂອງປະໂຣຫິດ:

໑. ສອນພຣະກິດຕິຄຸນ.
໒. ຊຸກຍູ້ສະມາຊິກໃຫ້ເຊື່ອຟັງພຣະບັນຍັດຂອງພຣະເຢຊູ.
໓. ໃຫ້ບັບຕິສະມາ.
໔. ໃຫ້ພອນສິນຣະລຶກ.
໕. ແຕ່ງຕັ້ງມັກຄະນາຍົກ, ຄູສອນແລະປະໂຣຫິດ.

໒. ນຳພາກອງປະຊຸມເມື່ອບໍ່ມີໃຜດຳລົງຖານະປະໂຣຫິດແຫ່ງເມັນຄີເຊເດັກ ຢູ່ໃນກອງປະຊຸມນັ້ນ.

ປະໂຣຫິດສາມາດເຮັດທຸກສິ່ງທັງຫມົດທີ່ຄູສອນແລະມັກຄະນາຍົກເຮັດໄດ້. ລາວບໍ່ສາມາດແຕ່ງຕັ້ງຄົນອື່ນຕໍ່ຕຳແຫນ່ງອະທິການຫລືຕໍ່ຕຳແຫນ່ງອື່ນໆໃນຖານະປະໂຣຫິດແຫ່ງເມັນຄີເຊເດັກ.

ອະທິການ

ອະທິການເປັນຜູ້ນຳຂອງຫວອດ.

ນີ້ເປັນຫນ້າທີ່ຂອງອະທິການ:

໑. ນຳພາຜູ້ດຳລົງຖານະປະໂຣຫິດແຫ່ງແອຣົນໃນຫວອດຂອງຕົນ.
໒. ນຳພາໂຄຣົມຂອງປະໂຣຫິດໃນຫວອດຂອງຕົນ.
໓. ຊ່ວຍເຫລືອສະມາຊິກຂອງສາສນາຈັກດ້ານອາຫານ, ເຄື່ອງນຸ່ງຫົ່ມ, ແລະສິ່ງອື່ນໆໃນເວລາສຸກເສີນ.
໔. ຕັດສິນເຖິງຄ່າຄວນຂອງສະມາຊິກຂອງສາສນາຈັກສຳລັບພອນແລະສິດທິພິເສດບາງຢ່າງ.
໕. ຮັບເອົາເງິນບໍຣິຈາກແລະສິ່ງອື່ນໆທີ່ສະມາຊິກມອບໃຫ້ສາສນາຈັກ.
໖. ອົບລົມແລະນຳພາສະມາຊິກໃນຫວອດເມື່ອເຂົາເຈົ້າຂໍຄວາມຊ່ວຍເຫລືອທາງວິນຍານ ຫລືເມື່ອອະທິການຄິດວ່າ ເຂົາເຈົ້າຕ້ອງການຄຳແນະນຳ.

ປະທານຂອງສາສນາຈັກແນະນຳປະທານສະເຕກໃຫ້ແຕ່ງຕັ້ງຜູ້ຊາຍໃຫ້ເປັນອະທິການ.

### *ການສົນທະນາ*

• ຫນ້າທີ່ຂອງມັກຄະນາຍົກ, ຄູສອນ, ປະໂຣຫິດ ແລະອະທິການມີຫຍັງແດ່?

ຕຳແຫນ່ງຂອງຖານະປະໂຣຫິດແຫ່ງເມັນຄີເຊເດັກແລະຫນ້າທີ່ຂອງມັນ

ຕຳແຫນ່ງຂອງຖານະປະໂຣຫິດແຫ່ງເມັນຄີເຊເດັກຄື ແອລເດີ, ມະຫາປະໂຣຫິດ, ປິຕຸ, ສາວົກເຈັດສິບ, ແລະອັຄສາວົກ. ແຕ່ລະຕຳແຫນ່ງມີຫນ້າທີ່ສະເພາະ.

ແອລເດີ

໑. ໃຫ້ບັບຕິສະມາ.
໔. ມອບຂອງປະທານແຫ່ງພຣະວິນຍານບໍລິສຸດ.
໓. ນຳພາກອງປະຊຸມ.
໔. ນຳພາກອງປະຊຸມເມື່ອມັນບໍ່ມີມະຫາປະໂຣຫິດຢູ່ໃນກອງປະຊຸມນັ້ນ.
໕. ສອນພຣະກິດຕິຄຸນ.
໖. ໃຫ້ພອນແກ່ຄົນເຈັບປ່ວຍ.
໗. ໃຫ້ພອນແກ່ເດັກເກີດໃຫມ່.
໘. ມອບຖານະປະໂຣຫິໃຫ້ແກ່ຄົນອື່ນແລະແຕ່ງຕັ້ງເຂົາເຈົ້າຕໍ່ຕຳແຫນ່ງຂອງ ແອລເດີ, ປະໂຣຫິດ, ຄູສອນ, ຫລືມັກຄະນາຍົກ.
໙. ເມື່ອຈຳເປັນ, ເຮັດຫນ້າທີ່ທັງຫມົດຂອງປະໂຣຫິດ, ຄູສອນແລະມັກຄະນາຍົກ.

ມະຫາປະໂຣຫິດ

ຫນ້າທີ່ທີ່ສຳຄັນຂອງມະຫາປະໂຣຫິດຄື ເປັນຜູ້ນຳຂອງຜູ້ຄົນແລະດູແລສິ່ງທາງວິນຍານທັງຫມົດໃນສາສນາຈັກ. ມະຫາປະໂຣຫິດຍັງສາມາດເຮັດຫນ້າທີ່ອັນໃດກໍໄດ້ຂອງແອລເດີ, ປະໂຣຫິດ, ຄູສອນຫລືມັກຄະນາຍົກຖ້າຈຳເປັນ.

ປິຕຸ

ປິຕຸເປັນມະຫາປະໂຣຫິດຜູ້ໃຫ້ພອນພິເສດແກ່ສະມາຊິກຂອງສາສນາຈັກ. ພອນເຫລົ່ານີ້ເອີ້ນວ່າ ປິຕຸພອນ. ປິຕຸພອນຊ່ວຍສະມາຊິກໃຫ້ເຂົ້າໃຈສິ່ງທີ່ພຣະເຢຊູຊົງຕ້ອງການໃຫ້ພວກເຂົາເຮັດ.

ສາວົກເຈັດສິບ

ຫນ້າທີ່ທີ່ສຳຄັນຂອງສາວົກເຈັດສິບຄືການສອນພຣະກິດຕິຄຸນຕໍ່ຜູ້ຄົນທີ່ບໍ່ໄດ້ເປັນສະມາຊິກຂອງສາສນາຈັກ. ສາວົກເຈັດສິບຍັງສາມາດຊ່ວຍອັຄສາວົກປົກຄອງສາສນາຈັກນຳອີກ.

ອັຄສາວົກ

ອັຄສາວົກເປັນພະຍານພິເສດຂອງພຣະເຢຊູຄຣິສຕໍ່ທຸກຄົນໃນໂລກ. ອັຄສາວົກຊ່ວຍ

ດູແລວຽກງານຂອງສາສນາຈັກທົ່ວໂລກ. ອັຄສາວົກແຕ່ລະຄົນມີອຳນາດຂອງຖານະປະໂຣຫິດ. ແຕ່ປະທານຂອງສາສນາຈັກຜູ້ເປັນອັຄສາວົກໃນຕົວເທົ່ານັ້ນສາມາດໃຊ້ອຳນາດທັງໝົດຂອງຖານະປະໂຣຫິດ. ອັຄສາວົກຄົນອື່ນໆຈະໃຊ້ອຳນາດຖານະປະໂຣຫິດຕາມຄຳແນະນຳຂອງປະທານຂອງສາສນາຈັກເທົ່ານັ້ນ.

*ຂໍກະແຈຂອງຖານະປະໂຣຫິດ*

ຖານະປະໂຣຫິດເປັນອຳນາດທີ່ຈະເຮັດວຽກງານໃນພຣະນາມຂອງພຣະເຢຊູ ແລະຈະນຳພວກເຮົາກັບຄືນ ໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ຂໍກະແຈຂອງຖານະປະໂຣຫິດເປັນອຳນາດທີ່ອະນຸຍາດໃຫ້ໃຊ້ອຳນາດນັ້ນ. ນີ້ໝາຍຄວາມວ່າ ຫລາຍຄົນອາດມີຖານະປະໂຣຫິດ, ແຕ່ຕ້ອງມີຜູ້ໃດຜູ້ນຶ່ງທີ່ມີຖານະປະໂຣຫິດເປັນຜູ້ອະນຸຍາດໃຫ້ຄົນເຫລົ່ານັ້ນໃຊ້ຖານະປະໂຣຫິດ. ຕົວຢ່າງເຊັ່ນ: ປະໂຣຫິດມີອຳນາດທີ່ຈະໃຫ້ບັບຕິສະມາ, ແຕ່ລາວຈະບໍ່ສາມາດໃຫ້ບັບຕິສະມາໄດ້ຈົນກວ່າ ອະທິການຈະອະນຸຍາດໃຫ້ຄົນນັ້ນເຮັດ. ອະທິການເປັນຜູ້ຖືຂໍກະແຈຂອງຖານະປະໂຣຫິດໃນຫວອດ. ຕົວຢ່າງນຶ່ງອີກຄື: ຜູ້ດຳລົງຖານະປະໂຣຫິດຈະສາມາດມອບຖານະປະໂຣຫິດໃຫ້ຄົນອື່ນໄດ້ ກໍພຽງແຕ່ລາວໄດ້ຮັບອະນຸຍາດຈາກຄົນທີ່ຖືຂໍກະແຈຖານະປະໂຣຫິດເສັຽກ່ອນ. ນີ້ອາດເປັນອະທິການ, ປະທານສະເຕກ ຫລືປະທານຄະນະເຜີຍແຜ່.

## *ການສົນທະນາ*

- ຂໍກະແຈຖານະປະໂຣຫິດແມ່ນຫຍັງ?

*ກຸ່ມຂອງຜູ້ຊາຍຜູ້ໃຫຍ່ແລະຊາຍໜຸ່ມຜູ້ດຳລົງຖານະປະໂຣຫິດ*

ຜູ້ຊາຍຜູ້ໃຫຍ່ແລະຊາຍໜຸ່ມຜູ້ມີຕຳແໜ່ງດຽວກັນໃນຖານະປະໂຣຫິດຈະຖືກຈັດເຂົ້າເປັນກຸ່ມ. ກຸ່ມເຫລົ່ານີ້ເອີ້ນວ່າ ໂຄຣັມ. ໃນຖານະປະໂຣຫິດແຫ່ງເມັນຄີເຊເດັກມີ ໂຄຣັມຂອງແອລເດີ ແລະໂຄຣັມຂອງມະຫາປະໂຣຫິດ.

ໃນຖານະປະໂຣຫິດແຫ່ງແອຣັນ ມັນມີ ໂຄຣັມຂອງມັກຄະນາຍົກ, ໂຄຣັມຂອງຄູສອນ, ແລະໂຄຣັມຂອງ ປະໂຣຫິດ.

ເມື່ອຜູ້ຊາຍຜູ້ໃຫຍ່ຫລືຊາຍໜຸ່ມ ຖືກແຕ່ງຕັ້ງຕໍ່ຕຳແໜ່ງໃນຖານະປະໂຣຫິດ, ຄົນນັ້ນຈະເຂົ້າຢູ່ໃນກຸ່ມຂອງໂຄຣັມຖານະປະໂຣຫິດ ຮ່ວມກັບຄົນທີ່ຢູ່ໃນຕຳແໜ່ງ

ນັ້ນຈົນກວ່າຕົນເອງຈະຖືກແຕ່ງຕັ້ງຕໍ່ຕຳແຫນ່ງໃຫມ່. ຜູ້ນຳຂອງໂຄຣັມຈະສອນ ແລະຊ່ວຍສະມາຊິກຢູ່ໃນໂຄຣັມ.

*ໂຄຣັມຂອງຖານະປະໂຣຫິດແຫ່ງເມັນຄິເຊເດັກ*

ໂຄຣັມຂອງແອລເດີ

ໂຄຣັມຂອງແອລເດີຄວນມີແອລເດີເຖິງ ໙໖ ຄົນ ແລະມັນຈະຮ່ວມແອລເດີທຸກໆ ຄົນທີ່ຢູ່ໃນຫວອດ. ຖ້າມັນມີຫລາຍກວ່າ ໙໖ ຄົນ, ໂຄຣັມຂອງແອລເດີອີກໂຄຣັມນຶ່ງຈະຖືກຈັດຕັ້ງຂຶ້ນ. ຜູ້ຊາຍຜູ້ທີ່ຍັງບໍ່ໄດ້ຮັບຖານະປະໂຣຫິດແຫ່ງເມັນຄິເຊເດັກເທື່ອ ສາມາດໄປຮ່ວມນຳແອລເດີເພື່ອຮໍ່າຮຽນ, ເພື່ອເຮັດກິຈກັມຕ່າງໆໃນສັງຄົມ ແລະເພື່ອຮ່ວມເຮັດວຽກງານຕ່າງໆ.

ປະທານແລະທີ່ປຶກສາສອງຄົນຈະເປັນຜູ້ນຳພາໂຄຣັມຂອງແອລເດີ.

ໂຄຣັມຂອງມະຫາປະໂຣຫິດ

ໂຄຣັມຂອງມະຫາປະໂຣຫິດລວມທັງທຸກຄົນທີ່ດຳລົງຢູ່ໃນຕຳແຫນ່ງມະຫາ ປະໂຣຫິດໃນສະເຕກ. ປະທານຂອງສະເຕກແລະທີ່ປຶກສາຂອງທ່ານສອງຄົນເປັນ ຜູ້ນຳໂຄຣັມຂອງມະຫາປະໂຣຫິດ.

*ໂຄຣັມຕ່າງໆຂອງຖານະປະໂຣຫິດແຫ່ງແອຣັນ*

ໂຄຣັມຂອງມັກຄະນາຍົກ

ໂຄຣັມຂອງມັກຄະນາຍົກຄວນມີຈຳນວນມັກຄະນາຍົກເຖິງ ໑໒ ຄົນ. ຖ້າມີ ມັກຄະນາຍົກຫລາຍກວ່າ ໑໒ ຄົນໃນຫວອດ, ໂຄຣັມຂອງມັກຄະນາຍົກອີກ ໂຄຣັມນຶ່ງຈະຖືກຈັດຕັ້ງຂຶ້ນ. ໂຄຣັມມັກຄະນາຍົກຈະມີປະທານແລະທີ່ປຶກສາ ສອງຄົນ.

ໂຄຣັມຂອງຄູສອນ

ໂຄຣັມຂອງຄູສອນຄວນມີຈຳນວນເຖິງ ໒໔ ຄົນ. ຖ້າມັນມີຫລາຍກວ່າ ໒໔ ຄົນ ໃນຫວອດ, ໂຄຣັມຂອງຄູສອນອີກໂຄຣັມນຶ່ງຈະຖືກຈັດຕັ້ງຂຶ້ນ. ໂຄຣັມຂອງຄູສອນ ຈະມີປະທານແລະທີ່ປຶກສາສອງຄົນ.

## ໂຄຣັມຂອງປະໂຣຫິດ

ໂຄຣັມຂອງປະໂຣຫິດຄວນມີຈຳນວນເຖິງ ໔໘ ຄົນ. ຖ້າມັນມີປະໂຣຫິດຫລາຍກວ່າ ໔໘ ຄົນໃນຫວອດ, ໂຄຣັມຂອງປະໂຣຫິດອີກໂຄຣັມນຶ່ງຈະຖືກຈັດຕັ້ງຂຶ້ນ. ປະທານຂອງໂຄຣັມຂອງປະໂຣຫິດແມ່ນອະທິການ ຫລືປະທານສາຂາ. ທ່ານຈະເລືອກເອົາປະໂຣຫິດສອງຄົນຈາກໂຄຣັມໃຫ້ເປັນຜູ້ລອງຂອງທ່ານ.

### *ການສົນທະນາ*

- ໂຄຣັມແມ່ນຫຍັງ?
- ມີຈັກຄົນໃນໂຄຣັມຂອງແອລເດີ, ມະຫາປະໂຣຫິດ, ມັກຄະນາຍົກ, ຄູສອນ, ແລະປະໂຣຫິດ?
- ສະມາຊິກໃນໂຄຣັມສາມາດຊ່ວຍກັນແລະກັນໄດ້ແນວໃດ?

### *ຂໍ້ອ້າງອີງ*

- ເຣັບເຣີ ກ; D&C 84:6–30 (ຖານະປະໂຣຫິດແຫ່ງເມັນຄີເຊເດັກ ແລະຖານະປະໂຣຫິດແຫ່ງແອຣັນ ຖືກອະທິບາຍໄວ້.)
- D&C 20:38–60; D&C 107 (ຕຳແຫນ່ງແລະຫນ້າທີ່ຂອງຖານະປະໂຣຫິດຖືກບົ່ງໄວ້.)

# ພິທີການຕ່າງໆ

*ບົດທີ ໔໑*

*ຜູ້ຊາຍຜູ້ໃຫຍ່ແລະຊາຍຫນຸ່ມສາມາດເຮັດຫຍັງແດ່ດ້ວຍຖານະປະໂຣຫິດ?*

**ດ້ວຍຖານະປະໂຣຫິດ, ຜູ້ຊາຍຈະມີອຳນາດແບບດຽວກັບພຣະເຢຊູຊົງມີເພື່ອປະກອບພິທີການຕ່າງໆ**

ພິທີການເປັນການກະທຳທີ່ສັກສິດປະກອບໂດຍຜູ້ທີ່ໄດ້ຮັບອຳນາດຖານະປະໂຣຫິດ. ການຮັບບັບຕິສະມາ, ການຢືນຢັນ, ການວາງມືໃສ່ເທິງຫົວຂອງຜູ້ເຈັບປ່ວຍ ແລະການໃຫ້ພອນແລະການຢາຍສິນຣະລຶກເປັນພິທີການສັກສິດບາງຢ່າງ.

ເມື່ອພຣະເຢຊູຊົງຢູ່ໃນໂລກ, ພຣະອົງຊົງໄດ້ປະກອບພິທີການຕ່າງໆເພື່ອຊ່ວຍເຫລືອຜູ້ຄົນ. ພຣະອົງຊົງປິ່ນປົວຄົນເຈັບແລະເຮັດໃຫ້ຄົນຕາບອດເຫັນໄດ້. ພຣະອົງຊົງເຮັດໃຫ້ຄົນຫູຫນວກໄດ້ຍິນ ແລະຍັງຊົງໄດ້ນຳຄົນທີ່ຕາຍແລ້ວຄືນມາສູ່ຊີວິດ. ພຣະອົງຊົງໄດ້ແຈກຢາຍສິນຣະລຶກໃຫ້ແກ່ຜູ້ຕິດຕາມຂອງພຣະອົງ.

ພຣະເຢຊູຊົງມອບອຳນາດໃຫ້ຜູ້ຊາຍທີ່ດຳລົງຖານະປະໂຣຫິດໃຫ້ປະກອບພິທີການ. ຜູ້ຊາຍຜູ້ໃຫຍ່ແລະຊາຍຫນຸ່ມທີ່ມີຄ່າຄວນແລະດຳລົງຖານະປະໂຣຫິດສາມາດປະກອບພິທີການໄດ້. ພວກເຂົາປະກອບພິທີການເພື່ອຈະໃຫ້ພອນແກ່ພວກເຮົາ ແລະເພື່ອຊ່ວຍເຫລືອພວກເຮົາໃຫ້ກາຍມາເປັນເຫມືອນພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຫລາຍຂຶ້ນອີກ. ພິທີການຕ່າງໆນີ້ ຊ່ວຍຕຽມພວກເຮົາທີ່ຈະກັບຄືນໄປຢູ່ນຳພຣະອົງອີກ.

ຍ້ອນວ່າພຣະເຢຊູຊົງມອບຖານະປະໂຣຫິດໃຫ້ແກ່ຜູ້ຊາຍຢູ່ໃນໂລກໃນປັດຈຸບັນນີ້, ພວກເຮົາສາມາດໄດ້ຮັບພອນຫລາຍໆຢ່າງໃນຊີວິດຂອງພວກເຮົາ. ພວກເຮົາ



*ພຣະເຢຊູຊົງມອບສິນຣະລຶກໃນອາຫານແລງຄາບສຸດທ້າຍໃຫ້ແກ່ອັຄສາວົກຂອງພຣະອົງ*

ໂດຍ ຄາລ ບລ໊ອກ. ຮູບແຜ່ນເດີມມີຢູ່ທີ່ Chapel of Frederiksborg Castle, ໃນປະເທດເດັນມາກ.
ໄດ້ຮັບອະນຸຍາດໃຫ້ໃຊ້ໂດຍຫໍພິພິທພັນ ຟຣີເດຣິກສເບີກ.

ສາມາດຮັບບັບຕິສະມາ, ຮັບຂອງປະທານແຫ່ງພຣະວິນຍານບໍລິສຸດ ແລະສາມາດ ຜະນຶກເຂົ້າກັບຄອບຄົວຂອງພວກເຮົາຊົ່ວນິຣັນດອນ.

ປະທານໂຄຣັມຄວນສອນສະມາຊິກຂອງໂຄຣັມຂອງເຂົາເຖິງວິທີປະກອບພິທີການ ເຫລົ່ານີ້. ຖ້າຜູ້ຊາຍຜູ້ໃດຜູ້ນຶ່ງທີ່ດຳລົງຖານະປະໂຣຫິດຈຳເປັນຕ້ອງປະກອບ ພິທີການແຕ່ບໍ່ຮູ້ຈັກເຮັດ, ລາວຄວນຂໍຄວາມຊ່ວຍເຫລືອແລະຮຽນຈາກປະທານ ໂຄຣັມຂອງຕົນ.

## *ການສົນທະນາ*

- ເປັນຫຍັງພິທີການຈຶ່ງຖືກປະກອບ?

## **ພິທີການຖືກປະກອບຂຶ້ນເພື່ອຊ່ວຍເຫລືອພວກເຮົາ**

*ບັບຕິສະມາ*

ບັບຕິສະມາເປັນພິທີການເບື້ອງຕົ້ນຂອງພຣະກິດຕິຄຸນຂອງພຣະເຢຊູຄຣິສ. ກ່ອນຜູ້ໃດຜູ້ນຶ່ງຈະຮັບບັບຕິສະມາ, ຜູ້ນັ້ນຕ້ອງມີສັດທາໃນພຣະເຢຊູ, ກັບໃຈ ຈາກບາບຂອງຕົນ ແລະມີຄວາມຕ້ອງການ ທີ່ຈະເຮັດໃນສິ່ງທີ່ພຣະເຢຊູຊົງ ສອນເສັຽ.

ພຽງແຕ່ຜູ້ດຳລົງຖານະປະໂຣຫິດເທົ່ານັ້ນ ສາມາດໃຫ້ບັບຕິສະມາແກ່ຄົນອື່ນ. ກ່ອນຈະໃຫ້ບັບຕິສະມາແກ່ຄົນອື່ນໄດ້ນັ້ນ, ຄົນນັ້ນຕ້ອງໄດ້ຮັບອະນຸຍາດຈາກ ອະທິການ ຫລືປະທານສາຂາຂອງຕົນເສັຽກ່ອນ. ແລ້ວຜູ້ຈະໃຫ້ບັບຕິສະມາ ຈະຍ່າງລົງໄປໃນນ້ຳພ້ອມດ້ວຍຜູ້ທີ່ຈະໄດ້ຮັບບັບຕິສະມາ. ຜູ້ຈະໃຫ້ບັບຕິສະມາ ຈະເອີ້ນຊື່ເຕັມຂອງຜູ້ຈະຮັບບັບຕິສະມາ ແລະຈະກ່າວຄຳອະທິຖານສັ້ນໆ ແລ້ວລາວຈະຈຸ່ມຄົນທີ່ກຳລັງຮັບບັບຕິສະມາລົງໃນນ້ຳຫມົດທັງຕົວ ແລ້ວດຶງ ລາວຂຶ້ນມາຈາກນ້ຳອີກ.

ຄຳອະທິຖານທີ່ຜູ້ໃຫ້ບັບຕິສະມາຈະກ່າວ ແມ່ນ: “ໂດຍໄດ້ຮັບມອບຫມາຍຈາກ ພຣະເຢຊູຄຣິສ, ຂ້າພະເຈົ້າໃຫ້ບັບຕິສະມາທ່ານໃນພຣະນາມຂອງພຣະບິດາ, ແລະຂອງພຣະບຸດ ແລະຂອງພຣະວິນຍານບໍລິສຸດ. ອາແມນ.”



ພວກເຮົາຮັບສິນຣະລຶກເພື່ອຊ່ວຍໃຫ້ພວກເຮົາລະນຶກເຖິງພຣະເຢຊູຄຣິສ
ແລະການຊົດໃຊ້ຂອງພຣະອົງ.

*ການສົນທະນາ*

• ພິທີການເບື້ອງຕົ້ນຂອງພຣະກິດຕິຄຸນຂອງພຣະເຢຊູຄຣິສແມ່ນຫຍັງ?

*ການມອບຂອງປະທານແຫ່ງພຣະວິນຍານບໍຣິສຸດ*

ຫລັງຈາກຄົນໄດ້ຮັບບັບຕິສະມາແລ້ວ, ຜູ້ຊາຍທີ່ດຳລົງຖານະປະໂຣຫິດແຫ່ງເມັນຄີເຊເດັກ ຈະວາງມືໃສ່ເທິງຫົວຂອງຜູ້ນັ້ນ ແລະຜູ້ນຶ່ງຈະກ່າວຄຳອະທິຖານພິເສດ. ໃນຄຳອະທິຖານນັ້ນ, ພວກເຂົາຈະຢືນຢັນຄົນທີ່ ຫາກໍໄດ້ຮັບບັບຕິສະມາໃຫ້ເປັນສະມາຊິກຂອງສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍ ແລະກ່າວກັບຄົນນັ້ນວ່າ, "ຈົ່ງຮັບພຣະວິນຍານບໍຣິສຸດ." ນີ້ຫມາຍຄວາມວ່າຄົນນັ້ນໄດ້ຮັບສິດທິທີ່ຈະໄດ້ຮັບ ການນຳພາຈາກຂອງພຣະວິນຍານບໍຣິສຸດສເມີເມື່ອຄົນນັ້ນພະຍາຍາມຢ່າງຈິງໃຈທີ່ຈະຮັກສາພຣະບັນຍັດຂອງພຣະເຢຊູ. ການຮັບຂອງປະທານແຫ່ງພຣະວິນຍານບໍຣິສຸດນີ້ເປັນພິທີການທີສອງຂອງພຣະກິດຕິຄຸນຂອງພຣະເຢຊູຄຣິສ. ແລ້ວຄົນທີ່ກຳລັງປະກອບພິທີການຈະໃຫ້ພອນແກ່ຄົນທີ່ຫາກໍໄດ້ຮັບບັບຕິສະມາຕາມການຊົງນຳຂອງພຣະວິນຍານບໍຣິສຸດ. ຜູ້ຊາຍຕ້ອງໄດ້ຮັບອະນຸຍາດຈາກອະທິການ ຫລືປະທານສາຂາຂອງຕົນກ່ອນຈຶ່ງຈະສາມາດມອບຂອງປະທານແຫ່ງພຣະວິນຍານບໍຣິສຸດໄດ້.

*ການສົນທະນາ*

• ແມ່ນໃຜສາມາດມອບຂອງປະທານແຫ່ງພຣະວິນຍານບໍຣິສຸດ?

*ການແຕ່ງຕັ້ງຕໍ່ຖານະປະໂຣຫິດ*

ການມອບຖານະປະໂຣຫິດໃຫ້ແກ່ຜູ້ຊາຍຄົນໃດຄົນນຶ່ງກໍເປັນພິທີການຢ່າງນຶ່ງ. ມັນຈະຕ້ອງຖືກປະກອບໂດຍຜູ້ທີ່ດຳລົງຖານະປະໂຣຫິດ. ພວກເຂົາຕ້ອງໄດ້ຮັບອະນຸຍາດຈາກອະທິການ ຫລືປະທານສາຂາກ່ອນຈະສາມາດມອບຖານະປະໂຣຫິດແຫ່ງແອຣັນ ແລະໄດ້ຮັບອະນຸຍາດຈາກປະທານສະເຕກກ່ອນຈະສາມາດມອບຖານະປະໂຣຫິດແຫ່ງເມັນຄີເຊເດັກ. ມັນເປັນກຽດອັນຍິ່ງໃຫຍ່ສຳລັບຜູ້ຊາຍຜູ້ໃຫຍ່ແລະຊາຍຫນຸ່ມທີ່ຈະໄດ້ຮັບຖານະປະໂຣຫິດ. ຄົນຜູ້ທີ່ຮັກສາຄຳສັນຍາທີ່ພວກເຂົາເຮັດເມື່ອພວກເຂົາໄດຮັບຖານະປະໂຣຫິດຈະມີຖານະປະໂຣຫິດຕລອດໄປ.

## *ການສົນທະນາ*

- ແມ່ນໃຜສາມາດມອບຖານະປະໂຣຫິດໃຫ້ແກ່ຄົນອື່ນໄດ້?

*ສິນຣະລຶກ*

ຄົນຜູ້ມີຖານະປະໂຣຫິດຈະກ່າວຄຳອະທິຖານ ເພື່ອໃຫ້ພອນເຂົ້າຈີ່ແລະນ້ຳ. ແລ້ວຄົນນັ້ນຫລືອີກຄົນນຶ່ງ ຜູ້ມີຖານະປະໂຣຫິດຈະແຈກຢາຍສິນຣະລຶກໃຫ້ແກ່ສະມາຊິກຂອງສາສນາຈັກ, ເຂົ້າຈີ່ປ່ຽງນຶ່ງເພື່ອກິນ ແລະນ້ຳຈອກນ້ອຍນຶ່ງເພື່ອດື່ມ. ນີ້ເອີ້ນວ່າ ສິນຣະລຶກ. ສິນຣະລຶກກໍເປັນພິທີການຢ່າງນຶ່ງ.

ເຂົ້າຈີ່ແລະນ້ຳເປັນສັນຍາລັກໃຫ້ແກ່ພຣະກາຍແລະໂລຫິດຂອງພຣະເຢຊູ. ມັນຊ່ວຍພວກເຮົາໃຫ້ຈື່ຈຳວ່າພຣະອົງຊົງໄດ້ *ເສັຽສະລະພຣະຊົນຂອງພຣະອົງເພື່ອພວກເຮົາ. ພວກເຮົາຄວນຈື່ຈຳຄວາມຮັກຂອງພຣະອົງທີ່ມີຕໍ່ພວກເຮົາ. ພວກເຮົາຄວນມີຄວາມກະຕັນຍູທີ່ພຣະອົງຊົງໄດ້ເຮັດໃຫ້ມັນໄປໄດ້ ສຳລັບພວກເຮົາຈະຮັບການອະພັຍບາບແລະກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກ.

ທຸກໆຄັ້ງທີ່ພວກເຮົາຮັບສິນຣະລຶກ, ພວກເຮົາໄດ້ຕໍ່ຄຳສັນຍາອີກທີ່ພວກເຮົາໄດ້ສັນຍາເມື່ອພວກເຮົາຮັບບັບຕິສະມາ. ພວກເຮົາສັນຍາອີກວ່າ ພວກເຮົາຈະຈື່ຈຳພຣະເຢຊູສເມີ, ວ່າພວກເຮົາເຕັມໃຈທີ່ຈະຖືກເອີ້ນຕາມພຣະນາມຂອງພຣະອົງ ແລະວ່າພວກເຮົາຈະຮັກສາພຣະບັນຍັດຂອງພຣະອົງສເມີໄປ. ກ່ອນພວກເຮົາຮັບສິນຣະລຶກ, ພວກເຮົາຄວນກັບໃຈຈາກຄວາມຜິດທີ່ພວກເຮົາໄດ້ເຮັດ ແລະຄິດເຖິງຄຳສັນຍາທີ່ພວກເຮົາໄດ້ເຮັດ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສັນຍາພວກເຮົາວ່າ ຖ້າພວກເຮົາເຮັດສິ່ງທີ່ພວກເຮົາສັນຍາວ່າຈະເຮັດ, ພຣະອົງຈະຊົງສົ່ງພຣະວິນຍານບໍຣິສຸດມາຢູ່ນຳພວກເຮົາສເມີ.

ການໃຫ້ພອນເຂົ້າຈີ່

ພຣະເຢຊູຊົງມອບຄຳອະທິຖານພິເສດສຳລັບສິນຣະລຶກ. ນີ້ເປັນຄຳອະທິຖານສຳລັບເຂົ້າຈີ່:

"ໂອ້ ພຣະຜູ້ເປັນເຈົ້າ ພຣະບິດາຜູ້ສະຖິດນິຣັນດອນ, ພວກຂ້າພຣະອົງທູນຂໍພຣະອົງ ໃນພຣະນາມຂອງພຣະເຢຊູຄຣິສ ພຣະບຸດຂອງພຣະອົງ ໂປດປະທານ

ພອນ ແລະເຮັດໃຫ້ເຂົ້າຈີ່ນີ້ສັກສິດແກ່ຈິດວິນຍານຂອງເຂົາທັງຫລາຍຜູ້ທີ່ຮັບສ່ວນ ເພື່ອເຂົາຈະຮັບປະທານດ້ວຍຄວາມລະນຶກເຖິງພຣະກາຍຂອງພຣະບຸດຂອງ ພຣະອົງ ແລະເປັນສັກຂີພະຍານຕໍ່ພຣະອົງ. ໂອ້ ພຣະຜູ້ເປັນເຈົ້າ ພຣະບິດາຜູ້ສະຖິດນິຣັນດອນ ວ່າເຂົາເຕັມໃຈຮັບພຣະນາມຂອງພຣະບຸດຂອງພຣະອົງ ແລະລະນຶກເຖິງພຣະອົງຕລອດເວລາ ແລະຮັກສາພຣະບັນຍັດຂອງພຣະອົງຊຶ່ງປະທານໃຫ້ເຂົາ ເພື່ອເຂົາຈະມີພຣະວິນຍານຂອງພຣະອົງຢູ່ດ້ວຍຕລອດເວລາ ອາແມນ.

*ການໃຫ້ພອນນໍ້າ*

ນີ້ເປັນຄໍາອະທິຖານສໍາລັບນໍ້າ

"ໂອ້ ພຣະຜູ້ເປັນເຈົ້າ ພຣະບິດາຜູ້ສະຖິດນິຣັນດອນ ພວກຂ້າພຣະອົງທູນຂໍພຣະອົງໃນພຣະນາມຂອງພຣະເຢຊູຄຣິສ ພຣະບຸດຂອງພຣະອົງ ໂປດປະທານພອນແລະເຮັດໃຫ້ນໍ້ານີ້ສັກສິດແກ່ຈິດວິນຍານຂອງເຂົາທັງຫລາຍຜູ້ທີ່ດື່ມ ເພື່ອເຂົາຈະເຮັດດ້ວຍຄວາມລະນຶກເຖິງໂລຫິດຂອງພຣະບຸດຂອງພຣະອົງ ຊຶ່ງຫລັ່ງເພື່ອເຂົາ. ເພື່ອເຂົາຈະເປັນສັກຂີພະຍານຕໍ່ພຣະອົງ. ໂອ້ ພຣະຜູ້ເປັນເຈົ້າ ພຣະບິດາຜູ້ສະຖິດນິຣັນດອນ ວ່າເຂົາຈະລະນຶກເຖິງພຣະອົງຕລອດເວລາ ເພື່ອເຂົາຈະມີພຣະວິນຍານຂອງພຣະອົງຢູ່ດ້ວຍ ອາແມນ.

***ການສົນທະນາ***

- ສິນຣະລຶກແມ່ນຫຍັງ?
- ພວກເຮົາຄວນຄິດເຖິງຫຍັງໃນຂະນະທີ່ຜູ້ດໍາລົງຖານະປະໂຣຫິດກໍາລັງໃຫ້ພອນແລະແຈກຢາຍສິນຣະລຶກ?
- ຄໍາສັນຍາຫຍັງແດ່ທີ່ພວກເຮົາເຮັດເມື່ອພວກເຮົາຮັບສິນຣະລຶກ?

*ການໃຫ້ພອນແກ່ເດັກນ້ອຍເກີດໃຫມ່*

ຜູ້ຊາຍທີ່ມີຖານະປະໂຣຫິດສາມາດໃຫ້ພອນແກ່ເດັກນ້ອຍ, ຕາມປົກກະຕິແລ້ວຈະເປັນສອງສາມອາທິດຫລັງຈາກເດັກເກີດ. ພວກເຂົາຕ້ອງໄດ້ຮັບອະນຸຍາດຈາກອະທິການຫລືປະທານສາຂາກ່ອນຈະເຮັດສິ່ງນີ້ໄດ້. ພໍ່ຂອງເດັກສາມາດໃຫ້ພອນແກ່ເດັກ ຖ້າຫາກລາວມີຖານະປະໂຣຫິດແຫ່ງເມັນຄິເຊເດັກ. ຖ້າລາວບໍ່ມີຖານະ

ປະໂຣຫິດແຫ່ງເມັນຄີເຊເດັກ, ລາວບໍ່ສາມາດໃຫ້ພອນແກ່ເດັກຫລືບໍ່ສາມາດຢູ່ໃນວົງຂອງຜູ້ທີ່ກຳລັງໃຫ້ພອນແກ່ເດັກ. ຜູ້ເປັນພໍ່ສາມາດຂໍໃຫ້ຜູ້ໃດຜູ້ນຶ່ງທີ່ມີຖານະປະໂຣຫິດແຫ່ງເມັນຄີເຊເດັກໃຫ້ພອນແກ່ເດັກຄົນນັ້ນ. ຜູ້ເປັນພໍ່ ຖ້າລາວມີຖານະປະໂຣຫິດແຫ່ງເມັນຄີເຊເດັກ ແລະມີຄ່າຄວນ ຫລືຜູ້ໃດຜູ້ນຶ່ງທີ່ມີຖານະປະໂຣຫິດແຫ່ງເມັນຄີເຊເດັກ ຈະເອົາເດັກນອນໄວ້ໃນແຂນຂອງຕົນ, ແລະຜູ້ຊາຍທີ່ຢູ່ໃນວົງທີ່ມີຖານະປະໂຣຫິດແຫ່ງເມັນຄີເຊເດັກເຊັ່ນດຽວ ຈະເອົາມືເບື້ອງນຶ່ງຊູຫລັງເດັກນ້ອຍໄວ້ ຂະນະຜູ້ເປັນພໍ່ ຫລືຜູ້ທີ່ຖືກມອບໝາຍໃຫ້ມອບພອນແກ່ເດັກກຳລັງກ່າວຄຳອະທິຖານ. ໃນຄຳອະທິຖານນັ້ນ, ຜູ້ໃຫ້ພອນຈະທູນຂໍພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ວ່າລາວປະກອບພິທີການນີ້ໂດຍອຳນາດຂອງຖານະປະໂຣຫິດແຫ່ງເມັນຄີເຊເດັກ ແລະຈະຕັ້ງຊື່ໃຫ້ເດັກທີ່ພໍ່ແມ່ໄດ້ເລືອກໄວ້. ຫລັງຈາກນັ້ນຜູ້ໃຫ້ພອນຈະໃຫ້ພອນເດັກຕາມການຊົງນຳຂອງພຣະວິນຍານບໍຣິສຸດ.

### *ການສົນທະນາ*

- ຜູ້ດຳລົງຖານະປະໂຣຫິດແຫ່ງເມັນຄີເຊເດັກເຮັດແນວໃດ ເມື່ອລາວໃຫ້ພອນແກ່ເດັກ?

### *ການໃຫ້ພອນແກ່ຄົນເຈັບປ່ວຍ*

ເມື່ອຄົນໃດຄົນນຶ່ງເຈັບປ່ວຍ, ຄົນນັ້ນສາມາດຂໍໃຫ້ຜູ້ດຳລົງຖານະປະໂຣຫິດແຫ່ງເມັນຄີເຊເດັກມາໃຫ້ພອນແກ່ຕົນເອງ. ທຳອິດຜູ້ດຳລົງຖານະປະໂຣຫິດຈະເຈີມນ້ຳມັນໃສ່ຈອມຫົວ. ລາວກະທຳສິ່ງນີ້ໂດຍ ເອົານ້ຳມັນທີ່ຖືກອຸທິດແລ້ວ ຢອດໃສ່ຈອມຫົວຂອງຄົນເຈັບປ່ວຍແລ້ວລາວຈະວາງມືໃສ່ເທິງຫົວຂອງຜູ້ປ່ວຍ ແລະກ່າວຄຳອະທິຖານພິເສດ. ຫລັງຈາກເຮັດແນວນີ້ແລ້ວ ຜູ້ດຳລົງຖານະປະໂຣຫິດສອງຄົນຈະວາງມືໃສ່ເທິງຫົວຂອງຄົນເຈັບ ແລະນຶ່ງໃນເຂົາເຈົ້າຈະເປັນຜູ້ຜະນຶກນ້ຳມັນອຸທິດ ແລະໃຫ້ພອນຕາມການຊົງນຳຂອງພຣະວິນຍານບໍຣິສຸດ. ຫລາຍໆຄົນມີຄວາມຮູ້ສຶກດີຂຶ້ນຫລືໄດ້ຮັບການປິ່ນປົວ ເມື່ອພວກເຂົາໄດ້ຮັບພອນຖານະປະໂຣຫິດ. ການໃຫ້ພອນແກ່ຄົນເຈັບປ່ວຍກໍເປັນພິທີການຢ່າງນຶ່ງ.

ນ້ຳມັນທີ່ຖືກໃຊ້ໃນການເຈີມແກ່ຄົນເຈັບປ່ວຍເປັນນ້ຳມັນທີ່ຖືກອຸທິດແລ້ວເພື່ອໃຊ້ໃນພິທີການ. ການອຸທິດນ້ຳມັນແມ່ນກະທຳໂດຍຜູ້ດຳລົງຖານະປະໂຣຫິດແຫ່ງເມັນຄິເຊເດັກ ໂດຍການກ່າວຄຳອະທິຖານພິເສດ.

ຜູ້ດຳລົງຖານະປະໂຣຫິດແຫ່ງເມັນຄິເຊເດັກບໍ່ຈຳເປັນຕ້ອງຮັບອະນຸຍາດຈາກອະທິການ, ປະທານສາຂາ ຫລືປະທານສະເຕກກ່ອນຈະປະກອບພິທີການເຫລົ່ານີ້.

*ການສົນທະນາ*

- ແມ່ນໃຜສາມາດໃຫ້ພອນແກ່ຄົນເຈັບປ່ວຍ?

*ພໍ່ສາມາດໃຫ້ພອນແກ່ສະມາຊິກໃນຄອບຄົວຂອງຕົນ*

ພໍ່ຜູ້ດຳລົງຖານະປະໂຣຫິດແຫ່ງເມັນຄິເຊເດັກສາມາດໃຫ້ພອນແກ່ສະມາຊິກໃນຄອບຄົວຂອງຕົນ. ລາວສາມາດເຮັດແນວນີ້ໄດ້ເມື່ອຄົນໃນຄອບຄົວເຈັບປ່ວຍຫລືເມື່ອເຂົາຕ້ອງການຄວາມຊ່ວຍເຫລືອພິເສດ. ພໍ່ບໍ່ຈຳເປັນຕ້ອງໄດ້ຮັບອະນຸຍາດຈາກອະທິການ, ປະທານສາຂາ, ຫລືປະທານສະເຕກໃນການກະທຳນີ້. ພໍ່ຈະວາງມືໃສ່ເທິງຫົວຂອງຜູ້ເຈັບປ່ວຍແລະກ່າວຄຳອະທິຖານ. ໃນຄຳອະທິຖານ, ພໍ່ຈະໃຫ້ພອນຕາມການຊົງນຳຂອງພຣະວິນຍານບໍຣິສຸດ. ການໃຫ້ພອນແກ່ສະມາຊິກໃນຄອບຄົວເປັນພິທີການອີກຢ່າງນຶ່ງ.

*ການສົນທະນາ*

- ເມື່ອໃດພໍ່ສາມາດໃຫ້ພອນແກ່ສະມາຊິກໃນຄອບຄົວຂອງຕົນ?

## ພິທີການບາງຢ່າງເປັນສິ່ງສຳຄັນທີ່ສຸດຈົນທຸກໆຄົນຕ້ອງໄດ້ຮັບມັນ

ພິທີການຖານະປະໂຣຫິດບາງຢ່າງເປັນສິ່ງຈຳເປັນເພື່ອຈະສາມາດກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພິທີການສອງຢ່າງນີ້ຄື ການຮັບບັບຕິສະມາແລະການຮັບຂອງປະທານແຫ່ງພຣະວິນຍານບໍຣິສຸດ. ຜູ້ຊາຍຜູ້ໃຫຍ່ແລະຊາຍຫນຸ່ມຕ້ອງໄດ້ຮັບຖານະປະໂຣຫິດນຳອີກ. ພິທີການອື່ນອີກ, ເຊັ່ນການໃຫ້ພອນຂອງພໍ່ແກ່ສະມາຊິກໃນຄອບຄົວ ແມ່ນຖືກປະກອບເມື່ອພວກເຮົາຕ້ອງການຄວາມຊ່ວຍເຫລືອແລະຄວາມອົບອຸ່ນ.

### *ການສົນທະນາ*

- ພິທີການບາງຢ່າງມີຫຍັງແດ່?
- ພອນຕ່າງໆນີ້ນຳຫຍັງມາສູ່ພວກເຮົາ?

### *ຂໍ້ອ້າງອີງ*

*ດ້ວຍຖານະປະໂຣຫິດ, ຜູ້ຊາຍຈະມີອຳນາດແບບດຽວກັບພຣະເຢຊູຊົງມີເພື່ອປະກອບພິທີການຕ່າງໆ*

- ມັດທາຍ ໑໖:໑໙; ມາຣະໂກ ໓:໑໔ (ພຣະເຢຊູຊົງມອບຖານະປະໂຣຫິດໃຫ້ແກ່ສານຸສິດຂອງພຣະອົງ.)
- ມາຣະໂກ ໑:໓໔ (ພຣະເຢຊູຊົງປິ່ນປົວຄົນເຈັບປ່ວຍ ແລະຂັບໄລ່ຜີຮ້າຍອອກ.)
- ກິຈການ ໙:໑–໖ (ອັຄສາວົກຂອງພຣະເຢຊູປະກອບພິທີການຕ່າງໆ.)

*ພິທີການຖືກປະກອບຂຶ້ນເພື່ອຊ່ວຍເຫລືອພວກເຮົາ*

- ມັດທາຍ ໑໙:໑໔–໑໕ (ພຣະເຢຊູຊົງໃຫ້ພອນແກ່ເດັກນ້ອຍ.)
- ມັດທາຍ ໒໖:໒໖–໒໘ (ພຣະເຢຊູຊົງໃຫ້ພອນສິນຣະລຶກສຳລັບສານຸສິດຂອງພຣະອົງ.)
- ກິຈການ ໘:໑໗ (ອັຄສາວົກຂອງພຣະເຢຊູຊົງມອບພຣະວິນຍານບໍຣິສຸດ.)
- ຢາໂກໂບ ໕:໑໔ (ແອລເດີຄວນເອົານ້ຳມັນຢອດລົງເທິງຫົວຂອງຜູ້ເຈັບປ່ວຍແລະໃຫ້ພອນແກ່ເຂົາ.)
- ໓ ນີໄຟ ໑໑:໒໓–໒໘ (ວິທີການໃຫ້ບັບຕິສະມາ.)
- ໂມໂຣໄນ ໔, ໕ (ພຣະເຢຊູຊົງອະທິຖານສຳລັບການໃຫ້ພອນສິນຣະລຶກແກ່ຜູ້ຄົນໃນສມັຍກ່ອນ.)
- ໂມໂຣໄນ ໖:໑–໓ (ສິ່ງທີ່ຄວນເຮັດກ່ອນການຮັບບັບຕິສະມາ.)

# ພາບຊ່ວຍອື່ນໆ

ວັດຖຸປະສົງໃຊ້ຊ່ວຍການສອນ



# ຄຳອະທິບາຍຮູບ ໑–໑໖

໑. ເອຊາຢາ ສາສດາຄົນນຶ່ງໃນພຣະຄັມພີເດີມ, ໄດ້ບອກລ່ວງໜ້າເຖິງການສະເດັດມາຂອງພຣະເຢຊູຄຣິສ.

໒. ໂຢຮັນບັບຕິສະໂຕ ໃຫ້ບັບຕິສະມາແກ່ພຣະເຢຊູທີ່ແມ່ນ້ຳຈໍແດນ.

໓. ພຣະເຢຊູຊົງເອີ້ນເປໂຕແລະຜູ້ອື່ນໆໃຫ້ຕິດຕາມພຣະອົງ.

໔. ພຣະເຢຊູຊົງແຕ່ງຕັ້ງອັຄສາວົກສິບສອງຄົນ.

໕. ພຣະເຢຊູຊົງຮັກແລະຊົງປະທານພອນແກ່ເດັກທັງຫລາຍ.

໖. ພຣະເຢຊູຊົງສອນພຣະກິດຕິຄຸນຕໍ່ຜູ້ຄົນ. ຄຳສອນຂອງພຣະເຢຊູທີ່ຈ້າຍພູ, ໂດຍ ຄາລ ບລັ໊ອກ. ຮູບແຜ່ນເດີມມີຢູ່ທີ່ Chapel of Frederiksborg Castle, ໃນປະເທດເດັນມາກ. ໄດ້ຮັບອະນຸຍາດໃຫ້ໃຊ້ໂດຍຫໍພິພິທພັນ ຟຣີເດຣິກສເບີກ.

໗. ໃນສວນເກັດເຊມາເນ, ພຣະຄຣິສຊົງທໍຣະມານແທນບາບຂອງມວນມະນຸດທັງໝົດ.

໘. ພຣະເຢຊູຊົງສິ້ນພຣະຊົນເທິງໄມ້ກາງແຂນ ເພື່ອບາບຂອງມວນມະນຸດທັງໝົດ.

໙. ໃນມື້ທີສາມ, ພຣະຄຣິສຊົງຟື້ນຈາກຄວາມຕາຍ.

໑໐. ພຣະຄຣິສພຣະຜູ້ຊົງຟື້ນຄືນພຣະຊົນໄດ້ສະແດງຮອຍບາດແຜຂອງພຣະອົງຕໍ່ອັຄສາວົກຂອງພຣະອົງ.

໑໑. ຫລັງຈາກການຟື້ນຄືນພຣະຊົນຂອງພຣະຄຣິສ, ພຣະອົງຊົງໄດ້ໄປຢ້ຽມຢາມຜູ້ຄົນຂອງພຣະອົງທີ່ອະເມຣິກາ.

໑໒. ສາສດາໂຢເຊັບ ສມິທ ໄດ້ເຮັດຕາມຄຳແນະນຳຈາກ ຢາໂກໂບ ໑:໕–໖ ທີ່ຈະທູນຖາມພຣະຜູ້ເປັນເຈົ້າວ່າ ສາສນາຈັກແຫ່ງໃດເປັນສາສນາຈັກແທ້ຈິງຂອງພຣະເຢຊູຄຣິສ.

໑໓. ເພື່ອຄຳອະທິຖານຂອງລາວ, ພຣະບິດາຜູ້ສະຖິດໃນສວັນແລະພຣະເຢຊູຄຣິສຊົງໄດ້ມາຢ້ຽມຢາມໂຢເຊັບ ສມິທ.

໑໔. ທູດໂມໂຣໄນໄດ້ພາໂຢເຊັບ ສມິທ ໄປຫາແຜ່ນຈາຣຶກທອງຄຳທີ່ບັນຈຸພຣະຄັມພີມໍມອນ.

໑໕. ໂຢຮັນບັບຕິສະໂຕ ໄດ້ມາຢ້ຽມຢາມໂຢເຊັບ ສມິທ ແລະອໍລິເວີ ຄາວເດີຣີ ແລະໄດ້ມອບອຳນາດຖານະປະໂຣຫິດແຫ່ງແອຣັນໃຫ້ແກ່ພວກທ່ານ.

໑໖. ເປໂຕ, ຢາໂກໂບ, ແລະໂຢຮັນ ໄດ້ມອບອຳນາດຖານະປະໂຣຫິດແຫ່ງເມັນຄີເຊເດັກໃຫ້ແກ່ໂຢເຊັບ ສມິທ ແລະອໍລິເວີ ຄາວເດີຣີ.

































# ການຕິດຕາມພຣະເຢຊູຄຣິສ

*ພາກເຈັດ*





*ພຣະເຢຊູຊົງສະແດງການເຊື່ອຟັງຕໍ່ພຣະບິດາຂອງພຣະອົງ*
*ໂດຍການຮັບບັບຕິສະມາ.*

# ການເຊື່ອຟັງ

*ບົດທີ ໔໔*

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ບອກພວກເຮົາເຖິງສິ່ງທີ່ພວກເຮົາຕ້ອງເຮັດ ເພື່ອຈະມີຄວາມສຸກແລະຈະກັບຄືນໄປຢູ່ນຳພຣະອົງອີກ. ພວກເຮົາສາມາດຮຽນເຮັດສິ່ງເຫລົ່ານີ້ໄດ້ແນວໃດ?*

**ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງປະທານພຣະບັນຍັດໃຫ້ແກ່ພວກເຮົາເພາະພຣະອົງຊົງຮັກພວກເຮົາ**

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ພວກເຮົາມີຄວາມສຸກຢູ່ໃນໂລກນີ້ເພາະພຣະອົງຊົງຮັກ ພວກເຮົາ. ພຣະອົງຍັງຊົງຕ້ອງການໃຫ້ພວກເຮົາກັບຄືນໄປຢູ່ນຳພຣະອົງ ເພື່ອພວກເຮົາຈະໄດ້ມີຄວາມສຸກທີ່ພຣະອົງຊົງມີ. ພວກເຮົາສາມາດເຮັດສິ່ງນີ້ໄດ້ ມີແຕ່ຖ້າຫາກພວກເຮົາໃຊ້ຄວາມສາມາດຂອງພວກເຮົາທີ່ພຣະອົງໄດ້ຊົງປະທານໃຫ້ເຮົາເທົ່ານັ້ນທີ່ຈະເປັນເຫມືອນດັ່ງພຣະອົງ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮູ້ເຖິງສິ່ງທີ່ພວກເຮົາຕ້ອງເຮັດເພື່ອຈະກາຍເປັນເຫມືອນດັ່ງພຣະອົງ. ພຣະອົງຊົງມອບພຣະບັນຍັດທີ່ບອກເຖິງສິ່ງໃດເປັນສິ່ງດີ ທີ່ພວກເຮົາຄວນເຮັດ. ພຣະອົງຍັງຊົງບອກພວກເຮົາ ເຖິງສິ່ງບໍ່ດີທີ່ພວກເຮົາບໍ່ຄວນເຮັດນຳອີກ.

ພຣະບັນຍັດທຸກໆຂໍ້ທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບໃຫ້ພວກເຮົາແມ່ນເພື່ອຊ່ວຍເຫລືອ ແລະເປັນສິ່ງດີສຳລັບພວກເຮົາ. ພຣະບັນຍັດເຫລົ່ານີ້ສາມາດເປັນສິ່ງນຳພາຊີວິດຂອງພວກເຮົາ, ແລະຖ້າພວກເຮົາຮັກສາພຣະບັນຍັດເຫລົ່ານີ້ພວກເຮົາຈະມີຄວາມສຸກ.

ບາງຄັ້ງບາງຄາວ ພວກເຮົາແຕ່ລະຄົນຈະບໍ່ຮັກສາພຣະບັນຍັດຂອງພຣະບິດາ ຜູ້ສະຖິດໃນສວັນ. ເພາະການກະທຳນີ້ ພວກເຮົາຈຶ່ງໄດ້ກະທຳບາບ. ຍ້ອນບາບຂອງ ພວກເຮົາ, ພວກເຮົາຈຶ່ງຖືກແຍກອອກຈາກພຣະບິດາຜູ້ສະຖິດໃນສວັນຂອງ ພວກເຮົາ. ຜົນສະທ້ອນຈາກບາບຂອງພວກເຮົາກໍຄື ພວກເຮົາຖືກແຍກອອກຈາກ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຕລອດໄປ.

ແຕ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກພວກເຮົາ. ພຣະອົງຊົງສ້າງ ທາງທີ່ຈະເສັຽຄ່າບາບໃຫ້ແກ່ພວກເຮົາ. ພຣະອົງຊົງສົ່ງພຣະບຸດຂອງພຣະອົງມາ ເພື່ອໄຖ່ບາບຂອງພວກເຮົາ. ພຣະເຢຊູຊົງໄດ້ໄຖ່ບາບຂອງພວກເຮົາ ແລະພວກເຮົາ ຈະສາມາດກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາໂດຍການມີ ສັດທາໃນພຣະເຢຊູ. ການມີສັດທາໃນພຣະເຢຊູໝາຍຄວາມວ່າ ພວກເຮົາເຊື່ອ ໝັ້ນໃນພຣະອົງ ແລະກາຍມາເປັນຜູ້ຕິດຕາມຂອງພຣະອົງ. ຄົນທີ່ມີສັດທາໃນ ພຣະເຢຊູຈະເຊື່ອຟັງພຣະບັນຍັດຂອງພຣະອົງ. ບາດກ້າວທຳອິດໃນການກັບຄືນໄປ ຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາກໍຄືການມີສັດທາໃນພຣະເຢຊູ, ການພະຍາຍາມຢ່າງຈິງໃຈທີ່ຈະເຊື່ອຟັງພຣະອົງ. ແລ້ວຖ້າພວກເຮົາມີສັດທາໃນ ພຣະອົງໄປເລື້ອຍໆ ພຣະອົງຈະຊ່ວຍເຫລືອ ພວກເຮົາໃຫ້ເຊື່ອຟັງຕໍ່ພຣະບັນຍັດຂອງ ພຣະບິດາຜູ້ສະຖິດໃນສວັນທັງໝົດ, ແລະພຣະບິດາຜູ້ສະຖິດໃນສວັນຂອງ ພວກເຮົາຈະອະພັຍບາບໃຫ້ແກ່ພວກເຮົາ.

ພຣະບັນຍັດບາງຂໍ້ຂອງພຣະເຢຊູແມ່ນມີໄວ້ເພື່ອສະມາຊິກທຸກຄົນຂອງສາສນາຈັກ. ພຣະອົງຊົງມອບພຣະບັນຍັດເຫລົ່ານີ້ໄວ້ໃນພຣະຄັມພີ ແລະຜ່ານສາສດາຂອງ ພຣະອົງ. ພຣະອົງຊົງມອບພຣະບັນຍັດບາງຂໍ້ໃຫ້ພວກເຮົາເປັນສ່ວນຕົວໂດຍຜ່ານ ພຣະວິນຍານບໍຣິສຸດ. ຕົວຢ່າງເຊັ່ນ, ພຣະຄັມພີແລະສາສດາບອກພວກເຮົາວ່າ ສະມາຊິກຂອງສາສນາຈັກທຸກຄົນຄວນຊ່ວຍສອນພຣະກິດຕິຄຸນໃຫ້ແກ່ຄົນອື່ນ. ແຕ່ພຣະວິນຍານບໍຣິສຸດຈະຊ່ວຍບອກພວກເຮົາແຕ່ລະຄົນເຖິງສິ່ງທີ່ພວກເຮົາສາມາດ ເຮັດໄດ້ສ່ວນຕົວທີ່ຈະສອນພຣະກິດຕິຄຸນໃຫ້ສະມາຊິກໃນຄອບຄົວ, ໝູ່ເພື່ອນ ແລະເພື່ອນບ້ານຂອງພວກເຮົາ. ຖ້າພວກເຮົາສຶກສາພຣະຄັມພີ, ຟັງຄຳຂອງ ສາສດາ, ແລະຕິດຕາມການຊົງນຳຂອງພຣະວິນຍານບໍຣິສຸດ, ພວກເຮົາຈະຮູ້ສເມີ ເຖິງສິ່ງທີ່ພວກເຮົາຄວນເຮັດ.

## *ການສົນທະນາ*

- ພຣະບັນຍັດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູຊົງສະແດງຄວາມຮັກຂອງພວກພຣະອົງຕໍ່ພວກເຮົາແນວໃດ?
- ພວກເຮົາຈະຮູ້ໄດ້ແນວໃດ ເຖິງສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູຊົງບອກໃຫ້ພວກເຮົາເຮັດ?

## ພຣະບັນຍັດທຸກໆຂໍ້ຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາມີຄວາມສຳຄັນ

ພວກເຮົາຄວນເຕັມໃຈທີ່ຈະເຮັດທຸກສິ່ງທີ່ພຣະເຢຊູຊົງບັນຊາໃຫ້ພວກເຮົາເຮັດ. ພຣະບັນຍັດທັງໝົດຂອງພຣະອົງສຳຄັນແລະຊ່ວຍຕຽມພວກເຮົາໃຫ້ກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພຣະຄຳພີໄບເບິນບອກເຖິງເຣື່ອງຂອງຊາຍຄົນນຶ່ງຊື່ວ່າ ນາອາມານ. ລາວມີຄວາມເຈັບປ່ວຍຢ່າງໜັກ ແລະຕ້ອງການຢາກໃຫ້ສາສດາເອລີຢາປິ່ນປົວລາວ. ລາວອອກຈາກບ້ານຂອງລາວ ແລະໄປຫາເມືອງທີ່ເອລີຢາອາສັຍຢູ່. ເອລີຢາສົ່ງຄົນໄປບອກນາອາມານໃຫ້ໄປອາບນ້ຳຢູ່ທີ່ແມ່ນ້ຳຈໍແດນເຈັດຄັ້ງ ແລ້ວລາວຈະຫາຍຈາກການເຈັບປ່ວຍນັ້ນ.

ນາອາມານເກີດມີຄວາມໂມໂຫເມື່ອຖືກບອກໃຫ້ໄປກະທຳສິ່ງນັ້ນ. ລາວບໍ່ເຂົ້າໃຈວ່າ ເປັນຫຍັງລາວ ຈຶ່ງຕ້ອງໄປຫາແມ່ນ້ຳຈໍແດນ ທັງທີ່ວ່າ ມັນມີແມ່ນ້ຳຫລາຍໆແຫ່ງຢູ່ທີ່ບ້ານຂອງລາວ. ແຕ່ເຖິງແມ່ນວ່າ ລາວມີຄວາມໂມໂຫ ລາວກໍໄດ້ເຮັດຕາມຄຳຂອງເອລີຢາ. ຍ້ອນລາວເຊື່ອຟັງ, ລາວຈຶ່ງໄດ້ຫາຍດີຈາກຄວາມເຈັບປ່ວຍນັ້ນ. ຖ້າຫາກລາວບໍ່ໄດ້ເຊື່ອຟັງ ລາວກໍອາດຈະບໍ່ໄດ້ຮັບການປິ່ນປົວເລີຍ.

ບາງຄົນຄິດວ່າ ພຣະບັນຍັດຂອງພຣະເຢຊູຍາກເກີນໄປທີ່ຈະເຊື່ອຟັງ. ຄັ້ງນຶ່ງມີຊາຍໜຸ່ມຄົນນຶ່ງຊື່ວ່າ ນີໄຟ ພ້ອມດ້ວຍອ້າຍຂອງລາວ ຖືກຂໍຮ້ອງໃຫ້ໄປເຮັດສິ່ງນຶ່ງທີ່ຍາກທີ່ສຸດ. ພຣະເຢຊູຊົງບອກພວກເຂົາໃຫ້ກັບຄືນໄປເມືອງເຢຣູຊາເລັມເພື່ອເອົາພຣະຄຳພີທີ່ສຳຄັນເຫລັ້ມນຶ່ງ. ອ້າຍຂອງລາວເວົ້າວ່າ ພວກເຂົາຈະບໍ່ກັບຄືນ ເພາະມັນຍາກເກີນໄປ. ແຕ່ນີໄຟເວົ້າວ່າ ລາວຈະເຮັດຕາມຄຳບັນຊາຂອງພຣະເຢຊູ. ນີໄຟເວົ້າວ່າ ເມື່ອພຣະເຢຊູຊົງບອກໃຫ້ພວກເຮົາເຮັດສິ່ງໃດສິ່ງນຶ່ງ, ບໍ່ວ່າມັນຈະຍາກເທົ່າໃດ, ພຣະອົງຈະຊົງຊ່ວຍພວກເຮົາເຮັດໃຫ້ສຳເຣັດ.

ພຣະເຢຊູຊົງບອກພວກເຮົາວ່າ ພວກເຮົາຄວນພະຍາຍາມເປັນເໝືອນດັ່ງພຣະອົງ ແລະພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພຣະອົງຈະບໍ່ຊົງບອກພວກເຮົາແນວນີ້ ຖ້າພຣະອົງບໍ່ຄິດວ່າພວກເຮົາສາມາດເຮັດໄດ້.

ພຣະເຢຊູຊົງເປັນແບບດຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ເພາະພຣະອົງບໍ່ຊົງໄດ້ກະທຳບາບຫຍັງເລີຍ. ພວກເຮົາທຸກຄົນໄດ້ກະທຳບາບ ແຕ່ພວກເຮົາສາມາດກາຍມາເປັນເໝືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້ ໂດຍການມີສັດທາໃນພຣະເຢຊູແລະການກັບໃຈ.

ບາງຄັ້ງພວກເຮົາອາດບໍ່ເຂົ້າໃຈເຫດຜົນຂອງພຣະບັນຍັດຂໍ້ໃດຂໍ້ນຶ່ງຂອງພຣະເຢຊູ. ແຕ່ຖ້າພວກເຮົາຮັກພຣະເຢຊູ ແລະເຊື່ອໝັ້ນໃນພຣະອົງ, ພວກເຮົາຈະເຮັດຕາມຄຳບັນຊາຂອງພຣະອົງ. ພວກເຮົາຈະເຊື່ອ ເຖິງແມ່ນວ່າພວກເຮົາບໍ່ເຂົ້າໃຈວ່າເປັນຫຍັງພຣະອົງຈຶ່ງຊົງບັນຊາໃຫ້ພວກເຮົາເຮັດອັນໃດອັນນຶ່ງ. ອາດາມແລະເອວາເຮັດສິ່ງນີ້. ພຣະເຢຊູຊົງບັນຊາໃຫ້ອາດາມແລະເອວາໃຫ້ມອບເຄື່ອງຖວາຍແດ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ມື້ນຶ່ງທູດສວັນໄດ້ລົງມາຫາອາດາມ ແລະຖາມລາວວ່າ ເປັນຫຍັງລາວຈຶ່ງມອບເຄື່ອງຖວາຍ. ອາດາມຕອບວ່າ ລາວບໍ່ຮູ້ເຫດຜົນ ພຽງແຕ່ວ່າພຣະເຢຊູຊົງບອກໃຫ້ລາວກະທຳແນວນັ້ນ. ທູດສວັນກໍເລີຍບອກອາດາມເຖິງເຫດຜົນສຳລັບກົດແລະໄດ້ສອນພຣະກິດຕິຄຸນຕໍ່ອາດາມ. ພຣະເຢຊູຊົງພໍພຣະທັຍນຳອາດາມເພາະວ່າ ລາວໄດ້ເຊື່ອຟັງພຣະອົງເຖິງແມ່ນວ່າລາວບໍ່ຮູ້ຈັກເຫດຜົນກໍຕາມ.

ພວກເຮົາຄວນເຊື່ອຟັງພຣະບັນຍັດຂອງພຣະເຢຊູ ເພາະວ່າພວກເຮົາຮັກພຣະອົງ ແລະຕ້ອງການທີ່ຈະເຊື່ອຟັງພຣະອົງ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕັສວ່າ ພຣະອົງຊົງພໍພຣະທັຍນຳຄົນທີ່ຕ້ອງການຢາກຈະເຊື່ອຟັງພຣະເຢຊູ. ພຣະອົງຊົງເສັຽໃຈເມື່ອລູກໆຂອງພຣະອົງບໍ່ຟັງພຣະເຢຊູຈົນກວ່າ ມີສິ່ງໃດສິ່ງນຶ່ງເກີດຂຶ້ນ ຊຶ່ງບັງຄັບໃຫ້ພວກເຂົາເຊື່ອຟັງ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການລູກໆຂອງພຣະອົງໝົດທຸກຄົນ ໃຫ້ຮຽນທີ່ຈະຮັກພຣະເຢຊູແລະທີ່ຈະເຊື່ອຟັງພຣະອົງ, ເພາະນີ້ເປັນວິທີດຽວເທົ່ານັ້ນ ທີ່ພວກເຂົາຈະສາມາດກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້.

*ການສົນທະນາ*

- ເປັນຫຍັງມັນຈຶ່ງສຳຄັນທີ່ຈະເຊື່ອຟັງພຣະບັນຍັດຂອງພຣະເຢຊູເຖິງແມ່ນວ່າ ມັນອາດຈະຍາກ ທີ່ຈະເຊື່ອຟັງ?
- ເປັນຫຍັງພວກເຮົາຈຶ່ງຄວນເຊື່ອຟັງພຣະບັນຍັດ ເຖິງແມ່ນວ່າພວກເຮົາອາດຈະ ບໍ່ເຂົ້າໃຈມັນ?
- ເປັນຫຍັງມັນຈຶ່ງສຳຄັນທີ່ຈະເຊື່ອຟັງເພາະພວກເຮົາຢາກເຊື່ອຟັງ?

## ເມື່ອພວກເຮົາຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ພວກເຮົາຕ້ອງການທີ່ຈະເຊື່ອຟັງພຣະເຢຊູ

ພຣະເຢຊູຊົງກະທຳທຸກຢ່າງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບັນຊາ ໃຫ້ພຣະອົງເຮັດ. ພຣະເຢຊູຊົງ ເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ເພາະພຣະອົງຊົງຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ຊາຕານໄດ້ລໍ້ລວງ ພຣະເຢຊູບໍ່ໃຫ້ເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພຣະເຢຊູບໍ່ໄດ້ ເຮັດຕາມສິ່ງທີ່ຊາຕານລໍ້ລວງໃຫ້ພຣະອົງເຮັດ.

*ພຣະບັນຍັດຂໍ້ທຳອິດແລະສຳຄັນທີ່ສຸດ ແມ່ນທີ່ຈະຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ*

ເມື່ອພວກເຮົາຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ພວກເຮົາຈະຕ້ອງການທີ່ຈະເຊື່ອຟັງພຣະອົງ ແບບດຽວກັບພຣະເຢຊູຊົງໄດ້ກະທຳມາ. ພວກເຮົາສາມາດ ຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຫລາຍຂຶ້ນ ເມື່ອພວກເຮົາຮຽນຮູ້ ກ່ຽວກັບພຣະອົງຫລາຍຂຶ້ນ. ພວກເຮົາຈຳເປັນຕ້ອງຮຽນກ່ຽວກັບພຣະອົງ ແລະ ຮຽນເຖິງສິ່ງທີ່ພຣະອົງຊົງໄດ້ກະທຳເພື່ອພວກເຮົາ. ພວກເຮົາຮຽນຮູ້ແບບນີ້ໄດ້ ໂດຍການອ່ານພຣະຄັມພີ ແລະ ໂດຍການຟັງຕໍ່ຜູ້ນຳຂອງສາສນາຈັກຂອງ ພຣະເຢຊູຄຣິສ. ເມື່ອພວກເຮົາຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ພວກເຮົາກໍຈະຮັກພຣະເຢຊູຄືກັນ ເພາະວ່າສິ່ງທີ່ພຣະເຢຊູໄດ້ເຮັດແມ່ນ ເພື່ອຊ່ວຍ ເຫລືອພວກເຮົາທີ່ຈະກັບໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນ. ພວກເຮົາຮຽນທີ່ ຈະຮັກພຣະເຢຊູ ໂດຍການກະທຳສິ່ງທີ່ພຣະອົງຊົງບັນຊາໃຫ້ພວກເຮົາເຮັດ. ເມື່ອ ຄວາມຮັກຕໍ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະຕໍ່ພຣະເຢຊູທະວີຂຶ້ນ, ການເຊື່ອເຮັດຕາມພຣະບັນຍັດຂອງພວກພຣະອົງກໍເປັນສິ່ງງ່າຍຂຶ້ນ.

### *ພຣະບັນຍັດອັນຍິ່ງໃຫຍ່ຂໍ້ທີສອງແມ່ນການຮັກທຸກຄົນ*

ພຣະເຢຊູຊົງບອກພວກເຮົາໃຫ້ຮັກແລະຊ່ວຍເຫລືອຄົນອື່ນໆ. ພຣະອົງຊົງບອກພວກເຮົາໃຫ້ເຮັດຕໍ່ຄົນອື່ນ ເຫມືອນດັ່ງພວກເຮົາຢາກໃຫ້ພວກເຂົາເຮັດຕໍ່ພວກເຮົາ. ພຣະອົງຊົງຕັສວ່າ ພວກເຮົາບໍ່ຄວນເວົ້າສິ່ງບໍ່ດີກ່ຽວກັບພວກເຂົາ. ພວກເຮົາຄວນໃຫ້ອະພັຍຕໍ່ການກະທຳຜິດຂອງພວກເຂົາ. ພວກເຮົາຄວນຊ່ວຍເຫລືອເຊິ່ງກັນແລະກັນທຸກໆວິທີທາງເທົ່າທີ່ພວກເຮົາສາມາດເຮັດໄດ້.

ເມື່ອພວກເຮົາຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູ, ພວກເຮົາຈະຮັກແລະຊ່ວຍເຫລືອຄົນອື່ນໆ. ເມື່ອພວກເຮົາຮັກແລະຮັບໃຊ້ພຣະເຢຊູແລະຄົນອື່ນໆ, ການເຊື່ອຟັງພຣະບັນຍັດທັງຫມົດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະຂອງພຣະເຢຊູກໍກາຍມາເປັນສິ່ງງ່າຍຂຶ້ນ.

### *ການສົນທະນາ*

- ພຣະບັນຍັດສອງຂໍ້ໃຫຍ່ແມ່ນຫຍັງ?
- ຕົວຢ່າງຂອງພຣະເຢຊູຈະຊ່ວຍພວກເຮົາໄດ້ແນວໃດ ໃນການເຊື່ອຟັງພຣະບັນຍັດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ?
- ພວກເຮົາຮຽນຮູ້ທີ່ຈະຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະພຣະເຢຊູແລະຕ້ອງການທີ່ຈະເຊື່ອຟັງພຣະບັນຍັດຂອງພວກພຣະອົງໄດ້ແນວໃດ?

## ພອນທຸກໆຢ່າງທີ່ພວກເຮົາໄດ້ຮັບເປັນຍ້ອນການເຊື່ອຟັງຂອງພວກເຮົາ

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໃຫ້ພອນພວກເຮົາເມື່ອພວກເຮົາເຊື່ອຟັງພຣະບັນຍັດຂອງພຣະອົງ. ພຣະອົງຊົງສັນຍາທີ່ຈະໃຫ້ພອນຕໍ່ການເຊື່ອຟັງຂໍ້ບັນຍັດທຸກໆຂໍ້ທີ່ພວກເຮົາເຊື່ອຟັງ. ເມື່ອໃດກໍຕາມທີ່ພວກເຮົາເຊື່ອຟັງພຣະບັນຍັດ, ພວກເຮົາໄດ້ຮັບພອນຕໍ່ການເຊື່ອຟັງນັ້ນ. ຖ້າພວກເຮົາບໍ່ເຊື່ອຟັງພຣະບັນຍັດ, ພວກເຮົາບໍ່ສາມາດຫວັງທີ່ຈະຮັບພອນທີ່ໄດ້ສັນຍາໄວ້.

ພອນບາງຢ່າງທີ່ມາຈາກການເຊື່ອຟັງພຣະບັນຍັດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາມີຄວາມສຸກ, ຄວາມເປັນອິສລະຈາກຄວາມຢານ, ມີສຸຂພາບດີ, ແລະມີຄວາມຮູ້ແລະຄວາມສາມາດຫລາຍຂຶ້ນ. ພອນຍິ່ງໃຫຍ່ທີ່ພຣະບິດາຜູ້ສະຖິດ

ໃນສະຫວັນຂອງພວກເຮົາສັນຍາກັບພວກເຮົາແມ່ນວ່າ ພວກເຮົາຈະກາຍມາເປັນເຫມືອນດັ່ງພຣະອົງແລະຈະຢູ່ນຳພຣະອົງຊົ່ວນິຣັນດອນ. ພວກເຮົາສາມາດໄດ້ຮັບພອນນີ້ໂດຍການເຊື່ອຟັງພຣະບັນຍັດທັງຫມົດຂອງພຣະອົງ.

ເມື່ອພວກເຮົາພະຍາຍາມຢ່າງພາກພຽນທີ່ຈະເຊື່ອຟັງພຣະບັນຍັດຂອງພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາ, ມັນສຳຄັນທີ່ຈະຈື່ຈຳວ່າ ພວກເຮົາຈະສາມາດປະຕິບັດໄດ້ດ້ວຍການຊ່ວຍເຫລືອຂອງພຣະເຢຊູເທົ່ານັ້ນ. ພວກເຮົາຍັງຄວນຈື່ຈຳວ່າເມື່ອພວກເຮົາເຮັດຄວາມຜິດ, ພຣະບິດາຜູ້ສະຖິດ ໃນສະຫວັນຂອງພວກເຮົາຈະຊົງອະພັຍໃຫ້ພວກເຮົາ ເມື່ອພວກເຮົາມີສັດທາໃນພຣະເຢຊູຄຣິດ ແລະກັບໃຈຈາກການກະທຳນັ້ນ. ຍ້ອນວ່າພວກເຮົາທຸກຄົນກະທຳບາບ, ພວກເຮົາຄວນມີຄວາມກະຕັນຍູຕໍ່ການຊົດໃຊ້ຂອງພຣະເຢຊູຄຣິດ. ເພາະການຊົດໃຊ້ຂອງພຣະອົງ, ພຣະບິດາຜູ້ສະຖິດ ໃນສະຫວັນຂອງພວກເຮົາຈຶ່ງສາມາດອະພັຍໂທດແລະໃຫ້ພອນແກ່ພວກເຮົາ ແລະຊ່ວຍເຫລືອພວກເຮົາ ໃຫ້ກາຍມາເປັນຄົນເຊື່ອຟັງ. ພວກເຮົາຈະບໍ່ມີຄ່າຄວນພໍທີ່ຈະຮັບເອົາພອນຈາກພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາໄດ້ດ້ວຍຕົວເອງ.

### *ການສົນທະນາ*

- ພອນອັນໃດແດ່ທີ່ສາມາດມາສູ່ທ່ານຈາກການເຊື່ອຟັງຕໍ່ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາ?
- ພຣະເຢຊູຊົງຊ່ວຍພວກເຮົາໃຫ້ໄດ້ພອນເຫລົ່ານີ້ໄດ້ແນວໃດ?
- ພວກເຮົາສາມາດຮັບພອນອັນຍິ່ງໃຫຍ່ທີ່ສຸດຈາກພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາໄດ້ແນວໃດ?

## *ຂໍ້ອ້າງອີງ*

*ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງປະທານພຣະບັນຍັດໃຫ້ແກ່ພວກເຮົາເພາະພຣະອົງຊົງຮັກພວກເຮົາ*

- ໂຢຮັນ ໑໕:໑໐–໑໔ (ຖ້າພວກເຮົາເຊື່ອຟັງພຣະບັນຍັດຂອງພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາ, ພວກເຮົາຈະຮູ້ໄດ້ສເມີວ່າ ພຣະອົງຊົງຮັກພວກເຮົາສເມີໄປ.)

*ພຣະບັນຍັດທຸກໆຂໍ້ຂອງພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາມີຄວາມສຳຄັນ*

- 4 ກະສັດ 5:1–14 (ສາສດາເອລີຢາ ບອກນາອາມານເຖິງສິ່ງທີ່ລາວຄວນເຮັດເພື່ອຈະໄດ້ຮັບການປິ່ນປົວ.)
- 1 ນີໄຟ 3:1–7 (ພຣະເຢຊູຊົງຕຽມເສັ້ນທາງໃຫ້ພວກເຮົາທີ່ຈະຮັກສາພຣະບັນຍັດຂອງພຣະອົງ.)
- 3 ນີໄຟ 12:48 (ພຣະເຢຊູຊົງບອກພວກເຮົາໃຫ້ເປັນຄົນດີພ້ອມ.)

*ເມື່ອພວກເຮົາຮັກພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາ, ພວກເຮົາຕ້ອງການທີ່ຈະເຊື່ອຟັງພຣະເຢຊູ*

- ມັດທາຍ 22:37–40 (ພຣະເຢຊູຊົງມອບພຣະບັນຍັດຍິ່ງໃຫຍ່ສອງຂໍ້.)
- ໂຢຮັນ 8:29 (ພຣະເຢຊູຊົງກະທຳສິ່ງເຫລົ່ານີ້ ເພື່ອຈະເຮັດໃຫ້ພຣະບິດາຂອງພຣະອົງຊົງພໍພຣະທັຍໃນພຣະອົງສເມີ.)
- ໂຢຮັນ 14:15; 21–24 (ຖ້າພວກເຮົາຮັກພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາແລະພຣະເຢຊູ, ພວກເຮົາຈະເຊື່ອຟັງພຣະບັນຍັດຂອງພວກພຣະອົງ.)
- 1 ໂກຣິນໂທ 2:9 (ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງໄດ້ຕຽມພອນຍິ່ງໃຫຍ່ໄວ້ໃຫ້ຄົນທີ່ເຊື່ອໃນພຣະອົງ.)

*ພອນທຸກໆຢ່າງທີ່ພວກເຮົາໄດ້ຮັບເປັນຍ້ອນການເຊື່ອຟັງຂອງພວກເຮົາ*

- ສຸພາສິດ 3:1–4; ເຢເຣມີຢາ 7:23 (ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງສັນຍາທີ່ຈະໃຫ້ພອນແກ່ຄົນ ຖ້າຫາກເຂົາເຊື່ອຟັງພຣະອົງ.)
- 2 ນີໄຟ 2:3–9; Alma 22:14; ໂມໂຣໄນ 10:4 (ພວກເຮົາຈະບໍ່ມີວັນມີຄ່າຄວນພໍທີ່ຈະຮັບພອນຈາກພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາດ້ວຍຕົວເອງແຕ່ພຣະຜູ້ຊ່ວຍໃຫ້ລອດຊົງຊ່ວຍພວກເຮົາ.)
- ໂມໄຊຢາ 2:24 (ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງໃຫ້ພອນພວກເຮົາເມື່ອພວກເຮົາເຊື່ອຟັງພຣະອົງ.)
- ໂມໄຊຢາ 2:41 (ຜູ້ທີ່ເຊື່ອຟັງພຣະບັນຍັດຈະໄດ້ຮັບພອນຫລາຍໆຢ່າງແລະຈະມີຄວາມສຸກ.)

# ການເສັຽສະລະ

*ບົດທີ ໔໓*

*ການເສັຽສະລະສິ່ງໃດສິ່ງນຶ່ງ ເພື່ອຊ່ວຍເຫລືອຄົນອື່ນເປັນສ່ວນນຶ່ງຂອງແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ທີ່ຈະຊ່ວຍໃຫ້ພວກເຮົາກາຍມາເປັນເຫມືອນດັ່ງພຣະອົງ. ທ່ານເຄີຍມີຄວາມຮູ້ສຶກສຸກໃຈທີ່ມາຈາກການເສັຽສະລະສິ່ງໃດສິ່ງນຶ່ງແກ່ຄົນອື່ນບໍ່?*

**ພຣະເຢຊູຊົງເສັຽສະລະພຣະຊົນຂອງພຣະອົງເພື່ອພວກເຮົາ**

ທີ່ຈະເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ພວກເຮົາຈຳຕ້ອງເສັຽສະລະຢູ່ເລື້ອຍໆ. ການເສັຽສະລະແມ່ນການມອບສິ່ງໃດສິ່ງນຶ່ງເພື່ອຊ່ວຍເຫລືອຄົນອື່ນ. ພຣະເຢຊູຊົງໄດ້ເສັຽສະລະອັນຍິ່ງໃຫຍ່ທີ່ສຸດ. ພຣະອົງຊົງທໍຣະມານເພື່ອບາບຂອງພວກເຮົາ. ແລ້ວພຣະອົງຊົງມອບພຣະຊົນຂອງພຣະອົງເອງເພື່ອພວກເຮົາ.

ຍ້ອນວ່າພຣະເຢຊູຊົງມອບພຣະຊົນຂອງພຣະອົງເພື່ອພວກເຮົາ, ພວກເຮົາທຸກຄົນຈຶ່ງຈະມີຊີວິດຢູ່ຕໍ່ໄປຫລັງຈາກຄວາມຕາຍ, ພວກເຮົາທຸກຄົນຈະມີຮ່າງກາຍທີ່ດີພ້ອມແລະຈະບໍ່ປະສົບກັບຄວາມຕາຍອີກ. ນີ້ເອີ້ນວ່າ ການຟື້ນຄືນຊີວິດ. ພ້ອມກັນນີ້ຄົນທີ່ມີສັດທາໃນພຣະເຢຊູ, ກັບໃຈຈາກບາບຂອງພວກເຂົາຈະໄດ້ຮັບອະພັຍຈາກບາບຂອງພວກເຂົາເພາະການກະທຳຂອງພຣະເຢຊູ ແລະຈະສາມາດກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກ.

ຈາກວັນເວລາຂອງອາດາມມາເຖິງເວລາຂອງພຣະເຢຊູຄຣິສ, ຜູ້ຄົນໄດ້ຖວາຍສັດລ້ຽງຕໍ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ຜູ້ຄົນເລືອກເອົາສັດລ້ຽງໂຕບໍ່



*ຊາຍຮັ່ງມີຄົນນຶ່ງບໍ່ມີສັດທາທີ່ຈະເສັຽສະລະຊັບສົມບັດຂອງລາວ*
*ເພື່ອຈະມາຕິດຕາມພຣະອົງ.*

ມີມົນທິນຈາກຝູງສັດຂອງພວກເຂົາ. ສັດເຫລົ່ານີ້ຈະເປັນສັດລ້ຽງ ໂຕຜູ້ທີ່ເປັນລູກກົກສເມີ. ຫລັງຈາກເລືອກສັດຢ່າງເໝາະສົມແລ້ວ, ຄົນຈະຂ້າມັນແລະເຜົາສ່ວນນຶ່ງຂອງສັດນັ້ນເພື່ອເປັນເຄື່ອງຖວາຍຕໍ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ຄົນຈະຖວາຍສັດເຫລົ່ານີ້ເພື່ອເປັນການເຊື່ອຟັງກົດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ໃນວິທີນີ້, ພວກເຂົາໄດ້ສະແດງຄວາມເຕັມໃຈທີ່ຈະເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ເຖິງແມ່ນວ່າພວກເຂົາຕ້ອງເສັຽສະລະສິ່ງທີ່ມີຄວາມສຳຄັນຕໍ່ພວກເຂົາ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບັນຊາໃຫ້ພວກເຂົາຖວາຍສັດເພື່ອເຕືອນພວກເຂົາວ່າ ພຣະອົງຈະຊົງເສັຽສະລະພຣະບຸດຂອງພຣະອົງເພື່ອພວກເຂົາ. ພຣະເຢຊູ, ຊຶ່ງເປັນລູກກົກຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ຈະຊົງສະເດັດມາສູ່ໂລກແລະຈະຊົງດີພ້ອມທຸກໆດ້ານ. ພຣະອົງຈະຊົງມອບພຣະຊົນຂອງພຣະອົງເພື່ອເສັຽສະລະເພື່ອບາບຂອງພວກເຮົາ.

ຫລັງຈາກພຣະເຢຊູຊົງມອບພຣະຊົນຂອງພຣະອົງແລ້ວ, ພຣະອົງຊົງບັນຊາຜູ້ຄົນບໍ່ໃຫ້ເສັຽສະລະໂດຍການຖວາຍສັດອີກຕໍ່ໄປ. ພຣະອົງຊົງມອບສິນຣະລຶກເພື່ອເຕືອນພວກເຮົາເຖິງການເສັຽສະລະອັນຍິ່ງໃຫຍ່ ທີ່ພຣະອົງຊົງກະທຳເພື່ອພວກເຮົາ. ເຂົ້າຈີ່ແລະນ້ຳຂອງສິນຣະລຶກເປັນສັນຍາລັກເຖິງພຣະກາຍແລະໂລຫິດຂອງພຣະອົງ, ຊຶ່ງພຣະອົງຊົງມອບເພື່ອພວກເຮົາເມື່ອພຣະອົງຊົງສິ້ນພຣະຊົນ.

### *ການສົນທະນາ*

- ການເສັຽສະລະສັດໃນສມັຍໂບຮານນັ້ນ ມີຄວາມໝາຍວ່າແນວໃດ?

## ການເສັຽສະລະເປັນສ່ວນນຶ່ງຂອງແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາທີ່ມີສຳລັບພວກເຮົາ

ບັດນີ້ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຊົງບັນຊາໃຫ້ພວກເຮົາເສັຽສະລະໃນວິທີແຕກຕ່າງກັນ. ພຣະອົງຊົງບັນຊາໃຫ້ພວກເຮົາເສັຽສະລະ ໂດຍໃຫ້ມີໃຈທີ່ຊອກຊ້ຳແລະສຳນຶກຜິດ. ນັ້ນໝາຍຄວາມວ່າ ໃຫ້ເຊົາເຮັດບາບແລະເຊົາມີຄວາມຈອງຫອງ. ມັນໝາຍເຖິງຄວາມເຕັມໃຈທີ່ຈະຈື່ຈຳ ພຣະເຢຊູສເມີ ແລະທີ່ຈະຮັກສາພຣະບັນຍັດຂອງພຣະອົງ, ບໍ່ວ່າຈະຢູ່ໃນສະຖານະການໃດກໍຕາມ. ນີ້ໝາຍຄວາມວ່າ:



*ອັບຣາຣາມມີສັດທາອັນຍິ່ງໃຫຍ່ຈົນທ່ານພ້ອມແລ້ວທີ່ຈະຖວາຍອິຊາກລູກຊາຍຂອງທ່ານເອງ ຕາມພຣະບັນຊາຂອງພຣະເຈົ້າ.*

໑. ພວກເຮົາມີສັດທາໃນພຣະເຢຊູ, ພວກເຮົາກັບໃຈຈາກບາບຂອງພວກເຮົາ, ພວກເຮົາຮັບບັບຕິສະມາ ແລະພວກເຮົາຮັກສາພຣະບັນຍັດຂອງພຣະເຢຊູ.
໔. ພວກເຮົາບອກຄົນອື່ນກ່ຽວກັບຄວາມເຊື່ອຂອງພວກເຮົາໃນພຣະເຢຊູ ເພື່ອວ່າພວກເຂົາຈະສາມາດກາຍມາເປັນຜູ້ຕິດຕາມພຣະອົງ ແລະເຂົ້າຮ່ວມສາສນາຈັກຂອງພຣະອົງ.
໓. ພວກເຮົາເຕັມໃຈທີ່ຈະເຮັດວຽກງານໃນສາສນາຈັກຂອງພຣະເຢຊູທີ່ພຣະອົງຊົງຕ້ອງການໃຫ້ພວກເຮົາເຮັດ.
໔. ຜູ້ຊາຍຕ້ອງເຕັມໃຈທີ່ຈະຮັບຖານະປະໂຣຫິດແລະຊ່ວຍເຫລືອຄອບຄົວຂອງພວກເຂົາແລະຄົນອື່ນໆ ໃຫ້ດຳລົງຊີວິດໃນວິທີທີ່ພວກເຂົາຈະສາມາດກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນໃນຊີວິດໜ້າ.

ການທີ່ຈະກັບໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ພວກເຮົາຕ້ອງເຕັມໃຈທີ່ຈະສະລະສິ່ງໃດກໍຕາມທີ່ພຣະເຢຊູຊົງບັນຊາໃຫ້ພວກເຮົາເສັຽສະລະ. ອັຄສາວົກໂປໂລກ່າວວ່າ ພວກເຮົາຄວນໃຊ້ເວລາຂອງພວກເຮົາໃນໂລກນີ້ ທີ່ຈະເຮັດທຸກສິ່ງໃນການຊ່ວຍເຫລືອວຽກງານຂອງພຣະເຢຊູ.

### *ການສົນທະນາ*

- ພວກເຮົາສາມາດສະແດງວ່າ ພວກເຮົາຈື່ຈຳການເສັຽສະລະຂອງພຣະເຢຊູໃນປັດຈຸບັນນີ້ໄດ້ແນວໃດ?

ຄົນຮັ່ງມີຄົນນຶ່ງຖາມພຣະເຢຊູວ່າ ລາວຄວນເຮັດແນວໃດ ຈຶ່ງຈະສາມາດໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຕລອດໄປໄດ້. ພຣະເຢຊູຊົງບອກລາວໃຫ້ເຊື່ອຟັງພຣະບັນຍັດທັງໝົດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ຄົນຮັ່ງມີຄົນນັ້ນຕອບວ່າ ລາວໄດ້ເຊື່ອຟັງພຣະບັນຍັດທຸກຂໍ້ນັບຕັ້ງແຕ່ໃນວັຍເດັກ. ພຣະເຢຊູຊົງບອກວ່າ ມີອີກສິ່ງນຶ່ງທີ່ລາວຄວນເຮັດ. ລາວຕ້ອງຂາຍທຸກສິ່ງທີ່ລາວມີແລ້ວລາວຕ້ອງມອບເງິນທີ່ໄດ້ມານັ້ນໃຫ້ແກ່ຄົນທຸກ ແລະມາຕິດຕາມພຣະເຢຊູ. ເມື່ອຄົນຮັ່ງມີຜູ້ນັ້ນໄດ້ຍິນສິ່ງນີ້, ລາວມີຄວາມໂສກເສົ້າຫລາຍ. ລາວບໍ່ຢາກມອບທຸກສິ່ງທີ່ລາວມີ ແລະມາຕິດຕາມພຣະເຢຊູ.

ຊາຍຮັ່ງມີຜູ້ນັ້ນເປັນຄົນດີ. ລາວໄດ້ພະຍາຍາມຢ່າງພາກພຽນທີ່ຈະເຊື່ອຟັງພຣະບັນຍັດ. ແຕ່ເມື່ອພຣະເຢຊູຊົງຂໍໃຫ້ລາວສະລະຊັບສົມບັດຂອງລາວທີ່ລາວມີ ແລະມາຕິດຕາມພຣະອົງ, ລາວບໍ່ໄດ້ເຮັດສິ່ງນັ້ນ.

ອັຄສາວົກສອງຄົນຂອງພຣະເຢຊູ, ເປໂຕແລະອັນເດອາ ເຕັມໃຈທີ່ຈະສະລະທຸກສິ່ງທີ່ພວກເຂົາມີ ເພື່ອຈະຕິດຕາມພຣະອົງ. ເມື່ອພຣະເຢຊູຊົງຂໍໃຫ້ພວກເຂົາມາຕິດຕາມພຣະອົງ, ພວກເຂົາກໍໄດ້ເຊົາເຮັດວຽກງານຂອງພວກເຂົາແລະມາຕິດຕາມພຣະອົງ.

ອັບຣາຮາມກໍໄດ້ເຕັມໃຈທີ່ຈະສະລະທຸກສິ່ງທີ່ທ່ານມີແກ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ອັບຣາຮາມອາສັຍຢູ່ໃນໂລກກ່ອນການກຳເນີດຂອງພຣະເຢຊູ. ໃນເວລານັ້ນ, ພຣະບິດາຜູ້ສະຖິດ ໃນສວັນຂອງພວກເຮົາຍັງບັນຊາໃຫ້ຜູ້ຄົນຖວາຍສັດຢູ່. ພຣະອົງຊົງບັນຊາອັບຣາຮາມໃຫ້ຖວາຍລູກຊາຍຂອງທ່ານ. ເພື່ອທົດລອງວ່າ ທ່ານຈະເຊື່ອຟັງພຣະອົງບໍ່. ອັບຣາຮາມເຕັມໃຈທີ່ຈະເຊື່ອຟັງ. ທ່ານໄດ້ສ້າງແທ່ນບູຊາຂຶ້ນແລະວາງລູກຊາຍຂອງທ່ານໄວ້ເທິງແທ່ນບູຊານັ້ນ. ອັບຣາຮາມກຳລັງຈະຂ້າລູກຊາຍຂອງທ່ານ, ແຕ່ທູດສວັນໄດ້ລົງມາຢຸດທ່ານໄວ້. ທູດສວັນບອກອັບຣາຮາມບໍ່ໃຫ້ຂ້າລູກຂອງທ່ານ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮູ້ວ່າ ອັບຣາຮາມເຕັມໃຈທີ່ຈະມອບທຸກສິ່ງທີ່ພຣະອົງຊົງບັນຊາ, ແມ່ນແຕ່ລູກຊາຍຂອງທ່ານເອງ. ອັບຣາຮາມຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຫລາຍທີ່ສຸດຈົນທ່ານເຕັມໃຈ ທີ່ຈະເຮັດທຸກສິ່ງທີ່ພຣະບິດາຊົງບັນຊາ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໃຫ້ພອນແກ່ອັບຣາຮາມ ເພາະທ່ານເຕັມໃຈທີ່ຈະເສັຽສະລະທຸກສິ່ງເພື່ອພຣະອົງ.

### *ການສົນທະນາ*

- ແມ່ນໃຜເປັນຕົວຢ່າງຂອງຄົນທີ່ບໍ່ເຕັມໃຈມອບທຸກສິ່ງທີ່ພຣະເຢຊູຊົງບັນຊາໃຫ້ລາວເຮັດ?
- ແມ່ນໃຜເປັນຕົວຢ່າງຂອງຄົນທີ່ເຕັມໃຈທີ່ຈະເຮັດທຸກສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບັນຊາ?
- ທ່ານຈະເຮັດແນວໃດໃນສະຖານະການເຊັ່ນນີ້?

## ພວກເຮົາອາດຈຳເປັນຕ້ອງເສັຽສະລະບາງສິ່ງເພື່ອວຽກງານຂອງພຣະເຢຊູ

ຄອບຄົວຂອງພວກເຮົາອາດປະຕິເສດພວກເຮົາຖ້າພວກເຮົາຕິດຕາມພຣະເຢຊູ. ຄົນອື່ນອາດຫົວຂວັນພວກເຮົາຫລືພະຍາຍາມທຳລາຍພວກເຮົາເມື່ອພວກເຮົາເຊື່ອຟັງພຣະບັນຍັດຂອງພຣະອົງ. ພວກເຮົາອາດເສັຽວຽກເສັຽງານຂອງພວກເຮົາເພາະການເຂົ້າຮ່ວມສາສນາຈັກຂອງພຣະເຢຊູຄຣິສ.

ພວກເຮົາອາດໃຊ້ເງິນຄຳແລະເວລາຂອງພວກເຮົາ ເພື່ອສອນຄົນອື່ນກ່ຽວກັບພຣະເຢຊູ. ພວກເຮົາອາດຈຳເປັນຕ້ອງໃຊ້ເວລາທີ່ຈະຊ່ວຍຜູ້ນຳຂອງສາສນາຈັກເພື່ອເຮັດວຽກຂອງພຣະອົງ. ພວກເຮົາອາດຈຳເປັນຕ້ອງໃຊ້ເວລາແລະເງິນຄຳຂອງພວກເຮົາເພື່ອຊ່ວຍເຫລືອຄົນອື່ນໃນຄອບຄົວຂອງພວກເຮົາໃນຂະນະທີ່ພວກເຂົາເຮັດວຽກຂອງພຣະເຢຊູ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອາດຕ້ອງການໃຫ້ພວກເຮົາສະລະຊີວິດຂອງພວກເຮົາແທນທີ່ຈະປະຕິເສດປະຈັກພະຍານຂອງພວກເຮົາກ່ຽວກັບພຣະເຢຊູ.

### *ການສົນທະນາ*

- ທ່ານຈະຮູ້ສຶກແນວໃດຖ້າຫາກວ່າ ທ່ານຖືກຂໍຮ້ອງໃຫ້ເສັຽສະລະຊັບສົມບັດທັງຫມົດຂອງທ່ານ?
- ທ່ານຈະເສັຽສະລະຫລາຍຂນາດໃດເພື່ອວຽກງານຂອງພຣະເຢຊູ?

## ການເສັຽສະລະນຳພອນມາສູ່ພວກເຮົາ ຊຶ່ງບໍ່ສາມາດມາເຖິງໄດ້ໃນວິທີອື່ນ

ການເສັຽສະລະຊ່ວຍເຫລືອພວກເຮົາໃຫ້ເປັນຄົນບໍ່ເຫັນແກ່ຕົວ. ພວກເຮົາຮຽນຮູ້ທີ່ຈະຮັບໃຊ້ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະຊ່ວຍເຫລືອຄົນອື່ນ. ພວກເຮົາຮຽນຮູ້ວ່າ ການກະທຳສິ່ງໃດສິ່ງນຶ່ງທີ່ດີແກ່ຄົນອື່ນ ຈະເຮັດໃຫ້ພວກເຮົາມີຄວາມສຸກ. ພວກເຮົາຮຽນຮູ້ວ່າ ການກະທຳສິ່ງທີ່ພຣະເຢຊູຊົງບັນຊາໃຫ້ພວກເຮົາເຮັດ ມີຄວາມສຳຄັນຫລາຍກວ່າທຸກສິ່ງທັງຫມົດທີ່ພວກເຮົາສາມາດມີຢູ່ໃນໂລກນີ້. ພວກເຮົາຮຽນຮູ້ວ່າ ການຮັບໃຊ້ຄົນອື່ນເປັນສິ່ງທີ່ດີກວ່າການຄິດເຖິງແຕ່ເຣື່ອງຂອງຕົນເອງ. ເມື່ອພວກເຮົາເສັຽສະລະຢ່າງເຕັມໃຈ, ພວກເຮົາຍັງຮູ້ວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໃຫ້ພອນພວກເຮົາຫລາຍກວ່າສິ່ງໃດກໍຕາມທີ່ພວກເຮົາໄດ້ເສັຽສະລະໄປ.

ການເສັຽສະລະແກ່ຄົນອື່ນຊ່ວຍເຫລືອພວກເຮົາໃຫ້ເຂົ້າໃຈເຖິງສິ່ງທີ່ພຣະເຢຊູຄຣິສ ຊົງກະທຳເພື່ອພວກເຮົາຫລາຍຂຶ້ນ. ພຣະອົງຊົງຮັກພວກເຮົາຈົນວ່າພຣະອົງຊົງໄດ້ມອບພຣະຊົນຂອງພຣະອົງເພື່ອພວກເຮົາ. ເມື່ອພວກເຮົາເສັຽສະລະເພື່ອພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຫລືເພື່ອຄົນອື່ນໆ, ພວກເຮົາກໍຈະຮັກພຣະອົງຫລາຍຂຶ້ນ. ພວກເຮົາກໍຈະກາຍມາເປັນຄົນທີ່ຮັກຫອມແລະກາຍມາເປັນເຫມືອນດັ່ງພຣະເຢຊູ ແລະພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຫລາຍຂຶ້ນ.

ການມີຊັບສົມບັດຫລວງຫລາຍບໍ່ແມ່ນເປັນສິ່ງບໍ່ດີ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ບາງຄັ້ງຈະມອບສິ່ງເຫລົ່ານີ້ໃຫ້ພວກເຮົາເພື່ອວ່າພວກເຮົາຈະສາມາດຊ່ວຍເຫລືອຄົນອື່ນ. ແຕ່ມັນເປັນສິ່ງຍາກທີ່ບໍ່ຮັກຊັບສົມບັດແລະເງິນຄຳຂອງພວກເຮົາ. ພວກເຮົາທຳງານຢ່າງດຸຫມັ່ນຂຍັນຂັນແຂງກ່ອນຈະມີຊັບສົມບັດແລະເງິນຄຳນັ້ນ. ສິ່ງຂອງເຫລົ່ານີ້ເປັນສິ່ງຈຳເປັນຕໍ່ການດຳລົງຊີວິດຂອງພວກເຮົາ. ແຕ່ວ່າພວກເຮົາບໍ່ຄວນຮັກສິ່ງຂອງເຫລົ່ານັ້ນຫລາຍຈົນວ່າພວກເຮົາບໍ່ຍອມແບ່ງປັນຂອງເຫລົ່ານີ້ໃຫ້ແກ່ລູກໆຄົນອື່ນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ສະມາຊິກຂອງສາສນາຈັກຂອງພຣະເຢຊູຄຣິສທຸກຄົນຄວນເຮັດໃຫ້ການຮັບໃຊ້ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູເປັນສິ່ງສຳຄັນທີ່ສຸດໃນຊີວິດຂອງພວກເຂົາ. ພວກເຮົາສະແດງໃຫ້ຮູ້ວ່າ ພວກເຮົາຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູຫລາຍກວ່າຊັບສົມບັດຂອງພວກເຮົາເມື່ອພວກເຮົາເຮັດສິ່ງທີ່ຜູ້ນຳຂອງສາສນາຈັກຂອງພຣະເຢຊູຄຣິສຂໍຮ້ອງໃຫ້ພວກເຮົາເຮັດ. ພວກເຮົາຄວນເສັຽສະລະເວລາຂອງພວກເຮົາເພື່ອຈະໄດ້ຊ່ວຍສອນແລະຮັບໃຊ້ຄົນອື່ນໆ. ເພື່ອຈະມີຄ່າຄວນກັບໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພວກເຮົາຕ້ອງເຕັມໃຈທີ່ຈະມອບທຸກສິ່ງທີ່ພວກເຮົາມີ ເພື່ອຊ່ວຍເຮັດວຽກງານຂອງພຣະເຢຊູ ຖ້າຫາກວ່າພຣະເຢຊູຊົງຂໍຮ້ອງໃຫ້ພວກເຮົາເຮັດ.

ພຣະເຢຊູຊົງໄດ້ສັນຍາໄວ້ທີ່ຈະມອບພອນອັນຍິ່ງໃຫຍ່ໃຫ້ແກ່ຄົນທີ່ເຊື່ອຟັງແລະຮັບໃຊ້ພຣະອົງ. ພຣະອົງຊົງຕັສວ່າ ພວກເຮົາບໍ່ສາມາດທີ່ຈະພັນລະນາເຖິງສິ່ງທີ່ເລີດລ້ຳທີ່ພວກເຮົາຈະໄດ້ຮັບໃນພາຍຫລັງຖ້າວ່າພວກເຮົາຈະເສັຽສະລະເພື່ອວຽກງານຂອງພຣະອົງໃນປັດຈຸບັນນີ້.

## *ຂໍ້ອ້າງອີງ*

*ພຣະເຢຊູຊົງເສັຽສະລະພຣະຊົນຂອງພຣະອົງເພື່ອພວກເຮົາ*

- ລູກາ ໗:໕໗–໓໔ (ການເຊື່ອຟັງພຣະເຢຊູເປັນສິ່ງສຳຄັນກວ່າສິ່ງອື່ນໆທັງຫມົດໃນຊີວິດຂອງພວກເຮົາ.)
- ໂຢຮັນ ໑໕:໑໔–໑໓ (ພຣະເຢຊູຊົງສະແດງຄວາມຮັກອັນຍິ່ງໃຫຍ່ຂອງພຣະອົງຕໍ່ພວກເຮົາ ໂດຍການມອບພຣະຊົນຂອງພຣະອົງເພື່ອພວກເຮົາ.)

*ການເສັຽສະລະເປັນສ່ວນນຶ່ງຂອງແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາທີ່ມີສຳລັບພວກເຮົາ*

- ປະຖົມມະການ ໒໒:໑–໑໔ (ອັບຣາຮາມຖືກບັນຊາໃຫ້ຖວາຍອີຊາກລູກຊາຍຂອງທ່ານ.)
- ມັດທາຍ ໔:໑໘–໒໐ (ພຣະເຢຊູຊົງເອີ້ນເອົາເປໂຕແລະອັນເດອາໃຫ້ມາເປັນສານຸສິດຂອງພຣະອົງ.)
- ໂຣມ ໑໒:໑ (ພວກເຮົາຄວນໃຊ້ເວລາຂອງພວກເຮົາເພື່ອຮັບໃຊ້ພຣະບິດເທິງສວັນຂອງພວກເຮົາ.)

*ພວກເຮົາອາດຈຳເປັນຕ້ອງເສັຽສະລະບາງສິ່ງເພື່ອວຽກງານຂອງພຣະເຢຊູ*

- ໃ&ັ ໙໕:໒໓ (ນີ້ເປັນເວລາແຫ່ງການເສັຽສະລະ.)
- D&C 97:8 (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັບຄົນທີ່ເຕັມໃຈທີ່ຈະເສັຽສະລະເພື່ອພຣະອົງ.)

*ການເສັຽສະລະນຳພອນມາສູ່ພວກເຮົາ ຊຶ່ງບໍ່ສາມາດມາເຖິງໄດ້ໃນວິທີອື່ນ*

- ມັດທາຍ ໑໙:໒໙ (ພຣະເຢຊູຊົງສັນຍາທີ່ຈະມອບພອນໃຫ້ແກ່ຄົນທີ່ເສັຽສະລະເພື່ອພຣະກິດຕິຄຸນ.)
- ລູກາ ໑໒:໑໙–໓໔ (ພວກເຮົາຄວນສແວງຫາອານາຈັກຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ກ່ອນການສແວງຫາສິ່ງອື່ນໆໃນແຜ່ນດິນໂລກ.)



*ວັນອາທິດເປັນວັນແຫ່ງນະມັສການ.*

# ວັນແຫ່ງນະມັສການ

*ບົດທີ ໔໔*

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກພວກເຮົາໃຫ້ໃຊ້ວັນນຶ່ງໃນທຸກໆອາທິດເພື່ອນະມັສການພຣະອົງ. ພວກເຮົາຈະໄດ້ຮັບພອນຫລາຍໆຢ່າງເມື່ອພວກເຮົາເຮັດໃຫ້ວັນນັ້ນເປັນວັນສັກສິດ.*

**ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບວັນນຶ່ງໃຫ້ເປັນວັນນະມັສການເພື່ອຈະຊ່ວຍເຫລືອພວກເຮົາ**

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮູ້ວ່າ ພວກເຮົາມີບັນຫາຫລາຍຢ່າງ. ພວກເຮົາຕ້ອງເຮັດຫລາຍສິ່ງທຸກໆວັນ. ພວກເຮົາຕ້ອງເຮັດງານຫາລ້ຽງຊີບເພື່ອຈະໄດ້ເງິນມາຊື້ອາຫານແລະເຄື່ອງນຸ່ງຫົ່ມ. ພວກເຮົາຕ້ອງຕຽມອາຫານແລະເຮັດວຽກງານອື່ນໆແຕ່ລະວັນ.

ຍ້ອນວ່າມີວຽກງານເຮັດຫລາຍເຊັ່ນນັ້ນ, ມັນຈຶ່ງເປັນເຣື່ອງງ່າຍທີ່ຈະລືມພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ມັນກໍງ່າຍເຊັ່ນດຽວທີ່ຈະລືມສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ພວກເຮົາເຮັດ. ພວກເຮົາຄິດເຖິງຄວາມຈຳເປັນປະຈຳວັນຫລາຍກວ່າທີ່ຈະຄິດກ່ຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮູ້ວ່າ ພວກເຮົາຕ້ອງການເວລາທີ່ຈະຄິດເຖິງພຣະອົງ. ພວກເຮົາ ຕ້ອງການເວລາທີ່ຈະຮຽນເຖິງສິ່ງທີ່ພຣະອົງຊົງຕ້ອງການໃຫ້ພວກເຮົາເຮັດ. ຍ້ອນສາເຫດນີ້, ພຣະອົງຊົງໄດ້ບອກພວກເຮົາໃຫ້

ໃຊ້ວັນນຶ່ງໃນທຸກໆເຈັດວັນເປັນວັນພັກຜ່ອນຈາກວຽກງານຂອງພວກເຮົາ ແລະມາຮຽນກ່ຽວກັບພຣະອົງ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສ້າງແຜ່ນດິນໂລກໂດຍຜ່ານພຣະເຢຊູໃນຫົກລະຍະ. ພຣະອົງຊົງເອີ້ນລະຍະເວລານີ້ວ່າ ວັນ. ໃນວັນທີເຈັດ, ພຣະອົງຊົງພັກຜ່ອນຈາກການສ້າງໂລກນີ້. ພຣະອົງຊົງບອກພວກເຮົາວ່າ ພວກເຮົາຄວນພັກຜ່ອນວັນນຶ່ງໃນແຕ່ລະອາທິດຈາກວຽກງານປະຈຳວັນຂອງພວກເຮົາ.

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກພວກເຮົາເຖິງວັນໃດຄວນເປັນວັນແຫ່ງນະມັສການ

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກຜູ້ຄົນໃນສມັຍໂບຮານໃຫ້ໃຊ້ວັນທີເຈັດຂອງສັປດາໃຫ້ເປັນວັນແຫ່ງນະມັສການ. ວັນນີ້ມີໄວ້ເພື່ອຊ່ວຍເຫລືອຜູ້ຄົນໃຫ້ຈື່ຈຳວ່າ ຫລັງຈາກພຣະອົງຊົງໄດ້ສ້າງໂລກແລ້ວ ພຣະອົງຊົງໄດ້ພັກຜ່ອນໃນວັນທີເຈັດ.

ຫລັງຈາກພຣະເຢຊູຊົງສິ້ນພຣະຊົນ, ພຣະອົງຊົງຟື້ນຄືນພຣະຊົນໃນວັນທຳອິດຂອງສັປດາ. ຜູ້ຕິດຕາມຂອງພຣະເຢຊູຊົງໃຊ້ວັນທຳອິດຂອງສັປດາເປັນວັນແຫ່ງນະມັສການເພື່ອຊ່ວຍໃຫ້ຜູ້ຄົນຈື່ຈຳ ແລະໃຫ້ກຽດວັນຟື້ນຄືນພຣະຊົນຂອງພຣະເຢຊູ. ພວກເຮົາເອີ້ນວັນນີ້ວ່າ ວັນພຣະເຈົ້າ (ບາງຄັ້ງພຣະເຢຊູຊົງຖືກເອີ້ນວ່າພຣະເຈົ້າ) ພວກເຮົາຍັງເອີ້ນວັນນີ້ວ່າ *ວັນຊະບາໂຕ. ເຖິງແມ່ນວ່າ ມັນເປັນວັນທີ່ແຕກຕ່າງຈາກທີ່ໃຊ້ກັນໃນສມັຍໂບຮານ ມັນກໍຍັງເປັນວັນນຶ່ງໃນເຈັດວັນຂອງສັປດາ. ພວກເຮົາຍັງເຮັດວຽກທຳມະດາໃນຫົກວັນ ແລ້ວໃນວັນທີເຈັດ ພວກເຮົານະມັສການພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ໃນສມັຍຂອງພວກເຮົາ, ຫລາຍຄົນຈະໃຊ້ວັນທຳອິດຂອງສັປດາ, ຊຶ່ງເປັນວັນອາທິດ, ເປັນວັນແຫ່ງນະມັສການ. ໃນບາງກໍຣະນີ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກສາສດາຂອງພຣະອົງວ່າ ຜູ້ຄົນໃນບາງປະເທດອາດສາມາດໃຊ້ວັນອື່ນເປັນວັນແຫ່ງນະມັສການ.

## ພວກເຮົາສາມາດຮັກສາວັນພຣະເຈົ້າໃຫ້ສັກສິດ

ມັນມີຫລາຍສິ່ງທີ່ພວກເຮົາຄວນເຮັດໃນວັນພຣະເຈົ້າ. ສິ່ງທີ່ສຳຄັນທີ່ສຸດທີ່ພວກເຮົາຄວນເຮັດ ແມ່ນຄິດເຖິງພຣະເຢຊູແລະພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໃນວັນນັ້ນ. ພວກເຮົາຄວນຄຶດເຖິງສິ່ງທີ່ພວກພຣະອົງຊົງຕ້ອງການໃຫ້ພວກເຮົາຮູ້ແລະເຮັດ. ບາງສິ່ງທີ່ພວກເຮົາສາມາດເຮັດໄດ້ໃນວັນນະມັສການເພື່ອຈະຊ່ວຍພວກເຮົາຈື່ຈຳແລະຮຽນກ່ຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາມີ:

໑. ສຶກສາພຣະຄັມພີທີ່ສອນກ່ຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູ.
໒. ຊ່ວຍເຫລືອຄົນອື່ນໃຫ້ຮູ້ກ່ຽວກັບສາສນາຈັກ.
໓. ສອນຄອບຄົວຂອງພວກເຮົາກ່ຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູ ແລະຮຽນເຖິງສິ່ງທີ່ພວກພຣະອົງຊົງຕ້ອງການໃຫ້ພວກເຮົາເຮັດ.
໔. ໄປຮ່ວມກອງປະຊຸມໂບດແລະໄປຮ່ວມຊັ້ນຮຽນໃນໂບດ ຊຶ່ງເປັນບ່ອນພວກເຮົາສາມາດຮຽນກ່ຽວກັບພຣະກິດຕິຄຸນນຳກັນ. ພວກເຮົາສາມາດຮຽນກ່ຽວກັບປວັດຂອງພຣະເຢຊູ ແລະການສອນຕ່າງໆຂອງພຣະກິດຕິຄຸນ ແລະພວກເຮົາສາມາດສອນເຊິ່ງກັນແລະກັນເຖິງສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະພຣະເຢຊູຊົງໄດ້ກະທຳເພື່ອພວກເຮົາ.
໕. ພັກຜ່ອນຈາກວຽກງານຂອງພວກເຮົາໃນວັນຕ່າງໆຂອງສັປດາ.
໖. ອະທິຖານ.
໗. ຢ້ຽມຢາມຄົນເຈັບປ່ວຍແລະຊ່ວຍໃຫ້ພວກເຂົາຮູ້ສຶກດີຂຶ້ນ.
໘. ຂຽນປວັດຄອບຄົວຂອງພວກເຮົາເພື່ອພວກເຮົາຈະສາມາດຈື່ຈຳມັນໄດ້ໃນອະນາຄົດ.

ສະມາຊິກຂອງສາສນາຈັກຂອງພຣະເຢຊູຄຣິສ ຄວນຮັບສິນຣະລຶກໃນວັນແຫ່ງນະມັສການ. ພວກເຂົາຄວນຕຽມເພື່ອຈະຮັບມັນໂດຍການຄຳນຶງເຖິງພຣະເຢຊູແລະເຖິງສິ່ງທີ່ພຣະອົງຊົງໄດ້ກະທຳຕໍ່ພວກເຮົາ. ພວກເຂົາຄວນທູນຂໍພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໃຫ້ຊ່ວຍເຫລືອ ພວກເຂົາໃຫ້ຈື່ຈຳພຣະເຢຊູ. ເມື່ອພວກເຂົາຮັບສິນຣະລຶກ, ພວກເຂົາຄວນຈື່ຈຳຄຳສັນຍາທີ່ສັກສິດ ທີ່ພວກເຂົາ

ໄດ້ເຮັດ. ພວກເຂົາຄວນຄິດກ່ຽວກັບສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ສັນຍາກັບພວກເຂົາຖ້າພວກເຂົາຫາກເຊື່ອຟັງພຣະເຢຊູ.

ມັນມີຫລາຍໆສິ່ງທີ່ພວກເຮົາບໍ່ຄວນເຮັດໃນວັນແຫ່ງການນະມັສການ. ພວກເຮົາບໍ່ຄວນເຮັດວຽກ. ພວກເຮົາບໍ່ຄວນເຮັດໃຫ້ຄອບຄົວ, ຜູ້ຮັບໃຊ້ຫລືສັດລ້ຽງຂອງພວກເຮົາເຮັດວຽກ. ພວກເຮົາບໍ່ຄວນອ່ານສິ່ງໃດສິ່ງນຶ່ງ, ເບິ່ງລາຍການໃດລາຍການນຶ່ງໃນໂທລະທັດ ຫລືຟັງເພງໃດເພງນຶ່ງທີ່ຈະຢຸດຢັ້ງ ພວກເຮົາຈາກການຄຳນຶງເຖິງພຣະເຢຊູ ແລະພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພວກເຮົາບໍ່ຄວນໄປເບິ່ງການແຂ່ງຂັນກິລາ. ພວກເຮົາບໍ່ຄວນຊື້ຫລືຂາຍສິ່ງຂອງ. ສິ່ງທັງຫມົດນີ້ອາດມີຄວາມສຳຄັນ, ແຕ່ມັນບໍ່ຊ່ວຍພວກເຮົາໃຫ້ຄິດກ່ຽວກັບພຣະເຢຊູ ແລະພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໃນວັນສັກສິດນີ້.

ມັນມີຫລາຍໆຄັ້ງທີ່ພວກເຮົາຈຳຕ້ອງເຮັດວຽກໃນວັນນະມັສການ ແຕ່ພວກເຮົາກໍຄວນພະຍາຍາມຫລີກເວັ້ນມັນ. ເມື່ອຈຳເປັນຕ້ອງເຮັດວຽກໃນວັນນະມັສການພວກເຮົາຄວນຄິດຫາພຣະເຢຊູ ແລະພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໃນຂະນະທີ່ພວກເຮົາເຮັດວຽກງານນັ້ນ.

### *ການສົນທະນາ*

- ພວກເຮົາຄວນເຮັດຫຍັງໃນວັນພຣະເຈົ້າ?
- ພວກເຮົາບໍ່ຄວນເຮັດຫຍັງໃນວັນແຫ່ງນະມັສການ?

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງໃຫ້ພອນພວກເຮົາເມື່ອພວກເຮົາຮັກສາວັນພຣະເຈົ້າໃຫ້ສັກສິດ

ຈຸດປະສົງຂອງວັນແຫ່ງນະມັສການແມ່ນເປັນມາແບບດຽວສເມີ. ມັນເປັນວັນພັກຜ່ອນຈາກວຽກງານທີ່ພວກເຮົາເຮັດທຸກໆວັນ. ມັນເປັນວັນທີ່ຈະຮຽນກ່ຽວກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະຕຽມເພື່ອຊີວິດນຳພຣະອົງ. ມັນເປັນວັນທີ່ຈະເຮັດໃຫ້ຊີວິດຂອງພວກເຮົາດີຂຶ້ນໂດຍການຮຽນເພີ້ມກ່ຽວກັບສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ພວກເຮົາເຮັດ.

ວັນນີ້ເປັນວັນດີສຳລັບພວກເຮົາ. ມັນຊ່ວຍເຫລືອພວກເຮົາໃຫ້ຈື່ຈຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະເຖິງເຫດຜົນທີ່ພວກເຮົາມາຢູ່ໃນໂລກນີ້. ເມື່ອພວກເຮົາເຮັດສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບັນຊາໃນວັນພຣະເຈົ້າ, ພວກເຮົາຈະໄດ້ຮັບພອນ. ຄອບຄົວຂອງພວກເຮົາຈະມີຄວາມສຸກຫລາຍຂຶ້ນ. ຮ່າງກາຍຂອງພວກເຮົາຈະຫ້າວຫັນຂຶ້ນ ແລະພວກເຮົາຈະຢູ່ໃກ້ສິດກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະຈະໃກ້ສິດຕໍ່ຄຳສອນຂອງພຣະອົງ. ພວກເຮົາຈະສາມາດຮູ້ສຶກເຖິງອິດທິພົນຂອງພຣະວິນຍານບໍລິສຸດຫລາຍຂຶ້ນໃນສັປດາຕໍ່ມາ. ເພາະພວກເຮົາໄດ້ເຊື່ອຟັງ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊ່ວຍເຫລືອພວກເຮົາໃຫ້ມີອາຫານ, ເຄື່ອງນຸ່ງຫົ່ມ ແລະສິ່ງອື່ນໆທີ່ພວກເຮົາຕ້ອງການ. ພຣະອົງຈະຊົງຊ່ວຍເຫລືອພວກເຮົາໃຫ້ຮຽນຮູ້ກ່ຽວກັບພຣະອົງ ແລະມີຄວາມສຸກຫລາຍຂຶ້ນ.

### *ການສົນທະນາ*

- ມີເຫດຜົນຫຍັງແດ່ທີ່ພວກເຮົາຄວນຮັກສາວັນແຫ່ງນະມັສການໃຫ້ເປັນວັນສັກສິດ?

### *ຂໍ້ອ້າງອີງ*

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບວັນນຶ່ງໃຫ້ເປັນວັນນະມັສການເພື່ອຊ່ວຍເຫລືອພວກເຮົາ*

- ປະຖົມມະການ ໒:໒–໓ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງພັກຜ່ອນໃນວັນທີເຈັດຈາກວຽກງານຂອງພຣະອົງ.)
- ອົບພະຍົບ ໒໐:໘ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບັນຊາພວກເຮົາໃຫ້ຮັກສາວັນແຫ່ງນະມັສການໃຫ້ບໍລິສຸດ.)
- ອົບພະຍົບ ໓໕:໑–໓ (ພວກເຮົາຄວນພັກຜ່ອນໃນວັນແຫ່ງນະມັສການ.)
- ມາຣະໂກ ໒:໒໗ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຊົງມອບວັນແຫ່ງນະມັສການໃຫ້ພວກເຮົາ ເພື່ອຊ່ວຍເຫລືອພວກເຮົາ.)
- ໂມໄຊຍາ ໑໘:໒໓ (ພວກເຮົາຄວນຮັກສາວັນແຫ່ງນະມັສການໃຫ້ບໍລິສຸດ.)

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກພວກເຮົາເຖິງວັນໃດຄວນເປັນວັນແຫ່ງນະມັສການ

- ກິຈການ ໒໐:໗ (ອັຄສາວົກຮັບສິນຣະລຶກໃນວັນທຳອິດຂອງສັປດາ.)
- ໑ ໂກຣິນໂທ ໑໖:໒ (ຜູ້ຄົນຕຽມຕໍ່ການນະມັສການໃນວັນທຳອິດ.)

*ພວກເຮົາສາມາດຮັກສາວັນພຣະເຈົ້າໃຫ້ສັກສິດ*

- ອົບພະຍົບ ໒໐:໘–໑໐ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກພວກເຮົາບໍ່ໃຫ້ເຮັດວຽກໃນວັນທີເຈັດ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງໃຫ້ພອນພວກເຮົາ ເມື່ອພວກເຮົາຮັກສາວັນພຣະເຈົ້າໃຫ້ສັກສິດ*

- ເອຊາຢາ ໕໘:໑໓–໑໔ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໃຫ້ພອນພວກເຮົາ ເມື່ອພວກເຮົາຮັກສາວັນແຫ່ງນະມັສການໃຫ້ສັກສິດ.)

# ກົດພົມມະຈັນ

*ບົດທີ ໔໕*

*ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງໄດ້ມອບອຳນາດທີ່ສັກສິດໃຫ້ແກ່ພວກເຮົາທີ່ຈະມີລູກໄດ້. ພຣະອົງຊົງບອກພວກເຮົາເຖິງວິທີທີ່ຈະໃຊ້ອຳນາດນີ້. ຖ້າພວກເຮົາຫາກໃຊ້ມັນໃນທາງຖືກຕ້ອງ, ພວກເຮົາຈະສາມາດມີຄວາມສຸກທີ່ສຸດ.*

## ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງບອກພວກເຮົາໃຫ້ມີລູກ ແລະໃຫ້ເຊື່ອຟັງກົດພົມມະຈັນ

ຫລັງຈາກອາດາມແລະເອວາໄດ້ແຕ່ງງານ, ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງບອກພວກເພິ່ນໃຫ້ມີລູກ ເພື່ອວ່າວິນຍານໃນສະຫວັນຈະສາມາດລົງມາສູ່ໂລກ ແລະຮັບຮ່າງກາຍທີ່ມີເນື້ອໜັງແລະກະດູກ. ຮ່າງກາຍທີ່ມີເນື້ອໜັງແລະກະດູກເປັນຂອງປະທານອັນຍິ່ງໃຫຍ່ທີ່ສຸດທີ່ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງມອບໃຫ້ພວກເຮົາ. ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງມີຮ່າງກາຍທີ່ມີເນື້ອໜັງແລະກະດູກ ແລະພຣະອົງຊົງຕ້ອງການໃຫ້ລູກໆຂອງພຣະອົງໃຫ້ກາຍມາເປັນເຫມືອນດັ່ງພຣະອົງ.

ອຳນາດທີ່ຈະມີລູກໄດ້ເປັນສິ່ງສັກສິດທີ່ສຸດ. ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງມອບກົດນີ້ແກ່ພວກເຮົາເພື່ອວ່າຈະນຳໃຊ້ອຳນາດນີ້ແບບໃດ. ກົດນີ້ເອີ້ນວ່າ ກົດພົມມະຈັນ. ມັນເວົ້າວ່າ ພວກເຮົາຄວນມີຄວາມສຳພັນທາງເພດນຳຄົນທີ່ພວກເຮົາແຕ່ງງານຢ່າງຖືກຕ້ອງຕາມກົດຫມາຍເທົ່ານັ້ນ. ນີ້ຫມາຍຄວາມວ່າພວກເຮົາບໍ່ຄວນມີການສຳພັນທາງເພດກ່ອນພວກເຮົາແຕ່ງງານ, ແລະຫລັງຈາກພວກເຮົາແຕ່ງງານແລ້ວ ພວກເຮົາກໍຄວນມີຄວາມສຳພັນທາງເພດນຳສາມີຫລືພັລຍາຂອງພວກເຮົາເທົ່ານັ້ນ.

ການເອົາລູກອອກ, ຫລືການແທ້ງລູກ ແລະປ່ອຍໃຫ້ມັນຕາຍຫລືຂ້າລູກໃນເວລາລູກຍັງຢູ່ໃນທ້ອງ ເປັນການກະທຳທີ່ຜິດ. ຍົກເວັ້ນແຕ່ໃນກໍລະນີພິເສດເທົ່ານັ້ນ, ຊຶ່ງໃນເວລານັ້ນກໍຕ້ອງພິຈາລະນາຢ່າງຖ້ວນຖີ່ດ້ວຍການອະທິຖານ ແລະຂໍຄວາມຊ່ວຍເຫລືອຈາກອະທິການຫລືປະທານສາຂາ. ພວກເຮົາບໍ່ຄວນຊ່ວຍເຫລືອຄົນອື່ນໃຫ້ເອົາລູກອອກ.

ພໍ່ແມ່ເປັນຜູ້ທີ່ຄວນສອນກົດພົມມະຈັນໃຫ້ແກ່ລູກໆຂອງເຂົາເຈົ້າ. ພໍ່ແມ່ຄວນສອນລູກໆວ່າ ຮ່າງກາຍຂອງພວກເຂົານັ້ນສັກສິດ ແລະວ່າພວກເຂົາບໍ່ຄວນໃຫ້ຜູ້ໃດຈັບບາຍສ່ວນໃດສ່ວນນຶ່ງຂອງຮ່າງກາຍຂອງພວກເຂົາ. ພວກເຂົາຄວນສິດສອນແນວຄິດແລະຄຳເວົ້າທີ່ລູກໆຂອງເຂົາເຈົ້າຮຽນຈາກຄົນອື່ນ.

ເມື່ອລູກໆເຕີບໂຕຂຶ້ນ, ພວກເຂົາຄວນໄດ້ຮັບການສອນວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບອຳນາດໃຫ້ແກ່ພວກເຮົາ ເພື່ອຈະມີລູກ ແລະວ່າການໃຊ້ອຳນາດນີ້ ຫລັງຈາກການແຕ່ງງານເປັນສິ່ງດີ. ເມື່ອລູກໆມີອາຍຸເຖິງ ໑໔ ປີ ຫລື ໑໕ ປີ, ພວກເຮົາຄວນສອນພວກເຂົາໃຫ້ເຂົ້າໃຈເຖິງວ່າ ລູກໆເກີດມາໄດ້ແນວໃດ. ພວກເຮົາຕ້ອງສອນພວກເຂົາໃນວັຍເດັກ ໃນວິທີທີ່ໃຊ້ການໄດ້ດີເພື່ອຈະປ້ອງກັນພວກເຂົາຈາກອັນຕະລາຍຫລືຈາກການສອນທີ່ບໍ່ຈິງ.

### *ການສົນທະນາ*

- ເປັນຫຍັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈຶ່ງຊົງມອບອຳນາດໃຫ້ແກ່ພວກເຮົາເພື່ອຈະມີລູກໄດ້?
- ກົດພົມມະຈັນແມ່ນຫຍັງ?
- ພວກເຮົາຄວນສອນລູກໆຂອງພວກເຮົາແນວໃດກ່ຽວກັບຮ່າງກາຍຂອງພວກເຂົາ?

## ຊາຕານບໍ່ຢາກໃຫ້ພວກເຮົາເຊື່ອຟັງກົດພົມມະຈັນ

ຊາຕານບໍ່ຢາກໃຫ້ພວກເຮົາກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ຊາຕານບໍ່ຢາກໃຫ້ພວກເຮົາເຊື່ອຟັງກົດພົມມະຈັນ. ມັນຢາກໃຫ້ພວກເຮົາຄິດວ່າອຳນາດທີ່ຈະມີລູກບໍ່ເປັນສິ່ງສັກສິດ. ມັນຢາກໃຫ້ພວກເຮົາຄິດວ່າ ການບໍ່ເຊື່ອຟັງກົດພົມມະຈັນນັ້ນ ບໍ່ແມ່ນບາບ.

ຊາຕານໃຊ້ຫລາຍວິທີທີ່ສລາດເພື່ອຈະຊັກຊວນພວກເຮົາບໍ່ໃຫ້ເຊື່ອຟັງກົດນີ້. ມັນພະຍາຍາມທີ່ຈະເຮັດໃຫ້ພວກເຮົາຄິດວ່າ ການໃຫ້ຄົນອື່ນເຫັນແລະຈັບບາຍຮ່າງກາຍຂອງພວກເຮົາເປັນເຣື່ອງທຳມະດາ. ຊາຕານຢາກໃຫ້ພວກເຮົາມີແນວຄິດທີ່ບໍ່ດີ. ມັນພະຍາຍາມຊຸກຍູ້ໃຫ້ພວກເຮົາເບິ່ງປຶ້ມຮູບ, ຫນັງ ແລະການເຕັ້ນລຳທີ່ລໍ້ລວງພວກເຮົາໃຫ້ພວກເຮົາເປັນຄົນບໍ່ບໍຣິສຸດ. ມັນຍັງຊຸກຍູ້ໃຫ້ພວກເຮົາ ມີສ່ວນຮ່ວມໃນການເຕັ້ນລຳແລະການຟັງເຣື່ອງລະຄອນ, ເຣື່ອງເປື້ອນເປິທີ່ຈະລໍ້ລວງພວກເຮົາໃຫ້ເປັນຄົນບໍ່ບໍຣິສຸດ. ຊາຕານຢາກໃຫ້ພວກເຮົາເຮັດສິ່ງເຫລົ່ານີ້ ເພື່ອວ່າຮ່າງກາຍຂອງພວກເຮົາຈະເປັນຂອງທຳມະດາ ແລະເພື່ອວ່າພວກເຮົາຈະໃຊ້ອຳນາດທີ່ຈະມີລູກນີ້ໃນທາງທີ່ຜິດ.

ຊາຕານບາງຄັ້ງລໍ້ລວງພວກເຮົາຜ່ານຄວາມຮູ້ສຶກຂອງພວກເຮົາ. ຊາຕານຮູ້ວ່າເມື່ອໃດພວກເຮົາຢູ່ໂດດດ່ຽວ, ສັບສົນຫລືບໍ່ມີຄວາມສຸກ, ມັນຈະເລືອກເອົາເວລາຂອງການອ່ອນແອນີ້ທີ່ຈະເຮັດໃຫ້ພວກເຮົາບໍ່ເຊື່ອຟັງກົດພົມມະຈັນ. ມັນຢາກໃຫ້ພວກເຮົາຄິດວ່າ ພວກເຮົາມີສິດທິທີ່ຈະໃຊ້ອຳນາດທີ່ຈະມີລູກໃນທາງໃດກໍໄດ້ຕາມຄວາມຕ້ອງການຂອງພວກເຮົາທີ່ຈະໃຊ້ມັນຕາມອຳເພີໃຈ. ມັນພະຍາຍາມເຮັດໃຫ້ພວກເຮົາຄິດວ່າ ມັນຈະບໍ່ມີຫຍັງຊົ່ວຮ້າຍທີ່ຈະເກີດຂຶ້ນ ຖ້າພວກເຮົາບໍ່ເຊື່ອຟັງກົດພົມມະຈັນ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາສາມາດໃຫ້ພະລັງແກ່ພວກເຮົາທີ່ຈະຕໍ່ຕ້ານການຫລອກລວງຂອງຊາຕານ. ພຣະອົງບໍ່ຊົງຢາກໃຫ້ພວກເຮົາເຮັດສິ່ງທີ່ຊົ່ວຮ້າຍຫລືແນວຄິດທີ່ບໍ່ດີ. ພຣະອົງຊົງສັນຍາວ່າ ພຣະອົງຈະບໍ່ປ່ອຍໃຫ້ຊາຕານລໍ້ລວງພວກເຮົາຫລາຍກວ່າ ພວກເຮົາຈະຕ້ານທານໄດ້. ພຣະອົງຊົງໄດ້ຕຽມເສັ້ນທາງເພື່ອໃຫ້ພວກເຮົາເອົາຊະນະການຫລອກລວງນັ້ນ.

ພວກເຮົາສາມາດອະທິຖານຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເພື່ອຂໍຄວາມຊ່ວຍເຫລືອໃຫ້ຕໍ່ຕ້ານຊາຕານ. ເມື່ອພວກເຮົາອະທິຖານ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງສົ່ງພຣະວິນຍານບໍຣິສຸດໃຫ້ມາຊ່ວຍເຫລືອພວກເຮົາ. ພຣະວິນຍານບໍຣິສຸດຈະຊ່ວຍເຫລືອພວກເຮົາໃຫ້ຈື່ຈຳວ່າຮ່າງກາຍຂອງພວກເຮົາສັກສິດ ແລະວ່າອຳນາດທີ່ຈະມີລູກເປັນສິ່ງສັກສິດຄືກັນ. ພຣະວິນຍານບໍຣິສຸດຈະຊ່ວຍພວກເຮົາບໍ່ໃຫ້ໃຊ້ອຳນາດນີ້ໃນທາງທີ່ຜິດ. ພຣະອົງຈະຊ່ວຍ

ພວກເຮົາ ເລືອກສິ່ງທີ່ດີ ແລະອ່ານແລະເບິ່ງສິ່ງທີ່ດີ. ພຣະອົງຈະຊ່ວຍພວກເຮົາ ຈື່ຈໍາວ່າ ການບໍ່ເຊື່ອຟັງກົດພົມມະຈັນນັ້ນຈະເຮັດໃຫ້ພວກເຮົາໂສກເສົ້າ ແລະວ່າ ການເຊື່ອຟັງກົດນີ້ຈະເຮັດໃຫ້ພວກເຮົາມີຄວາມສຸກ.

### *ການສົນທະນາ*

- ເປັນຫຍັງຊາຕານຈຶ່ງບໍ່ຢາກໃຫ້ພວກເຮົາເຊື່ອຟັງກົດພົມມະຈັນ?
- ພວກເຮົາສາມາດເຮັດແນວໃດໄດ້ແດ່ເພື່ອຈະຕໍ່ຕ້ານການຫລອກລວງຂອງ ຊາຕານ?
- ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊ່ວຍເຫລືອພວກເຮົາໃຫ້ເຊື່ອຟັງ ກົດພົມມະຈັນໄດ້ແນວໃດ?

## ການບໍ່ເຊື່ອຟັງກົດພົມມະຈັນເປັນບາບທີ່ຮ້າຍແຮງທີ່ສຸດ

ການສໍາພັນທາງເພດເປັນສິ່ງດີແລະບໍລິສຸດເມື່ອມັນເປັນລະຫວ່າງຄູ່ສາມີແລະ ພັລຍາຜູ້ທີ່ຮັກແລະນັບຖືເຊິ່ງກັນແລະກັນ. ມັນເປັນທາງທີ່ພຣະບິດາຜູ້ສະຖິດ ໃນສວັນຂອງພວກເຮົາຊົງໄດ້ມອບໃຫ້ພວກເຮົາເພື່ອຈະມີລູກ. ມັນຍັງເປັນວິທີທີ່ ສາມີແລະພັນລະຍາສະແດງຄວາມຮັກຕໍ່ກັນແລະກັນ ແລະມີຄວາມໃກ້ສິດຕໍ່ກັນ. ແຕ່ການສໍາພັນທາງເພດຢູ່ນອກການແຕ່ງງານເປັນບາບທີ່ຊົ່ວຮ້າຍສາຫັດທີ່ສຸດ.

ການບໍ່ເຊື່ອຟັງກົດພົມມະຈັນເຮັດໃຫ້ພວກເຮົາບໍ່ມີຄວາມສຸກ. ເມື່ອພວກເຮົາຮູ້ວ່າ ພວກເຮົາບໍ່ໄດ້ເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ພວກເຮົາຈະມີ ຄວາມຮູ້ສຶກເສັຽໃຈແລະອັບອາຍ. ພວກເຮົາຈະຮູ້ໄດ້ວ່າ ພວກເຮົາໄດ້ໃຊ້ອໍານາດທີ່ ສັກສິດທີ່ພຣະອົງຊົງມອບໃຫ້ພວກເຮົາໃນທາງທີ່ຜິດ ແລະວ່າພວກເຮົາໄດ້ເຮັດໃຫ້ ຄົນອື່ນບໍ່ມີຄວາມສຸກ. ການບໍ່ເຊື່ອຟັງກົດພົມມະຈັນອາດຈະເຮັດໃຫ້ມີລູກເກີດມາ ໂດຍບໍ່ມີຄອບຄົວທີ່ເຫມາະສົມ.

ມີແຕ່ບາບສອງຢ່າງທີ່ຮ້າຍແຮງກວ່າການບໍ່ເຊື່ອຟັງກົດພົມມະຈັນນັ້ນ. ບາບສອງ ຢ່າງນີ້ຄື ການປະຕິເສດພຣະວິນຍານບໍລິສຸດ ແລະການຂ້າຄົນເທົ່ານັ້ນ. ຄົນທີ່ ຝ່າຝືນກົດພົມມະຈັນສາມາດໄດ້ຮັບອະພັຍໂທດໄດ້. ພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາຊົງໄດ້ຕັສວ່າ ຖ້າພວກເຮົາມີສັດທາໃນພຣະເຢຊູແລະກັບໃຈຈາກ

ບາບຂອງພວກເຮົາ, ພຣະອົງຈະຊົງອະພັຍໂທດໃຫ້ແກ່ພວກເຮົາ. ຄົນຜູ້ທີ່ຝ່າຝືນກົດພົມມະຈັນແລະບໍ່ກັບໃຈ ຈະບໍ່ສາມາດຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້.

ຄົນທີ່ຖືກຂົ່ມຂືນບໍ່ໄດ້ຝ່າຝືນກົດພົມມະຈັນ.

ການອະພັຍຈະເກີດຂຶ້ນໄດ້ຈາກການມີສັດທາໃນພຣະເຢຊູ ແລະຈາກການກັບໃຈເທົ່ານັ້ນ. ພວກເຮົາຕ້ອງຮູ້ວ່າ ພວກເຮົາໄດ້ເຮັດບາບແລະມີຄວາມຮູ້ສຶກເສັຽໃຈແທ້ໆຕໍ່ສິ່ງທີ່ພວກເຮົາໄດ້ເຮັດ. ພວກເຮົາຕ້ອງເຊົາເຮັດສິ່ງທີ່ບໍ່ດີນັ້ນແລະສາລະພາບບາບຕໍ່ພຣະບິດາເທິງສວັນຂອງພວກເຮົາ, ຕໍ່ຄົນທີ່ພວກເຮົາໄດ້ກະທຳຜິດຕໍ່, ແລະຕໍ່ຜູ້ນຳຖານະປະໂຣຫິດທີ່ຖືກຕ້ອງ (ອະທິການ, ປະທານສາຂາ, ປະທານສະເຕກ, ຫລືປະທານຄະນະເຜີຍແຜ່). ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ຕັສວ່າ ພຣະອົງຈະຊົງອະພັຍໃຫ້ແກ່ຄົນທີ່ມີສັດທາໃນພຣະເຢຊູ, ສາລະພາບບາບຂອງພວກເຂົາຕໍ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະຕໍ່ຜູ້ນຳສາສນາຈັກທີ່ຖືກຕ້ອງແລະກັບໃຈຢ່າງຈິງໃຈ. ຄົນທີ່ບໍ່ເຮັດສິ່ງທັງຫມົດນີ້ ບໍ່ໄດ້ກັບໃຈຢ່າງຈິງໃຈແລະຈະບໍ່ໄດ້ຮັບການອະພັຍໃຫ້.

*ການສົນທະນາ*

- ເປັນຫຍັງການບໍ່ເຊື່ອຟັງກົດພົມມະຈັນຈຶ່ງເປັນບາບທີ່ຮ້າຍແຮງທີ່ສຸດ?
- ສິ່ງໃດຈະເກີດຂຶ້ນກັບພວກເຮົາເມື່ອພວກເຮົາຝ່າຝືນກົດພົມມະຈັນ?
- ເປັນຫຍັງພວກເຮົາຈຶ່ງຄວນເຊື່ອຟັງກົດພົມມະຈັນ?
- ພວກເຮົາຕ້ອງເຮັດແນວໃດເພື່ອຈະໄດ້ກັບໃຈຈາກການຝ່າຝືນກົດພົມມະຈັນ?

## ການເຊື່ອຟັງກົດພົມມະຈັນເຮັດໃຫ້ພວກເຮົາມີຄວາມສຸກ

ເມື່ອພວກເຮົາເຊື່ອຟັງກົດພົມມະຈັນ, ພວກເຮົາໄດ້ເປັນຕົວຢ່າງທີ່ດີໃຫ້ແກ່ລູກໆຂອງພວກເຮົາໃຫ້ຕິດຕາມ. ພວກເຮົາຮູ້ວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງພໍພຣະທັຍນຳພວກເຮົາສຳລັບການເຊື່ອຟັງພຣະອົງ. ເມື່ອພວກເຮົາເຊື່ອຟັງກົດພົມມະຈັນ, ຄົນໃນຄອບຄົວຂອງພວກເຮົາຈະຮູ້ວ່າ ພວກເຮົາຮັກພວກເຂົາ, ແລະພວກເຮົາບໍ່ມີເຫດຜົນອື່ນໃດທີ່ຈະຮູ້ສຶກໂສກເສົ້າແລະອັບອາຍ.

ພວກເຮົາກາຍມາເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຫລາຍຂຶ້ນ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງໃຫ້ພອນພວກເຮົາ ແລະລູກໆ ຂອງພວກເຮົາ ຫລືໃຫ້ພອນແກ່ລູກໆຂອງພວກເຮົາ ທີ່ພວກເຮົາຈະມີເມື່ອພວກເຮົາເຊື່ອຟັງກົດພົມມະຈັນ.

ການໃຊ້ອຳນາດທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບໃຫ້ໄວ້ໃນຮ່າງກາຍຂອງພວກເຮົາ ພາຍໃນການແຕ່ງງານຈະນຳຄວາມສຸກມາສູ່ພວກເຮົາ. ສຳລັບຄູ່ແຕ່ງງານ, ການມີຄວາມສຳພັນທາງເພດ ສາມາດນຳຄວາມສຸກມາສູ່ເຂົາເຈົ້າ. ມັນສາມາດນຳພວກເຂົາໃຫ້ເຂົ້າໃກ້ສິດກັນດ້ວຍຄວາມຮູ້ສຶກຂອງຄວາມຮັກ. ລູກໆທີ່ຈະມາເກີດມາແມ່ນເປັນພອນຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ເຖິງແມ່ນວ່າ ລູກໆບາງຄັ້ງຈະເຮັດໃຫ້ມີຄວາມເປັນຫ່ວງເປັນໄຍ ຫລືຄວາມໂສກເສົ້າແກ່ພໍ່ແມ່, ພວກເຂົາຍັງນຳຄວາມສຸກອັນຍິ່ງໃຫຍ່ມາໃຫ້ນຳອີກ. ຄວາມສຸກອັນຍິ່ງໃຫຍ່ບາງຢ່າງທີ່ເກີດຂຶ້ນໃນຊີວິດຂອງພວກເຮົາຈະມາຈາກລູກໆຂອງພວກເຮົາໃນຂະນະທີ່ພວກເຂົາເຕີບໂຕຂຶ້ນ, ຮ່ຳຮຽນ, ແຕ່ງງານ, ແລະມີລູກຂອງພວກເຂົາເອງ.

### *ການສົນທະນາ*

- ພອນອັນໃດແດ່ທີ່ພວກເຮົາໄດ້ຮັບເມື່ອພວກເຮົາເຊື່ອຟັງກົດພົມມະຈັນ?
- ເປັນຫຍັງພວກເຮົາຈຶ່ງມີຄວາມສຸກ ເມື່ອພວກເຮົາເຊື່ອຟັງກົດພົມມະຈັນຫລາຍກວ່າຕອນທີ່ພວກເຮົາບໍ່ເຊື່ອຟັງມັນ?

## *ຂໍ້ອ້າງອີງ*

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກໃຫ້ພວກເຮົາມີລູກ ແລະໃຫ້ເຊື່ອຟັງກົດພົມມະຈັນ*

- ປະຖົມມະການ ໑:໒໘ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບັນຊາອາດາມແລະເອວາໃຫ້ມີລູກ.)
- ອົບພະຍົບ ໒໐:໑໔ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບັນຊາບໍ່ໃຫ້ພວກເຮົາລ່ວງປະເພນີ.)

- ເລວີ ໔໐:໑໐–໔໓ (ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງລົງໂທດຄົນທີ່ຝ່າຝືນກົດພົມມະຈັນແລະໃຫ້ພອນແກ່ຄົນທີ່ເຊື່ອຟັງມັນ.)
- ໑ ໂກຣິນໂທ ໜ:໑໙ (ຮ່າງກາຍຂອງພວກເຮົາສັກສິດ.)
- ໂມໂຣໄນ ໙:໙ (ພົມມະຈັນເປັນສິ່ງທີ່ມີຄ່າເລີດກວ່າສິ່ງອື່ນໃດ.)

*ຊາຕານບໍ່ຢາກໃຫ້ພວກເຮົາເຊື່ອຟັງກົດພົມມະຈັນ*

- ມັດທາຍ ໕:໔໗–໔໘ (ພວກເຮົາບໍ່ຄວນຄິດທີ່ຈະເຮັດສິ່ງທີ່ບໍ່ດີເລີຍ.)
- ໑ ໂກຣິນໂທ ໑໐:໑໓ (ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຈະຊົງໃຫ້ອຳນາດແກ່ພວກເຮົາ ເພື່ອຕໍ່ຕ້ານກັບການຫລອກລວງ.)
- ແອລມາ ໑໘:໑໔ (ພວກເຮົາຄວນຄິດແລະເວົ້າແຕ່ຄຳດີ.)

*ການບໍ່ເຊື່ອຟັງກົດພົມມະຈັນເປັນບາບທີ່ຮ້າຍແຮງທີ່ສຸດ*

- ສຸພາສິດ ໜ:໔໕–໓໔ (ການຝ່າຝືນກົດພົມມະຈັນຈະເຮັດໃຫ້ພວກເຮົາມີຄວາມໂສກເສົ້າ.)
- ເອຊາຢາ ໑:໑໖–໑໘ (ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຈະຊົງໃຫ້ອະໄພແກ່ຄົນກັບໃຈ.)
- ໑ ໂກຣິນໂທ ໖:໙ (ຄົນທີ່ລ່ວງປະເວນີບໍ່ສາມາດໄປຫາອານາຈັກຂອງພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາໄດ້.)
- ແອລມາ ໓໙:໕ (ມີແຕ່ບາບສອງຢ່າງທີ່ຊົ່ວຮ້າຍກວ່າການຝ່າຝືນກົດພົມມະຈັນ.)

*ການເຊື່ອຟັງກົດພົມມະຈັນເຮັດໃຫ້ພວກເຮົາມີຄວາມສຸກ*

- ຄາລາເຕັຽ ໕:໑໖–໒໕ (ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຈະໃຫ້ພອນແກ່ຄົນທີ່ເຊື່ອຟັງກົດພົມມະຈັນ.)
- ຕີໂຕ ໔ (ການດຳລົງຊີວິດຢ່າງຊອບທັມເຮັດໃຫ້ພວກເຮົາມີຄວາມສຸກ.)

# ຄວາມຊື່ສັດ

*ບົດທີ ໔໗*

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈົງຊື່ສັດໃນທຸກສິ່ງທີ່ພຣະອົງຊົງກະທຳ. ພຣະອົງຊົງຕ້ອງການໃຫ້ພວກເຮົາເປັນຄົນຊື່ສັດຄືກັນບໍ່?*

**ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກພວກເຮົາໃຫ້ເປັນຄົນຊື່ສັດໃນທຸກສິ່ງທີ່ພວກເຮົາກະທຳ**

ການເປັນຄົນຊື່ສັດໝາຍຄວາມວ່າ ເວົ້າຄວາມຈິງ. ການເປັນຄົນຊື່ສັດໝາຍຄວາມວ່າ ບໍ່ເວົ້າຕົວະຫລືລັກຂອງຄົນອື່ນ. ເມື່ອພວກເຮົາເວົ້າສິ່ງທີ່ບໍ່ຈິງ, ພວກເຮົາເປັນຄົນຂີ້ຕົວະ. ເມື່ອພວກເຮົາເວົ້າຄວາມຈິງແຕ່ບາງສ່ວນເທົ່ານັ້ນ, ພວກເຮົາກໍເປັນຄົນຂີ້ຕົວະ. ເມື່ອພວກເຮົາຊັກຊວນໃຫ້ຜູ້ຄົນເຊື່ອໃນສິ່ງໃດສິ່ງນຶ່ງທີ່ບໍ່ຈິງ, ພວກເຮົາບໍ່ໄດ້ເປັນຄົນຊື່ສັດ.

ການລັກເປັນການເອົາສິ່ງໃດສິ່ງນຶ່ງທີ່ເປັນຂອງຄົນອື່ນໄປໂດຍບໍ່ໄດ້ຮັບອະນຸຍາດຈາກຄົນນັ້ນ. ການເອົາສິ່ງໃດສິ່ງນຶ່ງຈາກຮ້ານຄ້າໂດຍບໍ່ຈ່າຍຄ່າມັນ, ກໍເປັນການລັກ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກພວກເຮົາບໍ່ໃຫ້ເປັນຄົນຂີ້ລັກ.

ຄົນຊື່ສັດຈະເຮັດວຽກງານຢ່າງຂຍັນໃນຂະນະຊົ່ວໂມງທີ່ລາວຖືກຈ້າງໃຫ້ເຮັດ. ບໍຣິສັດທີ່ຊື່ສັດຈະຈ່າຍຄ່າແຮງງານຕາມຜົນງານຂອງຄົນງານ. ຄົນຊື່ສັດຈະຄິດຄ່າລາຄາການຊື້ຂາຍໂດຍຍຸດຕິທັມຕໍ່ການອອກແຮງງານແລະຕໍ່ສິ່ງຂອງທີ່ລາວຂາຍ. ພວກເຮົາຕ້ອງເປັນຄົນຊື່ສັດຖ້າພວກເຮົາຢາກໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກ.

ຊາຕານພະຍາຍາມທີ່ຈະຊັກຊວນພວກເຮົາບໍ່ໃຫ້ເປັນຄົນຊື່ສັດ. ເມື່ອພວກເຮົາເປັນຄົນບໍ່ຊື່ສັດໃນທາງໃດທາງນຶ່ງ, ພວກເຮົາກໍຕິດຕາມຊາຕານ. ຊາຕານມັກຕົວະ. ຊາຕານຢາກໃຫ້ພວກເຮົາຄິດວ່າ ມັນເປັນການສລາດທີ່ຈະຕົວະ. ມັນພະຍາຍາມເຮັດໃຫ້ພວກເຮົາຄິດວ່າ ພວກເຮົາມີຄວາມສຸກ ເມື່ອພວກເຮົາເປັນຄົນບໍ່ຊື່ສັດ. ມັນຢາກໃຫ້ພວກເຮົາຄິດວ່າ ການບໍ່ຊື່ສັດບໍ່ແມ່ນບາບ. ຊາຕານຢາກໃຫ້ພວກເຮົາເປັນຄົນບໍ່ຊື່ສັດ ເພື່ອວ່າພວກເຮົາຈະບໍ່ມີຄວາມສຸກ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ສອນພວກເຮົາໃຫ້ເປັນຄົນຊື່ສັດທຸກໆເວລາ. ພຣະອົງຈະຊົງເສົ້າສລົດໃຈເມື່ອພວກເຮົາຕົວະ. ພຣະອົງຊົງຕ້ອງການໃຫ້ພວກເຮົາຮູ້ວ່າ ການຕົວະເປັນບາບສເມີ. ການບໍ່ຊື່ສັດເປັນຄວາມຜິດສເມີ ແລະຈະເຮັດໃຫ້ພວກເຮົາບໍ່ມີຄວາມສຸກ.

ບາງຄົນລັກສິ່ງຂອງເພາະພວກເຂົາຄິດວ່າ ພວກເຂົາມີສິດທີ່ຈະເຮັດແນວນັ້ນ. ຊາວໜຸ່ມບາງຄົນຈະກ່າຍເຈັ້ຽຂອງຄົນອື່ນທີ່ໂຮງຮຽນ ເພື່ອຈະໄດ້ຮັບຄະແນນດີ ຫລືເພາະນັກຮຽນຄົນອື່ນກໍເຮັດຄືກັນ. ບາງຄົນຕົວະ ເພື່ອວ່າຄົນອື່ນຈະຖືວ່າຕົນເປັນໃຫຍ່. ເຫດຜົນເຫລົ່ານີ້ບໍ່ເຮັດໃຫ້ການລັກຫລືການຕົວະເປັນສິ່ງຖືກຕ້ອງ. ເມື່ອພວກເຮົາຫາແຕ່ຄວາມແກ້ຕໍ່ການຕົວະ, ພວກເຮົາກໍບໍ່ເປັນຄົນຊື່ສັດຄືກັນ.

### *ການສົນທະນາ*

- ຄວາມຊື່ສັດແມ່ນຫຍັງ?
- ພວກເຮົາກຳລັງຕິດຕາມໃຜເມື່ອພວກເຮົາເປັນຄົນບໍ່ຊື່ສັດ?

## ພວກເຮົາສາມາດເປັນຄົນຊື່ສັດໃນທຸກສິ່ງທີ່ພວກເຮົາເຮັດ

ພວກເຮົາສາມາດເປັນຄົນຊື່ສັດໂດຍການມີຄວາມກ້າຫານທີ່ຈະບອກຄວາມຈິງ ເຖິງແມ່ນວ່າ ມັນຈະເປັນສິ່ງຍາກທີ່ຈະເຮັດ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງຊ່ວຍເຫລືອພວກເຮົາໃຫ້ເປັນຄົນຊື່ສັດ ຖ້າຫາກພວກເຮົາທູນຂໍພຣະອົງ. ພຣະອົງຈະຊົງສົ່ງພຣະວິນຍານບໍຣິສຸດໃຫ້ມາຊ່ວຍເຫລືອພວກເຮົາໃຫ້ເລືອກສິ່ງທີ່ຊື່ສັດ. ພຣະວິນຍານບໍຣິສຸດຈະຊ່ວຍເຫລືອພວກເຮົາໃຫ້ຮູ້ວ່າ ການເປັນຄົນຊື່ສັດ ເປັນສິ່ງທີ່ດີທີ່ຈະເຮັດ.

ເມື່ອພວກເຮົາເຂົ້າໃຈການສອນຂອງພຣະເຢຊູ, ພວກເຮົາຈະຢາກເປັນຄົນຊື່ສັດໃນທຸກສິ່ງທີ່ພວກເຮົາເຮັດ. ພຣະເຢຊູຊົງສອນພວກເຮົາວ່າ ພວກເຮົາເປັນລູກໆຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະວ່າພວກເຮົາເປັນອ້າຍເອື້ອຍນ້ອງກັນ. ພຣະອົງຊົງສອນວ່າ ພວກເຮົາສາມາດມີຄວາມສຸກທີ່ແທ້ຈິງໄດ້ພຽງແຕ່ເມື່ອພວກເຮົາເປັນຄົນຊື່ສັດ. ພວກເຮົາຈະບໍ່ມີຄວາມສງົບ ຖ້າພວກເຮົາມີສິ່ງໃດສິ່ງນຶ່ງໃນບ້ານຂອງພວກເຮົາທີ່ບໍ່ເປັນຂອງພວກເຮົາ. ພຣະອົງຍັງຊົງສອນພວກເຮົາວ່າ ຖ້າພວກເຮົາມີສັດທາໃນພຣະອົງ, ກັບໃຈ ແລະມີຄວາມຊື່ສັດຢ່າງຈິງໃຈ ພວກເຮົາຈະສາມາດກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະມີຄວາມສຸກຕລອດຊົ່ວນິຣັນດອນ.

ເມື່ອພວກເຮົາເຂົ້າໃຈສິ່ງທັງຫມົດນີ້, ພວກເຮົາຈະເລີ້ມເປັນຄົນຊື່ສັດໄດ້. ພວກເຮົາຈະບໍ່ຕ້ອງການທີ່ຈະຕົວະຕໍ່ຄົນອື່ນໆ. ພວກເຮົາຢາກເຮັດໃຫ້ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງພໍພຣະທັຍເພື່ອພວກເຮົາຈະສາມາດກັບຄືນໄປຢູ່ນຳພຣະອົງ. ພວກເຮົາຢາກສາລະພາບບາບຂອງພວກເຮົາແລະປ່ຽນແປງມັນເພື່ອວ່າພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະໃຫ້ອະພັຍພວກເຮົາ.

### *ການສົນທະນາ*

- ຖ້າພວກເຮົາເຄີຍຕົວະເລັກໆນ້ອຍໆ, ເປັນຫຍັງພວກເຮົາຄວນກັບໃຈ?
- ພວກເຮົາສາມາດເປັນຄົນຊື່ສັດໃນທຸກສິ່ງທີ່ພວກເຮົາເຮັດ ໄດ້ແນວໃດ?
- ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊ່ວຍໃຫ້ພວກເຮົາເປັນຄົນຊື່ສັດໄດ້ແນວໃດ?

## ການເປັນຄົນຊື່ສັດເຮັດໃຫ້ພວກເຮົາມີຄວາມສຸກ

ເມື່ອພວກເຮົາເປັນຄົນຊື່ສັດ, ພວກເຮົາມີຄວາມຮູ້ສຶກດີ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຈະຊົງພໍພຣະທັຍນຳພວກເຮົາ. ພວກເຮົາບໍ່ມີຄວາມຮູ້ສຶກວ່າຕົນມີຄວາມຜິດ. ພວກເຮົາມີຄວາມຮູ້ສຶກດີ ເພາະພວກເຮົາຮູ້ວ່າ ພວກເຮົາບໍ່ມີຫຍັງທີ່ຈະເຊື່ອງໄວ້ຈາກຄົນອື່ນ. ພວກເຮົາບໍ່ຈຳເປັນມີຄວາມຫ່ວງໄຍວ່າ ຄົນອື່ນຈະຮູ້ວ່າພວກເຮົາໄດ້ຕົວະ.

ເມື່ອພວກເຮົາເປັນຄົນຊື່ສັດ, ພວກເຮົາກາຍມາເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຫລາຍຂຶ້ນ. ພວກເຮົາຮູ້ວ່າ ພວກເຮົາກຳລັງຕຽມທີ່ຈະກັບຄືນໄປຢູ່ນຳພຣະອົງ. ເມື່ອພວກເຮົາເປັນຄົນຊື່ສັດ, ຄົນອື່ນຈະເຊື່ອຫມັ້ນໃນພວກເຮົາ. ເມື່ອພວກເຮົາເປັນຄົນຊື່ສັດ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊ່ວຍພວກເຮົາເຮັດສິ່ງທີ່ພວກເຮົາຕ້ອງການຢາກຈະເຮັດສິ່ງທີ່ຖືກຕ້ອງ.

## *ການສົນທະນາ*

- ພວກເຮົາຮູ້ສຶກແນວໃດເມື່ອພວກເຮົາເປັນຄົນຊື່ສັດ?
- ໂລກຂອງພວກເຮົາຈະເປັນແນວໃດຖ້າຫາກທຸກໆຄົນເປັນຄົນຊື່ສັດ?

## *ຂໍ້ອ້າງອີງ*

- ອົບພະຍົບ ໒໐:໑໕–໑໗; ມັດທາຍ ໑໘:໑໘ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກໃຫ້ພວກເຮົາບໍ່ໃຫ້ລັກຫລືຕົວະ.)
- ສຸພາສິດ ໑໙:໕ (ຄົນຜູ້ທີ່ຕົວະບໍ່ສາມາດຫນີຈາກການລົງໂທດ.)
- ໂຢຮັນ ໘:໔໔; ໒ ນີໄຟ ໒:໑໘ (ຊາຕານເປັນບິດາຂອງການຕົວະທັງຫມົດ. ມັນຢາກໃຫ້ພວກເຮົາມີຄວາມໂສກເສົ້າ.)
- ກິຈການ ໕:໑–໑໐ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງລົງໂທດຄົນຂີ້ຕົວະ.)
- ຟີລິບປອຍ ໔:໘ (ສິ່ງໃດທີ່ຊື່ສັດແລະເປັນຈິງ, ພວກເຮົາຄວນພະຍາຍາມເຮັດຕາມ.)
- ເຮັບເຣີ ໖:໑໘ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາບໍ່ຊົງຕົວະ.)

# ພຣະວາຈາແຫ່ງປັນຍາ

*ບົດທີ ໔໗*

*ພອນປະເສີດຢ່າງນຶ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ມອບໃຫ້ພວກເຮົາແມ່ນ ຮ່າງກາຍທີ່ມີເນື້ອໜັງແລະກະດູກ. ພຣະອົງຊົງມອບກົດແຫ່ງສຸຂພາບໃຫ້ແກ່ພວກເຮົາ ເພື່ອຊ່ວຍເຫລືອພວກເຮົາໃຫ້ດູແລຮ່າງກາຍຂອງພວກເຮົາ. ທ່ານຈະເຮັດແນວໃດຈຶ່ງຈະຮູ້ເຖິງກົດແຫ່ງສຸຂພາບນີ້?*

**ຮ່າງກາຍຂອງພວກເຮົາເປັນສິ່ງສັກສິດ**

ເຫດຜົນສຳຄັນຢ່າງນຶ່ງຕໍ່ການມາສູ່ໂລກນີ້ແມ່ນ ເພື່ອຈະຮັບເອົາຮ່າງກາຍທີ່ມີເນື້ອໜັງແລະກະດູກ. ພວກເຮົາຈຳເປັນຕ້ອງມີຮ່າງກາຍເພື່ອຈະໄດ້ກາຍມາເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ດ້ວຍຮ່າງກາຍທີ່ມີເນື້ອໜັງແລະກະດູກເທົ່ານັ້ນ ພວກເຮົາຈຶ່ງຈະສາມາດຮຽນສິ່ງທີ່ພວກເຮົາຈຳເປັນຕ້ອງຮູ້ເພື່ອຈະກາຍມາເປັນເຫມືອນດັ່ງພຣະອົງ. ພວກເຮົາສາມາດມີລູກໄດ້. ພວກເຮົາສາມາດຮັບພິທີການທີ່ຈຳເປັນສຳລັບພວກເຮົາ ເພື່ອຈະກັບໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ຖ້າປາສຈາກຮ່າງກາຍແລ້ວ ພວກເຮົາບໍ່ສາມາດເຮັດສິ່ງເຫລົ່ານີ້ໄດ້.

ຍ້ອນວ່າວິນຍານຂອງພວກເຮົາຢູ່ໃນຮ່າງກາຍຂອງພວກເຮົາ, ຮ່າງກາຍຈຶ່ງເປັນສິ່ງສັກສິດ. ເມື່ອພວກເຮົາມີສັດທາໃນພຣະເຢຊູຄຣິສ ແລະພະຍາຍາມທີ່ຈະເຊື່ອຟັງພຣະອົງ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສົ່ງພຣະວິນຍານບໍຣິສຸດໃຫ້ມາຢູ່ນຳພວກເຮົາ. ພຣະວິນຍານບໍຣິສຸດບໍ່ສາມາດຢູ່ນຳພວກເຮົາຖ້າພວກເຮົາບໍ່ເຊື່ອຟັງ ແລະບໍ່ດູແລຮ່າງກາຍຂອງພວກເຮົາ.

ເມື່ອພວກເຮົາຕາຍໄປ, ວິນຍານຂອງພວກເຮົາຈະອອກຈາກຮ່າງກາຍຂອງພວກເຮົາໄປ. ເມື່ອພຣະເຢຊູຊົງສິ້ນພຣະຊົນ, ພຣະວິນຍານຂອງພຣະອົງໄດ້ອອກຈາກພຣະກາຍຂອງພຣະອົງໄປ. ຫລັງຈາກສາມວັນ, ພຣະວິນຍານຂອງພຣະອົງໄດ້ກັບເຂົ້າພຣະກາຍຂອງພຣະອົງຄືນອີກ ແລະພຣະອົງຊົງໄດ້ຟື້ນຄືນພຣະຊົນ. ພຣະເຢຊູຊົງມີອຳນາດທີ່ຈະກັບຄືນມີຊີວິດອີກ. ແລະຍ້ອນການເສັຽສະລະຂອງພຣະອົງເພື່ອພວກເຮົາ, ພວກເຮົາທັງຫມົດກໍຈະຟື້ນຄືນຊີວິດຄືກັນ. ຫລັງຈາກພວກເຮົາຕາຍວິນຍານແລະຮ່າງກາຍຂອງພວກເຮົາຈະເຂົ້າຫາກັນອີກ. ພຣະເຢຊູຊົງຮູ້ວ່າພວກເຮົາຈຳເປັນຕ້ອງມີຮ່າງກາຍອຳມະຕະທີ່ມີເນື້ອຫນັງແລະກະດູກ ເພື່ອຈະກາຍມາເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະຈະຢູ່ນຳພຣະອົງຕລອດຊົ່ວນິຣັນດອນ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຊົງຕ້ອງການໃຫ້ພວກເຮົາດູແລຮ່າງກາຍຂອງພວກເຮົາໃຫ້ດີ. ຖ້າພວກເຮົາດູແລຮ່າງກາຍຂອງພວກເຮົາ, ພວກເຮົາຈະມີສຸຂພາບດີແລະເຂັ້ມແຂງ ແລະຈະສາມາດເຮັດສິ່ງອື່ນໆທີ່ພຣະອົງຊົງຕ້ອງການໃຫ້ພວກເຮົາເຮັດ. ພວກເຮົາທຸກຄົນຕ້ອງຕັດສິນໃຈເອົາເອງວ່າ ພວກເຮົາຈະດູແລຮ່າງກາຍຂອງພວກເຮົາຫລືຈະເຮັດສິ່ງທີ່ເປັນອັນຕະລາຍຕໍ່ມັນ. ພວກເຮົາຮູ້ວ່າ ຮ່າງກາຍຂອງພວກເຮົາມີຄວາມສຳຄັນໃນລະຍະເວລາຂອງຊີວິດນີ້ ແລະຫລັງຈາກຊີວິດນີ້. ພວກເຮົາຄວນຕ້ອງການທີ່ຈະດູແລມັນໃຫ້ດີ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະບໍ່ພໍພຣະທັຍ ເມື່ອພວກເຮົາບໍ່ດູແລຮ່າງກາຍຂອງພວກເຮົາໃຫ້ດີ.

ພໍ່ແມ່ຄວນສອນລູກໆຂອງຕົນວ່າ ຮ່າງກາຍຂອງພວກເຂົາເປັນຂອງປະທານອັນສັກສິດຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະອະທິບາຍຕໍ່ພວກເຂົາວ່າ ເປັນຫຍັງຮ່າງກາຍຂອງພວກເຂົາຈຶ່ງສຳຄັນທີ່ສຸດ. ເມື່ອລູກໆເຂົ້າໃຈວ່າເປັນຫຍັງມັນຈຶ່ງສຳຄັນທີ່ຈະດູແລຮ່າງກາຍຂອງພວກເຂົາໃຫ້ດີ, ພວກເຂົາຈະບໍ່ຕິດຕາມການຫລອກລວງຂອງຊາຕານ.

### *ການສົນທະນາ*

- ເປັນຫຍັງພວກເຮົາຈຶ່ງມີຮ່າງກາຍທີ່ມີເນື້ອຫນັງແລະກະດູກ?
- ເປັນຫຍັງຮ່າງກາຍຂອງພວກເຮົາຈຶ່ງສັກສິດ?

- ເປັນຫຍັງມັນຈຶ່ງສຳຄັນສຳລັບພວກເຮົາ ທີ່ຈະສອນລູກໆຂອງພວກເຮົາເຖິງຄວາມສຳຄັນທີ່ຈະດູແລຮ່າງກາຍຂອງພວກເຂົາໃຫ້ດີ?

## ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງມອບກົດແຫ່ງສຸຂພາບໃຫ້ແກ່ພວກເຮົາ

ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງບອກພວກເຮົາເຖິງບາງສິ່ງທີ່ດີສຳລັບຮ່າງກາຍຂອງພວກເຮົາ ແລະບາງສິ່ງທີ່ບໍ່ດີຕໍ່ຮ່າງກາຍຂອງພວກເຮົານຳ. ກົດນີ້ຖືກຂຽນໄວ້ໃນພຣະຄຳພີແລະເອີ້ນວ່າ ພຣະວາຈາແຫ່ງປັນຍາ.

ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງເປີດເຜີຍພຣະວາຈາແຫ່ງປັນຍາຕໍ່ສາສດາໂຢເຊັບ ສມິທ. ມັນເປັນກົດບັນຍັດ. ພວກເຮົາຕ້ອງເຊື່ອຟັງກົດນີ້ເພື່ອຈະມີຮ່າງກາຍທີ່ເຂັ້ມແຂງແລະມີແນວຄິດທີ່ດີ.

ພຣະວາຈາແຫ່ງປັນຍາສອນພວກເຮົາເຖິງສິ່ງໃດດີຕໍ່ຮ່າງກາຍຂອງພວກເຮົາ. ພວກເຮົາຄວນກິນແລະດື່ມສິ່ງທີ່ດີສຳລັບຮ່າງກາຍຂອງພວກເຮົາເທົ່ານັ້ນ. ພວກເຮົາຄວນກິນໝາກໄມ້, ຜັກ ແລະແປ້ງມັນ (ເຂົ້າ, ເມັດພືດ ຕ່າງໆ). ພວກເຮົາຄວນກິນອາຫານເຫລົ່ານີ້ໃຫ້ພຽງພໍ ແລະບໍ່ແມ່ນກິນຫລາຍເກີນໄປ. ພວກເຮົາບໍ່ຄວນກິນຊີ້ນຫລາຍປານໃດ.

### *ການສົນທະນາ*

- ອາຫານອັນໃດແດ່ທີ່ດີສຳລັບພວກເຮົາ?
- ການພັກຜ່ອນແລະການອອກກຳລັງກາຍກ່ຽວເນື່ອງນຳກົດແຫ່ງສຸຂພາບຂອງພຣະຜູ້ເປັນເຈົ້າຂອງພວກເຮົາແນວໃດ?
- ພວກເຮົາຈະຮັກສາຮ່າງກາຍຂອງພວກເຮົາໃຫ້ສະອາດໄດ້ແນວໃດ?

## ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງບອກພວກເຮົາເຖິງສິ່ງທີ່ບໍ່ດີສຳລັບຮ່າງກາຍຂອງພວກເຮົາ

ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງຮູ້ວ່າ ຊາຕານຈະພະຍາຍາມຊັກຊວນພວກເຮົາໃຫ້ໃຊ້ຮ່າງກາຍຂອງພວກເຮົາແບບບໍ່ຖືກຕ້ອງ. ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງໄດ້ບອກພວກເຮົາເຖິງສິ່ງທີ່ບໍ່ດີສຳລັບຮ່າງກາຍຂອງ

ພວກເຮົາ. ການດື່ມເຫລົ້າເປັນສິ່ງບໍ່ດີສໍາລັບຮ່າງກາຍຂອງພວກເຮົາ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ບັນຊາບໍ່ໃຫ້ພວກເຮົາດື່ມເບັຍ, ເຫລົ້າ ແລະສິ່ງອື່ນໆທີ່ມີເຊື້ອເຫລົ້າ. ສິ່ງເຫລົ່ານີ້ສາມາດເຮັດໃຫ້ພວກເຮົາເຈັບປ່ວຍ ແລະບໍ່ມີຄວາມສຸກໃນບ້ານຂອງພວກເຮົາ. ເມື່ອຄົນໃດຄົນນຶ່ງດື່ມສິ່ງເຫລົ່ານີ້, ຄົນນັ້ນບໍ່ສາມາດຄິດຢ່າງແຈ່ມແຈ້ງ. ຂອງດື່ມເຫລົ່ານີ້ສ່ວນຫລາຍຈະນໍາຄົນໄປສູ່ການເລືອກທີ່ບໍ່ດີ, ໄປສູ່ຄວາມຕົວະ, ໃຊ້ເງິນແບບບໍ່ມີຜົນປໂຍດ, ແລະເຮັດໃຫ້ຝ່າຝືນກົດພົມມະຈັນ. ເມື່ອແມ່ມານດື່ມສິ່ງມຶນເມົາ, ນາງສາມາດທໍາຮ້າຍລູກໃນຄັນ. ຜູ້ຄົນທີ່ດື່ມຂອງມຶນເມົາຈະສ້າງບັນຫາຫລາຍຢ່າງ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຍັງຊົງບອກພວກເຮົາວ່າ ຢາສູບເປັນອັນຕະລາຍແກ່ຮ່າງກາຍຂອງພວກເຮົາ. ພວກເຮົາບໍ່ຄວນສູບຢາຫລືຫຍໍ້ຢາ. ນັກວິທະຍາສາດໄດ້ພິສູດເຫັນວ່າ ຢາສູບເຮັດໃຫ້ເກີດຄວາມເຈັບປ່ວຍໄດ້ ແລະສາມາດມີຜົນອັນຕະລາຍແກ່ລູກຢູ່ໃນຄັນ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຍັງຊົງບອກພວກເຮົາບໍ່ໃຫ້ດື່ມກາເຟ ແລະນໍ້າຊາ. ພວກເຮົາບໍ່ຄວນດື່ມ ກາເຟແລະນໍ້າຊາຮ້ອນເພາະມັນມີສານທີ່ທໍາໃຫ້ຕິດແລະເປັນອັນຕະລາຍ. ພວກເຮົາບໍ່ຄວນໃຊ້ສານຢາທີ່ທໍາໃຫ້ຕິດ, ນອກຈາກໃນກໍຣະນີທ່ານຫມໍເອົາມັນໃຫ້ພວກເຮົາເທົ່ານັ້ນ.

ພຣະບິດາເທິງສັວນຂອງພວກເຮົາຊົງໄດ້ບອກພວກເຮົາວ່າ ຢາສູບ, ເຫລົ້າ, ແລະສານຢາບາງປະເພດ ສາມາດຊ່ວຍພວກເຮົາຖ້າພວກເຮົາໃຊ້ມັນໃນທາງທີ່ຖືກຕ້ອງ. ພຣະອົງຊົງຕັສວ່າ ພວກເຮົາຄວນໃຊ້ເຫລົ້າ ເພື່ອລ້າງບາດແຜໃນຕົນຕົວພວກເຮົາເທົ່ານັ້ນ. ຢາສູບຈະຖືກໃຊ້ເພື່ອປິ່ນປົວບາດແຜຂອງສັດທີ່ເຈັບປ່ວຍ. ສານຢາບາງປະເພດສາມາດຊ່ວຍພວກເຮົາໃນເວລາພວກເຮົາເຈັບປ່ວຍ. ແຕ່ກ່ອນພວກເຮົາຈະໃຊ້ສິ່ງເຫລົ່ານີ້, ພວກເຮົາຄວນປຶກສາກັບທ່ານຫມໍຫລືຄົນທີ່ເຄີຍເຮັດກ່ອນວ່າ ພວກເຮົາຄວນໃຊ້ມັນແນວໃດ. ຖ້າພວກເຮົາໃຊ້ມັນໃນທາງທີ່ຜິດມັນອາດຈະເປັນອັນຕະລາຍແກ່ພວກເຮົາ.

ພວກເຮົາບໍ່ຄວນກິນສິ່ງໃດເລີຍທີ່ບໍ່ດີຕໍ່ຮ່າງກາຍຂອງພວກເຮົາ. ພຣະວາຈາແຫ່ງປັນຍາບອກພວກເຮົາ ເຖິງບາງສິ່ງທີ່ອັນຕະລາຍຕໍ່ຮ່າງກາຍຂອງພວກເຮົາ. ມັນເປັນກົດບັນຍັດອັນສໍາຄັນ.

ພຣະວາຈາແຫ່ງປັນຍາບໍ່ໄດ້ບອກພວກເຮົາຫມົດທຸກສິ່ງທີ່ພວກເຮົາບໍ່ຄວນໃຊ້. ພວກເຮົາຄວນເຂົ້າໃຈວ່າ ສິ່ງໃດກໍຕາມທີ່ເປັນອັນຕະລາຍຕໍ່ຮ່າງກາຍແລະມັນສມອງຂອງພວກເຮົາ, ເຖິງແມ່ນວ່າ ມັນບໍ່ໄດ້ຖືກຂຽນໄວ້ໃນພຣະວາຈາແຫ່ງປັນຍາ, ພວກເຮົາກໍບໍ່ຄວນໃຊ້. ພວກເຮົາຄວນດູແລຮ່າງກາຍຂອງພວກເຮົາໃນທາງອື່ນໆອີກ, ເຊັ່ນ ອາບນ້ຳເລື້ອຍໆ ເພື່ອຈະເຮັດໃຫ້ຮ່າງກາຍສະອາດ ແລະອອກກຳລັງກາຍ ແລະພັກຜ່ອນໃຫ້ພຽງພໍ.

### *ການສົນທະນາ*

- ພວກເຮົາຈະຮູ້ໄດ້ແນວໃດວ່າ ສິ່ງໃດດີຕໍ່ຮ່າງກາຍຂອງພວກເຮົາ?
- ສິ່ງໃດແດ່ທີ່ພວກເຮົາບໍ່ຄວນຮັບເອົາເຂົ້າໃນຮ່າງກາຍຂອງພວກເຮົາ?

## ພອນອັນຍິ່ງໃຫຍ່ມາຈາກການເຊື່ອຟັງພຣະວາຈາແຫ່ງປັນຍາ

ຖ້າພວກເຮົາເຊື່ອຟັງພຣະວາຈາແຫ່ງປັນຍາ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງໃຫ້ພອນຮ່າງກາຍຂອງພວກເຮົາໃຫ້ເຂັ້ມແຂງຫລາຍກວ່າຕອນທີ່ພວກເຮົາບໍ່ເຊື່ອຟັງພຣະບັນຍັດນັ້ນ. ພວກເຮົາຈະສາມາດເຮັດວຽກງານຂອງພຣະອົງໃນໂລກນີ້ດີຂຶ້ນ. ພຣະອົງຊົງຕັສວ່າ ຖ້າພວກເຮົາເຊື່ອຟັງກົດນີ້, ພວກເຮົາຈະສາມາດຍ່າງໂດຍບໍ່ມີຄວາມເມື່ອຍອ່ອນ ແລະຈະແລ່ນໂດຍບໍ່ເປັນລົມ. ນີ້ເປັນພອນອັນປະເສີດທີ່ສຸດ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຍັງຊົງໄດ້ສັນຍາທີ່ຈະໃຫ້ພອນພວກເຮົາດ້ວຍປັນຍາ ແລະຄວາມຮູ້ອັນຍິ່ງໃຫຍ່ ຖ້າພວກເຮົາເຊື່ອຟັງພຣະວາຈາແຫ່ງປັນຍາ. ພຣະວິນຍານບໍຣິສຸດຈະເປີດເຜີຍຕໍ່ພວກເຮົາ ເຖິງສິ່ງສຳຄັນຫລາຍແນວເຊິ່ງພວກເຮົາບໍ່ສາມາດຮູ້ໄດ້ໃນທາງອື່ນ. ຊາຕານຈະບໍ່ມີອຳນາດເຫນືອພວກເຮົາ. ຖ້າພວກເຮົາເຊື່ອຟັງພຣະວາຈາແຫ່ງປັນຍາ, ພວກເຮົາຈະມີສຸຂພາບເຂັ້ມແຂງຂຶ້ນ ແລະຈະຕຽມຕໍ່ *ຊີວິດນິຣັນດອນນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

### *ການສົນທະນາ*

- ພອນຫຍັງແດ່ທີ່ພວກເຮົາໄດ້ຮັບຈາກການເຊື່ອຟັງພຣະວາຈາແຫ່ງປັນຍາ?

## *ຂໍ້ອ້າງອີງ*

*ຮ່າງກາຍຂອງພວກເຮົາເປັນສິ່ງສັກສິດ*

- ໑ ໂກຣິນໂທ ໓:໑໖–໑໗ (ພຣະວິນຍານບໍຣິສຸດສາມາດຢູ່ນຳພວກເຮົາໄດ້.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບກົດແຫ່ງສຸຂພາບໃຫ້ແກ່ພວກເຮົາ*

- ຜູ້ປົກຄອງ ໑໓:໑໓–໑໔ (ແມ່ຂອງແຊມເຊີນຖືກບັນຊາບໍ່ໃຫ້ກິນແລະດື່ມບາງສິ່ງເພື່ອວ່າແຊມເຊີນ ຈະໄດ້ເປັນເດັກທີ່ມີສຸຂພາບແຂງແຮງ.)
- ເອຊາຢາ ໕:໑໑–໑໔ ແລະສຸພາສິດ ໒໐:໑ (ເຫລົ້າອະງຸ່ນແລະເຄື່ອງມຶນເມົາອື່ນໆ ເປັນສິ່ງບໍ່ດີສຳລັບພວກເຮົາ.)
- D&C 89:5–17 (ອາຫານແລະເຄື່ອງດື່ມບາງຢ່າງເປັນສິ່ງດີແກ່ພວກເຮົາ, ບາງສິ່ງກໍບໍ່ດີ.)

*ພອນອັນຍິ່ງໃຫຍ່ມາຈາກການເຊື່ອຟັງພຣະວາຈາແຫ່ງປັນຍາ*

- ດານີເອນ ໑:໕–໑໗ (ດານີເອນແລະຫມູ່ເພື່ອນຂອງລາວກິນອາຫານທີ່ດີສຳລັບພວກເຂົາ ແລະພວກເຂົາກໍກາຍມາເປັນຄົນແຂງແຮງແລະສລາດກວ່າຄົນທີ່ກິນອາຫານບໍ່ດີ.)
- D&C 89:1–4, 18–21 (ພອນຕ່າງໆຂອງການເຊື່ອຟັງພຣະວາຈາແຫ່ງປັນຍາຖືກຂຽນໄວ້.)

# ສ່ວນສິບແລະການບໍລິຈາກ

*ບົດທີ ໔໕*

---

*ສ່ວນສິບແລະການບໍລິຈາກແມ່ນຫຍັງ ແລະພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງໃຫ້ພອນພວກເຮົາແນວໃດ ເມື່ອພວກເຮົາບໍລິຈາກມັນຢ່າງເຕັມໃຈ?*

**ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງບອກພວກເຮົາໃຫ້ຈ່າຍສ່ວນສິບ**

ສ່ວນສິບເປັນນຶ່ງສ່ວນສິບຂອງເງິນແລະສິ່ງອື່ນໆທີ່ພວກເຮົາໄດ້ຮັບມາ. ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງບອກຜູ້ຄົນນານມາແລ້ວໃຫ້ຈ່າຍສ່ວນສິບ. ອັບຣາຮາມ, ຢາໂຄບ ແລະຄົນອື່ນໄດ້ເຊື່ອຟັງພຣະບັນຍັດນີ້.

ຖ້າພວກເຮົາໄດ້ຮັບເງິນ, ພວກເຮົາຄວນມອບນຶ່ງສ່ວນສິບເປັນສ່ວນສິບ. ຖ້າພວກເຮົາມີສັດລ້ຽງຫລືຜົນເກັບກ່ຽວພວກເຮົາກໍສາມາດໃຫ້ສ່ວນສິບຄືກັນ. ພວກເຮົາໃຫ້ນຶ່ງສ່ວນສິບຂອງຜົນເກັບກ່ຽວ ຫລືນຶ່ງສ່ວນສິບຂອງສັດລ້ຽງທີ່ພວກເຮົາລ້ຽງໃນແຕ່ລະປີ. ຖ້າເປັນໄປໄດ້, ແທນທີ່ຈະເອົາຜົນເກັບກ່ຽວແລະສັດລ້ຽງໃຫ້ສາສນາຈັກ, ພວກເຮົາຄວນຂາຍມັນກ່ອນ ແລະມອບເງິນໃຫ້ແກ່ສາສນາຈັກ. ພວກເຮົາມອບສ່ວນສິບຂອງພວກເຮົາອະທິການຫລືປະທານສາຂາ. ຖ້າພວກເຮົາບໍ່ຮູ້ວ່າຈະໃຫ້ຫລາຍປານໃດ, ພວກເຮົາຄວນຖາມປະທານສາຂາຫລືອະທິການ ເພື່ອຊ່ວຍເຫລືອໃຫ້ພວກເຮົາເຂົ້າໃຈເຖິງກົດສ່ວນສິບນີ້.

ເມື່ອພວກເຮົາຈ່າຍສ່ວນສິບ, ພວກເຮົາໄດ້ຊ່ວຍເຜີຍແຜ່ພຣະກິດຕິຄຸນໄປທົ່ວໂລກ. ສ່ວນສິບຖືກໃຊ້ເພື່ອສ້າງຕຶກສາສນາຈັກ, ພິມປຶ້ມ, ແລະຈ່າຍຄ່າສິ່ງອື່ນໆທີ່ຈຳເປັນໃນສາສນາຈັກຂອງພຣະເຢຊູທີ່ແທ້ຈິງ.

---



*ການອົດອາຫານແລະການອະທິຖານນຳພອນມາໃຫ້ເຮົາ.*

ແມ່ນແຕ່ເດັກນ້ອຍກໍຄວນຈ່າຍສ່ວນສິບ. ພວກເຂົາຈະຮຽນເຮັດແນວນີ້ ເມື່ອພວກເຂົາເຫັນພໍ່ແມ່ຂອງພວກເຂົາຈ່າຍສ່ວນສິບ. ຖ້າພວກເຂົາເລີ້ມຈ່າຍສ່ວນສິບເມື່ອພວກເຂົາຍັງເປັນເດັກ, ພວກເຂົາກໍຈະຕ້ອງການຈ່າຍມັນ ເມື່ອພວກເຂົາເຕີບໂຕຂຶ້ນ ແລະມີຄອບຄົວຂອງພວກເຂົາເອງ.

### *ການສົນທະນາ*

- ພວກເຮົາຖືກບອກໃຫ້ຈ່າຍເທົ່າໃດເປັນສ່ວນສິບຂອງພວກເຮົາ?
- ພວກເຮົາສາມາດສອນລູກໆຂອງພວກເຮົາແນວໃດໃນການຈ່າຍສ່ວນສິບ?

## ພວກເຮົາສະແດງຄວາມຮັກຕໍ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ເມື່ອພວກເຮົາຈ່າຍສ່ວນສິບ

ພວກເຮົາຄວນຈ່າຍສ່ວນສິບຢ່າງເຕັມໃຈ ເພື່ອວ່າພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຮັບມັນ ແລະໃຫ້ພອນແກ່ພວກເຮົາ. ພວກເຮົາຄວນຈ່າຍສ່ວນສິບເພາະພວກເຮົາຢາກເຮັດສິ່ງນັ້ນ.

ຖ້າພວກເຮົາບໍ່ມີຄວາມປາຖນາທີ່ຈະຈ່າຍສ່ວນສິບ, ພວກເຮົາຄວນຄິດກ່ຽວກັບພອນທັງຫມົດທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ມອບໃຫ້ແກ່ພວກເຮົາ. ໂດຍການຈ່າຍສ່ວນສິບຢ່າງເຕັມໃຈ, ພວກເຮົາໄດ້ສະແດງອອກວ່າພວກເຮົາຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະຄົນອື່ນໆນຳອີກ.

### *ການສົນທະນາ*

- ອ່ານ ໔ ໂກຣິນໂທ ໙:໖–໗.
- ເປັນຫຍັງມັນຈຶ່ງສຳຄັນທີ່ຈະໃຫ້ດ້ວຍຄວາມເຕັມໃຈ?

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ສັນຍາທີ່ຈະໃຫ້ພອນພວກເຮົາຖ້າພວກເຮົາຈ່າຍສ່ວນສິບ

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງພໍພຣະທັຍເມື່ອພວກເຮົາຈ່າຍສ່ວນສິບຂອງພວກເຮົາ. ພຣະອົງຊົງສັນຍາທີ່ຈະໃຫ້ພອນຖ້າພວກເຮົາຈ່າຍມັນ. ພຣະອົງຊົງຕັສວ່າ ພຣະອົງຈະຊົງມອບພອນຫລາຍໆຢ່າງແກ່ພວກເຮົາ ຈົນພວກເຮົາບໍ່ຮູ້ວ່າ

ຈະເຮັດນຳມັນແນວໃດ. ພຣະອົງຍັງຊົງໄດ້ຕັດສວ່າ ພວກເຮົາຈະບໍ່ຖືກທຳລາຍ ນຳຄົນຊົ່ວຮ້າຍ ຖ້າພວກເຮົາຈ່າຍສ່ວນສິບຂອງພວກເຮົາຢ່າງເຕັມໃຈ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງໃຫ້ພອນພວກເຮົາ ເພື່ອວ່າ ພວກເຮົາຈະສາມາດຮູ້ພຣະອົງໄດ້ດີຂຶ້ນ. ພຣະອົງຈະຊົງໃຫ້ພອນພວກເຮົາໃຫ້ຮຽນຮູ້ກ່ຽວກັບພຣະກິດຕິຄຸນຫລາຍຂຶ້ນ. ພຣະອົງຈະຊົງມອບພະລັງໃຫ້ແກ່ພວກເຮົາຫລາຍຂຶ້ນ ເພື່ອຈະດຳລົງຕາມການສອນຂອງພຣະກິດຕິຄຸນແຕ່ລະວັນ ແລະຊ່ວຍເຫລືອຄອບຄົວຂອງພວກເຮົາໃຫ້ດຳລົງຢູ່ໃນພຣະກິດຕິຄຸນ. ມັນຍັງຈະເຮັດໃຫ້ພຣະອົງຊົງພໍພຣະທັຍ ເມື່ອພວກເຮົາຊ່ວຍຄົນອື່ນຮຽນກ່ຽວກັບພຣະກິດຕິຄຸນ.

ເມື່ອພວກເຮົາຈ່າຍສ່ວນສິບ, ພວກເຮົາຮຽນທີ່ຈະງົບປະມານເງິນຂອງພວກເຮົາດີຂຶ້ນກວ່າເກົ່າ ແລະກາຍມາເປັນຄົນທີ່ບໍ່ເຫັນແກ່ຕົວ. ພວກເຮົາຄວນຈ່າຍສ່ວນສິບຂອງພວກເຮົາກ່ອນ ຈາກລາຍໄດ້ຂອງພວກເຮົາ, ແລ້ວພວກເຮົາຈະພົບວ່າ ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຈະຊົງໃຫ້ພອນພວກເຮົາ ທີ່ຈະສາມາດງົບປະມານເງິນທີ່ເຫລືອ ເພື່ອວ່າມັນຈະພໍໃຊ້ພໍຈ່າຍກັບຄວາມຈຳເປັນຂອງພວກເຮົາ.

### *ການສົນທະນາ*

- ພອນສາມຢ່າງມີຫຍັງແດ່ທີ່ພວກເຮົາໄດ້ຮັບຈາກການຈ່າຍສ່ວນສິບ?

## ພວກເຮົາຊ່ວຍເຫລືອຄົນອື່ນ ເມື່ອພວກເຮົາຈ່າຍຄ່າອົດອາຫານ

ໃນຖານະເປັນສະມາຊິກຂອງສາສນາຈັກ ພວກເຮົາອົດອາຫານເດືອນລະເທື່ອ. ນີ້ຫມາຍຄວາມວ່າ ພວກເຮົາບໍ່ກິນອາຫານເປັນເວລາສອງຄາບ. ພວກເຮົາບໍ່ກິນຫລືດື່ມອັນໃດເລີຍພາຍໃນ ໒໔ ຊົ່ວໂມງ. ພວກເຮົາເຊື່ອ ວ່າການອົດອາຫານຊ່ວຍເຫລືອພວກເຮົາໃຫ້ມີວິນຍານທີ່ເຂັ້ມແຂງ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກພວກເຮົາໃຫ້ມອບເງິນບໍຣິຈາກທີ່ເອີ້ນວ່າ ເງິນບໍຣິຈາກດ້ວຍການອົດອາຫານ. ການບໍຣິຈາກນີ້ຄວນເປັນເງິນທີ່ພວກເຮົາຈະໃຊ້ຊື້ອາຫານສອງຄາບ ທີ່ພວກເຮົາອົດໃນວັນທີ່ ພວກເຮົາຖືສິນອົດອາຫານ. ພວກເຮົາຄວນມອບເງິນຫລາຍກວ່ານີ້ ຖ້າພວກເຮົາເຮັດໄດ້. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງໃຫ້ພອນພວກເຮົາ ເມື່ອພວກເຮົາເຮັດສິ່ງນີ້.

ການບໍລິຈາກນີ້ ຖືກໃຊ້ສຳລັບອາຫານ, ບ່ອນຢູ່, ເຄື່ອງນຸ່ງ ແລະສິ່ງອື່ນໆໃຫ້ຄົນທີ່ຂັດສົນ. ເມື່ອພວກເຮົາມອບເງິນບໍລິຈາກດ້ວຍການອົດອາຫານ, ພວກເຮົາໄດ້ສະແດງຄວາມຮັກຂອງພວກເຮົາຕໍ່ມະນຸດທົ່ວໄປ.

ພວກເຮົາມອບເງິນບໍລິຈາກດ້ວຍການອົດອາຫານໃຫ້ແກ່ອະທິການຫລືປະທານສາຂາ, ແລະທ່ານຈະໃຊ້ເງິນຈຳນວນນີ້ ເພື່ອຈະຊ່ວຍເຫລືອຄົນທຸກຍາກ ແລະຄົນທີ່ຢູ່ໃນຄວາມຕ້ອງການຄວາມຊ່ວຍເຫລືອພິເສດ. ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງໄດ້ຕັດໄວ້ວ່າ, ຖ້າພວກເຮົາຊ່ວຍເຫລືອຄົນຍາກຈົນ ພຣະອົງຈະຊົງໃຫ້ພອນແກ່ພວກເຮົາ. ພຣະອົງຈະຊົງຕອບຄຳອະທິຖານແລະຊ່ວຍເຫລືອພວກເຮົາເມື່ອພວກເຮົາຕ້ອງການຄວາມຊ່ວຍເຫລືອ. ພຣະອົງຈະຊົງຊ່ວຍພວກເຮົາໃຫ້ເຂົ້າໃຈພຣະກິດຕິຄຸນດີຂຶ້ນກວ່າເກົ່າ ແລະຈະນຳພາພວກເຮົາສເມີ.

ສາສນາຈັກໃຊ້ສ່ວນສິບແລະເງິນບໍລິຈາກ ເພື່ອ:

໑. ສອນພຣະກິດຕິຄຸນໃຫ້ແກ່ຄົນອື່ນ.
໒. ສ້າງແລະສ້ອມແປງພຣະວິຫານ, ຕຶກໂບດ ແລະຕຶກຕ່າງໆຂອງສາສນາຈັກ.
໓. ພິມປຶ້ມບົດຮຽນແລະສິ່ງອື່ນໆທີ່ສະມາຊິກຂອງສາສນາຈັກຕ້ອງການເພື່ອຈະຮຽນກ່ຽວກັບພຣະກິດຕິຄຸນແລະເຣັດວຽກງານອື່ນໆຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.
໔. ຊ່ວຍເຫລືອຄົນຜູ້ທີ່ບໍ່ສາມາດດູແລຕົນເອງ.

### *ການສົນທະນາ*

- ພວກເຮົາສາມາດສະແດງຄວາມກະຕັນຍູຕໍ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາສຳລັບພອນທັງຫມົດທີ່ພຣະອົງມອບໃຫ້ແກ່ພວກເຮົາໄດ້ແນວໃດ?
- ເປັນຫຍັງການຈ່າຍເງິນບໍລິຈາກດ້ວຍການອົດອາຫານຈຶ່ງສາມາດຊ່ວຍເຫລືອພວກເຮົາໃຫ້ມີຄວາມສຸກໄດ້?

## *ຂໍ້ອ້າງອີງ*

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກພວກເຮົາໃຫ້ຈ່າຍສ່ວນສິບ*

- ປະຖົມມະການ ໑໔:໒໐; ເຮັບເຣີ ໗:໑–໑໐ (ອັບຣາຮາມຈ່າຍສ່ວນສິບໃຫ້ແກ່ເມັນຄີເຊເດັກ.)

- ປະຖົມມະການ ໔໗:໔໐–໔໔ (ຢາໂຄບ ສັນຍາທີ່ຈະສົ່ງນຶ່ງສ່ວນສິບຂອງສິ່ງທີ່ພຣະອົງໄດ້ຊົງປະທານໃຫ້ແກ່ທ່ານຄືນໃຫ້ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.)
- ລາຍງານຂ່າວສະບັບທີສອງ ໓໑:໕–໖, ໑໔; ເນເຫມີ ໑໐:໓໗–໓໙ (ລູກໆຂອງອິສຣາເອນຈ່າຍສ່ວນສິບ ແລະຈ່າຍບໍຣິຈາກ.)

*ພວກເຮົາສະແດງຄວາມຮັກຕໍ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເມື່ອພວກເຮົາຈ່າຍສ່ວນສິບ*

- ມາລາກີ ໓:໗–໑໐ (ຖ້າພວກເຮົາບໍ່ຈ່າຍສ່ວນສິບຂອງພວກເຮົາແລະຈ່າຍບໍຣິຈາກ, ພວກເຮົາກໍໂລບຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.)
- ໔ ໂກຣິນໂທ ໙:໖–໗ (ພວກເຮົາຄວນມອບຂອງປະທານໃຫ້ຢ່າງເຕັມໃຈເພື່ອຈະເຮັດໃຫ້ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາພໍພຣະທັຍ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ສັນຍາທີ່ຈະໃຫ້ພອນພວກເຮົາຖ້າພວກເຮົາຈ່າຍສ່ວນສິບ*

- ປະຖົມມະການ ໑໔:໑໙–໔໐ (ອັບຣາຮາມໄດ້ຮັບພອນຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ເພາະການຈ່າຍສ່ວນສິບ.)
- ມາລາກີ ໓:໑໐ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງໃຫ້ພອນພວກເຮົາຫລາຍກວ່າພວກເຮົາຕ້ອງການ.)

*ພວກເຮົາຊ່ວຍເຫລືອຄົນອື່ນ ເມື່ອພວກເຮົາຈ່າຍຄ່າອົດອາຫານ*

- ເອຊາຢາ ໕໗:໖–໑໑ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຂໍໃຫ້ພວກເຮົາເຮັດຄວາມດີຕໍ່ຄົນອື່ນ ໂດຍການມອບສິ່ງທີ່ເຂົາຈຳເປັນຕ້ອງມີໃຫ້ແກ່ເຂົາ.)

# ການຊ່ວຍຄອບຄົວຂອງພວກເຮົາ ໃຫ້ໄດ້ຮັບຄວາມລອດ

*ພາກແປດ*





*ຄອບຄົວສາມາດຢູ່ນຳກັນຕລອດໄປ.*

# ຄອບຄົວເປັນສິ່ງສຳຄັນ

*ບົດທີ ໔໗*

*ເປັນຫຍັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈຶ່ງຊົງວາງແຜນໄວ້ໃຫ້ພວກເຮົາທີ່ຈະມາຢູ່ໃນໂລກເປັນຄອບຄົວ?*

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງວາງແຜນໃຫ້ພວກເຮົາມາຢູ່ເປັນຄອບຄົວ

ຄອບຄົວຢູ່ໃນໂລກຂອງພວກເຮົາເປັນແບບດຽວກັບຄອບຄົວໃນສວັນຂອງພວກເຮົາ. ພວກເຮົາເປັນສ່ວນນຶ່ງຂອງຄອບຄົວສວັນກ່ອນພວກເຮົາລົງມາຢູ່ໃນໂລກນີ້. ພວກເຮົາເປັນລູກວິນຍານຂອງພຣະຜູ້ເປັນເຈົ້າ, ຜູ້ຊົງເປັນພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພຣະອົງຊົງຮັກພວກເຮົາແລະເປັນຫ່ວງພວກເຮົາ. ພຣະອົງຊົງຢາກໃຫ້ພວກເຮົາມີສິ່ງທີ່ດີເລີດ ແລະຢາກໃຫ້ພວກເຮົາກັບຄືນໄປຢູ່ນຳພຣະອົງໃນວັນໃດວັນນຶ່ງ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງປະກອບຄອບຄົວທຳອິດເມື່ອພຣະອົງໄດ້ແຕ່ງງານໃຫ້ອາດາມແລະເອວາ. ພຣະອົງຊົງບອກພວກເຂົາໃຫ້ມີລູກ. ມັນເປັນໄປເຊັ່ນນັ້ນ ເພື່ອວ່າລູກໆທີ່ເປັນວິນຍານຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະສາມາດໄດ້ຮັບຮ່າງກາຍທີ່ມີເນື້ອຫນັງແລະກະດູກ. ພຣະອົງຊົງບອກພວກເພິ່ນໃຫ້ມອບສິ່ງທີ່ລູກໆຂອງພວກເພິ່ນຈຳເປັນຕ້ອງມີໃຫ້ແກ່ເຂົາເຈົ້າ. ພຣະອົງຍັງຊົງບອກພວກເພິ່ນໃຫ້ສອນພຣະກິດຕິຄຸນໃຫ້ແກ່ລູກໆຂອງພວກເພິ່ນນຳອີກ ແລະເພື່ອຊ່ວຍເຫລືອລູກຫລານຂອງພວກເພິ່ນໃຫ້ໄດ້ຮັບພິທີການຂອງພຣະກິດຕິຄຸນ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ໃຫ້ພວກເຮົາເປັນຄອບຄົວເພາະເຫດຜົນຫລາຍຢ່າງ.

ນຶ່ງ, ຈາກພໍ່ແມ່ພວກເຮົາ, ພວກເຮົາໄດ້ຮັບຮ່າງກາຍທີ່ເປັນເນື້ອຫນັງແລະກະດູກ. ພວກເຮົາຈຳເປັນຕ້ອງມີຮ່າງກາຍທີ່ມີເນື້ອຫນັງແລະກະດູກ ເພື່ອຈະໄດ້ຮຽນສິ່ງທີ່ພວກເຮົາຕ້ອງການທີ່ຈະເຮັດເພື່ອວ່າ ພວກເຮົາຈະສາມາດກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກຕລອດໄປ.

ສອງ, ຄອບຄົວຂອງພວກເຮົາສາມາດມອບສິ່ງທີ່ພວກເຮົາຈຳເປັນຕ້ອງມີຢູ່ໃນໂລກ. ພໍ່ແມ່ສາມາດໃຫ້ອາຫານ, ເຄື່ອງນຸ່ງຫົ່ມ, ບ່ອນຢູ່ອາສັຍ, ຄວາມຮັກ, ແລະສິ່ງອື່ນໆທີ່ຈຳເປັນຕໍ່ລູກໆຂອງເຂົາເຈົ້າ. ຕໍ່ມາ, ລູກໆສາມາດດູແລພໍ່ແມ່ຂອງພວກເຂົາເມື່ອພໍ່ແມ່ເຖົ້າແກ່ລົງ ແລະບໍ່ສາມາດດູແລຕົນເອງໄດ້.

ສາມ, ພໍ່ແມ່ສາມາດສອນພຣະກິດຕິຄຸນຂອງພຣະເຢຊູຄຣິສໃຫ້ແກ່ລູກໆຂອງເຂົາເຈົ້າ. ພວກເຂົາສາມາດສອນພວກເຂົາໃຫ້ເຊື່ອຟັງພຣະບັນຍັດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ແລະພວກເຂົາສາມາດຮັບປະກັນວ່າ ລູກໆຂອງເຂົາເຈົ້າໄດ້ຮັບພິທີການທີ່ພຣະເຢຊູຊົງໄດ້ຕັສໄວ້ວ່າ ພວກເຂົາຈຳເປັນຕ້ອງໄດ້ຮັບ.

### *ການສົນທະນາ*

- ເປັນຫຍັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຈຶ່ງຈັດໃຫ້ພວກເຮົາລົງມາສູ່ໂລກເປັນຄອບຄົວ?
- ແມ່ນໃຜເປັນຄອບຄົວທຳອິດທີ່ຢູ່ໃນໂລກນີ້?
- ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງວາງແຜນແບບໃດ ເພື່ອໃຫ້ຄອບຄົວຂອງພວກເຮົາເຮັດເພື່ອພວກເຮົາ?

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ສະມາຊິກໃນຄອບຄົວຮັກເຊິ່ງກັນແລະກັນ

ຄອບຄົວຂອງພວກເຮົາໃນໂລກນີ້ ສາມາດເປັນດັ່ງດຽວກັບຄອບຄົວໃນສວັນຂອງພວກເຮົາ. ຄອບຄົວສາມາດຮູ້ສຶກຕໍ່ຄວາມຮັກທີ່ຈະເຮັດໃຫ້ພວກເຂົາຢາກຊ່ວຍຄົນອື່ນແລະປະພຶດແລະເວົ້າຈາດ້ວຍຄວາມເມດຕາຕໍ່ກັນແລະກັນ.

ຄູ່ສາມີແລະພັລຍາໃນຄອບຄົວຄວນຮັກເຊິ່ງກັນແລະກັນ. ພວກເຂົາຄວນມີຄວາມເມດຕາ ແລະຊ່ວຍເຫລືອເຊິ່ງກັນແລະກັນ. ພວກເຮົາບໍ່ຄວນເວົ້າຫລືເຮັດສິ່ງໃດສິ່ງນຶ່ງທີ່ຈະເຮັດໃຫ້ສາມີຫລືພັລຍາໂສກເສົ້າ.

ພໍ່ແມ່ຄວນຮັກລູກໆຂອງຕົນ. ພວກເຂົາຄວນສອນລູກໆຂອງພວກເຂົາໃຫ້ຮັກເຊິ່ງກັນແລະກັນ. ພວກເຂົາຄວນສອນລູກໆໃຫ້ຊ່ວຍແລະດູແລເຊິ່ງກັນແລະກັນ.

ລູກໆກໍຄວນຮັກພໍ່ແມ່ຂອງເຂົາ. ພວກເຂົາຄວນນັບຖື, ເຊື່ອຟັງແລະຊ່ວຍພໍ່ແມ່ຂອງພວກເຂົາ.

### *ການສົນທະນາ*

- ອ່ານ ເອເຟໂຊ ໕:໔໙–໖໔.
- ພວກເຮົາສາມາດຊ່ວຍຄອບຄົວຂອງພວກເຮົາໃຫ້ຮັກເຊິ່ງກັນແລະກັນໄດ້ແນວໃດ?
- ເປັນຫຍັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈຶ່ງຕ້ອງການໃຫ້ສະມາຊິກໃນຄອບຄົວຮັກເຊິ່ງກັນແລະກັນ?

## ສິ່ງສຳຄັນທີ່ສຸດທີ່ພວກເຮົາສາມາດເຮັດໄດ້ ແມ່ນການເຮັດໃຫ້ຄອບຄົວມີຄວາມສຸກແລະເປັນຄອບຄົວທີ່ຊອບທັມ

ການເຮັດໃຫ້ຄອບຄົວຂອງພວກເຮົາຊອບທັມ ເປັນວຽກງານທີ່ສຳຄັນທີ່ສຸດທີ່ພວກເຮົາສາມາດເຮັດໄດ້. ບໍ່ວ່າພວກເຮົາຈະມີຜົນສຳເຣັດດີໃນສິ່ງອື່ນກໍຕາມ ຖ້າພວກເຮົາບໍ່ສອນຄອບຄົວຂອງພວກເຮົາໃຫ້ຮັກແລະເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລ້ວ, ພວກເຮົາກໍຂາດຜົນສຳເຣັດໃນຫນ້າທີ່ອັນສຳຄັນຂອງພວກເຮົາ. ບາງຄັ້ງ, ລູກໆຂອງພວກເຮົາອາດເລືອກທີ່ຈະບໍ່ຮັກ ແລະບໍ່ເຊື່ອຟັງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ແຕ່ພວກເຮົາຕ້ອງເຮັດທຸກສິ່ງທີ່ພວກເຮົາສາມາດເຮັດໄດ້ທີ່ຈະສອນພວກເຂົາ ໃຫ້ຢູ່ໃນເສັ້ນທາງຂອງພຣະອົງ. ຖ້າພໍ່ແມ່ເຮັດທຸກສິ່ງທີ່ຕົນສາມາດເຮັດໄດ້ທີ່ຈະສອນລູກໆຂອງພວກເຂົາແລ້ວ, ພຣະບິດາຜູ້ສະຖິດໃນສວັນຈະບໍ່ເຮັດໃຫ້ພໍ່ແມ່ເປັນຜູ້ຮັບຜິດຊອບຕໍ່ການກະທຳຜິດຂອງລູກໆຂອງພວກເຂົາ. ພໍ່ແມ່ຈະຍອມແພ້ກໍຕໍ່ເມື່ອພວກເຂົາເຊົາພະຍາຍາມເປັນພໍ່ແມ່ທີ່ດີເທົ່ານັ້ນ.

ຄອບຄົວຂອງພວກເຮົາສາມາດໃຫ້ພອນອັນຍິ່ງໃຫຍ່ແກ່ພວກເຮົາໄດ້ໃນຊີວິດນີ້. ພວກເຮົາໄດ້ເຮັດຄວາມດີ ເມື່ອພວກເຮົາພະຍາຍາມຢ່າງພາກພຽນທີ່ຈະລ້ຽງລູກໆ ໃຫ້ເປັນສະມາຊິກທີ່ດີໃນສາສນາຈັກ ແລະໃຫ້ເປັນປະຊາຊົນທີ່ດີໃນປະເທດທີ່ພວກເຮົາອາສັຍຢູ່.

ຄອບຄົວເປັນສ່ວນສຳຄັນທີ່ສຸດຂອງສາສນາຈັກ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຈັດຕັ້ງ ສາສນາຈັກຂອງພຣະອົງຂຶ້ນເພື່ອໃຫ້ຊ່ວຍເຫລືອຄອບຄົວໃຫ້ເຮັດທຸກສິ່ງທີ່ຈຳເປັນເພື່ອຈະກັບຄືນໄປຫາພຣະອົງ. ສາສນາຈັກຕ້ອງການທີ່ຈະຊ່ວຍເຫລືອຄອບຄົວແຕ່ລະຄອບຄົວໃຫ້ຢູ່ນຳກັນຕລອດໄປ.

ຊາຕານຮູ້ວ່າ ຄອບຄົວສຳຄັນຫລາຍຂນາດໃດໃນແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ມັນພະຍາຍາມທີ່ຈະເຮັດໃຫ້ພວກເຮົາເຮັດສິ່ງທີ່ຈະເຮັດໃຫ້ຄອບຄົວຂອງພວກເຮົາແຕກແຍກກັນ.

*ການສົນທະນາ*

- ຄອບຄົວຂອງທ່ານສຳຄັນຕໍ່ທ່ານຫລາຍຂນາດໃດ?

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກພວກເຮົາເຖິງວິທີທີ່ຈະມີຄອບຄົວທີ່ດີ

ພວກເຮົາທຸກໆຄົນຕ້ອງການມີຄອບຄົວທີ່ດີ ແລະຄອບຄົວທີ່ມີຄວາມສຸກ. ຕໍ່ໄປນີ້ເປັນບາງສິ່ງທີ່ຈະຊ່ວຍເຫລືອຄອບຄົວໄດ້:

໑. ຄອບຄົວຄວນອະທິຖານນຳກັນໃນຕອນເຊົ້າແລະໃນຕອນຄ່ຳ.
໒. ພໍ່ແມ່ຄວນອະທິຖານນຳກັນທຸກໆວັນ.
໓. ພໍ່ແມ່ຄວນສອນລູກໆກ່ຽວກັບພຣະກິດຕິຄຸນ.
໔. ຄອບຄົວຄວນອ່ານພຣະຄັມພີນຳກັນທຸກໆວັນ.
໕. ຄອບຄົວຄວນໄປໂບດນຳກັນທຸກໆວັນອາທິດ.
໖. ຄອບຄົວຄວນອົດອາຫານນຳກັນເດືອນລະຄັ້ງ ເມື່ອລູກໆໃຫຍ່ສົມຄວນທີ່ຈະສາມາດອົດອາຫານ ແລະເຂົ້າໃຈຈຸດປະສົງຂອງການອົດອາຫານ.

7. ຄອບຄົວຢູ່ນຳກັນແຕ່ລະອາທິດທີ່ເອີ້ນວ່າ *ການສັງສັນໃນຄອບຄົວ ເພື່ອຈະໄດ້ເວົ້າກ່ຽວກັບສິ່ງທີ່ດີ ທີ່ຄອບຄົວໄດ້ເຮັດມາ. ພວກເຂົາຄວນສົນທະນ ເຖິງວິທີທີ່ຈະແກ້ໄຂບັນຫາຕ່າງໆທີ່ພວກເຂົາມີ. ໃນການປະຊຸມນີ້ ພວກເຂົາຍັງສາມາດຮ້ອງເພງ, ສອນບົດຮຽນ, ຮຽນຂໍ້ພຣະຄັມພີ, ຫລິ້ນເກມ ແລະມີບາງຢ່າງພິເສດທີ່ຈະກິນແລະດື່ມ.
8. ຄອບຄົວຄວນເຮັດວຽກແລະອ່ານນຳກັນ.
9. ສະມາຊິກໃນຄອບຄົວຄວນມີຄວາມເມດຕາແລະອົດທົນຕໍ່ກັນແລະກັນ.
10. ຄອບຄົວຄວນບັນທຶກສິ່ງທີ່ພວກເຂົາໄດ້ເຮັດໄວ້.

ຖ້າພວກເຮົາຈື່ຈຳທີ່ຈະອະທິຖານເປັນສ່ວນຕົວແລະເປັນຄອບຄົວ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຢູ່ໃກ້ສິດພວກເຮົາ. ພຣະອົງຈະຊົງຟັງແລະຕອບຄຳອະທິຖານຂອງພວກເຮົາໃນທາງທີ່ດີທີ່ສຸດສຳລັບພວກເຮົາ.

### *ການສົນທະນາ*

- ມີສິ່ງໃດແດ່ທີ່ພວກເຮົາສາມາດເຮັດເພື່ອຈະມີຄອບຄົວທີ່ດີໄດ້?

## *ຂໍ້ອ້າງອີງ*

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງວາງແຜນໃຫ້ພວກເຮົາມາຢູ່ເປັນຄອບຄົວ*

- ມັດທາຍ ໑໙:໓–໘ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງວາງແຜນໃຫ້ສາມີແລະພັລຍາໃຫ້ຢູ່ນຳກັນຕລອດໄປ.

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ສະມາຊິກໃນຄອບຄົວຮັກເຊິ່ງກັນແລະກັນ*

- ປະຖົມມະການ ໔:໔໑–໔໔ (ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສ້າງອາດາມແລະເອວາ ແລະໄດ້ເຮັດໃຫ້ເຂົາເຈົ້າເປັນສາມີພັລຍາ.)

*ສິ່ງສຳຄັນທີ່ສຸດທີ່ພວກເຮົາສາມາດເຮັດໄດ້ ແມ່ນການເຮັດໃຫ້ຄອບຄົວມີຄວາມສຸກແລະເປັນຄອບຄົວທີ່ ຊອບທັມ*

- ເອເຟໂຊ ໕:໔໕ (ສາມີຖືກອົບລົມໃຫ້ຮັກພັລຍາ.)

- ເອເຟໂຊ ໖:໑ (ລູກໆຖືກອົບລົມໃຫ້ເຊື່ອຟັງພໍ່ແມ່ຂອງພວກເຂົາ.)
- ຕີໂຕ ໒:໔ (ພັລຍາຖືກອົບລົມໃຫ້ຮັກສາມີຂອງຕົນ.)
- ໂມໄຊຢາ ໔:໑໔–໑໕ (ພໍ່ແມ່ຖືກອົບລົມໃຫ້ດູແລເບິ່ງຄວາມຕ້ອງການຂອງລູກໆ ແລະໃຫ້ສອນພວກເຂົາເຖິງວິທີທີ່ຈະເປັນຄົນຊອບທັມ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກພວກເຮົາເຖິງວິທີທີ່ຈະມີຄອບຄົວທີ່ດີ*

- ໑ ໂກຣິນໂທ ໑໓:໑–໗ (ພວກເຮົາຖືກອົບລົມກ່ຽວກັບຄວາມສຳຄັນຂອງຄວາມຮັກ.)
- ເອເຟໂຊ ໖:໔ (ພໍ່ທັງຫລາຍຖືກບັນຊາບໍ່ໃຫ້ຍົວະຍົງໃຫ້ລູກໆຂອງຕົນໄດ້ຮັບຄວາມຂັດເຄືອງໃຈ.)

# ໜ້າທີ່ຮັບຜິດຊອບຂອງພວກເຮົາ ທີ່ຈະຊ່ວຍສະມາຊິກໃນຄອບຄົວ

*ບົດທີ ๑๐*

*ສະມາຊິກໃນຄອບຄົວແຕ່ລະຄົນສາມາດຊ່ວຍເຫລືອຄອບຄົວໃຫ້ມີຄວາມສຸກໄດ້ແນວໃດ?*

## ສະມາຊິກໃນຄອບຄົວທຸກໆຄົນມີຄວາມສຳຄັນ

ການຈະມີຄອບຄົວທີ່ຮັກກັນແລະມີຄວາມສຸກ ມັນກໍຕ້ອງມີຄວາມພະຍາຍາມ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບໜ້າທີ່ຮັບຜິດຊອບໃຫ້ແກ່ທຸກໆຄົນໃນຄອບຄົວ. ສະມາຊິກໃນຄອບຄົວແຕ່ລະຄົນຄວນຊ່ວຍເຫລືອກັນ, ມີຄວາມຍິ້ມແຍ້ມ, ແລະມີຄວາມເມດຕາຕໍ່ກັນແລະກັນ. ເມື່ອພວກເຮົາອະທິຖານ, ເຮັດວຽກ, ຮ້ອງເພງ ແລະຫລິ້ນດ້ວຍກັນ, ຄອບຄົວຈະມີຄວາມສຸກ.

ການມີຄວາມຮັກຕໍ່ສະມາຊິກໃນຄອບຄົວຄົນອື່ນໆ ເຮັດໃຫ້ການປະຕິບັດໃນສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ພວກເຮົາເຮັດງ່າຍຂຶ້ນ. ເມື່ອພວກເຮົາຮັກຄອບຄົວຂອງພວກເຮົາ, ພວກເຮົາຈະຢາກເຮັດທຸກສິ່ງເພື່ອຊ່ວຍເຫລືອພວກເຂົາ. ເຖິງແມ່ນວ່າສິ່ງນັ້ນຈະຍາກ ແຕ່ມັນຈະງ່າຍລົງ ຖ້າພວກເຮົາເຮັດມັນດ້ວຍຄວາມຮັກ. ມັນຕ້ອງໃຊ້ເວລາແລະຄວາມພະຍາຍາມກ່ອນທີ່ພວກເຮົາຈະເປັນຄົນດີຕໍ່ຄອບຄົວໄດ້.

### *ການສົນທະນາ*

- ສະມາຊິກໃນຄອບຄົວແຕ່ລະຄົນສາມາດຊ່ວຍເຫລືອຫຍັງແດ່ທີ່ຈະເຮັດໃຫ້ບ້ານເປັນບ່ອນມີຄວາມສຸກຫລາຍຂຶ້ນ?
- ເປັນຫຍັງສະມາຊິກໃນຄອບຄົວທຸກຄົນຈຶ່ງມີຄວາມສຳຄັນ?



*ຄອບຄົວຈະເຂັ້ມແຂງຂຶ້ນໂດຍການເຮັດວຽກງານຮ່ວມກັນ.*

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມອບໜ້າທີ່ພິເສດໃຫ້ແກ່ຜູ້ເປັນພໍ່ແມ່*

ພໍ່ແມ່ຄວນຮ່ວມໄມ້ຮ່ວມມືກັນໃນການດູແລລູກໆຂອງພວກເຂົາ ແລະຊ່ວຍເບິ່ງແຍງລູກໆຕາມຄວາມຈຳເປັນຂອງພວກເຂົາ. ພວກເຂົາຍັງຄວນສອນລູກໆໃຫ້ອະທິຖານ ແລະໃຫ້ເຊື່ອຟັງພຣະບັນຍັດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົານຳອີກ.

ພໍ່ແມ່ຄວນເຂົ້າໃຈວ່າ ບາງຄັ້ງລູກໆຈະເລືອກທາງທີ່ຜິດ ເຖິງແມ່ນວ່າ ຫລັງຈາກພວກເຂົາຖືກສອນໃນສິ່ງທີ່ຖືກຕ້ອງແລ້ວກໍຕາມ.

ເມື່ອລູກໆເຮັດສິ່ງໃດສິ່ງນຶ່ງຜິດ, ພໍ່ແມ່ບໍ່ຄວນຢຸດພະຍາຍາມທີ່ຈະຊ່ວຍເຫລືອພວກເຂົາ. ພໍ່ແມ່ຄວນໃຫ້ຄວາມຮັກແລະສອນລູກໆຂອງເຂົາເຈົ້າຕໍ່ໄປ. ພວກເຂົາຍັງຄວນເປັນຕົວຢ່າງທີ່ດີສຳລັບລູກໆ ແລະອົດອາຫານແລະອະທິຖານເພື່ອພວກເຂົານຳອີກ.

ພໍ່ແມ່ຄວນໃຫ້ບາງສິ່ງບາງຢ່າງຕໍ່ຄອບຄົວຂອງພວກເຂົາ ເຊັ່ນ:

໑. ພວກເຂົາຄວນຮັກລູກໆຂອງພວກເຂົາ ແລະສອນພວກເຂົາໃຫ້ຮັກເຊິ່ງກັນແລະກັນ.
໒. ພວກເຂົາຄວນສອນພຣະກິດຕິຄຸນໃຫ້ແກ່ລູກໆຂອງພວກເຂົາ.
໓. ພວກເຂົາຄວນສອນວິທີອະທິຖານໃຫ້ແກ່ສະມາຊິກໃນຄອບຄົວ.
໔. ພວກເຂົາຄວນສອນລູກໆຂອງພວກເຂົາໃຫ້ຈ່າຍສ່ວນສິບແລະເງິນບໍຣິຈາກ ໂດຍການຈ່າຍສ່ວນສິບ ແລະເງິນບໍຣິຈາກຂອງເຂົາເອງ.
໕. ພວກເຂົາຄວນສອນລູກໆຂອງພວກເຂົາໃຫ້ຮູ້ຈັກເຮັດວຽກງານ.
໖. ພວກເຂົາຄວນມີບ້ານທີ່ສະອາດ, ມີເຄື່ອງນຸ່ງຫົ່ມ, ແລະມີອາຫານໃຫ້ລູກ.
໗. ພວກເຂົາຄວນເບິ່ງວ່າ ລູກໆຂອງພວກເຂົາຮຽນທີ່ຈະຂຽນ, ອ່ານ ແລະເຮັດເລກຂັ້ນປະຖົມໄດ້ ໂດຍສົ່ງລູກໆໄປໂຮງຮຽນຫລືສອນພວກເຂົາທີ່ບ້ານ.
໘. ພວກເຂົາຄວນເຮັດທຸກສິ່ງທີ່ສາມາດເຮັດໄດ້ ເພື່ອລູກໆຂອງພວກເຂົາຈະມີໂອກາດໄດ້ຮຽນວິຊາອາຊີບ ແລະຕຽມຕົວເພື່ອຈະມີເງິນຄຳພຽງພໍສຳລັບສິ່ງທີ່ເຂົາຈຳເປັນຕ້ອງມີ.

໙. ພວກເຂົາຄວນເປັນຕົວຢ່າງໃຫ້ແກ່ຕໍ່ລູກໆຂອງພວກເຂົາ ເຖິງວິທີທີ່ຈະໃຊ້ຈ່າຍ ເງິນຢ່າງສລາດແລະ ທ້ອນຫອມໄວ້ເພື່ອອະນາຄົດ.

໑໐. ພວກເຂົາຄວນຊ່ວຍເຫລືອລູກໆຂອງພວກເຂົາໃຫ້ມີຄວາມສາມາດແລະ ຄວາມຮູ້ເພີ້ມຂຶ້ນ. ສິ່ງເຫລົ່ານີ້ອາດເປັນຄວາມສາມາດທີ່ຈະສອນ, ຫລິ້ນດົນຕຣີ, ຮ້ອງເພງ, ສ້ອມແປງ ຫລືມີຄວາມເຂົ້າໃຈຕໍ່ຄົນອື່ນ.

ພໍ່ແມ່ຄວນເຕັມໃຈທີ່ຈະເຮັດວຽກງານຢ່າງຂຍັນ ເພື່ອຈະຊ່ວຍເຫລືອລູກໆຂອງ ພວກເຂົາ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ຕັສວ່າ ພໍ່ແມ່ຄວນ ເບິ່ງວ່າ ລູກໆຂອງເຂົາເຈົ້າປະພຶດດີຕໍ່ກັນແລະກັນ ແລະມີອາຫານ ແລະມີເຄື່ອງ ນຸ່ງຫົ່ມພຽງພໍ.

ພໍ່ແມ່ຄວນວາງແຜນໄວ້ລ່ວງຫນ້າ ເພື່ອຈະສາມາດມີສິ່ງເຫລົ່ານີ້ໄວ້ໃຫ້ລູກໆ ໃນເວລາຕົນເຈັບປ່ວຍ, ຕົກງານ ແລະມີບັນຫາອື່ນໆ. ພວກເຂົາສາມາດເຮັດສິ່ງ ເຫລົ່ານີ້ໂດຍການສະສົມເງິນຫລືເກັບອາຫານ, ເຄື່ອງນຸ່ງຫົ່ມ ແລະນໍ້າມັນໄວ້ ຖ້າບ້ານເມືອງອະນຸຍາດໃຫ້ເຮັດ.

### *ການສົນທະນາ*

- ພໍ່ແມ່ສາມາດເຮັດແນວໃດແດ່ເພື່ອຈະໃຫ້ມີຕາມຄວາມຕ້ອງການຂອງຄອບຄົວ?
- ພໍ່ແມ່ສາມາດເຮັດແນວໃດແດ່ ເພື່ອຕຽມຕໍ່ເວລາທີ່ພວກເຂົາອາດມີບັນຫາ?

### *ພໍ່ມີຫນ້າທີ່ຮັບຜິດຊອບພິເສດ*

ພໍ່ເປັນຜູ້ນໍາຖານະປະໂຣຫິດຂອງຄອບຄົວ. ພໍ່ຄວນນໍາພາຄອບຄົວຂອງຕົນດ້ວຍ ຄວາມຮັກແລະດ້ວຍຄວາມເມດຕາ. ພໍ່ຄວນສອນຄອບຄົວໃຫ້ຮູ້ຈັກວິທີທີ່ຈະເຊື່ອຟັງ ພຣະບັນຍັດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ໂດຍການເປັນຄົນ ເຊື່ອຟັງໂດຍຕົນເອງນໍາອີກ. ພໍ່ຍັງຄວນສອນຄອບຄົວຂອງຕົນ. ລາວຄວນເອີ້ນ ຄອບຄົວມາອະທິຖານນໍາກັນໃນຕອນເຊົ້າແລະໃນຕອນແລງ. ຜູ້ເປັນແມ່ກໍຄວນ ຊ່ວຍເຫລືອໃນການກະທໍານີ້.

ພໍ່ຄວນໃຊ້ຖານະປະໂຣຫິດຂອງຕົນເພື່ອຈະໃຫ້ພອນແກ່ສະມາຊິກໃນຄອບຄົວຂອງ ຕົນ. ລາວສາມາດໃຫ້ພອນແກ່ລູກຄົນເກີດໃຫມ່ແລະຕັ້ງຊື່ໃຫ້ນໍາ. ລາວສາມາດໃຫ້

ບັບຕິສະມາພວກເຂົາ ເມື່ອພວກເຂົາມີອາຍຸໄດ້ແປດປີ. ລາວສາມາດແຕ່ງຕັ້ງລູກຕໍ່ຖານະປະໂຣຫິດ ແລະໃຫ້ພອນພິເສດແກ່ລູກເມື່ອພວກເຂົາຕ້ອງການ. ລາວສາມາດໃຫ້ພອນພວກເຂົາເວລາເຂົາເຈັບປ່ວຍ.

ພໍ່ຄວນໃຊ້ເວລານຳລູກໆຂອງຕົນແຕ່ລະຄົນ. ລາວຄວນເວົ້ານຳພວກເຂົາແລະຮຽນທີ່ຈະເຂົ້າໃຈເຖິງຄວາມຕ້ອງການແລະຄວາມຫ່ວງໄຍຂອງພວກເຂົາ. ລາວຄວນຊຸກຍູ້ພວກເຂົາ ແລະບອກລູກໆວ່າ ລາວຮັກພວກເຂົາ. ລາວຄວນບອກພວກເຂົາວ່າພວກເຂົາສາມາດມາຫາລາວໄດ້ທຸກເວລາ ດ້ວຍບັນຫາອັນໃດກໍຕາມທີ່ພວກເຂົາມີ.

### *ການສົນທະນາ*

- ໜ້າທີ່ຮັບຜິດຊອບຂອງພໍ່ມີຫຍັງແດ່?
- ຜູ້ເປັນພໍ່ສາມາດໃຊ້ຖານະປະໂຣຫິດທີ່ລາວມີຢູ່ເພື່ອໃຫ້ພອນແກ່ຄອບຄົວໄດ້ແນວໃດ?

### *ແມ່ມີໜ້າທີ່ຮັບຜິດຊອບພິເສດ*

ໜ້າທີ່ຮັບຜິດຊອບທີ່ສຳຄັນທີ່ສຸດຂອງແມ່ ແມ່ນການໃຫ້ກຳເນີດແລະໃຫ້ການດູແລແລະສອນພວກລູກໆ. ການໃຫ້ຮ່າງກາຍທີ່ມີເນື້ອໜັງແລະກະດູກຕໍ່ລູກໆທີ່ເປັນວິນຍານຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເປັນໜ້າທີ່ສັກສິດ. ເມື່ອແມ່ເຮັດແນວນີ້, ລາວເປັນຄູ່ຮ່ວມງານນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ການໃຫ້ກຳເນີດລູກເປັນພອນອັນຍິ່ງໃຫຍ່ທີ່ສຸດເໜືອກວ່າພອນອື່ນໆ.

ແມ່ຄວນເປັນຄົນທີ່ມີຄວາມຮັກ. ລາວຄວນຊ່ວຍສອນລູກແຕ່ລະຄົນໃຫ້ຮຽນພຣະກິດຕິຄຸນ. ລາວຈຳເປັນຕ້ອງຊ່ວຍເຫລືອແລະດູແລລູກແຕ່ລະຄົນ. ແມ່ຄວນເປັນຜູ້ທີ່ເຮັດໃຫ້ລູກແຕ່ລະຄົນຮູ້ວ່າ ເຂົາສຳຄັນແລະຄວນຊ່ວຍພວກເຂົາໃຫ້ເຂົ້າໃຈເຖິງສິ່ງທີ່ຢູ່ອ້ອມຮອບພວກເຂົາ. ລາວຄວນຮ່ວມໄມ້ຮ່ວມມືນຳສາມີໃນການກະທຳສິ່ງເຫລົ່ານີ້.

ພຣະຄຳພີມໍມອນບອກເຖິງຊາຍໜຸ່ມຊອບທັມກຸ່ມນຶ່ງ ຜູ້ໄດ້ເຊື່ອຟັງຄຳສອນຂອງແມ່ຂອງພວກເຂົາ. ແມ່ຂອງຊາຍໜຸ່ມພວກນີ້ ໄດ້ສອນພວກເຂົາໃຫ້ເປັນຄົນຊື່ສັດ, ກ້າຫານ, ແລະຊອບທັມ. ແມ່ຂອງພວກເຂົາຍັງສອນວ່າ ພຣະບິດາຜູ້ສະຖິດໃນ

ສວັນຂອງພວກເຮົາຈະຊົງຮັກສາພວກເຂົາໃຫ້ປອດພັຍ ຖ້າພວກເຂົາມີສັດທາໃນພຣະເຢຊູ. ຊາຍຫນຸ່ມເຫລົ່ານີ້ໄດ້ກາຍມາເປັນທະຫານ ເພື່ອຈະປ້ອງກັນແຜ່ນດິນຂອງພວກເຂົາ. ຍ້ອນວ່າຊາຍຫນຸ່ມພວກນີ້ເຊື່ອຟັງການສອນຂອງແມ່ຂອງພວກເຂົາ ແລະມີສັດທາ, ພວກເຂົາຈຶ່ງມີຄວາມກ້າຫານທີ່ຈະເຮັດຫນ້າທີ່ໃຫ້ສຳເຣັດ ແມ່ນແຕ່ພວກເຂົາຈະຢູ່ໃນພັຍອັນຕະລາຍກໍຕາມ. ແມ່ທຸກໆຄົນສາມາດມີອິດທິພົນໃນຊີວິດຂອງລູກໆຂອງພວກເຂົາ.

### *ການສົນທະນາ*

- ຫນ້າທີ່ຮັບຜິດຊອບຂອງແມ່ມີຫຍັງແດ່?
- ເປັນຫຍັງການເປັນແມ່ຈຶ່ງເອີ້ນວ່າ ຄູ່ຮ່ວມງານກັບພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ?

### *ເມື່ອມັນມີແຕ່ພໍ່ຫລືແມ່ຄົນດຽວ*

ບາງຄັ້ງພໍ່ຫລືແມ່ຖືກປະໄວ້ໃຫ້ລ້ຽງຄອບຄົວຄົນດຽວຫລືຕ້ອງເຮັດພາລະຂອງພໍ່ແມ່ຄົນດຽວ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮູ້ວ່າ ນີ້ເປັນສິ່ງຍາກທີ່ຈະເຮັດ. ຖ້າໃຜຄົນນຶ່ງທີ່ເປັນຜູ້ດູແລຄົນດຽວຫາກທູນຂໍພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາກໍຈະຊົງຊ່ວຍຄົນນັ້ນໃນການດູແລຄອບຄົວ.

ພໍ່ຫລືແມ່ທີ່ລ້ຽງລູກຄົນດຽວສາມາດໄດ້ຮັບຄວາມຊ່ວຍເຫລືອຈາກຄູສອນປະຈຳບ້ານໄດ້. ຄູສອນປະຈຳບ້ານເປັນສະມາຊິກຂອງສາສນາຈັກທີ່ຖືກແຕ່ງຕັ້ງໃຫ້ດູແລສະມາຊິກຂອງສາສນາຈັກ.

### *ການສົນທະນາ*

- ແມ່ນໃຜສາມາດຊ່ວຍເຫລືອພໍ່ຫລືແມ່ທີ່ລ້ຽງລູກຄົນດຽວໄດ້?

### *ລູກໆກໍມີຫນ້າທີ່ຮັບຜິດຊອບພິເສດ*

ລູກໆຄວນຊ່ວຍເຫລືອພໍ່ແມ່ຂອງເຂົາເຈົ້າເຮັດໃຫ້ບ້ານຂອງເຂົາເປັນບ່ອນມີຄວາມສຸກ. ລູກໆຄວນຊ່ວຍພໍ່ແມ່ຂອງພວກເຂົາທຳຄວາມສະອາດບ້ານ ແລະບໍລິເວນນອກບ້ານ. ພວກເຂົາຍັງສາມາດຊ່ວຍຕຽມອາຫານສຳລັບຄອບຄົວ, ຊ່ວຍລ້າງຖ້ວຍ ແລະຊັກເຄື່ອງນຸ່ງ. ພວກເຂົາຍັງສາມາດຊ່ວຍດູແລນ້ອງນຸ່ງນຳອີກ.

ລູກໆຄວນພະຍາຍາມຢ່າງຂະຍັນທີ່ຈະຮຽນສິ່ງທີ່ພໍ່ແມ່ສອນພວກເຂົາ. ພວກເຂົາຄວນຮຽນທີ່ຈະເຮັດວຽກດ້ວຍຄວາມດຸໝັ່ນ ແລະເຮັດໃຫ້ມັນໝລ້ອນໜ້າທີ່. ພວກເຂົາຄວນຮຽນເຮັດວຽກງານທີ່ໄດ້ມອບໃຫ້ພວກເຂົາ.

ລູກໆຄວນເຊື່ອຟັງພຣະບັນຍັດຂອງພຣະເຢຊູ. ພວກເຂົາຄວນຊ່ວຍເຫລືອສະມາຊິກໃນຄອບຄົວຄົນອື່ນໆ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະບໍ່ພໍພຣະທັຍນຳລູກໆທີ່ສອນຍາກ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງໄດ້ບອກໃຫ້ລູກໆເຊື່ອຟັງແລະສະແດງຄວາມນັບຖືຕໍ່ພໍ່ແມ່ຂອງພວກເຂົາ.

ລູກໆຄວນສະແດງຄວາມຮັກຕໍ່ພໍ່ແມ່ຂອງພວກເຂົາ. ພວກເຂົາຄວນເຊື່ອຟັງແລະນັບຖືພໍ່ແມ່. ພວກເຂົາຍັງຄວນດູແລພໍ່ແມ່ ເມື່ອພວກເພິ່ນເຈັບປ່ວຍ ຫລືເຖົ້າແກ່ລົງແລະບໍ່ສາມາດດູແລຕົນເອງໄດ້.

### *ການສົນທະນາ*

- ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຫວັງໃຫ້ພວກລູກໆເຮັດຫຍັງແດ່?
- ລູກໆຄວນເຮັດແນວໃດກັບພໍ່ແມ່ ເມື່ອພວກເພິ່ນແກ່ຊະລາ?
- ລູກໆຄວນເຮັດແນວໃດເພື່ອຈະໄດ້ເຊື່ອຟັງແລະສະແດງຄວາມນັບຖືຕໍ່ພໍ່ແມ່ຂອງພວກເຂົາ?

## ຄວາມຈຳເປັນທີ່ຈະເຮັດໃຫ້ຄອບຄົວເຂັ້ມແຂງ

ໃນໂລກຂອງພວກເຮົາປັດຈຸບັນນີ້, ມີຫລາຍໆຄົນທີ່ຊົ່ວຮ້າຍກຳລັງພະຍາຍາມຢາກປ່ຽນແນວຄິດກ່ຽວກັບຄອບຄົວ. ໂທລະທັດ, ໜັງ, ແລະວາຣະສານຕ່າງໆສະແດງເຖິງຫລາຍສິ່ງປລາດແລະບໍ່ດີກ່ຽວກັບຊາຍແລະຍິງ ແລະວິທີທີ່ພວກເຂົາຄວນປະພຶດຕໍ່ກັນ. ແນວຄິດທີ່ຊົ່ວຮ້າຍຖືກສອນຜ່ານລາຍການທີ່ອາດເປັນຂອງສນຸກແລະເພີດເພີນດີ. ຄວາມບໍ່ບໍຣິສຸດຖືກສະແດງເປັນສິ່ງທີ່ຕື່ນເຕັ້ນແລະເປັນສິ່ງປາຖນາ. ລູກໆຈະຖືກສະແດງບໍ່ໃຫ້ມີຄວາມນັບຖືຕໍ່ພໍ່ແມ່. ຄອບຄົວທີ່ດີຈະຖືກເຢາະເຢີ້ຍ. ບາງຄັ້ງລູກໆຂອງພວກເຮົາຈະບໍ່ເຫັນໃນໜັງຫລືໃນໂທລະທັດວ່າບ້ານທີ່ດີນີ້ເປັນແນວໃດ.

ພໍ່ແມ່ຄວນພະຍາຍາມທີ່ຈະປ້ອງກັນລູກໆຂອງພວກເຂົາຈາກການເບິ່ງໜັງໜລື ເບິ່ງລາຍການໃນໂທລະທັດທີ່ບໍ່ດີ. ພວກເຂົາຄວນສອນລູກຂອງພວກເຂົາວ່າ ເປັນຫຍັງພວກເຂົາຈຶ່ງບໍ່ຄວນເບິ່ງລາຍການຊົ່ວຮ້າຍແບບນັ້ນ. ສິ່ງສຳຄັນທີ່ສຸດກໍຄື, ພໍ່ແມ່ຄວນເປັນຕົວຢ່າງໃນບ້ານຂອງເຂົາ. ຖ້າລູກໆເຫັນຕົວຢ່າງທີ່ດີແຕ່ລະວັນ ໃນບ້ານ, ພວກເຂົາຈະເປັນລູກທີ່ດີແລະຕໍ່ມາ, ພວກເຂົາກໍຈະເປັນພໍ່ແມ່ທີ່ດີ. ຖ້າພວກເຂົາເຫັນພໍ່ແມ່ຮັກກັນແລະກັນ, ພວກເຂົາກໍຢາກເປັນພໍ່ແມ່ແບບນັ້ນ ເໝືອນກັນ.

### *ການສົນທະນາ*

- ເປັນຫຍັງພວກເຮົາຈຶ່ງຄວນເລືອກຢ່າງລະມັດລະວັງເຖິງສິ່ງທີ່ລູກໆຂອງ ພວກເຮົາຄວນເບິ່ງໃນໂທລະທັດ ໜລືໃນໜັງ?

## ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ພວກເຮົາຊ່ວຍເຫລືອ ເຊິ່ງກັນແລະກັນ

ສະມາຊິກຂອງຄອບຄົວແຕ່ລະຄົນຄວນຮັກແລະຊ່ວຍເຫລືອເຊິ່ງກັນແລະກັນ. ພວກເຮົາຮຽນທີ່ຈະຊ່ວຍເຫລືອຄົນອື່ນໂດຍການຊ່ວຍເຫລືອພໍ່ແມ່ອ້າຍເອື້ອຍນ້ອງ ຂອງພວກເຮົາກ່ອນ. ພວກເຮົາຍັງຄວນຊ່ວຍເຫລືອ ພີ່ນ້ອງຂອງພວກເຮົາເມື່ອ ພວກເຂົາຕ້ອງການ. ພວກເຮົາບໍ່ຄວນຂໍຄວາມຊ່ວຍເຫລືອນຳຄົນອື່ນຖ້າພວກເຮົາ ຍັງສາມາດຊ່ວຍຕົນເອງໄດ້ຢູ່. ຖ້າພວກເຮົາເຮັດແນວນັ້ນ, ພຣະບິດາຜູ້ສະຖິດ ໃນສວັນຂອງພວກເຮົາຈະບໍ່ຊົງພໍພຣະທັຍນຳພວກເຮົາ.

ພຣະເຢຊູຊົງຮັກພວກເຮົາທຸກຄົນ ແລະພຣະອົງຊົງສະເດັດລົງມາສູ່ໂລກ ເພື່ອຊ່ວຍ ເຫລືອພວກເຮົາ. ພຣະອົງຊົງສອນພວກເຮົາໃຫ້ຮັກແລະໃຫ້ຊ່ວຍເຫລືອທຸກໆຄົນ. ເມື່ອພວກເຮົາຮັກຄົນອື່ນເໝືອນດັ່ງພຣະເຢຊູຊົງຮັກພວກເຮົາ, ພວກເຮົາກໍຈະເຮັດ ທຸກສິ່ງທີ່ພວກເຮົາສາມາດເຮັດໄດ້ເພື່ອຊ່ວຍເຫລືອພວກເຂົາ.

ພວກເຮົາບາງຄົນຂໍຄວາມຊ່ວຍເຫລືອຈາກພຣະບິດາຜູ້ສະຖິດໃນສວັນຂອງ ພວກເຮົາໃຫ້ຊ່ວຍເຫລືອຄົນທີ່ຕ້ອງການ ຄວາມຊ່ວຍເຫລືອ. ແຕ່ພວກເຮົາບໍ່ເຮັດ ຫຍັງທີ່ຈະຊ່ວຍເຫລືອພວກເຂົາ. ນີ້ມັນບໍ່ຖືກ. ພວກເຮົາຕ້ອງຈຳໄວ້ວ່າ ພຣະບິດາ

ຜູ້ສະຖິດໃນສະຫວັນຂອງພວກເຮົາຊ່ວຍເຫລືອຄົນອື່ນຜ່ານພວກເຮົາ. ທໍາອິດພວກເຮົາຄວນອະທິຖານ ເພື່ອຄົນທີ່ຕ້ອງການຄວາມຊ່ວຍເຫລືອ ແລ້ວຊ່ວຍເຫລືອພວກເຂົາຕາມຄວາມສາມາດຂອງພວກເຮົາ.

ພວກເຮົາທຸກຄົນຕ້ອງການຄວາມຊ່ວຍເຫລືອຈາກຄົນອື່ນ. ເມື່ອພວກເຮົາເປັນເດັກ, ພໍ່ແມ່ຂອງພວກເຮົາໄດ້ໃຫ້ອາຫານ, ເຄື່ອງນຸ່ງຫົ່ມ, ແລະດູແລພວກເຮົາ. ເມື່ອພວກເຮົາເຕີບໂຕຂຶ້ນ, ຄົນອື່ນໆໄດ້ສອນພວກເຮົາເຖິງສິ່ງ ທີ່ພວກເຮົາຄວນຮູ້ແລະຄວນເຮັດ. ພວກເຮົາຕ້ອງການຄວາມຊ່ວຍເຫລືອຈາກຄົນອື່ນເມື່ອພວກເຮົາເຈັບປ່ວຍ.

ເມື່ອພວກເຮົາຊ່ວຍເຫລືອຄົນອື່ນ, ພວກເຮົາຈະໄດ້ຮັບພອນ. ຄວາມສາມາດທີ່ຈະຮັກຄົນອື່ນທະວີຂຶ້ນ. ພວກເຮົາເປັນຄົນເຫັນແກ່ຕົວນ້ອຍລົງ ແລະບັນຫາຂອງພວກເຮົາຈະເບົາບາງລົງ. ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງໄດ້ຕັສວ່າຄົນທີ່ຕ້ອງການຈະຢູ່ນໍາພຣະອົງອີກຕ້ອງຮັກ ແລະຊ່ວຍເຫລືອລູກໆຂອງພຣະອົງທັງຫມົດ.

### *ການສົນທະນາ*

- ເປັນຫຍັງພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາ ຈຶ່ງຊົງຕ້ອງການແລະຂໍໃຫ້ພວກເຮົາຊ່ວຍເຫລືອຄົນອື່ນ?
- ໃຜໄດ້ຜົນປະໂຫຍດຈາກການຊ່ວຍເຫລືອຂອງພວກເຮົາ?

## *ຂໍ້ອ້າງອີງ*

*ສະມາຊິກໃນຄອບຄົວທຸກໆຄົນມີຄວາມສໍາຄັນ*

- ອົບພະຍົບ ໒໐:໑໒; ເອເຟໂຊ ໖:໑ (ພວກເຮົາຖືກອົບລົມໃຫ້ນັບຖືພໍ່ແມ່ຂອງພວກເຮົາ.)
- ໒ ນີໄຟ ໑:໑໕–໓໒; ແອລມາ ໕໖:໔໒ (ສາສດາໃນພຣະຄັມພີມໍມອນສອນລູກໆຂອງພວກເພິ່ນໃຫ້ເຮັດສິ່ງທີ່ດີ.)
- ໂມໄຊຢາ ໔:໑໔; D&C 68:25–28 (ພໍ່ແມ່ຄວນມີສິ່ງຈໍາເປັນຕໍ່ຊີວິດຂອງລູກໆແລະສອນພວກເຂົາເຖິງສິ່ງທີ່ດີ.)

*ຄວາມຈຳເປັນທີ່ຈະເຮັດໃຫ້ຄອບຄົວເຂັ້ມແຂງ*

- ໒ ຕີໂມທຽວ ໓:໑–໕ (ມັນຈະມີຄວາມຊົ່ວຮ້າຍອັນຍິ່ງໃຫຍ່ໃນຍຸກສຸດທ້າຍ ແລະພວກເຮົາຕ້ອງຕຽມພ້ອມ.)

*ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ພວກເຮົາຊ່ວຍເຫລືອເຊິ່ງກັນແລະກັນ*

- ລູກາ ໒໒:໒໗; ມັດທາຍ ໒໐:໒໖–໒໗; ໂຢຮັນ ໑໓:໑໕–໑໖ (ພຣະເຢຊູຊົງເປັນຕົວຢ່າງຂອງການຮັບໃຊ້ອັນແທ້ຈິງ.)
- ໂກໂລຊາຍ ໓:໑໘–໒໐ (ສະມາຊິກໃນຄອບຄົວມີຫນ້າທີ່ຮັບຜິດຊອບຕໍ່ກັນແລະກັນ.)
- ໂມໄຊຍາ ໒; ໂກໂລຊາຍ ໓:໒໓–໒໔; ມັດທາຍ ໒໕:໓໒–໔໖ (ຄົນຜູ້ທີ່ຮັບໃຊ້ຄົນອື່ນຍັງຮັບໃຊ້ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.)

# ໜ້າທີ່ຮັບຜິດຊອບຂອງພວກເຮົາທີ່ຈະເຜີຍແຜ່ພຣະກິດຕິຄຸນ

*ບົດທີ ໓໑*

---

*ພວກເຮົາສາມາດຊ່ວຍເຫລືອລູກໆຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໃຫ້ໄດ້ຍິນພຣະກິດຕິຄຸນໄດ້ແນວໃດ?*

**ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕ້ອງການໃຫ້ລູກໆຂອງພຣະອົງທຸກຄົນໃຫ້ຮູ້ຈັກພຣະກິດຕິຄຸນ**

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກລູກໆຂອງພຣະອົງທັງໝົດ. ພວກເຮົາແຕ່ລະຄົນສຳຄັນຕໍ່ພຣະອົງ ແລະແຕ່ລະຄົນສາມາດກາຍມາເປັນເໝືອນດັ່ງພຣະອົງໄດ້. ພຣະອົງຊົງຕ້ອງການໃຫ້ພວກເຮົາກັບຄືນໄປຢູ່ນຳພຣະອົງ ແລະເພື່ອຈະມີຄວາມສຸກ ແລະມີຣັສມີພາບແບບພຣະອົງຊົງມີ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງມີແຜນທີ່ຈະຊ່ວຍເຫລືອພວກເຮົາແຕ່ລະຄົນໃຫ້ສາມາດກັບຄືນໄປຢູ່ນຳພຣະອົງ. ແຜນນີ້ເອີ້ນວ່າ ພຣະກິດຕິຄຸນຂອງພຣະເຢຊູຄຣິດ. ເມື່ອພວກເຮົາສຶກສາພຣະກິດຕິຄຸນ, ພວກເຮົາຮຽນຮູ້ວ່າ ພວກເຮົາສຳຄັນເທົ່າໃດ. ພວກເຮົາຮຽນຮູ້ວ່າ ເປັນຫຍັງພວກເຮົາຈຶ່ງມາຢູ່ໃນໂລກນີ້. ພວກເຮົາຍັງຮຽນຮູ້ວ່າ ພວກເຮົາຈະໄປໃສຫລັງຈາກພວກເຮົາຕາຍໄປ ແລະພວກເຮົາຕ້ອງເຮັດແນວໃດເພື່ອຈະສາມາດກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ພຣະເຢຊູຄຣິສຊົງເປັນອ້າຍທາງວິນຍານຂອງພວກເຮົາ. ພຣະອົງຊົງເປັນລູກຄົນທຳອິດຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພຣະອົງຊົງສະເດັດລົງມາ



*ພຣະເຢຊູຊົງບັນຊາອັຄສາວົກຂອງພຣະອົງໃຫ້ສອນພຣະກິດຕິຄຸນໃຫ້ແກ່ທຸກຄົນ ໃນແຜ່ນດິນໂລກ.*

ສູ່ໂລກ ໃນຖານະເປັນພຣະບຸດອົງດຽວໃນເນື້ອໜັງຂອງພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາ. ພຣະອົງຊົງຮັກພວກເຮົາຫລາຍທີ່ສຸດຈົນວ່າ ພຣະອົງຊົງໄດ້ທໍຣະມານແລະສິ້ນພຣະຊົນເພື່ອພວກເຮົາ. ພຣະອົງຊົງສອນພວກເຮົາເຖິງສິ່ງທີ່ພຣະບິດາຜູ້ສະຖິດໃນສະຫວັນຊົງຕ້ອງການໃຫ້ພວກເຮົາຮູ້ແລະເຮັດ. ພຣະອົງຊົງຈັດຕັ້ງສາສນາຈັກຂຶ້ນເພື່ອຊ່ວຍພວກເຮົາ. ພຣະອົງຊົງມອບຖານະປະໂຣຫິດໃຫ້ແກ່ຜູ້ຊາຍຢູ່ໃນໂລກເພື່ອວ່າພວກເຂົາຈະສາມາດເຮັດວຽກງານຂອງພຣະອົງໄດ້.

ສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍເປັນສາສນາຈັກທີ່ແທ້ຈິງແຫ່ງດຽວເທົ່ານັ້ນ ທີ່ມີຖານະປະໂຣຫິດຂອງພຣະບິດາຜູ້ສະຖິດໃນສະຫວັນແລະມີແຜນທີ່ແທ້ຈິງຂອງພຣະອົງ. ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງຕ້ອງການໃຫ້ທຸກຄົນຮຽນກ່ຽວກັບແຜນຂອງພຣະອົງ ແລະໃຫ້ຍອມຮັບເອົາມັນ. ພິທີການຂອງສາສນາຈັກທີ່ແທ້ຈິງ ເປັນສິ່ງຈຳເປັນສຳລັບພວກເຮົາທີ່ຈະກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາ.

ພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາຊົງໄດ້ບອກໃຫ້ສະມາຊິກທຸກຄົນໃນສາສນາຈັກຂອງພຣະອົງໃຫ້ບອກຄົນອື່ນກ່ຽວກັບພຣະກິດຕິຄຸນ. ສາສດາທຸກຄົນນັບຕັ້ງແຕ່ອາດາມໄດ້ໃຊ້ເວລາຂອງຕົນ ເພື່ອສອນພຣະກິດຕິຄຸນໃຫ້ແກ່ຄົນອື່ນ. ພວກທ່ານໄດ້ສອນພວກເຮົາວ່າ ສະມາຊິກທຸກຄົນໃນສາສນາຈັກຄວນເປັນຜູ້ສອນສາສນາ. ນີ້ເປັນສ່ວນນຶ່ງຂອງຄຳສັນຍາທີ່ພວກເຮົາເຮັດ ເມື່ອພວກເຮົາຮັບບັບຕິສະມາ. ພວກເຮົາໄດ້ສັນຍາວ່າ ຈະບອກຄົນອື່ນໃຫ້ຮູ້ກ່ຽວກັບພຣະເຢຊູທຸກຄັ້ງທີ່ພວກເຮົາມີໂອກາດ.

### *ການສົນທະນາ*

- ເປັນຫຍັງທຸກຄົນຄວນມີໂອກາດທີ່ຈະໄດ້ຍິນພຣະກິດຕິຄຸນ?
- ແມ່ນໃຜມີໜ້າທີ່ຮັບຜິດຊອບທີ່ຈະສອນພຣະກິດຕິຄຸນໃຫ້ແກ່ຄົນອື່ນ?

ແຕ່ລະຄອບຄົວໃນສາສນາຈັກຄວນເຂົ້າໃຈເຖິງຄວາມສຳຄັນຂອງການສອນພຣະກິດຕິຄຸນ. ພວກເຮົາຮູ້ເຖິງຄວາມສຳຄັນຂອງແຜນພຣະກິດຕິຄຸນ ແລ້ວພວກເຮົາຄວນມີຄວາມເປັນຫ່ວງເປັນໄຍນຳຄົນອື່ນ ແລະເຮັດສຸດຄວາມສາມາດທີ່ຈະຊ່ວຍເຫລືອພວກເຂົາໃຫ້ເຂົ້າໃຈແຜນຂອງພຣະບິດາຜູ້ສະຖິດໃນສະຫວັນຂອງພວກເຮົາ.

ສະມາຊິກໃນຄອບຄົວສາມາດເຮັດໄດ້ຫລາຍສິ່ງທີ່ຈະຊ່ວຍຄົນອື່ນຮຽນກ່ຽວກັບພຣະກິດຕິຄຸນ. ບາງສິ່ງໃນຈຳນວນນັ້ນແມ່ນ:

໑. ເຮັດສິ່ງດີໃຫ້ແກ່ຄົນອື່ນ.
໒. ບອກຄົນອື່ນວ່າ ທ່ານມີຄວາມສຸກເພາະທ່ານເຊື່ອຟັງການສອນຂອງພຣະກິດຕິຄຸນ.
໓. ອະທິບາຍພຣະກິດຕິຄຸນຕໍ່ຫມູ່ເພື່ອນແລະເພື່ອນບ້ານ. ເຊີນພວກເຂົາໃຫ້ໄປຮ່ວມກອງປະຊຸມໂບດນຳທ່ານ.
໔. ເຊີນຄົນໃຫ້ມາບ້ານຂອງທ່ານເພື່ອຮ່ວມການສັງສັນໃນຄອບຄົວນຳທ່ານຫລືເມື່ອຜູ້ສອນສາສນາຈະສາມາດສອນພວກເຂົາ.
໕. ມອບຊື່ແລະທີ່ຢູ່ຂອງພີ່ນ້ອງແລະຫມູ່ເພື່ອນຂອງພວກທ່ານ ຜູ້ອາດຢາກຮຽນກ່ຽວກັບພຣະກິດຕິຄຸນໃຫ້ຜູ້ສອນສາສນາ.
໖. ສອນລູກໆເຖິງຄວາມສຳຄັນຂອງການຮັບໃຊ້ເປັນຜູ້ສອນສາສນາ. ຊ່ວຍພວກເຂົາເກັບກຳເງິນໄວ້ ເພື່ອໄປເປັນຜູ້ສອນສາສນາ.
໗. ຈ່າຍສ່ວນສິບຂອງທ່ານ.
໘. ບໍຣິຈາກເງິນໃຫ້ໃຊ້ຈ່າຍໃນງານຜູ້ສອນສາສນາ.

*ການສົນທະນາ*

- ຄິດເຖິງວິທີໃດວິທີນຶ່ງທີ່ຈະບອກຄົນໃດຄົນນຶ່ງຜູ້ທີ່ບໍ່ເປັນສະມາຊິກຂອງສາສນາຈັກເທື່ອກ່ຽວກັບພຣະກິດຕິຄຸນ.
- ຄອບຄົວຂອງທ່ານສາມາດເຮັດຫຍັງໄດ້ແດ່ ເພື່ອຈະຊ່ວຍຄົນອື່ນໃຫ້ຮຽນຮູ້ກ່ຽວກັບພຣະກິດຕິຄຸນ?

## ຄອບຄົວຂອງທ່ານສາມາດເປັນສ່ວນສຳຄັນຂອງວຽກງານສອນສາສນາໃນສາສນາຈັກ

ສາສນາຈັກຂອງພວກເຮົາໄດ້ສົ່ງຜູ້ສອນສາສນາເປັນຈຳນວນພັນໆໄປສອນພຣະກິດຕິຄຸນໃນຫລາຍໆປະເທດ. ສ່ວນຫລາຍພວກເຂົາຈະເປັນຊາວຫນຸ່ມອາຍຸລະຫວ່າງ

໑໙ ຫາ ໒໕ ປີ. ພ້ອມນີ້ຍັງມີຜູ້ສອນສາສນາອາວຸໂສນຳອີກ. ພວກເຂົາຊື່ສັດ, ເປັນສະມາຊິກທີ່ເຊື່ອຟັງຂອງສາສນາຈັກ ຜູ້ມີຄວາມປາຖນາທີ່ຈະຮັບໃຊ້ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ.

ສາສນາຈັກຍັງຕ້ອງການຜູ້ສອນສາສນາຫລາຍໆຄົນຢູ່. ຄອບຄົວຂອງທ່ານສາມາດມີສ່ວນຮ່ວມໃນວຽກງານອັນສຳຄັນນີ້ໂດຍຕຽມສະມາຊິກໃນຄອບຄົວໃຫ້ເປັນຜູ້ສອນສາສນາ. ພໍ່ແມ່ສາມາດຊ່ວຍລູກໆຂອງຕົນໃຫ້ມີປະຈັກພະຍານກ່ຽວກັບພຣະກິດຕິຄຸນແລະຮຽນເຖິງວິທີທີ່ຈະອະທິບາຍພຣະກິດຕິຄຸນໃຫ້ແກ່ຄົນອື່ນ. ພວກເຂົາຍັງສາມາດສອນລູກໆຂອງພວກເຂົາໃຫ້ຮັກຄົນທຸກໆປະເພດ. ພໍ່ແມ່ຄວນຕຽມຕົວເອງເພື່ອຈະໄປເປັນຜູ້ສອນສາສນານຳຫລັງຈາກລູກໆຂອງເຂົາເຈົ້າໃຫຍ່ຫມົດແລ້ວ.

ຫລາຍໆຄົນຍັງບໍ່ມີໂອກາດທີ່ຈະໄດ້ຍິນພຣະກິດຕິຄຸນເທື່ອ. ບາງຄົນອາສັຍຢູ່ໃນປະເທດທີ່ຜູ້ສອນສາສນາ ເຂົ້າໄປສອນໄດ້ເທື່ອ. ຄົນພວກນີ້ຄວນມີໂອກາດໄດ້ຍິນແລະຮັບພຣະກິດຕິຄຸນຄືກັນ. ພຣະບິດາຜູ້ສະຖິດໃນສວັນ ຂອງພວກເຮົາຈະຫາທາງເພື່ອສິ່ງນີ້ຈະສຳເຣັດໄດ້. ພວກເຮົາຄວນອະທິຖານຫາພຣະອົງ ເພື່ອວ່າຜູ້ນຳຂອງປະເທດດັ່ງກ່າວນີ້ ຈະອະນຸຍາດໃຫ້ຜູ້ສອນສາສນາເຂົ້າໄປແລະສອນຄົນໃນນັ້ນ.

### *ການສົນທະນາ*

- ຄອບຄົວໃນສາສນາຈັກສາມາດເຮັດໃຫ້ຫນ້າທີ່ຂອງພວກເຂົາສຳເຣັດທີ່ຈະສອນຄົນອື່ນກ່ຽວກັບພຣະກິດຕິຄຸນໄດ້ແນວໃດ?
- ເປັນຫຍັງພວກເຮົາຈຶ່ງຕ້ອງການຜູ້ສອນສາສນາຫລາຍຕື່ມອີກໃນປັດຈຸບັນນີ້?

### *ພອນອັນປະເສີດມາຫາຄົນທີ່ບອກຄົນອື່ນກ່ຽວກັບພຣະກິດຕິຄຸນ*

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງໃຫ້ພອນພວກເຮົາ ເມື່ອພວກເຮົາບອກຄົນອື່ນກ່ຽວກັບພຣະກິດຕິຄຸນ. ພຣະອົງຈະຊົງໃຫ້ພອນແກ່ພວກເຮົາສຳລັບການເຊື່ອຟັງພຣະບັນຍັດຂອງພຣະອົງ ແລະຕໍ່ການນຳເອົາຄວາມສຸກມາສູ່ຄົນທີ່ຮັບເອົາພຣະກິດຕິຄຸນ. ພຣະອົງຊົງບອກພວກເຮົາວ່າ ພວກເຮົາຈະມີຄວາມສຸກ ເມື່ອພວກເຮົາຊ່ວຍເຫລືອ ແມ່ນແຕ່ລູກຂອງພຣະອົງຄົນດຽວໃຫ້ຮຽນຮູ້ເຖິງພຣະກິດຕິຄຸນ

ແລະກັບຄືນໄປຫາພຣະອົງ. ພວກເຮົາຈະມີຄວາມສຸກຫລາຍຂຶ້ນຖ້າພວກເຮົາໄດ້ຊ່ວຍເຫລືອຫລາຍຄົນໃຫ້ກັບຄືນໄປຫາພຣະອົງ.

## *ການສົນທະນາ*

- ພອນທີ່ມາຈາກການເຜີຍແຜ່ພຣະກິດຕິຄຸນຕໍ່ຄົນອື່ນມີຫຍັງແດ່?
- ທ່ານເຄີຍໄດ້ຮັບພອນເຫລົ່ານີ້ບໍ່?

## *ຂໍ້ອ້າງອີງ*

*ພຣະບິດາຜູ້ສະຖິດໃນສະວັນຂອງພວກເຮົາຊົງຕ້ອງການໃຫ້ລູກໆຂອງພຣະອົງທຸກຄົນໃຫ້ຮູ້ຈັກພຣະກິດຕິຄຸນ*

- ມັດທາຍ ໒໔:໑໔ (ພຣະກິດຕິຄຸນຕ້ອງຖືກເຜີຍແຜ່ໃຫ້ແກ່ທຸກໆປະເທດຊາດ.)
- ມາຣະໂກ ໑໖:໑໕–໑໖ (ພຣະເຢຊູຊົງບອກໃຫ້ອັຄສາວົກຂອງພຣະອົງໃຫ້ສອນພຣະກິດຕິຄຸນໃຫ້ແກ່ທຸກໆຄົນ.)
- ກິຈການ ໕:໔໒ (ອັຄສາວົກໃນສະໄໝໂບຮານສອນພຣະກິດຕິຄຸນໃຫ້ທຸກຄົນທີ່ພວກເພິ່ນສາມາດສອນ.)

*ຄອບຄົວຂອງທ່ານສາມາດເປັນສ່ວນສຳຄັນຂອງວຽກງານສອນສາສນາໃນສາສນາຈັກ*

- ໑ ຕີໂມທຽວ ໔:໑໒ (ຄົນໜຸ່ມສາມາດເປັນຕົວຢ່າງໃຫ້ແກ່ຄົນອື່ນ.)
- ໂມໄຊຢາ ໔:໑໕ (ສອນລູກໆຂອງພວກທ່ານໃຫ້ຮັກເຊິ່ງກັນແລະກັນ.)

*ພອນອັນປະເສີດມາຫາຄົນທີ່ບອກຄົນອື່ນກ່ຽວກັບພຣະກິດຕິຄຸນ*

- D&C 18:15–16 (ພວກເຮົາຈະມີຄວາມສຸກຢ່າງລົ້ນເຫລືອນຳຄົນທີ່ພວກເຮົາຊ່ວຍໃຫ້ຍອມຮັບເອົາພຣະກິດຕິຄຸນ.)



*ພຣະວິຫານທີ່ເມືອງພອດແລນ, ຣັຖອໍຣິເກິນ, ສະຫະຣັດອະເມຣິກາ.*

# ການຢູ່ນຳກັນເປັນຄອບຄົວຕລອດໄປ

*ບົດທີ ໒໔*

---

*ຄອບຄົວສາມາດຢູ່ນຳກັນຕລອດໄປ ແມ່ນແຕ່ຫລັງຈາກຊີວິດໃນໂລກນີ້ແລ້ວໄດ້ຢ່າງໃດ?*

**ພຣະຜູ້ເປັນເຈົ້າຊົງວາງແຜນໃຫ້ຄອບຄົວຢູ່ນຳກັນຕລອດໄປ**

ຄອບຄົວເປັນກຸ່ມສຳຄັນທີ່ສຸດຂອງຄົນຢູ່ໃນໂລກນີ້. ໂຄງຮ່າງຄອບຄົວຢູ່ໃນໂລກເປັນໂຄງຮ່າງດຽວກັນກັບຄອບຄົວໃນສວັນ. ພວກເຮົາເປັນອ້າຍເອື້ອຍນ້ອງກັນທັງຫມົດໃນສວັນ. ພວກເຮົາເປັນລູກໆຂອງພຣະຜູ້ເປັນເຈົ້າ. ພຣະຜູ້ເປັນເຈົ້າຊົງເປັນຜູ້ນຳຂອງຄອບຄົວສວັນຂອງພວກເຮົາ. ພວກເຮົາໄດ້ຮັບຄວາມຮັກ ແລະການນຳພາຈາກບິດາມານດາສວັນຂອງພວກເຮົາ.

ພຣະຜູ້ເປັນເຈົ້າຊົງສົ່ງພວກເຮົາແຕ່ລະຄົນໃຫ້ມາຫາຄອບຄົວໃນໂລກນີ້. ພຣະອົງຊົງມອບຫນ້າທີ່ຮັບ ຜິດຊອບໃຫ້ແກ່ພໍ່ແມ່ເພື່ອຈະໄດ້ດູແລລູກໆຂອງພຣະອົງໃນຂະນະທີ່ພວກເຂົາຢູ່ໃນໂລກນີ້. ພໍ່ແມ່ຄວນຮັກລູກໆຂອງຕົນແລະໃຫ້ອາຫານ, ໃຫ້ເຄື່ອງນຸ່ງຫົ່ມ ແລະໃຫ້ບ້ານຢູ່ອາສັຍແກ່ພວກເຂົາ. ພວກເຂົາຄວນສອນລູກໆຂອງພວກເຂົາກ່ຽວກັບພຣະຜູ້ເປັນເຈົ້າ ແລະວິທີທີ່ພວກເຂົາຈະກາຍມາເປັນເຫມືອນດັ່ງພຣະອົງໄດ້.

ພຣະຜູ້ເປັນເຈົ້າຊົງເຮັດໃຫ້ເປັນໄປໄດ້ທີ່ຄອບຄົວຈະຢູ່ນຳກັນຕລອດໄປ. ພຣະອົງຊົງໄດ້ມອບອຳນາດໃຫ້ແກ່ຜູ້ນຳຂອງສາສນາຈັກຂອງພຣະອົງ ທີ່ຈະຜະນຶກຄອບຄົວເຂົ້າກັນຕລອດໄປ. ການຜະນຶກນີ້ເອີ້ນວ່າ ການຜະນຶກຄອບຄົວ. ການຜະນຶກນີ້

ສາມາດເຮັດໄດ້ໃນພຣະວິຫານເທົ່ານັ້ນ. ພຣະວິຫານເປັນຕຶກສັກສິດທີ່ສະມາຊິກຂອງສາສນາຈັກຜູ້ທີ່ຊື່ສັດເທົ່ານັ້ນສາມາດເຂົ້າໄປໄດ້. ເມື່ອຜູ້ຊາຍແລະຜູ້ຍິງໄດ້ຜະນຶກເຂົ້າກັນໃນພຣະວິຫານ ໂດຍຜູ້ທີ່ມີອຳນາດຖານະປະໂຣຫິດແລະມີອຳນາດພິເສດທີ່ຈະຜະນຶກ, ການແຕ່ງງານຂອງພວກເຂົາຈະບໍ່ໄດ້ສິ້ນສຸດລົງເມື່ອພວກເຂົາຕາຍໄປ. ການແຕ່ງງານຂອງພວກເຂົາຈະຍືນຍົງຕລອດໄປ ຖ້າພວກເຂົາຫາກຮັກສາຄຳສັນຍາທີ່ພວກເຂົາເຮັດໄວ້ໃນພຣະວິຫານ. ນີ້ເອີ້ນວ່າ ການແຕ່ງງານຊົ່ວນິຣັນດອນ.

ຖ້າຊາຍແລະຍິງບໍ່ໄດ້ຜະນຶກເຂົ້າກັນໃນພຣະວິຫານ, ການແຕ່ງງານຈະສິ້ນສຸດລົງເມື່ອສາມີຫລືພັລຍາຕາຍໄປ. ຖ້າພວກເຮົາຜະນຶກເຂົ້າກັນໃນພຣະວິຫານ, ແລະຖ້າຫາກພວກເຮົາຕິດຕາມພຣະເຢຊູຄຣິສຢ່າງຊື່ສັດຈົນເຖິງທີ່ສຸດຂອງຊີວິດຂອງພວກເຮົາ, ຄອບຄົວຂອງພວກເຮົາຈະສາມາດຢູ່ນຳກັນຕລອດໄປ.

ຄູ່ແຕ່ງງານສາມາດໄປພຣະວິຫານ ເພື່ອຜະນຶກເຂົ້າກັນ ຖ້າພວກເຂົາເປັນຜູ້ຕິດຕາມທີ່ຊື່ສັດຂອງພຣະເຢຊູ. ໃນທີ່ນັ້ນ, ຜູ້ດຳລົງຖານະປະໂຣຫິດທີ່ມີອຳນາດພິເສດສາມາດຜະນຶກພວກເຂົາເຂົ້າກັນ. ເພິ່ນຍັງສາມາດຜະນຶກລູກໆຂອງເຂົາເຈົ້າເຂົ້ານຳອີກ. ຫລັງຈາກພວກເຂົາໄດ້ຜະນຶກເຂົ້າກັນແລ້ວ, ພວກເຂົາສາມາດຢູ່ນຳກັນຕລອດໄປ ແບບດຽວກັບວ່າ ພວກເຂົາໄດ້ແຕ່ງງານກັນໃນພຣະວິຫານຕັ້ງແຕ່ຕົ້ນ.

ພຣະຜູ້ເປັນເຈົ້າຊົງຕ້ອງການໃຫ້ລູກໆຂອງພຣະອົງທັງຫມົດໃຫ້ວາງແຜນທີ່ຈະຜະນຶກເຂົ້າກັນໃນພຣະວິຫານ ແລະທີ່ຈະລ້ຽງດູຄອບຄົວໃຫ້ເປັນຄອບຄົວທີ່ເຊື່ອຟັງ. ພໍ່ແມ່ຄວນນຳພາລູກໆຂອງພວກເຂົາ ເພື່ອວ່າພວກເຂົາຈະໄດ້ຕຽມພ້ອມທີ່ຈະໄປພຣະວິຫານທີ່ຈະຜະນຶກເຂົ້າກັນ ເມື່ອພວກເຂົາແຕ່ງງານ. ຖ້າຜູ້ຊາຍແລະຜູ້ຍິງໄດ້ຜະນຶກເຂົ້າກັນໃນພຣະວິຫານແລ້ວ ລູກໆທີ່ເກີດນຳພວກເຂົາຫລັງຈາກການຜະນຶກຈະຖືກຜະນຶກເຂົ້າກັບພວກເຂົາໂດຍຕົງ.

### *ການສົນທະນາ*

- ພຣະຜູ້ເປັນເຈົ້າຊົງເຮັດໃຫ້ເປັນໄປໄດ້ແນວໃດສຳລັບພວກເຮົາທີ່ຈະສາມາດຢູ່ນຳຄອບຄົວຂອງພວກເຮົາຕລອດໄປ?
- ເປັນຫຍັງມັນຈຶ່ງສຳຄັນທີ່ພວກເຮົາຕ້ອງໄດ້ຜະນຶກເຂົ້າກັນໃນພຣະວິຫານ?

**ມີແຕ່ສະມາຊິກທີ່ຊື່ສັດຂອງສາສນາຈັກເທົ່ານັ້ນ ຈະສາມາດເຂົ້າໄປໃນພຣະວິຫານ**

ພຣະວິຫານເປັນສະຖານທີ່ສັກສິດ. ມີແຕ່ສະມາຊິກຂອງສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍ ຜູ້ທີ່ສະແດງສັດທາໃນພຣະເຢຊູຄຣິສ ໂດຍການເຊື່ອຟັງພຣະບັນຍັດຂອງພຣະອົງເທົ່ານັ້ນ ທີ່ຈະໄດ້ຮັບອະນຸຍາດເຂົ້າໄປໃນພຣະວິຫານ. ຄົນເຫລົ່ານີ້ມີຄ່າຄວນທີ່ຈະເຂົ້າໄປໃນພຣະວິຫານ. ກ່ອນຜູ້ໃດຜູ້ນຶ່ງຈະສາມາດເຂົ້າໄປໃນພຣະວິຫານໄດ້, ເຂົາຕ້ອງເປັນສະມາຊິກຂອງສາສນາຈັກຢ່າງໜ້ອຍນຶ່ງປີ. ຜູ້ຊາຍຕ້ອງໄດ້ຮັບຖານະປະໂຣຫິດແຫ່ງເມັນຄີເຊເດັກເສັຽກ່ອນ.

ຊາຍແລະຍິງທຸກຄົນຕ້ອງໄດ້ເວົ້ານຳອະທິການຫລືປະທານສາຂາເສັຽກ່ອນຖ້າຢາກໄປພຣະວິຫານ ເພື່ອເບິ່ງວ່າພວກເຂົາມີຄ່າຄວນຫລືບໍ່. ຖ້າອະທິການຫລືປະທານສາຂາພົບວ່າ ຄົນນັ້ນມີຄ່າຄວນ, ທ່ານຈະເອົາໃບຫນັງສືທີ່ທ່ານເຊັນໃຫ້ ໃບນັ້ນເອີ້ນວ່າ ໃບຮັບຮອງເຂົ້າພຣະວິຫານ. ແລ້ວສະມາຊິກໃນຝ່າຍປະທານສະເຕກຫລືປະທານຄະນະເຜີຍແຜ່ຍັງຕ້ອງສຳພາດຄົນນັ້ນອີກ. ທ່ານຈະຕ້ອງເຊັນໃບຮັບຮອງເຂົ້າພຣະວິຫານຄືກັນ ຖ້າຫາກທ່ານພົບວ່າ ຄົນນັ້ນມີຄ່າຄວນ ແລ້ວຄົນນັ້ນຕ້ອງເອົາໃບຮັບຮອງເຂົ້າພຣະວິຫານໄປພຣະວິຫານນຳ ເພື່ອຈະໄດ້ເຂົ້າໄປໃນພຣະວິຫານໄດ້.

ຄຳຖາມຕໍ່ໄປນີ້ເປັນຄຳຖາມທີ່ຄ້າຍຄືຄຳຖາມທີ່ອະທິການຫລືປະທານສາຂາຈະຖາມເພື່ອຈະຮູ້ວ່າ ສະມາຊິກຂອງສາສນາຈັກມີຄ່າຄວນທີ່ຈະໄປພຣະວິຫານຫລືບໍ່.

໑. ທ່ານເຊື່ອໃນພຣະຜູ້ເປັນເຈົ້າ, ເຊື່ອໃນພຣະບຸດຂອງພຣະອົງ ພຣະເຢຊູຄຣິສ, ແລະພຣະວິນຍານບໍຣິສຸດບໍ່?
໒. ທ່ານເຄີຍກະທຳບາບທີ່ຮ້າຍແຮງແລະຍັງບໍ່ທັນໄດ້ສາລະພາບຕໍ່ຜູ້ນຳຖານະປະໂຣຫິດທີ່ຖືກຕ້ອງເທື່ອບໍ່?
໓. ທ່ານຮັບເອົາປະທານຂອງສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍເປັນສາສດາ, ຜູ້ພະຍາກອນ ແລະຜູ້ເປີດເຜີຍບໍ່? ທ່ານຮັບເອົາເພິ່ນວ່າເປັນຄົນດຽວໃນໂລກທີ່ສາມາດມີອຳນາດທີ່ຈະໃຊ້ຂໍກະແຈຖານະປະໂຣຫິດທັງຫມົດບໍ່?
໔. ທ່ານຈ່າຍນຶ່ງສ່ວນສິບຂອງລາຍໄດ້ທັງຫມົດໃຫ້ແກ່ສາສນາຈັກບໍ່?

໕. ທ່ານຮັກສາກົດພຣະວາຈາແຫ່ງປັນຍາບໍ່?
໖. ທ່ານພະຍາຍາມຢ່າງເຕັມສ່ວນທີ່ຈະເປັນຄົນຊື່ສັດກັບຄົນອື່ນບໍ່?
໗. ທ່ານພະຍາຍາມຢ່າງຂະຫຍັນບໍ່ທີ່ຈະເຮັດພາລະຂອງທ່ານໃນສາສນາຈັກ ໂດຍການໄປໂບດ ແລະ ໂດຍການເຊື່ອຟັງພຣະບັນຍັດບໍ່?
໘. ທ່ານຮັກສາກົດພົມມະຈັນບໍ່?

ການເຂົ້າພຣະວິຫານເປັນສິດທິພິເສດ. ພວກເຮົາຕ້ອງມີຄ່າຄວນແລະເຕັມໃຈທີ່ຈະຮັກສາຄຳສັນຍາທີ່ສັກສິດ ທີ່ພວກເຮົາເຮັດນຳພຣະຜູ້ເປັນເຈົ້າໃນພຣະວິຫານ. ພວກເຮົາຕ້ອງຈື່ຈຳວ່າ ການຜະນຶກຊົ່ວນິຣັນດອນໃນພຣະວິຫານເປັນສິ່ງສັກສິດ. ມັນເປັນເສັ້ນທາງດຽວທີ່ພວກເຮົາສາມາດຢູ່ນຳກັນເປັນຄອບຄົວຕລອດໄປໄດ້. ມັນເປັນທາງດຽວທີ່ຈະຮັບພອນທັງຫມົດຂອງພຣະຜູ້ເປັນເຈົ້າທີ່ມີໄວ້ໃຫ້ແກ່ພວກເຮົາ. ມັນເປັນສິ່ງສຳຄັນສຳລັບຄວາມສຸກນິຣັນດອນຂອງພວກເຮົາ ສະນັ້ນພວກເຮົາຈຶ່ງພະຍາຍາມທີ່ຈະໄປພຣະວິຫານ ເພື່ອຈະໄດ້ຜະນຶກເຂົ້າກັນ.

### *ການສົນທະນາ*

- ແມ່ນໃຜສາມາດເຂົ້າໄປໃນພຣະວິຫານ?
- ຜູ້ຄົນຕ້ອງເຮັດສິ່ງໃດແດ່ທີ່ຈະມີຄ່າຄວນທີ່ຈະເຂົ້າໄປໃນພຣະວິຫານ?
- ເປັນຫຍັງມັນຈຶ່ງສຳຄັນທີ່ພວກເຮົາຄວນໄປພຣະວິຫານແລະຜະນຶກເຂົ້າກັນ?

## ການຕຽມຄອບຄົວຂອງທ່ານໃຫ້ຢູ່ນຳກັນຕລອດໄປ

ການຜະນຶກເຂົ້າກັນໃນພຣະວິຫານເຮັດໃຫ້ເປັນໄປໄດ້ສຳລັບພວກເຮົາທີ່ຈະຢູ່ນຳກັນຕລອດໄປເປັນຄອບຄົວ, ແຕ່ມັນມີສິ່ງອື່ນທີ່ພວກເຮົາຕ້ອງເຮັດກ່ອນພວກເຮົາຈະໄດ້ຮັບພອນອັນຍິ່ງໃຫຍ່ນີ້. ພວກເຮົາຕ້ອງຕິດຕາມພຣະເຢຊູຢ່າງຊື່ສັດສເມີ. ພວກເຮົາຕ້ອງຮັກສາຄຳສັນຍາທີ່ພວກເຮົາເຮັດໃນພຣະວິຫານ. ພວກເຮົາຕ້ອງຮຽນທີ່ຈະເປັນສະມາຊິກໃນຄອບຄົວທີ່ດີ, ຮັກແລະຮັບໃຊ້ເຊິ່ງກັນແລະກັນ. ພວກເຮົາຕ້ອງອະທິຖານຫາພຣະບິດາຜູ້ສະຖິດໃນສວັນ ເພື່ອວ່າພຣະວິນຍານບໍຣິສຸດຈະຊ່ວຍເຫລືອພວກເຮົາເລືອກເຮັດສິ່ງທີ່ຖືກຕ້ອງບໍ່ວ່າແມ່ນຫຍັງກໍຕາມທີ່ພວກເຮົາເຮັດ. ພວກເຮົາຄວນພະຍາຍາມສເມີທີ່ຈະຊ່ວຍເຫລືອຄອບຄົວຂອງພວກເຮົາໃຫ້ມີຄ່າຄວນທີ່ຈະຢູ່ນຳພຣະຜູ້ເປັນເຈົ້າ.

*ການສົນທະນາ*

- ນອກຈາກໄດ້ຜະນຶກເຂົ້າກັນໃນພຣະວິຫານແລ້ວ, ຄອບຄົວຍັງຕ້ອງເຮັດແນວໃດແດ່ທີ່ຈະສາມາດຢູ່ນຳກັນຕລອດໄປ?

## ພຣະຜູ້ເປັນເຈົ້າຊົງເຮັດໃຫ້ມັນເປັນໄປໄດ້ສຳລັບພວກເຮົາທີ່ຈະເຮັດໃຫ້ບັນພະບຸຣຸດຂອງພວກເຮົາ ໄດ້ຮັບຄວາມລອດ

ລູກໆຂອງພຣະຜູ້ເປັນເຈົ້າເປັນຈຳນວນລ້ານໆໄດ້ເສັຽຊີວິດໄປໂດຍບໍ່ໄດ້ຍິນກ່ຽວກັບພຣະກິດຕິຄຸນ. ພວກເຂົາບໍ່ໄດ້ຮັບພິທີການທີ່ຈຳເປັນເພື່ອຈະໄດ້ຮັບການອະພັຍໂທດຈາກບາບ ແລະເພື່ອທີ່ຈະກັບຄືນໄປຢູ່ນຳພຣະຜູ້ເປັນເຈົ້າອີກ. ພຣະຜູ້ເປັນເຈົ້າຊົງຮັກລູກໆທັງຫມົດຂອງພຣະອົງ ແລະຊົງຕ້ອງການໃຫ້ພວກເຂົາກັບຄືນໄປຫາພຣະອົງ. ສະນັ້ນພຣະອົງຈຶ່ງຊົງໄດ້ຕຽມທາງໄວ້ເພື່ອໃຫ້ພວກເຂົາໄດ້ຮັບພິທີການຂອງພຣະກິດຕິຄຸນ. ວຽກງານເຫລົ່ານີ້ຕ້ອງເຮັດໃນພຣະວິຫານ.

ພິທີການບາງຢ່າງທີ່ໄດ້ເຮັດໃນພຣະວິຫານເພື່ອຜູ້ທີ່ໄດ້ຕາຍໄປແລ້ວຄື ບັບຕິສະມາ, ການມອບຂອງປະທານແຫ່ງພຣະວິນຍານບໍຣິສຸດ, ແລະການຜະນຶກຄອບຄົວເຂົ້າກັນຊົ່ວນິຣັນດອນ. ຍ້ອນວ່າພິທີການເຫລົ່ານີ້ຈຳເປັນຕໍ່ທຸກຄົນທີ່ຕ້ອງການຢາກຈະໄປຢູ່ນຳພຣະຜູ້ເປັນເຈົ້າອີກ, ພວກເຮົາຈຶ່ງສາມາດເຮັດວຽກງານນີ້ ເພື່ອບັນພະບຸຣຸດຂອງພວກເຮົາໄດ້.

*ການສົນທະນາ*

- ຄົນທີ່ຕາຍໄປໂດຍບໍ່ມີໂອກາດໄດ້ຍິນພຣະກິດຕິຄຸນຈະສາມາດຮັບພິທີການທີ່ຈຳເປັນເພື່ອຈະກັບຄືນໄປຫາພຣະຜູ້ເປັນເຈົ້າໄດ້ແນວໃດ?
- ແມ່ນໃຜມີຫນ້າທີ່ຮັບຜິດຊອບເພື່ອເບິ່ງວ່າ ພິທີການທີ່ຈຳເປັນຖືກປະກອບໃຫ້ແກ່ຄົນທີ່ໄດ້ຕາຍໄປແລ້ວ?

## ຄົນທີ່ມີຊີວິດຢູ່ຈະປະກອບພິທີການແທນຄົນທີ່ຕາຍໄປແລ້ວ

ມັນມີບາງສິ່ງທີ່ພວກເຮົາສາມາດເຮັດໄດ້ ເພື່ອວ່າພິທີການຈະຖືກປະກອບເພື່ອພີ່ນ້ອງທີ່ຕາຍໄປແລ້ວຂອງພວກເຮົາ. ພວກເຮົາຕ້ອງຮູ້ວ່າ ພວກເຂົາແມ່ນໃຜໂດຍມີຊື່ແລະວັນເກີດແລະບ່ອນເກີດແລະວັນຕາຍຂອງເຂົາເຈົ້າ. ຖ້າພວກເຮົາ

ບໍ່ສາມາດຄົ້ນຫາບັນທຶກນີ້ໄດ້ ພວກເຮົາກໍຍັງຄວນຄົ້ນຫາລາຍລະອຽດກ່ຽວກັບຄອບຄົວຂອງເຂົາເຈົ້າ (ພໍ່, ແມ່ ແລະລູກໆ) ໃຫ້ຫລາຍເທົ່າທີ່ຈະເຮັດໄດ້.

ພາລະທີ່ຊອກຫາຊື່ຂອງບັນພະບຸຣຸດຂອງພວກເຮົາຜູ້ທີ່ຕາຍໄປແລ້ວ ແລະລາຍລະອຽດອື່ນໆກ່ຽວກັບພີ່ນ້ອງຂອງພວກເຮົາເອີ້ນວ່າ ການສືບລຳດັບເຊື້ອສາຍ ຫລືຊີວະປະວັດຄອບຄົວ.

ມັນມີຟອມສອງໃບເອີ້ນວ່າ ລຳດັບເຊື້ອສາຍແລະບັນທຶກກຸ່ມຄອບຄົວ ຊຶ່ງທ່ານສາມາດຂຽນລາຍລະອຽດໄວ້ໃນເຈັ້ຽນີ້ໄດ້. ທ່ານສາມາດຂໍເອົາຟອມນີ້ຈາກຜູ້ນຳຖານະປະໂຣຫິດຂອງທ່ານ. ເພິ່ນຈະມີຄົນໃດຄົນນຶ່ງຊ່ວຍທ່ານປະກອບຟອມນີ້. ແລ້ວທ່ານສາມາດເອົາບັນທຶກນີ້ໄປຫາພຣະວິຫານ ບ່ອນທີ່ພິທີການຈະຖືກປະກອບ.

ຖ້າພີ່ນ້ອງຂອງພວກເຮົາຜູ້ທີ່ຍັງມີຊີວິດຢູ່ບໍ່ມີຂໍ້ມູນທີ່ພວກເຮົາຕ້ອງການ, ພວກເຮົາສາມາດຂໍເອົາບັນທຶກຈາກຣັຖບານ, ຈາກບັນທຶກຂອງສາສນາຈັກ ຊຶ່ງພີ່ນ້ອງຂອງພວກເຮົາອາດເຂົ້າຮ່ວມເປັນສະມາຊິກ, ໄປເບິ່ງທີ່ປ່າຊ້າ ຫລືຈາກບ່ອນໃດກໍໄດ້ທີ່ຈະມີຂໍ້ມູນນີ້.

ຖ້າພວກເຮົາມີຄ່າຄວນ, ພວກເຮົາສາມາດໄປພຣະວິຫານເພື່ອປະກອບພິທີການເຫລົ່ານີ້ເພື່ອພີ່ນ້ອງຂອງພວກເຮົາໄດ້. ຖ້າພວກເຮົາບໍ່ສາມາດໄປພຣະວິຫານ, ຄົນອື່ນຈະປະກອບພິທີການເພື່ອພວກເຂົາ. ພວກເຮົາຄວນໄປພຣະວິຫານເລື້ອຍໆເພື່ອປະກອບພິທີນີ້ໃຫ້ແກ່ຄົນທີ່ຕາຍໄປແລ້ວ.

## *ການສົນທະນາ*

- ມີສິ່ງໃດແດ່ທີ່ຈະຕ້ອງໄດ້ເຮັດກ່ອນພວກເຮົາຈະສາມາດໄປປະກອບພິທີການໃພຣະວິຫານ ເພື່ອບັນພະບຸຣຸດຜູ້ທີ່ໄດ້ຕາຍໄປແລ້ວໄດ້.
- ມີສິ່ງໃດແດ່ທີ່ຕ້ອງການເພື່ອວ່າພິທີການເຫລົ່ານີ້ຈະຖືກປະກອບໄດ້?
- ແມ່ນໃຜສາມາດປະກອບພິທີການເພື່ອບັນພະບຸຣຸດຂອງພວກເຮົາຜູ້ທີ່ໄດ້ຕາຍໄປແລ້ວ?

## ຊີວະປະວັດສ່ວນຕົວເປັນສິ່ງສຳຄັນ

ເມື່ອພວກເຮົາອ່ານສິ່ງທີ່ສະມາຊິກໃນຄອບຄົວຂອງພວກເຮົາຂຽນກ່ຽວກັບຕົນເອງ, ພວກເຮົາຮູ້ແລະຮັກຄົນນັ້ນຫລາຍຂຶ້ນ. ນອກຈາກຈະຮຽນກ່ຽວກັບບັນພະບຸຣຸດຂອງພວກເຮົາທີ່ລ່ວງລັບໄປແລ້ວ ແລະປະກອບພິທີການຕ່າງໆເພື່ອພວກເຂົາ. ພວກເຮົາຄວນຮັກສາບັນທຶກກ່ຽວກັບຊີວິດຂອງພວກເຮົານຳອີກ. ພວກເຮົາຄວນຂຽນກ່ຽວກັບພໍ່ແມ່ຂອງພວກເຮົາ, ການເກີດຂອງພວກເຮົາແລະສິ່ງທີ່ເກີດຂຶ້ນໃນຊີວິດຂອງພວກເຮົາ. ພວກເຮົາຍັງຄວນຂຽນເຖິງຄວາມຮູ້ສຶກຂອງພວກເຮົາ ເພື່ອວ່າລູກຫລານຂອງພວກເຮົາອາດຮູ້ກ່ຽວກັບພວກເຮົາ ແລະເພື່ອຊຸກຍູ້ໃຫ້ ພວກເຂົາເຮັດສິ່ງດີແບບດຽວທີ່ພວກເຮົາໄດ້ເຮັດ.

ພຣະຜູ້ເປັນເຈົ້າຊົງບັນຊາອາດາມໃຫ້ຂຽນບັນທຶກກ່ຽວກັບຊີວິດຂອງເພິ່ນໃຫ້ແກ່ລູກຂອງເພິ່ນ. ສາສດາຍັງໄດ້ຂຽນບັນທຶກແບບດຽວກັນ, ແລະພວກເຮົາກໍຄວນເຮັດຄືກັນ. ໂດຍການອ່ານບັນທຶກທີ່ອາດາມແລະສາສດາຄົນອື່ນໆໄດ້ຂຽນ, ພວກເຮົາສາມາດຮຽນເຖິງພອນແລະພຣະບັນຍັດທີ່ພວກເພິ່ນໄດ້ຮັບຈາກພຣະຜູ້ເປັນເຈົ້າ. ນີ້ຈະຊ່ວຍພວກເຮົາເຮັດສິ່ງທີ່ຖືກ. ພວກເຮົາຄວນຊ່ວຍລູກໆຂອງພວກເຮົາໂດຍການຮັກສາບັນທຶກກ່ຽວກັບຊີວິດຂອງພວກເຮົາ.

### *ການສົນທະນາ*

- ເປັນຫຍັງພຣະຜູ້ເປັນເຈົ້າຈຶ່ງຊົງໄດ້ບັນຊາໃຫ້ຜູ້ຄົນຂອງພຣະອົງຮັກສາບັນທຶກກ່ຽວກັບຊີວິດຂອງພວກເຂົາ?
- ພອນອັນໃດແດ່ທີ່ສາມາດມາສູ່ລູກຫລານຂອງທ່ານຈາກບັນທຶກສ່ວນຕົວຂອງທ່ານນັ້ນ?

### *ຂໍ້ອ້າງອີງ*

*ພຣະຜູ້ເປັນເຈົ້າຊົງວາງແຜນໃຫ້ຄອບຄົວຢູ່ນຳກັນຕລອດໄປ*

- ມັດທາຍ ໑໘:໑໘ (ສິ່ງໃດທີ່ຜູກມັດໄວ້ໃນໂລກ, ໂດຍອຳນາດທີ່ຖືກຕ້ອງ, ຈະຖືກຜູກມັດໄວ້ໃນສວັນ.)
- ມັດທາຍ ໑໙:໔–໖ (ສິ່ງໃດທີ່ພຣະຜູ້ເປັນເຈົ້າຊົງຮ່ວມເຂົ້າກັນຈະບໍ່ຖືກແຍກອອກຈາກກັນ.)

*ມີແຕ່ສະມາຊິກທີ່ຊື່ສັດຂອງສາສນາຈັກເທົ່ານັ້ນຈະສາມາດເຂົ້າໄປໃນພຣະວິຫານໄດ້*

- D&C 88:119–121 (ພວກເຮົາຕ້ອງກັບໃຈຈາກບາບຂອງພວກເຮົາກ່ອນຈະເຂົ້າໄປພຣະວິຫານໄດ້.)

*ການຕຽມຄອບຄົວຂອງທ່ານໃຫ້ຢູ່ນຳກັນຕລອດໄປ*

- ໑ ເປໂຕ ໓:໑–໗ (ສາມີແລະພັລຍາຖືກອົບລົມໃຫ້ຢູ່ໃນຄວາມປອງດອງ.)

*ພຣະຜູ້ເປັນເຈົ້າຊົງເຮັດໃຫ້ມັນເປັນໄປໄດ້ສຳລັບພວກເຮົາທີ່ຈະເຮັດໃຫ້ບັນພະບຸຣຸດຂອງພວກເຮົາໄດ້ຮັບຄວາມລອດ.*

- ມາລາກີ ໔:໖ (ຄົນຈະມີຄວາມຫ່ວງໄຍເຖິງບັນພະບຸຣຸດພ້ອມທັງຄອບຄົວຂອງເຂົາເຈົ້າ ທີ່ຈະມີຊີວິດຫລັງຈາກພວກເຂົາ.)
- ເຮັບເຣີ ໑໑:໔໐ (ພວກເຮົາບໍ່ສາມາດເຮັດໃຫ້ດີພ້ອມໄດ້ ຖ້າປາສຈາກຄົນທີ່ຕາຍໄປແລ້ວ.)

*ຄົນທີ່ມີຊີວິດຢູ່ຈະປະກອບພິທີການແທນຄົນທີ່ຕາຍໄປແລ້ວ*

- ໑ ໂກຣິນໂທ ໑໕:໒໙ (ຄົນທີ່ມີຊີວິດຢູ່ໃນສມັຍອັຄສາວົກໂບຮານໄດ້ໃຫ້ບັບຕິສະມາແກ່ຄົນຕາຍ.)

*ຊີວະປວັດສ່ວນຕົວເປັນສິ່ງສຳຄັນ*

- ມາລາກີ ໓:໑໖ (ບັນທຶກຖືກເກັບໄວ້ ຊຶ່ງຊື່ຂອງຄົນທີ່ຮັກພຣະຜູ້ເປັນເຈົ້າໄດ້ຖືກບັນທຶກໄວ້.)

# ການສະເດັດມາຄັ້ງທີສອງ ຂອງພຣະເຢຊູຄຣິສ

*ພາກເກົ້າ*





*ມັນມີເຄື່ອງຫມາຍຫລາຍຢ່າງທີ່ຊີ້ໃຫ້ເຫັນວ່າ*
*ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິສໃກ້ຈະເຖິງແລ້ວ.*

# ການສະເດັດມາຄັ້ງທີສອງ ຂອງພຣະເຢຊູຄຣິສ

*ບົດທີ ໔໔*

*ພຣະເຢຊູຄຣິສຈະຊົງສະເດັດມາສູ່ໂລກອີກ. ເຄື່ອງໝາຍຂອງການສະເດັດມາຂອງພຣະອົງຈະມີຫຍັງແດ່ ແລະພວກເຮົາຈະຕຽມຕົວເພື່ອຮັບພຣະອົງໄດ້ແນວໃດ ເມື່ອພຣະອົງຊົງສະເດັດມາ?*

**ພຣະເຢຊູຊົງສັນຍາວ່າ ພຣະອົງຈະຊົງສະເດັດມາສູ່ໂລກອີກ**

ສີ່ສິບວັນຫລັງຈາກພຣະເຢຊູຊົງໄດ້ຟື້ນຄືນພຣະຊົນແລ້ວ, ພຣະອົງແລະອັຄສາວົກຂອງພຣະອົງໄດ້ພົບກັນທີ່ເນີນພູທີ່ມີຊື່ວ່າ ພູຕົ້ນໝາກກອກ. ເວລາໄດ້ມາເຖິງທີ່ພຣະເຢຊູຈະຕ້ອງກັບຄືນສູ່ສວັນ, ພຣະອົງຊົງໄດ້ກະທຳທຸກສິ່ງທັງໝົດທີ່ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງສົ່ງໃຫ້ພຣະອົງລົງມາເຮັດ. ອັຄສາວົກຂອງພຣະອົງເບິ່ງພຣະເຢຊູໃນຂະນະທີ່ພຣະອົງຊົງສະເດັດຂຶ້ນສູ່ສວັນ. ໃນຂະນະທີ່ອັຄສາວົກກຳລັງເບິ່ງພຣະອົງຢູ່ນັ້ນ, ທູດສວັນສອງອົງໄດ້ລົງມາແລະບອກພວກເຂົາວ່າ ພຣະເຢຊູຈະຊົງສະເດັດມາສູ່ໂລກອີກ. ຈາກເວລານັ້ນຈົນມາເຖິງປັດຈຸບັນນີ້, ຄົນທີ່ເຊື່ອໃນພຣະເຢຊູໄດ້ພາກັນລໍຖ້າການກັບມາຂອງພຣະອົງ. ການສະເດັດມາຂອງພຣະອົງເອີ້ນວ່າ ການສະເດັດມາຄັ້ງທີສອງຂອງພຣະຄຣິສ.

ໃນການສະເດັດມາຄັ້ງທີສອງ, ພຣະເຢຈະຊົງສະເດັດລົງມາຈາກສວັນດ້ວຍອຳນາດອັນຍິ່ງໃຫຍ່. ພຣະອົງຈະຊົງລ້າງໂລກໃຫ້ສະອາດຈາກຄວາມຊົ່ວຮ້າຍທັງໝົດ, ແລະຊາຕານຈະບໍ່ມີອຳນາດເຫນືອຜູ້ຄົນອີກຕໍ່ໄປ. ພຣະເຢຊູຈະຊົງປົກຄອງຄົນທີ່ເຊື່ອໃນພຣະອົງເປັນເວລາພັນປີ.

## *ການສົນທະນາ*

- ພວກເຮົາຈະຮູ້ໄດ້ແນວໃດວ່າ ພຣະເຢຊູຈະຊົງສະເດັດມາສູ່ໂລກອີກ?

**ພຣະເຢຊູຊົງບອກພວກເຮົາເຖິງສິ່ງທີ່ຈະເກີດຂຶ້ນກ່ອນພຣະອົງຈະຊົງສະເດັດມາ**

ພຣະເຢຊູຊົງບອກພວກເຮົາຫລາຍໆສິ່ງທີ່ຈະເກີດຂຶ້ນ ກ່ອນພຣະອົງຈະຊົງສະເດັດລົງມາອີກ. ສິ່ງເຫລົ່ານີ້ເອີ້ນວ່າ ເຄື່ອງຫມາຍຂອງການສະເດັດມາຄັ້ງທີສອງ. ພຣະອົງຊົງບອກພວກເຮົາ ໃຫ້ເບິ່ງເຄື່ອງຫມາຍເຫລົ່ານີ້ ແລະຕຽມພ້ອມຕໍ່ການສະເດັດມາຂອງພຣະອົງ. ພຣະອົງຊົງຕັສວ່າ ເມື່ອພວກເຮົາເຫັນສິ່ງເຫລົ່ານີ້ເກີດຂຶ້ນ, ພວກເຮົາຈະຮູ້ວ່າ ພຣະອົງຈະຊົງສະເດັດມາໃນໄວໆນີ້. ແຕ່ພວກເຮົາຈະບໍ່ຮູ້ເຖິງເວລາໃດແທ້ຕໍ່ການສະເດັດມາຂອງພຣະອົງ.

ຖ້າພວກເຮົາສຶກສາພຣະຄັມພີແລະຊື່ສັດຕໍ່ພຣະເຢຊູ, ພວກເຮົາຈະຮູ້ເຖິງເຄື່ອງຫມາຍ ຂອງການສະເດັດມາຂອງພຣະອົງ. ຫລາຍສິ່ງຈະເກີດຂຶ້ນກ່ອນພຣະເຢຊູຈະຊົງສະເດັດມາສູ່ໂລກນີ້ອີກ. ບາງສິ່ງໄດ້ເກີດຂຶ້ນແລ້ວ, ບາງສິ່ງກໍກຳລັງເກີດຂຶ້ນໃນເວລານີ້ ແລະທັງຫມົດຈະເກີດຂຶ້ນໃນອະນາຄົດ.

ກ່ອນການສະເດັດມາຄັ້ງທີສອງຂອງພຣະເຢຊູ, ພຣະກິດຕິຄຸນຈະຖືກສອນໃຫ້ແກ່ທຸກໆປະຊາຊາດ. ນີ້ຈະເຮັດໃຫ້ຫລາຍຄົນມີຄວາມສຸກ ແລະຈະນຳພອນຫລາຍຢ່າງມາສູ່ພວກເຂົາ. ສິ່ງອື່ນທີ່ຈະເກີດຂຶ້ນອີກ ທີ່ຈະເປັນສິ່ງທົດລອງສັດທາຂອງພວກເຮົາ. ມັນຈະມີຄວາມຊົ່ວຮ້າຍຢ່າງຫນັກ, ມີແຜ່ນດິນໄຫວ, ແລະມີການທຳລາຍແບບອື່ນໆອີກ.

### *ມັນຈະເກີດມີບັນຫາຮ້າຍແຮງຢູ່ໃນໂລກ*

ພຣະເຢຊູຊົງຕັສວ່າ ພວກເຮົາຈະຮູ້ວ່າ ການສະເດັດມາຂອງພຣະອົງໃກ້ຈະມາເຖິງແລ້ວ ເມື່ອພວກເຮົາເຫັນຄວາມຊົ່ວຮ້າຍຫລາຍແນວ, ເຫັນສົງຄາມແລະເຫັນການທໍຣະມານຕ່າງໆຢູ່ໃນໂລກ. ນີ້ຈະເປັນເວລາທີ່ສັບສົນຫລາຍ. ມັນຈະມີແຜ່ນດິນໄຫວ, ລົມພາຍຸຮ້າຍ, ໂຣກພະຍາດ ແລະການອຶດຫິວຍ້ອນຄວາມຂາດແຄນເກີດຂຶ້ນໃນໂລກ. ພາຍຸຫມາກເຫັບຈະທຳລາຍຜົນລະປູກຕ່າງໆໃນໂລກ.

ຫລາຍໆຄົນຈະເຊົາຮັກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາແລະຈະຫັນຫາຊາຕານ. ພວກເຂົາຍັງຈະເຊົາຮັກແລະເຊົາຮັບໃຊ້ເຊິ່ງກັນແລະກັນ ແລະຈະເລີ້ມເຮັດ

ອັນຕະລາຍຕໍ່ກັນ. ມັນຈະມີສົງຄາມເກີດຂຶ້ນໃນໂລກ. ປະເທດຊາດຈະຕໍ່ສູ້ກັນ. ສົງຄາມເຫລົ່ານີ້ຈະດຳເນີນໄປຈົນເຖິງສົງຄາມຄັ້ງໃຫຍ່ແລະຄັ້ງສຸດທ້າຍ, ຊຶ່ງຈະເປັນສົງຄາມທີ່ຈະທຳລາຍທຸກສິ່ງ ແລະຮ້າຍແຮງກວ່າສົງຄາມຕ່າງໆທີ່ເຄີຍເປັນມາ. ໃນເວລານັ້ນພຣະເຢຊູຈະຊົງສະເດັດມາ.

*ພຣະກິດຕິຄຸນໄດ້ຖືກຟື້ນຟູຄືນມາໃຫມ່*

ສາສດາໄດ້ເວົ້າວ່າ ພຣະກິດຕິຄຸນຈະຖືກຟື້ນຟູຄືນມາສູ່ໂລກອີກກ່ອນພຣະເຢຊູຈະຊົງສະເດັດມາ. ພຣະກິດຕິຄຸນກໍໄດ້ຟື້ນຟູຂຶ້ນແລ້ວ ຜ່ານສາສດາໂຢເຊັບ ສມິທ. ຄຳສອນທີ່ຈຳເປັນທຸກໆຂໍ້ທີ່ພວກເຮົາຄວນຮູ້ແລະຄວນເຮັດເພື່ອພວກເຮົາຈະສາມາດກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ໄດ້ຖືກຟື້ນຟູຄືນສູ່ໂລກແລ້ວ.

ພຣະເຢຊູຊົງຕັສວ່າ ພວກເຮົາຈະຮູ້ວ່າ ມັນໃກ້ຈະເຖິງການສະເດັດມາຂອງພຣະອົງແລ້ວ ເມື່ອພຣະຄັມພີມໍມອນຖືກພິມ ແລະຖືກແຈກຢາຍໃຫ້ແກ່ຊາວໂລກ. ດົນນານມາແລ້ວ, ສາສດາເອຊາຢາ ແລະສາສດ ເອເຊກຽນ ໄດ້ທຳນາຍກ່ຽວກັບພຣະຄັມພີມໍມອນ. ພຣະຄັມພີມໍມອນຖືກແປໂດຍສາສດາໂຢເຊັບ ສມິທ ມາເປັນພາສາອັງກິດ. ແລ້ວມັນໄດ້ຖືກແປເປັນຫລາຍໆພາສານັບແຕ່ເວລານັ້ນມາ. ມັນຈະຖືກແຈກໃຫ້ແກ່ທຸກໆປະຊາຊາດກ່ອນພຣະເຢຊູຈະຊົງສະເດັດມາ.

*ເຊື້ອສາຍຂອງອິສຣາເອນຈະຖືກເຕົ້າໂຮມເຂົ້າກັນອີກ*

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຕັສວ່າ ບັນພະບຸຣຸດຂອງ *ເຊື້ອສາຍຂອງອິສຣາເອນ ຕ້ອງໄດ້ຍິນແລະຮັບພຣະກິດຕິຄຸນ ແລະຕຽມຕົວພວກເຂົາເອງກ່ອນທີ່ຈະພົບພຣະເຢຊູເມື່ອພຣະອົງຈະຊົງສະເດັດມາອີກ. ຄົນທີ່ຮັບພຣະກິດຕິຄຸນຕ້ອງສອນໃຫ້ແກ່ຄົນອື່ນ, ສ້າງພຣະວິຫານ ແລະປະກອບພິທີການຕ່າງໆໃຫ້ແກ່ຄົນທີ່ລ່ວງລັບໄປແລ້ວ.

ຫລາຍໆຄົນຈາກເຊື້ອສາຍຂອງອິສຣາເອນ ບໍ່ວ່າເຊື້ອສາຍແທ້ ຫລືຖືກຮັບເຂົ້າເປັນລູກບຸນທຳກໍກຳລັງພາກັນປ່ຽນໃຈເຫລື້ອມໃສເຂົ້າຮ່ວມສາສນາຈັກເມື່ອພວກເຂົາຮັບພຣະກິດຕິຄຸນຂອງພຣະເຢຊູຄຣິສ. ແຜ່ນດິນສັກສິດໄດ້ຖືກອຸທິດໄວ້ເພື່ອການທ້ອນໂຮມເຊື້ອສາຍຂອງອັບຣາຮາມ. ເຊື້ອສາຍຂອງອັບຣາຮາມຮ່ວມເຖິງຄົນທີ່ຮູ້ກັນ

ມາດັ່ງຊາວອາຣັບ ແລະຊາວຢິວ ແລະຄົນອື່ນໆ. ເຊື້ອສາຍຂອງຄົນໃນພຣະຄັມພີ ມໍມອນໃນທະວີບອະເມຣິກາ ຜູ້ຊຶ່ງເປັນເຊື້ອສາຍຂອງອັບຣາຮາມເຊັ່ນດຽວ ກໍໄດ້ ພາກັນຍອມຮັບເອົາພຣະກິດຕິຄຸນ ແລະເປັນຄົນເຂັ້ມແຂງ ແລະເປັນຄົນຊອບທັມ ໃນສາສນາຈັກ.

*ພຣະກິດຕິຄຸນຈະຖືກເຜີຍແຜ່ໄປທົ່ວໂລກ*

ພຣະເຢຊູຊົງຕັສວ່າ ພວກເຮົາຈະຮູ້ວ່າ ພຣະອົງຈະຊົງສະເດັດມາ ເມື່ອຜູ້ຕິດຕາມ ຂອງພຣະອົງໄດ້ເຜີຍແຜ່ພຣະກິດຕິຄຸນໄປທົ່ວໂລກ. ນັບແຕ່ເວລາທີ່ສາສນາຈັກ ຖືກຟື້ນຟູຂຶ້ນມາ, ຜູ້ສອນສາສນາຖືກສົ່ງໄປເຜີຍແຜ່ພຣະກິດຕິຄຸນໃນຫລາຍໆ ປະເທດ. ຜູ້ສອນສາສນາຈຳນວນຫລວງຫລາຍກຳລັງເຜີຍແຜ່ພຣະກິດຕິຄຸນ ໃນປັດຈຸບັນເກືອບທົ່ວປະເທດໃນໂລກ. ສະມາຊິກຂອງສາສນາຈັກທຸກໆຄົນ ຖືກຂໍໃຫ້ແບ່ງປັນພຣະກິດຕິຄຸນໃຫ້ແກ່ພີ່ນ້ອງ ແລະມີຫລາຍໆຄົນໄດ້ໄປປະເທດ ອື່ນໆເພື່ອເຜີຍແຜ່ພຣະກິດຕິຄຸນ ເພື່ອວ່າທຸກໆຄົນຈະມີໂອກາດໄດ້ຍິນພຣະກິດຕິຄຸນ.

*ເອລີຢາໄດ້ມາແລ້ວ*

ສາສດາມາລາກີໃນພຣະຄັມພີໄບເບິ້ນບອກໄວ້ວ່າ, ກ່ອນພຣະເຢຊູຈະຊົງສະເດັດມາ ສາສດາເອລີຢາຈະລົງມາຢ້ຽມຢາມໂລກ. ທ່ານຈະນຳເອົາອຳນາດແຫ່ງການ ຜະນຶກຄອບຄົວໃຫ້ຢູ່ນຳກັນຕລອດໄປ ລົງມາອີກ. ທ່ານຈະເຮັດໃຫ້ຄົນມີຄວາມ ຢາກຮຽນກ່ຽວກັບບັນພະບຸຣຸດຂອງເຂົາແລະເຊື້ອສາຍຂອງພວກເຂົາ ແລະຊ່ວຍ ປະກອບພິທີການແກ່ພວກເຂົາເພື່ອຈະໄດ້ຮັບຄວາມລອດ. ໃນເດືອນເມສາ ປີ ໑໘໓໖, ເອລີຢາໄດ້ລົງມາແລະຟື້ນຟູອຳນາດນີ້ໃຫ້ແກ່ສາສດາໂຢເຊັບ ສມິທ. ຍ້ອນວ່າ ເອລີຢາໄດ້ມາ, ຄອບຄົວໃນປັດຈຸບັນນີ້ ຈຶ່ງສາມາດຜະນຶກເຂົ້າກັນໃນ ພຣະວິຫານໄດ້.

*ເມືອງເຢຣູຊາເລັມໃຫມ່ຈະຖືກສ້າງຂຶ້ນ*

ພຣະເຢຊູຊົງຕັສວ່າ ພວກເຮົາຈະຮູ້ວ່າ ພຣະອົງຈະຊົງສະເດັດມາໃນບໍ່ຊ້ານີ້ ເມື່ອສາສນາຈັກຂອງພຣະອົງໄດ້ສ້າງເມືອງເຢຣູຊາເລັມໃຫມ່ຂຶ້ນ. ພຣະເຢຊູຊົງ ຕັສວ່າ ພຣະອົງຈະເປັນຜູ້ປົກຄອງເມືອງນັ້ນ, ແລະຄົນຊອບທັມຈະອາສັຍຢູ່ທີ່ນັ້ນ. ພຣະອົງຍັງຊົງບອກວ່າ ເມືອງນີ້ຈະຖືກຕັ້ງຂຶ້ນຢູ່ໃສ. ມັນຈະຖືກຕັ້ງຂຶ້ນໃນຣັຖມິດສຸຣີ ໃນພາກກາງຂອງສະຫະຣັດອະເມຣິກາ.

ສິ່ງເຫລົ່ານີ້ເປັນເຄື່ອງໝາຍບາງສ່ວນຊຶ່ງ ທີ່ສະແດງໃຫ້ເຫັນວ່າ ພຣະເຢຊູຈະຊົງສະເດັດມາໃນບໍ່ຊ້ານີ້. ພຣະຄັມພີໄດ້ບັນທຶກເຖິງເຄື່ອງໝາຍອື່ນໆນຳອີກ. ເຖິງແມ່ນວ່າເຄື່ອງໝາຍອື່ນໄດ້ເກີດຂຶ້ນໃຫ້ແລ້ວກໍຕາມ, ແຕ່ພວກເຮົາຍັງບໍ່ຮູ້ເຖິງເວລາແນ່ນອນທີ່ພຣະເຢຊູຈະຊົງສະເດັດມາເທື່ອ.

*ການສົນທະນາ*

- ພວກເຮົາຈະຮູ້ໄດ້ແນວໃດວ່າ ການສະເດັດມາຄັ້ງທີສອງຂອງພຣະເຢຊູໃກ້ຈະມາເຖິງແລ້ວ?
- ເຄື່ອງໝາຍຂອງການສະເດັດມາຄັ້ງທີສອງຂອງພຣະເຢຊູມີຫຍັງແດ່?

**ພວກເຮົາສາມາດມີຄວາມສງົບແລະມີຄວາມຫວັງໄດ້ ເຖິງແມ່ນວ່າ ການຊົ່ວຮ້າຍແລະບັນຫາຕ່າງໆຈະຢູ່ອ້ອມຮອບພວກເຮົາ**

ພວກເຮົາຄວນຕຽມຕໍ່ການສະເດັດມາຄັ້ງທີສອງຂອງພຣະເຢຊູ. ວິທີທີ່ດີທີ່ສຸດສຳລັບການຕຽມຂອງພວກເຮົາ ຕໍ່ການສະເດັດມາຄັ້ງທີສອງຂອງພຣະອົງແມ່ນການເຊື່ອຟັງຄຳສອນຂອງພຣະອົງທຸກໆວັນ. ພວກເຮົາຍັງຄວນເຊື່ອຟັງພຣະບັນຍັດແລະຄຳແນະນຳທີ່ພຣະອົງຊົງມອບໃຫ້ປະທານຂອງສາສນາຈັກ ເພື່ອພວກເຮົາໃນປັດຈຸບັນນີ້. ພວກເຮົາຄວນມີຄ່າຄວນທີ່ຈະມີພຣະວິນຍານບໍຣິສຸດຢູ່ນຳພວກເຮົາຕລອດເວລາ ເພື່ອນຳພາແນວຄິດແລະການກະທຳຂອງພວກເຮົາ. ພຣະເຢຊູຊົງຕັສວ່າ ຖ້າພວກເຮົາຕຽມພ້ອມ ເມື່ອພຣະອົງຊົງສະເດັດມາ, ພວກເຮົາຈະບໍ່ມີຄວາມຢານກົວ. ພວກເຮົາຈະມີຄວາມສຸກແລະຈະຕ້ອງການທີ່ຈະຢູ່ນຳພຣະອົງ. ຄົນດີຈະບໍ່ຖືກທຳລາຍເມື່ອພຣະອົງຊົງສະເດັດມາ. ພວກເຂົາຈະຢູ່ໃນໂລກຕໍ່ໄປແລະລູກໆຂອງພວກເຂົາຈະເຕີບໂຕຂຶ້ນ ໂດຍປາສຈາກບາບ. ພຣະເຢຊູຈະຊົງສະຖິດຢູ່ນຳພວກເຂົາ ແລະຈະໃຫ້ພອນແລະນຳພາພວກເຂົາ.

ເມື່ອພຣະເຢຊູຊົງສະເດັດລົງມາຈາກສວັນອີກ, ຄົນຊົ່ວຮ້າຍຈະຖືກທຳລາຍ. ຄົນດີຜູ້ທີ່ລ່ວງລັບໄປແລ້ວ ຈະຟື້ນຄືນຊີວິດຈາກຂຸມຝັງສົບຂອງພວກເຂົາ ແລະຈະມາພົບພຣະອົງໃນຂະນະທີ່ພຣະອົງຊົງສະເດັດມາຈາກສວັນ. ຄົນຊົ່ວຮ້າຍຈະບໍ່ໄດ້ຟື້ນຄືນຊີວິດຈາກຂຸມສົບຂອງພວກເຂົາຈົນກວ່າພັນປີຈະຜ່ານໄປ. ລະຍະພັນປີນີ້ເອີ້ນວ່າ *ມີເລນຽມ.

ຄາວພຣະເຢຊູຊົງມີຊີວິດຢູ່ໃນໂລກ, ມີໜ້ອຍຄົນທີ່ຮູ້ຈັກວ່າ ພຣະຜູ້ຊ່ວຍໃຫ້ລອດຂອງໂລກຊົງໄດ້ສະເດັດມາ. ເມື່ອພຣະອົງຊົງສະເດັດມາອີກ ທຸກໆຄົນຈະຮູ້ວ່າ ພຣະອົງຊົງເປັນພຣະເຢຊູຄຣິສ ພຣະບຸດຂອງພຣະຜູ້ເປັນເຈົ້າ ພຣະຜູ້ຊ່ວຍໃຫ້ລອດຂອງໂລກ.

### *ການສົນທະນາ*

- ການຮູ້ເຖິງເຄື່ອງໝາຍຂອງການສະເດັດມາຄັ້ງທີສອງຊ່ວຍເຫລືອພວກເຮົາແນວໃດ?
- ມີຫຍັງຈະເກີດຂຶ້ນຕໍ່ຄົນດີໃນໂລກເມື່ອພຣະເຢຊູຊົງສະເດັດມາ?
- ສິ່ງໃດຈະເກີດຂຶ້ນຕໍ່ຄົນຊົ່ວຮ້າຍທີ່ອາສັຍຢູ່ໃນໂລກໃນເວລານັ້ນ?

### *ຂໍ້ອ້າງອີງ*

*ພຣະເຢຊູຊົງສັນຍາວ່າ ພຣະອົງຈະຊົງສະເດັດມາສູ່ໂລກອີກ*

- ມັດທາຍ ໒໔:໑໖, ໔໒–໔໔ (ພວກເຮົາບໍ່ຮູ້ເຖິງວັນແລະເວລາຂອງການກັບມາຂອງພຣະເຢຊູ.)
- ມັດທາຍ ໒໖:໖໔ (ພຣະເຢຊູຈະຊົງສະເດັດມາໃນທ້ອງຟ້າສວັນ.)
- ໂຢຮັນ ໑໔:໒–໑ (ພຣະເຢຊູຊົງສັນຍາວ່າ ຈະກັບຄືນມາ.)
- ກິຈການ ໑:໑໑ (ທູດສວັນບອກອັຄສາວົກວ່າ ພຣະເຢຊູຈະຊົງສະເດັດລົງມາອີກ.)

*ພຣະເຢຊູຊົງບອກພວກເຮົາເຖິງສິ່ງທີ່ຈະເກີດຂຶ້ນກ່ອນພຣະອົງຈະຊົງສະເດັດມາ*

- ມັດທາຍ ໒໔ (ເຄື່ອງໝາຍຈະເກີດຂຶ້ນກ່ອນການສະເດັດມາຄັ້ງທີສອງຂອງພຣະເຢຊູໄດ້ຖືກອະທິບາຍໄວ້.)

*ພວກເຮົາສາມາດມີຄວາມສງົບແລະມີຄວາມຫວັງໄດ້ ເຖິງແມ່ນວ່າ ຄວາມຊົ່ວຮ້າຍແລະບັນຫາຕ່າງໆຈະຢູ່ອ້ອມຮອບພວກເຮົາ*

- ມັດທາຍ ໑໓:໔໐–໔໓ (ຄົນຊົ່ວຮ້າຍຈະຖືກເຜົາ ແຕ່ຄົນຊອບທັມຈະຖືກຮັກສາໄວ້.)
- ຊາຂາຣິຢາ ໑໔:໙ (ພຣະເຢຊູຈະຊົງປົກຄອງໂລກເມື່ອພຣະອົງຊົງສະເດັດຄືນມາ.)

# ມິເລນຽມ (ພັນປີ)

*ບົດທີ ໓໔*

---

*ມິເລນຽມແມ່ນຫຍັງ? ຊີວິດໃນໂລກຈະເປັນແນວໃດໃນລະຍະມິເລນຽມ?*

## ຄົນຊອບທັມຈະອາສັຍຢູ່ໃນໂລກລະຍະມິເລນຽມ

ເມື່ອພຣະເຢຊູຊົງສະເດັດມາອີກ ພຣະອົງຈະຊົງປົກຄອງແຜ່ນດິນໂລກເປັນເວລາພັນປີ ລະຍະເວລາພັນປີນີ້ ຈະຮູ້ຈັກກັນວ່າ ມິເລນຽມ.

ມິເລນຽມຈະເປັນເວລາແຫ່ງຄວາມສງົບແລະຄວາມຊອບທັມ. ພຣະເຢຊູຈະຊົງຊຳຣະລ້າງໂລກຈາກບາບກ່ອນມິເລນຽມ. ຄົນຊົ່ວຮ້າຍທຸກຄົນຈະຖືກທຳລາຍ. ມີແຕ່ຄົນຊອບທັມເທົ່ານັ້ນຈະໄດ້ຮັບຄວາມລອດແລະອາສັຍຢູ່ໃນໂລກໃນເວລານັ້ນ. ຊາຕານຈະບໍ່ມີອຳນາດເຫນືອຜູ້ຄົນອີກຕໍ່ໄປ ຈົນກວ່າເວລາສຸດທ້າຍຂອງມິເລນຽມມາເຖິງ.

ສາສດາໂຢເຊັບ ສມິທ ໄດ້ເວົ້າວ່າ ຄົນຈາກສວັນຈະລົງມາຢ້ຽມຢາມໂລກໃນລະຍະມິເລນຽມນີ້. ພວກເຂົາຈະຊ່ວຍໃນວຽກງານພຣະວິຫານແລະໃນວຽກງານເຜີຍແຜ່ສາສນາ.

### *ການສົນທະນາ*

- ມິເລນຽມແມ່ນຫຍັງ?
- ແມ່ນໃຜຈະອາສັຍຢູ່ໃນໂລກໃນລະຍະມິເລນຽມ?
- ໃຫ້ວາດພາບເບິ່ງວ່າ ມັນຈະເປັນແນວໃດທີ່ຈະຢູ່ໃນບ່ອນທີ່ບໍ່ມີຄວາມຊົ່ວຮ້າຍອັນໃດເລີຍ?

## ວຽກງານຍິ່ງໃຫຍ່ສອງຢ່າງຈະຖືກເຮັດໃຫ້ສຳເຣັດໃນລະຍະມິເລນຽມ

ວຽກງານຍິ່ງໃຫຍ່ທຳອິດທີ່ຈະຕ້ອງຖືກເຮັດໃຫ້ສຳເຣັດ ແມ່ນການປະກອບພິທີການໃນພຣະວິຫານສຳລັບທັງຄົນທີ່ມີຊີວິດແລະຄົນທີ່ຕາຍໄປແລ້ວ. ຄົນທີ່ໄດ້ຟື້ນຄືນຊີວິດມາແລ້ວ ຈະຊ່ວຍເຫລືອຄົນທີ່ຢູ່ໃນໂລກ ໃຫ້ພົບເຫັນຊື່ຂອງພີ່ນ້ອງຂອງພວກເຂົາທີ່ໄດ້ລ່ວງລັບໄປແລ້ວ ແລະຈະດັດແປງອັນທີ່ຜິດພາດໃນບັນຊີຕ່າງໆ.

ພິທີການທີ່ຈຳເປັນທັງຫມົດ ເພື່ອຜະນຶກຄອບຄົວເຂົ້າກັນຈະຖືກປະກອບໃນພຣະວິຫານ. ຄອບຄົວຈະຖືກຜູກມັດເຂົ້າກັນຈາກຍຸກນຶ່ງໄປຫາອີກຍຸກນຶ່ງຍ້ອນຫລັງຈົນໄປເຖິງອາດາມ.

ວຽກງານຍິ່ງໃຫຍ່ອີກຢ່າງນຶ່ງ ແມ່ນການເຜີຍແຜ່ພຣະກິດຕິຄຸນ. ທຸກໆຄົນຈະສາມາດໄດ້ຍິນເຖິງພຣະກິດຕິຄຸນແລະຈະຍອມຮັບເອົາມັນ. ຄົນດີບາງຄົນຜູ້ທີ່ບໍ່ເປັນສະມາຊິກຂອງສາສນາຈັກຂອງພຣະເຢຊູຈະຍັງຄົງຢູ່ໃນໂລກໃນຕອນມິເລນຽມເລີ້ມ. ແຕ່ວ່າໃນທີ່ສຸດທຸກຄົນຈະຮູ້ແລະຈະສາລະພາບວ່າ ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດຂອງແຜ່ນດິນໂລກ.

### *ການສົນທະນາ*

- ວຽກງານຍິ່ງໃຫຍ່ສອງຢ່າງທີ່ຈະຖືກເຮັດໃຫ້ສຳເຣັດໃນລະຍະມິເລນຽມມີຫຍັງແດ່?

## ຊີວິດຈະເປັນແນວໃດໃນລະຍະມິເລນຽມ

ໃນລະຍະມິເລນຽມ, ໂລກຈະເປັນແບບດຽວກັນກັບຕອນອາດາມແລະເອວາອາສັຍຢູ່ໃນສວນເອເດນ. ມັນຈະບໍ່ມີສົງຄາມ. ພຣະເຢຊູຈະຊົງປົກຄອງທັງສາສນາຈັກແລະຣັຖບານ. ກົດຫມາຍທັງຫມົດຈະຢູ່ໃນພື້ນຖານຂອງຄວາມຈິງແລະໃນຫລັກທັມທີ່ຊອບທັມ. ມັນຈະມີເມືອງຫລວງຢູ່ສອງແຫ່ງ. ເມືອງຫລວງນຶ່ງແມ່ນ ເຢຣູຊາເລັມ ແລະເມືອງຫລວງອີກແຫ່ງນຶ່ງຈະແມ່ນເມືອງເຢຣູຊາເລັມໃຫມ່ໃນສະຫະຣັດອະເມຣິກາ.

ຄົນຈະອາສັຍຢູ່ນຳກັນດ້ວຍຄວາມສງົບແລະຄວາມຮັກ. ສັດທຸກໆໂຕ ເຖິງແມ່ນວ່າພວກມັນເປັນສັດຕູກັນເວລານີ້ ຈະຢູ່ນຳກັນໃນຄວາມສງົບໃນເວລານັ້ນ. ພວກມັນຈະບໍ່ຕໍ່ສູ້ກັນອີກຕໍ່ໄປ.

ມັນຈະບໍ່ມີໂຣກພະຍາດອີກ ແລະຈະບໍ່ມີຄວາມຕາຍອີກ. ເມື່ອຄົນແກ່ຊະຣາລົງ, ພວກເຂົາຈະບໍ່ໄດ້ຮັບຄວາມຕາຍເຫມືອນດັ່ງປັດຈຸບັນນີ້. ພວກເຂົາຈະປ່ຽນກາຍທີ່ຕາຍໄດ້ເປັນອຳມະຕະ, ຊຶ່ງໝາຍຄວາມວ່າ ພວກເຂົາຈະບໍ່ຕາຍອີກ.

ມັນຈະເປັນສິດທິພິເສດທີ່ຈະອາສັຍຢູ່ໃນລະຍະມິເລນຽມ. ສິ່ງທີ່ພວກເຮົາບໍ່ເຂົ້າໃຈຈະກາຍມາເປັນສິ່ງແຈ່ມແຈ້ງຕໍ່ພວກເຮົາ. ຊີວິດຈະເປັນເຫມືອນດັ່ງຊີວິດໃນປັດຈຸບັນ ນອກຈາກວ່າ ທຸກໆສິ່ງຈະຖືກກະທຳດ້ວຍຄວາມຮັກແລະຄວາມສງົບ. ຄົນຈະດຳເນີນການລ້ຽງລູກແລະມີລູກ, ປູກພືດຜົນ, ເກັບກ່ຽວແລະກິນຜົນ ແລະສ້າງເຮືອນຊານໄປເລື້ອຍໆ.

### *ການສົນທະນາ*

- ໂລກຂອງພວກເຮົາຈະເປັນແນວໃດໃນລະຍະມິເລນຽມ?

## ຈະມີການຕໍ່ສູ້ຄັ້ງສຸດທ້າຍເກີດຂຶ້ນໃນລະຍະສຸດທ້າຍຂອງມິເລນຽມ

ເມື່ອຕອນໃກ້ຈະສິ້ນສຸດຂອງລະຍະມິເລນຽມ, ຊາຕານຈະເລີ່ມມີອຳນາດອີກຢູ່ໃນໂລກ. ບາງຄົນຈະເຊື່ອຊາຕານ. ຊາຕານແລະຜູ້ຕິດຕາມຂອງມັນຈະຕໍ່ສູ້ກັບຄົນທີ່ຕິດຕາມພຣະເຢຊູ. ໃນສົງຄາມນີ້, ຊາຕານແລະຜູ້ຕິດຕາມຂອງມັນຈະໄດ້ຮັບຄວາມປະລາໄຊຕລອດຊົ່ວນິຣັນດອນ. ຫລັງຈາກສົງຄາມນີ້, ຜູ້ຄົນຈະຖືກພິພາກສາ ແລະຖືກຈັດໃຫ້ໄປອາສັຍໃນອານາຈັກທີ່ພຣະອົງຊົງໄດ້ຕຽມໄວ້.

### *ການສົນທະນາ*

- ມີຫຍັງຈະເກີດຂຶ້ນໃນລະຍະສຸດທ້າຍຂອງມິເລນຽມ?

## *ຂໍ້ອ້າງອີງ*

*ຄົນຊອບທັມຈະອາສັຍຢູ່ໃນໂລກໃນລະຍະມິເລນຽມ*

- ໔ ນີໄຟ ໓໐:໑໐ (ຄົນຊົ່ວຮ້າຍຈະຖືກທຳລາຍ.)
- Moses 7:64 (ໂລກຈະບໍ່ມີຄວາມຊົ່ວຮ້າຍອີກຕໍ່ໄປ.)

*ວຽກງານຍິ່ງໃຫຍ່ສອງຢ່າງຈະຖືກເຮັດໃຫ້ສຳເຣັດໃນລະຍະມີເລນຽມ*

- ເຢເຣມີຢາ ໓໑:໓໔ (ມະນຸດບໍ່ຈຳເປັນຕ້ອງສອນເຊິ່ງກັນແລະກັນກ່ຽວກັບ ພຣະເຢຊູ, ເພາະພວກເຂົາທຸກຄົນຈະຮູ້ຈັກພຣະອົງ.)

*ຊີວິດຈະເປັນແນວໃດໃນລະຍະມີເລນຽມ*

- ເອຊາຢາ ໒:໓–໔ (ມັນຈະມີເມືອງຫລວງຢູ່ສອງແຫ່ງ, ແລະທົ່ວແຜ່ນດິນໂລກຈະ ຢູ່ໃນຄວາມສງົບ.)
- ເອຊາຢາ ໑໑:໖–໙ (ສັດຕ່າງໆຈະຢູ່ໃນຄວາມສງົບຕໍ່ກັນແລະກັນ.)
- ພຣະນິມິດ ໒໐:໑–໓ (ຊາຕານຈະຖືກມັດໄວ້.)

*ຈະມີການຕໍ່ສູ້ຄັ້ງສຸດທ້າຍເກີດຂຶ້ນໃນລະຍະສຸດທ້າຍຂອງມີເລນຽມ*

- ພຣະນິມິດ ໒໐:໗–໑໐ (ຊາຕານແລະຜູ້ຕິດຕາມຂອງມັນຈະໄດ້ຮັບ ຄວາມປະລາໄຊໃນສົງຄາມຄັ້ງສຸດທ້າຍ.)

# ຊີວິດຫລັງຈາກຄວາມຕາຍ

*ພາກສິບ*





ພວກເຮົາຈະຢູ່ຮ່ວມກັບຄອບຄົວແລະຄົນທີ່ພວກເຮົາຮັກອີກໃນໂລກວິນຍານ
ຫລັງຈາກພວກເຮົາຕາຍໄປ.

# ຊີວິດຫລັງຈາກຄວາມຕາຍ

*ບົດທີ ໔໕*

*ພວກເຮົາສາມາດຕຽມຕໍ່ຊີວິດທີ່ຈະມາເຖິງໄດ້ແນວໃດ?*

**ວິນຍານຂອງພວກເຮົາມີຊີວິດຢູ່ຕໍ່ໄປຫລັງຈາກພວກເຮົາຕາຍໄປ**

ພວກເຮົາເປັນລູກວິນຍານຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ເມື່ອພວກເຮົາອາສັຍຢູ່ນຳພຣະອົງໃນສວັນ ໃນຖານະເປັນວິນຍານ, ພວກເຮົາບໍ່ມີຮ່າງກາຍທີ່ມີເນື້ອຫນັງ. ມັນເປັນສ່ວນນຶ່ງຂອງແຜນຂອງພຣະອົງທີ່ຈະໃຫ້ພວກເຮົາລົງມາເກີດໃນໂລກນີ້ ແລະເພື່ອວ່າວິນຍານຂອງພວກເຮົາຈະໄດ້ຮັບຮ່າງກາຍທີ່ມີເນື້ອຫນັງແລະກະດູກ. ວິນຍານຂອງພວກເຮົາເປັນສິ່ງທີ່ເຮັດໃຫ້ຮ່າງກາຍຂອງພວກເຮົາມີຊີວິດໃນຂະນະທີ່ພວກເຮົາອາສັຍຢູ່ໃນໂລກນີ້.

ການມາເກີດເປັນສ່ວນນຶ່ງຂອງແຜນຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ສ່ວນນຶ່ງຂອງແຜນຂອງພຣະອົງແມ່ນວ່າ ທຸກຄົນຈະຮັບຄວາມຕາຍ. ເມື່ອພວກເຮົາຕາຍໄປ, ວິນຍານຂອງພວກເຮົາຈະອອກຈາກຮ່າງກາຍຂອງພວກເຮົາໄປ. ຖ້າປາສຈາກວິນຍານແລ້ວ ຮ່າງກາຍກໍບໍ່ມີຊີວິດອີກຕໍ່ໄປ.

ແຕ່ວິນຍານຂອງພວກເຮົາມີຊີວິດຢູ່ກ່ອນພວກເຮົາມາເກີດ, ແລະວິນຍານຈະມີຊີວິດຢູ່ຕໍ່ໄປຫລັງຈາກຄວາມຕາຍໄປ. ເມື່ອພວກເຮົາຕາຍໄປ, ວິນຍານຂອງພວກເຮົາຈະໄປຫາໂລກວິນຍານ ເພື່ອລໍຖ້າການຟື້ນຄືນຊີວິດ, ໃນຂະນະທີ່ຮ່າງກາຍຂອງພວກເຮົາຢູ່ໃນຂຸມສົບ.

ໃນໂລກວິນຍານ, ວິນຍານຂອງພວກເຮົາຈະມີລັກສນະແບບດຽວກັບຮ່າງກາຍທີ່ມີເນື້ອງຫນັງແລະ ກະດູກເວລາພວກເຮົາຢູ່ໃນໂລກ. ພວກເຮົາຈະມີຮູບຮ່າງ

ແບບດຽວໃນປັດຈຸບັນນີ້. ພວກເຮົາຈະມີແນວຄິດແລະຄວາມເຊື່ອແບບດຽວກັບໃນປັດຈຸບັນນີ້. ຄົນທີ່ຊອບທັມໃນຊີວິດນີ້ຈະເປັນຄົນຊອບທັມຕໍ່ໄປ. ຄົນທີ່ບໍ່ຊອບທັມຈະເປັນຄົນບໍ່ຊອບທັມຕໍ່ໄປ. ພວກເຮົາຈະມີຄວາມປາຖນາ ຫລັງຈາກພວກເຮົາຕາຍໄປແບບດຽວກັບເຮົາມີຢູ່ຂະນະຢູ່ໃນໂລກນີ້.

*ການສົນທະນາ*

- ວິນຍານຂອງພວກເຮົາມາຈາກໃສ?
- ແມ່ນຫຍັງຈະເກີດຂຶ້ນກັບວິນຍານຂອງພວກເຮົາເມື່ອພວກເຮົາຕາຍໄປ?
- ຮ່າງກາຍທີ່ເປັນວິນຍານມີລັກສະນະແນວໃດ?

## ໂລກວິນຍານເປັນບ່ອນທຳງານ, ບ່ອນຮຽນ, ແລະບ່ອນລໍຖ້າ

ສາສດາຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງບອກພວກເຮົາຫລາຍໆແນວກ່ຽວກັບໂລກວິນຍານ. ບ່ອນນຶ່ງເອີ້ນວ່າທີ່ສຸຂກະເສີມ. ເມື່ອຄົນໃດຄົນນຶ່ງຕາຍໄປ ຜູ້ທີ່ໄດ້ຮັບພຣະກິດຕິຄຸນ ແລະໄດ້ເປັນຜູ້ຕິດຕາມທີ່ຊື່ສັດຂອງພຣະເຢຊູ, ວິນຍານຂອງເຂົາຈະໄປຫາທີ່ສຸຂກະເສີມ. ນີ້ເປັນບ່ອນທີ່ຄົນມີຄວາມສຸກ ແລະມີຄວາມສງົບ. ໃນບ່ອນນີ້ ພວກເຂົາບໍ່ມີບັນຫາ, ຄວາມໂສກເສົ້າ ຫລືຄວາມເຈັບປວດ. ພວກເຂົາສາມາດເຮັດຫລາຍສິ່ງທີ່ມີປໂຍດ ເຊັ່ນ ສອນພຣະກິດຕິຄຸນໃຫ້ແກ່ຄົນອື່ນ ຫລືຮຽນພຣະກິດຕິຄຸນຕື່ມອີກສຳລັບຕົວຂອງເຂົາເອງ.

ອີກບ່ອນນຶ່ງເອີ້ນວ່າ ຄຸກວິນຍານ. ຄົນສາມປະເພດຈະອາສັຍຢູ່ທີ່ນັ້ນ. ມັນຈະມີຄົນທີ່ຊົ່ວຮ້າຍຜູ້ເຄີຍຢູ່ໃນໂລກນີ້, ມີຄົນທີ່ດຳລົງຊີວິດດີແຕ່ບໍ່ຮັບເອົາພຣະກິດຕິຄຸນ, ແລະມີຄົນທີ່ບໍ່ມີໂອກາດໄດ້ຮັບເອົາພຣະກິດຕິຄຸນ.

ສາສດາຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາໄດ້ບອກພວກເຮົາວ່າ ຜູ້ສອນສາສນາຈາກ ກຸ່ມຄົນຊອບທັມໃນໂລກວິນຍານຈະຖືກສົ່ງໄປສອນພຣະກິດຕິຄຸນໃຫ້ແກ່ທຸກໆຄົນທີ່ຕາຍໄປແລ້ວ. ມີຫລາຍຄົນຈະຮັບເອົາພຣະກິດຕິຄຸນແລະຈະກັບໃຈ. ແລ້ວພິທີການທີ່ຈຳເປັນຈະຖືກປະກອບເພື່ອພວກເຂົາໂດຍຄົນທີ່ມີຊີວິດຢູ່ໃນພຣະວິຫານຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ. ພີ່ນ້ອງຫລືສະມາຊິກຄົນອື່ນຂອງສາສນາຈັກຈະປະກອບພິທີການນີ້ເພື່ອພວກເຂົາ.

ແລ້ວພວກເຂົາຈະສາມາດອອກຈາກຄຸກວິນຍານໄດ້. ໃນວິທີນີ້, ພຣະບິດາຜູ້ສະຖິດໃນສະວັນຂອງພວກເຮົາຊຶ່ງໃຫ້ໂອກາດແກ່ລູກໆທຸກຄົນໃຫ້ໄດ້ຮັບພອນຂອງພຣະກິດຕິຄຸນ ບໍ່ວ່າເຂົາຈະຢູ່ໃນໂລກເວລາໃດກໍຕາມ.

ໃນທີ່ສຸດວິນຍານທັງຫມົດໃນໂລກວິນຍານຈະໄດ້ຮັບການຟື້ນຄືນຊີວິດ. ໃນການຟື້ນຄືນຊີວິດນັ້ນ, ວິນຍານແລະຮ່າງກາຍຈະກັບເຂົ້າຫາກັນອີກ. ເຖິງແມ່ນວ່າຮ່າງກາຍຈະເປື່ອຍເນົ່າແລະເປັນຂີ້ດິນໄປແລ້ວກໍຕາມ ເມື່ອມັນຢູ່ໃນຂຸມຝັງສົບ, ຮ່າງກາຍຈະກາຍມາເປັນຮ່າງກາຍອຳມະຕະແລະດີພ້ອມ. ສາສດາແອລມາກ່າວວ່າ:

ທຸກແຫນຂາແລະຂໍ້ຕໍ່ຈະກັບຄືນສູ່ຮ່າງກາຍຂອງມັນ ແທ້ຈິງແລ້ວ ແມ່ນແຕ່ຜົມເສັ້ນນຶ່ງເທິງຫົວຈະບໍ່ຫາຍໄປ ແຕ່ທຸກສິ່ງຈະຖືກນຳກັບຄືນສູ່ໂຄງຮ່າງອັນຖືກຕ້ອງແລະບໍຣິບູນຂອງມັນ.

ໃນການຟື້ນຄືນຊີວິດ, ຮ່າງກາຍແລະວິນຍານຈະກັບເຂົ້າຫາກັນອີກ. ແລະຈະບໍ່ຖືກແຍກອອກຈາກກັນອີກຈັກເທື່ອ. ພຣະເຢຊູຊົງມອບຂອງປະທານແຫ່ງການຟື້ນຄືນຊີວິດນີ້ໃຫ້ແກ່ທຸກໆຄົນ ທີ່ໄດ້ອາສັຍຢູ່ໃນໂລກນີ້, ຜ່ານຄວາມຮັກແລະການເສັຽສະລະໄຖ່ບາບເພື່ອພວກເຮົາ.

### *ການສົນທະນາ*

- ສອງແຫ່ງໃນໂລກວິນຍານແມ່ນບ່ອນໃດແດ່?
- ແມ່ນໃຜຈະຢູ່ໃນທີ່ສຸຂກະເສີມ? ວິນຍານໃນທີ່ສຸຂກະເສີມຈະເຮັດຫຍັງ?
- ແມ່ນໃຜຈະຢູ່ໃນຄຸກວິນຍານ? ຈະມີຫຍັງເກີດຂຶ້ນໃນທີ່ນັ້ນ?

## ພວກເຮົາຈະຖືກພິພາກສາໃນການພິພາກສາຄັ້ງສຸດທ້າຍ

ພວກເຮົາຈະຖືກພິພາກສາຫລາຍໆຄັ້ງໃນລະຍະຊີວິດນິຣັນດອນຂອງພວກເຮົາ. ພວກເຮົາໄດ້ຮັບການພິພາກສາ ໃນເວລາພວກເຮົາຍັງຢູ່ນຳພຣະບິດາຜູ້ສະຖິດໃນສະວັນຂອງພວກເຮົາ ເພື່ອເບິ່ງວ່າພວກເຮົາມີຄ່າຄວນທີ່ຈະມາສູ່ໂລກແລະຮັບເອົາຮ່າງກາຍຫລືບໍ່. ພວກເຮົາຖືກພິພາກສາໃນລະຍະ ທີ່ຢູ່ໂລກນີ້ ເພື່ອເບິ່ງວ່າພວກເຮົາມີຄ່າຄວນຈະຮັບບັບຕິສະມາຫລືບໍ່. ຜູ້ຊາຍຖືກພິພາກສາວ່າ ພວກເຂົາມີ

ຄ່າຄວນຈະໄດ້ຮັບຖານະປະໂຣຫິດຫລືບໍ່. ພວກເຮົາຖືກພິພາກສາເບິ່ງວ່າ ພວກເຮົາມີຄ່າຄວນໄປພຣະວິຫານຫລືບໍ່ ເພື່ອຈະໄດ້ຮັບພອນພິເສດ. ຫລັງຈາກພວກເຮົາຕາຍໄປ, ພວກເຮົາຈະຖືກພິພາກສາ ແລະຮາງວັນທີ່ໄດ້ຮັບຈະຂຶ້ນຢູ່ກັບການດຳລົງຊີວິດຂອງພວກເຮົາຢູ່ໃນໂລກນີ້.

ຫລັງຈາກພວກເຮົາຟື້ນຄືນຊີວິດແລ້ວ, ພວກເຮົາຈະຖືກນຳມາຕໍ່ພຣະພັກຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາເພື່ອການພິພາກສາເປັນຄັ້ງສຸດທ້າຍ. ນີ້ເອີ້ນວ່າ ການພິພາກສາຄັ້ງສຸດທ້າຍ. ການພິພາກສາຄັ້ງສຸດທ້າຍນີ້ ຈະຕັດສິນວ່າພວກເຮົາຈະໄປຢູ່ໃສຕລອດໄປ. ບ່ອນນີ້ພວກເຮົາຈະຖືກພິພາກສາຕາມສິ່ງທີ່ພວກເຮົາເວົ້າ ແລະເຮັດ ແລະຄິດໃນຊີວິດນີ້. ພວກເຮົາຈະຖືກພິພາກສາຕາມການຕິດຕາມຂອງພວກເຮົາ ຕໍ່ຄຳສອນຂອງພຣະເຢຊູ. ພວກເຮົາຈະຖືກພິພາກສາໂດຍບັນທຶກທີ່ໄດ້ຖືກເກັບໄວ້ໃນໂລກນີ້ ແລະໃນສວັນນຳ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊົງໃຫ້ພຣະເຢຊູພິພາກສາພວກເຮົາ.

ພຣະເຢຊູຊົງຮັກພວກເຮົາຫລາຍທີ່ສຸດ, ແຕ່ພຣະອົງຍັງຊົງເປັນຜູ້ພິພາກສາທີ່ຍຸດຕິທັມ ແລະຈະພິພາກສາພວກເຮົາຕາມແບບການດຳລົງຊີວິດຂອງພວກເຮົາ. ທຸກສິ່ງທີ່ພວກເຮົາໄດ້ຄິດຫລືເວົ້າ ຫລືເຮັດ ຖືກບັນທຶກໄວ້. ພຣະເຢຊູຊົງຮູ້ເຖິງການກະທຳທັງຫມົດທີ່ພວກເຮົາເຮັດ, ແລະເວລາພວກເຮົາຢືນຕໍ່ພຣະພັກຂອງພຣະອົງພວກເຮົາກໍຈະຈື່ຈຳມັນຄືກັນ.

### *ການສົນທະນາ*

- ບອກເຖິງບາງເວລາທີ່ພວກເຮົາຖືກພິພາກສາ.
- ມີສິ່ງໃດແດ່ທີ່ພວກເຮົາຈະຖືກພິພາກສາກ່ຽວກັບ?

## ພວກເຮົາຕັດສິນໂດຍການດຳລົງຊີວິດປະຈຳວັນຂອງພວກເຮົາວ່າ ຈະມີສິ່ງໃດເກີດຂຶ້ນ ຫລັງຈາກພວກເຮົາຕາຍໄປ

ຖ້າພວກເຮົາເຮັດສິ່ງທີ່ຖືກຕ້ອງໃນຊີວິດຂອງພວກເຮົາ, ພວກເຮົາຈະຕຽມຕົວຂອງພວກເຮົາໃຫ້ສາມາດຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ແລະຢູ່ນຳຄົນດີຄົນອື່ນໆທີ່ເຄີຍຢູ່ໃນໂລກຕລອດໄປ. ຖ້າພວກເຮົາບໍ່ຕິດຕາມພຣະບັນຍັດ

ຂອງພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ, ພວກເຮົາຈະຮູ້ສຶກເສັຽໃຈເມື່ອພວກເຮົາຢືນຢູ່ຕໍ່ພຣະພັກຂອງພຣະເຢຊູເພື່ອຮັບການພິພາກສາ.

ບັນດາສາສດາໄດ້ກ່າວວ່າ: ເພາະຄຳເວົ້າຂອງເຮົາຈະກ່າວໂທດເຮົາ, ແທ້ຈິງແລ້ວງານທັງຫມົດຂອງເຮົາຈະກ່າວໂທດເຮົາ; ຈະບໍ່ພົບວ່າ ເຮົາປາສຈາກມົນທິນ ແລະຄວາມນຶກຄິດຂອງເຮົາ ຈະກ່າວໂທດເຮົາດ້ວຍ. ສາສດາໄດ້ກ່າວວ່າ ຜູ້ຄົນຊົ່ວຮ້າຍຈະຢືນຢູ່ຕໍ່ຫນ້າພຣະເຢຊູ "ຄວາມດ້ວຍອັບອາຍ ແລະດ້ວຍຄວາມຮູ້ສຶກຜິດທີ່ຫນ້າຢ້ານກົວ" ແລະມັນຈະເປັນການດີກວ່າ ຖ້າຫີນແລະພູເຂົາສາມາດຕົກລົງມາທັບເຂົາ ເພື່ອຊ້ອນເຊື່ອງພວກເຂົາໄວ້ຈາກທີ່ປະທັບຂອງພຣະອົງ.

ສຳລັບແຕ່ລະຄົນທີ່ໄດ້ດຳລົງຊີວິດຢູ່ໃນໂລກນີ້, ແລ້ວວັນແຫ່ງພິພາກສາຄັ້ງສຸດທ້າຍຈະເປັນວັນທີ່ສະງ່າງາມ ຫລືຈະເປັນວັນແຫ່ງຄວາມໂສກເສົ້າ. ພວກເຮົາຄວນຕຽມສຳລັບເຫດການທີ່ຈະມາເຖິງນີ້ ເພື່ອວັນນັ້ນຈະເປັນວັນທີ່ມີຄວາມສຸກຂອງພວກເຮົາ. ພວກເຮົາຕ້ອງການທີ່ຈະຢືນຢູ່ຕໍ່ຫນ້າພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ໂດຍປາສາຈາກຄວາມອັບອາຍ ແລະຟັງພຣະອົງຕັສວ່າ ພຣະອົງຊົງພໍພຣະທັຍຕໍ່ການກະທຳຂອງພວກເຮົາ ໃນລະຍະທີ່ພວກເຮົາມີຊີວິດຢູ່.

ພວກເຮົາຄວນຄິດເຖິງການພິພາກສາຄັ້ງສຸດທ້າຍ. ພວກເຮົາຄວນຊື່ສັດຕໍ່ພຣະເຢຊູຄຣິສ ແລະກັບໃຈຈາກບາບຂອງພວກເຮົາ ຈົນເຖິງທີ່ສຸດຂອງຊີວິດຂອງພວກເຮົາ ເພື່ອວ່າພວກເຮົາຈະຕຽມພ້ອມຕໍ່ການພິພາກສານັ້ນ. ນີ້ເປັນທາງດຽວເທົ່ານັ້ນທີ່ພວກເຮົາຈະສາມາດລອດຈາກບາບທັງຫມົດຂອງພວກເຮົາໄດ້ເມື່ອເວລານັ້ນມາເຖິງ. ຖ້າພວກເຮົາມີສັດທາໃນພຣະເຢຊູຄຣິສ ແລະກັບໃຈຈາກບາບຂອງພວກເຮົາ, ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະອະພັຍບາບໃຫ້ພວກເຮົາ ແລະຈະຊ່ວຍເຫລືອພວກເຮົາໃຫ້ປາສຈາກບາບທັງຫມົດ. ຖ້າພວກເຮົາຊື່ສັດຕໍ່ພຣະເຢຊູຄຣິສ, ພວກເຮົາຈະໃຊ້ຊີວິດຂອງພວກເຮົາເຮັດສິ່ງທີ່ດີ, ຄິດສິ່ງທີ່ດີ, ແລະເວົ້າຄຳທີ່ດີ. ພວກເຮົາຈະຫາທຸກວິທີທາງທີ່ຈະຫລີກເວັ້ນຈາກຄົນ, ປຶ້ມ, ແລະບ່ອນທີ່ຈະເຮັດໃຫ້ພວກເຮົາຄິດສິ່ງທີ່ບໍ່ດີ ຫລືຢູ່ໃນຄວາມບໍ່ຊອບທັມ.

ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຊົງຮັກພວກເຮົາແຕ່ລະຄົນແລະຊົງຕ້ອງການໃຫ້ພວກເຮົາດຳລົງຊີວິດຢ່າງມີຄ່າຄວນທີ່ຈະກັບຄືນໄປຢູ່ນຳພຣະອົງ. ຖ້າພວກເຮົາມີຄວາມປາຖະນາຢາກໄປຢູ່ນຳພຣະອົງ ແລະຄົນດີອື່ນໆທີ່ພວກເຮົາຮັກ, ພວກເຮົາຕ້ອງມີສັດທາໃນພຣະເຢຊູຄຣິສ ແລະເຮັດຕາມສິ່ງທີ່ພຣະອົງຊົງບັນຊາໃຫ້ພວກເຮົາເຮັດ. ພວກເຮົາຕ້ອງຍັງຊ່ວຍຄອບຄົວຂອງພວກເຮົາໃຫ້ດຳລົງຊີວິດດີນຳອີກ. ພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາຈະຊ່ວຍເຫລືອພວກເຮົາ. ພຣະອົງຊົງໄດ້ມອບພຣະກິດຕິຄຸນໃຫ້ພວກເຮົາ ເພື່ອສະແດງວິທີໃຫ້ແກ່ພວກເຮົາ ແລະໄດ້ບອກພວກເຮົາວ່າ ພວກເຮົາສາມາດອະທິຖານຫາພຣະອົງເພື່ອຂໍຄວາມຊ່ວຍເຫລືອຈາກພຣະອົງ.

### *ການສົນທະນາ*

- ເປັນຫຍັງຄວາມຄິດແລະການກະທຳປະຈຳວັນຂອງພວກເຮົາຈຶ່ງມີຄວາມສຳຄັນທີ່ສຸດ?
- ທ່ານສາມາດເຮັດແນວໃດໄດ້ເພື່ອຈະປັບປຸງແນວຄິດ, ຄຳເວົ້າ ແລະການກະທຳຂອງທ່ານ?
- ເປັນຫຍັງພວກເຮົາຈຶ່ງຕ້ອງການຄວາມຊ່ວຍເຫລືອຈາກພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ທີ່ຈະເປັນຄົນດີພ້ອມໄດ້?
- ເປັນຫຍັງການມີສັດທາໃນພຣະເຢຊູເທົ່ານັ້ນ ພວກເຮົາຈຶ່ງຈະຖືກພິພາກສາວ່າມີຄ່າຄວນທີ່ຈະກັບຄືນ ໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາອີກ?

### *ຂໍ້ອ້າງອີງ*

*ວິນຍານຂອງພວກເຮົາຈະມີຊີວິດຢູ່ຕໍ່ໄປຫລັງຈາກພວກເຮົາຕາຍໄປ*

- ລູກາ ໒໓:໔໓ (ພຣະເຢຊູຊົງສັນຍາຕໍ່ຄົນຂີ້ລັກຜູ້ນຶ່ງທີ່ຢູ່ເທິງໄມ້ກາງແຂນວ່າລາວຈະໄດ້ຢູ່ໃນທີ່ສຸຂກະເສີມ.)
- ແອລມາ ໔໐:໑໑ (ວິນຍານຂອງພວກເຮົາຈະກັບຄືນໄປຫາພຣະບິດາຜູ້ສະຖິດໃນສວັນຂອງພວກເຮົາ ຫລັງຈາກພວກເຮົາຕາຍໄປ.)

*ໂລກວິນຍານເປັນບ່ອນທໍາງານ, ບ່ອນຮຽນ, ແລະບ່ອນລໍຖ້າ*

- ໑ ເປໂຕ ໓:໑໗–໒໐ (ພຣະເຢຊູຊົງສອນວິນຍານທີ່ຢູ່ໃນຄຸກວິນຍານ.)
- ແອລມາ ໔໐:໑໒–໑໔ (ຄົນຊອບທັມຈະມີຄວາມສຸກໃນທີ່ສຸຂກະເສີມ, ແລ້ວຄົນຊົ່ວຈະມີຄວາມໂສກເສົ້າໃນຄຸກ.)

*ພວກເຮົາຈະຖືກພິພາກສາໃນການພິພາກສາຄັ້ງສຸດທ້າຍ*

- ກິຈການ ໑໗:໓໑; ໂຣມ ໑໔:໑໐ (ພຣະເຢຊູຄຣິສຈະຊົງພິພາກສາມະນຸດທຸກຄົນວັນໃດວັນນຶ່ງ.)
- ພຣະນິມິດ ໒໐:໑໒ (ພວກເຮົາຈະຖືກພິພາກສາຈາກປຶ້ມທີ່ຖືກບັນທຶກໄວ້ໃນໂລກແລະໃນສວັນ.)

*ພວກເຮົາຕັດສິນໂດຍການດໍາລົງຊີວິດປະຈໍາວັນຂອງພວກເຮົາວ່າ ຈະມີສິ່ງໃດເກີດຂຶ້ນຫລັງຈາກພວກເຮົາຕາຍໄປ*

- ມັດທາຍ ໒໕:໓໑–໔໖ (ພຣະເຢຊູຄຣິສຈະຊົງພິພາກສາພວກເຮົາໂດຍການກະທໍາຂອງພວກເຮົາ.)
- ໒ ນີໄຟ ໒໙:໑໑ (ພວກເຮົາຈະຖືກພິພາກສາໂດຍພຣະຄັມພີ.)
- ຢາໂຄບ ໖:໙ (ພວກເຮົາຈະຢືນຢູ່ດ້ວຍຄວາມອັບອາຍ ແລະມີຄວາມຮູ້ສຶກທີ່ໂສກເສົ້າເມື່ອພວກເຮົາບໍ່ກັບໃຈ.)
- ແອລມາ ໑໒:໑໔ (ຄວາມເວົ້າ, ຄວາມຄິດ ແລະການກະທໍາຂອງພວກເຮົາຈະລົງໂທດພວກເຮົາ ຖ້າສິ່ງນັ້ນເປັນສິ່ງບໍ່ດີ.)
- ໒ ນີໄຟ ໓໑:໑໙–໒໐ (ພວກເຮົາຕ້ອງເປັນຄົນຊື່ສັດຕໍ່ພຣະເຢຊູຄຣິສໄປເລື້ອຍໆຈົນເຖິງທີ່ສຸດຂອງຊີວິດຂອງພວກເຮົາ; ຈົ່ງກັບໃຈຈາກບາບຂອງພວກເຮົາທັງຫມົດ ເພື່ອຈະໄດ້ຮັບຊີວິດນິຣັນດອນ.)



*ຜູ້ທີ່ຊື່ສັດຈົນເຖິງທີ່ສຸດຈະໄດ້ຮັບຄວາມສູງສົ່ງນຳພຣະບິດາຜູ້ສະຖິດໃນສວັນ ຂອງເຮົາແລະພຣະເຢຊູຄຣິສ.*

# ຊີວິດນິຣັນດອນ

*ບົດທີ ໓໗*

*ເຮົາຈະໄປຢູ່ໃສຫລັງຈາກການພິພາກສາຄັ້ງສຸດທ້າຍ?*

**ເຮົາແຕ່ລະຄົນຈະໄປຫາບ່ອນທີ່ພຣະອົງຊົງຈັດຕຽມໄວ້ໃຫ້**

ພຣະເຢຊູຊົງສອນວ່າ ພຣະບິດາເທິງສວັນຊົງໄດ້ຈັດຕຽມຫລາຍບ່ອນໄວ້ໃຫ້ເຮົາເພື່ອອາສັຍຢູ່. ເຮົາແຕ່ລະຄົນ ຈະຖືກສົ່ງໄປຫາບ່ອນນຶ່ງໃນສີ່ບ່ອນທີ່ພຣະອົງຊົງຈັດໄວ້ ອີງຕາມຄວາມຊື່ສັດຫນ້ອຍຫລາຍຂອງເຮົາ ທີ່ມີຕໍ່ພຣະເຢຊູຄຣິສ. ເຮົາຈະໄປຫາອານາຈັກທີ່ຕຽມໄວ້ຕາມການກະທໍາຂອງເຮົາ. ສີ່ບ່ອນນີ້ແມ່ນອານາຈັກຊັ້ນສູງ, ອານາຈັກຊັ້ນກາງ, ອານາຈັກຊັ້ນຕໍ່າ, ແລະແຫ່ງມືດມົນພາຍນອກ.

*ອານາຈັກຊັ້ນສູງ*

ບ່ອນນີ້ແມ່ນບ່ອນທີ່ພຣະບິດາຜູ້ສະຖິດໃນສວັນແລະພຣະເຢຊູຄຣິສດໍາລົງຢູ່. ມັນເປັນບ່ອນທີ່ຜູ້ຄົນຈະມີຄວາມສຸກຫລາຍ, ແລະມັນເປັນບ່ອນທີ່ສວຍງາມເກີນກວ່າທີ່ເຮົາຈະພັນລະນາໄດ້. ຜູ້ຄົນຜູ້ທີ່ຈະອາສັຍຢູ່ໃນອານາຈັກນີ້ ຈະຮັກພຣະບິດາເທິງສວັນແລະພຣະເຢຊູ ແລະຈະເລືອກເຊື່ອຟັງພວກພຣະອົງ. ເຂົາເຈົ້າຕ້ອງໄດ້ກັບໃຈຈາກບາບທຸກຢ່າງຂອງເຂົາເຈົ້າ ແລະຕ້ອງຮັບເອົາພຣະເຢຊູເປັນພຣະຜູ້ຊ່ວຍໃຫ້ລອດຂອງເຂົາເຈົ້າ. ເຂົາເຈົ້າຕ້ອງໄດ້ຮັບບັບຕິສະມາແລະຮັບເອົາຂອງປະທານແຫ່ງພຣະວິນຍານບໍຣິສຸດ

. ເຂົາເຈົ້າຕ້ອງມີປະຈັກພະຍານຈາກພຣະວິນຍານບໍຣິສຸດວ່າ ພຣະເຢຊູເປັນພຣະຜູ້ຊ່ວຍໃຫ້ລອດຂອງເຂົາເຈົ້າ.

ການອາໄສຢູ່ໃນພາກທີ່ສູງສຸດຂອງອານາຈັກຊັ້ນສູງ ເອີ້ນວ່າ *ຄວາມສູງສົ່ງ ຫລື ຊີວິດນິຣັນດອນ. ກ່ອນທີ່ຈະສາມາດອາໄສຢູ່ໃນພາກນີ້ຂອງອານາຈັກຊັ້ນສູງໄດ້, ຜູ້ຄົນຈະຕ້ອງໄດ້ແຕ່ງງານໃນພຣະວິຫານເສັຽກ່ອນ ແລະຈະຕ້ອງຮັກສາຄຳສັນຍາອັນສັກສິດທີ່ເຂົາເຈົ້າໄດ້ເຮັດໃນພຣະວິຫານ. ເຂົາເຈົ້າຈະໄດ້ຮັບທຸກສິ່ງທຸກຢ່າງທີ່ພຣະບິດາຜູ້ສະຖິດໃນສວັນມີ ແລະຈະກາຍເປັນເຫມືອນດັ່ງພຣະອົງ. ເຂົາເຈົ້າຍັງຈະສາມາດມີລູກ ທີ່ເປັນວິນຍານແລະຈະສ້າງໂລກໃຫມ່ໃຫ້ເຂົາເຈົ້າໄປຢູ່ນຳອີກ, ແລະຈະເຮັດທຸກສິ່ງທຸກຢ່າງທີ່ພຣະບິດາຜູ້ສະຖິດໃນສວັນຊົງໄດ້ກະທຳ. ຜູ້ຄົນຜູ້ທີ່ບໍ່ໄດ້ແຕ່ງງານໃນພຣະວິຫານຈະອາໄສຢູ່ໃນພາກນຶ່ງອີກຂອງອານາຈັກຊັ້ນສູງ, ແຕ່ເຂົາເຈົ້າຈະບໍ່ໄດ້ຮັບຄວາມສູງສົ່ງ.

*ອານາຈັກຊັ້ນກາງ*

ອານາຈັກແຫ່ງນີ້ຈະບໍ່ເລີດເຫມືອນດັ່ງອານາຈັກຊັ້ນສູງ. ເຖິງແມ່ນພຣະເຢຊູຈະຊົງສະເດັດມາຢ້ຽມຢາມອານາຈັກຊັ້ນກາງກໍຕາມ, ແຕ່ຜູ້ຄົນທີ່ອາໄສຢູ່ໃນນັ້ນຈະບໍ່ໄດ້ອາໄສຢູ່ນຳພຣະບິດາຜູ້ສະຖິດໃນສວັນ, ແລະເຂົາເຈົ້າຈະບໍ່ມີທຸກສິ່ງທຸກຢ່າງເຫມືອນພຣະອົງຊົງມີ. ຜູ້ທີ່ໄດ້ໄປອາໄສຢູ່ໃນອານາຈັກຊັ້ນກາງ ເປັນຜູ້ທີ່ມີກຽດ. ບາງຄົນຈະແມ່ນສະມາຊິກຂອງສາສນາຈັກ, ແລະບາງຄົນຈະບໍ່ແມ່ນ. ເຂົາເຈົ້າຈະເປັນຜູ້ທີ່ບໍ່ໄດ້ຍອມຮັບເອົາພຣະເຢຊູຄຣິສຕອນມີຊີວິດຢູ່ໃນໂລກ ແຕ່ພາຍລຸນມາໄດ້ຮັບເອົາພຣະອົງໃນໂລກວິນຍານ. ຜູ້ທີ່ອາໄສຢູ່ໃນນັ້ນ ຈະບໍ່ໄດ້ເປັນສ່ວນນຶ່ງຂອງຄອບຄົວນິຣັນດອນ ແຕ່ຈະອາໄສຢູ່ຕາມລຳພັງ ປາສຈາກຄອບຄົວ. ພຣະບິດາຜູ້ສະຖິດໃນສວັນຈະຊົງມອບຄວາມສຸກໃຫ້ຜູ້ຄົນເຫລົ່ານີ້ຕາມທີ່ເຂົາເຈົ້າຄວນໄດ້ຮັບ.

*ອານາຈັກຊັ້ນຕ່ຳ*

ອານາຈັກແຫ່ງນີ້ບໍ່ເລີດເທົ່າກັບອານາຈັກຊັ້ນສູງ ຫລື ອານາຈັກຊັ້ນກາງ. ທັງພຣະບິດາຜູ້ສະຖິດໃນສວັນ ຫລືພຣະເຢຊູ ຈະບໍ່ສະເດັດໄປຢ້ຽມຢາມຜູ້ທີ່ອາໄສຢູ່ແຫ່ງນີ້. ເຫລົ່າທູດຈະໄປຢ້ຽມຢາມຜູ້ຄົນເຫລົ່ານີ້, ແລະເຂົາເຈົ້າຈະມີອິດທິພົນຂອງພຣະວິນຍານບໍຣິສຸດສະຖິດຢູ່ນຳ. ຜູ້ທີ່ອາໄສຢູ່ໃນອານາຈັກຊັ້ນຕ່ຳນີ້ແມ່ນຜູ້ທີ່ບໍ່ໄດ້ຮັບເອົາພຣະກິດຕິຄຸນ ຫລື ປະຈັກພະຍານຂອງພຣະເຢຊູ ທັງຕອນ

ຢູ່ໃນໂລກນີ້ ແລະຕອນຢູ່ໃນໂລກວິນຍານ. ເຂົາເຈົ້າຈະໄດ້ຮັບທຸກຕາມຄວາມຜິດບາບຂອງເຂົາເຈົ້າໃນຄຸກວິນຍານຈົນລະຍະພັນປີຜ່ານພົ້ນໄປ. ແລ້ວໃນທີ່ສຸດເຂົາເຈົ້າຈະໄດ້ຟື້ນຄືນຊີວິດ.

ຂະນະທີ່ຢູ່ໃນໂລກນີ້, ເຂົາເຈົ້າເປັນຄົນຂີ້ຕົວະ, ເປັນຄົນຂີ້ລັກ, ເປັນຄາດຕະກອນ, ເປັນສາສດາປອມ, ເປັນຄົນຫລິ້ນຊູ້, ແລະເປັນຄົນຫຍໍ້ຫຍັນສິ່ງທີ່ສັກສິດ. ເຂົາເຈົ້າເປັນຜູ້ທີ່ເຊື່ອຄຳຂອງໂລກ ແທນທີ່ຈະເຊື່ອໃນຄຳສອນຂອງພຣະເຢຊູ. ຈະມີຄົນເປັນຈຳນວນມາກມາຍອາສັຍຢູ່ໃນອານາຈັກແຫ່ງນີ້. ພຣະບິດາຜູ້ສະຖິດໃນສວັນຈະຊົງມອບຄວາມສຸກໃຫ້ຜູ້ຄົນເຫລົ່ານີ້ຕາມທີ່ເຂົາເຈົ້າຄວນໄດ້ຮັບ.

*ແຫ່ງມືດມົນພາຍນອກ*

ແຫ່ງມືດມົນພາຍນອກແມ່ນບ່ອນທີ່ຊາຕານແລະຜູ້ທີ່ຕິດຕາມມັນອາສັຍຢູ່. ຜູ້ຄົນເຫລົ່ານີ້ຈະແມ່ນຜູ້ທີ່ເລືອກທີ່ຈະຢູ່ນຳຊາຕານ. ເຂົາເຈົ້າຈະບໍ່ໄດ້ຮັບການໃຫ້ອະພັຍ. ຜູ້ຄົນເຫລົ່ານີ້ຈະອາສັຍຢູ່ໃນຄວາມມືດຊົ່ວນິຣັນດອນ, ຈະໂສກເສົ້າ, ແລະທຸກທໍຣະມານຢູ່ນຳຊາຕານແລະວິນຍານທຸກດວງທີ່ຕິດຕາມມັນ.

### *ການສົນທະນາ*

- ອານາຈັກແຫ່ງໃດທີ່ເຮົາຄວນຕຽມຕໍ່ ເພື່ອຈະກາຍເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນ?
- ມີສິ່ງໃດແດ່ທີ່ເຮົາຄວນເຮັດຢູ່ໃນໂລກນີ້ ເພື່ອຈະໄດ້ມີຄ່າຄວນພໍ ເພື່ອດຳລົງຊີວິດຢູ່ຢາງພຣະບິດາຜູ້ສະຖິດໃນສວັນ?

## ພຣະບິດາຜູ້ສະຖິດໃນສວັນຊົງໄດ້ມອບພຣະກິດຕິຄຸນໃຫ້ເຮົາ ເພື່ອຈະໄດ້ຕຽມຕໍ່ຊີວິດນິຣັນດອນ ນອານາຈັກຊັ້ນສູງ

ພຣະບິດາຜູ້ສະຖິດໃນສວັນຊົງໄດ້ໃຫ້ໂອກາດເຮົາແຕ່ລະຄົນທີ່ຈະໄດ້ມີຊີວິດນິຣັນດອນຮ່ວມກັບພຣະອົງ. ຊີວິດນິຣັນດອນເປັນຊີວິດທີ່ພຣະບິດາຜູ້ສະຖິດໃນສວັນແລະພຣະເຢຊູຊົງມີຢູ່. ພຣະບິດາຜູ້ສະຖິດໃນສວັນຂອງເຮົາຊົງເປັນຜູ້ດີພ້ອມທຸກຢາງ. ພຣະອົງຊົງຮູ້ທຸກສິ່ງ. ພຣະອົງຊົງມີອຳນາດເຫນືອທຸກສິ່ງ. ພຣະອົງຊົງປົກຄອງທຸກສິ່ງ. ພຣະອົງຊົງພຣະຊົນຢູ່ຕາມຄວາມຈິງແລະກົດນິຣັນດອນ.

ພຣະເຢຊູໄດ້ເຊື່ອຟັງຕໍ່ພຣະບິດາຜູ້ສະຖິດໃນສວັນ, ແລະສະນັ້ນ ພຣະອົງຈຶ່ງໄດ້ອາໄສຢູ່ນຳພຣະບິດາ ຜູ້ສະຖິດໃນສວັນ. ຖ້າເຮົາເຮັດຕາມສິ່ງທີ່ພຣະເຢຊູຊົງໄດ້ສອນເຮົາໃຫ້ເຮັດ, ເຮົາຈະສາມາດດຳລົງຊີວິດຢູ່ເໝືອນດັ່ງພຣະອົງແລະພຣະບິດາຜູ້ສະຖິດໃນສວັນດຳລົງຢູ່. ການທີ່ມີຊີວິດນິຣັນດອນຢູ່ນຳພຣະບິດາຜູ້ສະຖິດໃນສວັນເປັນພອນອັນປະເສີດເລີດລ້ຳທີ່ສຸດທີ່ພຣະອົງສາມາດມອບໃຫ້ເຮົາ. ມັນຈະນຳຄວາມສຸກມາໃຫ້ເຮົາຫລາຍກວ່າສິ່ງອື່ນໃດ.

ພຣະກິດຕິຄຸນໄດ້ບອກເຮົາເຖິງທຸກສິ່ງທີ່ເຮົາຈຳເປັນຕ້ອງຮູ້ ແລະທຸກສິ່ງທີ່ເຮົາຈຳເປັນຕ້ອງເຮັດ ເພື່ອຈະໄດ້ຮັບຊີວິດນິຣັນດອນ. ມັນຊ່ວຍເຮົາໃຫ້ຮູ້ຈັກພຣະບິດາຜູ້ສະຖິດໃນສວັນແລະພຣະເຢຊູຄຣິສ. ມັນສອນເຮົາໃຫ້ຮູ້ຈັກດຳລົງຊີວິດເໝືອນດັ່ງພວກພຣະອົງ. ໂດຍການອະທິຖານແລະສຶກສາພຣະຄຳພີ ເຮົາຈະສາມາດຮູ້ກ່ຽວກັບພວກພຣະອົງໄດ້ດີຫລາຍຂຶ້ນ. ເມື່ອເຮົາຮູ້ແລະຮັກພວກພຣະອົງ, ເຮົາກໍຈະຢາກເຊື່ອຟັງພຣະຄຳຂອງພວກພຣະອົງ. ເມື່ອເຮົາເຊື່ອຟັງ, ເຮົາຈະສາມາດເປັນເໝືອນດັ່ງພວກພຣະອົງ ແລະເປັນຜູ້ທີ່ມີຄ່າຄວນພໍທີ່ຈະໄດ້ຢູ່ນຳພວກພຣະອົງຕລອດໄປ.

### *ການສົນທະນາ*

- ຊີວິດນິຣັນດອນແມ່ນຫຍັງ? ແມ່ນໃຜຈະໄດ້ຮັບມັນ?
- ພຣະກິດຕິຄຸນຊ່ວຍເຮົາໃຫ້ຕຽມຕໍ່ຊີວິດນິຣັນດອນໄດ້ແນວໃດ?

## ພຣະບິດາຜູ້ສະຖິດໃນສວັນຂອງເຮົາຈະຊ່ວຍເຮົາ ເມື່ອເຮົາເລືອກທີ່ຈະເຊື່ອຟັງພຣະກິດຕິຄຸນ

ພຣະບິດາຜູ້ສະຖິດໃນສວັນຂອງເຮົາຊົງຮູ້ວ່າ ມັນເປັນໄປໄດ້ສຳລັບເຮົາທຸກຄົນທີ່ຈະດຳລົງຊີວິດໃນພຣະກິດຕິຄຸນ ແລະຮັບເອົາຊີວິດນິຣັນດອນ. ໃນຖານະທີ່ເປັນລູກໆຂອງພຣະອົງ, ເຮົາມີອຳນາດທີ່ຈະກາຍເປັນເໝືອນດັ່ງພຣະອົງໄດ້. ພຣະອົງຊົງຮູ້ເຖິງຄວາມອ່ອນແອທີ່ເຮົາແຕ່ລະຄົນມີຢູ່ ແລະເຖິງສິ່ງທີ່ຈະລໍ້ລວງເຮົາ. ພຣະອົງຊົງປ່ອຍໃຫ້ເຮົາມາສູ່ໂລກນີ້ໃນເວລາແລະໃນບ່ອນທີ່ຈະໃຫ້ເຮົາມີໂອກາດທີ່ຈະໄດ້ເຮັດສິ່ງທີ່ດີແລະຊຳຮຽນ.

ບັດນີ້ ມັນແມ່ນເວລາຂອງເຮົາແລ້ວ ທີ່ຈະເຮັດທຸກສິ່ງທີ່ເຮົາຈຳເປັນຕ້ອງເຮັດ ເພື່ອຈະໄດ້ຮັບຊີວິດນິຣັນດອນ. ພຣະບິດາຜູ້ສະຖິດໃນສວັນຊົງຮັກເຮົາແລະມີພຣະປະສົງໃຫ້ເຮົາໄດ້ຮັບຜົນສຳເຣັດ. ພຣະອົງຊົງໄດ້ເຮັດທຸກສິ່ງທີ່ພຣະອົງຊົງເຮັດໄດ້ສຳລັບເຮົາ. ພຣະອົງຊົງໄດ້ສ້າງໂລກຂຶ້ນ ຊຶ່ງເປັນບ່ອນທີ່ເຮົາສາມາດມາຮຽນແລະເຕີບໂຕຂຶ້ນ. ພຣະອົງຊົງໄດ້ສົ່ງພຣະເຢຊູຄຣິສ ພຣະບຸດຂອງພຣະອົງ ມາເປັນພຣະຜູ້ຊ່ວຍໃຫ້ລອດຂອງເຮົາ ແລະສອນພຣະກິດຕິຄຸນໃຫ້ເຮົາ. ພຣະອົງຊົງໄດ້ເຊື້ອເຊີນໃຫ້ເຮົາອະທິຖານຫາພຣະອົງ. ພຣະອົງຊົງໄດ້ສົ່ງພຣະວິນຍານບໍຣິສຸດມາເປັນຜູ້ນຳພາເຮົາ. ບັດນີ້ ເຮົາຈະຕ້ອງເຮັດສິ່ງທີ່ຖືກຕ້ອງ. ຖ້າເຮົາເລືອກທີ່ຈະມີສັດທາໃນພຣະເຢຊູຄຣິສແລະເຊື່ອຟັງພຣະອົງ, ພຣະອົງຈະຊ່ວຍເຫລືອເຮົາແລະຈະມອບຄວາມເຂັ້ມແຂງ ໃຫ້ເຮົາ ເພື່ອຈະໄດ້ເອົາຊະນະການລໍ້ລວງ ແລະບັນຫາອື່ນໆທີ່ເຮົາມີໃນຊີວິດ.

ພຣະບິດາຜູ້ສະຖິດໃນສວັນຂອງເຮົາຊົງໄດ້ຂໍຮ້ອງໃຫ້ເຮົາຮັບເອົາພຣະກິດຕິຄຸນ. ການທີ່ຈະເຮັດສິ່ງນີ້ ທຳອິດ ເຮົາຕ້ອງມີສັດທາໃນພຣະເຢຊູຄຣິສເສັຽກ່ອນ. ແລ້ວເຮົາຕ້ອງກັບໃຈຈາກບາບຂອງເຮົາ ເພື່ອວ່າເຮົາຈະສາມາດຮັບບັບຕິສະມາແລະຮັບເອົາການຢືນຢັນເປັນສະມາຊິກຂອງສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍ. ເວລາເຮົາໄດ້ຮັບການຢືນຢັນ, ເຮົາຈະໄດ້ຮັບຂອງປະທານແຫ່ງພຣະວິນຍານບໍຣິສຸດຈາກຜູ້ທີ່ມີຖານະປະໂຣຫິດ. ພຣະວິນຍານບໍຣິສຸດຈະບອກເຮົາແຕ່ລະຄົນເຖິງສິ່ງທີ່ພຣະເຢຊູຄຣິສຕ້ອງການ ໃຫ້ເຮົາເຮັດ, ແລະກ່ອນທີ່ຈະໄດ້ຮັບຊີວິດນິຣັນດອນ ເຮົາຈະຕ້ອງໃຊ້ຕລອດຊີວິດຂອງເຮົາເພື່ອເຊື່ອຟັງແລະຮັບໃຊ້ພຣະອົງ.

ພຣະເຢຊູຊົງຂໍຮ້ອງໃຫ້ເຮົາທຸກຄົນໃຫ້ເຊື່ອຟັງຕໍ່ພຣະບັນຍັດ ເພື່ອຊ່ວຍເຮົາໃຫ້ຕຽມພ້ອມທີ່ຈະກັບໄປຢູ່ກັບພຣະບິດາຜູ້ສະຖິດໃນສວັນອີກ. ການນີ້ລວມທັງການເຊື່ອຟັງຕໍ່ກົດພົມມະຈັນ, ການຈ່າຍສ່ວນສິບ ແລະການຈ່າຍບໍຣິຈາກ, ການເຊື່ອຟັງຕໍ່ກົດພຣະວາຈາແຫ່ງປັນຍາ, ເປັນຄົນຊື່ສັດຕລອດເວລາ, ແລະຮັກສາວັນຊະບາໂຕໃຫ້ສັກສິດ.

ກ່ອນທີ່ຈະກາຍເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງເຮົາໄດ້ນັ້ນ ເຮົາຈະຕ້ອງຮັບເອົາພິທີການຕ່າງໆທີ່ກະທຳກັນໃນພຣະວິຫານເສັຽກ່ອນ

ຊຶ່ງຮູ້ກັນວ່າ *ຂອງປະທານສັກສິດ. ເຮົາຕ້ອງໄດ້ຜະນຶກຢູ່ໃນນັ້ນ ເພື່ອວ່າເຮົາຈະໄດ້ຢູ່ນຳຄອບຄົວເຮົາຊົ່ວນິຣັນດອນ. ແລ້ວເຮົາຄວນຊອກຫາລາຍຊື່ຂອງຍາດຕິພີ່ນ້ອງຂອງເຮົາຜູ້ທີ່ລ່ວງລັບໄປແລ້ວ ແລະມອບມັນໃຫ້ສາສນາຈັກ ເພື່ອຈະໄດ້ເຮັດພິທີການຕ່າງໆຢູ່ໃນພຣະວິຫານແທນເຂົາເຈົ້າ.

ພຣະເຢຊູຊົງໄດ້ບັນຊາໃຫ້ເຮົາເຮັດຫລາຍສິ່ງຫລາຍຢ່າງ. ການນີ້ລວມທັງການບອກໃຫ້ຄົນອື່ນຮູ້ກ່ຽວກັບພຣະກິດຕິຄຸນ, ການຮັກແລະຊ່ວຍເຫລືອເຂົາເຈົ້າ, ແລະການເປັນຕົວຢ່າງທີ່ດີໃຫ້ແກ່ເຂົາເຈົ້າ.

ເຮົາຍັງຄວນຮັກສາຄຳໝັ້ນສັນຍາທຸກຢ່າງທີ່ເຮົາໄດ້ກະທຳໄວ້ກັບພຣະບິດາຜູ້ສະຖິດໃນສວັນຂອງເຮົາ, ຕ້ອງໄປໂບດເປັນປະຈຳ, ຕ້ອງສອນພຣະກິດຕິຄຸນໃຫ້ຄອບຄົວເຮົາໂດຍການສຶກສາພຣະຄັມພີທຸກວັນ, ແລະຕ້ອງອະທິຖານເປັນສ່ວນຕົວແລະເປັນຄອບຄົວທຸກໆວັນ.

ຖ້າເຮົາມີສັດທາໃນພຣະເຢຊູຄຣິສແລະພະຍາຍາມທີ່ຈະເຊື່ອຟັງຕໍ່ພຣະບັນຍັດທຸກປະການຂອງພຣະອົງ, ເຮົາຈະໄດ້ຮັບຊີວິດນິຣັນດອນ ແລະກາຍເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງເຮົາ.

ການກາຍເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງເຮົາ ເຫມືອນດັ່ງການປີນຂຶ້ນຂັ້ນໄດ. ເຮົາຈະຕ້ອງໄດ້ເລີ້ມຕົ້ນຈາກຂັ້ນທຳອິດ ແລະປີນຂຶ້ນໄປແຕ່ລະຂັ້ນຈົນວ່າເຮົາໄປຮອດຂັ້ນສູງສຸດ. ສາສດາ ໂຢເຊັບ ສມິທ ເວົ້າໄວ້ວ່າ ຖ້າເຮົາຢາກກາຍເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງເຮົາ ເຮົາຈະຕ້ອງຮຽນຮູ້ເຖິງຄວາມຮູ້ສຶກ, ຄວາມຄິດ, ແລະການກະທຳຂອງພຣະອົງເສັຽກ່ອນ. ເມື່ອເຮົາເຂົ້າໃຈສິ່ງເຫລົ່ານີ້ກ່ຽວກັບພຣະອົງແລ້ວ, ເຮົາຈະສາມາດຮຽນຢ່າງອື່ນໆອີກກ່ຽວກັບພຣະອົງ ຈົນວ່າເຮົາຮູ້ຈັກວິທີທີ່ຈະກາຍເປັນເຫມືອນດັ່ງພຣະອົງຊົງເປັນຢູ່.

ມັນຈະຊ່ວຍເຮົາໃຫ້ຈື່ຈຳວ່າ ຄັ້ງນຶ່ງພຣະບິດາຜູ້ສະຖິດໃນສວັນຂອງເຮົາກໍເຄີຍເປັນມະນຸດຄົນນຶ່ງ ຜູ້ເຄີຍອາສັຍຢູ່ໃນໂລກແຫ່ງນຶ່ງເຫມືອນດັ່ງເຮົາ. ພຣະອົງໄດ້ກາຍເປັນພຣະບິດາຜູ້ສະຖິດໃນສວັນຂອງເຮົາ ໂດຍການເອົາຊະນະບັນຫາຕ່າງໆດັ່ງທີ່ເຮົາຈຳເປັນຕ້ອງໄດ້ເຮັດຢູ່ໃນໂລກນີ້. ແຕ່ເຖິງຢ່າງໃດກໍຕາມ ສາສດາ ໂຢເຊັບສມິທ ບອກໄວ້ວ່າ ເຮົາຈະບໍ່ຮຽນຮູ້ທຸກສິ່ງທຸກຢ່າງທີ່ເຮົາຈຳເປັນຕ້ອງໄດ້ຮຽນຂະນະ

ທີ່ເຮົາຢູ່ໃນໂລກນີ້. ມັນຈະໃຊ້ເວລາຢ່າງດົນນານຫລັງຈາກເຮົາຜ່ານພົ້ນຊີວິດນີ້ໄປ ທີ່ຈະຮູ້ທຸກສິ່ງທີ່ເຮົາຈຳເປັນຕ້ອງຮູ້ຢ່າງເປັນລຳດັບ ກ່ອນຈະກາຍເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງເຮົາໄດ້.

ເມື່ອເຮົາຮຽນທີ່ຈະຮັກສາພຣະບັນຍັດທຸກປະການຂອງພຣະບິດາຜູ້ສະຖິດໃນສວັນຂອງເຮົາ, ຈົ່ງຄິດເບິ່ງວ່າ ເຮົາຈະມີຄວາມສຸກຫລາຍປານໃດ ເວລາເຮົາກັບຄືນໄປຫາພຣະອົງ ແລະໄດ້ຍິນພຣະອົງບອກວ່າ ພຣະອົງຊົງປິຕິຍິນດີກັບການດຳລົງຊີວິດຂອງເຮົາ ແລະເຮົາຈະກາຍເປັນເຫມືອນດັ່ງພຣະອົງ ແລະອາສັຍຢູ່ນຳພຣະອົງຕລອດໄປ.

### *ການສົນທະນາ*

- ເປັນຫຍັງມັນຈຶ່ງເປັນໄປໄດ້ສຳລັບເຮົາແຕ່ລະຄົນທີ່ຈະກາຍເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງເຮົາໄດ້?
- ມີສິ່ງໃດແດ່ທີ່ເຮົາຄວນເຮັດ ເພື່ອຈະໄດ້ມີຊີວິດເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງເຮົາມີ?
- ພຣະບິດາຜູ້ສະຖິດໃນສວັນຂອງເຮົາຊົງຊ່ວຍເຫລືອເຮົາໃຫ້ກາຍເປັນເຫມືອນດັ່ງພຣະອົງໄດ້ແນວໃດ?
- ບັນລະຍາຍເຖິງຄວາມຮູ້ສຶກຂອງທ່ານ ຖ້າທ່ານໄດ້ຍິນພຣະບິດາຜູ້ສະຖິດໃນສວັນບອກທ່ານວ່າ ທ່ານໄດ້ຮັບຄວາມສຳເຣັດຜົນຢ່າງດີງາມ ແລະພຣະອົງຊົງຮັກທ່ານ.

## *ຂໍ້ອ້າງອີງ*

*ເຮົາແຕ່ລະຄົນຈະໄປຫາບ່ອນທີ່ພຣະອົງຊົງຈັດຕຽມໄວ້ໃຫ້*

- ໂຢຮັນ ໑໔:໒ (ພຣະເຢຊູຊົງໄດ້ຈັດຕຽມບ່ອນໄວ້ສຳລັບເຮົາໃນຜາສາດຂອງພຣະບິດາຂອງພຣະອົງ.)

*ພຣະບິດາຜູ້ສະຖິດໃນສວັນຊົງໄດ້ມອບພຣະກິດຕິຄຸນໃຫ້ເຮົາ ເພື່ອຈະໄດ້ຕຽມຕໍ່ຊີວິດນິຣັນດອນໃນອານາຈັກຊັ້ນສູງ*

- ໂມໄຊຍາ ໕:໒໗–໒໗ (ເຮົາໄດ້ຖືກບອກເຖິງສິ່ງທີ່ເຮົາຄວນເຮັດ ເພື່ອຈະໄດ້ຮັບຊີວິດນິຣັນດອນເປັນມໍຣະດົກ.)

- ແອລມາ ໓໔:໓໒–໓໔ (ບັດນີ້ເປັນເວລາທີ່ຈະຕຽມພ້ອມເພື່ອຢູ່ນຳພຣະບິດາ ຜູ້ສະຖິດໃນສວັນຂອງເຮົາ.)

*ພຣະບິດາຜູ້ສະຖິດໃນສວັນຂອງເຮົາຈະຊ່ວຍເຮົາ ເມື່ອເຮົາເລືອກທີ່ຈະເຊື່ອຟັງພຣະກິດຕິຄຸນ*

- ມັດທາຍ ໒໕:໒໑ (ພຣະບິດາຜູ້ສະຖິດໃນສວັນຂອງເຮົາຈະໃຫ້ຜູ້ທີ່ຊື່ສັດປົກຄອງຫລາຍສິ່ງຫລາຍຢ່າງ.)

# ຫຼັກແຫ່ງຄວາມເຊື່ອ

ໃນປີ ໑໙໔໘ ສາສດາໂຢເຊັບ ສມິທ ໄດ້ສົ່ງຈົດໝາຍສະບັບນຶ່ງໄປຫາ ຈອນ ເວນເວີດ ຜູ້ຮຽບຮຽງພາສາໃຫ້ໂຮງພິມ ຊິກາໂກ ດີໂມແຄຼັດ. ຈົດໝາຍສະບັບນີ້ ບັນຈຸຫລາຍເຣື່ອງກ່ຽວກັບປະວັດສາດຂອງສາສນາຈັກ. ພ້ອມນັ້ນຍັງມີຂໍ້ຄວາມຢູ່ ສິບສາມຂໍ້ບົ່ງເຖິງຄວາມເຊື່ອຂອງສິດທິຊົນຍຸກສຸດທ້າຍ. ນັບແຕ່ນັ້ນມາ ມັນຖືກ ເອີ້ນວ່າ ຫຼັກແຫ່ງຄວາມເຊື່ອ, ຊຶ່ງມີຢູ່ຂ້າງຫລຸ່ມນີ້.

ຫຼັກແຫ່ງຄວາມເຊື່ອນີ້ເປັນຄຳສອນຂອງສາສນາຈັກຢ່າງນຶ່ງທີ່ຮັບຮູ້ກັນເປັນ ທາງການແລະຖືກຣວມເຂົ້າເປັນສ່ວນນຶ່ງໃນພຣະຄັມພີຍຸກສຸດທ້າຍ. ມັນບອກຢ່າງ ແຈ່ມແຈ້ງເຖິງຄວາມເຊື່ອທີ່ຈະຊ່ວຍສະມາຊິກ ໃຫ້ເຂົ້າໃຈເຖິງຄວາມເຊື່ອຂັ້ນ ພື້ນຖານຂອງສາສນາຈັກ ແລະໃຫ້ອະທິບາຍຄວາມເຊື່ອເຫລົ່ານີ້ຕໍ່ຄົນອື່ນ. ເຖິງຢ່າງໃດກໍດີ, ມັນບໍ່ໄດ້ເປັນບົດສລຸບຫລັກທັມຂອງສາສນາຈັກ. ຜ່ານສາສດາ ຜູ້ມີຊີວິດຢູ່, ສາສນາຈັກໄດ້ຮັບການນຳພາ ແລະໄດ້ຮັບການເປີດເຜີຍ ແລະໄດ້ຮັບ ການດົນໃຈຢູ່ສເມີ.

**໑** ພວກເຮົາເຊື່ອໃນພຣະຜູ້ເປັນເຈົ້າ ພຣະບິດາຜູ້ສະຖິດນິຣັນດອນ ແລະໃນ ພຣະບຸດຂອງພຣະອົງ ພຣະເຢຊູຄຣິສ ແລະໃນພຣະວິນຍານບໍຣິສຸດ.

**໒** ພວກເຮົາເຊື່ອວ່າມະນຸດຈະໄດ້ຮັບໂທດເພາະບາບຂອງຕົນ ແລະບໍ່ແມ່ນ ເພາະການລ່ວງລະເມີດຂອງອາດາມ.

**໓** ພວກເຮົາເຊື່ອວ່າ ໂດຍທາງການຊົດໃຊ້ຂອງພຣະຄຣິສ ມະນຸດຊາດທັງປວງ ຈະລອດໂດຍການປະຕິບັດຕາມກົດແລະພິທີການແຫ່ງພຣະກິດຕິຄຸນ.

໔ ພວກເຮົາເຊື່ອວ່າຫລັກທັມແລະພິທີການເບື້ອງຕົ້ນແຫ່ງພຣະກິດຕິຄຸນຄື: ນຶ່ງ ສັດທາໃນອົງພຣະເຢຊູຄຣິສເຈົ້າ; ສອງ ການກັບໃຈ; ສາມ ບັບຕິສະມາໂດຍລົງໄປໃນນ້ຳຫມົດທັງຕົວ ເພື່ອການປົດບາບ; ສີ່ ການວາງມືເພື່ອຂອງປະທານແຫ່ງພຣະວິນຍານບໍຣິສຸດ.

໕ ພວກເຮົາເຊື່ອວ່າມະນຸດຕ້ອງໄດ້ຮັບການຮຽກຮ້ອງຈາກພຣະຜູ້ເປັນເຈົ້າໂດຍການພະຍາກອນ ແລະໂດຍການວາງມືໂດຍຜູ້ມີອຳນາດ ເພື່ອໃຫ້ສອນພຣະກິດຕິຄຸນແລະປະຕິບັດພິທີການຕາມນັ້ນ.

໖ ພວກເຮົາເຊື່ອໃນການຈັດວາງລະບຽບງານຢ່າງດຽວກັນກັບທີ່ມີຢູ່ໃນສາສນາຈັກສມັຍໂບຮານ ນັ້ນຄື ອັຄສາວົກ, ສາສດາ, ອະທິການ, ຄູສອນ, ປິຕຸ ແລະອື່ນໆ.

໗ ພວກເຮົາເຊື່ອໃນຂອງປະທານແຫ່ງການເວົ້າພາສາ, ການພະຍາກອນ, ການເປີດເຜີຍ, ພາບທີ່ມາໃຫ້ເຫັນ, ການຮັກສາ, ການແປພາສາ, ແລະອື່ນໆ.

໘ ພວກເຮົາເຊື່ອວ່າ ພຣະຄັມພີໄບເບິ້ນເປັນພຣະຄຳຂອງພຣະຜູ້ເປັນເຈົ້າຕາບໃດທີ່ແປມັນຖືກຕ້ອງ. ພວກເຮົາເຊື່ອອີກວ່າ ພຣະຄັມພີມໍມອນເປັນພຣະຄຳຂອງພຣະຜູ້ເປັນເຈົ້າ.

໙ ພວກເຮົາເຊື່ອທັງຫມົດທີ່ພຣະຜູ້ເປັນເຈົ້າຊົງໄດ້ເປີດເຜີຍມາ ທັງຫມົດທີ່ພຣະອົງຊົງເປີດເຜີຍຢູ່ໃນຂະນະນີ້ ແລະພວກເຮົາເຊື່ອວ່າ ພຣະອົງຈະເປີດເຜີຍເຣື່ອງສຳຄັນແລະຍິ່ງໃຫຍ່ອີກຫລາຍເຣື່ອງກ່ຽວກັບອານາຈັກຂອງພຣະຜູ້ເປັນເຈົ້າ.

໑໐ ພວກເຮົາເຊື່ອໃນການຮວມກັນແທ້ໆຂອງເຊື້ອສາຍອິສຣາເອນ ແລະໃນການກັບຄືນມາຂອງຄົນສິບເຜົ່າ ແລະວ່າຊີໂອນ (ເຢຣູຊາເລັມໃຫມ່) ຈະຖືກສ້າງຂຶ້ນໃນທະວີບອະເມຣິການີ້ ວ່າພຣະຄຣິສຈະຊົງປົກຄອງແຜ່ນດິນໂລກເອງ ແລະວ່າແຜ່ນດິນໂລກຈະຖືກເຮັດໃຫມ່ແລະໄດ້ຮັບຣັສມີພາບແຫ່ງຣົ່ມດີຂອງມັນ.

໑໑ ພວກເຮົາເຊື່ອຖືສິດທິແຫ່ງການນະມັສການພຣະຜູ້ເປັນເຈົ້າ ຜູ້ຊົງມິຣິດທານຸພາບຕາມການບອກຂອງຄວາມຮູ້ສຶກຜິດຊອບຊອບຂອງເຮົາເອງ ແລະຍອມໃຫ້ຄົນທັງປວງມີສິດທິເຊັ່ນດຽວກັນ ໃຫ້ເຂົານະມັສການຢ່າງໃດ, ທີ່ໃດ, ຫລືສິ່ງໃດທີ່ເຂົາຈະນະມັສການ.

໑໒ ພວກເຮົາເຊື່ອໃນການຂຶ້ນຢູ່ກັບກະສັດ, ປະທານນະທິບໍດີ, ຜູ້ປົກຄອງ, ແລະຜູ້ພິພາກສາ ໃນການເຮັດຕາມການຍົກຍ້ອງ ແລະໃນການສນັບສນູນກົດຫມາຍ.

໑໓ ພວກເຮົາເຊື່ອໃນການເປັນຄົນຊື່ສັດ, ຈິງ, ບໍຣິສຸດ, ມີເມດຕາ, ມີຄຸນນະທັມ ແລະໃນການເຮັດຄວາມດີຕໍ່ມະນຸດທັງປວງ ໂດຍແທ້ແລ້ວພວກເຮົາຈະກ່າວວ່າ ພວກເຮົາດຳເນີນຕາມຄຳແນະນຳຂອງໂປໂລ–ນັ້ນຄືພວກເຮົາເຊື່ອທຸກສິ່ງ, ພວກເຮົາຫວັງທຸກສິ່ງ, ພວກເຮົາອົດທົນມາແລ້ວຫລາຍສິ່ງ ແລະຫວັງທີ່ຈະສາມາດອົດທົນໄດ້ທຸກສິ່ງ ຫາກມີສິ່ງໃດທີ່ເປັນຄຸນນະທັມ, ສວຍງາມ, ຫລືຄວນສັນລະເສີນ ພວກເຮົາສແວງຫາສິ່ງເຫລົ່ານີ້.

ໂຢເຊັບ ສມິທ

# ເພງສວດ



# ສິດທິຊົນມາ


ໝັ້ນໃຈ ♩ = 66-84
໑. ສິດ ທິ ຊົນ ມາ ຢ່າ ຢ້ານ ງານ ໜັກ ແບບ ໃດ
໒. ເປັນ ຫຍັງ ຈະ ໂສກ ຄິດ ວ່າ ພາ ລະ ເຮົາ ໜັກ?
໓. ເຮົາ ຈະ ພົບ ແຫລ່ງ ທີ່ ອົງ ພຣະ ເຈົ້າ ຕຽມ ໄວ້
໔. ຫາກ ວ່າ ເຮົາ ຕາຍ ກ່ອນ ການ ເດີນ ທາງ ສຳ ເຣັດ
ດຳ ເນີນ ຕໍ່ ໂດຍ ສຸກ ໃຈ ແມ້ ການ ເດີນ ທາງ ລຳ
ບໍ່ ແມ່ນ ເລີຍ ທຸກ ຢ່າງ ດີ ບໍ່ ແມ່ນ ຄາດ ວ່າ ຈະ
ໄກ ໄປ ທາງ ຕາ ເວັນ ຕົກ ທີ່ ບໍ່ ມີ ໃຜ ເຣັດ
ວັນ ແສນ ສຸກ ທຸກ ຢ່າງ ດີ ເຮົາ ກໍ ຈະ ພົ້ນ ຈາກ
ບາກ ແກ່ ທ່ານ ທັງ ຫລາຍ ພຣະ ກາ ລຸນ ຈະ ຢູ່ ໃກ້
ມີ ຮາງ ວັນ ປະ ເສີດ ຖ້າ ດຽວ ນີ້ ຫລີກ ຕໍ່ ສູ້
ໃຫ້ ຢ້ານ ຫລື ຣຸກ ຮານ ເຮົາ ຈະ ຮັບ ພອນ ສຸກ ຂີ
ຄວາມ ເສົ້າ ຄວາມ ເມື່ອຍ ອ່ອນ ຈະ ຢູ່ ກັບ ຄົນ ທ່ຽງ ທັມ




*ເນື້ອຮ້ອງ:* ວິລຽມ ຄະເລຕັນ, ໑໘໑໔-໑໘໗໙

*ທຳນອງ:* ເພງພື້ນເມືອງອັງກິດ

ຄຳສອນແລະພັນທະສັນຍາ ໖໑:໓໖-໓໙

ຄຳສອນແລະພັນທະສັນຍາ ໕໙:໑-໔

# ມາເຖີດ, ທ່ານລູກຫລານພຣະເຈົ້າ




*ເນື້ອຮ້ອງ:* ເຈມ ເອັຈ ວໍລິດ, ໑໘໗໑-໑໙໔໐

ຄຳສອນແລະພັນທະສັນຍາ ໑໖໖:໔໕, ໖໖, ໕໗

*ທຳນອງ:* ເພງສະເປນ; ຮຽບຮຽງໂດຍ ເບັນຈາມິນ ຄາ, ໑໗໗໘-໑໘໖໑

ພຣະນິມິດ ໗:໙-໑໗

# ພຣະຜູ້ໄຖ່ແຫ່ງອິສຣາເອນ

ຫມັ້ນໃຈ ♩ = 84-100




໕. ພຣະຜູ້ຊ່ວຍໂປດຊົງຟື້ນຟູແສງແຫ່ງພຣະພັກ
ປະທານການເລົ້າໂລມຫນູນຈິດໃຈ
ແລະໃຫ້ຄວາມຕ້ອງການຄືນສະຖານທີ່ສັກສິດ
ນຳຄວາມຫວັງແກ່ຈິດເປົ່າປ່ຽວຂອງຂ້າ

໖. ພຣະອົງທອດພຣະເນດ ສິບພັນທູດແສນຍິນດີ
ມີທູດມາກມາຍຄອຍຟັງພຣະຄຳ
ພຣະອົງຕັສ ນິຣັນດອນປ່ຽມດ້ວຍສຸຣະສຽງ
ກຶກກ້ອງສຳນຽງສັນເສີນພຣະເຈົ້າ

*ເນື້ອຮ້ອງ:* ວິລຽມ ດັບເບີນຢູ ເຟວ, ໑໗໙໒-໑໘໗໒ ດັດແປງຈາກໂຢເຊັບ ສະເວນ, ໑໗໖໑-໑໗໙໖, ຮ່ວມຢູ່ໃນປື້ມເພງສວດ ສຍສ ທີ່ພິມຄັ້ງທຳອິດ, ໑໘໓໕

*ທຳນອງ:* ຟຣີແມນ ລູອິດ, ໑໗໘໐-໑໘໕໙

ອົບພະຍົບ ໑໓:໒໑-໒໒
໑ ນີໄຟ ໒໒:໑໒

# ພື້ນໝັ້ນຄົງໜັກໜາ

*ສະງ່າງາມ* ♩ = 100-112






໔. ເມື່ອເຮົາບອກເຈົ້າໄປຂ້າມແມ່ນ້ຳເລິກນານາ
ໃນຄວາມທຸກມາກມາຍຫລືຄວາມລຳ້ລວຍເຫລືອແສນ
ເພາະເຮົາຢູ່ນຳເຈົ້າແລະບັນຫາຈະເປັນພອນ
ເຈົ້າຈະໄດ້ຮັບຄວາມຊ່ວຍເຫລືອໃນຕະຫລອດເວລາ
ເຈົ້າຈະໄດ້ຮັບຄວາມຊ່ວຍເຫລືອຕະຫລອດເວລາ

໕. ເມື່ອທາງເດີນເຈົ້າຕ້ອງຜ່ານການທົດລອງຮ້ອນໄຟ
ຄວາມກະຣຸນາມາກມາຍຈະເປັນສບຽງຂອງເຈົ້າ
ແປວໄຟຈະບໍ່ເຜົາເຈົ້າເພາະເຮົາພຽງຕ້ອງການ
ໃຫ້ໄຟເຜົາເຫລັກເຈົ້າແລະຈະຫລໍ່ຄຳເຈົ້າໃຫ້ງາມ
ໃຫ້ໄຟເຜົາເຫລັກເຈົ້າແລະຫລໍ່ຄຳເຈົ້າໃຫ້ງາມ

໖. ແມ່ນຊະລາລົງແລ້ວຄົນຂອງເຮົາຈະຮູ້ແນ່
ຄວາມຮັກເຮົາບໍ່ປ່ຽນແປງຍືນຍົງເປັນນີຣັນດອນ
ເມື່ອສີສະເຂົານັ້ນມີຜົມຫງອກຂຶ້ນທົ່ວໄປ
ເຂົາຈະຍັງຄົງຢູ່ໃນຊວງຂອງເຮົາດັ່ງລູກແກະ
ເຂົາຈະຍັງຄົງຢູ່ໃນຊວງເຮົາດັ່ງລູກແກະ

໗. ຈິດວິນຍານທີ່ພັກພິງອີງພຣະເຢຊູມາ
ເຮົາບໍ່ສາມາດຈະປະຖິ້ມເຂົາໃຫ້ເຫລົ່າສັດຕູ
ແມ້ຫມູ່ມວນນະຮົກຈະສັ່ນກວຍໂຍກຫວັ່ນໄຫວ
ເຮົາຈະບໍ່ມີວັນທີ່ຈະປ່ອຍປະຖິ້ມຈິດວິນຍານ
ເຮົາຈະບໍ່ມີວັນປ່ອຍປະລະຖິ້ມຈິດວິນຍານ

*ເນື້ອຮ້ອງ:* ມອບໃຫ້ແກ່ ໂຣເບີດ ຄີນ, ປະມານ ໑໗໘໗ — ເອຊາຢາ ໔໑:໑໐; ໔໖:໔-໕
ຮ່ວມຢູ່ໃນປຶ້ມເພງສວດ ສຍສ ທີ່ພິມຄັ້ງທຳອິດ, ໑໘໖໕ — ຣົມ ໕:໑໔
*ທຳນອງ:* ມອບໃຫ້ແກ່ ເຈ ແອລິດ, ປະມານ ໑໘໘໙

# ນັບພຣະພອນຂອງທ່ານ






*ເນື້ອຮ້ອງ:* ຈອນສັນ ໂອດແມນ, ຈູເນັຍ, ໑໘໕໖-໑໙໒໒ — ຄຳສອນແລະພັນທະສັນຍາ ໗໘:໑໗-໑໙

*ທຳນອງ:* ເອດວິນ ໂອ ເອກແຊວ, ໑໘໕໑-໑໙໒໑ — ແອລມາ ໓໔:໓໘

# ຂໍໃຫ້ເຮົາເດີນໄປ






*ເນື້ອຮ້ອງແລະທຳນອງ:* ເອເວນ ສະຕີບເວັນ, ໑໘໕໔-໑໙໓໐

ຄຳສອນແລະພັນທະສັນຍາ ໖:໓໓-໓໗
໑ ນີໄຟ ໒໒:໑໕-໑໗

# ຂໍເພິ່ງພຣະທຸກຊົ່ວໂມງ

*ສັດທາກ້າ* ♩ = 60-72




*ເນື້ອຮ້ອງ:* ແອນນີ ແຮັສ ຮອກ, ໑໘໓໕-໑໙໑໘ — ໒ ນີໄຟ ໔:໑໖-໓໕

*ທຳນອງ:* ໂຣເບີດ ໂລລີ, ໑໘໒໖-໑໘໙໙ — ເພງສັນລະເສີນ ໙໘:໑

# ແສນຫວານງານເລີດ




໕. ບາບເຄີຍເປັນສັດຕູຮ້າຍຂອງຂ້າ
ຈະບໍ່ມາກວນທັງຕາແລະຫູ
ສັດຕູໃນໃຈຂ້າຈະຖືກປະຫານ
ຊາຕານບໍ່ອາດຜານສັນຕິອົກ

໖. ແລ້ວຂ້າເຫັນໄດ້ຍິນແລະຮູ້
ຫມູ່ຄວາມຫວັງຂ້າເຄີຍປອງໃນຫລ້າ
ບັນດາອຳນາດຖືກນຳໄປໃຫ້
ໃນໂລກນິຣັນແຫ່ງຄວາມຊື່ນບານ

*ເນື້ອຮ້ອງ:* ອິຊາກ ວັດ, ໑໖໗໔-໑໗໔໘ ເພງສັນລະເສີນ ໙໒:໑-໕

*ທຳນອງ:* ຈອນ ເຈ ມິກຄະລີແລນ, ໑໘໗໔-໑໙໒໕ ອິບັດ ໑:໒໗

# ການອະທິຖານຄັ້ງທຳອິດຂອງໂຢເຊັບ ສມິທ

*ສະງ່າງາມ* ♩ = 84-92






*ເນື້ອຮ້ອງ:* ຈອດ ແມນແວຣິງ, ໑໘໕໔-໑໘໘໙ — ໂຢເຊັບ ສມິທ-ປະວັດ ໑:໑໔-໒໐, ໒໕

*ທຳນອງ:* ຊີວັນນັດ ບິນລິງ ພອນ, ໑໗໙໒-໑໘໗໑ — ຢາໂກໂບ ໑:໕

ດັດແປງໂດຍ ເອ ຊີ ສະໄມ້, ໑໘໔໐-໑໙໐໙

# ເບິ່ງເຖີດພຣະຜູ້ໄຖ່ຍິ່ງໃຫຍ່ມ້ວຍ









໕. ພຣະອົງຊົງມ້ວຍດ້ວຍຣິບພະລັນ
ຕາວັນອັບອາຍບໍ່ໃຫ້ແສງສີ
ໂລກສັ່ນຫວັ່ນໄຫວສັບສົ່ງໂສກີ
ໂລກສັ່ນຫວັ່ນໄຫວສັບສົ່ງໂສກີ
ຕໍ່ອະວາຈີ "ພຣະເຈົ້ານີ່ຫຼຸມ້ວຍ!"

໖. ພຣະອົງຊົງຊົນເຮົາກົ້ມເກສາ
ວັນທາຣອບສັນຍາລັກສັກສິດ
ສິດທິຊົນຍຸກສຸດທ້າຍຫມາຍຈິດ
ສິດທິຊົນຍຸກສຸດທ້າຍຫມາຍຈິດ
ດຳຣົງຊີວິດຕາມພຣະປະສົງ

*ເນື້ອຮ້ອງ:* ເອລີຊາ ອາ ສະໂນ, ໑໘໐໔-໑໘໘໗

*ທຳນອງ:* ຈອດ ແຄເລດ, ໑໘໓໙-໑໙໓໔

ຄຳສອນແລະພັນທະສັນຍາ ໑໘:໑໑

ລູກາ ໒໒:໔໒; ໒໓:໔໖

# ໂອ້ພຣະບິດາຜູ້ນິຣັນ






*ເນື້ອຮ້ອງ:* ວິລຽມ ດັບເບີນຢູ ເຟວ, ໑໗໙໔–໑໙໗໔
ຮ່ວມຢູ່ໃນປື້ມເພງສວດ ສຍສ ທີ່ພິມຄັ້ງທຳອິດ, ໑໙໓໕
*ທຳນອງ:* ຟີລິກ ເມັນໂດເຊັນ, ໑໘໐໙–໑໘໔໗

ຄຳສອນແລະພັນທະສັນຍາ ໔໐:໗໗, ໗໙
ເອຊາຢາ ໕໓:໔–໕

# ປັນຍາແລະຄວາມຮັກຍິ່ງໃຫຍ່



໕. ໃນຄວາມສຳນຶໝຖິງກາຍເນື້ອຫນັງ
ເຮົາກິນຂະຫນົມປັງນີ້
ດື່ມນ້ຳເປັນພະຍານເຖິງໂລຫິດ
ສັດທາເຮົາໃນພຣະຄຣິສ

໖. ຊ່າງຣຸ່ງໂຣດລົ້ນບູນແລະຍິ່ງໃຫຍ່
ໂອ້ແຜນງານແຫ່ງການໄຖ່
ຊື່ໝຄວາມທ່ຽງທັມຄວາມຮັກເມດຕາ
ປະສານປອງດອງເມືອງຟ້າ

*ເນື້ອຮ້ອງ:* ເອລີຊາ ອາ ສະໂນ, ໑໗໐໔-໑໗໗໗ — ໂມເຊ ໔:໑-໔
*ທຳນອງ:* ທອມມັດ ມິກອິນໄຕ, ໑໗໖໖-໑໘໑໔ — ແອລມາ ໔໔:໑໔-໑໕
ຂໍ້ ໑, ໔, ໕ ແລະ ໖ ເຫມາະສົມເປັນພິເສດສຳລັບສິນຣະລຶໝ

# ຄັ້ງນີ້ພຣະເຢຊູເກີດຕໍ່າຕ້ອຍ

ຈິງຈັງ ♩ = 76-88




*ເນື້ອຮ້ອງ:* ພາລິ ພີ ແພູ້ດ, ໑໘໐໗-໑໘໕໗ ລູກາ ໒:໗

*ທຳນອງ:* ຮຽບຮຽງໂດຍ ເຈັຽໂຄໂມ ເມເຢີເບັຽ, ໑໗໙໑-໑໘໖໔ ມັດທາຍ ໒໕:໓໑

# ພຣະບິດາ ໂປດຟັງເຮົາວອນ




*ເນື້ອຮ້ອງ:* ແອນນີ ພິນນອກ ມາລິນ, ໑໘໗໓-໑໙໓໕
*ທຳນອງ:* ຫລຸຍ ເອັມ ໂກຊາ, ໑໘໒໙-໑໘໗໙
ດັດແປງໂດຍ ເອດວິນ ພີ ພາກເກີ້, ໑໘໓໗-໑໙໒໕

ຄຳສອນແລະພັນທະສັນຍາ ໕໙:໙-໑໒
໒ ນີໄຟ ໑໐:໒໔-໒໕

# ຂ້າເຝົ້າພິສະຫວົງ






*ເນື້ອຮ້ອງແລະທຳນອງ:* ຈອດ ເອດ ເກເບີຍ, ໑໘໕໗-໑໙໓໔

ໂມໄຊຍາ ໓:໕-໘
ໂຢຮັນ ໑໕:໑໓

# ມີພູເຂົາຂຽວແສນໄກຫ່າງໄປ

*ຄາຣະວະ* ♩ = 72-84




*ເນື້ອຮ້ອງ:* ຊີຊຽວ ແຟຣນຊີດ ອາເລັກຊານເດີ, ໑໘໑໘-໑໘໙໕ — ໂຢຮັນ ໑໙:໑໗-໓໐

*ທຳນອງ:* ຈອນ ເອັຈ ໂກເວີ, ໑໘໕໕-໑໙໔໔ — ເຮັບເຣີ ໑໓:໑໔

# ເຮົາຮ້ອງສັນເສີນນາມເຢຊູເຈົ້າ

*ສັດທາກ້າ* ♩ = 76-88




*ເນື້ອຮ້ອງ:* ຣິດເຈີດ ອາວຣິດ, ໑໗໑໕-໑໗໘໙ — ໔ ນີໄຟ ໘:໕, ໑໐-໑໔

*ທຳນອງ:* ໂຢເຊັບ ໂຄສະເລັດ, ໑໗໕໐-໑໘໑໐ — ໂມເຊ ໕:໔໐-໔໑

# ພຣະຜູ້ຊ່ວຍດ້ວຍຄວາມຖ່ອມ






*ເນື້ອຮ້ອງ:* ເມໂບ ໂຈນ ແກບບອດ, ເກີດ ໑໘໑໐. © ໑໙໕໗ ສຍສ — ໔ ນີໄຟ ໔:໗

*ທຳນອງ:* ໂຣແລນ ເອັຈ ພິທຊາດ, ໑໗໑໑-໑໗໗໗ — ຄຳສອນແລະພັນທະສັນຍາ ໕໙:໙

# ພຣະວິນຍານພຣະເຈົ້າ






*ເນື້ອຮ້ອງ:* ວິລຽມ ດັບເບິນຢູ ເຟວ, ໑໗໙໒–໑໘໗໒ ຮ່ວມຢູ່ໃນປື້ມເພງສວດ ສຍສ ທີ່ພິມຄັ້ງທຳອິດ, ໑໘໓໕. ຮ້ອງໃນການອຸທິດພຣະວິຫານເຄີດແລນ ໃນປີ ໑໘໓໖.

ຄຳສອນແລະພັນທະສັນຍາ ໑໐໙:໗໙–໘໐
ຄຳສອນແລະພັນທະສັນຍາ ໑໑໐

*ທຳນອງ:* ບໍ່ບອກຊື່; ປະມານ ໑໘໔໔

# ສູງຂຶ້ນໄປເທິງພູເຂົາ

*ຕັ້ງໃຈ* 𝅗𝅥 = 56-72






*ເນື້ອຮ້ອງ:* ໂຈ ເອັຈ ຈອນສັນ, ໑໘໐໔-໑໘໘໔ — ເອຊາຢາ ໔:໔-໓

*ທຳນອງ:* ເອບິນີເຊີ ບີສະລີ, ໑໘໔໐-໑໙໐໗ — ເອຊາຢາ ໕:໔໗

# ບອກມາ ສັດຈະຄືຫຍັງ?






*ເນື້ອຮ້ອງ:* ຈອນ ແຈກ, ໑໘໔໗-໑໙໐໐

*ທຳນອງ:* ແອເລັນ ໂນເລດ ເມນລິງ, ໑໘໔໐-໑໙໐໕

ຄຳສອນແລະພັນທະສັນຍາ ໙໓:໔໓-໔໘

ໂຢຮັນ ໑໘:໓໗-໓໘

# ຈົ່ງມາຊື່ນຊົມຍິນດີ






*ເນື້ອຮ້ອງ:* ວິລຽມ ດັບເບີນຢູ ເຟວ, ໑໗໙໔-໑໘໗໔
ຮ່ວມຢູ່ໃນປື້ມເພງສວດ ສຍສ ທີ່ພິມຄັ້ງທຳອິດ, ໑໘໖໕
*ທຳນອງ:* ເຣັນລີ ທັກເກີ້, ປະມານ ໑໘໙໖

ໂມເຊ ໗:໙໑-໙໗
ຫລັກແຫ່ງຄວາມເຊື່ອຂໍ້ທີສິບ

# ເຮັດແຕ່ຄວາມດີ


ຕັ້ງໃຈ ♩ = 96-116
໑. ເຮັດ ແຕ່ ຄວາມ ດີ ອາ ຣຸນ ກຳ ລັງ ສາຍ ສ່ອງ
໒. ເຮັດ ແຕ່ ຄວາມ ດີ ບ້ວງ ໂສ້ ກຳ ລັງ ຫລຸດ ລົ່ນ
໓. ເຮັດ ແຕ່ ຄວາມ ດີ ຈິ່ງ ມີ ສັດ ທາ ຫານ ກ້າ
ຮ້ອງ ຮັບ ອະ ນາ ຄົດ ເສ ລີ ແລະ ສະ ຫວ່າງ
ໂສ້ ລ່າມ ຄົນ ເປັນ ທາດ ນັ້ນ ຖືກ ຖອດ ຖິ້ມ ໄປ
ຮີບ ເລື່ອນ ໄປ ຂ້າງ ໜ້າ ຈຸດ ໝາຍ ເຮົາ ຫລຽວ ເຫັນ
ເຫລົ່າ ທູດ ສະ ຫວັນ ກຳ ລັງ ບັນ ທີມ ການ ກະ ທຳ
ຄວາມ ຫວັງ ຊ່ວຍ ໃຫ້ ບ້ວງ ໂສ້ ບາງ ເບົາ ແລະ ມະ ລາຍ
ນ້ຳ ຕາ ຈະ ລົດ ແຫ້ງ ບໍ່ ໄຫລ ລິນ ອອກ ມາ ອີກ
ທຸກ ທຸກ ຢ່າງ ຂອງ ທ່ານ ຈິ່ງ ເຮັດ ແຕ່ ຄວາມ ດີ
ຄວາມ ຈິງ ຈະ ກ້າວ ໄປ ຈິ່ງ ເຮັດ ແຕ່ ຄວາມ ດີ
ພອນ ກຳ ລັງ ຖ້າ ທ່ານ ເມື່ອ ເຮັດ ແຕ່ ຄວາມ ດີ




*ເນື້ອຮ້ອງ:* ບໍ່ບອກຊື່, *The Psalms of Life,* ບອສຕັນ, ໑໘໕໗ | ພຣະບັນຍັດທີສອງ ໝ:໑໗-໑໘

*ທຳນອງ:* ຈອດ ໄຄລິມາກ, ໑໗໘໑-໑໘໓໕ | ຣີລາມັນ ໑໐:໔-໕

# ເຮົາຂອບພຣະທັຍສຳລັບສາສດາ






*ເນື້ອຮ້ອງ:* ວິລຽມ ຟາວເລີ, ໑໘໓໐-໑໘໖໕ — ຄຳສອນແລະພັນທະສັນຍາ ໔໑:໑-໕

*ທຳນອງ:* ແຄໂຣລີນ ເຊຣີແດນ ນໍຕັນ, ໑໘໐໘-ປະມານ ໑໘໗໗ — ໂມໄຊຢາ ໔:໔໑

# ເຮົາຮູ້ພຣະຜູ້ໄຖ່ຊົງພຣະຊົນ






*ເນື້ອຮ້ອງ:* ຊາມູເອນ ມິດລີ, ໑໗໓໘–໑໗໙໙ ຮ່ວມຢູ່ ໂຢບ ໑໙:໒໕

ໃນປຶ້ມເພງສວດ ສຍສ ທີ່ພິມຄັ້ງທຳອິດ, ໑໘໓໕ ເພງສັນລະເສີນ ໑໐໔:໓໓–໓໔

*ທຳນອງ:* ລູອິດ ດີ ເອດເວີດ, ໑໘໕໘–໑໙໔໑

# ຂໍພຣະເຈົ້າຢູ່ນຳຈົນພົບກັນອີກ

*ຄາຣະວະ* ♩ = 66 - 80






*ເນື້ອຮ້ອງ:* ເຢເຣມີຢາ ອີ ແຣນກິນ, ໑໘໔໘-໑໙໐໔ — ໔ ເທຊະໂລນິກ ໓:໑໗

*ທຳນອງ:* ວິລຽມ ຈີ ໂທເມີ, ໑໘໓໓-໑໘໙໗ — ຈົດບັນຊີ ໗:໔໕-໔໗

# ໂອ້ພຣະບິດາ


ສັດທາກ້າ ♩ = 42-56
໑.ໂອ້ ພຣະ ບິ ດາ ຜູ້ ສະ ຖິດ ຢູ່ ໃນ ເບື້ອງ
໒.ດ້ວຍ ເຈດ ຕະ ນາ ເລີດ ລ້ຳ ສູງ ສົ່ງ ພຣະ ອົງ
໓.ຂ້າ ຮຽນ ຮູ້ ຮ້ອງ ອົງ ພຣະ ບິ ດາ ທາງ ພຣະ
໔.ເມື່ອ ຂ້າ ຈະ ຈາກ ຊີບ ອັນ ອ່ອນ ແອ ເມື່ອ ຂ້າ
ເທິງ ຮຸ່ງ ເຮືອງ ສາຍ ສ່ອງ ເມື່ອ ໃດ ຈະ ໄດ້ ຢູ່ ກັບ
ສົ່ງ ຂ້າ ມາ ໂລກ ນີ້ ທັງ ຢັບ ຢັ້ງ ຄວາມ ຈຳ ຂ້າ
ວິນ ຍານ ຈາກ ສະ ຫວັນ ກ່ອນ ຟື້ນ ຟູ ກະ ແຈ ແຫ່ງ
ວາງ ຮ່າງ ມະ ຕະ ໄວ້ ບິ ດາ ມານ ດາ ຂໍ ຂ້າ
ພຣະ ອົງ ເຫັນ ພຣະ ພັກ ອີກ ເໝືອນ ດັ່ງ ປອງ?
ທັງ ປວງ ເຖິງ ເພື່ອ ແລະ ການ ເກີດ ກ່ອນ ນີ້
ຄວາມ ຮູ້ ຂ້າ ບໍ່ ຮູ້ ຈະ ຮ້ອງ ເຊັ່ນ ນັ້ນ
ພົບ ທ່ານ ໃນ ວຽງ ວັງ ສະ ຫວັນ ໄດ້ ບໍ່?




*ເນື້ອງຮ້ອງ:* ເອລີຊາ ອາ ສະໂນ, ໑໘໐໔-໑໘໘໗ — ໂຣມ ໘:໑໖-໑໗

*ທຳນອງ:* ເຈມ ມິກການາອານ, ໑໘໔໐-໑໙໐໗ — ກິຈການ ໑໗:໔໘-໔໙ (໔໔-໓໑)

# ຮັກທີ່ບ້ານ


*ສັດທາກ້າ* ♩ = 88-108
໑. ມີ ຄວາມ ສວຍ ງາມ ຢູ່ ທົ່ວ ໄປ ເມື່ອ ມີ ຮັກ ທີ່ ບ້ານ
໒. ແມ້ ຢູ່ ຕູບ ຍັງ ມີ ຄວາມ ສຸກ ເມື່ອ ມີ ຮັກ ທີ່ ບ້ານ
໓. ສະ ຫວັນ ແຍ້ມ ຍິ້ມ ຢູ່ ຂ້າງ ເທິງ ເມື່ອ ມີ ຮັກ ທີ່ ບ້ານ
ມີ ຄວາມ ສຸກ ໃນ ທຸກ ສຳ ນຽງ ເມື່ອ ມີ ຮັກ ທີ່ ບ້ານ
ກຽດ ແລະ ອິດ ສາ ບໍ່ ຮາ ວີ ເມື່ອ ມີ ຮັກ ທີ່ ບ້ານ
ໂລກ ຖ້ວມ ລົ້ນ ໄປ ດ້ວຍ ຄວາມ ຮັກ ເມື່ອ ມີ ຮັກ ທີ່ ບ້ານ
ອຸ ດົມ ສົມ ບູນ ດ້ວຍ ສັນ ຕິ ມີ ຍິ້ມ ຫວານ ຢູ່ ທຸກ ນາ ທີ
ກຸ ຫລາບ ບານ ແທບ ເທົ້າ ຂອງ ເຮົາ ໂລກ ນີ້ ເປັນ ສວນ ຊື່ນ ບໍ່ ເບົາ
ລຳ ທານ ໄຫລ ເປັນ ເພງ ກ່ອມ ຈິດ ອຸ ທິດ ນະ ພາ ສີ ຟ້າ ອ່ອນ




*ເນື້ອຮ້ອງແລະທຳນອງ:* ຈອນ ຣິວ ມິກນໍຕັນ, ໑໗໔໙-໑໗໙໑

ໂມໄຊຢາ ໔:໑໔-໑໕

ຜູ້ປະກາດ ໙:໙

# ເຮົາຈະໄປທີ່ພຣະອົງບັນຊາ






*ເນື້ອຮ້ອງ:* ແມຣີ ບຣາວ, ໑໘໕໖-໑໙໑໘ ໑ ນີໄຟ ໓:໗

*ທຳນອງ:* ແຄຣີ ອີ ຣາວຊີແຟວ, ໑໘໖໑-໑໙໓໐ ຄຳສອນແລະພັນທະສັນຍາ ໔:໔

# ອະທິຖານແລ້ວບໍ່?


ຄິດຄຳນຶງ ♩ = 72-88
໑. ກ່ອນ ເຈົ້າ ຈະ ຈາກ ຫ້ອງ ເຊົ້າ ວັນ ນີ້ ອະ ທິ ຖານ ແລ້ວ
໒. ເມື່ອ ດວງ ໃຈ ມົວ ເມົາ ດ້ວຍ ຄວາມ ຮ້າຍ ອະ ທິ ຖານ ແລ້ວ
໓. ເມື່ອ ຄວາມ ຍາກ ລຳ ບາກ ມາ ລອງ ເຈົ້າ ອະ ທິ ຖານ ແລ້ວ
ບໍ່? ໃນ ນາມ ພຣະ ຄຣິສ ພຣະ ຜູ້ ຊ່ວຍ ເຮົາ
ບໍ່? ເຈົ້າ ວອນ ຂໍ ພຣະ ປະ ທານ ພຣະ ຄຸນ
ບໍ່? ເມື່ອ ຈິດ ວິນ ຍານ ເຈົ້າ ປ່ຽນ ໂສກ ສົນ
ເຈົ້າ ຂໍ ພຣະ ປະ ທານ ຮັກ ເມດ ຕາ ເພື່ອ ປົກ ປ້ອງ ຫລື
ເພື່ອ ເຈົ້າ ຈະ ອະ ພັຍ ກັນ ແລະ ກັນ ເມື່ອ ຂວາງ ທາງ ຫລື
ຢາ ແຫ່ງ ກິ ເລ ອາດ ເຈົ້າ ໃຊ້ ມັນ ໃນ ຍາມ ເຊົ້າ ຫລື




*ເນື້ອຮ້ອງ:* ແມຣີ ເອ ເພບເພີ ຄິດເດີ, ໑໗໔໐-໑໙໐໕ ເພງສັນລະເສີນ ໕:໖, ໑໔

*ທຳນອງ:* ວິລຽມ ໂອ ເພີກິນ, ໑໗໖໑-໑໙໐໔ ມາຣະໂກ ໑໑:໔໔-໔໕

# ສັນເສີນບຸຣຸດ


ແຂວງຂັບ ♩ = 76-96
໑.ສັນ ເສີນ ບຸ ຣຸດ ຜູ້ ຕິດ ຕໍ່ ພຣະ ເຢ ໂຮ ວາ ພຣະ ເຢ ຊູ
໒. ສັນ ເສີນ ແດ່ ຄວາມ ຈຳ ທ່ານ ສິ້ນ ຊີບ ຊີ ວັນ ໄປ ຂໍ ໃຫ້ ນາມ
໓.ສີ ລີ ແລະ ຖາ ນະ ປະ ໂຮ ຫິດ ທ່ານ ຍິ່ງ ໃຫຍ່ ຕະ ຫລອດ ໄປ
໔.ການ ເສັຽ ສະ ລະ ນຳ ມາ ຊຶ່ງພູ ພອນ ຈາກ ສະ ຫວັນ ໂລກ ຈະ ຕ້ອງ
ເຈີມ ສາດ ສະ ດາ ພະ ຍາ ກອນ ຮັບ ພອນ ໄດ້ ເປີດ ສະ ຫມັຍ
ທ່ານ ມີ ກຽດ ໄກ ໄປ ຊົ່ວ ນິດ ໂລ ຫິດ ທີ່ ຫລັ່ງ ໂດຍ ຄາດ
ຊົ່ວ ການ ທ່ານ ຈະ ຖື ກະ ແຈ ໂດຍ ສັດ ທາ ແທ້ ທ່ານ ຈະ
ຊົດ ໃຊ້ ໂລ ຫິດ ບຸ ຣຸດ ນັ້ນ ໂລກ ຜັນ ຕື່ນ ມາ ຮັບ ຮູ້
ການ ປະ ທານ ສຸດ ທ້າຍ ກະ ສັດ ຖະ ຫວາຍ ກຽດ ທ່ານ ຊົນ ຊາດ ວັນ ທາ
ຕະ ກອນ ຈະ ລາຍ ງານ ບອກ ຕໍ່ ສະ ຫວັນ ເມື່ອ ໂລກ ນັ້ນ ສັນ ເສີນ ນາມ
ເຂົ້າ ໃນ ອາ ນາ ຈັກ ສຳ ນັກ ທ່ານ ກາງ ສາດ ສະ ດາ ຄັ້ງ ໂບ ຮານ
ຄວາມ ອະ ຍຸ ຕິ ທັມ ຄົນ ນັບ ລ້ານ ຈະ ຈຳ ຮູ້ ຈັກ ໂປ ເຊັບ ອີກ




*ເນື້ອຮ້ອງ:* ວິລຽມ ດັບເບີນຢູ ເຟວ, ໑໗໙໒-໑໘໗໒

*ທຳນອງ:* ເພງພື້ນເມືອງສະກອດແລນ

ຄຳສອນແລະພັນທະສັນຍາ ໑໓໕

# ໄກແສນໄກຢູ່ທີ່ຮາບຢູດີຢາ

*ປິຕິຍິນດີ* ♩= 92-112




*ເນື້ອຮ້ອງແລະທຳນອງ:* ຈອນ ເມນຊີ ແມັກຟາເລນ, ໑໘໓໓-໑໘໗໔

ລູກາ ໒:໘-໑໔

ຄຳສອນແລະພັນທະສັນຍາ ໔໕:໗໑

# ຄືນສະຫງັດ




*ເນື້ອຮ້ອງ:* ໂຢເຊັບ ໂມ, ໑໗໙໒-໑໘໔໘; ແປໂດຍ ຈອນ ແຟັບ ຢັງ, ໑໘໒໐-໑໘໘໕ — ລູກາ ໒:໘-໑໔

*ທຳນອງ:* ແຟຣນ ກູເບີ, ໑໗໘໗-໑໘໖໓ — ແອລມາ ໗:໑໐-໑໒

# ພຣະຄຣິສເຈົ້າຄືນຊີບວັນນີ້






*ເນື້ອຮ້ອງ:* ຊາລີ ເວດສະລີ, ໑໗໐໗-໑໗໘໘ — ມັດທາຍ ໒໘:໕-໖

*ທຳນອງ:* ບໍ່ບອກຊື່; ໄລລາ ເດວິດີກາ, ໑໗໐໘ — ໑ ໂກຣິນໂທ ໑໕:໒໐, ໕໓-໕໗

# ພຣະອົງຊົງຟື້ນ!



ສະຫງ່າງາມ ♩ = 92-104
໑. ພຣະ ອົງ ຊົງ ຟື້ນ ພຣະ ອົງ ຊົງ ຟື້ນ ເຮົາ ຈົ່ງ ບອກ ໄປ
໔. ທຸກ ທົ່ວ ໜ້າ ພາ ກັນ ໂມ ທະ ນາ ພຣະ ຊະ ນະ ເຮົາ
໓. ພຣະ ອົງ ຊົງ ຟື້ນ ພຣະ ອົງ ຊົງ ຟື້ນ ຊົງ ເປີດ ປະ ຕູ
ດ້ວຍ ສຽງ ເພງ ຊົງ ທຳ ລາຍ ຄຸກ ຄວາມ ຕາຍ ສາມ ວັນ
ຮ້ອງ ສັນ ເສີນ ບໍ່ ພຽງ ຫາຍ ມືດ ມົນ ໄກ ຫ່າງ ເຫີນ
ສະ ຫວັນ ໃຫ້ ພຣະ ອົງ ໄຖ່ ເຮົາ ຈາກ ຄຸກ ຍາກ ຮ້າຍ
ໂລກ ຈົ່ງໝູ ພັນ ຍິນ ດີ ທົ່ວ ໜ້າ ຊະ ນະ ຄວາມ ຕາຍ
ແຕ່ ເກີນ ແສງ ແຫ່ງ ອາ ຣຸນ ຮຸ່ງ ຂຸນ ຂາດ ບາດ ເທິງ
ຈົນ ຟື້ນ ສູ່ ພາ ວະ ສັກ ສິດ ຍາມ ແສງ ອິສ ເຕີ




*ເນື້ອຮ້ອງ:* ຊີຊຽວ ແຟນຊິດ ອາເລັກຊານເດີ, ໑໘໑໘-໑໘໙໕ — ມາຣະໂກ ໑໖:໖-໗

*ທຳນອງ:* ໂຈເອຈິມ ນີແອນເດີ, ໑໖໕໐-໑໖໘໐ — ໂມໄຊຍາ ໑໖:໗-໙

# ເຮົາເປັນລູກຂອງພຣະເຈົ້າ

*ສັດທາກ້າ* ♩ = 80-96




*ເນື້ອຮ້ອງ:* ນາໂອມີ ດັບເບີນຢູ ແຣນໂດນ, ເກີດ ໑໙໐໗. © ໑໙໕໗ ສຍສ

*ທຳນອງ:* ມຽວເດີດ ທີ ເພດທີ, ໑໗໙໕-໑໙໗໗. © ໑໙໕໗ ສຍສ

ເພງສັນລະເສີນ ໗໔:໓; ໂມໄຊຍາ ໔:໑໕

ຄຳສອນແລະພັນທະສັນຍາ ໑໔:໗

# ເຮົາຮູ້ວ່າພຣະບິດາຊົງພຣະຊົນ




*ເນື້ອຮ້ອງແລະທໍານອງ* ຣິດ ເອນ ນິບລີ, ເກີດ ໑໙໔໓. © ໑໙໗໑ ສຍສ

ໂມໂຣໄນ ໑໐:໕

ອັບຣາຮາມ ໓:໔໔-໔໗

ເມື່ອບັນເລງດ້ວຍອໍແກນໃຫ້ໃຊ້ມືເທົ່ານັ້ນ
(ບໍ່ຕ້ອງໃຊ້ຕີນຢຽບ)

# ເຣົາຄຶດເມື່ອເຣົາອ່ານເຣື່ອງແສນຫວານນັ້ນ

*ດ້ວຍຄວາມຮັກ* ♩. = 42-46




*ເນື້ອຮ້ອງ:* ເຈມິມາ ລຸກ, ໑໘໑໓-໑໙໐໗ — ໓ ນີໄຟ ໑໗:໒໑-໒໓

*ທຳນອງ:* ລີອາ ເອັຊຕັນ ລອຍ, ໑໘໙໒-໑໙໗໕ — ລູກາ ໑໘:໑໗

# ຂ້າຂໍຂອບພຣະທັຍອົງບິດາ




*ເນື້ອຮ້ອງ:* ບໍ່ບອກຊື່ ເອເຟໂຊ ໕:໒໐

*ທຳນອງ:* ຈອດ ແຄເລດ, ໑໘໓໙-໑໙໓໒ ແອລມາ ໓໗:໓໖-໓໗

# ພຣະເຈົ້າມອບພຣະວິຫານແກ່ເຮົາ

*ຊື່ນຫວານ* ♩ = 96-116






*ເນື້ອຮ້ອງ:* ດອນແນວ ຣັນເຕີ, ເກີດ ໑໙໓໐. © ໑໙໘໙ ສຍສ — ໑ ໂກຣິນໂທ ໓:໑໘-໑໗

*ທຳນອງ:* ດາວິນ ວູດຟອດ, ເກີດ ໑໙໓໘. © ໑໙໘໙ ສຍສ — ຄຳສອນແລະພັນທະສັນຍາ ໘໘:໒໗-໒໙

# ຄວາມເມດຕາເລີ້ມຈາກເຮົາ




*ເນື້ອຮ້ອງ ແລະ ທຳນອງ:* ຄາລາ ດັບເບີນຢູ ມິກແມດສະເຕີ, ເກີດ ໑໙໐໔. — ລູກາ ໒:໓໑; ໑໐:໓໐-໓໗

© ໑໙໘໙ ສຍສ — ເອເຟໂຊ ໔:໓໒

# ກ້າເຮັດສິ່ງຖືກ


ສັດທາກ້າ ♩. = 44-54
໑. ກ້າ ເຮັດ ສິ່ງ ຖືກ ກ້າ ຢູ່ ໃນ ຈິງ ເຈົ້າ ມີ ສິ່ງ ທີ່ ຄົນ ອື່ນ
໔. ກ້າ ເຮັດ ສິ່ງ ຖືກ ກ້າ ຢູ່ ໃນ ຈິງ ຄົນ ອື່ນ ຜູ້ ຫລົ້ມ ເຫລວ ບໍ່
ບໍ່ ສາ ມາດ ເຮັດ ເຮັດ ຢ່າງ ກ້າ ຫານ ດ້ວຍ ຄວາມ
ຫລິງ ຊ່ວຍ ເຈົ້າ ໄດ້ ເຊື່ອ ໃນ ຕົວ ເອງ ໃນ ຄວາມ
ດີ ມີ ເມດ ຕາ ທູດ ຈະ ຮີບ ມາ ກ່າວ ເຣື່ອງ ຣາວ ຢ່າງ ໄວ ວາ
ຈິງ ໃນ ສັດ ທາ ຢືນ ສູ້ ຢ່າງ ສະ ງ່າ ຈົນ ສິ້ນ ລົມ ຫາຍ ໃຈ
ປະສານສຽງ
ກ້າ ກ້າ ກ້າ ເຮັດ ສິ່ງ ຖືກ ກ້າ ກ້າ




*ເນື້ອຮ້ອງ:* ບໍ່ບອກຊື່ໝ — ມັດທາຍ ໔:໑-໑໑

*ທຳນອງ:* ຮຽບຮຽງໂດຍ ເອ ຊີ ສະໄມ້, ໑໘໔໐-໑໙໐໙ — ເອເຟໂຊ ໖:໑

# ຈາຣຶກທອງຄຳ










*ເນື້ອຮ້ອງ:* ໂຣດ ທອມມັດ ແກຣມ, ໑໘໗໖-໑໙໖໗ — ໂຢເຊັບ ສມິທ-ປະຫວັດ ໑:໕໑-໕໓, ໕໙

*ທຳນອງ:* ເຈ ສະເປັນເຊີ ຄອນວອນ, ໑໘໘໘-໑໙໘໓.

ຮຽບຮຽງ © ໑໙໘໙ ສຍສ

# ສອນເຮົາຍ່າງໃນແສງ

*ນອບນ້ອມ* ♩ = 84-100




*ເນື້ອຮ້ອງແລະທຳນອງ:* ຄາລາ ດັບເບິນຢູ ມິກແມດສະເຕີ, ເກີດ ໑໙໐໔. © ໑໙໕໘ ສຍສ

ເອຊາຢາ ໒:໕

ເອເຟໂຊ ໕:໘

# ອະທິຖານຄອບຄົວ

*ຄາຣະວະ* ♩ = 96-104




*ເນື້ອຮ້ອງແລະທຳນອງ:* ດີໂວຕາ ມິບລິນ ພີເຕີສັນ, ເກີດ ໑໙໑໐. ຄຳສອນແລະພັນທະສັນຍາ ໕໙:໗

© ໑໙໗໙ ສຍສ ໓ ນີໄຟ ໑໘:໒໑

# ສັບທີ່ຄວນຮູ້

**ການກັບໃຈ:** ແມ່ນຂັ້ນຕອນທີ່ຜູ້ໄດ້ເຮັດບາບຈະຕ້ອງປະຕິບັດຕາມ ກ່ອນຈະໄດ້ຮັບການອະພັຍໂທດໃຫ້. (ເບິ່ງ ບົດທີ ໑໔.)

**ການຈ່າຍບໍຣິຈາກ:** ແມ່ນເງິນບໍຣິຈາກ ຈຳນວນທີ່ເຮົາອາດໃຊ້ຊື້ອາຫານໃຫ້ພໍກິນສອງຄາບ ແຕ່ບໍ່ໄດ້ຊື້ ໂດຍການອົດອາຫານ. ເຮົາຈະບໍຣິຈາກເງິນຈຳນວນນີ້ໃຫ້ແກ່ສາສນາຈັກເພື່ອຊ່ວຍເຫລືອຄົນທີ່ຍາກຈົນ.

**ການສັງສັນໃນຄອບຄົວ:** ແມ່ນການເຕົ້າໂຮມກັນເປັນຄອບຄົວ, ຕາມປົກກະຕິແລ້ວຈະເປັນວັນຈັນ ຊຶ່ງໃນລະຫລ່າງການສັງສັນນັ້ນ ຄອບຄົວຈະຮ້ອງເພງ, ຈະສຶກສາພຣະກິດຕິຄຸນ, ຈະປຶກສາກ່ຽວກັບບັນຫາຕ່າງໆທີ່ເຂົາເຈົ້າມີ, ຈະຫລິ້ນເກມ, ແລະເຮັດສິ່ງອື່ນໆນຳກັນເປັນຄອບຄົວ.

**ການສະເດັດມາຄັ້ງທີສອງ:** ແມ່ນການກັບຄືນມາຂອງພຣະຜູ້ຊ່ວຍໃຫ້ລອດພຣະເຢຊູຄຣິສ, ເພື່ອຈະໄດ້ເລີ້ມຕົ້ນ ມີເລນຽມ ຫລື ລະຍະພັນປີແຫ່ງຄວາມສງົບສຸກ.

**ການເສັຽສະລະ:** (໑) ໃນສມັຍໂບຮານ ຜູ້ຄົນຈະຂ້າສັດຖວາຍ ເປັນການເຊື່ອຟັງຕາມກົດຂອງພຣະບິດາຜູ້ສະຖິດໃນສວັນຂອງເຮົາ. (໒) ໃນປັດຈຸບັນນີ້ ແມ່ນການເສັຽສະລະບາງຢ່າງທີ່ສຳຄັນຕໍ່ເຮົາ ດັ່ງເຊັ່ນ ເວລາ ແລະສິ່ງຂອງ ເພື່ອຈະໄດ້ຊ່ວຍເຫລືອຄົນອື່ນ.

**ການຊົດໃຊ້:** ການໃຊ້ແທນຂອງພຣະເຢຊູ ໂດຍການຮັບທຸກທໍຣະມານແລະສິ້ນພຣະຊົນສຳລັບຄວາມຜິດບາບຂອງມະນຸດທຸກຄົນ ເພື່ອຊ່ວຍປົດເຂົາເຈົ້າອອກຈາກ

ຄວາມຕາຍທາງຮ່າງກາຍແລະທາງວິນຍານທີ່ນຳມາ "ໂດຍການລ່ວງລະເມີດຂອງອາດາມ" ແລະປົດເຂົາເຈົ້າອອກຈາກ ການຢູ່ຫ່າງຈາກພຣະບິດາຜູ້ສະຖິດໃນສະຫວັນຂອງເຮົາ.

**ການແຕ່ງງານນິຣັນດອນ:** ແມ່ນການແຕ່ງງານທີ່ຜະນຶກເຂົ້າກັນໃນພຣະວິຫານ ແລະຈະດຳເນີນຕໍ່ໄປຫລັງຈາກເຮົາຕາຍໄປແລ້ວ ຖ້າເຮົາມີຄ່າຄວນພໍທີ່ຈະຢູ່ກັບພຣະບິດາຜູ້ສະຖິດໃນສະຫວັນຂອງເຮົາ.

**ການແຕ່ງຕັ້ງ:** ແມ່ນການມອບຫນ້າທີ່ໃນຖານະປະໂຣຫິດໃຫ້ແກ່ຜູ້ຊາຍທີ່ມີຄ່າຄວນ ໂດຍການວາງມືໃສ່ຫົວເຂົາເຈົ້າ.

**ການຕົກຂອງອາດາມ:** ແມ່ນຄວາມປ່ຽນແປງທີ່ມາສູ່ອາດາມແລະເອວາ ເພາະເຂົາເຈົ້າໄດ້ກິນຫມາກໄມ້ທີ່ຕ້ອງຫ້າມ. ພຣະບິດາຜູ້ສະຖິດໃນສະຫວັນຂອງເຮົາໄດ້ຕັດເຂົາເຈົ້າອອກຈາກທີ່ປະທັບຂອງພຣະອົງ, ແລະເຂົາເຈົ້າໄດ້ກາຍເປັນມະນຸດທຳມະດາ. ການນີ້ໄດ້ເຮັດໃຫ້ຜູ້ຄົນມາເກີດແລະຕາຍ.

**ການປະຖິ້ມຄວາມເຊື່ອ:** (໑) ສະພາບແຫ່ງວິນຍານທີ່ຖອນຕົວຈາກພຣະບິດາຜູ້ສະຖິດໃນສະຫວັນຂອງເຮົາ. (໒) ລະຍະເວລາທີ່ຄຳສອນຂອງພຣະບິດາຜູ້ສະຖິດໃນສະຫວັນຂອງເຮົາແລະຖານະປະໂຣຫິດຂອງພຣະອົງບໍ່ໄດ້ມີຢູ່ໃນແຜ່ນດິນໂລກ.

**ການທຳນາຍ:** ແມ່ນຄຳດົນໃຈຂອງສາສດາ ຕາມປົກກະຕິແລ້ວ ຈະແມ່ນກ່ຽວກັບເຫດການທີ່ຈະເກີດຂຶ້ນໃນອະນາຄົດ.

**ການເປີດເຜີຍ:** ແມ່ນຄວາມຮູ້ທີ່ພຣະບິດາຜູ້ສະຖິດໃນສະຫວັນຂອງເຮົາມອບໃຫ້ຊາຍຄົນໃດຄົນນຶ່ງ ຊຶ່ງຕາມປົກກະຕິແລ້ວຈະໄດ້ຮັບຜ່ານພຣະວິນຍານບໍຣິສຸດຊຶ່ງອາດກ່ຽວຂ້ອງກັບສິ່ງທີ່ໄດ້ເກີດຂຶ້ນໃນອາດີດ, ຫລືກຳລັງເກີດຂຶ້ນໃນປັດຈຸບັນ, ຫລືຈະເກີດຂຶ້ນໃນອະນາຄົດ.

**ການຜະນຶກ:** ແມ່ນພິທີນຶ່ງທີ່ກະທຳກັນໃນພຣະວິຫານ ທີ່ຜູກມັດສາມີແລະພັລຍາເຂົ້າກັນ ຫລືຜູກມັດລູກເຕົ້າເຂົ້າກັບພໍ່ແມ່ຊົ່ວນິຣັນດອນ.

**ການຟື້ນຄືນຊີວິດ:** ແມ່ນການຄືນມາເຂົ້າຮ່ວມກັນຂອງຮ່າງກາຍແລະວິນຍານຫລັງຈາກຄວາມຕາຍ ເພື່ອຈະໄດ້ສ້າງຮ່າງກາຍທີ່ເປັນອຳມະຕະຂຶ້ນ.

**ການຮັບບັບຕິສະມາ:** ເປັນພິທີນຶ່ງຂອງພຣະກິດຕິຄຸນທີ່ຈຳເປັນ ຊຶ່ງຄົນຜູ້ນັ້ນໄດ້ເຮັດພັນທະສັນຍາກັບ ພຣະບິດາຜູ້ສະຖິດໃນສວັນຂອງເຮົາທີ່ຈະເຊື່ອຟັງພຣະອົງ ແລະພຣະບິດາຜູ້ສະຖິດໃນສວັນຂອງເຮົາ ກໍໄດ້ສັນຍາວ່າ ຈະອະພັຍໂທດໃຫ້ ແລະເຮັດໃຫ້ເຂົາສະອາດຈາກບາບ ແລະອະນຸຍາດໃຫ້ເຂົາກາຍເປັນສະມາຊິກໃນສາສນາຈັກຂອງພຣະອົງ. ພິທີນີ້ເປັນສັນຍາລັກຂອງການເກີດໃຫມ່ ໂດຍການຈຸ່ມຄົນໃດຄົນນຶ່ງລົງໃນນ້ຳ ແລະແລ້ວໄດ້ນຳກັບຂຶ້ນຄືນມາອີກ ເພື່ອມີຊີວິດໃຫມ່. ພິທີນີ້ຖືກປະຕິບັດໂດຍຜູ້ທີ່ມີອຳນາດຖານະປະໂຣຫິດ ແລະກະທຳແທນພຣະບິດາຜູ້ສະຖິດໃນສວັນຂອງເຮົາ.

**ການຮັບບັບຕິສະມາແທນຄົນຕາຍ:** ແມ່ນການໃຫ້ບັບຕິສະມາໃນພຣະວິຫານຂອງພຣະບິດາຜູ້ສະຖິດໃນສວັນຂອງເຮົາແກ່ຜູ້ທີ່ມີຊີວິດຢູ່ ຊຶ່ງກະທຳແທນຜູ້ທີ່ຕາຍໄປແລ້ວ.

**ກົດພົມມະຈັນ:** ແມ່ນພຣະບັນຍັດຂໍ້ນຶ່ງຂອງພຣະບິດາຜູ້ສະຖິດໃນສວັນຂອງເຮົາວ່າໃຫ້ສົມສູ່ພຽງແຕ່ຜູ້ເປັນຜົວຫລືເມັຽຂອງຕົນເທົ່ານັ້ນ.

**ກົດພຣະວາຈາແຫ່ງປັນຍາ:** ແມ່ນພຣະບັນຍັດຂໍ້ນຶ່ງຈາກພຣະບິດາຜູ້ສະຖິດໃນສວັນຂອງເຮົາ ຊຶ່ງບອກໃຫ້ເຮົາຮູ້ວ່າສິ່ງໃດທີ່ເຮົາຄວນກິນຫລືດື່ມ ແລະສິ່ງໃດທີ່ເຮົາບໍ່ຄວນກິນຫລືດື່ມ. ໂດຍສະເພາະ ມັນບອກວ່າ ເຮົາບໍ່ຄວນດື່ມເຫລົ້າ, ສູບຢາ, ດື່ມນ້ຳຊາ ແລະກາເຟ. (ເບິ່ງ ບົດທີ ໔໗.)

**ຂໍກະແຈຂອງຖານະປະໂຣຫິດ:** ແມ່ນສິດທິທີ່ມອບອຳນາດໃຫ້ເພື່ອປະຕິບັດພິທີການຕ່າງໆຂອງຖານະປະໂຣຫິດ.

**ຂອງປະທານສັກສິດ:** ແມ່ນພອນທີ່ພຣະບິດາຜູ້ສະຖິດໃນສວັນຂອງເຮົາມອບໃຫ້ຢູ່ໃນພຣະວິຫານ ຊຶ່ງຈຳເປັນຕໍ່ການທີ່ຈະໄດ້ຮັບຄວາມສູງສົ່ງ.

**ຂອງປະທານແຫ່ງພຣະວິນຍານບໍຣິສຸດ:** ແມ່ນສິດທີ່ຈະມີອິດທິພົນຂອງພຣະວິນຍານບໍຣິສຸດຢູ່ນຳ. ຂອງປະທານນີ້ຈະຖືກມອບໃຫ້ຫລັງຈາກການຮັບບັບຕິສະມາ.

**ຄະນະເຜີຍແຜ່:** (໑) ແມ່ນຂົງເຂດນຶ່ງໃນໂລກ ຊຶ່ງສາສນາຈັກກຳລັງດຳເນີນງານ

ເຜີຍແຜ່ສາສນາ ຫລືຕັ້ງໃຈທີ່ຈະເຮັດເຊັ່ນນັ້ນ. ປົກກະຕິແລ້ວ ມັນຈະຖືກແບ່ງອອກເປັນກຸ່ມນ້ອຍສອງກຸ່ມ ທີ່ເອີ້ນວ່າ ເຂດ. (໔) ແມ່ນການເອີ້ນໂດຍຜູ້ນຳຂອງສາສນາຈັກໃຫ້ໄປປະກາດພຣະກິດຕິຄຸນ ຫລືຮັບໃຊ້ໃນລະຍະນຶ່ງ.

**ຄຸກໃນໂລກວິນຍານ:** ແມ່ນສ່ວນນຶ່ງຂອງໂລກວິນຍານບ່ອນທີ່ວິນຍານຂອງຄົນສາມຊະນິດໄປສູ່ ຫລັງຈາກໄດ້ຕາຍໄປ ຄື: ຜູ້ທີ່ເປັນຄົນຊົ່ວຢູ່ໃນໂລກນີ້, ຜູ້ທີ່ດຳລົງຊີວິດໃນທາງດີ ແຕ່ບໍ່ໄດ້ຮັບເອົາຫລືປະຕິບັດຕາມພຣະກິດຕິຄຸນ, ແລະຜູ້ທີ່ບໍ່ມີໂອກາດທີ່ຈະໄດ້ຍິນພຣະກິດຕິຄຸນ. ເມື່ອເຖິງຜຽນຂອງເຂົາເຈົ້າ ວິນຍານເຫລົ່ານີ້ກໍຈະໄດ້ຟື້ນຄືນຊີວິດເຫມືອນກັນ.

**ຄູສອນ:** ແມ່ນຕຳແຫນ່ງນຶ່ງຂອງຖານະປະໂຣຫິດແຫ່ງແອຣັນ ທີ່ມອບໃຫ້ແກ່ຊາຍຫນຸ່ມຜູ້ມີອາຍຸຢ່າງໜ້ອຍ ໑໔ ປີ. ອີ່ນີ້ແມ່ນໄດ້ມາຈາກຫນ້າທີ່ຮັບຜິດຊອບຂອງຕຳແຫນ່ງນີ້ ຄືການທີ່ຈະສອນສະມາຊິກຂອງສາສນາຈັກ.

**ຄູສອນປະຈຳບ້ານ:** ແມ່ນຜູ້ຊາຍຄູ່ນຶ່ງທີ່ມີຖານະປະໂຣຫິດ ແລະໄດ້ຖືກມອບຫມາຍໃຫ້ໄປຢ້ຽມຢາມຄອບຄົວໃດຄອບຄົວນຶ່ງໃນສາສນາຈັກ. ເຂົາເຈົ້າຈະຊ່ວຍເຫລືອຄອບຄົວນັ້ນກັບຄວາມຕ້ອງການທາງໂລກແລະທາງວິນຍານ.

**ຄວາມສູງສົ່ງ:** ແມ່ນພາກທີ່ສູງສຸດໃນອານາຈັກຊັ້ນສູງ. ຜູ້ທີ່ອາສັຍຢູ່ໃນນັ້ນຈະກາຍເປັນເຫມືອນດັ່ງພຣະບິດາຜູ້ສະຖິດໃນສວັນຂອງເຮົາ.

**ຄວາມຕາຍທາງວິນຍານ:** ແມ່ນສະພາບທີ່ຕ້ອງໄດ້ຢູ່ຫ່າງໄກຈາກພຣະບິດາຜູ້ສະຖິດໃນສວັນຂອງເຮົາ.

**ຄວາມຕາຍທາງຮ່າງກາຍ:** ແມ່ນການຕາຍທີ່ເຮົາໄດ້ຮັບເມື່ອຮ່າງກາຍຂອງເຮົາແຍກອອກຈາກວິນຍານຂອງເຮົາ.

**ຄອບຄົວຂອງອິສຣາເອນ:** ແມ່ນເຊື້ອສາຍແທ້ ຫລືຖືກຮັບເຂົ້າເປັນເຊື້ອສາຍຂອງລູກຊາຍສິບສອງຄົນຂອງຢາໂຄບ ຜູ້ຊຶ່ງຖືກປ່ຽນຊື່ເປັນ ອິສຣາເອນ (ເບິ່ງປະຖົມມະການ ៣໔:໔໗).

**ຈິດວິນຍານ:** ຫມາຍເຖິງຄົນຜູ້ນຶ່ງ (ຮ່າງກາຍແລະວິນຍານຮວມຢູ່ນຳກັນ). ແຕ່ບາງຄັ້ງ ຄຳນີ້ຈະຫມາຍເຖິງວິນຍານຂອງເຮົາ.

**ສະເຕກ:** ແມ່ນກຸ່ມສະມາຊິກທີ່ອາໄສຢູ່ໃນເຂດແດນທີ່ສາສນາຈັກຕັ້ງໄວ້ ແລະໄດ້ຮັບການດູແລໂດຍຜູ້ນຳຖານະປະໂຣຫິດທີ່ຖືກແຕ່ງຕັ້ງໄວ້. ມັນຖືກແຍກອອກເປັນກຸ່ມນ້ອຍໆທີ່ເອີ້ນວ່າ ຫວອດ ແລະ ສາຂາ.

**ສະພາ (ໂຄຣັມ):** ແມ່ນກຸ່ມຂອງຜູ້ຊາຍຜູ້ໃຫຍ່ ຫລືກຸ່ມຂອງຊາຍໜຸ່ມກຸ່ມນຶ່ງ ຜູ້ມີຕຳແໜ່ງດຽວກັນໃນຖານະປະໂຣຫິດ. ແຕ່ລະໂຄຣັມຈະໄດ້ຮັບການດູແລໂດຍປະທານຄົນນຶ່ງກັບທີ່ປຶກສາສອງຄົນຂອງເພິ່ນ.

**ສາຂາ:** ເປັນສັບນຶ່ງຂອງກິ່ງງ່າຂອງຕົ້ນໄມ້ ຊຶ່ງເອົາມາໃຊ້ເອີ້ນກຸ່ມນ້ອຍທີ່ຖືກແຍກອອກຈາກກຸ່ມໃຫຍ່ໃນສາສນາຈັກ. ກຸ່ມນ້ອຍນີ້ແມ່ນຂຶ້ນກັບຂອບເຂດທ້ອງຖິ່ນບ່ອນທີ່ສະມາຊິກອາໄສຢູ່ແລະໄປໂບດນຳກັນພາຍໃຕ້ການດູແລຂອງຜູ້ຮັບໃຊ້ທີ່ໄດ້ຮັບອຳນາດຈາກພຣະບິດາຜູ້ສະຖິດໃນສວັນຂອງເຮົາ.

**ສາສດາ:** ແມ່ນຊາຍຄົນນຶ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງເຮົາແຕ່ງຕັ້ງໄວ້ເພື່ອທີ່ຈະຕິດຕໍ່ກັບພຣະອົງ ແລະເວົ້າແທນພຣະອົງ.

**ສາສນາຈັກຂອງພຣະເຢຊູຄຣິສແຫ່ງສິດທິຊົນຍຸກສຸດທ້າຍ:** ແມ່ນຊື່ເປັນທາງການຂອງສາສນາຈັກຂອງພຣະເຢຊູຄຣິສ ຊຶ່ງພຣະອົງໄດ້ຈັດຕັ້ງຂຶ້ນຜ່ານສາສດາ ໂຢເຊັບ ສມິທ ໃນວັນເວລາຂອງເຮົາ. ສາສນາຈັກນີ້ ບາງຄັ້ງ ຖືກເອີ້ນຕາມຊື່ຫລິ້ນວ່າ ສາສນາມໍມອນ.

**ສາວົກເຈັດສິບ:** ແມ່ນຕຳແໜ່ງນຶ່ງໃນຖານະປະໂຣຫິດແຫ່ງເມັນຄີເຊເດັກ ໂດຍມີໜ້າທີ່ຮັບຜິດຊອບໃນການປະກາດພຣະກິດຕິຄຸນແລະຊ່ວຍດູແລປົກຄອງສາສນາຈັກ.

**ສິດທິຊົນ:** ແມ່ນຄຳທີ່ໃຊ້ເອີ້ນສະມາຊິກຂອງສາສນາຈັກທີ່ແທ້ຈິງຂອງພຣະເຢຊູຄຣິສ.

**ສິບເຜົ່າ:** ແມ່ນເຊື້ອສາຍຂອງສິບຄົນຂອງລູກສິບສອງຄົນຂອງອິສຣາເອນ (ຢາໂຄບ) ຜູ້ໄດ້ຖືກຈັບໄປເປັນຊະເລີຍ ແລະນັບແຕ່ນັ້ນມາ ກໍບໍ່ມີໃຜຮູ້ວ່າ ເຂົາເຈົ້າຢູ່ບ່ອນໃດ.

**ສິນລະລຶກ:** ແມ່ນພິທີທີ່ສະມາຊິກຂອງສາສນາຈັກຈະຮັບກິນເຂົ້າຈີ່ແລະດື່ມນ້ຳຊຶ່ງເປັນຕົວແທນໃຫ້ແກ່ພຣະກາຍແລະໂລຫິດຂອງພຣະເຢຊູ ເພື່ອເຕືອນເຮົາໃຫ້ລະນຶກເຖິງການຊົດໃຊ້ແທນບາບຂອງພຣະອົງສຳລັບເຮົາ.

**ສວັນ:** ແມ່ນບ່ອນທີ່ພຣະບິດາຜູ້ສະຖິດໃນສວັນຂອງເຮົາປະທັບຢູ່. ບາງຄັ້ງມັນໝາຍເຖິງບ່ອນທີ່ວິນຍານເຮົາອາສັຍຢູ່ກ່ອນມາຢູ່ໃນໂລກນີ້, ແລະເປັນບ່ອນທີ່ວິນຍານຂອງເຮົາໄປຫາຫລັງຈາກເຮົາຕາຍໄປແລ້ວ (ໂລກວິນຍານ). ພ້ອມນີ້ມັນຍັງເປັນບ່ອນທີ່ຄົນຊອບທັມຈະໄດ້ອາສັຍຢູ່ຊົ່ວນິດນິຣັນ ຫລັງຈາກໄດ້ຟື້ນຄືນຊີວິດແລ້ວ (ອານາຈັກຊັ້ນສູງ).

**ສ່ວນສິບ:** ແມ່ນນຶ່ງສ່ວນສິບຂອງລາຍໄດ້ທັງໝົດຂອງເຮົາ ທີ່ເຮົາມອບໃຫ້ແກ່ສາສນາຈັກ.

**ຊີວິດນິຣັນດອນ:** ມັນບໍ່ພຽງແຕ່ກ່າວເຖິງການທີ່ຈະມີຊີວິດຢູ່ຕລອດໄປ, ແຕ່ເປັນການດຳລົງຊີວິດຢູ່ຢ່າງ ພຣະບິດາຜູ້ສະຖິດໃນສວັນຂອງເຮົາ ແລະກາຍເປັນເຫມືອນດັ່ງພຣະອົງ. ມັນມີຄວາມຫມາຍຄືກັນກັບຄວາມສູງສົ່ງ.

**ຊີໂອນ:** ແມ່ນຊື່ນຶ່ງອີກສຳລັບເຢຣູຊາເລັມໃຫມ່; ແມ່ນເມືອງນຶ່ງ ບ່ອນທີ່ພຣະເຢຊູຈະສະຖິດຢູ່ ເພື່ອປົກຄອງໂລກໃນລະຍະພັນປີ.

**ຖານະປະໂຣຫິດ:** ແມ່ນອຳນາດທີ່ພຣະບິດາຜູ້ສະຖິດໃນສວັນຂອງເຮົາມອບໃຫ້ແກ່ຜູ້ຊາຍ ເພື່ອຈະໄດ້ເຮັດວຽກງານຂອງພຣະອົງ ແລະເວົ້າແທນພຣະອົງ. ມັນແບ່ງອອກເປັນສອງຢ່າງ: ຖານະປະໂຣຫິດທີ່ສູງກວ່າ ຫລືຖານະປະໂຣຫິດແຫ່ງເມັນຄີເຊເດັກ ແລະຖານະປະໂຣຫິດທີ່ຕ່ຳກວ່າ ຫລືຖານະປະໂຣຫິດແຫ່ງແອຣັນ.

**ຖານະປະໂຣຫິດແຫ່ງເມັນຄີເຊເດັກ:** ແມ່ນຖານະປະໂຣຫິດທີ່ສູງກວ່າໃນຖານະປະໂຣຫິດສອງຢ່າງ ຊຶ່ງລວມທັງຕຳແຫນ່ງຂອງແອລເດີ, ມະຫາປະໂຣຫິດ, ປິຕຸ, ສາວົກເຈັດສິບ, ແລະອັຄສາວົກ.

**ຖານະປະໂຣຫິດແຫ່ງແອຣັນ:** ເປັນຖານະປະໂຣຫິດທີ່ຕ່ຳກວ່າໃນອຳນາດຖານະປະໂຣຫິດສອງຢ່າງ ທີ່ພຣະບິດາຜູ້ສະຖິດໃນສວັນຂອງເຮົາຊົງໄດ້ມອບໃຫ້ແກ່ຜູ້ຊາຍຢູ່ໃນໂລກນີ້ ເພື່ອໃຫ້ກະທຳໃນພຣະນາມຂອງພຣະອົງ ສຳລັບຄວາມລອດຂອງລູກໆຂອງພຣະອົງ. ຖານະປະໂຣຫິດທີ່ຕ່ຳກວ່ານີ້ ມີຊື່ຕາມ ອາໂຣນ ອ້າຍຂອງໂມເຊ ແລະມັນມີຄວາມແຕກຕ່າງຈາກຖານະປະໂຣຫິດທີ່ສູງກວ່າ ຫລື ຖານະປະໂຣຫິດແຫ່ງເມັນຄີເຊເດັກ. ຖານະປະໂຣຫິດແຫ່ງແອຣັນແມ່ນລວມທັງຕຳແຫນ່ງໃນມັກຄະນາຍົກ, ຄູສອນ, ປະໂຣຫິດ, ແລະອະທິການ.

**ທີ່ສຸຂກະເສີມ:** ແມ່ນພາກສ່ວນນຶ່ງໃນໂລກວິນຍານບ່ອນວິນຍານທີ່ຊອບທັມອາສັຍຢູ່.

**ທ້ອງຖິ່ນ:** ແມ່ນເຂດທີ່ໄດ້ແຍກອອກເປັນຫລາຍໆສາຂາ ພາຍໃຕ້ການດູແລຂອງຝ່າຍເຜີຍແຜ່ສາສນາຂອງສາສນາຈັກ. ມັນໄດ້ຮັບການດູແລໂດຍປະທານຄົນນຶ່ງ ແລະທີ່ປຶກສາສອງຄົນຂອງເພິ່ນ.

**ບັບຕິສະມາ:** ຄືການຈຸ່ມຄົນໃດຄົນນຶ່ງລົງໃນນ້ຳ ແລະແລ້ວໄດ້ນຳຄົນນັ້ນກັບຂຶ້ນມາຈາກນ້ຳ ເພື່ອໃຫ້ມີຊີວິດໃຫມ່. ເບິ່ງ ການຮັບບັບຕິສະມາ.

**ໃບຮັບຮອງເຂົ້າພຣະວິຫານ:** ແມ່ນເຈັ້ຽໃບນຶ່ງທີ່ຖືກເຊັນອະນຸຍາດໃຫ້ຄົນໃດຄົນນຶ່ງເຂົ້າໄປໃນພຣະວິຫານຂອງສາສນາຈັກໄດ້. ກ່ອນຈະໄດ້ເຈັ້ຽໃບນີ້, ຄົນຜູ້ນັ້ນຕ້ອງເປັນສະມາຊິກທີ່ມີຄ່າຄວນຂອງສາສນາຈັກເສັຽກ່ອນ. ໃບຮັບຮອງຈະຖືກເຊັນໂດຍຜູ້ນຳຖານະປະໂຣຫິດທີ່ຖືກຕ້ອງ ຜູ້ເປັນພະຍານເຖິງຄວາມມີຄ່າຄວນຂອງຜູ້ນັ້ນ.

**ປະໂຣຫິດ:** ແມ່ນຕຳແຫນ່ງນຶ່ງໃນຖານະປະໂຣຫິດແຫ່ງແອຣັນທີ່ມອບໃຫ້ແກ່ຊາຍຫນຸ່ມຜູ້ມີຄ່າຄວນ ຜູ້ມີອາຍຸໄດ້ ໑໖ ປີ. ຕຳແຫນ່ງນີ້ໄດ້ໃຫ້ອຳນາດທີ່ຈະກະທຳພິທີບັບຕິສະມາ ແລະກະທຳພິທີການຂອງຖານະປະໂຣຫິດແຫ່ງແອຣັນ ເຊັ່ນໃຫ້ພອນແກ່ສິນຣະລຶກ, ແລະເຮັດຫນ້າທີ່ອື່ນໆ.

**ປິຕຸ:** ແມ່ນຕຳແຫນ່ງນຶ່ງໃນຖານະປະໂຣຫິດ ທີ່ມອບໃຫ້ແກ່ຜູ້ທີ່ເປັນມະຫາປະໂຣຫິດແລ້ວ ຊຶ່ງໄດ້ຖືກແຕ່ງຕັ້ງໃຫ້ເປັນປິຕຸເພື່ອໃຫ້ພອນທີ່ເອີ້ນວ່າ ປິຕຸພອນແກ່ສະມາຊິກທີ່ມີຄ່າຄວນຂອງສາສນາຈັກ.

**ຜູ້ພະຍາກອນ:** ແມ່ນຜູ້ນຶ່ງທີ່ສາມາດຫລິງເຫັນອະນາຄົດໄດ້ ເພາະວ່າມັນໄດ້ຖືກເປີດເຜີຍໃຫ້ທ່ານຮູ້ໂດຍທາງພຣະບິດາຜູ້ສະຖິດໃນສວັນຂອງເຮົາ. ຜູ້ພະຍາກອນກໍເຫມືອນໆກັນກັບສາສດາ.

**ພັນທະສັນຍາ:** ແມ່ນຄຳຫມັ້ນສັນຍາທີ່ສັກສິດລະຫວ່າງພຣະບິດາຜູ້ສະຖິດໃນສວັນຂອງເຮົາແລະມະນຸດ.

**ພິທີການຕ່າງໆ:** ແມ່ນພິທີທີ່ປະຕິບັດກັນຜ່ານອຳນາດຂອງຖານະປະໂຣຫິດ.

**ພຣະກິດຕິຄຸນ:** ແມ່ນຄຳສອນຂອງພຣະເຢຊູຄຣິສ ຊຶ່ງຖ້າເຮັດຕາມ ຈະຊ່ວຍໃຫ້ເຮົາສາມາດກັບຄືນໄປຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງເຮົາ.

**ພຣະຄຳພີມໍມອນ:** ແມ່ນພຣະຄຳພີເຫລັ້ມນຶ່ງ ທີ່ບັນຈຸຄຳສອນຂອງພຣະບິດາຜູ້ສະຖິດໃນສວັນຂອງເຮົາ ຕໍ່ຜູ້ຄົນຜູ້ອາສັຍຢູ່ໃນທະວີບອະເມຣິກາ.

**ພຣະເຈົ້າ:** ແມ່ນຊື່ນຶ່ງສຳລັບພຣະຜູ້ເປັນເຈົ້າ. ບາງຄັ້ງ ມັນໝາຍເຖິງພຣະບິດາຜູ້ສະຖິດໃນສວັນຂອງເຮົາ ແລະບາງຄັ້ງມັນໝາຍເຖິງພຣະຄຣິສ.

**ພຣະບິດາເທິງສວັນ:** ເບິ່ງ ພຣະບິດາຜູ້ສະຖິດໃນສວັນ.

**ພຣະບິດານິຣັນດອນ:** ແມ່ນພຣະນາມອີກພຣະນາມນຶ່ງທີ່ເຮົາໃຊ້ເອີ້ນພຣະບິດາຜູ້ສະຖິດໃນສວັນຂອງເຮົາ.

**ພຣະບິດາຜູ້ສະຖິດໃນສວັນ:** ແມ່ນຜູ້ທີ່ດີພ້ອມທຸກຢ່າງ ທີ່ເບິ່ງຄືກັນກັບມະນຸດແຕ່ມີຮ່າງກາຍທີ່ມີເນື້ອໜັງແລະກະດູກທີ່ຕາຍບໍ່ເປັນ. ພຣະອົງຊົງເປັນພຣະບິດາຂອງວິນຍານຂອງເຮົາ ຜູ້ຊຶ່ງເຮົາອະທິຖານຫາ. ພຣະອົງມີອຳນາດທຸກຢ່າງແລະເປັນອຳມະຕະ. ພຣະອົງຊົງຮັກເຮົາ ເພາະເຮົາເປັນລູກໆຂອງພຣະອົງ. ເຮົາເອີ້ນພຣະອົງອີກວ່າ ພຣະບິດາເທິງສວັນ.

**ພຣະຜູ້ຊ່ວຍໃຫ້ລອດ:** ແມ່ນຜູ້ທີ່ຊ່ວຍເຫລືອຄົນອື່ນຈາກສິ່ງທີ່ອັນຕະລາຍ. ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດຂອງເຮົາ ເພາະພຣະອົງຊົງໄດ້ຊ່ວຍເຫລືອເຮົາຈາກຄວາມຕາຍທາງຮ່າງກາຍແລະທາງວິນຍານ.

**ພຣະຜູ້ເປັນເຈົ້າ:** ແມ່ນພຣະຜູ້ຍິ່ງໃຫຍ່ແລະຊົງເປັນຜູ້ປົກຄອງແຫ່ງຈັກກະວານ. ຕາມປົກກະຕິແລ້ວ ເຮົາກ່າວຄຳວ່າ ພຣະຜູ້ເປັນເຈົ້າ ເມື່ອເຮົາເວົ້າເຖິງພຣະບິດາຜູ້ສະຖິດໃນສວັນຂອງເຮົາ, ແຕ່ບາງຄັ້ງ ໃນພຣະຄຳພີ ມັນໝາຍເຖິງພຣະເຢຊູ.

**ພຣະເຢຊູຄຣິສ:** ແມ່ນອ້າຍກົກຂອງເຮົາໃນສວັນ ແລະແມ່ນພຣະຜູ້ຊ່ວຍໃຫ້ລອດຂອງເຮົາ. ພຣະອົງຊົງໄດ້ມາຍັງໂລກເພື່ອໃຊ້ບາບແທນເຮົາແຕ່ລະຄົນ. (ເບິ່ງໂດຍສະເພາະ ບົດທີ ໓, ໑໑, ແລະ ໑໘.)

**ພຣະວິນຍານບໍລິສຸດ:** ແມ່ນອົງນຶ່ງທີ່ບໍ່ມີຮ່າງກາຍ ມີແຕ່ວິນຍານ ແລະເປັນຜູ້ທີ່ເປັນພະຍານເຖິງສິ່ງທີ່ ພຣະບິດາຜູ້ສະຖິດໃນສວັນຂອງເຮົາແລະພຣະເຢຊູກ່າວແລະກະທຳ. ເວລາເຮົາເວົ້າວ່າ ພຣະວິນຍານຂອງພຣະບິດາຜູ້ສະຖິດໃນສວັນຊົງສະຖິດຢູ່ກັບເຮົາ, ແມ່ນເຮົາກ່າວເຖິງພຣະວິນຍານບໍລິສຸດ.

**ພຣະວິຫານ:** ແມ່ນຕຶກທີ່ສັກສິດ ຕາມທຳມະດາ ຈະຖືກກ່າວເຖິງວ່າ ເປັນບ້ານຂອງພຣະເຈົ້າ (ບ້ານຂອງພຣະບິດາຜູ້ສະຖິດໃນສວັນຂອງເຮົາ), ຊຶ່ງເປັນບ່ອນກະທຳພິທີການອັນສັກສິດ ລວມທັງພິທີການແຕ່ງງານນິຣັນດອນ.

**ມັກຄະນາຍົກ:** ເປັນຕຳແຫນ່ງຫຳອິດໃນຖານະປະໂຣຫິດ ຊຶ່ງມອບໃຫ້ແກ່ຊາຍຫນຸ່ມຜູ້ມີຄ່າຄວນ ເມື່ອເຂົາເຈົ້າມີອາຍຸໄດ້ ໑໔ ປີ. ມັນເຮັດໃຫ້ເຂົາເຈົ້າມີອຳນາດທີ່ຈະປະຕິບັດຫນ້າທີ່ຢ່າງໃດຢ່າງນຶ່ງຝ່າຍໂລກ.

**ມະຫາປະໂຣຫິດ:** ແມ່ນຕຳແຫນ່ງນຶ່ງໃນຖານະປະໂຣຫິດແຫ່ງເມັນຄີເຊເດັກທີ່ມີຄວາມຮັບຜິດຊອບຕໍ່ການປະຕິບັດກັບສິ່ງທີ່ເປັນຝ່າຍວິນຍານ.

**ເຢຣູຊາເລັມໃຫມ່:** ແມ່ນເມືອງນຶ່ງທີ່ຈະຖືກສ້າງຂຶ້ນໃນພາກກາງຂອງສະຫະຣັດອະເມຣິກາ ກ່ອນຫນ້າລະຍະພັນປີ. ພຣະເຢຊູຈະຊົງເປັນຜູ້ປົກຄອງອານາຈັກຂອງພຣະບິດາຜູ້ສະຖິດໃນສວັນຂອງເຮົາຈາກແຫ່ງນີ້ໃນລະຍະພັນປີ.

**ລະຍະພັນປີ (ມີເລນຽມ):** ເປັນລະຍະເວລາພັນປີແຫ່ງຄວາມສງົບສຸກ ທີ່ຈະເລີ່ມຕົ້ນເມື່ອພຣະເຢຊູສະເດັດມາສູ່ໂລກອີກ ຊຶ່ງຮູ້ກັນວ່າ ເປັນການສະເດັດມາຄັ້ງທີສອງ.

**ໂລກວິນຍານ:** ແມ່ນບ່ອນທີ່ວິນຍານຂອງມະນຸດທຸກຄົນໄປຫາ ຫລັງຈາກໄດ້ຕາຍໄປແລ້ວ ຈົນເຖິງວັນຂອງການຟື້ນຄືນຊີວິດ.

**ວັນຊະບາໂຕ:** ແມ່ນວັນພັກຜ່ອນທີ່ພຣະເຢຊູຊົງຕັ້ງໄວ້ໃຫ້ເປັນວັນນະມັສການພຣະບິດາຜູ້ສະຖິດໃນສວັນຂອງເຮົາ ແລະເປັນວັນຮັບໃຊ້ຄົນອື່ນ. ຜູ້ຄົນສ່ວນຫລາຍໃນໂລກຈະຖືວັນອາທິດເປັນວັນນະມັສການ.

**ວິນຍານ:** ແມ່ນສິ່ງທີ່ເຮັດໃຫ້ຮ່າງກາຍຂອງເຮົາມີຊີວິດເຫນັງຕີງໄດ້. ມັນແມ່ນ

ສ່ວນນຶ່ງຂອງຮ່າງກາຍທີ່ມີຢູ່ກ່ອນຊີວິດນີ້ ແລະຈະຄົງຢູ່ຕໍ່ໄປຫລັງຈາກເຮົາຕາຍໄປ. ວິນຍານແລະຮ່າງກາຍຈະຮວມເຂົ້າກັນອີກໃນວັນຂອງການຟື້ນຄືນຊີວິດ ແລະຈະບໍ່ແຍກອອກຈາກກັນອີກຈັກເທື່ອ.

**ແຫ່ງມືດມົນພາຍນອກ:** ແມ່ນບ່ອນທີ່ຊາຕານແລະຜູ້ທີ່ເລືອກທີ່ຈະຕິດຕາມມັນອາສັຍຢູ່. ຜູ້ທີ່ອາສັຍຢູ່ບ່ອນນັ້ນຈະບໍ່ໄດ້ຊື່ນຊົມກັບອິດທິພົນຂອງພຣະວິນຍານບໍຣິສຸດ ແລະຈະຢູ່ຢ່າງປາສຈາກຄວາມສວ່າງແລະຄວາມຈິງ.

**ຫນ້າທີ່:** ແມ່ນຕຳແຫນ່ງນຶ່ງທີ່ມີອຳນາດໃນຖານະປະໂຣຫິດ. (ເບິ່ງ ມັກຄະນາຍົກ, ຄູສອນ, ປະໂຣຫິດ, ແລະອື່ນໆ.)

**ຫວອດ:** ແມ່ນກຸ່ມສະມາຊິກຂອງສາສນາຈັກ ທີ່ຈັດຕັ້ງຂຶ້ນພາຍໃນສະເຕກ ຜູ້ທີ່ໄດ້ຮັບການດູແລ ໂດຍອະທິການແລະທີ່ປຶກສາສອງຄົນຂອງເພິ່ນ.

**ອັຄສາວົກ:** (໑) ຕຳແຫນ່ງນຶ່ງໃນຖານະປະໂຣຫິດແຫ່ງເມັນຄິເຊເດັກ. (໔) ຄົນນຶ່ງໃນກຸ່ມພະຍານພິເສດສິບສອງຄົນຂອງພຣະເຢຊູ.

**ອະທິການ:** ແມ່ນຕຳແຫນ່ງນຶ່ງໃນຖານະປະໂຣຫິດແຫ່ງແອຣັນ ທີ່ໃຫ້ຊາຍຄົນໃດຄົນນຶ່ງມີອຳນາດດູແລການເປັນຢູ່ຝ່າຍຮ່າງກາຍແລະຝ່າຍວິນຍານຂອງສະມາຊິກກຸ່ມໃດກຸ່ມນຶ່ງຂອງສາສນາຈັກ.

**ອານາຈັກຊັ້ນກາງ:** ແມ່ນອານາຈັກທີ່ມີຣັສມີພາບຕ່ຳກວ່າອານາຈັກຊັ້ນສູງແຕ່ສູງກວ່າອານາຈັກຊັ້ນຕ່ຳ. ມັນຖືກຈັດໄວ້ສຳລັບຜູ້ທີ່ດຳລົງຊີວິດໃນທາງດີຢູ່ໃນໂລກນີ້ ຜູ້ບໍ່ໄດ້ເຮັດຕາມທຸກສິ່ງທີ່ພຣະບິດາຜູ້ສະຖິດໃນສວັນຂອງເຮົາຂໍຮ້ອງໃຫ້ເຂົາເຈົ້າເຮັດ.

**ອານາຈັກຊັ້ນສູງ:** ອານາຈັກນີ້ເປັນບ່ອນທີ່ຄົນຊອບທັມອາສັຍຢູ່ນຳພຣະບິດາຜູ້ສະຖິດໃນສວັນຂອງເຮົາ ແລະໄດ້ຮັບທຸກສິ່ງທຸກຢ່າງທີ່ພຣະອົງຊົງມີ.

**ອານາຈັກຊັ້ນຕ່ຳ:** ແມ່ນອານາຈັກທີ່ມີຣັສມີພາບຕ່ຳສຸດໃນອານາຈັກສາມແຫ່ງຊຶ່ງຜູ້ຄົນຈຳນວນນຶ່ງຈະໄປອາສັຍຢູ່ຫລັງຈາກໄດ້ຟື້ນຄືນຊີວິດ. ອານາຈັກນີ້ແມ່ນຖືກຈັດໄວ້ສຳລັບຄົນຂີ້ຕົວະ, ຄາຕກອນ, ຄົນຂີ້ລັກ, ແລະຄົນຊົ່ວທັງຫລາຍ.

**ແອລເດີ:** ແມ່ນຕຳແຫນ່ງທຳອິດໃນຖານະປະໂຣຫິດແຫ່ງເມັນຄີເຊເດັກ ຊຶ່ງມອບໃຫ້ແກ່ຜູ້ຊາຍທີ່ມີຄ່າຄວນ ຜູ້ມີອາຍຸໄດ້ ໑໘ ປີ ຫລືສູງກວ່ານັ້ນ. ມັນໃຫ້ເຂົາເຈົ້າມີອຳນາດທີ່ຈະປະຕິບັດພິທີການບາງຢ່າງ ຊຶ່ງເປັນພອນໃຫ້ແກ່ຊີວິດຂອງຜູ້ຄົນ.

**Doctrine and Covenants:** ແມ່ນພຣະຄັມພີເຫລັ້ມນຶ່ງ ທີ່ບັນຈຸພຣະຄຳຂອງພຣະບິດາຜູ້ສະຖິດໃນສວັນຂອງເຮົາຕໍ່ຜູ້ຄົນໃນສມັຍປັດຈຸບັນ.

**Pearl of Great Price:** ແມ່ນພຣະຄັມພີເຫລັ້ມນຶ່ງ ທີ່ບັນຈຸການຂຽນຂອງໂມເຊ, ອັບຣາຮາມ, ແລະ ໂຢເຊັບ ສມິທ. ຊຶ່ງມີຄວາມຫມາຍວ່າ ເພັດນິນຈິນດາທີ່ມີຄ່າເລີດ ຊຶ່ງສະມາຊິກຂອງສາສນາຈັກຖືວ່າພຣະຄັມພີເຫລັ້ມນີ້ເປັນແນວນັ້ນແທ້.

THE CHURCH OF
JESUS CHRIST
OF LATTER-DAY SAINTS

4 02311 29331 5
31129 331